ພຣະວິນັຍປິຜົກ

ເຫຼັ້ມ ໕

ມຫາວັຄຄ໌ ກາຄ ໘

ຂໍນອບນ້ອມແດ່ພຣະຜູ້ມີພຣະກາຄອຣຫັນຕສັມມາສັມພຸທສເຈົ້າພຣະອົງຄ໌ນັ້ນ

ຈັມມຂັນສກະ

ເສຕຖີບຸຕຣ໌ໂສຕ ໂກຄິວິສະເຂົ້າເຝົ້າພຣະເຈົ້າພິມພິສາຣ

[໑] ໂດຍສມັຍນັ້ນ ພຣະຜູ້ມີພຣະກາຄພຸທສເຈົ້າປະທັບຢູ່ ຓ ກູເຂົາຄິຊຸກູຕ ເຂຕພຣະນຄຣຣາຊຄຣິຫ໌. ຄັ້ງນັ້ນ ພຣະເຈົ້າພິມພິສາຣຈອມເສນາມາຄົຣຣາຊ ສເວີຍຣາຊສົມບັຕິເປັນອິສຣາທິບໍດີ ໃນໝູ່ບ້ານແປດໝື່ນຕຳບົລ ກໍສມັຍນັ້ນ ໃນເມືອງຈັມປາ ມີເສຕຖີບຸຕຣ໌ຊື່ໂສຕ ໂກຄິວິສໂຄຕຣ໌ ເປັນສຸຂຸມາລຊາຕິ ທີ່ຝ່າເທົ້າທັ້ງສອງຂອງເຂົາມີຂົນງອກຂຶ້ນ ຍາມນຶ່ງ ພຣະເຈົ້າພິມພິສາຣຈອມເສນາມາຄົຣຣາຊມີພຣະບໍຣົມຣາຊໂອງກາຣໂປຼດເກຼົ້າ ໃຫ້ຣາษฎຣໃນຕຳບົລແປດໝື່ນນັ້ນປະຊຸມກັນແລ້ວທຣົງສົ່ງທູຕໄປໃນສຳນັກເສຕຖີບຸຕຣ໌ໂສຕ ໂກຄິວິສະ ເໝືອນມີພຣະຣາຊກຣຕິຍກິຈຈັກຢ່າງນຶ່ງ ດ້ວຍພຣະບໍຣົມຣາຊໂອງກາຣວ່າ ເຈົ້າໂສຕະຈົ່ງມາ ເຮົາປັຕຖນາໃຫ້ເຈົ້າໂສຕະມາ ຈຶ່ງມາຣດາບິດາຂອງເສຕຖີບຸຕຣ໌ໂສຕ ໂກຄິວິສະໄດ້ເວົ້າຕັກເຕືອນເສຕຖີບຸຕຣ໌ນັ້ນວ່າ ພໍ່ໂສຕະ ເຈົ້າມຫາຊີວິຕມີພຣະຣາຊປະສົງຄ໌ຈະທອດພຣະເນຕຣ໌ເທົ້າທັ້ງສອງຂອງເຈົ້າ ຣະວັງແດ່ເດີພໍ່ໂສຕະ ເຈົ້າຢ່າຢຽດເທົ້າທັ້ງສອງໄປທາງທີ່ເຈົ້າມຫາຊີວິຕປະທັບຢູ່ ຈົ່ງນັ່ງຂັດສມາທິກົງພຣະພັກຕຣ໌ຂອງພຣະອົງຄ໌ ເມື່ອເຈົ້ານັ່ງແລ້ວ ເຈົ້າມຫາຊີວິຕ ຈະທອດພຣະເນຕຣ໌ເທົ້າທັ້ງສອງໄດ້ ຄັ້ງນັ້ນ ຊົນບໍຣິວາຣທັ້ງຫລາຍໄດ້ນຳເສຕຖີບຸຕຣ໌ໂສຕ ໂກຄິວິສະໄປດ້ວຍຄານຫາມ ລຳດັບນັ້ນ ເສຕຖີບຸຕຣ໌ໂສຕ ໂກຄິວິສະໄດ້ເຂົ້າເຝົ້າພຣະເຈົ້າພິມພິສາຣ ຈອມເສນາມາຄົຣຣາຊຖວາຍບັງຄົມແລ້ວນັ່ງຂັດສມາທິກົງພຣະພັກຕຣ໌ຂອງທ້າວທ່ານ ທ້າວທ່ານໄດ້ທອດພຣະເນຕຣ໌ເຫັນ**ໂລມຊາຕິ**[1]ທີ່ຝ່າເທົ້າທັ້ງສອງຂອງເຂົາ ແລ້ວທຣົງອນຸສາສນ໌ປະຊາຣາษฎຣໃນຕຳບົລແປດໝື່ນນັ້ນ ໃນປະໂຍຊນ໌ປັຈຈຸບັນ ທຣົງສົ່ງໄປດ້ວຍພຣະບໍຣົມຣາໂຊວາທວ່າ ດູຣາ**ພນາຍ**[2] ເຈົ້າທັ້ງຫລາຍອັນເຮົາສັ່ງສອນແລ້ວໃນປະໂຍຊນ໌ປັຈຈຸບັນ ເຈົ້າທັ້ງຫລາຍ ຈົ່ງໄປ

---

[1] **ໂລມຊາຕິ** ຂົນ

[2] **ພນາຍ** ນ. ຄຳຊຸນນາງຜູ້ໃຫຍ່ເອີ້ນຜູ້ດີຊື່ງຢູ່ໃນບັງຄັບຕົນ.

ເຝົ້າພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຂອງເຮົາພຣະອົງຄ໌ນັ້ນຈະທຣົງສັ່ງສອນເຈົ້າທັ້ງຫລາຍ ໃນປະໂຍຊນ໌ກາຍໜ້າ ຄັ້ງນັ້ນ ພວກເຂົາພາກັນໄປທາງພູເຂົາຄິຊຊກູຕ.

ພຣະສາຄຕເຖຣະສແດງອິທສິປາຕິຫາຣິຍ໌

ກໍສມັຍນັ້ນ ທ່ານພຣະສາຄຕະເປັນອຸປັຕຖາກຂອງພຣະຜູ້ມີພຣະກາຄ ຈຶ່ງພວກເຂົາພາກັນເຂົ້າໄປຫາທ່ານພຣະສາຄຕະ ແລ້ວໄດ້ຂາບຮຽນວ່າ ທ່ານຂ້ານ້ອຍ ປະຊາຊົນຊາວຕຳບົລແປດໝື່ນນີ້ ເຂົ້າມາໃນທີ່ນີ້ ເພື່ອເຝົ້າພຣະຜູ້ມີພຣະກາຄ ຂໍປະທານໂອກາສຂ້ານ້ອຍ ຂໍພວກຂ້າພເຈົ້າຄວຣໄດ້ເຝົ້າພຣະຜູ້ມີພຣະກາຄ ທ່ານພຣະສາຄຕະບອກວ່າ ຖ້າເຊັ່ນນັ້ນ ພວກທ່ານຈົງຢູ່ ໓ ທີ່ນີ້ບຶດນຶ່ງກ່ອນ ຈົນກວ່າອາຕມາຈະຂາບທູລພຣະຜູ້ມີພຣະກາຄໃຫ້ທຣົງຮູ້ ດັ່ງນີ້ ແລະເມື່ອພວກເຂົາກຳລັງຈ່ອງເບິ່ງຢູ່ຂ້າງໜ້າ ທ່ານພຣະສາຄຕະດຳລົງໄປໃນແຜ່ນຫິນ**ອັຒຈັນທຣ໌**[3]ຜຸດຂຶ້ນກົງພຣະພັກຕຣ໌ຂອງພຣະຜູ້ມີພຣະກາຄ ແລ້ວໄດ້ຂາບທູລຄຳນີ້ກັບພຣະຜູ້ມີພຣະກາຄວ່າ ຂ້ານ້ອຍ ປະຊາຊົນຊາວຕຳບົລແປດໝື່ນນີ້ພາກັນເຂົ້າມາ ໓ ທີ່ນີ້ ເພື່ອເຝົ້າພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຍ່ອມທຣົງຮູ້ກາລອັນຄວຣໃນບັດນີ້ ຂ້ານ້ອຍ ພຣະຜູ້ມີພຣະກາຄຮັບສັ່ງວ່າ ດູຣາສາຄຕະ ຖ້າຈັ່ງຊັ້ນທ່ານຈົງປູລາດອາສນະ ໓ ຮົ່ມເງົາຫລັງວິຫາຣ ທ່ານພຣະສາຄຕະທູລສນອງພຣະພຸທຘດຳຣັສວ່າ ຮູ້ເກົ້າໆ ແລ້ວ ຂ້ານ້ອຍ ແລ້ວຖືຕັ່ງດຳລົງໄປກົງພຣະພັກຕຣ໌ຂອງພຣະຜູ້ມີພຣະກາຄ ເມື່ອປະຊາຊົນຊາວຕຳບົລແປດໝື່ນນັ້ນກຳລັງຈ່ອງເບິ່ງຢູ່ທາງໜ້າ ຈຶ່ງຜຸດຂຶ້ນແຜ່ນຫິນອັຒຈັນທຣ໌ແລ້ວປູລາດອາສນະໃນຮົ່ມເງົາຫລັງພຣະວິຫາຣ.

ສເດັຈອອກໃຫ້ປະຊາຊົນເຂົ້າເຝົ້າ

ລຳດັບນັ້ນ ພຣະຜູ້ມີພຣະກາຄສເດັຈອອກຈາກພຣະວິຫາຣ ແລ້ວປະທັບນັ່ງເໜືອພຣະພຸທຘອາສນ໌ທີ່ຈັດໄວ້ ໓ ຮົ່ມເງົາຫລັງພຣະວິຫາຣ ຈຶ່ງປະຊາຊົນຊາວຕຳບົລແປດໝື່ນນັ້ນເຂົ້າເຝົ້າພຣະຜູ້ມີພຣະກາຄ ແລ້ວຖວາຍບັງຄົມນັ່ງ ໓ ທີ່ຄວຣສ່ວນຂ້າງນຶ່ງ ແລະພວກເຂົາພາກັນສົນໃຈແຕ່ທ່ານພຣະສາຄຕະເທົ່ານັ້ນ ຫາໄດ້ສົນໃຈຕໍ່ພຣະຜູ້ມີພຣະກາຄ ທັນໃດນັ້ນ ພຣະຜູ້ມີພຣະກາຄທຣົງຮູ້ຄວາມປຣິວິຕົກແຫ່ງໃຈຂອງພວກເຂົາດ້ວຍພຣະທັຍແລ້ວ ຈຶ່ງຕຣັສເອີ້ນທ່ານພຣະສາຄຕະມາຮັບສັ່ງວ່າ ດູຣາສາຄຕ ຖ້າຈັ່ງຊັ້ນ ທ່ານຈົງສແດງອິທສິປາຕິຫາຣິຍ໌ ຊຶ່ງເປັນຂັ້ນມນ໌ອັນຍວດຍິ່ງຂອງມນຸຜຍ໌ ໃຫ້ຍິ່ງຂຶ້ນໄປອີກ

ທ່ານພຣະສາຄຕະທູລຮັບສນອງພຣະພຸທຘາດັຕິວ່າ ຢ່າງນັ້ນ ຂ້ານ້ອຍ ແລ້ວເຫາະຂຶ້ນສູ່ເວຫາສ ຍ່າງແດ່ ຢືນແດ່ ນັ່ງແດ່ ສຳເຣັຈກາຣນອນແດ່ ບັງຫວນຄວັນແດ່ ພົ່ນໄຟແດ່

---

[3] **ອັຒຈັນທຣ໌** ໝາຍເຖິງ ບ່ອນນັ່ງເປັນຊັ້ນ ໆ ສຳຫຼັບເບິ່ງການແສດງ ໃນສນາມກິລາ

ຫາຍໂຕແດ່ ໃນອາກາສກາງຫາວ ເມື່ອສແດງອິທສິປຕິຫາຣິຍ໌ອັນເປັນສັມມ໌ຍວດຍິ່ງຂອງມນຸສ຺ຍ໌ຫລາຍຢ່າງ ໃນອາກາສກາງຫາວ ແລ້ວລົງມາໝູບສີຣສະລົງທີ່ພຣະຍຸຄົລບາທຂອງພຣະຜູ້ມີພຣະກາຄ ແລ້ວໄດ້ຂາບທູລ ພຣະຜູ້ມີພຣະກາຄວ່າ ຂ້ານ້ອຍ ພຣະຜູ້ມີພຣະກາຄເປັນພຣະສາສດາຂອງຂ້າພຣະພຸທສເຈົ້າ ຂ້າພຣະພຸທສເຈົ້າ ເປັນສາວົກຂ້ານ້ອຍ ພຣະຜູ້ມີພຣະກາຄເປັນພຣະສາສດາຂອງຂ້າພຣະພຸທສເຈົ້າ ຂ້າພຣະພຸທສເຈົ້າເປັນສາວົກ ດັ່ງນີ້ ຈຶ່ງປະຊາຊົນຕຳບົລແປດໝື່ນນັ້ນເວົ້າສັຣເສີນວ່າ ຊາວເຮົາຜູ້ຈເຣີນອັສຈັຣຍ໌ຫຼາຍ ປະຫລາດແທ້ ພຽງແຕ່ພຣະສາວົກຍັງມີຣິທສີ່ຫຼາຍເຖິງພຽງນີ້ ຍັງມີອານຸກາພຫຼາຍເຖິງພຽງນີ້ ພຣະສາສດາຕ້ອງອັສຈັຣຍ໌ແນ່ ດັ່ງນີ້ ແລ້ວພາກັນສົນໃຈຕໍ່ພຣະຜູ້ມີພຣະກາຄເທົ່ານັ້ນ ຫາສົນໃຈຕໍ່ທ່ານພຣະສາຄຕະບໍ່ມີເລີຍ

ທຣົງສແດງອນຸປຸພພິກຖາແລະຈຕຸຣາຣິຍສັຈ

ລຳດັບນັ້ນ ພຣະຜູ້ມີພຣະກາຄ ທຣົງຮູ້ຄວາມປຣິວິຕົກແຫ່ງໃຈຂອງພວກເຂົາດ້ວຍພຣະທັຍ ແລ້ວ ທຣົງສແດງອນຸປຸພພິກຖາ ຄື ທຣົງປະກາສ ທານກຖາ ສີລກຖາ ສັຄຄກຖາໂທສ຺ ຄວາມຕ່ຳຊາມ ຄວາມເສົ້າໝມອງຂອງກາມທັ້ງຫລາຍ ແລະອານິສົງສ໌ໃນຄວາມອອກບັຣພຊາ ເມື່ອພຣະອົງຄ໌ທຣົງຮູ້ວ່າ ພວກເຂົາມີຈິຕສງົບ ມີຈິຕອ່ອນ ມີຈິຕບໍ່ມີນິວຣຓ໌ ມີຈິຕເບີກບານ ມີຈິຕຜ່ອງໃສແລ້ວ ຈຶ່ງທຣົງ ປະກາສພຣະສັມມເທສນາທີ່ພຣະພຸທສເຈົ້າທັ້ງຫລາຍທຣົງຍົກຂຶ້ນສແດງດ້ວຍພຣະອົງຄ໌ເອງ ຄື ທຸກຂ໌ ສມຸທັຍ ນິໂຣຘ ມັຄຄ໌ ດວງຕາເຫັນສັມມ໌ ປຣາສຈາກທຸລີ ປຣາສຈາກມົລທິນ ໄດ້ເກີດແກ່ພວກເຂົາ ໓ ທີ່ນັ່ງ ນັ້ນເອງວ່າ ສິ່ງໃດສິ່ງນຶ່ງມີຄວາມເກີດຂຶ້ນເປັນສັມມດາ ສິ່ງນັ້ນທັ້ງໝົດມີຄວາມດັບເປັນສັມມດາ ເໝືອນຜ້າ ທີ່ສະອາດ ປຣາສຈາກມົລທິນຄວຣໄດ້ຮັບນ້ຳຍ້ອມເປັນຢ່າງດີ ຈັ່ງຊັ້ນ ພວກເຂົາໄດ້ເຫັນສັມມ໌ແລ້ວ ໄດ້ ບັຣລຸສັມມ໌ແລ້ວ ໄດ້ຮູ້ສັມມ໌ແຈ່ມແຈ້ງແລ້ວ ມີສັມມ໌ອັນຫຍັ່ງລົງແລ້ວ ຂ້າມຄວາມສົງສັຍໄດ້ແລ້ວປຣາສຈາກຖ້ອຍ ຄຳສແດງຄວາມສົງສັຍ ເຖິງຄວາມເປັນຜູ້ແກລ້ວກລ້າ ບໍ່ຕ້ອງເຊື່ອຜູ້ອື່ນ ໃນຄຳສອນຂອງພຣະສາສດາ ໄດ້ຂາບ ທູລຄຳນີ້ຕໍ່ພຣະຜູ້ມີພຣະກາຄວ່າ ກາສິຕຂອງພຣະອົງຄ໌ແຈ່ມແຈ້ງຫຼາຍ ຂ້ານ້ອຍ ກາສິຕຂອງພຣະອົງຄ໌ງາມຫຼາຍ ຂ້ານ້ອຍ ພຣະອົງຄ໌ທຣົງປະກາສສັມມ໌ໂດຍອເນກປຣິຍາຍປຽບເໝືອນບຸຄຄົລ ຫງາຍຂອງທີ່ຄວ່ຳ ເປີດຂອງທີ່ປິດ ບອກທາງແກ່ຄົນຫລົງທາງ ຫຼືສ່ອງປະທີປໃນທີ່ມືດດ້ວຍຕັ້ງໃຈວ່າ ຄົນມີ ຈັກສຸຈະເຫັນຮູປ ດັ່ງນີ້ ຂ້າພຣະພຸທສເຈົ້າເຫລົ່ານີ້ ຂໍເຖິງພຣະຜູ້ມີພຣະກາຄພຣະສັມມ໌ ແລະພຣະກິກຂຸ ສົງຄ໌ວ່າ ເປັນສຣຓະ ຂໍພຣະອົງຄ໌ຈົ່ງທຣົງຈຳພວກຂ້າພຣະພຸທສເຈົ້າວ່າ ເປັນອຸບາສົກຜູ້ມອບຊີວິຕເຖິງ ສຣຓະ ຈຳເດີມແຕ່ວັນນີ້ເປັນຕົ້ນໄປ.

ເສຕຖີບຸຕຣ໌ໂສຓໂກລິວິສະອອກບວຊ

[໔] ຄັ້ງນັ້ນ ເສຕຖີບຸຕຣ໌ໂສຓໂກລິວິສະໄດ້ມີຄວາມປຣິວິຕົກ ດັ່ງນີ້ວ່າ ດ້ວຍວິຮີໃດໆ ເຮົາຈຶ່ງຈະຮູ້ທົ່ວເຖິງສັມມ໌ທີ່ພຣະຜູ້ມີພຣະກາຄທຣົງສແດງແລ້ວ ອັນບຸຄຄົລທີ່ຍັງຄອງເຮືອນຢູ່ ຈະປະພຶຕພຣົຫ໌ມຈັຣຍ໌ນີ້ໃຫ້ບໍຣິບູຣຓ໌ໂດຍສ່ວນດຽວ ໃຫ້ບໍຣິສຸທຣິ໌ໂດຍສ່ວນດຽວ ເໝືອນສັງຂ໌ທີ່ຂັດແລ້ວ ເຮັດບໍ່ໄດ້ງ່າຍ ແນວໃດນໍ ເຮົາຄວຣແຖຜົມແລະຫນວດ ຄອງຜ້າກາສາຍະ ອອກຈາກເຮືອນບວຊເປັນບັຣພຊິຕ ເມື່ອປະຊາຊົນເຫລົ່ານັ້ນຊື່ນຊົມຍິນດີ ກາພິຕຂອງພຣະຜູ້ມີພຣະກາຄແລ້ວ ລຸກຈາກທີ່ນັ່ງຖວາຍບັງຄົມພຣະຜູ້ມີພຣະກາຄ ທຳປະທັກພິຓຫລີກໄປແລ້ວ ຫລັງຈາກປະຊາຊົນພວກນັ້ນຫລີກໄປແລ້ວບໍ່ດົນປານໃດ ເຂົາໄດ້ເຂົ້າເຝົ້າພຣະຜູ້ມີພຣະກາຄ ຖວາຍບັງຄົມພຣະຜູ້ມີພຣະກາຄແລ້ວນັ່ງ ໓ ທີ່ຄວຣສ່ວນຂ້າງນຶ່ງ

ເສຕຖີບຸຕຣ໌ໂສຓໂກລິວິສະນັ່ງເຝົ້າຢູ່ ໓ ທີ່ນັ້ນແລ ໄດ້ຂາບທູລຄຳນີ້ແດ່ພຣະຜູ້ມີພຣະກາຄວ່າ ຂ້ານ້ອຍ ດ້ວຍວິຮີໃດໆ ຂ້າພຣະພຸທສເຈົ້າຈຶ່ງຈະຮູ້ທົ່ວເຖິງສັມມ໌ທີ່ພຣະອົງຄ໌ທຣົງສແດງແລ້ວ ອັນບຸຄຄົລທີ່ຍັງຄອງເຮືອນຢູ່ຈະປະພຶຕພຣົຫ໌ມຈັຣຍ໌ນີ້ ໃຫ້ບໍຣິສຸທຣິ໌ໂດຍສ່ວນດຽວ ເໝືອນສັງຂ໌ທີ່ຂັດແລ້ວ ເຮັດບໍ່ໄດ້ງ່າຍ ຂ້າພຣະພຸທສເຈົ້າປັຕຖນາຈະແຖຜົມແລະຫນວດຄອງຜ້າກາສາຍະອອກຈາກເຮືອນບວຊເປັນບັຣພຊິຕ ຂໍພຣະອົງຄ໌ທຣົງພຣະກຣຸຓາໂປຼດໃຫ້ຂ້າພຣະພຸທສເຈົ້າບວຊເຖີດ ຂ້ານ້ອຍ ເສຕຖີບຸຕຣ໌ໂສຓໂກລິວິສະໄດ້ຮັບບັຣພຊາ ອຸປສົມບົທໃນພຸທສສຳນັກແລ້ວ ກໍແລທ່ານພຣະໂສຓະອຸປສົມບົທແລ້ວບໍ່ດົນ ໄດ້ພັກເຊົາຢູ່ ໓ ປ່າສີຕວັນທ່ານປຣາຣົກຄວາມພຽຣເກີນຂນາດ ຍ່າງຈົງກຣົມຈົນຕີນທັ້ງ ໔ ແຕກ ສຖານທີ່ຍ່າງຈົງກຣົມເປື້ອນໂລຫິຕ ເໝືອນສຖານທີ່ຂ້າງົວ ຈັ່ງຊັ້ນ.

ຄັ້ງນັ້ນ ທ່ານພຣະໂສຓະໄປໃນທີ່ສງັດຫລີກເຮັ້ນຢູ່ ໄດ້ມີຄວາມປຣິວິຕົກແຫ່ງຈິຕເກີດຂຶ້ນຢ່າງນີ້ວ່າ ບັຣດາພຣະສາວົກຂອງພຣະຜູ້ມີພຣະກາຄ ທີ່ປຣາຣົກຄວາມພຽຣຢູ່ ເຮົາກໍເປັນອົງຄ໌ນຶ່ງ ແຕ່ເປັນຫຍັງຈິຕຂອງເຮົາຈຶ່ງຍັງບໍ່ຫລຸດພົ້ນຈາກອາສວະທັ້ງຫລາຍ ເພາະບໍ່ຖືມັ່ນລະ ສົມບັຕິໃນຕະກູລຂອງເຮົາກໍຍັງມີຢູ່ ເຮົາອາຈບໍຣິໂພຄສົມບັຕິແລະບຳເພັຍກຸສົລ ຖ້າແນວໃດ ເຮົາຄວຣສິກເປັນຄຣືຫັສຖ໌ແລ້ວບໍຣິໂພຄສົມບັຕິແລະບຳເພັຍກຸສົລ ຄັ້ງນັ້ນ ພຣະຜູ້ມີພຣະກາຄທຣົງຮູ້ຄວາມປຣິວິຕົກແຫ່ງຈິຕຂອງທ່ານດ້ວຍພຣະທັຍແລ້ວ ຈຶ່ງທຣົງອັນຕຣຖານທີ່ຄິຊຊກູຕບັຣພົຕ ມາປຣາກົຕພຣະອົງຄ໌ ໓ ປ່າສີຕວັນ ປຽບເຫມືອນບຸຣຸສມີກຳລັງຢຽດແຂນທີ່ຄູ້ ຫຼືຄູ້ແຂນທີ່ຢຽດ ຈັ່ງຊັ້ນ ຄຼາວນັ້ນ ພຣະອົງຄ໌ພ້ອມດ້ວຍກິກຊຸເປັນຈຳນວນຫຼາຍສເດັຈທ່ຽວຈາຣິກຕາມເສນາສນະ ໄດ້ສເດັຈເຂົ້າໄປທາງສຖານທີ່ຍ່າງຈົງກຣົມຂອງທ່ານພຣະໂສຓະ ໄດ້ທອດພຣະເນຕຣ໌ເຫັນສຖານທີ່ຍ່າງຈົງກຣົມເປື້ອນໂລຫິຕ ເມື່ອແລ້ວຈຶ່ງຕຣັສເອີ້ນກິກຊຸທັ້ງຫລາຍມາຮັບສັ່ງຖາມວ່າ ດູຣາກິກຊຸທັ້ງຫລາຍ ສຖານທີ່ຍ່າງຈົງກຣົມແຫ່ງນີ້ຂອງໃຜນໍ ເປື້ອນໂລຫິຕ ເຫມືອນສຖານທີ່ຂ້າງົວ

ກິກຂຸທັ້ງຫລາຍ ຂາບທູລວ່າ ທ່ານພຣະໂສຕະປຣາຣົກຄວາມພຽຣເກີນຂນາດ ຢ່າງຈິງກຣົມຈົນເທົ້າທັ້ງ ໔ ແຕກ ສຖານທີ່ຢ່າງຈິງກຣົມແຫ່ງນີ້ຂອງທ່ານຈຶ່ງເປື້ອນໂລຫິຕ ເໝືອນສຖານທີ່ຂ້າງວົວ ຈັ່ງຊັ້ນຂ້ານ້ອຍ.

ລຳດັບນັ້ນ ພຣະຜູ້ມີພຣະກາຄໄດ້ສເດັຈເຂົ້າໄປທາງທີ່ຢູ່ຂອງທ່ານພຣະໂສຕະ ເມື່ອແລ້ວປະທັບນັ່ງເໜືອພຸທສອາສນ໌ທີ່ຈັດໄວ້ຖວາຍ ແມ້ທ່ານພຣະໂສຕະກໍຖວາຍບັງຄົມພຣະຜູ້ມີພຣະກາຄ ແລ້ວນັ່ງເຝົ້າຢູ່.

ຕັ້ງຄວາມພຽຣສມ່ຳສເມີທຽບສຽງພິຕ

ພຣະຜູ້ມີພຣະກາຄໄດ້ຕຣັສຖາມທ່ານພຣະໂສຕະຜູ້ນັ່ງເຝົ້າຢູ່ວ່າ ດູຣາໂສຕະ ທ່ານໄປໃນທີ່ສງັດຫລີກເຮັ້ນຢູ່ໄດ້ມີຄວາມປຣິວິຕົກແຫ່ງຈິຕເກີດຂຶ້ນ ຢ່າງນີ້ວ່າ ບັຣດາພຣະສາວົກຂອງພຣະຜູ້ມີພຣະກາຄທີ່ປຣາຣົກຄວາມພຽຣຢູ່ ເຮົາກໍເປັນອົງຄ໌ນຶ່ງ ແຕ່ເປັນຫຍັງ ຈິຕຂອງເຮົາຈຶ່ງຍັງບໍ່ຫລຸດພົ້ນຈາກອາສວະທັ້ງຫລາຍເພາະບໍ່ຖືມັ່ນລະ ສົມບັຕິໃນຕະກູລຂອງເຮົາກໍຍັງມີຢູ່ ເຮົາອາຈບໍຣິໂພຄສົມບັຕິແລະບຳເພັຍກຸສົລ ຖ້າແນວໃດ ເຮົາຄວຣສິກເປັນຄຣືຫັສຖ໌ ແລ້ວບໍຣິໂພຄສົມບັຕິແລະບຳເພັຍກຸສົລ ດັ່ງນີ້ ບໍ່ແມ່ນບໍ່?

ທ່ານພຣະໂສຕະທູລຮັບວ່າ ຢ່າງນັ້ນ ຂ້ານ້ອຍ

ກ. ດູຣາໂສຕະ ທ່ານຈະສຳຄັນຄວາມຂໍ້ນັ້ນເປັນແນວໃດ ເມື່ອຄັ້ງທ່ານຍັງເປັນຄຣືຫັສຖ໌ ທ່ານຈລາດໃນສຽງສາຍພິຕ ບໍ່ແມ່ນບໍ່?

ໂສ. ຢ່າງນັ້ນ ຂ້ານ້ອຍ.

ກ. ດູຣາໂສຕະ ທ່ານຈະສຳຄັນຄວາມຂໍ້ນັ້ນເປັນແນວໃດ ຄາວໃດສາຍພິຕຂອງທ່ານຕຶງເກີນໄປຄາວນັ້ນພິຕຂອງທ່ານມີສຽງຫຼືໃຊ້ການໄດ້ແດ່ບໍ່?

ໂສ. ຫາເປັນເຊັ່ນນັ້ນບໍ່ ຂ້ານ້ອຍ.

ກ. ດູຣາໂສຕະ ທ່ານຈະສຳຄັນຄວາມຂໍ້ນັ້ນເປັນແນວໃດ ຄາວໃດສາຍພິຕຂອງທ່ານຫຍ່ອນເກີນໄປ ຄາວນັ້ນພິຕຂອງທ່ານມີສຽງຫຼືໃຊ້ການໄດ້ແດ່ບໍ່?

ໂສ. ຫາເປັນເຊັ່ນນັ້ນບໍ່ ຂ້ານ້ອຍ.

ກ. ດູຣາໂສຕະ ທ່ານຈະສຳຄັນຄວາມຂໍ້ນັ້ນເປັນແນວໃດ ຄາວໃດສາຍພິຕຂອງທ່ານບໍ່ຕຶງນັກບໍ່ຫຍ່ອນຫຼາຍ ຕັ້ງຢູ່ໃນຄຸຕກາພສມ່ຳສເມີ ຄາວນັ້ນ ພິຕຂອງທ່ານມີສຽງຫຼືໃຊ້ການໄດ້ແດ່ບໍ່?

ໂສ. ເປັນຢ່າງນັ້ນ ຂ້ານ້ອຍ.

ຫ. ດູຣາໂສຕະ ເຫມືອນກັນທັ່ນແລ ຄວາມພຽຣທີ່ປຣາຣົກເກີນໄປຫຼາຍ ຍ່ອມເປັນໄປເພື່ອຄວາມຟຸ້ງຊ່ານ ຄວາມພຽຣທີ່ຍໍ່ຫຍ່ອນຫຼາຍ ກໍເປັນໄປເພື່ອຂີ້ຄ້ານ ເພາະເຫຕຸນັ້ນແລ ທ່ານຈົ່ງຕັ້ງຄວາມພຽຣແຕ່ພໍເຫມາະ ຈົ່ງຮູ້ຂໍ້ທີ່ອິນທຣີຍ໌ທັ້ງຫລາຍສເມີກັນ ແລະຈົ່ງຖືນິມິຕໃນຄວາມສມ່ຳສເມີນັ້ນ

ທ່ານພຣະໂສຕະທູລຮັບສນອງພຣະພຸທສພົຈນ໌ວ່າ ຈະປຕິບັຕິຕາມພຣະພຸທສໂອວາທຢ່າງນັ້ນຂ້ານ້ອຍ ເມື່ອພຣະຜູ້ມີພຣະພາຄທຮົງສັ່ງສອນທ່ານພຣະໂສຕະດ້ວຍພຣະໂອວາທຂໍ້ນີ້ແລ້ວ ທຮົງອັນຕຣານທີ່ປ່າສີຕວັນຕໍ່ຫນ້າທ່ານພຣະໂສຕະ ແລ້ວມາປຣາກົຕພຣະອົງຄ໌ ໓ ຄິຊຊກູຕບັຣພົຕ ປຽບເຫມືອນບຸຣຸຫມີກຳລັງ ຢຽດແຂນທີ່ຄູ້ ຫຼືຄູ້ແຂນທີ່ຢຽດ ຈັ່ງຊັ້ນ.

ພຣະໂສຕະສຳເຣັຈພຣະອຣຫັຕຜົລ

ເມື່ອກາລຕໍ່ມາ ທ່ານພຣະໂສຕະໄດ້ຕັ້ງຄວາມພຽຣແຕ່ພໍເຫມາະ ຮູ້ຂໍ້ທີ່ອິນທຣີຍ໌ທັ້ງຫລາຍສເມີກັນ ແລະໄດ້ຖືນິມິຕໃນຄວາມສມ່ຳສເມີ ເມື່ອແລ້ວໄດ້ຫລີກອອກຢູ່ແຕ່ຜູ້ດຽວ ບໍ່ປະມາທມີພຽຣ ມີຕົນສົ່ງໄປ ບໍ່ດົນປານໃດ ໄດ້ທຳໃຫ້ແຈ້ງຊຶ່ງຄຸຕພິເສຫອັນຍອດຢ່ຽມ ເປັນທີ່ສຸດພຣົຫ໌ມຈັຣຍ໌ ທີ່ກຸລບຸຕຣ໌ທັ້ງຫລາຍອອກຈາກເຮືອນບວຊເປັນບັຣພຊິຕໂດຍຄິຕ້ອງປະສົງຄ໌ ດ້ວຍປັຕຍາອັນຍິ່ງດ້ວຍຕົນເອງໃນປັຈຈຸບັນນີ້ແຫລະ ເຂົ້າເຖິງຢູ່ແລ້ວ ໄດ້ຮູ້ຊັດແລ້ວວ່າ ຊາຕິສິ້ນແລ້ວ ພຣົຫ໌ມຈັຣຍ໌ເຮົາໄດ້ຢູ່ຈົບແລ້ວ ກິຈທີ່ຄວຣເຮັດໄດ້ທຳແລ້ວແລ້ວ ກິຈອື່ນອີກເພື່ອຄວາມເປັນຢ່າງນີ້ບໍ່ໄດ້ມີ ກໍແລບັຣດາພຣະອຣຫັນຕ໌ທັ້ງຫລາຍ ທ່ານພຣະໂສຕະໄດ້ເປັນພຣະອຣຫັນຕ໌ອົງຄ໌ນຶ່ງແລ້ວ

ພັຕນາຄຸຕຂອງພຣະຂີຕາສົພ

[໑] ຄັ້ງນັ້ນ ທ່ານພຣະໂສຕະບັຣລຸພຣະອຣຫັຕແລ້ວ ໄດ້ຄຶດວ່າ ຖ້າແນວໃດເຮົາຄວຣພຍາກຣຕ໌ອຣຫັຕຜົລໃນສຳນັກພຣະຜູ້ມີພຣະພາຄ ແລ້ວຈຶ່ງເຂົ້າໄປເຝົ້າພຣະຜູ້ມີພຣະພາຄຖວາຍບັງຄົມນັ່ງເຝົ້າຢູ່ ເມື່ອແລ້ວໄດ້ຂາບທູລຄຳນີ້ແດ່ພຣະຜູ້ມີພຣະພາຄ ວ່າດັ່ງນີ້:-

ໂດຍ-ຂ້ານ້ອຍ ກິກຂຸໃດ ເປັນພຣະອຣຫັນຕ໌ມີອາສວະສິ້ນແລ້ວ ຢູ່ຈົບພຣົຫ໌ມຈັຣຍ໌ແລ້ວມີກິຈທີ່ຄວຣເຮັດໄດ້ທຳແລ້ວແລ້ວ ວາງພາຣະລົງແລ້ວ ມີປະໂຍຊນ໌ຂອງຕົນໄດ້ເຖິງແລ້ວໂດຍລຳດັບ ມີກິເລສເຄື່ອງປະກອບສັຕວ໌ໄວ້ໃນກົພຫມົດສິ້ນແລ້ວ ຫລຸດພົ້ນແລ້ວເພາະຮູ້ຊອບ ກິກຂຸນັ້ນຍ່ອມນ້ອມໃຈ ໄປສູ່ເຫຕຸ ໖ ສຖານ ຄື

໑. ນ້ອມໃຈໄປສູ່ບັຣພຊາ

໒. ນ້ອມໃຈໄປສູ່ຄວາມງຽບສງັດ

໓. ນ້ອມໃຈໄປສູ່ຄວາມບໍ່ບຽດບຽນ

໔. ນ້ອມໃຈໄປສູ່ຄວາມສິ້ນອຸປາທານ

໕. ນ້ອມໃຈໄປສູ່ຄວາມສິ້ນຕັຕຫາ ແລະ

໖. ນ້ອມໃຈໄປສູ່ຄວາມບໍ່ຫລົງໄຫລ

ໂດຍ-ຂ້ານ້ອຍ ກໍບາງເທື່ອຈະມີບາງທ່ານໃນພຣະສັມມ໌ວິນັຍນີ້ສຳຄັນເຫັນເຊັ່ນນີ້ວ່າ ທ່ານຜູ້ນີ້ອາສັຍຄຸຕແຕ່ພຽງສັທສາຢ່າງດຽວເປັນແນ່ ຈຶ່ງນ້ອມໃຈໄປສູ່ບັຣພຊາ ດັ່ງນີ້ຂ້ານ້ອຍ ກໍຂໍ້ນີ້ບໍ່ຄວຣເຫັນຢ່າງນັ້ນເລີຍ ກິກຂຸຂີຕາສົພຜູ້ຢູ່ຈົບພຣົຫ້ມຈັຣຍ໌ແລ້ວ ມີກິຈທີ່ຄວຣເຮັດໄດ້ທຳແລ້ວແລ້ວ ບໍ່ເຫັນວ່າຕົນຍັງມີກິຈທີ່ຈຳຈະຕ້ອງເຮັດ ຫຼືຈະຕ້ອງກັບສະສົມທຳກິຈທີ່ໄດ້ທຳແລ້ວ ຈຶ່ງນ້ອມໃຈສູ່ບັຣພຊາ ໂດຍທີ່ຕົນປຣາສຈາກຣາຄະ ເພາະສິ້ນຣາຄະ ຈຶ່ງນ້ອມໃຈໄປສູ່ບັຣພຊາ ໂດຍທີ່ຕົນປຣາສຈາກໂທສະ ເພາະສິ້ນໂທສະ ຈຶ່ງນ້ອມໃຈໄປສູ່ບັຣພຊາ ໂດຍທີ່ຕົນປຣາສຈາກໂມຫະ ເພາະສິ້ນໂມຫະ

ໂດຍ-ຂ້ານ້ອຍ ກໍບາງເທື່ອຈະມີບາງທ່ານໃນພຣະສັມມ໌ວິນັຍນີ້ ສຳຄັນເຫັນເຊັ່ນນີ້ວ່າ ທ່ານຜູ້ນີ້ປັຕຖນາລາກສັກກາຣະແລະຄວາມສັຣເສີຣເປັນແນ່ ຈຶ່ງນ້ອມໃຈໄປໃນຄວາມງຽບສງັດ ດັ່ງນີ້ ຂ້ານ້ອຍ ຂໍ້ນີ້ກໍບໍ່ຄວຣເຫັນຢ່າງນັ້ນເລີຍ ກິກຂຸຂີຕາສົພຜູ້ຢູ່ຈົບພຣົຫ້ມຈັຣຍ໌ແລ້ວ ມີກິຈທີ່ຄວຣເຮັດໄດ້ເຮັດແລ້ວແລ້ວ ບໍ່ເຫັນວ່າຕົນຍັງມີກິຈທີ່ຈຳຈະຕ້ອງເຮັດ ຫຼືຈະຕ້ອງກັບສະສົມທຳກິຈທີ່ໄດ້ເຮັດແລ້ວ ຈຶ່ງນ້ອມໃຈໄປສູ່ຄວາມງຽບສງັດ ໂດຍທີ່ຕົນປຣາສຈາກຣາຄະ ເພາະສິ້ນຣາຄະ ຈຶ່ງນ້ອມໃຈໄປສູ່ຄວາມງຽບສງັດ ໂດຍທີ່ຕົນປຣາສຈາກໂທສະ ເພາະສິ້ນໂທສະ ຈຶ່ງນ້ອມໃຈໄປສູ່ຄວາມງຽບສງັດ ໂດຍທີ່ຕົນປຣາສຈາກໂມຫະ ເພາະສິ້ນໂມຫະ

ໂດຍ-ຂ້ານ້ອຍ ກໍບາງເທື່ອຈະມີບາງທ່ານໃນພຣະສັມມ໌ວິນັຍນີ້ ສຳຄັນເຫັນເຊັ່ນນີ້ວ່າ ທ່ານຜູ້ນີ້ເຊື່ອຖືສີລັພພຕປຣາມາສ ໂດຍຄວາມເປັນແກ່ນສາຣເປັນແນ່ ຈຶ່ງນ້ອມໃຈໄປສູ່ຄວາມບໍ່ບຽດບຽນ ດັ່ງນີ້ ຂ້ານ້ອຍ ຂໍ້ນີ້ກໍບໍ່ຄວຣເຫັນຢ່າງນັ້ນເລີຍ ກິກຂຸຂີຕາສົພຜູ້ຢູ່ຈົບພຣົຫ້ມຈັຣຍ໌ແລ້ວ ມີກິຈທີ່ຄວຣເຮັດໄດ້ເຮັດແລ້ວແລ້ວ ບໍ່ເຫັນວ່າຕົນຍັງມີກິຈທີ່ຈຳຈະຕ້ອງເຮັດ ຫຼືຈະຕ້ອງກັບສະສົມທຳກິຈທີ່ໄດ້ເຮັດແລ້ວ ຈຶ່ງນ້ອມໃຈໄປສູ່ຄວາມບໍ່ບຽດບຽນ ໂດຍທີ່ຕົນປຣາສຈາກຣາຄະ ເພາະສິ້ນຣາຄະ ຈຶ່ງນ້ອມໃຈໄປສູ່ຄວາມບໍ່ບຽດບຽນ ໂດຍທີ່ຕົນປຣາສຈາກໂທສະ ເພາະສິ້ນໂທສະ ຈຶ່ງນ້ອມໃຈໄປສູ່ຄວາມບໍ່ບຽດບຽນ ໂດຍທີ່ຕົນປຣາສຈາກໂມຫະ ເພາະສິ້ນໂມຫະ

... ຈຶ່ງນ້ອມໃຈໄປສູ່ຄວາມສິ້ນອຸປາທານ ໂດຍທີ່ຕົນປຣາສຈາກຣາຄະ ເພາະສິ້ນຣາຄະ ຈຶ່ງນ້ອມໃຈໄປສູ່ຄວາມສິ້ນອຸປາທານ ໂດຍທີ່ຕົນປຣາສຈາກໂທສະ ເພາະສິ້ນໂທສະ ຈຶ່ງນ້ອມໃຈໄປສູ່ຄວາມສິ້ນອຸປາທານ ໂດຍທີ່ຕົນປຣາສຈາກໂມຫະ ເພາະສິ້ນໂມຫະ

... ຈຶ່ງນ້ອມໃຈໄປສູ່ຄວາມສິ້ນຕັຒຫາ ໂດຍທີ່ຕົນປຣາສຈາກຣາຄະ ເພາະສິ້ນຣາຄະ ຈຶ່ງນ້ອມໃຈໄປສູ່ຄວາມສິ້ນຕັຒຫາ ໂດຍທີ່ຕົນປຣາສຈາກໂທສະ ເພາະສິ້ນໂທສະ ຈຶ່ງນ້ອມໃຈໄປສູ່ຄວາມສິ້ນຕັຒຫາ ໂດຍທີ່ຕົນປຣາສຈາກໂມຫະ ເພາະສິ້ນໂມຫະ

... ຈຶ່ງນ້ອມໃຈໄປສູ່ຄວາມບໍ່ຫລົງໃຫລ ໂດຍທີ່ຕົນປຣາສຈາກຣາຄະ ເພາະສິ້ນຣາຄະ ຈຶ່ງນ້ອມໃຈໄປສູ່ຄວາມບໍ່ຫລົງໃຫລ ໂດຍທີ່ຕົນປຣາສຈາກໂທສະ ເພາະສິ້ນໂທສະ ຈຶ່ງນ້ອມໃຈໄປສູ່ຄວາມບໍ່ຫລົງໃຫລ ໂດຍທີ່ຕົນປຣາສຈາກໂມຫະ ເພາະສິ້ນໂມຫະ

ໂດຍ-ຂ້ານ້ອຍ ແມ້ຫາກຣູປາຣົມຓ໌ທີ່ຫຍາບ ຊຶ່ງຈະຄວຣຮູ້ຊັດດ້ວຍຈັກຂຸ ຜ່ານມາສູ່ທາງຈັກຂຸຂອງພິກຂຸຜູ້ມີຈິຕຫລຸດພົ້ນແລ້ວໂດຍດີຢ່າງນີ້ ກໍບໍ່ຄອບງຳຈິຕຂອງພິກຂຸນັ້ນໄດ້ເລີຍ ຈິຕຂອງພິກຂຸນັ້ນອັນອາຣົມຓ໌ບໍ່ເຮັດໃຫ້ເຈືອຕິດຢູ່ໄດ້ ເປັນສັມມ໌ຊາຕິຕັ້ງມັ່ນບໍ່ຫວັ່ນໄຫວ ແລະພິກຂຸນັ້ນຍ່ອມພິຈາຣຓາເຫັນຄວາມເກີດແລະຄວາມດັບຂອງຈິຕນັ້ນ

ແມ້ຫາກສັທທາຣົມຓ໌ທີ່ຫຍາບ ຊຶ່ງຈະຄວຣຮູ້ຊັດດ້ວຍໂສຕ ....

ແມ້ຫາກຄັນຂາຣົມຓ໌ທີ່ຫຍາບ ຊຶ່ງຈະຄວຣຮູ້ຊັດດ້ວຍຄານະ ....

ແມ້ຫາກຣສາຣົມຓ໌ທີ່ຫຍາບ ຊຶ່ງຈະຄວຣຮູ້ຊັດດ້ວຍຊິວຫາ ....

ແມ້ຫາກໂຜຕຖັພພາຣົມຓ໌ທີ່ຫຍາບ ຊຶ່ງຈະຄວຣຮູ້ຊັດດ້ວຍກາຍ ....

ແມ້ຫາກັມມ໌າຣົມຓ໌ທີ່ຫຍາບ ຊຶ່ງຈະຄວຣຮູ້ຊັດດ້ວຍມໂນ ຜ່ານມາສູ່ທາງໃຈຂອງພິກຂຸຜູ້ມີຈິຕຫລຸດພົ້ນແລ້ວໂດຍດີຢ່າງນີ້ ກໍບໍ່ຄອບງຳຈິຕຂອງພິກຂຸນັ້ນໄດ້ເລີຍ ຈິຕຂອງພິກຂຸນັ້ນອັນອາຣົມຓ໌ບໍ່ເຮັດໃຫ້ເຈືອຕິດຢູ່ໄດ້ ເປັນສັມມ໌ຊາຕິຕັ້ງມັ່ນບໍ່ຫວັ່ນໄຫວ ແລະພິກຂຸນັ້ນຍ່ອມພິຈາຣຓາເຫັນຄວາມເກີດແລະຄວາມດັບຂອງຈິຕນັ້ນ

ໂດຍ-ຂ້ານ້ອຍ ພູເຂົາລ້ວນແລ້ວດ້ວຍສິລາ ບໍ່ມີຊ່ອງ ບໍ່ມີໂພງ ເປັນແທ່ງທຶບອັນດຽວກັນ ແມ້ຫາກລົມຝົນຢ່າງແຮງ ພັດມາແຕ່ທິສຕະວັນອອກ ກໍຍັງພູເຂົານັ້ນໃຫ້ຫວັ່ນໄຫວສະເທືອນສະທ້ານບໍ່ໄດ້ເລີຍ

ແມ້ຫາກລົມຝົນຢ່າງແຮງ ພັດມາແຕ່ທິສຕະວັນຕົກ ....

ແມ້ຫາກລົມຝົນຢ່າງແຮງ ພັດມາແຕ່ທິສເໜືອ ....

ແມ້ຫາກລົມຝົນຢ່າງແຮງ ພັດມາແຕ່ທິສໃຕ້ ກໍຍັງພູເຂົານັ້ນໃຫ້ຫວັ່ນໄຫວ ສະເທືອນສະທ້ານບໍ່ໄດ້ເລີຍ ແມ້ແນວໃດ.

ໂດຍ-ຂ້ານ້ອຍ ແມ້ຫາກຣູປາຣົມຓ໌ທີ່ຫຍາບ ຊຶ່ງຈະຄວຣຣູ້ຊັດດ້ວຍຈັກຂຸ ຜ່ານມາສູ່ທາງຈັກຂຸຂອງກິກຂຸຜູ້ມີຈິຕຫລຸດພົ້ນແລ້ວໂດຍດີຢ່າງນີ້ ກໍຍ່ອມບໍ່ຄອບງຳຈິຕຂອງກິກຂຸນັ້ນໄດ້ເລີຍ ຈິຕຂອງກິກຂຸນັ້ນອັນອາຣົມຓ໌ບໍ່ເຮັດໃຫ້ເຈືອຕິດຢູ່ໄດ້ ເປັນສັມມ໌ຊາຕິຕັ້ງມັ່ນບໍ່ຫວັ່ນໄຫວ ແລະກິກຂຸນັ້ນຍ່ອມພິຈາຣຓາເຫັນຄວາມເກີດແລະຄວາມດັບຂອງຈິຕນັ້ນ.

ແມ້ຫາກສັທທາຣົມຓ໌ທີ່ຫຍາບ ຊຶ່ງຈະຄວຣຣູ້ຊັດດ້ວຍໂສຕ ....

ແມ້ຫາກຄັນຣາຣົມຓ໌ທີ່ຫຍາບ ຊຶ່ງຈະຄວຣຣູ້ດ້ວຍຆານະ ....

ແມ້ຫາກຣສາຣົມຓ໌ທີ່ຫຍາບ ຊຶ່ງຈະຄວຣຣູ້ດ້ວຍຊິວຫາ ....

ແມ້ຫາກໂຜຕຖັພພາຣົມຓ໌ທີ່ຫຍາບ ຊຶ່ງຈະຄວຣຣູ້ຊັດດ້ວຍກາຍ ....

ແມ້ຫາກສັມມ໌າຣົມຓ໌ທີ່ຫຍາບ ຊຶ່ງຈະຄວຣຣູ້ຊັດດ້ວຍມໂນ ຜ່ານມາສູ່ທາງໃຈຂອງກິກຂຸຜູ້ມີຈິຕຫລຸດພົ້ນແລ້ວໂດຍດີຢ່າງນີ້ ກໍບໍ່ຄອບງຳຈິຕຂອງກິກຂຸນັ້ນໄດ້ເລີຍ ຈິຕຂອງກິກຂຸນັ້ນອັນອາຣົມຓ໌ບໍ່ເຮັດໃຫ້ເຈືອຕິດຢູ່ໄດ້ ເປັນສັມມ໌ຊາຕິຕັ້ງມັ່ນບໍ່ຫວັ່ນໄຫວ ແລະກິກຂຸນັ້ນຍ່ອມພິຈາຣຓາເຫັນຄວາມເກີດແລະຄວາມດັບຂອງຈິຕນັ້ນ ແນວນັ້ນເໝືອນກັນແລ.

ນິຄົມຄາຖາ

[໔] ກິກຂຸນ້ອມໄປສູ່ບັຣພຊາ ໑ ຜູ້ນ້ອມໄປສູ່ຄວາມງຽບສງັດ
ແຫ່ງໃຈ ໑ ຜູ້ນ້ອມໄປສູ່ຄວາມບໍ່ບຽດບຽນ ໑ ຜູ້ນ້ອມໄປສູ່
ຄວາມສິ້ນອຸປາທານ ໑ ຜູ້ນ້ອມໄປສູ່ຄວາມສິ້ນຕັຓຫາ ໑ ຜູ້ນ້ອມ
ໄປສູ່ຄວາມບໍ່ຫລົງໄຫລແຫ່ງໃຈ ໑ ຍ່ອມມີຈິຕຫລຸດພົ້ນໂດຍ
ຊອບ ເພາະເຫັນຄວາມເກີດ ແລະຄວາມດັບແຫ່ງອາຍຕນະ
ກິກຂຸມີຈິຕຫລຸດພົ້ນແລ້ວໂດຍດີ ມີຈິຕສງົບນັ້ນ ບໍ່ຕ້ອງກັບ
ສະສົມທຳກິຈທີ່ໄດ້ເຮັດແລ້ວ ກິຈທີ່ຈຳຈະຕ້ອງເຮັດກໍບໍ່ມີ ປຽບ
ເໝືອນພູເຂົາທີ່ລ້ວນແລ້ວດ້ວຍສິລາເປັນແທ່ງທຶບອັນດຽວກັນ

ຍ່ອມບໍ່ສະເທືອນດ້ວຍລົມ ແນວໃດ ຣູປ ສຽງ ກລິ່ນ ຣົສ ຜັສສະ ແລະສັມມ໌າຣົມຕ໌ ທັ້ງທີ່ໜ້າປັຕຖນາ ແລະບໍ່ໜ້າປັຕຖນາທັ້ງສິ້ນ ຍ່ອມທຳທ່ານຜູ້ຄົງທີ່ໃຫ້ຫວັ່ນໄຫວບໍ່ໄດ້ ແນວນັ້ນ ຈິຕຂອງທ່ານຕັ້ງມັ່ນ ຫລຸດພົ້ນແລ້ວ ທ່ານຍ່ອມພິຈາຣຕາເຫັນຄວາມເກີດ ແລະຄວາມດັບຂອງຈິຕນັ້ນດ້ວຍ.

ທຣົງອນຸຍາຕເກີບ

[໕] ລຳດັບນັ້ນ ພຣະຜູ້ມີພຣະກາຄ ຣັບສັ່ງກະພິກຂຸທັ້ງຫລາຍວ່າ ດ້ວຍວິທີຢ່າງນີ້ແລ ພິກຂຸທັ້ງຫລາຍ ທີ່ພວກກຸລບຸຕຣ໌ພຍາກຣຕ໌ອຣຫັຕກ່າວແຕ່ເນື້ອຄວາມ ແລະບໍ່ນ້ອມເຂົ້າໄປຫາຕົນ ກໍແຕ່ວ່າໂມຄບຸຣຸຊບາງຈຳພວກໃນສັມມ໌ວິນັຍນີ້ພຍາກຣຕ໌ອຣຫັຕ ທຳເປັນເຫມືອນເປັນຂອງສນຸກ ກາຍຫລັງຕ້ອງທຸກຂ໌ເດືອດຮ້ອນ ດັ່ງນີ້. ຕໍ່ແຕ່ນັ້ນພຣະອົງຄ໌ຣັບສັ່ງກັບທ່ານພຣະໂສຕະວ່າ ດູຣາໂສຕະ ທ່ານເປັນສຸຂຸມາລຊາຕິ ເຮົາອນຸຍາຕເກີບຊັ້ນດຽວແກ່ທ່ານ.

ທ່ານພຣະໂສຕະຂາບທູລວ່າ ຂ້າພຣະພຸທສເຈົ້າລະເງິນປະມາຕ ໘໐ ເຫຼັ້ມກຽນ ແລະລະກອງພົລປະກອບດ້ວຍຊ້າງ ໗ ເຊືອກ ອອກຈາກເຮືອນບວຊເປັນບັຣພຊິຕແລ້ວ ຈະມີຜູ້ກ່າວແກ່ພຣະພຸທສເຈົ້າວ່າໂສຕໂກຄິວິສະລະເງິນປະມາຕ ໘໐ ເຫຼັ້ມກຽນ ແລະລະກອງພົລປະກອບດ້ວຍຊ້າງ ໗ ເຊືອກ ອອກຈາກເຮືອນບວຊເປັນບັຣພຊິຕແລ້ວ ດຽວນີ້ຍັງຂ້ອງຢູ່ໃນເຣື່ອງເກີບຊັ້ນດຽວ ຖ້າພຣະຜູ້ມີພຣະກາຄຈະໄດ້ທຣົງອນຸຍາຕແກ່ພຣະພິກຂຸສົງຄ໌ ແມ້ຂ້າພຣະພຸທສເຈົ້າຈະໃຊ້ສອຍ ຖ້າຈະບໍ່ທຣົງອນຸຍາຕແກ່ພຣະພິກຂຸສົງຄ໌ ແມ້ຂ້າພຣະພຸທສເຈົ້າກໍຈະບໍ່ໃຊ້ສອຍ ຂ້ານ້ອຍ.

ລຳດັບນັ້ນ ພຣະຜູ້ມີພຣະກາຄທຣົງທຳສັມມີກຖາ ໃນເພາະເຫຕຸເປັນເຄົ້າມູລນັ້ນ ໃນເພາະເຫຕຸແຣກເກີດນັ້ນ ແລ້ວຣັບສັ່ງກະພິກຂຸທັ້ງຫລາຍວ່າ ດູຣາພິກຂຸທັ້ງຫລາຍ ເຮົາອນຸຍາຕເກີບຊັ້ນດຽວ ພິກຂຸບໍ່ຄວຣສວມເກີບ ໔ ຊັ້ນ ບໍ່ຄວຣສວມເກີບ ໓ ຊັ້ນ ບໍ່ຄວຣສວມເກີບຫລາຍຊັ້ນ ອົງຄ໌ໃດສວມຕ້ອງອາບັຕິທຸກກົຍ.

ພຣະພຸທສບັນຍັຕິຫ້າມສວມເກີບສີຕ່າງໆ

[໖] ກໍໂດຍສມັຍນັ້ນແລ ພຣະຈັພພັຄຄີຍ໌ສວມເກີບສີຂຽວລ້ວນ ... ສວມເກີບສີເຫລືອງລ້ວນ ... ສວມເກີບສີແດງລ້ວນ ... ສວມເກີບສີບານເຢັນລ້ວນ ... ສວມເກີບສີດຳລ້ວນ ... ສວມເກີບສີແສດລ້ວນ ... ສວມເກີບສີຊົມພູລ້ວນ ຊາວບ້ານພາກັນເພ່ງໂທຊ ຕິຕຽນ ໂພນທະນາວ່າ ເຫມືອນພວກ

ຄຣິຫັສຖ໌ຜູ້ບໍຣິໂພຄການ ກິກຂຸທັ້ງຫລາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄ ທຣົງບັນລັຕິຫ້າມວ່າ ດູຣາກິກຂຸທັ້ງຫລາຍ ກິກຂຸບໍ່ຄວຣສວມເກີບສີຂຽວລ້ວນ ບໍ່ຄວຣສວມເກີບ ສີເຫລືອງລ້ວນ ບໍ່ຄວຣສວມເກີບສີແດງລ້ວນ ບໍ່ຄວຣສວມເກີບສີບານເຢັນລ້ວນ ບໍ່ຄວຣສວມເກີບ ສີດຳລ້ວນ ບໍ່ຄວຣສວມເກີບສີແສດລ້ວນ ບໍ່ຄວຣສວມເກີບສີຊົມພູລ້ວນ ອົງຄ໌ໃດສວມ ຕ້ອງອາບັຕິ ທຸກກົຜ.

ພຣະພຸທສບັນລັຕິຫ້າມສວມເກີບມີຫູບໍ່ສົມຄວຣ

ສມັຍຕໍ່ມາ ພຣະລັພພັຄຄີຍ໌ສວມເກີບມີຫູສີຂຽວ ... ສວມເກີບມີຫູສີເຫລືອງ ... ສວມເກີບ ມີຫູສີແດງ ... ສວມເກີບມີຫູສີບານເຢັນ ... ສວມເກີບມີຫູສີດຳ ... ສວມເກີບມີຫູສີແສດ ... ສວມເກີບ ມີຫູສີຊົມພູ ຊາວບ້ານພາກັນເພ່ງໂທຘ ຕິຕຽນ ໂພນທະນາວ່າ ເຫມືອນພວກຄຣິຫັສຖ໌ຜູ້ບໍຣິໂພຄການ ກິກຂຸທັ້ງຫລາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄ ທຣົງບັນລັຕິຫ້າມວ່າ ດູຣາກິກຂຸ ທັ້ງຫລາຍ ກິກຂຸບໍ່ຄວຣສວມເກີບມີຫູສີຂຽວ ບໍ່ຄວຣສວມເກີບມີຫູສີເຫລືອງ ບໍ່ຄວຣສວມເກີບ ມີຫູສີແດງ ບໍ່ຄວຣສວມເກີບມີຫູສີບານເຢັນ ບໍ່ຄວຣສວມເກີບມີຫູສີດຳ ບໍ່ຄວຣສວມເກີບມີຫູ ສີແສດ ບໍ່ຄວຣສວມເກີບມີຫູສີຊົມພູ ອົງຄ໌ໃດສວມ ຕ້ອງອາບັຕິທຸກກົຜ.

ພຣະພຸທສບັນລັຕິທຣົງຫ້າມສວມເກີບບາງຊນິດ

ສມັຍຕໍ່ມາ ພຣະລັພພັຄຄີຍ໌ສວມເກີບຕິດແຜ່ນຫນັງຫຸ້ມສົ້ນ ... ສວມເກີບຫຸ້ມແຂ້ງ .... ສວມເກີບປົກຫລັງຕີນ ... ສວມເກີບຍັດນຸ່ນ ... ສວມເກີບມີຫູລາຍຄ້າຍຂົນປີກນົກກະທາ ... ສວມເກີບທີ່ ເຮັດຫູງອນມີສັຕການເໝືອນເຂົາແກະ ... ສວມເກີບທີ່ເຮັດຫູງອນມີສັຕການເໝືອນເຂົາແພະ ... ສວມເກີບ ທີ່ເຮັດປະກອບຫູງອນເໝືອນຫາງແມງງອດ ... ສວມເກີບທີ່ຍິບດ້ວຍປີກນົກຍູງ ... ສວມເກີບອັນວິຈິຕຣ໌ ຄົນທັ້ງຫລາຍເພ່ງໂທຘ ຕິຕຽນ ໂພນທະນາວ່າ ເຫມືອນພວກຄຣິຫັສຖ໌ຜູ້ບໍຣິໂພຄການ ກິກຂຸທັ້ງຫລາຍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄ ທຣົງບັນລັຕິຫ້າມວ່າ ດູຣາກິກຂຸທັ້ງຫລາຍ ກິກຂຸບໍ່ຄວຣສວມເກີບຕິດແຜ່ນຫນັງຫຸ້ມສົ້ນ ບໍ່ຄວຣສວມເກີບຫຸ້ມແຂ້ງ ບໍ່ຄວຣສວມເກີບປົກຫລັງຕີນ ບໍ່ຄວຣສວມເກີບຍັດນຸ່ນ ບໍ່ຄວຣສວມເກີບມີຫູລາຍຄ້າຍຂົນປີກນົກກະທາ ບໍ່ຄວຣສວມເກີບ ທີ່ເຮັດຫູງອນມີສັຕການເໝືອນເຂົາແກະ ບໍ່ຄວຣສວມເກີບທີ່ເຮັດຫູງອນມີສັຕການເໝືອນເຂົາແພະ ບໍ່ຄວຣສວມ ເກີບທີ່ເຮັດປະກອບຫູງອນເໝືອນຫາງແມງງອດ ບໍ່ຄວຣສວມເກີບທີ່ຍິບດ້ວຍຂົນປີກນົກຍູງ ບໍ່ຄວຣສວມ ເກີບທີ່ອັນວິຈິຕຣ໌ ອົງຄ໌ໃດສວມ ຕ້ອງອາບັຕິທຸກກົຜ.

ພຣະພຸທສບັຍຍັຕິທຣົງຫ້າມສວມເກີບຂລິບຫນັງ

ສມັຍຕໍ່ມາ ພຣະວັພພັຄຄີຍ໌ສວມເກີບຂລິບດ້ວຍຫນັງຣາຊສີຫ໌ ... ສວມເກີບຂລິບດ້ວຍຫນັງເສືອໂຄ່ງ ... ສວມເກີບຂລິບດ້ວຍຫນັງເສືອເຫລືອງ ... ສວມເກີບຂລິບດ້ວຍຫນັງເໜັ້ນ ... ສວມເກີບຂລິບດ້ວຍຫນັງນາກ ... ສວມເກີບຂລິບດ້ວຍຫນັງແມວ ... ສວມເກີບຂລິບດ້ວຍຫນັງຄ່າງ ... ສວມເກີບຂລິບດ້ວຍຫນັງນົກເຄົ້າ ຄົນທັ້ງຫລາຍເພ່ງໂທສ ຕິຕຽນ ໂພນທະນາວ່າ ເຫມືອນພວກຄຣືຫັສຖ໌ຜູ້ບໍຣິໂພຄກາມ ກິກຊຸທັ້ງຫລາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄ ທຣົງບັຍຍັຕິຫ້າມວ່າ ດູຣາກິກຊຸທັ້ງຫລາຍ ກິກຊຸບໍ່ຄວຣສວມເກີບຂລິບດ້ວຍຫນັງຣາຊສີຫ໌ ບໍ່ຄວຣສວມເກີບຂລິບດ້ວຍຫນັງເສືອໂຄ່ງ ບໍ່ຄວຣສວມເກີບຂລິບດ້ວຍຫນັງເສືອເຫລືອງ ບໍ່ຄວຣສວມເກີບຂລິບດ້ວຍຫນັງເໜັ້ນ ບໍ່ຄວຣສວມເກີບຂລິບດ້ວຍຫນັງນາກ ບໍ່ຄວຣສວມເກີບຂລິບດ້ວຍຫນັງແມວ ບໍ່ຄວຣສວມເກີບຂລິບດ້ວຍຫນັງຄ່າງ ບໍ່ຄວຣສວມເກີບຂລິບດ້ວຍຫນັງນົກເຄົ້າ ອົງຄ໌ໃດສວມ ຕ້ອງອາບັຕິທຸກກົຜ.

ທຣົງອນຸຍາຕເກີບຫລາຍຊັ້ນທີ່ໃຊ້ແລ້ວ

[໗] ຄັ້ງນັ້ນ ເວລາເຊົ້າ ພຣະຜູ້ມີພຣະກາຄທຣົງອັນຕຣວາສົກແລ້ວ ທຣົງຖືບາຕຣ໌ຈີວຣສເດັຈພຣະພຸທສດຳເນີນເຂົ້າໄປບິຕທບາຕໃນພຣະນຄຣຣາຊຄຣືຫ໌ ມີກິກຊຸອົງຄ໌ນຶ່ງເປັນປັຈຈາສມຕະ ແຕ່ກິກຊຸອົງຄ໌ນັ້ນຍ່າງຂະຍົກຂະເຍັກຕາມພຣະຜູ້ມີພຣະກາຄໄປເບື້ອງພຣະ**ປຣືສຜາງຄ໌**[4] ອຸບາສົກຄົນນຶ່ງສວມເກີບຫລາຍຊັ້ນໄດ້ເຫັນພຣະຜູ້ມີພຣະກາຄກຳລັງສເດັຈພຣະພຸທສດຳເນີນມາແຕ່ໄກ ເມື່ອແລ້ວຈຶ່ງຖອດເກີບ ເຂົ້າໄປເຝົ້າພຣະຜູ້ມີພຣະກາຄ ຖວາຍບັງຄົມແລ້ວເຂົ້າໄປຫາກິກຊຸອົງຄ໌ນັ້ນ ອກິວາທແລ້ວຈຶ່ງໄດ້ຖາມວ່າ ເພາະຫຍັງພຣະຜູ້ເປັນເຈົ້າຈຶ່ງຍ່າງຂະຍົກຂະເຍັກ ຂ້ານ້ອຍ?

ກິກຊຸອົງຄ໌ນັ້ນຕອບວ່າ ເພາະເທົ້າທັ້ງສອງຂອງອາຕມາແຕກ ຂ້ານ້ອຍ.

ອຸ. ນິມົນຕ໌ພຣະຜູ້ເປັນເຈົ້າຮັບເກີບ ຂ້ານ້ອຍ.

ກິ. ຢ່າເລີຍ ທ່ານ ເພາະຜູ້ມີພຣະກາຄທຣົງຫ້າມເກີບຫລາຍຊັ້ນ.

ພຣະຜູ້ມີພຣະກາຄຮັບສັ່ງວ່າ ທ່ານຮັບເກີບນັ້ນໄດ້ ກິກຊຸ.

ຄັ້ງນັ້ນ ພຣະຜູ້ມີພຣະກາຄທຣົງທຳສັມມີກຖາ ໃນເພາະເຫຕຸເປັນເຄົ້າມູລນັ້ນ ໃນເພາະເຫຕຸແຮກເກີດນັ້ນ ແລ້ວຮັບສັ່ງກະກິກຊຸທັ້ງຫລາຍວ່າ ດູຣາກິກຊຸທັ້ງຫລາຍ ເຮົາອນຸຍາຕເກີບຫລາຍຊັ້ນທີ່ໃຊ້ແລ້ວ ດູຣາກິກຊຸທັ້ງຫລາຍ ເກີບຫລາຍຊັ້ນທີ່ໃຫມ່ ກິກຊຸບໍ່ຄວຣສວມ ອົງຄ໌ໃດສວມ ຕ້ອງອາບັຕິທຸກກົຜ.

ຫ້າມສວມເກີບໃນທີ່ບາງແຫ່ງ

[໘] ກໍໂດຍສມັຍນັ້ນ ພຣະຜູ້ມີພຣະກາຄບໍ່ໄດ້ທຣົງຈລອງພຣະບາທສເດັຈພຣະດຳເນີນຢູ່ໃນທີ່ແຈ້ງ ກິກຊຸເຖຣະທັ້ງຫລາຍຮູ້ວ່າ ພຣະສາສດາບໍ່ໄດ້ທຣົງຈລອງພຣະບາທສເດັຈພຣະພຸທສດຳເນີນຢູ່ ດັ່ງນີ້

---

4 **ປຣືສຜາງຄ໌** ທາງຫລັງ

ຈຶ່ງຢ່າງບໍ່ສວມເກີບ ເມື່ອພຣະສາສດາສເດັຈພຣະພຸທສດຳເນີນບໍ່ໄດ້ທຮົງສວລອງພຣະບາທ ແມ້ເມື່ອກິກຂຸ ຜູ້ເຖຣະທັ້ງຫລາຍຢ່າງກໍບໍ່ສວມເກີບ ແຕ່ພຣະສັພພັຄຄີຍ໌ຢ່າງສວມເກີບ ບັຣດາກິກຂຸທີ່ເປັນຜູ້ມັກຫນ້ອຍ ... ຈຶ່ງເພ່ງໂທษ ຕິຕຽນ ໂພນທະນາວ່າ ເມື່ອພຣະສາສດາສເດັຈພຣະພຸທສດຳເນີນບໍ່ໄດ້ທຮົງສວລອງພຣະບາທ ແມ້ເມື່ອກິກຂຸຜູ້ເຖຣະທັ້ງຫລາຍຢ່າງກໍບໍ່ສວມເກີບ ເປັນຫຍັງພຣະສັພພັຄຄີຍ໌ຈຶ່ງໄດ້ສວມເກີບລະ? ແລ້ວ ຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ.

ພຣະຜູ້ມີພຣະກາຄທຮົງສອບຖາມກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ຂ່າວວ່າເມື່ອເຮົາຜູ້ສາສດາ ຢ່າງບໍ່ໄດ້ສວມເກີບ ແມ້ເມື່ອກິກຂຸຜູ້ເຖຣະທັ້ງຫລາຍຢ່າງກໍບໍ່ສວມເກີບ ແຕ່ພຣະສັພພັຄຄີຍ໌ຢ່າງສວມ ເກີບ ແທ້ບໍ່? ກິກຂຸທັ້ງຫລາຍຂາບທູລວ່າ ແທ້ຂ້ານ້ອຍ.

ພຣະຜູ້ມີພຣະກາຄພຸທສເຈົ້າທຮົງຕິຕຽນວ່າ ດູຣາກິກຂຸທັ້ງຫລາຍ ເມື່ອເຮົາຜູ້ສາສດາຢ່າງບໍ່ໄດ້ສວມ ເກີບ ແມ້ເມື່ອກິກຂຸຜູ້ເຖຣະທັ້ງຫລາຍຢ່າງກໍບໍ່ສວມເກີບ ແຕ່ເປັນຫຍັງໂມฆບຸຣຸษເຫລົ່ານັ້ນຈຶ່ງໄດ້ຢ່າງ ສວມເກີບລະ ອັນຄຣືຫັສຖ໌ຊື່ເຫລົ່ານີ້ນຸ່ງຫົ່ມຜ້າຂາວ ຍັງມີຄວາມເຄາຣົພ ມີຄວາມຍຳເກຼງ ມີຄວາມ ປະພຶຕສເມີກາຄ ໃນອາຈາຣຍ໌ທັ້ງຫລາຍ ເພາະເຫຕຸແຫ່ງສິລປະຊຶ່ງເປັນເຄື່ອງລ້ຽງຊີພຢູ່ ດູຣາກິກຂຸ ທັ້ງຫລາຍ ຄວຣງາມໃນສັມມ໌ວິນັຍນີ້ເປັນແນ່ ຖ້າພວກທ່ານບວຊໃນສັມມ໌ວິນັຍອັນເຮົາກ່າວດີແລ້ວຢ່າງນີ້ ຈະຄວຣມີຄວາມເຄາຣົພ ມີຄວາມຍຳເກຼງ ມີຄວາມປະພຶຕສເມີກາຄ ຢູ່ໃນອາຈາຣຍ໌ ໃນກິກຂຸປູນອາຈາຣຍ໌ ໃນອຸປັຊຊາຍະ ໃນກິກຂຸປູນອຸປັຊຊາຍະ ກາຣກະທຳຂອງເຫລົ່າໂມฆບຸຣຸษທັ່ນ ບໍ່ເປັນໄປເພື່ອຄວາມ ເລື່ອມໃສຂອງຊຸມຊົນທີ່ຍັງບໍ່ເລື່ອມໃສ ... ເມື່ອແລ້ວທຮົງທຳສັມມີກາຖາຣັບສັ່ງກະກິກຂຸທັ້ງຫລາຍວ່າ ດູຣາກິກຂຸ ທັ້ງຫລາຍ ເມື່ອອາຈາຣຍ໌ ກິກຂຸປູນອາຈາຣຍ໌ ອຸປັຊຊາຍະ ກິກຂຸປູນອຸປັຊຊາຍະ ຢ່າງບໍ່ໄດ້ສວມເກີບ ກິກຂຸບໍ່ຄວຣຢ່າງສວມເກີບ ອົງຄ໌ໃດຢ່າງສວມເກີບ ຕ້ອງອາບັຕິທຸກກົฎ ດູຣາກິກຂຸທັ້ງຫລາຍ ກິກຂຸ ບໍ່ຄວຣສວມເກີບກາຍໃນອາຣາມ ອົງຄ໌ໃດສວມ ຕ້ອງອາບັຕິທຸກກົฎ.

ກິກຂຸອາພາธເປັນໜໍ່ທີ່ຕີນ

[໗] ກໍໂດຍສມັຍນັ້ນແລ ກິກຂຸອົງຄ໌ນຶ່ງອາພາธເປັນໜໍ່ທີ່ຕີນ ກິກຂຸທັ້ງຫລາຍໂຈມກິກຂຸອົງຄ໌ນັ້ນ ໃຫ້ຖ່າຍອຸຈຈາຣະແດ່ ໃຫ້ຖ່າຍປັສສາວະແດ່ ພຣະຜູ້ມີພຣະກາຄສເດັຈທ່ຽວຈາຣິກຕາມເສນາສນະ ໄດ້ ທອດພຣະເນຕຣ໌ເຫັນພວກກິກຂຸກຳລັງໂຈມກິກຂຸອົງຄ໌ນັ້ນໃຫ້ຖ່າຍອຸຈຈາຣະແດ່ ໃຫ້ຖ່າຍປັສສາວະແດ່ ຈຶ່ງ ສເດັຈເຂົ້າໄປໃກ້ກິກຂຸພວກນັ້ນ ແລ້ວໄດ້ຕຣັສຖາມວ່າ ດູຣາກິກຂຸທັ້ງຫລາຍ ກິກຂຸອົງຄ໌ນີ້ອາພາธເປັນຫຍັງ? ກິກຂຸທັ້ງຫລາຍຂາບທູລວ່າ ທ່ານອົງຄ໌ນີ້ອາພາธເປັນໜໍ່ທີ່ຕີນ ພວກຂ້າພຣະພຸທສເຈົ້າຕ້ອງໂຈມທ່ານອົງຄ໌ນີ້ ໃຫ້ຖ່າຍອຸຈຈາຣະແດ່ ໃຫ້ຖ່າຍປັສສາວະແດ່ ຂ້ານ້ອຍ.

ພຣະພຸທສານຸຍາຕໃຫ້ສວມເກີບເປັນພິເສຍ

[໑໐] ລຳດັບນັ້ນ ພຣະຜູ້ມີພຣະກາຄທຣົງທຳສັມມີກາຖາ ໃນເພາະເຫຕຸເປັນເຄົ້າມູລນັ້ນ ໃນເພາະເຫຕຸແຮກເກີດນັ້ນ ແລ້ວຮັບສັ່ງກະກິກຂຸທັ້ງຫລາຍວ່າ ດູຮາກິກຂຸທັ້ງຫລາຍ ເຮົາອນຸຍາຕໃຫ້ກິກຂຸຜູ້ມີຕີນຊອກຊ້ຳ ຫຼືມີຕີນແຕກ ຫຼືອາພາຮມີທີ່ທີ່ຕີນ ສວມເກີບໄດ້

ສມັຍຕໍ່ມາ ກິກຂຸທັ້ງຫລາຍມີຕີນບໍ່ໄດ້ລ້າງ ຂຶ້ນຕຽງແດ່ ຂຶ້ນຕັ່ງແດ່ ທັ້ງຈີວຮ ທັ້ງເສນາສນະຍ່ອມເສັຽຫາຍ ພວກກິກຂຸຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕແກ່ກິກຂຸທັ້ງຫລາຍວ່າ ດູຮາກິກຂຸທັ້ງຫລາຍ ເຮົາອນຸຍາຕໃຫ້ສວມເກີບໃນຂຕະທີ່ຄິດວ່າບຶດນຶ່ງຈະຂຶ້ນຕຽງ ຫຼືຂຶ້ນຕັ່ງ.

ສມັຍຕໍ່ມາ ເວລາກາງຄືນ ກິກຂຸທັ້ງຫລາຍຍ່າງໄປສູ່ໂຮງອຸໂບສຶຖກໍດີ ສູ່ທີ່ປະຊຸມກໍດີ ຍ່ອມຫຍຽບຕໍແດ່ ຫນາມແດ່ ໃນທີ່ມືດ ເທົ້າທັ້ງສອງໄດ້ຮັບບາດເຈັບ ກິກຂຸທັ້ງຫລາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ.

ພຣະຜູ້ມີພຣະກາຄຕຣັສອນຸຍາຕແກ່ກິກຂຸທັ້ງຫລາຍວ່າ ດູຮາກິກຂຸທັ້ງຫລາຍ ກາຍໃນອາຮາມ ເຮົາອນຸຍາຕໃຫ້ສວມເກີບ ແລະໃຊ້ກະບອງໄຟ ປະທີປ ໄມ້ຕີນໄດ້.

ພຣະພຸທສບັນຍັຕິຫ້າມສວມຊຽງຕີນໄມ້

ເມື່ອຕໍ່ມາ ເຖິງເວລາປັຈຈຸສມັຍແຫ່ງຣາຕຣີ ພຣະຉັພພັຄຄີຍ໌ລຸກຂຶ້ນສວມຊຽງຕີນທີ່ເຮັດດ້ວຍໄມ້ແລ້ວຍ່າງຢູ່ກາງແຈ້ງ ມີສຽງຂຕະຂຕະ ດັງອຶກທຶກ ກ່າວດີຣັຈສານກາຖາ ມີເຣື່ອງຕ່າງໆ ຄື ເວົ້າເຣື່ອງພຣະຣາຊາ ເຣື່ອງໂຈຣ ເຣື່ອງມຫາອຳມາຕຍ໌ ເຣື່ອງຂຸນພົລ ເຣື່ອງກັຍ ເຣື່ອງຣົບ ເຣື່ອງເຂົ້າ ເຣື່ອງນ້ຳ ເຣື່ອງຜ້າ ເຣື່ອງທີ່ນອນ ເຣື່ອງດອກໄມ້ ເຣື່ອງຂອງຫອມ ເຣື່ອງຍາຕິ ເຣື່ອງຍານ ເຣື່ອງບ້ານ ເຣື່ອງນິຄົມ ເຣື່ອງນຄຣ ເຣື່ອງຊົນບົທ ເຣື່ອງສຕຣີ ເຣື່ອງບຸຣຸຍ ເຣື່ອງຄົນກລ້າຫານ ເຣື່ອງຮ່ອມ ເຣື່ອງທ່ານ້ຳ ເຣື່ອງຄົນທີ່ລ່ວງລັບໄປແລ້ວ ເຣື່ອງຫຍິບຫຍ່ອຍ ເຣື່ອງໂລກ ເຣື່ອງທະເລ ເຣື່ອງຄວາມຈເຣີລແລະຄວາມເສື່ອມດ້ວຍປະການນັ້ນໆ ຫຍຽບແມງຕາຍເສັຽແດ່ ຍັງກິກຂຸທັ້ງຫລາຍໃຫ້ເຄື່ອນຈາກສມາຣິແດ່ ບັຣດາກິກຂຸທີ່ເປັນຜູ້ມັກຫນ້ອຍ .... ຕ່າງກໍເພ່ງໂທຍ ຕິຕຽນ ໂພນທະນາວ່າ ເປັນຫຍັງພຣະຉັພພັຄຄີຍ໌ ເມື່ອເວລາປັຈຈຸສມັຍແຫ່ງຣາຕຣີ ໄດ້ລຸກຂຶ້ນສວມຊຽງຕີນທີ່ເຮັດດ້ວຍໄມ້ແລ້ວຍ່າງຢູ່ກາງແຈ້ງ ມີສຽງຂຕະຂຕະ ດັງອຶກທຶກ ກ່າວດີຣັຈສານກາຖາ ມີເຣື່ອງຕ່າງໆ ຄື ເວົ້າເຣື່ອງພຣະຣາຊາ ເຣື່ອງໂຈຣ ... ເຣື່ອງຄວາມຈເຣີລແລະຄວາມເສື່ອມດ້ວຍປະການນັ້ນໆ ຫຍຽບແມງຕາຍເສັຽແດ່ ຍັງກິກຂຸທັ້ງຫລາຍໃຫ້ເຄື່ອນຈາກສມາຣິແດ່ ແລ້ວຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ.

ພຣະຜູ້ມີພຣະກາຄທຣົງສອບຖາມກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ຂ່າວວ່າກິກຂຸຉັພພັຄຄີຍ໌ ເມື່ອປັຈຈຸສມັຍແຫ່ງຣາຕຣີ ໄດ້ລຸກຂຶ້ນສວມຂຽງຕີນທີ່ເຮັດດ້ວຍໄມ້ ແລ້ວຍ່າງຢູ່ກາງແຈ້ງ ມີສຽງຂຕະຂຕະ ດັງອຶກທຶກ ກ່າວດິຣັຈຉານກຖາ ມີເຣື່ອງຕ່າງໆ ຄື ເວົ້າເຣື່ອງພຣະຣາຊາ ເຣື່ອງໂຈຣ ... ເຣື່ອງຄວາມຈເຣີຍ ແລະຄວາມເສື່ອມດ້ວຍປະກາຣນັ້ນໆ ຫຽບແມງຕາຍເສັຽແດ່ ຍັງກິກຂຸທັ້ງຫລາຍໃຫ້ເຄື່ອນຈາກສມາຘິ ແດ່ ແທ້ບໍ່?

ກິກຂຸທັ້ງຫລາຍທູລຮັບວ່າ ແທ້ຂ້ານ້ອຍ.

ພຣະຜູ້ມີພຣະກາຄພຸທສເຈົ້າທຣົງຕິຕຽນວ່າ ... ເມື່ອແລ້ວທຣົງທຳທັມມີກຖາຮັບສັ່ງກະກິກຂຸທັ້ງຫລາຍ ວ່າ ດູຣາກິກຂຸທັ້ງຫລາຍ ຂຽງຕີນທີ່ເຮັດດ້ວຍໄມ້ ອັນກິກຂຸບໍ່ຄວຣສວມ ອົງຄ໌ໃດສວມ ຕ້ອງອາບັຕິທຸກກົຝ.

ພຣະພຸທສບັນຍັຕິຫ້າມສວມຂຽງຕີນໃບຕາລ

[໑໑] ຄັ້ງນັ້ນ ພຣະຜູ້ມີພຣະກາຄປະທັບຢູ່ ໓ ພຣະນຄຣຣາຊຄຣຶຫ໌ ຕາມພຣະພຸທສາກິຣົມຍ໌ ແລ້ວສເດັຈພຣະພຸທສດຳເນີນໄປສູ່ຈາຣິກທາງພຣະນຄຣພາຣາຓສີ ສເດັຈພຣະພຸທສດຳເນີນສູ່ຈາຣິກໂດຍລຳດັບ ເຖິງພຣະນຄຣພາຣາຓສີ ຮູ້ວ່າ ພຣະອົງຄ໌ປະທັບຢູ່ໃນປ່າອິສິປຕນະມຣິຄທາຍວັນ ເຂຕພຣະນຄຣ ພາຣາຓສີນັ້ນ.

ກໍໂດຍສມັຍນັ້ນແລ ພຣະຉັພພັຄຄີຍ໌ຄຶດວ່າ ພຣະຜູ້ມີພຣະກາຄທຣົງຫ້າມຂຽງຕີນໄມ້ ຈຶ່ງໃຫ້ຕັດ ຕົ້ນຕາລນ້ອຍໆ ແລ້ວເອົາໃບຕາລມາເຮັດຂຽງຕີນສວມ ຕົ້ນຕາລນ້ອຍໆ ນັ້ນຖືກຕັດແລ້ວຍ່ອມຫ່ຽວແຫ້ງ. ຊາວບ້ານຈຶ່ງເພ່ງໂທษ ຕິຕຽນ ໂພນທະນາວ່າ ເປັນຫຍັງພຣະສມຓະເຊື້ອສາຍພຣະສາກຍບຸຕຣ໌ຈຶ່ງໄດ້ໃຫ້ຕັດ ຕົ້ນຕາລນ້ອຍໆ ແລ້ວເອົາໃບຕາລມາເຮັດຂຽງຕີນສວມລະ ຕົ້ນຕາລນ້ອຍໆ ຖືກຕັດແລ້ວຍ່ອມຫ່ຽວແຫ້ງ ພຣະສມຓະເຊື້ອສາຍພຣະສາກຍບຸຕຣ໌ບຽດບຽນອິນທຣີຍ໌ຢ່າງນຶ່ງຊື່ງມີຊີວະ ກິກຂຸທັ້ງຫລາຍໄດ້ຍິນຊາວ ບ້ານເຫລົ່ານັ້ນ ເພ່ງໂທษ ຕິຕຽນ ໂພນທະນາຢູ່ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ.

ພຣະຜູ້ມີພຣະກາຄທຣົງສອບຖາມກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ຂ່າວວ່າກິກຂຸຉັພພັຄຄີຍ໌ ສັ່ງໃຫ້ຕັດຕົ້ນຕາລນ້ອຍໆ ແລ້ວເອົາໃບຕາລມາເຮັດຂຽງຕີນສວມ ຕົ້ນຕາລນ້ອຍໆ ນັ້ນຖືກຕັດແລ້ວ ຍ່ອມ ຫ່ຽວແຫ້ງ ແທ້ບໍ່?

ກິກຂຸທັ້ງຫລາຍທູລຮັບວ່າ ແທ້ ຂ້ານ້ອຍ.

ພຣະຜູ້ມີພຣະກາຄພຸທສເຈົ້າຈຶ່ງທຣົງຕິຕຽນວ່າ ດູຣາກິກຂຸທັ້ງຫລາຍ ເປັນຫຍັງໂມฆບຸຣຸษເຫລົ່ານັ້ນຈຶ່ງ ໄດ້ໃຫ້ຕັດຕົ້ນຕາລນ້ອຍໆ ແລ້ວເອົາໃບຕາລເຮັດຂຽງຕີນສວມລະ ຕົ້ນຕາລນ້ອຍໆ ນັ້ນຖືກຕັດແລ້ວ ຍ່ອມ

ຫ່ງວແຫ້ງ ດູຣາກິກຂຸທັ້ງຫລາຍ ເພາະຊາວບ້ານມີຄວາມສໍາຄັລໃນຕົ້ນໄມ້ວ່າມີຊີວະ ການກະທໍາຂອງ ເຫລົ່າໂມຜບຸຣຸຜທັ້ນ ບໍ່ເປັນໄປເພື່ອຄວາມເລື່ອມໃສຂອງຊຸມຊົນທີ່ຍັງບໍ່ເລື່ອມໃສ ... ເມື່ອແລ້ວທຣົງເຮັດ ຘັມມີກະຖາຮັບສັ່ງກະກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ຂຽງຕີນສານດ້ວຍໃບຕາລ ອັນກິກຂຸບໍ່ຄວຣ ສວມ ອົງຄ໌ໃດສວມ ຕ້ອງອາບັຕິທຸກກົຜ.

ພຣະພຸທສບັລລັຕິຫ້າມສວມຂຽງຕີນໄມ້ໄຜ່

ສມັຍຕໍ່ມາ ພຣະຉັພພັຄຄີຍ໌ຄຶດວ່າ ພຣະຜູ້ມີພຣະກາຄທຣົງຫ້າມຂຽງຕີນສານດ້ວຍໃບຕາລ ຈຶ່ງ ໄດ້ໃຫ້ຕັດໄມ້ໄຜ່ນ້ອຍໆ ແລ້ວເອົາໃບໄຜ່ມາເຮັດຂຽງຕີນສວມ ໄມ້ໄຜ່ນ້ອຍໆ ນັ້ນ ຖືກຕັດແລ້ວ ຍ່ອມຫ່ງວ ແຫ້ງ. ຊາວບ້ານຈຶ່ງເພ່ງໂທຜ ຕິຕຽນ ໂພນທະນາວ່າ ເປັນຫຍັງພຣະສມຌະເຊື້ອສາຍພຣະສາກຍບຸຕຣ໌ຈຶ່ງໄດ້ ໃຫ້ຕັດໄມ້ໄຜ່ນ້ອຍໆ ແລ້ວເອົາໃບໄຜ່ມາເຮັດຂຽງຕີນສວມລະ ໄມ້ໄຜ່ນ້ອຍໆ ນັ້ນຖືກຕັດແລ້ວຍ່ອມຫ່ງວແຫ້ງ ພຣະສມຌະເຊື້ອສາຍພຣະສາກຍບຸຕຣ໌ຍ່ອມບຽດບຽນອິນທຣີຍ໌ຢ່າງນຶ່ງຊຶ່ງມີຊີວະ. ກິກຂຸທັ້ງຫລາຍໄດ້ຍິນ ຊາວບ້ານເຫລົ່ານັ້ນ ເພ່ງໂທຜ ຕິຕຽນ ໂພນທະນາຢູ່ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ.

ພຣະຜູ້ມີພຣະກາຄທຣົງສອບຖາມກິກຂຸທັ້ງຫລາຍວ່າ ... ເມື່ອແລ້ວຮັບສັ່ງກະກິກຂຸທັ້ງຫລາຍວ່າ ດູຣາ ກິກຂຸທັ້ງຫລາຍ ຂຽງຕີນສານດ້ວຍໃບໄຜ່ ອັນກິກຂຸບໍ່ຄວຣສວມ ອົງຄ໌ໃດສວມ ຕ້ອງອາບັຕິທຸກກົຜ.

ພຣະພຸທສບັລລັຕິຫ້າມສວມຂຽງຕີນຕ່າງຊນິດ

[໑໔] ຄັ້ງນັ້ນ ພຣະຜູ້ມີພຣະກາຄປະທັບຢູ່ໃນພຣະນຄຣພາຣາຌສີຕາມພຣະພຸທສາກິຣົມຍ໌ ແລ້ວ ສເດັຈພຣະພຸທສດໍາເນີນຈາຣິກທາງພຣະນຄຣກັທທິຍະ ສເດັຈພຣະພຸທສດໍາເນີນຈາຣິກໂດຍລໍາດັບເຖິງພຣະນຄຣ ກັທທິຍະ ຮູ້ວ່າ ພຣະອົງຄ໌ປະທັບຢູ່ໃນປ່າຊາຕິຍາວັນເຂຕພຣະນຄຣກັທທິຍະນັ້ນ.

ກໍໂດຍສມັຍນັ້ນແລ ພວກກິກຂຸຊາວພຣະນຄຣກັທທິຍະ ຕັ້ງຫນ້າພາກພຽຣຕົກແຕ່ງຂຽງຕີນ ຫລາກຫລາຍຢູ່ ຄື ເຮັດເອງແດ່ ສັ່ງໃຫ້ເຮັດແດ່ ຊຶ່ງຂຽງຕີນສານດ້ວຍຫຍ້າ ເຮັດເອງແດ່ ສັ່ງໃຫ້ເຮັດແດ່ ຊຶ່ງຂຽງຕີນສານດ້ວຍຫຍ້າມຸງກະຕ່າຍ ເຮັດເອງແດ່ ສັ່ງໃຫ້ເຮັດແດ່ ຊຶ່ງຂຽງຕີນສານດ້ວຍຫຍ້າປ້ອງ ເຮັດເອງແດ່ ສັ່ງໃຫ້ເຮັດແດ່ ຊຶ່ງຂຽງຕີນສານດ້ວຍໃບເປົ້ງ ເຮັດເອງແດ່ ສັ່ງໃຫ້ເຮັດແດ່ ຊຶ່ງຂຽງຕີນສານ ດ້ວຍແຝກ ເຮັດເອງແດ່ ສັ່ງໃຫ້ເຮັດແດ່ ຊຶ່ງຂຽງຕີນຖັກດ້ວຍຂົນສັຕວ໌ ພວກທ່ານລະເລີຍອຸເທສ ປຣິປຸຈສາ ອຘິສີລ ອຘິຈິຕ ອຘິປັລລາເສັ່ງ. ບັຣດາກິກຂຸທີ່ເປັນຜູ້ມັກຫນ້ອຍ ... ຕ່າງກໍເພ່ງໂທຜ ຕິຕຽນ ໂພນທະນາ ວ່າ ເປັນຫຍັງລະພວກກິກຂຸຊາວພຣະນຄຣກັທທິຍະ ຈຶ່ງໄດ້ຕັ້ງຫນ້າພາກພຽຣຕົກແຕ່ງຂຽງຕີນຫລາກຫລາຍຢູ່ ຄື ໄດ້ເຮັດເອງແດ່ ໄດ້ສັ່ງໃຫ້ເຮັດແດ່ ຊຶ່ງຂຽງຕີນສານດ້ວຍຫຍ້າ ໄດ້ເຮັດເອງແດ່ ໄດ້ສັ່ງໃຫ້ເຮັດແດ່

ຊື່ງຊຽງຕີນສານດ້ວຍຫຍ້າມຸງກະຕ່າຍ ໄດ້ເຮັດເອງແດ່ ໄດ້ສັ່ງໃຫ້ເຮັດແດ່ ຊື່ງຊຽງຕີນສານດ້ວຍຫຍ້າປ້ອງ ໄດ້ເຮັດເອງແດ່ ໄດ້ສັ່ງໃຫ້ເຮັດແດ່ ຊື່ງຊຽງຕີນສານດ້ວຍໃບເປັ້ງ ໄດ້ເຮັດເອງແດ່ ໄດ້ສັ່ງໃຫ້ເຮັດແດ່ ຊື່ງຊຽງຕີນສານດ້ວຍແຝກ ໄດ້ເຮັດເອງແດ່ ໄດ້ສັ່ງໃຫ້ເຮັດແດ່ ຊື່ງຊຽງຕີນຖັກດ້ວຍຂົນສັຕວ໌ ພິກຂຸເຫລົ່ານັ້ນໄດ້ລະເລີຍອຸເທສ ປຣິປຸຈສາ ອະທິສີລ ອະທິຈິຕ ອະທິປັນຍາເສັຽ ແລ້ວຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ

ພຣະຜູ້ມີພຣະພາຄທຣົງສອບຖາມພິກຂຸທັ້ງຫລາຍວ່າ ດູຣາພິກຂຸທັ້ງຫລາຍ ຂ່າວວ່າພວກພິກຂຸຊາວພຣະນຄຣກັທທິຍະຕັ້ງຫນ້າພາກພຽຣຕົກແຕ່ງຊຽງຕີນຫລາກຫລາຍຢູ່ ຄື ເຮັດເອງແດ່ ສັ່ງໃຫ້ເຮັດແດ່ ຊື່ງຊຽງຕີນສານດ້ວຍຫຍ້າ ເຮັດເອງແດ່ ສັ່ງໃຫ້ເຮັດແດ່ ຊື່ງຊຽງຕີນສານດ້ວຍຫຍ້າມຸງກະຕ່າຍ ເຮັດເອງແດ່ ສັ່ງໃຫ້ເຮັດແດ່ ຊື່ງຊຽງຕີນສານດ້ວຍຫຍ້າປ້ອງ ເຮັດເອງແດ່ ສັ່ງໃຫ້ເຮັດແດ່ ຊື່ງຊຽງຕີນສານດ້ວຍໃບເປັ້ງ ເຮັດເອງແດ່ ສັ່ງໃຫ້ເຮັດແດ່ ຊື່ງຊຽງຕີນສານດ້ວຍແຝກ ເຮັດເອງແດ່ ສັ່ງໃຫ້ເຮັດແດ່ ຊື່ງຊຽງຕີນຖັກດ້ວຍຂົນສັຕວ໌ ຍ່ອມລະເລີຍອຸເທສ ປຣິປຸຈສາ ອະທິສີລ ອະທິຈິຕ ອະທິປັນຍາເສັຽ ແທ້ບໍ່?

ພິກຂຸທັ້ງຫລາຍທູລຮັບວ່າ ແທ້ ຂ້ານ້ອຍ.

ພຣະຜູ້ມີພຣະພາຄພຸທສເຈົ້າທຣົງຕິຕຽນວ່າ ດູຣາພິກຂຸທັ້ງຫລາຍ ເປັນຫຍັງລະໂມຄບຸຣຸຊເຫລົ່ານັ້ນຈຶ່ງໄດ້ຕັ້ງຫນ້າພາກພຽຣຕົກແຕ່ງຊຽງຕີນຫລາກຫລາຍຢູ່ ຄື ໄດ້ເຮັດເອງແດ່ ໄດ້ສັ່ງໃຫ້ເຮັດແດ່ ຊື່ງຊຽງຕີນສານດ້ວຍຫຍ້າ ໄດ້ເຮັດເອງແດ່ ໄດ້ສັ່ງໃຫ້ເຮັດແດ່ ຊື່ງຊຽງຕີນສານດ້ວຍຫຍ້າມຸງກະຕ່າຍ ໄດ້ເຮັດເອງແດ່ ໄດ້ສັ່ງໃຫ້ເຮັດແດ່ ຊື່ງຊຽງຕີນສານດ້ວຍຫຍ້າປ້ອງ ໄດ້ເຮັດເອງແດ່ ໄດ້ສັ່ງໃຫ້ເຮັດແດ່ ຊື່ງຊຽງຕີນສານດ້ວຍໃບເປັ້ງ ໄດ້ເຮັດເອງແດ່ ໄດ້ສັ່ງໃຫ້ເຮັດແດ່ ຊື່ງຊຽງຕີນສານດ້ວຍແຝກ ໄດ້ເຮັດເອງແດ່ ໄດ້ສັ່ງໃຫ້ເຮັດແດ່ ຊື່ງຊຽງຕີນຖັກດ້ວຍຂົນສັຕວ໌ ໂມຄບຸຣຸຊເຫລົ່ານັ້ນໄດ້ລະເລີຍອຸເທສ ປຣິປຸຈສາ ອະທິຈິຕ ອະທິປັນຍາເສັຽ ດູຣາພິກຂຸທັ້ງຫລາຍ ການກະທຳຂອງເຫລົ່າໂມຄບຸຣຸຊທັ່ນບໍ່ເປັນໄປເພື່ອຄວາມເລື່ອມໃສຂອງຊຸມຊົນທີ່ຍັງບໍ່ເລື່ອມໃສ ... ເມື່ອແລ້ວທຣົງເຮັດທັມມີກາຖາຮັບສັ່ງກະພິກຂຸທັ້ງຫລາຍວ່າ ດູຣາພິກຂຸທັ້ງຫລາຍ ພິກຂຸບໍ່ຄວຣສວມຊຽງຕີນສານດ້ວຍຫຍ້າຊຽງຕີນສານດ້ວຍຫຍ້າມຸງກະຕ່າຍ ຊຽງຕີນສານດ້ວຍຫຍ້າປ້ອງ ຊຽງຕີນສານດ້ວຍໃບເປັ້ງ ຊຽງຕີນສານດ້ວຍແຝກ ຊຽງຕີນຖັກດ້ວຍຂົນສັຕວ໌ ຊຽງຕີນປະດັບດ້ວຍທອງຄຳ ຊຽງຕີນປະດັບດ້ວຍເງິນ ຊຽງຕີນປະດັບດ້ວຍແກ້ວມະນີ ຊຽງຕີນປະດັບດ້ວຍແກ້ວໄພທູຣຍ໌ ຊຽງຕີນປະດັບດ້ວຍແກ້ວຜລຶກ ຊຽງຕີນປະດັບດ້ວຍທອງສັມຣິທທິ໌ ຊຽງຕີນ

ປະດັບດ້ວຍກະຈົກ ຊຽງຕີນເຮັດດ້ວຍດີບຸກ ຊຽງຕີນເຮັດດ້ວຍສັງກະສີ ຊຽງຕີນເຮັດດ້ວຍທອງແດງ ອົງຄ໌ໃດສວມ ຕ້ອງອາບັຕິທຸກກົຜ

ດູຣາກິກຂຸທັ້ງຫລາຍ ປະກາຣນຶ່ງ ຊຽງຕີນບາງຊນິດທີ່ສຳຫຼັບສວມຍ່າງ ອັນກິກຂຸບໍ່ຄວຣສວມ ອົງຄ໌ໃດສວມ ຕ້ອງອາບັຕິທຸກກົຜ

ດູຣາກິກຂຸທັ້ງຫລາຍ ເຮົາອນຸຍາຕຊຽງຕີນທີ່ຕຣຶງຢູ່ກັບທີ່ ບໍ່ແມ່ນສຳຫຼັບໃຊ້ສວມຍ່າງ ໓ ຊນິດ ຄື ຊຽງຕີນທີ່ສຳຫຼັບຫຍຽບຖ່າຍອຸຈຈາຣະ ໑ ຊຽງຕີນທີ່ສຳຫຼັບຫຍຽບຖ່າຍປັສສາວະ ໑ ຊຽງຕີນທີ່ສຳຫຼັບຫຍຽບໃນທີ່ຊຳຣະ ໑.

ພຣະພຸທສບັຌລັຕິຫ້າມຈັບງົວ

[໑໓] ຄັ້ງນັ້ນ ພຣະຜູ້ມີພຣະກາຄປະທັບຢູ່ໃນພຣະນຄຣກັທທິຍະ ຕາມພຣະພຸທສາກິຣົມຍ໌ ແລ້ວສເດັຈພຣະພຸທສດຳເນີນຈາຣິກທາງພຣະນຄຣສາວັຕຖີ ສເດັຈພຣະພຸທສດຳເນີນຈາຣິກໂດຍລຳດັບເຖິງ ພຣະນຄຣສາວັຕຖີແລ້ວ ຮູ້ວ່າພຣະອົງຄ໌ປະທັບຢູ່ໃນພຣະເຊຕວັນ ອາຣາມຂອງອນາຖບິຕຕິກຄຫບໍດີ ເຂຕພຣະນຄຣສາວັຕຖີນັ້ນ

ກໍໂດຍສມັຍນັ້ນແລ ພຣະຉັພພັຄຄີຍ໌ຈັບງົວກຳລັງຂ້າມແມ່ນ້ຳອຈິຣວດີ ທີ່ເຂົາແດ່ ທີ່ຫູແດ່ ທີ່ຄໍແດ່ ທີ່ຫາງແດ່ ຂຶ້ນຂີ່ຫລັງແດ່ ມີຈິຕກຳຫນັດ ຖືກຕ້ອງອົງຄ໌ກຳເນີດແດ່ ກົດລູກງົວໃຫ້ຈົມນ້ຳຕາຍແດ່ ປະຊາຊົນທັ້ງຫລາຍ ພາກັນເພ່ງໂທຉ ຕິຕຽນ ໂພນທະນາວ່າ ເປັນຫຍັງພຣະສມຕະເຊື້ອສາຍພຣະສາກຍບຸຕຣ໌ ຈຶ່ງໄດ້ຈັບງົວກຳລັງຂ້າມນ້ຳ ທີ່ເຂົາແດ່ ທີ່ຫູແດ່ ທີ່ຄໍແດ່ ທີ່ຫາງແດ່ ຂຶ້ນຂີ່ຫລັງແດ່ ມີຈິຕກຳຫນັດ ຖືກຕ້ອງອົງຄ໌ກຳເນີດແດ່ ກົດລູກງົວໃຫ້ຈົມນ້ຳຕາຍແດ່ ເຫມືອນພວກຄຣືຫັສຖ໌ຜູ້ບໍຣິໂກຄກາມ ຈັ່ງຊັ້ນ. ກິກຂຸທັ້ງຫລາຍໄດ້ຍິນຊາວບ້ານເຫລົ່ານັ້ນ ເພ່ງໂທຉ ຕິຕຽນ ໂພນທະນາຢູ່ ຈຶ່ງຂາບທູລເຣື່ອງນັ້ນແດ່ ພຣະຜູ້ມີພຣະກາຄ

ພຣະຜູ້ມີພຣະກາຄທຣົງບັຌລັຕິຫ້າມກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ກິກຂຸບໍ່ຄວຣຈັບເຂົາງົວ ຫູງົວ ຄໍງົວ ຫາງງົວ ບໍ່ຄວຣຂີ່ຫລັງງົວ ອົງຄ໌ໃດຈັບແລະຂຶ້ນຂີ່ ຕ້ອງອາບັຕິທຸກກົຜ.

ດູຣາກິກຂຸທັ້ງຫລາຍ ປະກາຣນຶ່ງ ອົງຄ໌ກຳເນີດງົວ ອັນກິກຂຸມີຈິຕກຳຫນັດ ບໍ່ຄວຣຖືກຕ້ອງ ອົງຄ໌ໃດຖືກຕ້ອງ ຕ້ອງອາບັຕິຖຸລລັຈຈັຍ ກິກຂຸບໍ່ຄວຣຂ້າລູກງົວ ອົງຄ໌ໃດຂ້າ ຄວຣປັບອາບັຕິຕາມທັມມ໌.

ເຣື່ອງຍານ

[໑໔] ກໍໂດຍສມັຍນັ້ນແລ ພຣະລັພພັຄຄີຍ໌ຂີ່ຍານຊຶ່ງທຽມດ້ວຍງົວໂຕແມ່ ມີບຸຣຸຫເປັນສາຣຖີ ທຽມດ້ວຍງົວໂຕຜູ້ ມີສຕຣີເປັນສາຣຖີແດ່. ປະຊາຊົນຈຶ່ງເພ່ງໂທຫ ຕິຕຽນ ໂພນທະນາວ່າ ເຫມືອນຊາຍຫນຸ່ມລົງສາວໄປຫຼິ້ນນ້ຳໃນແມ່ນ້ຳຄົງຄາແລະແມ່ນ້ຳມຫີ ຈັ່ງຊັ້ນ ກິກຂຸທັ້ງຫລາຍ ຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄທຣົງບັລລັຕິຫ້າມກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ກິກຂຸບໍ່ຄວຣໄປດ້ວຍຍານ ອົງຄ໌ໃດໄປຕ້ອງອາບັຕິທຸກກົຝ.

ສມັຍຕໍ່ມາ ກິກຂຸອົງຄ໌ນຶ່ງໄປພຣະນຄຣສາວັຕຖີໃນໂກສົລຊົນບົທເພື່ອເຝົ້າພຣະຜູ້ມີພຣະກາຄ ແຕ່ອາພາຣເສັ່ງກາງທາງ ແລະໄດ້ຫລີກຈາກທາງນັ່ງຢູ່ ໓ ໂຄນໄມ້ແຫ່ງນຶ່ງ ປະຊາຊົນພົບກິກຂຸນັ້ນຈຶ່ງຮຽນຖາມວ່າ ພຣະຄຸຕເຈົ້າຈະໄປໃສ ຂ້ານ້ອຍ?

ກິກຂຸນັ້ນຕອບວ່າ ອາຕມາຈະໄປພຣະນຄຣສາວັຕຖີ ເພື່ອເຝົ້າພຣະຜູ້ມີພຣະກາຄ ຂ້ານ້ອຍ

ປ. ນິມົນຕ໌ມາ ໄປດ້ວຍກັນເຖີດ ຂ້ານ້ອຍ

ກິ. ອາຕມາບໍ່ອາຈ ເພາະກຳລັງອາພາຣ ຂ້ານ້ອຍ

ປ. ນິມົນຕ໌ມາຂຶ້ນຍານເຖີດ ຂ້ານ້ອຍ

ກິ. ບໍ່ໄດ້ຂ້ານ້ອຍ ເພາະພຣະຜູ້ມີພຣະກາຄທຣົງຫ້າມຍານ

ກິກຂຸນັ້ນບໍ່ພໍໃຈຢູ່ດັ່ງນັ້ນຈຶ່ງບໍ່ຍອມຂຶ້ນຍານ ເມື່ອໄປເຖິງພຣະນຄຣສາວັຕຖີແລ້ວ ຈຶ່ງແຈ້ງເຣື່ອງນັ້ນແກ່ກິກຂຸທັ້ງຫລາຍ ກິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ.

ລຳດັບນັ້ນ ພຣະຜູ້ມີພຣະກາຄທຣົງເຮັດທັມມີກາຖາ ໃນເພາະເຫຕຸເປັນເຄົ້າມູລນັ້ນ ໃນເພາະເຫຕຸແຣກເກີດນັ້ນ ແລ້ວຮັບສັ່ງກະກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ເຮົາອນຸຍາຕຍານແກ່ກິກຂຸຜູ້ອາພາຣ.

ຄັ້ງນັ້ນ ກິກຂຸທັ້ງຫລາຍໄດ້ຄຶດກັນວ່າ ຍານທີ່ທຣົງອນຸຍາຕນັ້ນທຽມດ້ວຍງົວໂຕແມ່ ຫຼືທຽມດ້ວຍງົວໂຕຜູ້ ແລ້ວຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄທຣົງອນຸຍາຕແກ່ກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ເຮົາອນຸຍາຕຍານທີ່ທຽມດ້ວຍງົວໂຕຜູ້ ແລະຍານທີ່ໃຊ້ມືລາກ.

ສມັຍຕໍ່ມາ ກິກຂຸອົງຄ໌ນຶ່ງບໍ່ຜາສຸກຢ່າງແຮງ ເພາະຄວາມກະເທືອນແຫ່ງຍານ ກິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄທຣົງອນຸຍາຕແກ່ກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ເຮົາອນຸຍາຕຄານຫາມມີຕັ່ງນັ່ງ ແລະເປຜ້າທີ່ເຂົາຜູກຕິດກັບໄມ້ຄານ.

ພຣະພຸທສບັລລັຕິຫ້າມໃຊ້ທີ່ນັ່ງແລະທີ່ນອນສູງໃຫຍ່

[໑໕] ກໍໂດຍສມັຍນັ້ນແລ ພຣະລັພພັຄຄີຍ໌ໃຊ້ທີ່ນັ່ງແລະທີ່ນອນອັນສູງໃຫຍ່ ຄື ຕຽງມີຕີນເກີນປະມາຓ ຕຽງມີຕີນເຮັດເປັນຮູປສັຕວ໌ຮ້າຍ ຜ້າໂກເຊົາວ໌ຂົນຍາວ ເຄື່ອງລາດທີ່ເຮັດດ້ວຍຂົນແກະວິຈິຕຣ໌ດ້ວຍຊໍ່ດອກລາຍ ເຄື່ອງລາດທີ່ມີສັຕກຸານເປັນຊໍ່ດອກໄມ້ ເຄື່ອງລາດທີ່ຍັດນຸ່ນ ເຄື່ອງລາດຂົນແກະວິຈິຕຣ໌ດ້ວຍຮູປສັຕວ໌ຮ້າຍມີສີຫະແລະເສືອເປັນຕົ້ນ ເຄື່ອງລາດຂົນແກະມີຂົນຕັ້ງ ເຄື່ອງລາດຂົນແກະມີຂົນຂ້າງດຽວ ເຄື່ອງລາດທອງແລະເງິນແກມໄຫມ ເຄື່ອງລາດໄຫມຂລິບທອງແລະເງິນ ເຄື່ອງລາດຂົນແກະຈຸນາງຟ້ອນ ໑໖ ຄົນ ເຄື່ອງລາດຫລັງຊ້າງ ເຄື່ອງລາດຫລັງມ້າ ເຄື່ອງລາດໃນຣົຖ ເຄື່ອງລາດທີ່ເຮັດດ້ວຍຫນັງສັຕວ໌ຊື່ອຊິນະມີຂົນອ່ອນນຸ່ມ ເຄື່ອງລາດຢ່າງດີເຮັດດ້ວຍຫນັງເພັ້ນ ເຄື່ອງລາດມີເພດານ ເຄື່ອງລາດມີຫມອນຂ້າງ ຊາວບ້ານທ່ຽວຊົມວິຫາຣໄປພົ້ເຊົ້າ ຈຶ່ງເພ່ງໂທษ ຕິຕຽນ ໂພນທະນາວ່າ ເຫມືອນເຫລົ່າຄຣິຫັສຖ໌ຜູ້ບໍຣິໂກຄການ. ກິກຂຸທັ້ງຫລາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ.

ພຣະຜູ້ມີພຣະກາຄຕຣັສຫ້າມກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ກິກຂຸບໍ່ຄວຣໃຊ້ທີ່ນັ່ງແລະທີ່ນອນອັນສູງໃຫຍ່ ຄື ຕຽງມີຕີນສູງເກີນປະມາຓ ຕຽງມີຕີນເຮັດເປັນຮູປສັຕວ໌ຮ້າຍ ຜ້າໂກເຊົາວ໌ຂົນຍາວ ເຄື່ອງລາດທີ່ເຮັດດ້ວຍຂົນແກະວິຈິຕຣ໌ຊໍ່ດອກລາຍ ເຄື່ອງລາດທີ່ເຮັດດ້ວຍຂົນແກະສີຂາວ ເຄື່ອງລາດທີ່ມີສັຕກຸານເປັນຊໍ່ດອກໄມ້ ເຄື່ອງລາດທີ່ຍັດນຸ່ນ ເຄື່ອງລາດຂົນແກະວິຈິຕຣ໌ດ້ວຍຮູປສັຕວ໌ຮ້າຍມີສີຫະແລະເສືອເປັນຕົ້ນ ເຄື່ອງລາດຂົນແກະມີຂົນຕັ້ງ ເຄື່ອງລາດຂົນແກະມີຂົນຂ້າງດຽວ ເຄື່ອງລາດທອງແລະເງິນແກມໄຫມ ເຄື່ອງລາດໄຫມຂລິບທອງແລະເງິນ ເຄື່ອງລາດຂົນແກະຈຸນາງຟ້ອນ ໑໖ ຄົນ ເຄື່ອງລາດຫລັງຊ້າງ ເຄື່ອງລາດຫລັງມ້າ ເຄື່ອງລາດໃນຣົຖ ເຄື່ອງລາດທີ່ເຮັດດ້ວຍຫນັງສັຕວ໌ຊື່ອຊິນະ ມີຂົນອ່ອນນຸ່ມ ເຄື່ອງລາດຢ່າງດີເຮັດດ້ວຍຫນັງເພັ້ນ ເຄື່ອງລາດມີເພດານ ເຄື່ອງລາດມີຫມອນຂ້າງ ອົງຄ໌ໃດໃຊ້ ຕ້ອງອາບັຕິທຸກກົฎ.

ພຣະພຸທສບັລລັຕິຫ້າມໃຊ້ຫນັງຜືນໃຫຍ່

[໑໖] ກໍໂດຍສມັຍນັ້ນແລ ພຣະລັພພັຄຄີຍ໌ຮູ້ວ່າພຣະຜູ້ມີພຣະກາຄ ທຣົງຫ້າມທີ່ນັ່ງແລະທີ່ນອນອັນສູງໃຫຍ່ ຈຶ່ງໃຊ້ຫນັງຜືນໃຫຍ່ ຄື ຫນັງສີຫະ ຫນັງເສືອໂຄ່ງ ຫນັງເສືອເຫລືອງ ຫນັງເຫລົ່ານັ້ນຕັດຕາມຂນາດຕຽງແດ່ ຕັດຕາມຂນາດຕັ່ງແດ່ ປູລາດໄວ້ກາຍໃນຕຽງແດ່ ປູລາດໄວ້ກາຍນອກຕຽງແດ່ ປູລາດໄວ້ກາຍໃນຕັ່ງແດ່ ປູລາດໄວ້ກາຍນອກຕັ່ງແດ່ ຊາວບ້ານທ່ຽວຊົມວິຫາຣໄປພົ້ເຊົ້າ ຈຶ່ງເພ່ງໂທษ ຕິຕຽນ ໂພນທະນາວ່າ ເຫມືອນເຫລົ່າຄຣິຫັສຖ໌ຜູ້ບໍຣິໂກຄການ. ກິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ.

ພຣະຜູ້ມີພຣະກາຄຕຣັສຫ້າມກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ກິກຂຸບໍ່ຄວຣໃຊ້ຫນັງຜືນໃຫຍ່ ຄື ຫນັງສີຫະ ຫນັງເສືອໂຄ່ງ ຫນັງເສືອເຫລືອງ ອົງຄ໌ໃດໃຊ້ ຕ້ອງອາບັຕິທຸກກົฎ.

ເຣື່ອງພິກຂຸໃຈຮ້າຍ

[໑໗] ກໍໂດຍສມັຍນັ້ນແລ ພຣະລັພພັຄຄີຍ໌ຮູ້ວ່າພຣະຜູ້ມີພຣະພາຄທຣົງຫ້າມຫນັງຜືນໃຫຍ່ ຈຶ່ງໃຊ້ຫນັງງົວ ຫນັງເຫລົ່ານັ້ນຕັດຕາມຂນາດຕຽງແດ່ ຕັດຕາມຂນາດຕັ່ງແດ່ ປູລາດໄວ້ກາຍໃນຕຽງແດ່ ປູລາດໄວ້ກາຍນອກຕຽງແດ່ ປູລາດໄວ້ກາຍໃນຕັ່ງແດ່ ປູລາດໄວ້ກາຍນອກຕັ່ງແດ່.

ມີພິກຂຸໃຈຮ້າຍອົງຄ໌ນຶ່ງ ເປັນ**ກຸລຸປກະ**[5]ຂອງອຸບາສົກໃຈຮ້າຍຄົນນຶ່ງ ເມື່ອເວລາເຊົ້າ ພິກຂຸໃຈຮ້າຍອົງຄ໌ນັ້ນນຸ່ງອັນຕຣວາສົກ ຖືບາຕຣ໌ຈີວຣແລ້ວຍ່າງເຂົ້າໄປໃນບ້ານຂອງອຸບາສົກໃຈຮ້າຍຄົນນັ້ນ ແລ້ວນັ່ງເທິງອາສນະທີ່ເຂົາຈັດໄວ້ ຈຶ່ງອຸບາສົກໃຈຮ້າຍຄົນນັ້ນ ເຂົ້າໄປຫາພິກຂຸໃຈຮ້າຍອົງຄ໌ນັ້ນ ນມັສກາຣແລ້ວນັ່ງ ຓ ທີ່ຄວຣສ່ວນຂ້າງນຶ່ງ ກໍສມັຍນັ້ນ ລູກງົວຂອງອຸບາສົກໃຈຮ້າຍຄົນນັ້ນ ເປັນສັຕວ໌ກຳລັງຮຸ່ນ ຮູປຮ່າງເຂົ້າທີຫນ້າເບິ່ງໜ້າຊົມ ງາມຄູ້າຍລູກເສືອເຫລືອງ ຈຶ່ງພິກຂຸໃຈຮ້າຍອົງຄ໌ນັ້ນຈ້ອງເບິ່ງມັນດ້ວຍຄວາມສົນໃຈ ທີ່ນັ້ນອຸບາສົກໃຈຮ້າຍໄດ້ກ່າວກະພິກຂຸໃຈຮ້າຍວ່າ ພຣະຄຸຓເຈົ້າຈ້ອງເບິ່ງມັນດ້ວຍຄວາມສົນໃຈເພື່ອປະສົງຄ໌ຫຍັງຂ້ານ້ອຍ? ພິກຂຸໃຈຮ້າຍອົງຄ໌ນັ້ນ ຕອບວ່າ ອາວຸໂສ ອາຕມາຕ້ອງປະສົງຄ໌ຫນັງຂອງມັນ ທີ່ນັ້ນ ອຸບາສົກໃຈຮ້າຍຈຶ່ງຂ້າມັນແລ້ວໄດ້ຫຼອກຫນັງຖວາຍແກ່ພິກຂຸໃຈຮ້າຍອົງຄ໌ນັ້ນ ພິກຂຸໃຈຮ້າຍອົງຄ໌ນັ້ນໄດ້ເອົາຜ້າສັງຄາຕິຫໍ່ຫນັງຍ່າງໄປ ຄັ້ງນັ້ນ ແມ່ງົວ ມີຄວາມຮັກລູກ ຈຶ່ງຍ່າງຕາມພິກຂຸໃຈຮ້າຍອົງຄ໌ນັ້ນໄປຂ້າງຫລັງໆ ພິກຂຸທັ້ງຫລາຍຖາມພິກຂຸໃຈຮ້າຍອົງຄ໌ນັ້ນວ່າ ອາວຸໂສ ເປັນຫຍັງແມ່ງົວໂຕນີ້ຈຶ່ງຍ່າງຕາມທ່ານມາຂ້າງຫລັງໆ ຂ້ານ້ອຍ? ພິກຂຸໃຈຮ້າຍອົງຄ໌ນັ້ນຕອບວ່າ ອາວຸໂສທັ້ງຫລາຍ ແມ້ຂ້ານ້ອຍເອງກໍບໍ່ຮູ້ວ່າ ມັນຍ່າງຕາມຂ້ານ້ອຍມາຂ້າງຫລັງໆ ດ້ວຍເຫຕຸໃດຂຓະນັ້ນຜ້າສັງຄາຕິຂອງພິກຂຸໃຈຮ້າຍອົງຄ໌ນັ້ນເປື້ອນເລືອດ ພິກຂຸທັ້ງຫລາຍ ຈຶ່ງຖາມພິກຂຸໃຈຮ້າຍອົງຄ໌ນັ້ນວ່າອາວຸໂສ ກໍຜ້າສັງຄາຕິຜືນນີ້ທ່ານທຳຫຍັງໄວ້ ຂ້ານ້ອຍ? ພິກຂຸໃຈຮ້າຍອົງຄ໌ນັ້ນໄດ້ແຈ້ງຄວາມນັ້ນແກ່ພິກຂຸທັ້ງຫລາຍ ພິກຂຸທັ້ງຫລາຍຖາມວ່າ ອາວຸໂສກໍທ່ານຊັກຊວນໃຫ້ເຂົາຂ້າສັຕວ໌ຫຼືຂ້ານ້ອຍ? ພິກຂຸໃຈຮ້າຍຕອບວ່າ ຢ່າງນັ້ນຂ້ານ້ອຍ ບັຣດາພິກຂຸທີ່ເປັນຜູ້ມັກຫນ້ອຍຕ່າງກໍເພ່ງໂທษ ຕິຕຽນ ໂພນທະນາວ່າ ເປັນຫຍັງພິກຂຸຈຶ່ງຊັກຊວນໃຫ້ເຂົາຂ້າສັຕວ໌ລະ ພຣະຜູ້ມີພຣະພາຄທຣົງຕິຕຽນການຂ້າສັຕວ໌ ທຣົງສັຣເສີນການງົດຈາກການຂ້າສັຕວ໌ ໂດຍອເນກປຣິຍາຍບໍ່ແມ່ນບໍ່ ແລ້ວຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ.

ພຣະພຸທຂບັຄລັຕິຫ້າມໃຊ້ຫນັງງົວ

[໑໘] ລຳດັບນັ້ນ ພຣະຜູ້ມີພຣະພາຄຮັບສັ່ງໃຫ້ປະຊຸມພິກຂຸສົງฆ໌ ໃນເພາະເຫຕຸເປັນເຄົ້າມູລນັ້ນໃນເພາະເຫຕຸແຮກເກີດນັ້ນ ແລ້ວທຣົງສອບຖາມພິກຂຸໃຈຮ້າຍນັ້ນວ່າ ດູຣາພິກຂຸ ຂ່າວວ່າ ທ່ານຊັກຊວນໃຫ້ເຂົາຂ້າສັຕວ໌ ແທ້ບໍ່?

---

[5] **ກຸລຸປກະ, ກຸລູປກະ** ຜູ້ເຂົ້າເຖິງຕະກຸລ , ພຣະທີ່ຄຸ້ນເຄີຍສນິທ ໄປມາຫາສູ່ປະຈຳຂອງຕະກູລ, ພຣະທີ່ເຂົາອຸປຖັມภ໌ແລະເປັນທີ່ປຶກษາປະຈຳຂອງຄອບຄົວ

ກິກຂຸໃຈຮ້າຍນັ້ນຂາບທູລວ່າ ແທ້ ຂ້ານ້ອຍ

ພຣະຜູ້ມີພຣະກາຄພຸທສເຈົ້າທຮົງຕິຕຽນວ່າ ດູຣາໂມຄບຸຣຸຫ ເປັນຫຍັງທ່ານຈຶ່ງໄດ້ຊັກຊວນໃຫ້ເຂົາຂ້າສັຕວ໌ລະ ດູຣາໂມຄບຸຣຸຫ ເຮົາຕິຕຽນການຂ້າສັຕວ໌ ສັຣເສີນການງົດເວັ້ນຈາກການຂ້າສັຕວ໌ໄວ້ ໂດຍອເນກປຣິຍາຍບໍ່ແມ່ນບໍ່ ການກະທຳຂອງທ່ານນັ້ນບໍ່ເປັນໄປເພື່ອຄວາມເລື່ອມໃສຂອງຊຸມຊົນທີ່ຍັງບໍ່ເລື່ອມໃສ ... ເມື່ອແລ້ວທຮົງເຮັດສັມມີກາຖາຮັບສັ່ງກະກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ກິກຂຸບໍ່ຄວຣຊັກຊວນໃນການຂ້າສັຕວ໌ອົງຄ໌ໃດຊັກຊວນ ຄວຣປັບອາບັຕິຕາມສັມມ໌.

ດູຣາກິກຂຸທັ້ງຫລາຍ ປະການນຶ່ງ ໜັງງົວອັນກິກຂຸບໍ່ຄວຣໃຊ້ ອົງຄ໌ໃດໃຊ້ ຕ້ອງອາບັຕິທຸກກົຝ ໜັງຫຍັງໆ ກິກຂຸບໍ່ຄວຣໃຊ້ ອົງຄ໌ໃດໃຊ້ ຕ້ອງອາບັຕິທຸກກົຝ.

ສມັຍຕໍ່ມາ ຕຽງກໍດີ ຕັ່ງກໍດີ ຂອງຊາວບ້ານ ເຂົາຫຸ້ມດ້ວຍໜັງ ຖັກດ້ວຍໜັງ ກິກຂຸທັ້ງຫລາຍບໍ່ພໍໃຈບໍ່ນັ່ງທັບ ແລ້ວຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄ ຕຣັສອນຸຍາຕແກ່ກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ເຮົາອນຸຍາຕໃຫ້ນັ່ງທັບຕຽງຕັ່ງທີ່ເປັນຢ່າງຄຣືຫັສຖ໌ ແຕ່ບໍ່ອນຸຍາຕໃຫ້ນອນທັບ.

ສມັຍຕໍ່ມາ ວິຫາຣທັ້ງຫລາຍເຂົາຜູກມັດດ້ວຍເຊືອກໜັງ ກິກຂຸທັ້ງຫລາຍບໍ່ພໍໃຈບໍ່ນັ່ງພິງແລ້ວຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕແກ່ກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ເຮົາອນຸຍາຕໃຫ້ນັ່ງພິງສະເພາະເຊືອກ.

ພຣະພຸທສບັນຍັຕິຫ້າມສວມເກີບເຂົ້າບ້ານ

[໑໙] ກໍໂດຍສມັຍນັ້ນແລ ພຣະວັພພັຄຄີຍ໌ສວມເກີບເຂົ້າບ້ານ ຄົນທັ້ງຫລາຍ ເພ່ງໂທຫຕິຕຽນ ໂພນທະນາວ່າ ເໝືອນເຫລົ່າຄຣືຫັສຖ໌ຜູ້ບໍຣິໂກຄກາມ. ກິກຂຸທັ້ງຫລາຍ ຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄ ທຮົງບັນຍັຕິຫ້າມກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ກິກຂຸບໍ່ຄວຣສວມເກີບເຂົ້າບ້ານ ອົງຄ໌ໃດສວມເຂົ້າໄປ ຕ້ອງອາບັຕິທຸກກົຝ.

ພຣະພຸທສານຸຍາຕໃຫ້ກິກຂຸອາພາຕສວມເກີບເຂົ້າບ້ານ

ສມັຍຕໍ່ມາ ກິກຂຸອົງຄ໌ນຶ່ງອາພາຕເວັ້ນເກີບເສັຽບໍ່ອາຈເຂົ້າບ້ານໄດ້ ກິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕແກ່ກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍເຮົາອນຸຍາຕໃຫ້ກິກຂຸອາພາຕສວມເກີບເຂົ້າບ້ານໄດ້.

ເຣື່ອງພຣະໂສຕກຸຕິກັຕຕະ

[໔໐] ກໍໂດຍສມັຍນັ້ນແລ ທ່ານພຣະມຫາກັຈຈານະຢູ່ ຓ ປປາຕະບັຣພົຕເຂຕກຸຣຣພຣະນຄຣ ໃນອວັນຕີຊົນບົທ ກໍຄູາວນັ້ນອຸບາສົກຊື່ໂສຕກຸຕິກັຕຕະ ເປັນອຸປັຕຖາກຂອງທ່ານພຣະມຫາກັຈຈານະ ນມັສການແລ້ວນັ່ງ ຓ ທີ່ຄວຣສ່ວນຂ້າງນຶ່ງ ອຸບາສົກໂສຕກຸຕິກັຕຕະນັ່ງຢູ່ ຓ ທີ່ນັ້ນແລ ໄດ້ຂາບຮຽນ ຄຳນີ້ກັບທ່ານພຣະມຫາກັຈຈານະວ່າ ທ່ານຂ້ານ້ອຍ ດ້ວຍວິຣີໃດໆ ຂ້ານ້ອຍຈຶ່ງຈະຮູ້ທົ່ວເຖິງສັມມ໌ທີ່ ພຣະຄຸຕເຈົ້າສແດງແລ້ວ ອັນບຸຄຄົລທີ່ຍັງຄອງເຮືອນຢູ່ ຈະປະພຶຕພຣົຫ໌ມຈັຣຍ໌ນີ້ໃຫ້ບໍຣິບູຣຕ໌ໂດຍ ສ່ວນດຽວ ໃຫ້ບໍຣິສຸທຣິ໌ໂດຍສ່ວນດຽວ ເໝືອນສັງຂ໌ທີ່ຂັດແລ້ວ ເຮັດບໍ່ໄດ້ງ່າຍ ຂ້ານ້ອຍປັຕຖນາຈະແຖ ຜົມແລະຫນວດ ຄອງຜ້າກາສາຍະອອກຈາກເຮືອນບວຊເປັນບັຣພຊິຕ ຂໍພຣະຄຸຕເຈົ້າກຣຸຕາໂປຼດໃຫ້ ຂ້ານ້ອຍບວຊເຖີດ ຂ້ານ້ອຍ ເມື່ອອຸບາສົກໂສຕກຸຕິກັຕຕະຂາບຮຽນເຊັ່ນນີ້ແລ້ວ ທ່ານມຫາກັຈຈານະໄດ້ ກ່າວຄຳນີ້ກະອຸບາສົກໂສຕກຸຕິກັຕຕະວ່າ ໂສຕະ ການປະພຶຕພຣົຫ໌ມຈັຣຍ໌ຊຶ່ງຕ້ອງນອນຜູ້ດຽວ ບໍຣິໂກຄອາຫາຣເທື່ອດຽວຈົນຕລອດຊີພ ເຮັດໄດ້ຍາກຫຼາຍ ເອີາຖ້ອນ ໂສຕະ ຄຸຕຈົ່ງເປັນຄຣືຫັສຖ໌ ຢູ່ໃນແຂວງນີ້ແຫລະ ແລ້ວປະກອບຕາມພຣະພຸທຸສາສນາ ປະກອບຕາມພຣົຫ໌ມຈັຣຍ໌ ຊຶ່ງຕ້ອງນອນ ຜູ້ດຽວ ບໍຣິໂກຄອາຫາຣເທື່ອດຽວ ຄວຣແກ່ກາລເຖີດ.

ຄູາວນັ້ນ ຄວາມຕັ້ງໃຈບັຣພຊາຊຶ່ງໄດ້ເກີດແກ່ອຸບາສົກໂສຕກຸຕິກັຕຕະນັ້ນສງົບລົງແລ້ວ

ແມ້ຄັ້ງທີ່ສອງແລ ອຸບາສົກໂສຕກຸຕິກັຕຕະ ....

ແມ້ຄັ້ງທີ່ສາມແລ ອຸບາສົກໂສຕກຸຕິກັຕຕະໄດ້ເຂົ້າໄປຫາທ່ານພຣະມຫາກັຈຈານະ ນມັສການ ແລ້ວນັ່ງ ຓ ທີ່ຄວຣສ່ວນຂ້າງນຶ່ງ ອຸບາສົກໂສຕກຸຕິກັຕຕະນັ່ງຢູ່ ຓ ທີ່ນັ້ນແລ ໄດ້ຂາບຮຽນຄຳນີ້ ກັບທ່ານພຣະມຫາກັຈຈານະວ່າ ທ່ານຂ້ານ້ອຍ ດ້ວຍວິຣີໃດໆ ຂ້ານ້ອຍຈຶ່ງຈະຮູ້ທົ່ວເຖິງສັມມ໌ທີ່ພຣະຄຸຕເຈົ້າ ສແດງແລ້ວ ອັນບຸຄຄົລທີ່ຍັງຄອງເຮືອນຢູ່ ຈະປະພຶຕພຣົຫ໌ມຈັຣຍ໌ໃຫ້ບໍຣິບູຣຕ໌ໂດຍສ່ວນດຽວ ໃຫ້ບໍຣິສຸທຣິ໌ໂດຍສ່ວນດຽວ ເໝືອນສັງຂ໌ທີ່ຂັດແລ້ວ ເຮັດບໍ່ໄດ້ງ່າຍ ຂ້ານ້ອຍປັຕຖນາຈະແຖຜົມແລະຫນວດ ຄອງຜ້າກາສາຍະອອກຈາກເຮືອນບວຊເປັນບັຣພຊິຕ ຂໍພຣະຄຸຕເຈົ້າກຣຸຕາໂປຼດໃຫ້ຂ້ານ້ອຍບວຊເຖີດ ຂ້ານ້ອຍ

ເມື່ອນັ້ນ ທ່ານມຫາກັຈຈານະໃຫ້ອຸບາສົກໂສຕກຸຕິກັຕຕະບັຣພຊາແລ້ວ.

ກໍສມັຍນັ້ນ ອວັນຕີຊົນບົທອັນຕັ້ງຢູ່ແຖບໃຕ້ ມີກິກຂຸຫນ້ອຍອົງຄ໌ ທ່ານພຣະມຫາກັຈຈານະຈັດຫາ ພຣະກິກຂຸສົງຄ໌ແຕ່ທີ່ນັ້ນໆ ໃຫ້ຄົບອົງຄ໌ປະຊຸມທີສວັຄຄ໌ໄດ້ຍາກລຳບາກ ຕໍ່ລ່ວງໄປເຖິງ ໓ ປີ ຈຶ່ງອຸປສົມບົທ ໃຫ້ທ່ານພຣະໂສຕະໄດ້.

ພຣະໂສຕເຖຣະຣຳພຶງແລ້ວອຳລາເຂົ້າເຝົ້າ

ຄັ້ງນັ້ນ ທ່ານພຣະໂສຕະຈຳພັຣษາແລ້ວ ໄປໃນທີ່ສງັດຫລີກເຮັ້ນຢູ່ ໄດ້ມີຄວາມປຣິວິຕົກແຫ່ງຈິຕເກີດຂື້ນຢ່າງນີ້ວ່າ ພຣະຜູ້ມີພຣະກາຄພຣະອົງຄ໌ນັ້ນ ເຮົາໄດ້ຍິນມາຢ່າງຄັກແນ່ວ່າ ເປັນຜູ້ເຊັ່ນນີ້ແລະເຊັ່ນນີ້ ແຕ່ເຮົາບໍ່ໄດ້ເຝົ້າຕໍ່ພຣະພັກຕຣ໌ ເຮົາຄວຣໄປເຝົ້າພຣະຜູ້ມີພຣະກາຄອຣຫັນຕສັມມາສັມພຸທສເຈົ້ານັ້ນ ຫາກພຣະອຸປັຊຊາຍະຈະຄວຣອນຸຌາຕແກ່ເຮົາ ເມື່ອເວລາສາຍັຕຫ໌ ທ່ານອອກຈາກທີ່ຫລີກເຮັ້ນແລ້ວ ຈຶ່ງເຂົ້າໄປຫາທ່ານພຣະມຫາກັຈຈານະ ໄຫວ້ແລ້ວນັ່ງ ຓ ທີ່ຄວຣສ່ວນຂ້າງນຶ່ງ ແລ້ວຂາບຮຽນວ່າ ທ່ານຂ້ານ້ອຍຂ້ານ້ອຍໄປໃນທີ່ສງັດຫລີກເຮັ້ນຢູ່ ຓ ຕຳບົລນີ້ໄດ້ມີຄວາມປຣິວິຕົກແຫ່ງຈິຕເກີດຂື້ນຢ່າງນີ້ວ່າ ພຣະຜູ້ມີພຣະ-ກາຄພຣະອົງຄ໌ນັ້ນ ເຮົາໄດ້ຍິນມາຢ່າງຄັກແນ່ວ່າ ເປັນຜູ້ເຊັ່ນນີ້ແລະເຊັ່ນນີ້ ແຕ່ເຮົາບໍ່ໄດ້ເຝົ້າຕໍ່ພຣະພັກຕຣ໌ເຮົາຄວຣໄປເຝົ້າພຣະຜູ້ມີພຣະກາຄອຣຫັນຕສັມມາສັມພຸທສເຈົ້າພຣະອົງຄ໌ນັ້ນ ຫາກພຣະອຸປັຊຊາຍະຈະອນຸຌາຕແກ່ເຮົາ ທ່ານຂ້ານ້ອຍ ຂ້ານ້ອຍຈະໄປເຝົ້າພຣະຜູ້ມີພຣະກາຄອຣຫັນຕສັມມາສັມພຸທສເຈົ້າພຣະອົງຄ໌ນັ້ນ ຫາກທ່ານພຣະອຸປັຊຊາຍະຈະອນຸຌາຕແກ່ຂ້ານ້ອຍ.

ອາຕັຕິກພິຈນ໌ຂອງພຣະອຸປັຊຊາຍະ ໕ ປະກາຣ

ທ່ານມຫາກັຈຈານະ ກ່າວວ່າດີລະ ດີລະ ຄຸຓໂສຕະ ຄຸຓຈົ່ງໄປເຝົ້າພຣະຜູ້ມີພຣະກາຄອຣຫັນຕສັມມາສັມພຸທສເຈົ້າພຣະອົງຄ໌ນັ້ນ ຄຸຓຈະເຫັນພຣະອົງຄ໌ຜູ້ໜ້າເລື່ອມໃສ ຜູ້ເປັນທີ່ຕັ້ງແຫ່ງຄວາມເລື່ອມໃສມີພຣະອິນທຣີຍ໌ສງົບ ມີພຣະທັຍສງົບ ທຣົງເຖິງຄວາມຝຶກກາຍແລະຄວາມສງົບຈິຕອັນສູງສຸດ ທຣົງທໍຣມານແລ້ວຄຸ້ມຄອງແລ້ວ ມີອິນທຣີຍ໌ອັນສຳຣວມແລ້ວ ຜູ້ບໍ່ເຮັດບາປ ຄຸຓໂສຕະ ຖ້າເຊັ່ນນັ້ນ ຄຸຓຈົ່ງຖວາຍບັງຄົມພຣະບາທຍຸຄົລຂອງພຣະຜູ້ມີພຣະກາຄດ້ວຍສຽຣເກົ້າຕາມຂ້ານ້ອຍສັ່ງວ່າ ທ່ານມຫາກັຈຈານະ ອຸປັຊຊາຍະຂອງຂ້າພຣະພຸທສເຈົ້າ ຖວາຍບັງຄົມ ພຣະບາທຍຸຄົລຂອງພຣະຜູ້ມີພຣະກາຄດ້ວຍສຽຣເກົ້າພຣະພຸທສເຈົ້າຂ້ານ້ອຍດັ່ງນີ້ ແລະທ່ານຈົ່ງຂາບທູລຢ່າງນີ້ວ່າ

໑. ຂ້ານ້ອຍ ແຂວງອວັນຕີທັກຂິຓາບົຖ ມີກິກຂຸໜ້ອຍອົງຄ໌ ຂ້າພຣະພຸທສເຈົ້າໄດ້ຈັດຫາກິກຂຸສົງฆ໌ແຕ່ທີ່ນັ້ນໆ ໃຫ້ຄົບອົງຄ໌ປະຊຸມທົສວັຄຄໄດ້ຍາກລຳບາກ ນັບແຕ່ວັນຂ້າພຣະພຸທສເຈົ້າບັຣພຊາລ່ວງໄປ ໓ ປີ ຈຶ່ງໄດ້ອຸປສົມບົທ ຖ້າແນວໃດສະເພາະໃນອວັນຕີທັກຂິຓາບົຖ ຄວຣທຣົງອນຸຌາຕອຸປສົມບົທດ້ວຍຄຓະສົງฆ໌ຫນ້ອຍອົງຄ໌ກວ່ານີ້ໄດ້.

໔. ຂ້ານ້ອຍ ພື້ນດິນໃນອວັນຕີທັກຂິຓາບົຖ ມີດິນສີດຳຫຼາຍ ບໍ່ຮາບເຕັມໄປດ້ວຍຮອຍຕີນງົວແຫ້ງ ຖ້າແນວໃດ ສະເພາະໃນອວັນຕີທັກຂິຓາບົຖ ຂໍພຣະຜູ້ມີພຣະກາຄຄວຣທຣົງອນຸຌາຕເກີບຫລາຍຊັ້ນ.

໓. ຂ້ານ້ອຍ ຄົນທັ້ງຫລາຍໃນອວັນຕີທັກຂິຕາບົຖນິຍົມການອາບນ້ຳ ຖືວ່ານ້ຳເຮັດໃຫ້ບໍຣິສຸທສິ່ຖ້າແນວໃດ ສະເພາະໃນອວັນຕີທັກຂິຕາບົຖ ຂໍພຣະຜູ້ມີພຣະກາຄ ຄວຣທຣົງອນຸຍາຕການອາບນ້ຳໄດ້ເປັນປະຈຳ.

໔. ຂ້ານ້ອຍ ໃນອວັນຕີທັກຂິຕາບົຖ ມີໜັງເຄື່ອງລາດ ຄື ໜັງແກະ ໜັງແພະ ໜັງມຣິຄ ໃນມັຊຊິມຊົນບົທ ມີຫຍ້າຕີນກາ ຫຍ້າຫາງນົກຍູງ ຫຍ້າຫນວດແມວ ຫຍ້າຫາງຊ້າງ ແມ້ແນວໃດ ໃນອວັນຕີທັກຂິຕາບົຖກໍມີໜັງເຄື່ອງລາດ ຄື ໜັງແກະ ໜັງແພະ ໜັງມຣິຄ ແນວນັ້ນເຫມືອນກັນແລ ຖ້າແນວໃດ ສະເພາະໃນອວັນຕີທັກຂິຕາບົຖ ຂໍພຣະຜູ້ມີພຣະກາຄ ຄວຣທຣົງອນຸຍາຕໜັງເຄື່ອງລາດ ຄື ໜັງແກະ ໜັງແພະ ໜັງມຣິຄ.

໕. ຂ້ານ້ອຍ ດຽວນີ້ຄົນທັ້ງຫລາຍຝາກຖວາຍຈີວຣເພື່ອຫມູ່ກິກຂຸຜູ້ຢູ່ນອກສີມາ ດ້ວຍຄຳວ່າຂ້າພເຈົ້າທັ້ງຫລາຍຂໍຖວາຍຈີວຣຜືນນີ້ແກ່ທ່ານຜູ້ມີຊື່ນີ້ ດັ່ງນີ້ ກິກຂຸຜູ້ຮັບຝາກມາບອກວ່າ ອາວຸໂສ ຄົນທັ້ງຫລາຍມີຊື່ນີ້ຖວາຍຈີວຣແກ່ທ່ານແລ້ວ ພວກກິກຂຸຜູ້ຮັບຄຳບອກລະ ບໍ່ພໍໃຈບໍ່ຍິນດີຮັບ ດ້ວຍຄຶດວ່າ ພວກເຮົາບໍ່ຕ້ອງການຂອງເປັນນິສສັຄຄີຍ໌ ຖ້າແນວໃດ ຂໍພຣະຜູ້ມີພຣະກາຄຄວຣຕຣັສຊີ້ແຈງໃນເຣື່ອງຈີວຣ.

ພຣະໂສຕະເຖຣະເຂົ້າເຝົ້າ

ທ່ານພຣະໂສຕະຮັບສນອງຄຳຂອງທ່ານພຣະມຫາກັຈຈານະວ່າປຕິບັຕິຕາມຢ່າງນັ້ນຂ້ານ້ອຍ ແລ້ວລຸກຈາກອາສນະອກິວາທທ່ານພຣະມຫາກັຈຈານະທຳປະທັກນິຕແລ້ວ ເກັບເສນາສນະ ຖືບາຕຣ໌ຈີວຣຢ່າງໄປທາງທີ່ຈະໄປພຣະນຄຣສາວັຕຖີ ເຖິງພຣະນຄຣສາວັຕຖີ ພຣະວິຫາຣເຊຕວັນອາຣາມຂອງອນາຖບິຕຶກຄຫບໍດີໂດຍລຳດັບ ເຂົ້າເຝົ້າພຣະຜູ້ມີພຣະກາຄຖວາຍບັງຄົມແລ້ວນັ່ງ ໓ ທີ່ຄວຣສ່ວນຂ້າງນຶ່ງ.

ຄັ້ງນັ້ນ ພຣະຜູ້ມີພຣະກາຄຮັບສັ່ງກັບທ່ານພຣະອານົນທ໌ວ່າ ດູຣາອານົນທ໌ ທ່ານຈົ່ງຈັດເສນາສນະຕ້ອນຮັບກິກຂຸອາຄັນຕຸກະອົງຄ໌ນີ້ ຈຶ່ງທ່ານພຣະອານົນທ໌ຄຶດວ່າ ພຣະຜູ້ມີພຣະກາຄທຣົງພຣະບັນຊາໃຊ້ເຮົາເພື່ອກິກຂຸອົງຄ໌ໃດວ່າ ດູຣາອານົນທ໌ ທ່ານຈົ່ງຈັດເສນາສນະຕ້ອນຮັບກິກຂຸອາຄັນຕຸກະອົງຄ໌ນີ້ ດັ່ງນີ້ ພຣະຜູ້ມີພຣະກາຄຍ່ອມປັຕຖນາຈະປະທັບຢູ່ໃນພຣະວິຫາຣແຫ່ງດຽວກັບກິກຂຸອົງຄ໌ນັ້ນ ພຣະຜູ້ມີພຣະກາຄປັຕຖນາຈະປະທັບຢູ່ໃນພຣະວິຫາຣແຫ່ງດຽວກັບທ່ານພຣະໂສຕະເປັນແນ່ ດັ່ງນີ້ ຈຶ່ງຈັດເສນາສນະຕ້ອນຮັບທ່ານພຣະໂສຕະໃນພຣະວິຫາຣອັນເປັນທີ່ປະທັບຂອງພຣະຜູ້ມີພຣະກາຄ.

ຖວາຍເທສນ໌ໃນພຣະວິຫາຣ

[໔໑] ຄັ້ງນັ້ນ ພຣະຜູ້ມີພຣະກາຄປະທັບຢູ່ໃນທີ່ແຈ້ງຈົນເດິກ ຈຶ່ງສເດັຈເຂົ້າພຣະວິຫາຣ ແມ້ທ່ານພຣະໂສຕະກໍຍັບຍັ້ງຢູ່ໃນທີ່ແຈ້ງຈົນເດິກຈຶ່ງເຂົ້າພຣະວິຫາຣ ເມື່ອເວລາປັຈຈຸສມັຍແຫ່ງຣາຕຣີ ພຣະຜູ້ມີພຣະກາຄ

ທຣົງຕື່ນພຣະບັຣທົມແລ້ວທຣົງອັຊເຊສນາທ່ານພຣະໂສຕະວ່າ ດູຣາກິກຂຸ ທ່ານຈົ່ງກ່າວສັມມ໌ຕາມຖນັດ ທ່ານພຣະໂສຕະຂາບທູລສນອງພຣະພຸທສບັລຊາວ່າ ຢ່າງນັ້ນ ຂ້ານ້ອຍ ແລ້ວໄດ້ສູຕພຣະສູຕຣ໌ທັ້ງຫລາຍ ອັນມີຢູ່ໃນອັຕຖກາວັຄຄ໌ ຈົບຫມົດສິ້ນໂດຍສຣັລລະ ເມື່ອຈົບສຣັລລະຂອງທ່ານພຣະໂສຕະ ພຣະຜູ້ມີພຣະກາຄທຣົງພຣະປູາໂມທຍ໌ໂປຼດປະທານສາຣຸການວ່າ ດີລະ ດີລະ ກິກຂຸ ສູຕຣ໌ທັ້ງຫລາຍທີ່ມີໃນອັຕຖກາວັຄຄ໌ທ່ານຮຽນມາດີແລ້ວ ຈື່ໄວ້ໃນໃຈດີແລ້ວ ທຣົງຈຳໄດ້ຄັກແນ່ດີ ທ່ານເປັນຜູ້ປະກອບດ້ວຍວາຈາມ່ວນອ້ອນຊ້ອນ ບໍ່ມີໂທຜ ໃຫ້ເຂົ້າໃຈຮູ້ຄວາມໄດ້ແຈ່ມຊັດ ທ່ານມີພັຣຜາແກ່ປານໃດ ກິກຂຸ?

ທ່ານພຣະໂສຕະຂາບທູລວ່າ ຂ້າພຣະພຸທສເຈົ້າມີພັຣຜາດຽວ ຂ້ານ້ອຍ

ກ. ເພາະເຫຕຸໃດ ທ່ານຈຶ່ງມົວປະພຶຕຊັກຊ້າເຊັ່ນນັ້ນລະ ກິກຂຸ?

ໂສ. ຂ້າພຣະພຸທສເຈົ້າເຫັນໂທຜໃນກາມທັ້ງຫລາຍດົນແລ້ວ ແຕ່ເພາະຒຣາວາສຄັບແຄບ ມີກິຈຫຼາຍມີກຣຕິຍຫຼາຍ ຈຶ່ງໄດ້ປະພຶຕຊັກຊ້າຢູ່ ຂ້ານ້ອຍ.

ທຣົງພຣະອຸທານ

ລຳດັບນັ້ນ ພຣະຜູ້ມີພຣະກາຄທຣົງຮູ້ຄວາມຂໍ້ນີ້ແລ້ວ ຈຶ່ງທຣົງພຣະອຸທານນີ້ໃນເວລານັ້ນວ່າດັ່ງນີ້:-

ອາຣຍຊົນເຫັນໂທຜໃນໂລກ ຮູ້ສັມມ໌ທີ່ປຣາສຈາກ
ອຸປຣິແລ້ວ ຈັ່ງຊັ້ນ ຈຶ່ງບໍ່ຍິນດີໃນບາປ ເພາະຄົນ
ສະອາດຍ່ອມບໍ່ຍິນດີໃນບາປ.

ຂາບທູລອາຕັຕິກພິຈນ໌ຂອງພຣະອຸປັຊຊາຍະ ໕ ປະການ

[໔໔] ລຳດັບນັ້ນ ທ່ານພຣະໂສຕະຄິດວ່າ ພຣະຜູ້ມີພຣະກາຄກຳລັງໂປຼດປຣານເຮົາ ເວລານີ້ຄວຣຂາບທູລຖ້ອຍຄຳທີ່ພຣະອຸປັຊຊາຍະຂອງເຮົາສັ່ງມາ ດັ່ງນີ້ ແລ້ວລຸກຈາກທີ່ນັ່ງ ຫົ່ມຈີວຣພາດບ່າ ຫມອບລົງທີ່ພຣະບາທຍຸຄົລຂອງພຣະຜູ້ມີພຣະກາຄດ້ວຍສຽຣເກົ້າ ແລ້ວໄດ້ຂາບທູລຄຳນີ້ຕໍ່ພຣະຜູ້ມີພຣະກາຄວ່າ ຂ້ານ້ອຍ ທ່ານພຣະມຫາກັຈຈານະ ອຸປັຊຊາຍະຂອງຂ້າພຣະພຸທສເຈົ້າ ຂໍຖວາຍບັງຄົມພຣະບາທຍຸຄົລຂອງພຣະອົງຄ໌ດ້ວຍສຽຣເກົ້າ ແລະສັ່ງໃຫ້ຂ້າພຣະພຸທສເຈົ້າຂາບທູລຢ່າງນີ້ວ່າ

໑. ຂ້ານ້ອຍ ແຂວງອວັນຕີທັກຂິຕາບົຖ ມີກິກຂຸຫນ້ອຍອົງຄ໌ ຂ້າພຣະພຸທສເຈົ້າໄດ້ຈັດຫາກິກຂຸສົງຜ໌ແຕ່ທີ່ນັ້ນໆ ໃຫ້ຄົບອົງຄ໌ປະຊຸມທົສວັຄຄ໌ໄດ້ຍາກລຳບາກ ນັບແຕ່ວັນຂ້າພຣະພຸທສເຈົ້າບັຣພຊາ

ລ່ວງໄປ ໑ ປີ ຈຶ່ງໄດ້ອຸປສົມບົທ ຖ້າແນວໃດ ສະເພາະໃນອວັນຕີທັກຂິຕາບົຖ ຂໍພຣະຜູ້ມີພຣະກາຄຄວຣທຣົງອນຸຍາຕອຸປສົມບົທ ດ້ວຍຄຕະສົງຜ໌ຫນ້ອຍອົງຄ໌ກວ່ານີ້ໄດ້

໔. ຂ້ານ້ອຍ ພື້ນດິນໃນອວັນຕີທັກຂິຕາບົຖ ມີດິນສີດຳຫຼາຍ ບໍ່ຮາບເຕັມໄປດ້ວຍຮອຍຕີນງົວແຫ້ງ ຖ້າແນວໃດ ສະເພາະໃນອວັນຕີທັກຂິຕາບົຖ ຂໍພຣະຜູ້ມີພຣະກາຄຄວຣທຣົງອນຸຍາຕເກີບຫລາຍຊັ້ນ

໑. ຂ້ານ້ອຍ ຄົນທັ້ງຫລາຍໃນອວັນຕີທັກຂິຕາບົຖນິຍົມການອາບນ້ຳ ຖືວ່ານ້ຳເຮັດໃຫ້ບໍຣິສຸທສິ໌ ຖ້າແນວໃດ ສະເພາະໃນອວັນຕີທັກຂິຕາບົຖຂໍພຣະຜູ້ມີພຣະກາຄຄວຣທຣົງອນຸຍາຕອາບນ້ຳໄດ້ເປັນປະຈຳ

໔. ຂ້ານ້ອຍ ໃນອວັນຕີທັກຂິຕາບົຖ ມີຫນັງເຄື່ອງລາດ ຄື ຫນັງແກະ ຫນັງແພະ ຫນັງມຣິຄ ໃນມັຊຊິມຊົນບົທ ມີຫຍ້າຕີນກາ ຫຍ້າຫາງນົກຍູງ ຫຍ້າຫນວດແມວ ຫຍ້າຫາງຊ້າງ ແມ້ແນວໃດ ໃນອວັນຕີທັກຂິຕາບົຖກໍມີຫນັງເຄື່ອງລາດ ຄື ຫນັງແກະ ຫນັງແພະ ຫນັງມຣິຄ ແນວນັ້ນເຫມືອນກັນແລ ຖ້າແນວໃດ ສະເພາະໃນອວັນຕີທັກຂິຕາບົຖ ຂໍພຣະຜູ້ມີພຣະກາຄຄວຣທຣົງອນຸຍາຕຫນັງເຄື່ອງລາດ ຄື ຫນັງແກະ ຫນັງແພະ ຫນັງມຣິຄ

໕. ຂ້ານ້ອຍ ດຽວນີ້ຄົນທັ້ງຫລາຍຝາກຖວາຍຈີວຣແກ່ຫມູ່ກິກຂຸຜູ້ຢູ່ນອກສີມາ ດ້ວຍຄຳວ່າ ຂ້າພເຈົ້າທັ້ງຫລາຍຂໍຖວາຍຈີວຣຜືນນີ້ແກ່ທ່ານຜູ້ມີຊື່ນີ້ ດັ່ງນີ້ ກິກຂຸຜູ້ຮັບຝາກມາບອກວ່າ ອາວຸໂສ ຄົນທັ້ງຫລາຍມີຊື່ນີ້ຖວາຍຈີວຣແກ່ທ່ານແລ້ວ ພວກກິກຂຸຜູ້ໄດ້ຮັບຄຳບອກລະ ບໍ່ພໍໃຈບໍ່ຍິນດີຮັບ ດ້ວຍຄຶດວ່າ ພວກເຮົາບໍ່ຕ້ອງການຂອງເປັນນິສສັຄຄິຍ໌ ຖ້າແນວໃດ ຂໍພຣະຜູ້ມີພຣະກາຄຄວຣຕຣັສຊີ້ແຈງໃນເຣື່ອງຈີວຣ.

ພຣະພຸທສານຸຍາຕພິເສສ

[໔໑] ຄັ້ງນັ້ນ ພຣະຜູ້ມີພຣະກາຄທຣົງເຮັດສັມມີກາຖາ ໃນເພາະເຫຕຸເປັນເຄົ້າມູລນັ້ນ ໃນເພາະເຫຕຸແຣກເກີດນັ້ນ ແລ້ວຮັບສັ່ງກະກິກຂຸທັ້ງຫລາຍ ວ່າດັ່ງນີ້:-

໑. ດູຣາກິກຂຸທັ້ງຫລາຍ ແຂວງອວັນຕີທັກຂິຕາບົຖ ມີກິກຂຸຫນ້ອຍອົງຄ໌ ເຮົາອນຸຍາຕການອຸປສົມບົທດ້ວຍຄຕະສົງຜ໌ມີວິນັຍສຣເປັນທີ່ ໕ ໄດ້ ທົ່ວປັຈຈັນຕຊົນບົທ ໑-

ກຳຫນົດເຂຕປັຈຈັນຕຊົນບົທແລະມັຊຊິມຊົນບົທ

ບັຣດາຊົນບົທເຫລົ່ານັ້ນ ປັຈຈັນຕຊົນບົທ ມີກຳຫນົດເຂຕ ດັ່ງນີ້:-

ໃນທິສບູຣພາມີນິຄົມຊື່ກຊັງຄລະ ຖັດນິຄົມນັ້ນມາເຖິງມຫາສາລນຄຣ ນອກນັ້ນອອກໄປເປັນປັຈຈັນຕຊົນບົທ ຮ່ວມໃນເປັນມັຊຊິມຊົນບົທ ໑-

@໑. ແຂວງກາຍໃນເປັນສູນຍ໌ກາງຂອງປະເທສ

ໃນທິສອາຄເນຍ໌ ມີແມ່ນ້ຳຊື່ສັລລວຕີ ນອກແມ່ນ້ຳສັລລວຕີນັ້ນອອກໄປ ເປັນປັຈຈັນຕຊົນບົທ ຮ່ວມໃນເປັນມັຊຊິມຊົນບົທ

ໃນທິສທັກພິຓ ມີນິຄົມຊື່ເສຕກັຓຓິກະ ນອກນິຄົມນັ້ນອອກໄປເປັນປັຈຈັນຕຊົນບົທ ຮ່ວມໃນເປັນມັຊຊິມຊົນບົທ

ໃນທິສປັຈຈິມ ມີພຣາຫ໌ມຓຄາມຊື່ຖູນະ ນອກນັ້ນອອກໄປ ເປັນປັຈຈັນຕຊົນບົທ ຮ່ວມໃນເປັນມັຊຊິມຊົນບົທ

ໃນທິສອຸດອຣ ມີພູເຂົາຊື່ອຸສີຣສຊະ ນອກນັ້ນອອກໄປ ເປັນປັຈຈັນຕຊົນບົທ ຮ່ວມໃນເປັນມັຊຊິມຊົນບົທ

ດູຣາພິກຂຸທັ້ງຫລາຍ ເຮົາອນຸຓາຕການອຸປສົມບົທ ດ້ວຍຄຓະສົງຄ໌ມີວິນັຍສຣເປັນທີ່ ໕ ໄດ້ ທົ່ວປັຈຈັນຕຊົນບົທເຫັນປານນີ້

໔. ດູຣາພິກຂຸທັ້ງຫລາຍ ພື້ນດິນໃນອວັນຕີທັກຂິຓາບົຖ ມີດິນສີດຳຫຼາຍ ເຕັມໄປດ້ວຍດິນແຫ້ງແຕກ ຄືຮອຍຕີນງົວ ເຮົາອນຸຓາຕເກີບຫລາຍຊັ້ນ ທົ່ວປັຈຈັນຕຊົນບົທ

໖. ດູຣາພິກຂຸທັ້ງຫລາຍ ຄົນທັ້ງຫລາຍໃນອວັນຕີທັກຂິຓາບົຖ ນິຍົມການອາບນ້ຳ ຖືວ່ານ້ຳເຮັດໃຫ້ບໍຣິສຸທສິ໌ ເຮົາອນຸຓາຕການອາບນ້ຳໄດ້ເປັນປະຈຳທົ່ວປັຈຈັນຕຊົນບົທ

໔. ດູຣາພິກຂຸທັ້ງຫລາຍ ໃນອວັນຕີທັກຂິຓາບົຖ ມີໜັງເຄື່ອງລາດ ຄື ໜັງແກະ ໜັງແພະ ໜັງມຣິຄ ໃນມັຊຊິມຊົນບົທ ມີຫຍ້າຕີນກາ ຫຍ້າຫາງນົກຍູງ ຫຍ້າໜວດແມວ ຫຍ້າຫາງຊ້າງ ແມ້ແນວໃດ ໃນອວັນຕີທັກຂິຓາບົຖ ກໍມີໜັງເຄື່ອງລາດ ຄື ໜັງແກະ ໜັງແພະ ໜັງມຣິຄ ແນວນັ້ນເໝືອນກັນແລ ເຮົາອນຸຓາຕໜັງເຄື່ອງລາດ ຄື ໜັງແກະ ໜັງແພະ ໜັງມຣິຄ ທົ່ວປັຈຈັນຕຊົນບົທ

໕. ດູຣາພິກຂຸທັ້ງຫລາຍ ປະການນຶ່ງ ຄົນທັ້ງຫລາຍໃນໂລກນີ້ຝາກຖວາຍຈີວຣເພື່ອໝູ່ພິກຂຸຜູ້ຢູ່ນອກສີມາ
ດ້ວຍຄຳວ່າ ຂ້າພເຈົ້າທັ້ງຫລາຍຖວາຍຈີວຣຜືນນີ້ແກ່ພິກຂຸຜູ້ມີຊື່ນີ້ ດັ່ງນີ້ ດູຣາພິກຂຸທັ້ງຫລາຍ ເຮົາອນຸຓາຕໃຫ້ຍິນດີໄດ້ ຈີວຣນັ້ນຍັງບໍ່ຄວຣນັບຣາຕຣີຕລອດເວລາທີ່ຍັງບໍ່ເຖິງມື.

ຈັມມຂັນສກະ ທີ່ ໕ ຈົບ.

ໃນຂັນສກະນີ້ມີ ໖໖ ເຣື່ອງ

ຫົວຂໍ້ປະຈຳຂັນສກະ

[໘໔] ພຣະເຈົ້າແຜ່ນດິນມຄສ ທຣົງປົກຄອງພົລເມືອງ ໘໐,໐໐໐ ຕຳບົລ ຮັບສັ່ງໃຫ້ໂສຕເສຕຖີ ເຂົ້າເຝົ້າ ໑ ພຣະສາຄຕເຖຣະສແດງອິທຣິປາຕິຫາຣິຍ໌ອັນເປັນສົມບັດຍອດຍິ່ງຂອງມນຸຍ໌ຫຼວງຫຼາຍ ໓ ຄົຊຊຸກູຕບັຣພົຕ ໑ ໂສຕເສຕຖີບຸຕຣ໌ອອກບວຊ ແລະປຣາຣົກຄວາມພຽຣເກີນຂນາດ ຍ່າງຈົງກຣົມຈົນ ຕີນແຕກ ໑ ປຽບທຽບຄວາມພຽຣດ້ວຍສາຍພິນ ໑ ທຣົງອນຸຍາຕເກີບຊັ້ນດຽວ ໑ ທຣົງຫ້າມ ເກີບສີຂຽວ ໑ ເກີບສີເຫລືອງ ໑ ເກີບສີແດງ ໑ ເກີບສີບານເຢັນ ໑ ເກີບສີດຳ ໑ ເກີບສີແສດ ໑ ເກີບສີຊົມພູ ໑ ເກີບມີຫູວິຈິຕຣ໌ ໑ ເກີບຫຸ້ມສົ້ນ ໑ ເກີບຫຸ້ມແຂ້ງ ໑ ເກີບທີ່ຍັດດ້ວຍນຸ່ນ ໑ ເກີບທີ່ມີລາຍຄ້າຍຂົນປີກນົກກະທາ ໑ ເກີບທີ່ເຮັດຫູງອນມີສັຕການ ເໝືອນເຂົາແກະ ໑ ເກີບທີ່ຫູງອນມີສັຕການເໝືອນເຂົາແພະ ໑ ເກີບທີ່ເຮັດປະກອບຫູງອນເໝືອນຫາງແມງ ງອດ ໑ ເກີບທີ່ຍິບດ້ວຍຂົນປີກນົກຍູງ ໑ ເກີບທີ່ວິຈິຕຣ໌ ໑ ເກີບທີ່ຂລິບດ້ວຍໜັງຣາຊສີຫ໌ ໑ ເກີບທີ່ຂລິບດ້ວຍໜັງເສືອໂຄ່ງ ໑ ເກີບທີ່ຂລິບດ້ວຍໜັງເສືອເຫລືອງ ໑ ເກີບທີ່ຂລິບດ້ວຍໜັງ ເໜັ້ນ ໑ ເກີບທີ່ຂລິບດ້ວຍໜັງນາກ ໑ ເກີບທີ່ຂລິບດ້ວຍໜັງແມວ ໑ ເກີບທີ່ຂລິບດ້ວຍໜັງ ຄ່າງ ໑ ເກີບທີ່ຂລິບດ້ວຍໜັງນົກເຄົ້າ ໑ ຕີນແຕກ ໑ ສວມເກີບໃນວັດ ໑ ຕີນເປັນໜໍ່ ລ້າງຕີນ ຕໍໄມ້ ແລະສວມຊຽງຕີນຍ່າງສຽງດັງຂຕະ ຂຕະ ໑ ຊຽງຕີນສານດ້ວຍໃບຕາລ ໑ ຊຽງຕີນ ສານດ້ວຍໃບໄຜ່ ໑ ຊຽງຕີນສານດ້ວຍຫຍ້າ ໑ ຊຽງຕີນສານດ້ວຍຫຍ້າມຸງກະຕ່າຍ ໑ ຊຽງຕີນສານ ດ້ວຍຫຍ້າປ້ອງ ໑ ຊຽງຕີນສານດ້ວຍໃບເປົ້ງ ໑ ຊຽງຕີນສານດ້ວຍແຝກ ໑ ຊຽງຕີນຖັກດ້ວຍຂົນສັຕວ໌ ໑ ຊຽງຕີນປະດັບດ້ວຍທອງຄຳແລະເງິນ ໑ ຊຽງຕີນປະດັບດ້ວຍແກ້ວມະນີ ໑ ຊຽງຕີນປະດັບດ້ວຍ ແກ້ວໄພທູຣຍ໌ ໑ ຊຽງຕີນປະດັບດ້ວຍແກ້ວຜລຶກ ໑ ຊຽງຕີນເຮັດດ້ວຍທອງສັມຣິທຣິ໌ ໑ ຊຽງຕີນປະດັບ ດ້ວຍກະຈົກ ໑ ຊຽງຕີນເຮັດດ້ວຍດີບຸກ ໑ ຊຽງຕີນເຮັດດ້ວຍສັງກະສີ ໑ ຊຽງຕີນເຮັດດ້ວຍທອງແດງ ໑ ຈັບງົວ ໑ ຂີ່ຍານແລະກິກຂຸອາພາຊ ໑ ຍານທຽມດ້ວຍງົວໂຕຜູ້ ໑ ຄານຫາມ ໑ ທີ່ນັ່ງແລະທີ່ນອນ ໑ ໜັງຜືນໃຫຍ່ ໑ ໜັງງົວ ໑ ກິກຂຸໃຈຮ້າຍ ໑ ຕຽງຕັ່ງຂອງພວກຄຣິຫັສຖ໌ທີ່ຫຸ້ມໜັງ ໑ ສວມເກີບ ເຂົ້າບ້ານ ແລະກິກຂຸອາພາຊ ໑ ພຣະມຫາກັຈຈານະ ໑ ພຣະໂສຕະ ສູຕສູຕຣ໌ ອັນມີຢູ່ໃນອັຕຖກວັຄຄ໌ ໂດຍສຣັລະແລະພຣະພຸທສເຈົ້າຜູ້ເປັນນາຍົກໄດ້ທຣົງປະທານພອຣ ໕ ຢ່າງນີ້ ແກ່ພຣະໂສຕະເຖຣະ ຄື ອນຸຍາຕສົງຄ໌ປັຍຈວັຄຄ໌ທຳການອຸປສົມບົທໄດ້ ໑ ສວມເກີບຫລາຍຊັ້ນໄດ້ ໑. ອາບນ້ຳໄດ້ເປັນປະຈຳ ໑ ໃຊ້ໜັງເຄື່ອງລາດໄດ້ ໑ ທາຍົກຖວາຍຈີວຣ ເມື່ອຍັງບໍ່ເຖິງມືກິກຂຸ ຍັງບໍ່ຕ້ອງນັບຣາຕຣີ ໑

ຫົວຂໍ້ປະຈຳຂັນສກະ ຈົບ.

ເພສັຊຊຂັນສກະ

ກິກຂຸອາພາສໃນຣະດູສາຣທ໌

[໔໕] ໂດຍສມັຍນັ້ນແລ ພຣະຜູ້ມີພຣະກາຄພຸທສເຈົ້າປະທັບຢູ່ ຓ ພຣະເຊຕວັນອາຣາມຂອງອນາຖບິຕຫິກຄຫບໍດີ ເຂຕພຣະນຄຣສາວັຕຖີ ຄັ້ງນັ້ນ ກິກຂຸທັ້ງຫລາຍອັນອາພາສຊຶ່ງເກີດຊຸມໃນຣະດູ**ສາຣທ໌**[6] ຖືກຕ້ອງແລ້ວ ຢາຄູທີ່ດື່ມເຂົ້າໄປກໍພຸ່ງອອກ ແມ້ເຂົ້າສວຍທີ່ຈັນແລ້ວກໍພຸ່ງອອກ ເພາະອາພາສນັ້ນ ພວກທ່ານຈຶ່ງຈອຍແຫ້ງ ເສົ້າຫມອງ ມີຜິວພັຣຕ໌ບໍ່ດີ ມີຜິວເຫລືອງຂຶ້ນໆ ມີເນື້ອຕົວເຕັມໄປດ້ວຍເອັນ ພຣະຜູ້ມີພຣະກາຄໄດ້ທອດພຣະເນຕຣ໌ເຫັນກິກຂຸເຫລົ່ານັ້ນຈອຍແຫ້ງ ເສົ້າຫມອງ ມີຜິວພັຣຕ໌ບໍ່ດີ ມີຜິວເຫລືອງຂຶ້ນໆ ມີເນື້ອຕົວເຕັມໄປດ້ວຍເອັນ ເມື່ອແລ້ວຈຶ່ງຕຣັສເອີ້ນທ່ານພຣະອານົນທ໌ມາຮັບສັ່ງຖາມວ່າ ດູຣາອານົນທ໌ ເປັນຫຍັງນໍ ດ່ຽວນີ້ກິກຂຸທັ້ງຫລາຍຈຶ່ງຈອຍແຫ້ງ ເສົ້າຫມອງ ມີຜິວພັຣຕ໌ບໍ່ດີ ມີຜິວເຫລືອງຂຶ້ນໆ ມີເນື້ອຕົວເຕັມໄປດ້ວຍເອັນ

ທ່ານພຣະອານົນທ໌ຂາບທູລວ່າ ຂ້ານ້ອຍ ດ່ຽວນີ້ກິກຂຸທັ້ງຫລາຍ ອັນອາພາສຊຶ່ງເກີດຊຸມໃນຣະດູສາຣທ໌ຖືກຕ້ອງແລ້ວ ຢາຄູທີ່ດື່ມເຂົ້າໄປກໍພຸ່ງອອກ ແມ້ເຂົ້າສວຍທີ່ຈັນແລ້ວກໍພຸ່ງອອກ ເພາະອາພາສນັ້ນ ພວກທ່ານຈຶ່ງຈອຍແຫ້ງ ເສົ້າຫມອງມີຜິວພັຣຕ໌ບໍ່ດີ ມີຜິວເຫລືອງຂຶ້ນໆ ມີເນື້ອຕົວເຕັມໄປດ້ວຍເອັນ.

ພຣະພຸທສານຸຍາຕເພສັຊ ໕ ໃນກາລ

ຄັ້ງນັ້ນ ພຣະຜູ້ມີພຣະກາຄປະທັບໃນທີ່ສງັດທຣົງຫລີກເຮັ້ນຢູ່ ໄດ້ມີພຣະປຣິວິຕົກແຫ່ງພຣະທັຍເກີດຂຶ້ນຢ່າງນີ້ວ່າ ດ່ຽວນີ້ກິກຂຸທັ້ງຫລາຍອັນອາພາສຊຶ່ງເກີດຊຸມໃນຣະດູສາຣທ໌ ຖືກຕ້ອງແລ້ວ ຢາຄູທີ່ດື່ມເຂົ້າໄປກໍພຸ່ງອອກ ແມ້ເຂົ້າສວຍທີ່ຈັນແລ້ວກໍພຸ່ງອອກ ເພາະອາພາສນັ້ນ ພວກທ່ານຈຶ່ງຈອຍແຫ້ງ ເສົ້າຫມອງມີຜິວພັຣຕ໌ບໍ່ດີ ມີຜິວພັຣຕ໌ເຫລືອງຂຶ້ນໆ ມີເນື້ອຕົວເຕັມໄປດ້ວຍເອັນ ເຮົາຈະຄວຣອນຸຍາຕຫຍັງນໍເປັນເພສັຊແກ່ກິກຂຸທັ້ງຫລາຍ ຊຶ່ງເປັນເພສັຊຢູ່ໃນໂຕ ແລະເຂົາສົມມຸຕິວ່າເປັນເພສັຊ ທັ້ງຈະຕ້ອງສຳເຣັຈປະໂຍຊນ໌ໃນອາຫາຣກິຈແກ່ສັຕວ໌ໂລກ ແລະຈະບໍ່ຄວຣປຣາກົຕເປັນອາຫາຣຫຍາບ ທີນັ້ນພຣະອົງຄ໌ໄດ້ມີ

---

6 **ສາຣທ໌** ເທສກາລທຳບຸລສິ້ນເດືອນສິບ ເດີມເປັນຣດູທຳບຸລດ້ວຍເອົາເຂົ້າທີ່ກຳລັງທ້ອງ (ເຂົ້າຣວງເປັນນ້ຳນົມ) ມາທຳຢາຄູແລະກວນເຂົ້າປາຍາສລ້ຽງພຣາຫ໌ມຕ໌ ຢ່າງນີ້ເອີ້ນວ່າກວນເຂົ້າທິພຍ໌ ສ່ວນຜູ້ນັບຖືພຸທສສາສນານຳຄຕິນັ້ນມາໃຊ້ແຕ່ປ່ຽນເປັນຖວາຍແກ່ພຣະກິກຂຸສົງຄ໌ອຸທິສສ່ວນກຸສົລໃຫ້ແກ່ຍາຕິໃນປຣໂລກ ສຳຫຼັບຊາວບ້ານທົ່ວໄປມັກທຳແຕ່ກະຍາສາຣທ໌ ເປັນຕົ້ນ (ຕ່າງຈາກ ສຣາທທ໌)

ພຣະປຣິວິຕົກສືບຕໍ່ໄປວ່າ ເກສັຊ ໕ ນີ້ແລ ຄື ເນີຍໃສ ເນີຍຂົ້ນ ນ້ຳມັນ ນ້ຳເຜີ້ງ ນ້ຳອ້ອຍ ເປັນເກສັຊ ຢູ່ໃນໂຕ ແລະເຂົາສົມມຸຕິວ່າເປັນເກສັຊ ທັ້ງສຳເຣັຈປະໂຍຊນ໌ໃນອາຫາຣກິຈແກ່ສັຕວ໌ໂລກ ແລະບໍ່ປຣາກົຕເປັນອາຫາຣຫຍາບ ຫາກຈັ່ງຊັ້ນ ເຮົາຄວຣອນຸຍາຕເກສັຊ ໕ ນີ້ແກ່ກິກຂຸທັ້ງຫລາຍ ໃຫ້ຮັບປະເຄນໃນກາລແລ້ວບໍຣິໂກຄໃນກາລ ເມື່ອເວລາສາຍັຕຫ໌ພຣະອົງຄ໌ສເດັຈອອກຈາກທີ່ຫລີກເຣັ້ນ ທຣົງເຮັດສັມມີກຖາ ໃນເພາະເຫຕຸເປັນເຄົ້າມູລນັ້ນ ໃນເພາະເຫຕຸແຣກເກີດນັ້ນ ແລ້ວຮັບສັ່ງກະກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ເຮົາໄປໃນທີ່ສງັດຫລີກເຣັ້ນຢູ່ ໓ ຕຳບົລນີ້ ໄດ້ມີຄວາມປຣິວິຕົກແຫ່ງຈິຕເກີດຂຶ້ນຢ່າງນີ້ວ່າ ດ່ຽວນີ້ກິກຂຸທັ້ງຫລາຍອັນອາພາສຊຶ່ງເກີດຊຸມໃນຣະດູສາຣທ໌ ຖືກຕ້ອງແລ້ວ ຢາຄູທີ່ດື່ມເຂົ້າໄປກໍພຸ່ງອອກ ແມ້ເຂົ້າສວຍທີ່ລົນແລ້ວກໍພຸ່ງອອກ ເພາະອາພາສນັ້ນ ພວກທ່ານຈຶ່ງຈອຍແຫ້ງ ເສົ້າຫມອງ ມີຜິວພັຣຄ໌ບໍ່ດີ ມີຜິວເຫລືອງຂຶ້ນໆ ມີເນື້ອຕົວເຕັມໄປດ້ວຍເອັນ ເຮົາຈະຄວຣອນຸຍາຕຫຍັງບໍເປັນເກສັຊແກ່ກິກຂຸທັ້ງຫລາຍ ຊຶ່ງເປັນເກສັຊຢູ່ໃນໂຕແລະເຂົາສົມມຸຕິວ່າເປັນເກສັຊ ທັ້ງຈະຕ້ອງສຳເຣັຈປະໂຍຊນ໌ໃນອາຫາຣກິຈແກ່ສັຕວ໌ໂລກ ແລະບໍ່ປຣາກົຕເປັນອາຫາຣຫຍາບ ດູຣາກິກຂຸທັ້ງຫລາຍ ເຮົານັ້ນໄດ້ມີຄວາມປຣິວິຕົກສືບຕໍ່ໄປວ່າ ເກສັຊ ໕ ນີ້ແລ ຄື ເນີຍໃສ ເນີຍຂົ້ນ ນ້ຳມັນ ນ້ຳເຜີ້ງ ນ້ຳອ້ອຍ ເປັນເກສັຊຢູ່ໃນໂຕ ແລະເຂົາສົມມຸຕິວ່າເປັນເກສັຊ ທັ້ງສຳເຣັຈປະໂຍຊນ໌ໃນອາຫາຣກິຈແກ່ສັຕວ໌ໂລກ ແລະບໍ່ປຣາກົຕເປັນອາຫາຣຫຍາບ ຫາກຈັ່ງຊັ້ນ ເຮົາຄວຣອນຸຍາຕເກສັຊ ໕ ນີ້ແກ່ກິກຂຸທັ້ງຫລາຍ ໃຫ້ຮັບປະເຄນໃນກາລແລ້ວບໍຣິໂກຄໃນກາລ ດູຣາກິກຂຸທັ້ງຫລາຍ ເຮົາອນຸຍາຕໃຫ້ຮັບປະເຄນເກສັຊ ໕ ນັ້ນໃນກາລ ແລ້ວບໍຣິໂກຄໃນກາລ.

ພຣະພຸທຊານຸຍາຕເກສັຊ ໕ ນອກກາລ

[໔໖] ກໍໂດຍສມັຍນັ້ນແລ ກິກຂຸທັ້ງຫລາຍຮັບປະເຄນເກສັຊ ໕ ນັ້ນໃນກາລ ແລ້ວບໍຣິໂກຄໃນກາລ ໂກຊນາຫາຣຂອງພວກທ່ານຊນິດສັມມດາ ຊນິດບໍ່ດີ ບໍ່ຍ່ອຍ ບໍ່ຈຳຕ້ອງກ່າວເຖິງໂກຊນາຫາຣທີ່ດີ ພວກທ່ານອັນອາພາສຊຶ່ງເກີດຊຸມໃນຣະດູສາຣທ໌ນັ້ນ ແລະອັນຄວາມເບື່ອກັຕຕາຫາຣນີ້ຖືກຕ້ອງແລ້ວ ເພາະເຫຕຸ ໒ ປະການນັ້ນ ຍິ່ງເປັນຜູ້ຈອຍແຫ້ງ ເສົ້າຫມອງ ມີຜິວພັຣຄ໌ບໍ່ດີ ມີຜິວເຫລືອງຂຶ້ນໆ ມີເນື້ອຕົວເຕັມໄປດ້ວຍເອັນຫຼາຍຂຶ້ນ ພຣະຜູ້ມີພຣະກາຄໄດ້ທອດພຣະເນຕຣ໌ເຫັນກິກຂຸເຫລົ່ານັ້ນຊຶ່ງຈອຍແຫ້ງ ເສົ້າຫມອງ ມີຜິວພັຣຄ໌ບໍ່ດີ ມີຜິວເຫລືອງຂຶ້ນໆ ມີເນື້ອຕົວເຕັມໄປດ້ວຍເອັນຫຼາຍຂຶ້ນ ເມື່ອແລ້ວຈຶ່ງຕຣັສເອີ້ນທ່ານພຣະອານົນທ໌ ມາຮັບສັ່ງຖາມວ່າ ດູຣາອານົນທ໌ ເປັນຫຍັງບໍ ດ່ຽວນີ້ກິກຂຸທັ້ງຫລາຍຍິ່ງຈອຍແຫ້ງ ເສົ້າຫມອງ ມີຜິວພັຣຄ໌ບໍ່ດີ ມີຜິວເຫລືອງຂຶ້ນໆ ມີເນື້ອຕົວເຕັມໄປດ້ວຍເອັນຫຼາຍຂຶ້ນ?

ທ່ານພຣະອານົນທ໌ຂາບທູລວ່າ ຂ້ານ້ອຍ ດັ່ງວນີ້ກິກຂຸທັ້ງຫລາຍຮັບປະເຄນເກສັຊ ໕ ນັ້ນ ໃນກາລແລ້ວບໍຣິໂພຄໃນກາລ ໂພຊນາຫາຣຂອງພວກທ່ານຊນິດສົມມດາ ຊນິດບໍ່ດີ ບໍ່ຍ່ອຍ ບໍ່ຈໍາຕ້ອງ ກ່າວເຖິງໂພຊນາຫາຣທີ່ດີ ພວກທ່ານອັນອາພາຣ ຊຶ່ງເກີດຊຸມໃນຣະດູສາຣທ໌ນັ້ນ ແລະອັນຄວາມເບື່ອກັຕຕາຫາຣ ນີ້ຖືກຕ້ອງແລ້ວ ເພາະເຫຕຸ ໔ ປະກາຣນັ້ນ ຍິ່ງເປັນຜູ້ຈອຍແຫ້ງ ເສົ້າຫມອງ ມີຜິວພັຣຕ໌ບໍ່ດີ ມີຜິວເຫລືອງຂຶ້ນໆ ມີເນື້ອຕົວເຕັມໄປດ້ວຍເອັນຫຼາຍຂຶ້ນ.

ລໍາດັບນັ້ນພຣະຜູ້ມີພຣະກາຄທຮົງເຮັດສົມມີກະຖາ ໃນເພາະເຫຕຸເປັນເຄົ້າມູລນັ້ນ ໃນເພາະເຫຕຸ ແຮກເກີດນັ້ນ ແລ້ວຕຣັສເອີ້ນກິກຂຸທັ້ງຫລາຍມາຮັບສັ່ງວ່າ ດູຣາກິກຂຸທັ້ງຫລາຍ ເຮົາອນຸຍາຕໃຫ້ຮັບປະເຄນ ເກສັຊ ໕ ນັ້ນ ແລ້ວບໍຣິໂພຄໄດ້ທັ້ງໃນກາລທັ້ງນອກກາລ.

ພຣະພຸທສານຸຍາຕນໍ້າມັນຕິດຫນັງ

[໔ກ] ກໍໂດຍສມັຍນັ້ນແລ ກິກຂຸທັ້ງຫລາຍທີ່ອາພາຣມີຄວາມຕ້ອງກາຣດ້ວຍນໍ້າມັນຕິດຫນັງ ເປັນເກສັຊ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕແກ່ກິກຂຸທັ້ງຫລາຍ ວ່າ ດູຣາກິກຂຸທັ້ງຫລາຍ ເຮົາອນຸຍາຕນໍ້າມັນຕິດຫນັງເປັນເກສັຊ ຄື ນໍ້າມັນຕິດຫນັງຫມີ ນໍ້າມັນຕິດຫນັງປາ ນໍ້າມັນຕິດຫນັງປາວລາມ ນໍ້າມັນຕິດຫນັງຫມູ ນໍ້າມັນຕິດຫນັງລາ ທີ່ຮັບປະເຄນໃນກາລ ຈີ່ນໃນກາລ ກຸອງໃນກາລ ບໍຣິໂພຄຢ່າງນໍ້າມັນ

ດູຣາກິກຂຸທັ້ງຫລາຍ ຖ້າກິກຂຸຮັບປະເຄນໃນວິກາລ ຈີ່ນໃນວິກາລ ກຸອງໃນວິກາລ ຫາກຈະ ຄວຣບໍຣິໂພຄນໍ້າມັນຕິດຫນັງນັ້ນ ຕ້ອງອາບັຕິທຸກກົຜ ໓ ໂຕ

ດູຣາກິກຂຸທັ້ງຫລາຍ ຖ້າກິກຂຸຮັບປະເຄນໃນກາລ ຈີ່ນໃນວິກາລ ກຸອງໃນວິກາລ ຫາກຈະ ຄວຣບໍຣິໂພຄນໍ້າມັນຕິດຫນັງນັ້ນ ຕ້ອງອາບັຕິທຸກກົຜ ໒ ໂຕ

ດູຣາກິກຂຸທັ້ງຫລາຍ ຖ້າກິກຂຸຮັບປະເຄນໃນກາລ ຈີ່ນໃນກາລ ກຸອງໃນວິກາລ ຫາກຈະ ຄວຣບໍຣິໂພຄນໍ້າມັນຕິດຫນັງນັ້ນ ຕ້ອງອາບັຕິທຸກກົຜ ໑ ໂຕ

ດູຣາກິກຂຸທັ້ງຫລາຍ ຖ້າກິກຂຸຮັບປະເຄນໃນກາລ ຈີ່ນໃນກາລ ກຸອງໃນກາລ ຫາກຈະ ຄວຣບໍຣິໂພຄນໍ້າມັນຕິດຫນັງນັ້ນ ບໍ່ຕ້ອງອາບັຕິ.

ພຣະພຸທສານຸຍາຕມູລເກສັຊ

[໔ຂ] ກໍໂດຍສມັຍນັ້ນແລ ກິກຂຸທັ້ງຫລາຍທີ່ອາພາຣມີຄວາມຕ້ອງກາຣດ້ວຍຮາກໄມ້ເປັນເກສັຊ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄ ຕຣັສອນຸຍາຕແກ່ກິກຂຸທັ້ງຫລາຍວ່າ

ດູຮາກິກຂຸທັ້ງຫລາຍ ເຮົາອນຸຍາຕຮາກໄມ້ທີ່ເປັນເພສັຊ ຄື ຂມີ້ນ ຂີງ ວ່ານນ້ຳ ວ່ານເປຣາະ ອຸຕພິດ ຂ່າ ແຝກ ແຫ້ວຫມູ ກໍຫຼືມູລເພສັຊ ແມ້ຊນິດອື່ນໃດບັຣດາມີ ທີ່ບໍ່ສຳເຣັຈປະໂຍຊນ໌ແກ່ຂອງຄວຣຍ້ຳ ທີ່ບໍ່ສຳເຣັຈປະໂຍຊນ໌ແກ່ຂອງຄວຣບໍຣິໂພຄໃນຂອງຄວຣບໍຣິໂພຄ ຮັບປະເຄນມູລເພສັຊເຫລົ່ານັ້ນແລ້ວເກັບໄວ້ໄດ້ຈົນຕລອດຊີພ ຕໍ່ມີເຫຕຸ ຈຶ່ງໃຫ້ບໍຣິໂພຄໄດ້ ເມື່ອເຫຕຸບໍ່ມີ ກິກຂຸບໍຣິໂພຄ ຕ້ອງອາບັຕິທຸກກົຜ.

ພຣະພຸທຮານຸຍາຕເຄື່ອງບົດຢາ

ສມັຍຕໍ່ມາ ກິກຂຸທັ້ງຫລາຍທີ່ອາພາຣມີຄວາມຕ້ອງການດ້ວຍຮາກໄມ້ທີ່ເປັນເພສັຊຊນິດລະອຽດ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕແກ່ກິກຂຸທັ້ງຫລາຍວ່າ ດູຮາກິກຂຸທັ້ງຫລາຍ ເຮົາອນຸຍາຕຕົວຫີນບົດ ລູກຫີນບົດ.

ພຣະພຸທຮານຸຍາຕກາສາວເພສັຊ

[໔໙] ກໍໂດຍສມັຍນັ້ນແລ ກິກຂຸທັ້ງຫລາຍທີ່ອາພາຣມີຄວາມຕ້ອງການດ້ວຍນ້ຳຝາດເປັນເພສັຊ ຈຶ່ງຂາບທູລເຣື່ອງແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕແກ່ກິກຂຸທັ້ງຫລາຍວ່າ ດູຮາກິກຂຸທັ້ງຫລາຍ ເຮົາອນຸຍາຕນ້ຳຝາດທີ່ເປັນເພສັຊ ຄື ນ້ຳຝາດສະເດາະ ນ້ຳຝາດມູກມັນ ນ້ຳຝາດກຣະດອມ ຫຼືຂີ້ກາ ນ້ຳຝາດບຣເພັດ ຫຼືພລາມີເຫລັກ ນ້ຳຝາດກຖິນພິມານ ກໍຫຼືກາສາວເພສັຊ ແມ້ຊນິດອື່ນໃດບັຣດາມີ ທີ່ບໍ່ສຳເຣັຈປະໂຍຊນ໌ແກ່ຂອງຄວຣຍ້ຳ ໃນຂອງຄວຣຍ້ຳ ທີ່ບໍ່ສຳເຣັຈປະໂຍຊນ໌ແກ່ຂອງຄວຣບໍຣິໂພຄໃນຂອງຄວຣບໍຣິໂພຄ ຮັບປະເຄນກາສາວເພສັຊເຫລົ່ານັ້ນ ແລ້ວເກັບໄວ້ໄດ້ຈົນຕລອດຊີພ ຕໍ່ມີເຫຕຸ ຈຶ່ງໃຫ້ບໍຣິໂພຄໄດ້ ເມື່ອເຫຕຸບໍ່ມີ ກິກຂຸບໍຣິໂພຄ ຕ້ອງອາບັຕິທຸກກົຜ.

ພຣະພຸທຮານຸຍາຕປັຕຕເພສັຊ

[໕໐] ກໍໂດຍສມັຍນັ້ນແລ ກິກຂຸທັ້ງຫລາຍທີ່ອາພາຣມີຄວາມຕ້ອງການດ້ວຍໃບໄມ້ເພສັຊ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕແກ່ກິກຂຸທັ້ງຫລາຍວ່າ ດູຮາກິກຂຸທັ້ງຫລາຍ ເຮົາອນຸຍາຕໃບໄມ້ທີ່ເປັນເພສັຊ ຄື ໃບສະເດົາ ໃບມູກມັນ ໃບກຣະດອມ ຫຼືຂີ້ກາ ໃບກະເພົາ ຫຼືອິຕຸ່ ໃບຝ້າຍ ກໍຫຼືປັຕຕເພສັຊ ແມ້ຊນິດອື່ນໃດບັຣດາມີ ທີ່ບໍ່ສຳເຣັຈປະໂຍຊນ໌ແກ່ຂອງຄວຣຍ້ຳ ໃນຂອງຄວຣຍ້ຳ ທີ່ບໍ່ສຳເຣັຈປະໂຍຊນ໌ແກ່ຂອງຄວຣບໍຣິໂພຄໃນຂອງຄວຣບໍຣິໂພຄ ຮັບປະເຄນປັຕຕເພສັຊເຫລົ່ານັ້ນ ແລ້ວເກັບໄວ້ໄດ້ຈົນຕລອດຊີພ ຕໍ່ມີເຫຕຸ ຈຶ່ງໃຫ້ບໍຣິໂພຄໄດ້ ເມື່ອເຫຕຸບໍ່ມີກິກຂຸບໍຣິໂພຄ ຕ້ອງອາບັຕິທຸກກົຜ.

ພຣະພຸທສານຸຌາຕຜົລເພສັຊ

[໖໑] ກໍໂດຍສມັຍນັ້ນແລ ກິກຂຸທັ້ງຫລາຍທີ່ອາພາສມີຄວາມຕ້ອງການດ້ວຍ**ຜົລໄມ້**ເປັນເພສັຊ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຌາຕແກ່ກິກຂຸທັ້ງຫລາຍວ່າ ດູຣາ ກິກຂຸທັ້ງຫລາຍ ເຮົາອນຸຌາຕຜົລໄມ້ທີ່ເປັນເພສັຊ ຄື ໝາກພິລັງກາສາ ດີປລີ ພຣິກ ສມໍໄທຍ ສມໍພິເພກ ໝາກຂາມປ້ອມ ຜົລແຫ່ງໂກຖ ກໍຫຼືຜົລເພສັຊ ແມ້ຊນິດອື່ນໃດບັຣດາມີ ທີ່ບໍ່ສຳເຣັຈປະໂຍຊນ໌ແກ່ຂອງ ຄວຣຍ້ຳໃນຂອງຄວຣຍ້ຳ ທີ່ບໍ່ສຳເຣັຈປະໂຍຊນ໌ແກ່ຂອງຄວຣບໍຣິໂພຄໃນຂອງຄວຣບໍຣິໂພຄ ຮັບປະເຄນ ຜົລເພສັຊເຫລົ່ານັ້ນແລ້ວເກັບໄວ້ໄດ້ຈົນຕລອດຊີພ ຕໍ່ມີເຫຕຸ ຈຶ່ງໃຫ້ບໍຣິໂພຄໄດ້ ເມື່ອເຫຕຸບໍ່ມີ ກິກຂຸ ບໍຣິໂພຄ ຕ້ອງອາບັຕິທຸກກົຏ.

ພຣະພຸທສານຸຌາຕຊຕຸເພສັຊ

[໖໔] ກໍໂດຍສມັຍນັ້ນແລ ກິກຂຸທັ້ງຫລາຍທີ່ອາພາສມີຄວາມຕ້ອງການດ້ວຍ**ຢາງໄມ້**ເປັນເພສັຊ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຌາຕແກ່ກິກຂຸທັ້ງຫລາຍວ່າ ດູຣາ ກິກຂຸທັ້ງຫລາຍ ເຮົາອນຸຌາຕຢາງໄມ້ທີ່ເປັນເພສັຊ ຄື ຢາງອັນໄຫລອອກຈາກຕົ້ນຫິງຄຸ ຢາງອັນເຂົ້າກ່ຽວ ຈາກກ້ານແລະໃບແຫ່ງຕົ້ນຫິງຄຸ ຢາງອັນເຂົ້າກ່ຽວຈາກໃບແຫ່ງຕົ້ນຫິງຄຸ ຫຼືເຈືອຂອງອື່ນດ້ວຍ ຢາງອັນໄຫລ ອອກຈາກຍອດໄມ້ຕກະ ຢາງອັນໄຫລອອກຈາກໃບແຫ່ງຕົ້ນຕກະ ຢາງອັນເຂົ້າກ່ຽວຈາກໃບຫຼືໄຫລອອກຈາກ ກ້ານແຫ່ງຕົ້ນຕກະ ກໍຢານກໍຫຼືຊຕຸເພສັຊຊນິດອື່ນໃດບັຣດາມີທີ່ບໍ່ສຳເຣັຈປະໂຍຊນ໌ແກ່ຂອງຄວຣຍ້ຳ ໃນຂອງຄວຣຍ້ຳ ທີ່ບໍ່ສຳເຣັຈປະໂຍຊນ໌ແກ່ຂອງຄວຣບໍຣິໂພຄໃນຂອງຄວຣບໍຣິໂພຄ ຮັບປະເຄນຊຕຸເພສັຊ ເຫລົ່ານັ້ນ ແລ້ວເກັບໄວ້ໄດ້ຈົນຕລອດຊີພ ຕໍ່ມີເຫຕຸ ຈຶ່ງໃຫ້ບໍຣິໂພຄໄດ້ ເມື່ອເຫຕຸບໍ່ມີ ກິກຂຸບໍຣິໂພຄ ຕ້ອງອາບັຕິທຸກກົຏ.

ພຣະພຸທສານຸຌາຕໂລຌເພສັຊ

[໖໖] ກໍໂດຍສມັຍນັ້ນແລ ກິກຂຸທັ້ງຫລາຍທີ່ອາພາສມີຄວາມຕ້ອງການດ້ວຍ**ເກືອ**ເປັນເພສັຊ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສອນຸຌາຕແກ່ກິກຂຸທັ້ງຫລາຍວ່າ ດູຣາ ກິກຂຸທັ້ງຫລາຍ ເຮົາອນຸຌາຕເກືອທີ່ເປັນເພສັຊ ຄື ເກືອສມຸທຣ໌ ເກືອດຳ ເກືອສິນເເຮົາວ໌ ເກືອດິນໂປ່ງ ເກືອຫຸງ ກໍຫຼືໂລຌເພສັຊຊນິດອື່ນໃດບັຣດາມີ ທີ່ບໍ່ສຳເຣັຈປະໂຍຊນ໌ແກ່ຂອງຄວຣຍ້ຳໃນຂອງ ຄວຣຍ້ຳ ທີ່ບໍ່ສຳເຣັຈປະໂຍຊນ໌ແກ່ຂອງຄວຣບໍຣິໂພຄໃນຂອງຄວຣບໍຣິໂພຄ ຮັບປະເຄນໂລຌເພສັຊ ເຫລົ່ານັ້ນ ແລ້ວເກັບໄວ້ໄດ້ຈົນຕລອດຊີພ ຕໍ່ມີເຫຕຸ ຈຶ່ງໃຫ້ບໍຣິໂພຄໄດ້ ເມື່ອເຫຕຸບໍ່ມີ ກິກຂຸບໍຣິໂພຄ ຕ້ອງອາບັຕິທຸກກົຏ.

ພຣະພຸທສານຸຍາຕຈຸຕາ ຕາສັຊເປັນຕົ້ນ

[໓໔] ໂດຍສມັຍນັ້ນແລ ທ່ານພຣະເວລັຕາສີສະ ອຸປັຊຊາຍ໌ຂອງທ່ານພຣະອານົນທ໌ ອາພາສ ເປັນໂຣຄຝີດາດ ຫຼືອີສຸກອີໃສ ຜ້ານຸ່ງຜ້າຫົ່ມກຣັງຢູ່ທີ່ຕົວ ເພາະນ້ຳເຫລືອງຂອງໂຣຄນັ້ນ ກິກຂຸທັ້ງຫລາຍ ເອົານ້ຳຊຸບໆ ຜ້າເຫລົ່ານັ້ນແລ້ວຄ່ອຍໆ ດຶງອອກມາ ພຣະຜູ້ມີພຣະກາຄສເດັຈພຣະພຸທສດຳເນີນຕາມເສນາສນະ ໄດ້ທອດພຣະເນຕຣ໌ເຫັນກິກຂຸພວກນັ້ນກຳລັງເອົານ້ຳຊຸບໆ ຜ້ານັ້ນແລ້ວຄ່ອຍໆ ດຶງອອກມາ ເມື່ອແລ້ວສເດັຈ ພຣະພຸທສດຳເນີນເຂົ້າໄປທາງກິກຂຸເຫລົ່ານັ້ນ ໄດ້ຕຣັສຖາມວ່າ ດູຣາກິກຂຸທັ້ງຫລາຍ ກິກຂຸອົງຄ໌ນີ້ອາພາສ ໂຣຄຫຍັງ? ກິກຂຸທັ້ງຫລາຍຂາບທູລວ່າ ຂ້ານ້ອຍ ທ່ານອົງຄ໌ນີ້ອາພາສໂຣຄຝີດາດ ຫຼືອີສຸກອີໃສ ຜ້າກຣັງຢູ່ທີ່ຕົວ ເພາະນ້ຳເຫລືອງ ພວກຂ້າພຣະພຸທສເຈົ້າເອົານ້ຳຊຸບໆ ຜ້າເຫລົ່ານັ້ນ ແລ້ວຄ່ອຍໆ ດຶງ ອອກມາ.

ຄັ້ງນັ້ນ ພຣະຜູ້ມີພຣະກາຄທຣົງເຮັດສັມມີກາຖາ ໃນເພາະເຫຕຸເປັນເຄົ້າມູລນັ້ນ ໃນເພາະເຫຕຸ ແຣກເກີດນັ້ນ ແລ້ວຮັບສັ່ງກະກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ເຮົາອນຸຍາຕເາສັຊຊນິດຜົງ ສຳຫຼັບ ກິກຂຸຜູ້ເປັນຝີກໍດີ ພຸພອງກໍດີ ສິວກໍດີ ໂຣຄຝີດາດ ຫຼືອີສຸກອີໃສກໍດີ ມີກິ່ນໂຕແຮງກໍດີ

ເຮົາອນຸຍາຕໂຄມັຍ ດິນໜຽວ ກາກນ້ຳຍ້ອມ ສຳຫຼັບກິກຂຸບໍ່ອາພາສ

ດູຣາກິກຂຸທັ້ງຫລາຍ ເຮົາອນຸຍາຕຄົກ ສາກ.

ພຣະພຸທສານຸຍາຕເຄື່ອງກຼອງ

[໓໕] ກໍໂດຍສມັຍນັ້ນແລ ກິກຂຸທັ້ງຫລາຍທີ່ອາພາສມີຄວາມຕ້ອງການດ້ວຍຢາຜົງທີ່ກຼອງແລ້ວ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕແກ່ກິກຂຸທັ້ງຫລາຍວ່າ ດູຣາ ກິກຂຸທັ້ງຫລາຍ ເຮົາອນຸຍາຕວັຕຖຸເຄື່ອງກຼອງຢາຜົງ

ກິກຂຸອາພາສມີຄວາມຕ້ອງການດ້ວຍຢາຜົງທີ່ລະອຽດ ພຣະຜູ້ມີພຣະກາຄຕຣັສອນຸຍາຕແກ່ກິກຂຸ ທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ເຮົາອນຸຍາຕຜ້າກຼອງຢາ.

ພຣະພຸທສານຸຍາຕເນື້ອດິບແລະເລືອດສົດ

[໓໖] ກໍໂດຍສມັຍນັ້ນແລ ກິກຂຸອົງຄ໌ນຶ່ງອາພາສເພາະຜີເຂົ້າ ພຣະອາຈາຣຍ໌ ພຣະອຸປັຊຊາຍະ ຊ່ວຍກັນຮັກສາທ່ານ ກໍບໍ່ສາມາຖແກ້ໄຂໃຫ້ຫາຍໂຣຄໄດ້ ທ່ານຍ່າງໄປທີ່ຊຽງປາດໝູ ແລ້ວຍ້ຳກິນເນື້ອດິບ ດື່ມກິນເລືອດສົດ ອາພາສເພາະຜີເຂົ້າຂອງທ່ານນັ້ນ ຫາຍດັ່ງປິດຖິ້ມ ກິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນ ແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕແກ່ກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ເຮົາ ອນຸຍາຕເນື້ອດິບ ເລືອດສົດ ໃນເພາະອາພາສເກີດແຕ່ຜີເຂົ້າ.

ພຣະພຸທສານຸຌາຕຢາຕາເປັນຕົ້ນ

[໖໗] ກໍໂດຍສມັຍນັ້ນແລ ພິກຂຸອົງຄ໌ນຶ່ງອາພາສເປັນໂຣຄນັຍນ໌ຕາ ພິກຂຸທັ້ງຫລາຍຈູງທ່ານໄປໃຫ້ຖ່າຍອຸຈຈາຣະແດ່ ປັສສາວະແດ່ ພຣະຜູ້ມີພຣະພາຄສເດັຈພຣະພຸທສດຳເນີນຕາມເສນາສນະ ໄດ້ທອດພຣະເນຕຣ໌ເຫັນພວກພິກຂຸນັ້ນກຳລັງຈູງພິກຂຸອົງຄ໌ນັ້ນໄປໃຫ້ຖ່າຍອຸຈຈາຣະແດ່ ປັສສາວະແດ່ ຈຶ່ງສເດັຈພຣະພຸທສດຳເນີນເຂົ້າໄປຫາງພິກຂຸພວກນັ້ນແລ້ວໄດ້ຕຣັສຖາມວ່າ ດູຣາພິກຂຸທັ້ງຫລາຍ ພິກຂຸອົງຄ໌ນີ້ອາພາສເປັນຫຍັງ? ພິກຂຸທັ້ງຫລາຍຂາບທູລວ່າ ທ່ານອົງຄ໌ນີ້ອາພາສເປັນໂຣຄນັຍນ໌ຕາ ພວກຂ້າພຣະພຸທສເຈົ້າຄອຍຈູງທ່ານອົງຄ໌ນີ້ໄປໃຫ້ຖ່າຍອຸຈຈາຣະແດ່ ປັສສາວະແດ່ ຂ້ານ້ອຍ.

ລຳດັບນັ້ນ ພຣະຜູ້ມີພຣະພາຄທຣົງເຮັດສັມມີກຖາ ໃນເພາະເຫຕຸເປັນເຄົ້າມູລນັ້ນ ໃນເພາະເຫຕຸແຮກເກີດນັ້ນ ແລ້ວຮັບສັ່ງກະພິກຂຸທັ້ງຫລາຍວ່າ ດູຣາພິກຂຸທັ້ງຫລາຍ ເຮົາອນຸຌາຕຢາຕາ ຄື ຢາຕາທີ່ປຸງດ້ວຍເຄື່ອງປຸງຫລາຍຢ່າງ ຢາຕາທີ່ເຮັດດ້ວຍເຄື່ອງປຸງຕ່າງໆ ຢາຕາທີ່ເກີດໃນກະແສນ້ຳເປັນຕົ້ນທໍຣດາລກີບທອງ ຂີ້ຖ່ານໄຟ

ພວກພິກຂຸອາພາສມີຄວາມຕ້ອງການດ້ວຍເຄື່ອງຢາທີ່ຈະບົດຜສົມກັບຢາຕາ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ. ພຣະຜູ້ມີພຣະພາຄຕຣັສອນຸຌາຕແກ່ພິກຂຸທັ້ງຫລາຍວ່າ ດູຣາພິກຂຸທັ້ງຫລາຍ ເຮົາອນຸຌາຕໄມ້ຈັນທຣ໌ ກຣືຜຕາ ກະລັມພັກ ໃບຊຽງ ແຫ້ວຫມູ

ສມັຍຕໍ່ມາ ພິກຂຸທັ້ງຫລາຍເກັບຢາຕາຊນິດຜົງໄວ້ໃນໂອແດ່ ໃນຂັນແດ່ ຜົງຫຍ້າແດ່ ຝຸ່ນແດ່ປິວລົງ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ. ພຣະຜູ້ມີພຣະພາຄຕຣັສອນຸຌາຕແກ່ພິກຂຸທັ້ງຫລາຍວ່າ ດູຣາພິກຂຸທັ້ງຫລາຍ ເຮົາອນຸຌາຕກ່ອງຕາ

ສມັຍຕໍ່ມາ ພຣະຉັພພັຄຄີຍ໌ໃຊ້ກ່ອງຕາຊນິດຕ່າງໆ ຄື ຊນິດທີ່ເຮັດດ້ວຍທອງຄຳແດ່ ຊນິດທີ່ເຮັດດ້ວຍເງິນແດ່ ຄົນທັ້ງຫລາຍຈຶ່ງເພ່ງໂທຫ ຕິຕຽນ ໂພນທະນາວ່າ ເຫມືອນເຫລົ່າຄຣືຫັສຖ໌ຜູ້ບໍຣິໂພຄກາມ. ພິກຂຸທັ້ງຫລາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ. ພຣະຜູ້ມີພຣະພາຄຕຣັສຫ້າມແກ່ພິກຂຸທັ້ງຫລາຍວ່າ ດູຣາພິກຂຸທັ້ງຫລາຍ ພິກຂຸບໍ່ຄວຣໃຊ້ກ່ອງຕາຊນິດຕ່າງໆ ອົງຄ໌ໃດໃຊ້ ຕ້ອງອາບັຕິທຸກກົຏ.

ດູຣາພິກຂຸທັ້ງຫລາຍ ເຮົາອນຸຌາຕກ່ອງຕາທີ່ເຮັດດ້ວຍກະດູກ ເຮັດດ້ວຍງາ ເຮັດດ້ວຍເຂົາ ເຮັດດ້ວຍໄມ້ອໍ້ ເຮັດດ້ວຍໄມ້ໄຜ່ ເຮັດດ້ວຍຢາງ ເຮັດດ້ວຍຜົລໄມ້ ເຮັດດ້ວຍໂລຫະ ເຮັດດ້ວຍເປືອກສັງຂ໌

ສມັຍຕໍ່ມາ ກ່ອງຕາບໍ່ມີຝາປິດ ຜົງຫຍ້າແດ່ ຝຸ່ນແດ່ ປິວຕົກລົງ ພິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ. ພຣະຜູ້ມີພຣະພາຄຕຣັສອນຸຌາຕແກ່ພິກຂຸທັ້ງຫລາຍວ່າ ດູຣາພິກຂຸທັ້ງຫລາຍ ເຮົາອນຸຌາຕຝາປິດ.

ຝາປິດຍັງຕົກໄດ້ ພຣະຜູ້ມີພຣະກາຄຕຣັສອນຸຍາຕແກ່ກິກຂຸທັ້ງຫລາຍວ່າ ດູຮາກິກຂຸທັ້ງຫລາຍ ເຮົາອນຸຍາຕໃຫ້ຜູກດ້າຍ ແລ້ວພັນກັບກ່ອງຕາ.

ກ່ອງຕາແຕກ ພຣະຜູ້ມີພຣະກາຄຕຣັສອນຸຍາຕແກ່ກິກຂຸທັ້ງຫລາຍວ່າ ດູຮາກິກຂຸທັ້ງຫລາຍ ເຮົາອນຸຍາຕໃຫ້ຖັກດ້ວຍດ້າຍ.

ສມັຍຕໍ່ມາ ກິກຂຸທັ້ງຫລາຍ ທາຢາຕາດ້ວຍນິ້ວມື ນັຍນ໌ຕາຊ້ຳ ຈຶ່ງຂາບທູລເຣື່ອງນັ້ນແດ່ ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄ ຕຣັສອນຸຍາຕແກ່ກິກຂຸທັ້ງຫລາຍວ່າ ດູຮາກິກຂຸທັ້ງຫລາຍ ເຮົາອນຸຍາຕ ໄມ້ທາຢາຕາ.

ສມັຍຕໍ່ມາ ພຣະລັພພັຄຄີຍ໌ໃຊ້ໄມ້ທາຕາຊນິດຕ່າງໆ ຄື ທີ່ເຮັດດ້ວຍທອງຄຳແດ່ ທີ່ເຮັດດ້ວຍ ເງິນແດ່ ຄົນທັ້ງຫລາຍຈຶ່ງເພ່ງໂທສ ຕິຕຽນ ໂພນທະນາວ່າ ເຫມືອນເຫລົ່າຄຣືຫັສຖ໌ຜູ້ບໍຣິໂກຄກາມ. ກິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສຫ້າມກິກຂຸທັ້ງຫລາຍວ່າ ດູຮາກິກຂຸທັ້ງຫລາຍ ກິກຂຸບໍ່ຄວຣໃຊ້ໄມ້ທາຢາຕາຊນິດຕ່າງໆ ອົງຄ໌ໃດໃຊ້ ຕ້ອງອາບັຕິທຸກກົຎ.

ດູຮາກິກຂຸທັ້ງຫລາຍ ເຮົາອນຸຍາຕໄມ້ທາຢາຕາທີ່ເຮັດດ້ວຍກະດູກ ເຮັດດ້ວຍງາ ເຮັດດ້ວຍເຂົາ ເຮັດດ້ວຍເປືອກສັງຂ໌

ສມັຍຕໍ່ມາ ໄມ້ທາຢາຕາຕົກລົງທີ່ພື້ນເປື້ອນ ກິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີ ພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕແກ່ກິກຂຸທັ້ງຫລາຍ ເຮົາອນຸຍາຕກາຊນະສຳຫຼັບເກັບໄມ້ທາ ຢາຕາ.

ສມັຍຕໍ່ມາ ກິກຂຸທັ້ງຫລາຍບໍຣິຫາຣກ່ອງຕາແດ່ ໄມ້ທາຢາຕາແດ່ ດ້ວຍມື ຈຶ່ງຂາບທູລ ເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕແກ່ກິກຂຸທັ້ງຫລາຍວ່າ ດູຮາກິກຂຸທັ້ງຫລາຍ ເຮົາອນຸຍາຕຖົງກ່ອງຕາ.

ຫູຖົງສຳຫຼັບສະພາຍບໍ່ມີ ກິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີ ພຣະກາຄຕຣັສອນຸຍາຕແກ່ກິກຂຸທັ້ງຫລາຍວ່າ ດູຮາກິກຂຸທັ້ງຫລາຍ ເຮົາອນຸຍາຕເຊືອກຜູກເປັນສາຍສະພາຍ.

ພຣະພຸທສານຸຍາຕນ້ຳມັນເປັນຕົ້ນ

[໓໗] ກໍໂດຍສມັຍນັ້ນແລ ທ່ານພຣະປິລິນທວັຈຈະປວດສີຣສະ ກິກຂຸທັ້ງຫລາຍຈຶ່ງຂາບທູລ ເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕແກ່ກິກຂຸທັ້ງຫລາຍວ່າ ດູຮາກິກຂຸທັ້ງຫລາຍ ເຮົາອນຸຍາຕນ້ຳມັນທາສີຣສະ ໂຣຄປວດສີຣສະຍັງບໍ່ຫາຍ ກິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີ ພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕແກ່ກິກຂຸທັ້ງຫລາຍວ່າ ດູຮາກິກຂຸທັ້ງຫລາຍ ເຮົາອນຸຍາຕການັຕຖ໌

ນ້ຳມັນທີ່ບັຕຖ໌ໄຫລອອກ ພິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ. ພຣະຜູ້ມີພຣະພາຄຕຣັສອນຸຍາຕແກ່ພິກຂຸທັ້ງຫລາຍວ່າ ດູຣາພິກຂຸທັ້ງຫລາຍ ເຮົາອນຸຍາຕບ້ອງສຳຫຼັບບັຕຖ໌.

ສມັຍຕໍ່ມາ ພຣະຊັພພັຄຄີຍ໌ໃຊ້ບ້ອງສຳຫຼັບບັຕຖ໌ຊນິດຕ່າງໆ ຄື ເຮັດດ້ວຍທອງຄຳແດ່ ຊນິດທີ່ເຮັດດ້ວຍເງິນແດ່ ຄົນທັ້ງຫລາຍຈຶ່ງເພ່ງໂທษ ຕິຕຽນ ໂພນທະນາວ່າ ເຫມືອນເຫລົ່າຄຣຶຫັສຖ໌ຜູ້ບໍຣິໂພຄກາມ. ພິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ. ພຣະຜູ້ມີພຣະພາຄຕຣັສຫ້າມພິກຂຸທັ້ງຫລາຍວ່າ ດູຣາພິກຂຸທັ້ງຫລາຍ ພິກຂຸບໍ່ຄວຣໃຊ້ບ້ອງສຳຫຼັບບັຕຖ໌ຊນິດຕ່າງໆ ອົງຄ໌ໃດໃຊ້ ຕ້ອງອາບັຕິທຸກກົຎ.

ດູຣາພິກຂຸທັ້ງຫລາຍ ເຮົາອນຸຍາຕບ້ອງສຳຫຼັບບັຕຖ໌ທີ່ເຮັດດ້ວຍກະດູກ ... ເຮັດດ້ວຍເປືອກສັງຂ໌ ທ່ານພຣະປິລິນທວັຈຈະບັຕຖ໌ບໍ່ເທົ່າກັນ ພິກຂຸທັ້ງຫລາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ. ພຣະຜູ້ມີພຣະພາຄຕຣັສອນຸຍາຕແກ່ພິກຂຸທັ້ງຫລາຍວ່າ ດູຣາພິກຂຸທັ້ງຫລາຍ ເຮົາອນຸຍາຕບ້ອງສຳຫຼັບບັຕຖ໌ປະກອບດ້ວຍຫລອດຄູ່ ໂຣຄປວດສີຮະຍັງບໍ່ຫາຍ ພິກຂຸທັ້ງຫລາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ. ພຣະຜູ້ມີພຣະພາຄ ຕຣັສອນຸຍາຕແກ່ພິກຂຸທັ້ງຫລາຍວ່າ ດູຣາພິກຂຸທັ້ງຫລາຍ ເຮົາອນຸຍາຕໃຫ້ສູບຄວັນ ພິກຂຸທັ້ງຫລາຍຈູດຜ້າແລ້ວສູບຄວັນນັ້ນທັ່ນແທລະ ຄໍແສບຮ້ອນ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ. ພຣະຜູ້ມີພຣະພາຄຕຣັສອນຸຍາຕແກ່ພິກຂຸທັ້ງຫລາຍວ່າ ດູຣາພິກຂຸທັ້ງຫລາຍ ເຮົາອນຸຍາຕບ້ອງສູບຄວັນ

ສມັຍຕໍ່ມາ ຊັພພັຄຄີຍ໌ໃຊ້ບ້ອງສູບຄວັນຊນິດຕ່າງໆ ຄື ຊນິດທີ່ເຮັດດ້ວຍທອງຄຳແດ່ ຊນິດທີ່ເຮັດດ້ວຍເງິນແດ່ ຄົນທັ້ງຫລາຍຈຶ່ງເພ່ງໂທษ ຕິຕຽນ ໂພນທະນາວ່າ ເຫມືອນເຫລົ່າຄຣຶຫັສຖ໌ຜູ້ບໍຣິໂພຄກາມ. ພິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ. ພຣະຜູ້ມີພຣະພາຄຕຣັສຫ້າມພິກຂຸທັ້ງຫລາຍວ່າ ດູຣາພິກຂຸທັ້ງຫລາຍ ພິກຂຸບໍ່ຄວຣໃຊ້ບ້ອງສູບຄວັນຊນິດຕ່າງໆ ອົງຄ໌ໃດໃຊ້ ຕ້ອງອາບັຕິທຸກກົຎ.

ດູຣາພິກຂຸທັ້ງຫລາຍ ເຮົາອນຸຍາຕບ້ອງສູບຄວັນທີ່ເຮັດດ້ວຍກະດູກ ... ເຮັດດ້ວຍເປືອກສັງຂ໌

ສມັຍຕໍ່ມາ ບ້ອງສູບຄວັນບໍ່ມີຝາປິດ ໂຕສັຕວ໌ເຂົ້າໄປໄດ້ ພິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ. ພຣະຜູ້ມີພຣະພາຄ ຕຣັສອນຸຍາຕແກ່ພິກຂຸທັ້ງຫລາຍວ່າ ດູຣາພິກຂຸທັ້ງຫລາຍ ເຮົາອນຸຍາຕຝາປິດ

ສມັຍຕໍ່ມາ ພິກຂຸທັ້ງຫລາຍບໍຣິຫາຣບ້ອງສູບຄວັນດ້ວຍມື ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ. ພຣະຜູ້ມີພຣະພາຄຕຣັສອນຸຍາຕແກ່ພິກຂຸທັ້ງຫລາຍວ່າ ດູຣາພິກຂຸທັ້ງຫລາຍ ເຮົາອນຸຍາຕຖົງບ້ອງສູບຄວັນ ບ້ອງສູບຄວັນເຫລົ່ານັ້ນຢູ່ຮ່ວມກັນຍ່ອມກະທົບກັນໄດ້ ພິກຂຸທັ້ງຫລາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ. ພຣະຜູ້ມີພຣະພາຄຕຣັສອນຸຍາຕແກ່ພິກຂຸທັ້ງຫລາຍວ່າ ດູຣາພິກຂຸທັ້ງຫລາຍ ເຮົາອນຸຍາຕ

ຖົງຄູ່ ທູສໍາຫຼັບສະພາຍບໍ່ມີ ກິກຂຸທັ້ງຫລາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄ ຕຣັສອນຸຌາຕແກ່ກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ເຣົາອນຸຌາຕເຊືອກຜູກເປັນສາຍສະພາຍ.

ພຣະປິລິນທວັຈຈ ເຖຣະອາພາធ ເປັນໂຣຄລົມ

[໑໙] ກໍໂດຍສມັຍນັ້ນແລ ທ່ານພຣະປິລິນທວັຈຈະອາພາធ ເປັນໂຣຄລົມ ພວກແພທຍ໌ປຶກษາ ຕົກລົງກັນຢ່າງນີ້ວ່າ ຕ້ອງຫຸງນ້ໍາມັນຖວາຍ ກິກຂຸທັ້ງຫລາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄ ຕຣັສອນຸຌາຕແກ່ກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ເຣົາອນຸຌາຕນ້ໍາມັນທີ່ຫຸງ ໃນນ້ໍາມັນທີ່ຫຸງນັ້ນແລ ແພທຍ໌ຕ້ອງເຈືອນ້ໍາເມົາດ້ວຍ ກິກຂຸທັ້ງຫລາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຌາຕແກ່ກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ເຣົາອນຸຌາຕໃຫ້ເຈືອນ້ໍາເມົາລົງ ໃນນ້ໍາມັນທີ່ຫຸງ.

ສມັຍຕໍ່ມາ ພຣະຈັພພັគຄີຍ໌ຫຸງນ້ໍາມັນເຈືອນ້ໍາເມົາລົງໄປເກີນຂນາດ ດື່ມນ້ໍາມັນນັ້ນແລ້ວເມົາ ກິກຂຸທັ້ງຫລາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສຫ້າມກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ກິກຂຸບໍ່ຄວຣດື່ມນ້ໍາມັນທີ່ເຈືອນ້ໍາເມົາລົງໄປເກີນຂນາດ ອົງຄ໌ໃດດື່ມ ຄວຣປັບອາບັຕິຕາມສັມມ໌

ດູຣາກິກຂຸທັ້ງຫລາຍ ເຣົາອນຸຌາຕໃຫ້ດື່ມນ້ໍາມັນເຈືອນ້ໍາເມົາ ຊນິດທີ່ເຂົາຫຸງບໍ່ປຣາກົຕສີ ກິ່ນ ແລະຣົສຂອງນ້ໍາເມົາ.

ສມັຍຕໍ່ມາ ນ້ໍາມັນທີ່ພວກກິກຂຸຫຸງເຈືອນ້ໍາເມົາລົງໄປເກີນຂນາດມີຫຼາຍ ຄັ້ງນັ້ນ ກິກຂຸທັ້ງຫລາຍ ໄດ້ມີຄວາມປຣິວິຕົກວ່າ ຈະຕ້ອງປຕິບັຕິໃນນ້ໍາມັນທີ່ເຈືອນ້ໍາເມົາລົງໄປເກີນຂນາດ ຢ່າງໃດນໍ? ແລ້ວຂາບ ທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຌາຕແກ່ກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ເຣົາອນຸຌາຕໃຫ້ຕັ້ງເອົາໄວ້ເປັນຢາທາ

ສມັຍຕໍ່ມາ ທ່ານພຣະປິລິນທວັຈຈະຫຸງນ້ໍາມັນໄວ້ຫຼາຍ ກາຊນະສໍາຫຼັບບັຣຈຸນ້ໍາມັນບໍ່ມີ ກິກຂຸ ທັ້ງຫລາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຌາຕແກ່ກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ເຣົາອນຸຌາຕລັກຈັ່ນ ໓ ຊນິດ ຄື ລັກຈັ່ນເຮັດດ້ວຍໂລຫະ ໑ ລັກຈັ່ນເຮັດດ້ວຍໄມ້ ໑ ລັກຈັ່ນດ້ວຍຜົລໄມ້ ໑.

ສມັຍຕໍ່ມາ ທ່ານພຣະປິລິນທວັຈຈະອາພາធ ເປັນໂຣຄລົມຕາມອວັຍວະ ກິກຂຸທັ້ງຫລາຍຈຶ່ງຂາບທູລ ເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຌາຕແກ່ກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ເຣົາອນຸຌາຕການເຂົ້າ**ກະໂຈມ**[7] ໂຣຄລົມຍັງບໍ່ຫາຍ ກິກຂຸທັ້ງຫລາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຌາຕແກ່ກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ເຣົາອນຸຌາຕການຣົມໃບໄມ້ຕ່າງໆ

---

[7] **ກະໂຈມ** ມຸ້ງ ມີຈອມຄືແຫ

ໂຣຄລົມຍັງບໍ່ຫາຍ ພຣະຜູ້ມີພຣະກາຄຕຣັສອນຸຍາຕກາຣອົບໃຫຍ່ ໂຣຄລົມຍັງບໍ່ຫາຍ ພຣະຜູ້ມີພຣະກາຄຕຣັສອນຸຍາຕແກ່ກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ເຮົາອນຸຍາຕນ້ຳທີ່ຕົ້ມເດືອດດ້ວຍໃບໄມ້ຕ່າງຊນິດ ໂຣຄລົມຍັງບໍ່ຫາຍ ພຣະຜູ້ມີພຣະກາຄຕຣັສອນຸຍາຕແກ່ກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ເຮົາອນຸຍາຕອ່າງນ້ຳ.

ອາພາສໂຣຄລົມສຽດຍອກຕາມຂໍ້

[໔໐] ກໍໂດຍສມັຍນັ້ນແລ ທ່ານພຣະປິລິນທວັຈຈະ ອາພາສເປັນໂຣຄລົມສຽດຍອກຕາມຂໍ້ ກິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕແກ່ກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ເຮົາອນຸຍາຕໃຫ້ຣະບາຍໂລຫິຕອອກ ໂຣຄລົມສຽດຍອກຕາມຂໍ້ຍັງບໍ່ຫາຍ ກິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕແກ່ກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ເຮົາອນຸຍາຕໃຫ້ຣະບາຍໂລຫິຕອອກແລ້ວກອກດ້ວຍເຂົາ.

ອາພາສຕີນແຕກ

[໔໑] ກໍໂດຍສມັຍນັ້ນແລ ຕີນຂອງທ່ານປິລິນທວັຈຈະແຕກ ກິກຂຸທັ້ງຫລາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕແກ່ກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ເຮົາອນຸຍາຕຢາທາຕີນ ໂຣຄຍັງບໍ່ຫາຍ ກິກຂຸນວກະທັ້ງຫລາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕແກ່ກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ເຮົາອນຸຍາຕໃຫ້ປຸງນ້ຳມັນທາຕີນ.

ອາພາສເປັນໂຣຄຝີ

[໔໒] ກໍໂດຍສມັຍນັ້ນແລ ກິກຂຸອົງຄ໌ນຶ່ງອາພາສເປັນໂຣຄຝີ ກິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕແກ່ກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ເຮົາອນຸຍາຕກາຣຜ່າຕັດ ກິກຂຸນັ້ນຕ້ອງກາຣນ້ຳຝາດ ກິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕແກ່ກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ເຮົາອນຸຍາຕນ້ຳຝາດ ກິກຂຸນັ້ນຕ້ອງກາຣງາທີ່ບົດແລ້ວ ກິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕແກ່ກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ເຮົາອນຸຍາຕງາທີ່ບົດແລ້ວ ກິກຂຸນັ້ນຕ້ອງກາຣຢາພອກ ກິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ເຮົາອນຸຍາຕຢາພອກ ກິກຂຸນັ້ນຕ້ອງກາຣຜ້າພັນແຜລ ກິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕແກ່ກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ເຮົາອນຸຍາຕຜ້າພັນແຜລ ແຜລຄັນ ກິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄ

ຕຣັສອນຸຍາຕແກ່ພິກຂຸທັ້ງຫລາຍວ່າ ດູຣາພິກຂຸທັ້ງຫລາຍ ເຮົາອນຸຍາຕໃຫ້ຊະດ້ວຍນ້ຳແປ້ງເມັດພັຕຜັກກາດ ແຜລຊື້ນຫຼືເປັນຝ້າ ພິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ. ພຣະຜູ້ມີພຣະພາຄຕຣັສອນຸຍາຕແກ່ພິກຂຸທັ້ງຫລາຍວ່າ ດູຣາພິກຂຸທັ້ງຫລາຍ ເຮົາອນຸຍາຕໃຫ້ຮົມຄວັນ ເນື້ອງອກຍື່ນອອກມາ ພິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ. ພຣະຜູ້ມີພຣະພາຄຕຣັສອນຸຍາຕແກ່ພິກຂຸທັ້ງຫລາຍວ່າ ດູຣາພິກຂຸ-ທັ້ງຫລາຍ ເຮົາອນຸຍາຕໃຫ້ຕັດດ້ວຍກ້ອນເກືອ ແຜລບໍ່ງອກ ພິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ. ພຣະຜູ້ມີພຣະພາຄຕຣັສອນຸຍາຕແກ່ພິກຂຸທັ້ງຫລາຍວ່າ ດູຣາພິກຂຸທັ້ງຫລາຍ ເຮົາອນຸຍາຕນ້ຳມັນທາແຜລ ນ້ຳມັນໄຫລເຍີ້ມ ພິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ. ພຣະຜູ້ມີພຣະພາຄຕຣັສອນຸຍາຕແກ່ພິກຂຸທັ້ງຫລາຍວ່າ ດູຣາພິກຂຸທັ້ງຫລາຍ ເຮົາອນຸຍາຕຜ້າເກົ່າສຳຫຼັບຊັບນ້ຳມັນແລະການຮັກษາບາດແຜລທຸກຊນິດ.

ພຣະພຸທธານຸญາຕຢາມຫາວິກັຕ ໔ ຢ່າງ

[໔໓] ກໍໂດຍສມັຍນັ້ນແລ ພິກຂຸອົງຄ໌ນຶ່ງຖືກງູກັດ ພິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄຕຣັສອນຸຍາຕວ່າ ດູຣາພິກຂຸທັ້ງຫລາຍ ເຮົາອນຸຍາຕໃຫ້ໃຊ້ຢາມຫາວິກັຕ ໔ ຢ່າງ ຄື ຄູຖ ມູຕຣ໌ ເຖົ້າ ດິນ ຕໍ່ມາ ພິກຂຸທັ້ງຫລາຍຄິດສົງສັຍວ່າ ຢາມຫາວິກັຕບໍ່ຕ້ອງຮັບປະເຄນຫຼືຕ້ອງຮັບປະເຄນ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ. ພຣະຜູ້ມີພຣະພາຄຕຣັສອນຸຍາຕແກ່ພິກຂຸທັ້ງຫລາຍວ່າ ດູຣາພິກຂຸທັ້ງຫລາຍ ເຮົາອນຸຍາຕໃຫ້ພິກຂຸຮັບປະເຄນ ໃນເມື່ອມີກັປປິຍກາຣົກ ເມື່ອກັປປິຍກາຣົກບໍ່ມີ ໃຫ້ພິກຂຸຫຍິບບໍຣິໂភຄເອງໄດ້.

ສມັຍຕໍ່ມາ ພິກຂຸອົງຄ໌ນຶ່ງດື່ມຢາພິษເຂົ້າໄປ ພິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄຕຣັສອນຸຍາຕແດ່ພິກຂຸທັ້ງຫລາຍວ່າ ດູຣາພິກຂຸທັ້ງຫລາຍ ເຮົາອນຸຍາຕໃຫ້ດື່ມນ້ຳເຈືອຄູຖ ຕໍ່ມາ ພິກຂຸທັ້ງຫລາຍຄິດສົງສັຍວ່າ ນ້ຳເຈືອຄູຖນັ້ນ ຈະບໍ່ຕ້ອງຮັບປະເຄນ ຫຼືຕ້ອງຮັບປະເຄນ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ. ພຣະຜູ້ມີພຣະພາຄຕຣັສອນຸຍາຕແກ່ພິກຂຸທັ້ງຫລາຍວ່າ ດູຣາພິກຂຸທັ້ງຫລາຍ ເຮົາອນຸຍາຕຄູຖທີ່ພິກຂຸຫຍິບໄວ້ຕອນກຳລັງຖ່າຍ ທັ່ນແຫລະເປັນອັນປະເຄນແລ້ວ ບໍ່ຕ້ອງຮັບປະເຄນອີກ.

ພິກຂຸອາພາສດ້ວຍໂຣຄຕ່າງໆ

[໔໔] ກໍໂດຍສມັຍນັ້ນແລ ພິກຂຸອົງຄ໌ນຶ່ງອາພາສຖືກຢາແຝດ ພິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ. ພຣະຜູ້ມີພຣະພາຄຕຣັສອນຸຍາຕແກ່ພິກຂຸທັ້ງຫລາຍວ່າ ດູຣາພິກຂຸທັ້ງຫລາຍ ເຮົາອນຸຍາຕໃຫ້ດື່ມນ້ຳທີ່ເຂົາລະລາຍຈາກດິນຮອຍໄຖຊຶ່ງຕິດຜາລ.

ສມັຍຕໍ່ມາ ກິກຂຸອົງຄ໌ນຶ່ງອາພາຊເປັນຂີ້ແກ່ນ ກິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕແກ່ກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ເຮົາອນຸຍາຕໃຫ້ດື່ມນ້ຳດ່າງອາມິສ.

ສມັຍຕໍ່ມາ ກິກຂຸອົງຄ໌ນຶ່ງອາພາຊເປັນໂຣຄຜອມເຫລືອງ ກິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕແກ່ກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ເຮົາອນຸຍາຕໃຫ້ດື່ມຢາໝາກສມໍດອງນ້ຳມູຕຣ໌ງົວ.

ສມັຍຕໍ່ມາ ກິກຂຸອົງຄ໌ນຶ່ງອາພາຊເປັນໂຣຄຜິວຫນັງ ກິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕແກ່ກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ເຮົາອນຸຍາຕໃຫ້ເຮັດການຖູທາດ້ວຍຂອງຫອມ.

ສມັຍຕໍ່ມາ ກິກຂຸອົງຄ໌ນຶ່ງມີກາຍປະກອບດ້ວຍໂທສຫຼາຍ ກິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕແກ່ກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ເຮົາອນຸຍາຕໃຫ້ດື່ມຢາປະຈຸຖ່າຍ ກິກຂຸນັ້ນມີຄວາມຕ້ອງການນ້ຳເຂົ້າໃສ ກິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕແກ່ກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ເຮົາອນຸຍາຕນ້ຳເຂົ້າໃສ ມີຄວາມຕ້ອງການດ້ວຍນ້ຳຖົ່ວຂຽວຕົ້ມທີ່ບໍ່ຂົ້ນ ກິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕແກ່ກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ເຮົາອນຸຍາຕນ້ຳຖົ່ວຂຽວຕົ້ມທີ່ບໍ່ຂົ້ນ ມີຄວາມຕ້ອງການດ້ວຍນ້ຳຖົ່ວຂຽວຕົ້ມທີ່ຂົ້ນໜ່ອຍດຽວ ກິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕແກ່ກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ເຮົາອນຸຍາຕນ້ຳຖົ່ວຂຽວຕົ້ມທີ່ຂົ້ນໜ່ອຍດຽວ ມີຄວາມຕ້ອງການດ້ວຍນ້ຳຕົ້ມຊີ້ນ ກິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕແກ່ກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ເຮົາອນຸຍາຕນ້ຳຕົ້ມຊີ້ນ.

ພຣະປິລິນທວັຈຈເຖຣະຊ່ອມແປງເງື້ອມເຂົາ

[໔໕] ກໍໂດຍສມັຍນັ້ນແລ ທ່ານພຣະປິລິນທວັຈຈະ ກຳລັງໃຫ້ຄົນຊຳຣະເງື້ອມເຂົາ ໃນເຂຕພຣະນຄຣຣາຊຄຣິຫ໌ ປະສົງຄ໌ຈະເຮັດໃຫ້ເປັນສຖານທີ່ເຮັ້ນ ຂຓະນັ້ນພຣະເຈົ້າພິມພິສາຣຈອມເສນາມາຄົຣາຊສເດັຈພຣະດຳເນີນໄປຫາທ່ານພຣະປິລິນທວັຈຈະເຖິງສຳນັກ ທຣົງອກິວາທແລ້ວປະທັບເຫນືອພຣະຣາຊອາສນ໌ອັນຄວຣສ່ວນຂ້າງນຶ່ງ ໄດ້ຕຣັສຖາມທ່ານພຣະປິລິນທວັຈຈະວ່າ ຂ້າແຕ່ພຣະຄຸຓເຈົ້າ ພຣະເຖຣະກຳລັງໃຫ້ເຂົາເຮັດຫຍັງຢູ່?

ທ່ານພຣະປິລິນທວັຈຈະຖວາຍພຣະພອຣວ່າ ອາຕມກາພກຳລັງໃຫ້ເຂົາຊຳຣະເງື້ອມເຂົາ ປະສົງຄ໌ໃຫ້ເປັນສຖານທີ່ເຣັ້ນ ຂໍຖວາຍພຣະພອຣ

ພິ. ພຣະຄຸຕເຈົ້າຕ້ອງການຄົນທຳການວັດແດ່ບໍ່?

ປິ. ຂໍຖວາຍພຣະພອຣ ພຣະຜູ້ມີພຣະກາຄຍັງບໍ່ທຣົງອນຸຍາຕຄົນທຳການວັດ

ພິ. ຖ້າເຊັ່ນນັ້ນ ໂປຼດທູລຖາມພຣະຜູ້ມີພຣະກາຄ ແລ້ວບອກໃຫ້ຂ້າພເຈົ້າຮູ້

ທ່ານພຣະປິລິນທວັຈຈະຮັບພຣະຣາຊໂອງການວ່າ ຈະປຕິບັຕິຢ່າງນັ້ນ ຂໍຖວາຍພຣະພອຣ ແລ້ວຊີ້ແຈງໃຫ້ພຣະເຈົ້າພິມພິສາຣຈອມເສນາມາຄົຣຣາຊໃຫ້ເຫັນແຈ້ງ ສມາທານ ອາຈຫາຍ ຣ່າເຣີງ ດ້ວຍສັມມີກຖາ ເມື່ອພຣະເຈົ້າພິມພິສາຣຈອມເສນາມາຄົຣຣາຊ ອັນທ່ານພຣະປິລິນທວັຈຈະຊີ້ແຈງໃຫ້ເຫັນແຈ້ງ ໃຫ້ທຣົງສມາທານ ອາຈຫາຍ ຣ່າເຣີງ ດ້ວຍສັມມີກຖາ ແລ້ວສເດັຈລຸກຈາກພຣະຣາຊອາສນ໌ ທຣົງອກິວາທທ່ານພຣະປິລິນທວັຈຈະ ທຣົງເຮັດປະທັກຂິຕ ແລ້ວສເດັຈກັບ

ຫລັງຈາກນັ້ນ ທ່ານພຣະປິລິນທວັຈຈະ ສົ່ງສມຕທູຕໄປໃນສຳນັກພຣະຜູ້ມີພຣະກາຄຂາບທູລວ່າ ຂ້ານ້ອຍ ພຣະເຈົ້າພິມພິສາຣຈອມເສນາມາຄົຣຣາຊ ມີພຣະຣາຊປະສົງຄ໌ຈະຖວາຍຄົນທຳການວັດ ຂ້າພຣະພຸທຸສເຈົ້າຈະຕ້ອງປຕິບັຕິຢ່າງໃດ ຂ້ານ້ອຍ?

ພຣະພຸທສານຸຍາຕອາຣາມິກ

ລຳດັບນັ້ນ ພຣະຜູ້ມີພຣະກາຄທຣົງເຮັດສັມມ໌ມີກຖາ ໃນເພາະເຫຕຸເປັນເຄົ້າມູລນັ້ນ ໃນເພາະເຫຕຸແຣກເກີດນັ້ນ ແລ້ວຮັບສັ່ງກະກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ເຮົາອນຸຍາຕໃຫ້ມີຄົນທຳການວັດ

ພຣະເຈົ້າພິມພິສາຣຈອມເສນາມາຄົຣຣາຊ ສເດັຈພຣະຣາຊດຳເນີນໄປຫາທ່ານພຣະປິລິນທວັຈຈະ ເຖິງສຳນັກເປັນເທື່ອທີ່ສອງ ທຣົງອກິວາທແລ້ວປະທັບເຫນືອພຣະຣາຊອາສນ໌ອັນຄວຣສ່ວນຂ້າງນຶ່ງ ແລ້ວຕຣັສຖາມພຣະປິລິນທວັຈຈະວ່າ ຂ້າແຕ່ພຣະຄຸຕເຈົ້າ ຄົນທຳການວັດ ພຣະຜູ້ມີພຣະກາຄທຣົງອນຸຍາຕບໍ່?

ທ່ານພຣະປິລິນທວັຈຈະຖວາຍພຣະພອຣວ່າ ຂໍຖວາຍພຣະພອຣ ທຣົງອນຸຍາຕແລ້ວ

ພຣະເຈົ້າພິມພິສາຣຕຣັສວ່າ ຖ້າເຊັ່ນນັ້ນ ຂ້າພເຈົ້າຈະຖວາຍຄົນທຳການວັດແກ່ພຣະຄຸຕເຈົ້າ

ຄັ້ງນັ້ນ ພຣະເຈົ້າພິມພິສາຣຈອມເສນາມາຄົຣຣາຊ ທຣົງຮັບປຕິຍາຕຖວາຍຄົນທຳການວັດແກ່ທ່ານພຣະປິລິນທວັຈຈະດັ່ງນັ້ນແລ້ວ ທຣົງລືມເສັຽ ດົນມາທຣົງຣະລຶກໄດ້ ຈຶ່ງຕຣັສຖາມມຫາອຳມາຕຍ໌ຜູ້ສຳເຣັຈຣາຊກິຈທັ້ງປວງຜູ້ນຶ່ງວ່າ ພນາຍ ຄົນທຳການວັດທີ່ເຮົາໄດ້ຮັບປຕິຍາຕຈະຖວາຍແກ່ພຣະຄຸຕເຈົ້ານັ້ນ ເຮົາໄດ້ຖວາຍໄປແລ້ວບໍ່?

ມຫາອຳມາຕຍ໌ຂາບທູລວ່າ ຂໍເດຊະ ຍັງບໍ່ໄດ້ພຣະຣາຊທານ ຂ້ານ້ອຍ.

ພຣະຣາຊາຕຣັສຖາມວ່າ ຈາກວັນນັ້ນມາຈັກຣ໌າຕຣີແລ້ວ?

ທ່ານມຫາອຳມາຕຍ໌ນັບຣາຕຣີແລ້ວ ຂາບທູລໃນທັນໃດນັ້ນແລວ່າ ຂໍເດຊະ ໕໐໐ ຣາຕຣີ ຂ້ານ້ອຍ.

ພຣະຣາຊາຮັບສັ່ງວ່າ ພນາຍ ຖ້າເຊັ່ນນັ້ນ ຈົງຖວາຍທ່ານໄປ ໕໐໐ ຄົນ ທ່ານມຫາອ□າມາຕຍ໌ຮັບພຣະບໍຣົມຣາຊໂອງການວ່າເປັນດັງໂປຼດເກຼົ້າ ຂໍເດຊະ ແລ້ວໄດ້ຈັດຄົນທຳການວັດໄປຖວາຍທ່ານພຣະປີລິນທວັຈຈະ ໕໐໐ ຄົນ ຫມູ່ບ້ານຂອງຄົນທ□າການວັດພວກນັ້ນໄດ້ຕັ້ງຢູ່ຜແນກນຶ່ງ ຄົນທັ້ງຫລາຍເອີ້ນບ້ານຕຳບົລນັ້ນວ່າ ຕຳບົລບ້ານອາຣາມິກແດ່ ຕຳບົລບ້ານປີລິນທວັຈຈະແດ່.

ນິຣມິຕມາລັຍທອງຄຳ

[໔໗] ກໍໂດຍສມັຍນັ້ນແລ ທ່ານພຣະປີລິນທວັຈຈະໄດ້ເປັນພຣະກຸລຸປກະ ໃນຫມູ່ບ້ານຕຳບົລນັ້ນ ເມື່ອເຊົ້າວັນນຶ່ງ ທ່ານຄອງອັນຕຣວາສົກແລ້ວ ຖືບາຕຣ໌ຈີວຣເຂົ້າໄປບິຓຫບາຕຍັງຕຳບົລບ້ານປີລິນທວັຈຈະສມັຍນັ້ນ ໃນຕຳບົລບ້ານນັ້ນມີມຫໍຣສົພ ພວກເດັກນ້ອຍໆ ຕົກແຕ່ງກາຍປະດັບດອກໄມ້ຫຼີ້ນມຫໍຣສົພຢູ່ ພໍດີທ່ານພຣະປີລິນທວັຈຈະທ່ຽວບິຓຫບາຕໄປຕາມລຳດັບຮ່ອມໃນຕຳບົລບ້ານປີລິນທວັຈຈະ ໄດ້ເຂົ້າໄປເຖິງເຮືອນຄົນທຳການວັດຜູ້ນຶ່ງ ເມື່ອແລ້ວນັ່ງເທິງອາສນະທີ່ເຂົາຈັດຖວາຍ

ຂຓະນັ້ນ ທິດາຂອງສຕຣີຜູ້ທຳການວັດນັ້ນ ເຫັນເດັກນ້ອຍໆ ພວກອື່ນຕົກແຕ່ງກາຍປະດັບດອກໄມ້ແລ້ວ ຮ້ອງອ້ອນວ່າ ຂໍຈົງໃຫ້ດອກໄມ້ແກ່ຂ້ານ້ອຍ ຂໍຈົງໃຫ້ເຄື່ອງຕົກແຕ່ງກາຍແກ່ຂ້ານ້ອຍ

ຈຶ່ງທ່ານພຣະປີລິນທວັຈຈະຖາມສຕຣີຜູ້ທຳການວັດຄົນນັ້ນວ່າ ເດັກຍິງຄົນນີ້ຮ້ອງອ້ອນຢາກໄດ້ຫຍັງ?

ນາງຂາບຣຽນວ່າ ທ່ານເຈົ້າຂ້າ ເດັກຍິງຄົນນີ້ເຫັນເດັກນ້ອຍໆ ພວກອື່ນຕົກແຕ່ງກາຍປະດັບດອກໄມ້ ຈຶ່ງຮ້ອງອ້ອນຂໍວ່າ ຂໍຈົງໃຫ້ດອກໄມ້ແກ່ຂ້ານ້ອຍ ຂໍຈົງໃຫ້ເຄື່ອງຕົກແຕ່ງກາຍແກ່ຂ້ານ້ອຍ ຂ້ານ້ອຍບອກວ່າ ເຮົາເປັນຄົນຈົນຈະໄດ້ດອກໄມ້ມາຈາກໃສ ຈະໄດ້ເຄື່ອງຕົກແຕ່ງມາຈາກໃສ

ຂຓະນັ້ນ ທ່ານພຣະປີລິນທວັຈຈະຫຍິບມັດຫຍ້າພວງນຶ່ງສົ່ງໃຫ້ແລ້ວກ່າວວ່າ ເຈົ້າຈົງສວມມັດຫຍ້າພວງນີ້ລົງເທິງສີຣษະເດັກຍິງນັ້ນ ທັນໃດນັ້ນນາງໄດ້ຮັບມັດຫຍ້າສວມລົງທີ່ສີຣษະເດັກຍິງນັ້ນ ມັດຫຍ້ານັ້ນໄດ້ກຼາຍເປັນຣະບຽບດອກໄມ້ທອງຄຳງາມຫຼາຍ ຫນ້າເບິ່ງ ໜ້າຊົມ ຣະບຽບດອກໄມ້ທອງຄຳເຊັ່ນນັ້ນແມ້ໃນພຣະຣາຊຖານກໍບໍ່ມີ

ຄົນທັ້ງຫລາຍຂາບທູລແດ່ພຣະເຈົ້າພິມພິສາຣຈອມເສນາມາຄົຘຣາຊວ່າ ຂໍເດຊະ ຣະບຽບດອກໄມ້ທອງຄຳທີ່ເຮືອນຂອງຄົນທຳການວັດຊື່ນັ້ນງາມຫຼາຍ ຫນ້າເບິ່ງ ໜ້າຊົມ ແມ້ໃນພຣະຣາຊຖານກໍບໍ່ມີ ເຂົາເປັນຄົນເຂັນໃຈຈະໄດ້ມາແຕ່ໃສ ເປັນຕ້ອງໄດ້ມາດ້ວຍໂຈຣກັມມ໌ແນ່ນອນ

ຈຶ່ງຫ້າວທ່ານສັ່ງໃຫ້ຈອງຈຳຕະກູລຄົນທຳການວັດນັ້ນແລ້ວ.

ເມື່ອເຊົ້າວັນທີ່ ໔ ທ່ານພຣະປີລິນທວັຈຈະຄອງອັນຕຣວາສົກແລ້ວຖືບາຕຣ໌ຈີວຣເຂົ້າໄປບິຕຫບາຕ ເຖິງຕຳບົລບ້ານປີລິນທວັຈຈະ ເມື່ອທ່ຽວບິຕຫບາຕໄປຕາມລຳດັບຮ່ອມໃນຕຳບົລບ້ານປີລິນທວັຈຈະໄດ້ຍ່າງ ຜ່ານໄປທາງເຮືອນຄົນທຳການວັດຜູ້ນັ້ນ ເມື່ອແລ້ວໄດ້ຖາມຄົນທີ່ຄຸ້ນເຄີຍກັນວ່າ ຕະກູລຄົນທຳການວັດນີ້ໄປ ໃສລະ?

ຄົນພວກນັ້ນຂາບຮຽນວ່າ ເຂົາຖືກຮັບສັ່ງໃຫ້ຈອງຈຳ ເພາະເຣື່ອງຣະບຽບດອກໄມ້ທອງຄຳ ເຈົ້າຂ້າ.

ທັນໃດນັ້ນ ທ່ານພຣະປີລິນທວັຈຈະໄດ້ເຂົ້າໄປສູ່ພຣະຣາຊນິເວສນ໌ ນັ່ງເຫນືອອາສນະທີ່ເຂົາຈັດຖວາຍ

ຂຕະນັ້ນ ພຣະເຈົ້າພິມພິສາຣຈອມເສນາມາຄົສຣາຊ ສເດັຈເຂົ້າໄປຫາທ່ານພຣະປີລິນທວັຈຈະ ທຮົງ ອກິວາທແລ້ວປະທັບເຫນືອພຣະຣາຊອາສນ໌ອັນຄວຣສ່ວນຂ້າງນຶ່ງ

ທ່ານພຣະປີລິນທວັຈຈະໄດ້ທູລຖາມພຣະເຈົ້າພິມພິສາຣຈອມເສນາມາຄົສຣາຊ ຜູ້ປະທັບຮຽບຮ້ອຍ ແລ້ວດັ່ງນີ້ວ່າ ຂໍຖວາຍພຣະພອຣ ຕະກູລຄົນທຳການວັດຖືກຮັບສັ່ງໃຫ້ຈອງຈຳດ້ວຍເຣື່ອງຫຍັງ?

ພຣະເຈົ້າພິມພິສາຣຕຣັສຕອບວ່າ ຂ້າແຕ່ພຣະຄຸຕເຈົ້າ ເພາະທີ່ເຮືອນຂອງເຂົາມີຣະບຽບດອກໄມ້ ທອງຄຳຢ່າງງາມຫຼາຍ ຫນ້າເບິ່ງ ໜ້າຊົມ ແມ້ທີ່ໃນວັງກໍຍັງບໍ່ມີ ເຂົາເປັນຄົນຈົນຈະໄດ້ມາແຕ່ໃສ ເປັນຕ້ອງ ໄດ້ມາດ້ວຍໂຈຣກັມມ໌ຢ່າງແນ່ນອນ

ຂຕະນັ້ນ ທ່ານພຣະປີລິນທວັຈຈະໄດ້ອະທິຍຖານປຣາສາທຂອງພຣະເຈົ້າພິມພິສາຣຈອມເສນາມາຄົສ ຣາຊວ່າ ຈົ່ງເປັນທອງ ປຣາສາທນັ້ນໄດ້ກາຍເປັນທອງໄປທັ້ງຫມົດ ແລ້ວໄດ້ຖວາຍພຣະພອຣຖາມວ່າ ຂໍຖວາຍ ພຣະພອຣ ກໍນີ້ທອງຫຼວງຫຼາຍເທົ່ານັ້ນມຫາບໍພິຕຣໄດ້ມາແຕ່ໃສ?

ພຣະເຈົ້າພິມພິສາຣຕຣັສວ່າ ຂ້າພເຈົ້າຮູ້ແລ້ວ ນີ້ເປັນອິທສານຸກາພຂອງພຣະຄຸຕເຈົ້າ ດັ່ງນີ້ ແລ້ວຮັບສັ່ງໃຫ້ປ່ອຍຕະກູລຄົນທຳການວັດນັ້ນພົ້ນພຣະຣາຊອາຌາໄປ.

ພຣະພຸທສານຸຌາຕເພສັຊ ໕

[໔ກ] ປະຊາຊົນຮູ້ຂ່າວວ່າ ທ່ານພຣະປີລິນທວັຈຈະສແດງອິທທິປາຕິຫາຣິຍ໌ ອັນເປັນສັມມ໌ ຍອດຍິ່ງຂອງມນຸສຍ໌ ໃນບໍຣິຍັທພ້ອມທັ້ງພຣະຣາຊາ ຕ່າງພາກັນຍິນດີ ເລື່ອມໃສຍິ່ງ ນຳເພສັຊ ໕ ຄື ເນີຍໃສ ເນີຍຂົ້ນ ນ້ຳມັນ ນ້ຳເຜິ້ງ ນ້ຳອ້ອຍ ມາຖວາຍທ່ານພຣະປີລິນທວັຈຈະ ແມ້ຕາມປົກຕິທ່ານກໍໄດ້ ເພສັຊ ໕ ຢູ່ສເມີ ທ່ານຈຶ່ງແບ່ງເພສັຊທີ່ໄດ້ມາຖວາຍແກ່ບໍຣິຍັທ ແຕ່ບໍຣິຍັທຂອງທ່ານເປັນຜູ້ມັກມາກ ເກັບເພສັຊທີ່ໄດ້ໆ ມາໄວ້ໃນກະຖາງແດ່ ໃນໝໍ້ນ້ຳແດ່ ຈົນເຕັມ ບັຮຈຸລົງໃນໝໍ້ກອງນ້ຳແດ່ ໃນ ຖົງຍ່າມແດ່ ຈົນເຕັມແລ້ວ ແຂວນໄວ້ທີ່ຫນ້າຕ່າງ ເພສັຊເຫລົ່ານັ້ນກໍເຍີ້ມຊຶມ ແມ້ສັຕວ໌ຈຳພວກຫນູກໍ

ເຕັມໄປທົ່ວວິຫາຣ ຄົນທັ້ງຫລາຍຍ່າງທ່ຽວຊົມໄປຕາມວິຫາຣພົ້ເຂົ້າ ຕ່າງກໍເພ່ງໂທษ ຕິຕຽນ ໂພນທະນາ ວ່າ ສມຕະເຊື້ອສາຍພຣະສາກຍບຸຕຣ໌ເຫລົ່ານີ້ມີເຮືອນຄັງໃນກາຍໃນ ເຫມືອນພຣະເຈົ້າພິມພິສາຣຈອມເສນາ ມາຄຂຣາຊ ຈັ່ງຊັ້ນ

ກິກຂຸທັ້ງຫລາຍໄດ້ຍິນຄົນພວກນັ້ນ ເພ່ງໂທษ ຕິຕຽນ ໂພນທະນາຢູ່ ບັຣດາທີ່ເປັນຜູ້ມັກຫນ້ອຍ .... ຕ່າງກໍເພ່ງໂທษ ຕິຕຽນ ໂພນທະນາວ່າ ເປັນຫຍັງກິກຂຸທັ້ງຫລາຍຈຶ່ງໄດ້ພໍໃຈໃນຄວາມມັກມາກເຊັ່ນນີ້ ແລ້ວ ຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ

ພຣະຜູ້ມີພຣະກາຄທຣົງສອບຖາມກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ຂ່າວວ່າກິກຂຸທັ້ງຫລາຍ ພໍໃຈໃນຄວາມມັກມາກເຊັ່ນນີ້ ແທ້ບໍ່?

ກິກຂຸທັ້ງຫລາຍທູລຮັບວ່າ ແທ້ ຂ້ານ້ອຍ.

ພຣະຜູ້ມີພຣະກາຄພຸທສເຈົ້າ ທຣົງຕິຕຽນວ່າ ... ເມື່ອແລ້ວທຣົງເຮັດສັມມີກະຖາ ຮັບສັ່ງກະກິກຂຸ ທັ້ງຫລາຍວ່າ ປະການນຶ່ງ ມີເກສັຊອັນຄວຣຊິ້ມຂອງກິກຂຸຜູ້ອາພາສ ຄື ເນີຍໃສ ເນີຍຂົ້ນ ນ້ຳມັນ ນ້ຳເຜິ້ງ ນ້ຳອ້ອຍກິກຂຸຮັບປະເຄນຂອງນັ້ນແລ້ວ ຄວຣເກັບໄວ້ຈັນໄດ້ ໗ ວັນເປັນຢ່າງຍິ່ງ ກິກຂຸໃຫ້ລ່ວງກຳຫນົດນັ້ນໄປ ຄວຣປັບອາບັຕິຕາມສັມມ໌.

ກາຫວາຣວ່າດ້ວຍທຣົງອນຸຍາຕເກສັຊ ທີ່ ໑ ຈົບ.

ພຣະພຸທສານຸຍາຕບົບນ້ຳອ້ອຍ

[໔໗] ຄັ້ງນັ້ນ ພຣະຜູ້ມີພຣະກາຄປະທັບຢູ່ໃນພຣະນຄຣສາວັຕຖີຕາມພຣະພຸທສາກິຣົມຍ໌ແລ້ວ ສເດັຈພຸທສດຳເນີນໄປທາງພຣະນຄຣຣາຊຄຣຶຫ໌ ທ່ານພຣະກັງຂາເຣວຕະໄດ້ແວະເຂົ້າໂຮງທຳບົບນ້ຳອ້ອຍ ໃນ ຣະຫວ່າງທາງ ເຫັນເຂົາຜສົມແປ້ງແດ່ ເຖົ້າແດ່ ລົງໃນບົບນ້ຳອ້ອຍ ຈຶ່ງບໍ່ພໍໃຈວ່າ ບົບນ້ຳອ້ອຍເຈືອອາມິສ ເປັນອກັປປິຍະ ບໍ່ຄວຣຈະຈັນໃນເວລາວິກາລ ດັ່ງນີ້ ຈຶ່ງພ້ອມດ້ວຍບໍຣິບັທບໍ່ຈັນບົບນ້ຳອ້ອຍ ແມ້ພວກ ກິກຂຸທີ່ເຊື່ອຟັງຄຳທ່ານກໍບໍ່ຈັນບົບນ້ຳອ້ອຍໄປນຳ ກິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ.

ພຣະຜູ້ມີພຣະກາຄທຣົງສອບຖາມກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ຄົນທັ້ງຫລາຍຜສົມແປ້ງ ແດ່ ເຖົ້າແດ່ ລົງໃນບົບນ້ຳອ້ອຍ ເພື່ອປະສົງຄ໌ຫຍັງ?

ກິກຂຸທັ້ງຫລາຍຂາບທູລວ່າ ເພື່ອປະສົງຄ໌ໃຫ້ເກາະກັນແນ່ນ ຂ້ານ້ອຍ.

ພຣະຜູ້ມີພຣະກາຄຕຣັສອນຸຓາຕແກ່ກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ຖ້າຄົນທັ້ງຫລາຍຜສົມແປ້ງແດ່ ເຖົ້າແດ່ ລົງໃນບີບນ້ຳອ້ອຍ ເພື່ອປະສົງຄ໌ໃຫ້ເກາະກັນແນ່ນ ບີບນ້ຳອ້ອຍນັ້ນກໍຍັງເຖິງຄວາມນັບວ່າ ບີບນ້ຳອ້ອຍຫັ່ນແຫລະ

ດູຣາກິກຂຸທັ້ງຫລາຍ ເຮົາອນຸຓາຕໃຫ້ສັນບີບນ້ຳອ້ອຍຕາມສບາຍ.

ພຣະພຸທສານຸຓາຕຖົ່ວຂຽວ

ທ່ານພຣະກັງຂາເຣວຕະ ໄດ້ເຫັນຖົ່ວຂຽວງອກຂຶ້ນໃນກອງອຸຈຈາຣະ ຓ ຣະຫວ່າງທາງ ແລ້ວບໍ່ພໍໃຈວ່າ ຖົ່ວຂຽວເປັນອກັປປີຍະ ແມ້ຕົ້ມແລ້ວກໍຍັງງອກໄດ້ ຈຶ່ງພ້ອມດ້ວຍບໍຣິບັທບໍ່ສັນຖົ່ວຂຽວ ແມ້ພວກກິກຂຸທີ່ເຊື່ອຟັງຄຳຂອງທ່ານກໍບໍ່ສັນຖົ່ວຂຽວໄປນຳ ກິກຂຸທັ້ງຫລາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຓາຕແກ່ກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ຖົ່ວຂຽວແມ້ທີ່ຕົ້ມແລ້ວ ກໍຍັງງອກໄດ້ ເຮົາອນຸຓາຕໃຫ້ສັນຖົ່ວຂຽວໄດ້ຕາມສບາຍ.

ພຣະພຸທສານຸຓາຕຢາດອງໂລຓໂສຈີຣກະ

ສມັຍຕໍ່ມາ ກິກຂຸອົງຄ໌ນຶ່ງອາພາສເປັນໂຣຄລົມເກີດໃນອຸທອຣ ທ່ານໄດ້ດື່ມຢາດອງໂລຓໂສຈີຣກະໂຣຄລົມເກີດໃນອຸທອຣຂອງທ່ານຫາຍຂາດ ກິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຓາຕແກ່ກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ເຮົາອນຸຓາຕໃຫ້ກິກຂຸອາພາສສັນຢາດອງໂລຓໂສຈີຣກະໄດ້ຕາມສບາຍ ແຕ່ກິກຂຸບໍ່ອາພາສຕ້ອງເຈືອນ້ຳສັນຢ່າງນ້ຳປານະ.

ປະຊວຣໂຣຄລົມເກີດໃນພຣະອຸທອຣ

[໔໙] ຄັ້ງນັ້ນ ພຣະຜູ້ມີພຣະກາຄສເດັຈພຣະພຸທສດຳເນີນໂດຍລຳດັບສເດັຈເຖິງພຣະນຄຣຣາຊຄຣຶຫ໌ຮູ້ວ່າ ພຣະອົງຄ໌ປະທັບຢູ່ທີ່ພຣະເວລຸວັນວິຫາຣ ອັນເປັນສຖານທີ່ພຣະຣາຊທານເຍື່ອແກ່ກະແຕເຂຕພຣະນຄຣຣາຊຄຣຶຫ໌ນັ້ນ ຄູາວນັ້ນ ພຣະອົງຄ໌ປະຊວຣໂຣຄລົມເກີດໃນພຣະອຸທອຣ ຈຶ່ງທ່ານພຣະອານົນທ໌ດຳຣິວ່າ ແມ້ເມື່ອກ່ອນພຣະຜູ້ມີພຣະກາຄປະຊວຣໂຣຄລົມເກີດໃນພຣະອຸທອຣ ກໍຫຣົງພຣະສຳຣາຓໄດ້ດ້ວຍຢາຄູປຸງດ້ວຍຂອງ ໓ ຢ່າງ ຈຶ່ງຂອງາແດ່ ເຂົ້າສາຣແດ່ ຖົ່ວຂຽວແດ່ ດ້ວຍຕົນເອງ ເກັບໄວ້ໃນກາຍໃນທີ່ຢູ່ຕົ້ມດ້ວຍຕົນເອງໃນກາຍໃນທີ່ຢູ່ ແລ້ວນ້ອມເຂົ້າໄປຖວາຍພຣະຜູ້ມີພຣະກາຄ ຂາບທູລວ່າ ຂໍພຣະຜູ້ມີພຣະກາຄໂປຼດດື່ມຢາຄູປຸງດ້ວຍຂອງ ໓ ຢ່າງ ຂ້ານ້ອຍ.

ພຸທສປະເພຕີ

ພຣະຕຖາຄົຕທັ້ງຫລາຍທຮົງຮູ້ຢູ່ ຍ່ອມຕຣັສຖາມກໍມີ ທຮົງຮູ້ຢູ່ ຍ່ອມບໍ່ຕຣັສຖາມກໍມີ ທຮົງຮູ້ກາລແລ້ວຕຣັສຖາມ ທຮົງຮູ້ກາລແລ້ວບໍ່ຕຣັສຖາມ ພຣະຕຖາຄົຕທັ້ງຫລາຍ ຍ່ອມຕຣັສຖາມ ສິ່ງທີ່ປະກອບດ້ວຍປະໂຍຊນ໌ ບໍ່ຕຣັສຖາມສິ່ງທີ່ບໍ່ປະກອບດ້ວຍປະໂຍຊນ໌ ໃນສິ່ງທີ່ບໍ່ປະກອບດ້ວຍ ປະໂຍຊນ໌ ພຣະອົງຄ໌ທຮົງກຳຈັດດ້ວຍຂໍ້ປຕິບັຕິ

ພຣະຜູ້ມີພຣະພາຄພຸທສເຈົ້າທັ້ງຫລາຍຍ່ອມສອບຖາມພິກຂຸທັ້ງຫລາຍດ້ວຍອາກາຣ ໒ ຢ່າງ ຄື ຈະ ທຮົງສແດງສັມມ໌ຢ່າງນຶ່ງ ຈະທຮົງບັຜລັຕິສິກຂາບົທແກ່ພຣະສາວົກທັ້ງຫລາຍຢ່າງນຶ່ງ

ຄັ້ງນັ້ນ ພຣະຜູ້ມີພຣະພາຄຕຣັສຖາມທ່ານພຣະອານົນທ໌ວ່າ ດູຣາອານົນທ໌ ຢາຄູນີ້ໄດ້ມາແຕ່ໃສ?

ທ່ານພຣະອານົນທ໌ຂາບທູລເຣື່ອງນັ້ນໃຫ້ທຮົງຮູ້ທັນທີ.

ທຮົງຕຳໜິທ່ານພຣະອານົນທ໌

ພຣະຜູ້ມີພຣະພາຄພຸທສເຈົ້າທຮົງຕິຕຽນວ່າ ດູຣາອານົນທ໌ ກາຣກະທຳຂອງທ່ານນັ້ນ ບໍ່ເໝາະ ບໍ່ສົມ ບໍ່ຄວຣ ບໍ່ແມ່ນກິຈຂອງສມຕະ ໃຊ້ບໍ່ໄດ້ ບໍ່ຄວຣເຮັດ ດູຣາອານົນທ໌ ເປັນຫຍັງທ່ານຈຶ່ງໄດ້ພໍໃຈໃນ ຄວາມມັກມາກເຊັ່ນນີ້ລະ ດູຣາອານົນທ໌ ອາມິສທີ່ເກັບໄວ້ໃນພາຍໃນທີ່ຢູ່ ເປັນອກັປປິຍະ ແມ້ທີ່ຫຸງຕົ້ມໃນ ພາຍໃນທີ່ຢູ່ ກໍເປັນອກັປປິຍະ ແມ້ທີ່ຫຸງຕົ້ມເອງ ກໍເປັນອກັປປິຍະ ກາຣກະທຳຂອງທ່ານນັ້ນ ບໍ່ເປັນ ໄປເພື່ອຄວາມເລື່ອມໃສຂອງຊຸມຊົນທີ່ຍັງບໍ່ເລື່ອມໃສ ... ເມື່ອແລ້ວທຮົງເຮັດສັມມີກຖາ ຮັບສັ່ງກະພິກຂຸທັ້ງຫລາຍ ດັ່ງຕໍ່ໄປນີ້:-

ພຣະພຸທສບັຜລັຕິຫ້າມອາມິສທີ່ເປັນອັນໂຕວຸຕຖະເປັນຕົ້ນ

ດູຣາພິກຂຸທັ້ງຫລາຍ ພິກຂຸບໍ່ຄວຣສັນອາມິສທີ່ເກັບໄວ້ໃນພາຍໃນທີ່ຢູ່ ທີ່ຫຸງຕົ້ມໃນພາຍໃນທີ່ຢູ່ ແລະທີ່ຫຸງຕົ້ມເອງ ອົງຄ໌ໃດສັນ ຕ້ອງອາບັຕິທຸກກົຜ.

ດູຣາພິກຂຸທັ້ງຫລາຍ ອາມິສ ຖ້າເກັບໄວ້ໃນພາຍໃນທີ່ຢູ່ ຫຸງຕົ້ມໃນພາຍໃນທີ່ຢູ່ ແລະຫຸງຕົ້ມເອງ ຖ້າພິກຂຸສັນອາມິສນັ້ນ ຕ້ອງອາບັຕິທຸກກົຜ ໓ ໂຕ.

ດູຣາພິກຂຸທັ້ງຫລາຍ ອາມິສ ຖ້າເກັບໄວ້ໃນພາຍໃນທີ່ຢູ່ ຫຸງຕົ້ມໃນພາຍໃນທີ່ຢູ່ ແຕ່ຜູ້ອື່ນຫຸງຕົ້ມ ຖ້າພິກຂຸສັນອາມິສ ຕ້ອງອາບັຕິທຸກກົຜ ໒ ໂຕ

ດູຣາພິກຂຸທັ້ງຫລາຍ ອາມິສ ຖ້າເກັບໄວ້ໃນພາຍໃນທີ່ຢູ່ ແຕ່ຫຸງຕົ້ມໃນພາຍນອກ ແລະຫຸງຕົ້ມເອງ ຖ້າພິກຂຸສັນອາມິສນັ້ນ ຕ້ອງອາບັຕິທຸກກົຜ ໒ ໂຕ

ດູຣາກິກຂຸທັ້ງຫລາຍ ອາມິສ ຖ້າເກັບໄວ້ໃນກາຍນອກ ແຕ່ຫຸງຕົ້ມໃນກາຍໃນ ແລະຫຸງຕົ້ມເອງ ຖ້າກິກຂຸລັບອາມິສນັ້ນ ຕ້ອງອາບັຕິທຸກກົຜ ໔ ໂຕ

ດູຣາກິກຂຸທັ້ງຫລາຍ ອາມິສ ຖ້າເກັບໄວ້ໃນກາຍໃນທີ່ຢູ່ ແຕ່ຫຸງຕົ້ມໃນກາຍນອກ ແລະຜູ້ອື່ນຫຸງຕົ້ມ ຖ້າກິກຂຸລັບອາມິສນັ້ນ ຕ້ອງອາບັຕິທຸກກົຜໂຕດຽວ

ດູຣາກິກຂຸທັ້ງຫລາຍ ອາມິສ ຖ້າເກັບໄວ້ໃນກາຍນອກ ຫຸງຕົ້ມໃນກາຍໃນ ແຕ່ຜູ້ອື່ນຫຸງຕົ້ມ ຖ້າກິກຂຸລັບອາມິສນັ້ນ ຕ້ອງອາບັຕິທຸກກົຜໂຕດຽວ

ດູຣາກິກຂຸທັ້ງຫລາຍ ອາມິສ ຖ້າເກັບໄວ້ໃນກາຍນອກ ຫຸງຕົ້ມໃນກາຍນອກ ແຕ່ຫຸງຕົ້ມເອງ ຖ້າກິກຂຸລັບອາມິສນັ້ນ ຕ້ອງອາບັຕິທຸກກົຜໂຕດຽວ

ດູຣາກິກຂຸທັ້ງຫລາຍ ອາມິສ ຖ້າເກັບໄວ້ໃນກາຍນອກ ຫຸງຕົ້ມໃນກາຍນອກ ແລະຜູ້ອື່ນຫຸງຕົ້ມ ຖ້າກິກຂຸລັບອາມິສນັ້ນແລ ບໍ່ຕ້ອງອາບັຕິ.

ພຣະພຸທສານຸຌາຕໃຫ້ອຸ່ນໂກຊນາຫາຣ

[໕໐] ກໍໂດຍສມັຍນັ້ນແລ ກິກຂຸທັ້ງຫລາຍຄຶດວ່າ ພຣະຜູ້ມີພຣະກາຄຫຣົງຫ້າມກັຕຕາຫາຣທີ່ຫຸງຕົ້ມເອງ ຈຶ່ງບໍ່ພໍໃຈໃນໂກຊນາຫາຣທີ່ຕ້ອງອຸ່ນ ແລ້ວຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄ ຕຣັສອນຸຌາຕແກ່ກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ເຣົາອນຸຌາຕໃຫ້ອຸ່ນກັຕຕາຫາຣທີ່ຕ້ອງອຸ່ນ.

ພຣະພຸທສານຸຌາຕອາມິສທີ່ເປັນອັນໂຕວຸຕຖະເປັນຕົ້ນ

[໕໑] ກໍໂດຍສມັຍນັ້ນແລ ພຣະນຄຣຣາຊຄຣິຫ໌ບັງເກີດທຸພກິກຂກັຍ ຄົນທັ້ງຫລາຍນຳເກືອແດ່ ນ້ຳມັນແດ່ ເຂົ້າສາຣແດ່ ຂອງຄວຣຍ້ຳແດ່ ມາຍັງອາຣາມ ກິກຂຸທັ້ງຫລາຍໃຫ້ເກັບຂອງເຫລົ່ານັ້ນໄວ້ ຂ້າງນອກ ສັຕວ໌ຕ່າງໆ ກິນເສັຽແດ່ ພວກໂຈຣລັກເອົາໄປແດ່ ກິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຌາຕແກ່ກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ເຣົາອນຸຌາຕ ໃຫ້ເກັບໄວ້ ໓ ກາຍໃນໄດ້

ກັປປິຍກາຣົກທັ້ງຫລາຍເກັບອາມິສໄວ້ຂ້າງໃນແລ້ວ ຫຸງຕົ້ມຂ້າງນອກ ພວກຄົນກິນເດນພາກັນ ຫ້ອມລ້ອມ

ກິກຂຸທັ້ງຫລາຍບໍ່ພໍໃຈລັບ ແລ້ວຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄ ຕຣັສອນຸຌາຕແກ່ກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ເຣົາອນຸຌາຕໃຫ້ຫຸງຕົ້ມໃນກາຍໃນ.

ໃນຄາວເກີດທຸພກິກຂພັຍ ພວກກັປປິຍກາຣົກນຳສິ່ງຂອງໄປເສັງຫຼວງຫຼາຍ ຖວາຍກິກຂຸພຽງ ຫນ້ອຍນຶ່ງ

ກິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕແກ່ກິກຂຸ ທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ເຣົາອນຸຍາຕໃຫ້ຫຸງຕົ້ມເອງ

ດູຣາກິກຂຸທັ້ງຫລາຍ ເຣົາອນຸຍາຕອາມິສທີ່ເກັບໄວ້ໃນກາຍໃນທີ່ຢູ່ ທີ່ຫຸງຕົ້ມໃນກາຍໃນທີ່ຢູ່ ແລະ ທີ່ຫຸງຕົ້ມເອງ.

ຜົລໄມ້ກາງທາງ

[໕໔] ກໍໂດຍສມັຍນັ້ນແລ ກິກຂຸຫລາຍອົງຄ໌ດ້ວຍກັນຈຳພັຣษາໃນກາສີຊົນບົທແລ້ວ ຍ່າງທາງ ໄປສູ່ພຣະນຄຣຣາຊຄຣິຫ໌ ເພື່ອເຝົ້າພຣະຜູ້ມີພຣະກາຄ ໃນຣະຫວ່າງທາງບໍ່ໄດ້ໂກຊນາຫາຣທີ່ເສົ້າຫມອງ ຫຼື ປະຫນີຕບໍຣິບູຣຕ໌ ພໍແກ່ຄວາມຕ້ອງການເລີຍ ເຖິງຂອງຂົບຍ້ຳຄືຜົລໄມ້ມີຫຼາຍ ແຕ່ກໍຫາກັປປິຍກາຣົກບໍ່ໄດ້ ຕ່າງພາກັນລຳບາກ ເມື່ອເດີນທາງໄປພຣະນຄຣຣາຊຄຣິຫ໌ ເຖິງພຣະເວຄຸວັນວິຫາຣອັນເປັນສຖານທີ່ພຣະຣາຊທານ ເຍື່ອແກ່ກະແຕ ແລ້ວເຂົ້າໄປເຝົ້າພຣະຜູ້ມີພຣະກາຄ ຖວາຍບັງຄົມ ນັ່ງເຝົ້າຢູ່ ຓ ທີ່ຄວຣສ່ວນນຶ່ງ

ພຸທສປະເພນີ

ກໍການທີ່ພຣະຜູ້ມີພຣະກາຄພຸທສເຈົ້າຫລາຍ ທຣົງປຣາສຣັຍກັບພຣະອາຄັນຕຸກະທັ້ງຫລາຍ ທັ່ນເປັນ ພຸທສປະເພນີ

ຄັ້ງນັ້ນ ຜູ້ມີພຣະກາຄໄດ້ຕຣັສຖາມກິກຂຸເຫລົ່ານັ້ນວ່າ ດູຣາກິກຂຸທັ້ງຫລາຍ ຮ່າງກາຍຂອງພວກ ທ່ານຍັງພໍທົນໄດ້ບໍ່ ຍັງພໍໃຫ້ເປັນໄປໄດ້ບໍ່ ຍ່າງທາງມາມີຄວາມລຳບາກຫນ້ອຍບໍ່ ແລະພວກທ່ານ ມາຈາກໃສລະ?

ກິກຂຸເຫລົ່ານັ້ນຂາບທູລວ່າ ຍັງພໍທົນໄດ້ ຂ້ານ້ອຍ ຍັງພໍໃຫ້ເປັນໄປໄດ້ ຂ້ານ້ອຍ ພວກຂ້າພຣະພຸທສເຈົ້າຈຳພັຣษາໃນກາສີຊົນບົທ ແລ້ວເດີນທາງມາພຣະນຄຣຣາຊຄຣິຫ໌ ເພື່ອເຝົ້າພຣະຜູ້ມີ ພຣະກາຄ ຓ ພຣະເວຄຸວັນນີ້ ໃນຣະຫວ່າງທາງ ບໍ່ໄດ້ໂກຊນາຫາຣທີ່ເສົ້າຫມອງຫຼືປະຫນີຕ ບໍຣິບູຣຕ໌ ພໍແກ່ຄວາມຕ້ອງການເລີຍ ເຖິງຂອງຂົບຍ້ຳ ຄືຜົລໄມ້ມີຫຼາຍ ແຕ່ກໍຫາກັປປິຍກາຣົກບໍ່ໄດ້ ເພາະເຫຕຸນັ້ນ ພວກຂ້າພຣະພຸທສເຈົ້າຈຶ່ງຍ່າງທາງມາມີຄວາມລຳບາກ.

ພຣະພຸທສານຸຍາຕໃຫ້ຮັບປະເຄນຂອງທີ່ເປັນອຸຄຄຫິຕ

ລຳດັບນັ້ນ ພຣະຜູ້ມີພຣະກາຄທຣົງເຮັດສັມມີກາຖາ ໃນເພາະເຫຕຸເປັນເຄົ້າມູລນັ້ນ ໃນເພາະເຫຕຸ ແຣກເກີດນັ້ນ ແລ້ວຮັບສັ່ງກະກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ເຣົາອນຸຍາຕ ກິກຂຸເຫັນຂອງຂົບຍ້ຳ

ຄື ຜີລໄມ້ໃນທີ່ໃດ ເຖີງກັປປິຍກາຣົກບໍ່ມີ ກໍໃຫ້ຫຍີບນຳໄປເອງ ພົບກັປປິຍກາຣົກແລ້ວ ວາງໄວ້ເທີງພື້ນດີນ ໃຫ້ກັປປິຍກາຣົກປະເຄນແລ້ວຈັນ.

ດູຣາຫິກຂຸທັ້ງຫລາຍ ເຮົາອນຸຒາຕໃຫ້ຮັບປະເຄນສິ່ງຂອງທີ່ກິກຂຸຖືກຕ້ອງແລ້ວໄດ້.

ພຣາຫ໌ມຒ໌ຖວາຍງາແລະນ້ຳເຜີ້ງໃຫມ່

[໕໖] ກໍໂດຍສມັຍນັ້ນແລ ງາໃຫມ່ແລະນ້ຳເຜີ້ງໃຫມ່ບັງເກີດແກ່ພຣາຫ໌ມຒ໌ຜູ້ນຶ່ງ ຈຶ່ງພຣາຫ໌ມຒ໌ນັ້ນໄດ້ຄຶດຕຶກລົງວ່າ ຫາກຈັ່ງຊັ້ນ ເຮົາຄວຣຖວາຍງາໃຫມ່ແລະນ້ຳເຜີ້ງໃຫມ່ແກ່ກິກຂຸສົງຆ໌ ມີອົງຄ໌ພຣະພຸທສເຈົ້າເປັນປະມຸຂ ເມື່ອແລ້ວໄດ້ໄປໃນພຸທສສຳນັກ ເມື່ອເຖີງແລ້ວໄດ້ທູລປຣາສຣັຍກັບພຣະຜູ້ມີພຣະກາຄ ເມື່ອຜ່ານການທູລປຣາສຣັຍພໍໃຫ້ເປັນທີ່ບັນເທີງ ເປັນທີ່ຣະລຶກເຖີງກັນໄປແລ້ວ ຈຶ່ງຢືນຢູ່ ຓ ທີ່ຄວຣສ່ວນຂ້າງນຶ່ງ ພຣາຫ໌ມຒ໌ຢືນຢູ່ ຓ ທີ່ຄວຣສ່ວນຂ້າງນຶ່ງແລ້ວ ໄດ້ທູລຄຳນີ້ແດ່ພຣະຜູ້ມີພຣະກາຄວ່າ ຂ້ານ້ອຍຂໍທ່ານພຣະໂຄດົມພ້ອມດ້ວຍກິກຂຸສົງຆ໌ ຈົ່ງຫຣົງພຣະກຣຸຒາໂປຼດຮັບກັຕຕາຫາຣຂອງຂ້າພຣະພຸທສເຈົ້າໃນມື້ອື່ນເຊົ້າ ເພື່ອຈເຣີນບຸຒກຸສົລ ແລະປີຕິປຼາໂມທຍ໌ແກ່ຂ້າພຣະພຸທສເຈົ້າດ້ວຍເຖີດ.

ພຣະຜູ້ມີພຣະກາຄຫຣົງຮັບນິມົນຕ໌ໂດຍດຸສນີກາພ ເມື່ອພຣາຫ໌ມຒ໌ນັ້ນຮູ້ການຮັບນິມົນຕ໌ຂອງພຣະຜູ້ມີພຣະກາຄ ແລ້ວກັບໄປ ແລ້ວສັ່ງໃຫ້ຕົກແຕ່ງຂອງຍ້ຳຂອງຈັນອັນປະນີຕໂດຍຜ່ານຣາຕຣີນັ້ນແລ້ວໃຫ້ຄົນໄປຂາບທູລກັຕກາລແດ່ພຣະຜູ້ມີພຣະກາຄວ່າ ເຖີງເວລາແລ້ວທ່ານພຣະໂຄດົມ ກັຕຕາຫາຣແລ້ວແລ້ວ.

ຂຒະນັ້ນເປັນເວລາເຊົ້າ ພຣະຜູ້ມີພຣະກາຄຫຣົງຄອງອັນຕຣວາສົກແລ້ວ ຖືບາຕຣ໌ຈີວຣສເດັຈພຣະພຸທສດຳເນີນໄປສູ່ນິເວສນ໌ຂອງພຣາຫ໌ມຒ໌ນັ້ນ ເມື່ອເຖີງແລ້ວ ປະທັບນັ່ງເຫນືອພຣະພຸທສອາສນ໌ທີ່ເຂົາຈັດຖວາຍ ພ້ອມດ້ວຍກິກຂຸສົງຆ໌ ຈຶ່ງພຣາຫ໌ມຒ໌ນັ້ນອັງຄາສກິກຂຸສົງຆ໌ ມີພຣະພຸທສເຈົ້າເປັນປະມຸຂ ດ້ວຍຂາທນີຍໂກຊນີຍາຫາຣອັນປະນີຕ ດ້ວຍມືຂອງຕົນ ຈົນພຣະຜູ້ມີພຣະກາຄສເວີຍແລ້ວແລ້ວ ຫຣົງນຳພຣະຫັຕຖ໌ອອກຈາກບາຕຣ໌ຫ້າມກັຕຣ໌ແລ້ວນັ່ງຢູ່ ຓ ທີ່ຄວຣສ່ວນຂ້າງນຶ່ງ ພຣະຜູ້ມີພຣະກາຄຫຣົງຊີ້ແຈງພຣາຫ໌ມຒ໌ນັ້ນຜູ້ນັ່ງຢູ່ ຓ ທີ່ຄວຣສ່ວນຂ້າງນຶ່ງ ໃຫ້ເຫັນແຈ້ງ ສມາທານ ອາຈຫາຨ ຣ່າເຣີງ ດ້ວຍສັມມີກະຖາແລ້ວລຸກຈາກທີ່ປະທັບສເດັຈກັບ ເມື່ອພຣະຜູ້ມີພຣະກາຄສເດັຈກັບແລ້ວບໍ່ທັນນານ ພຣາຫ໌ມຒ໌ນັ້ນຣະລຶກຂຶ້ນໄດ້ວ່າ ເຮົາຄຶດວ່າຈະຖວາຍງາໃຫມ່ແລະນ້ຳເຜີ້ງໃຫມ່ ຈຶ່ງໄດ້ນິມົນຕ໌ກິກຂຸສົງຆ໌ ມີພຣະພຸທສເຈົ້າເປັນປະມຸຂເພື່ອຖວາຍໄທຍສັມມ໌ເຫລົ່າໃດ ໄທຍສັມມ໌ເຫລົ່ານັ້ນເຮົາລືມຖວາຍ ຫາກຈັ່ງຊັ້ນ ເຮົາຄວຣໃຫ້ເຂົາຈັດງາໃຫມ່ແລະນ້ຳເຜີ້ງໃຫມ່ບັຣຈຸຂວດແລະໝໍ້ນຳໄປສູ່ອາຣາມ ດັ່ງນີ້ ແລ້ວໃຫ້ເຂົາຈັດງາໃຫມ່ແລະນ້ຳເຜີ້ງໃຫມ່ບັຣຈຸຂວດແລະໝໍ້ນຳໄປສູ່ອາຣາມ ເຂົ້າໄປໃນພຸທສສຳນັກ ເມື່ອເຖີງແລ້ວໄດ້ຢືນຢູ່ ຓ ທີ່ຄວຣສ່ວນຂ້າງນຶ່ງ

ເມື່ອແລ້ວໄດ້ທູລຄຳນີ້ແດ່ພຣະຜູ້ມີພຣະພາຄວ່າ ທ່ານພຣະໂຄດົມ ຂ້າພຣະພຸທສເຈົ້າຄຶດວ່າຈະຖວາຍງາໃຫມ່ແລະນ້ຳເຜີ້ງໃຫມ່ ຈຶ່ງໄດ້ນິມົນຕ໌ພິກຂຸສົງຄ໌ມີພຣະພຸທສເຈົ້າເປັນປະມຸຂ ເພື່ອຖວາຍໄທຍສົມມ໌ເຫລົ່າໃດ ໄທຍສົມມ໌ເຫລົ່ານັ້ນຂ້າພຣະພຸທສເຈົ້າລືມຖວາຍ ຂໍທ່ານພຣະໂຄດົມໂປຼດຮັບງາໃຫມ່ແລະນ້ຳເຜີ້ງໃຫມ່ຂອງຂ້າພຣະ-ພຸທສເຈົ້າເຖີດ.

ພຣະຜູ້ມີພຣະພາຄຕຣັສວ່າ ດູຣາພຣາຫ໌ມຕ໌ ຖ້າເຊັ່ນນັ້ນ ທ່ານຈົ່ງຖວາຍແກ່ພິກຂຸທັ້ງຫລາຍ.

ກໍຄູາວນັ້ນອັຕຄັດອາຫາຣ ພິກຂຸທັ້ງຫລາຍຮັບສິ່ງຂອງຫນ້ອຍນຶ່ງແລ້ວຫ້າມເສັຽແດ່ ພິຈາຣຕາແລ້ວຫ້າມເສັຽແດ່ ເປັນອັນວ່າພຣະສົງຄ໌ລ້ວນເປັນຜູ້ຫ້າມພັຕຣ໌ທັ້ງນັ້ນ ພິກຂຸທັ້ງຫລາຍບໍ່ພໍໃຈບໍ່ຮັບປະເຄນ.

ພຣະພຸທສານຸຍາຕໃຫ້ສັນໂກຊນະບໍ່ເປັນເດນ

ພຣະຜູ້ມີພຣະພາຄຕຣັສອນຸຍາຕແກ່ພິກຂຸທັ້ງຫລາຍວ່າ ດູຣາພິກຂຸທັ້ງຫລາຍ ພວກທ່ານຈົ່ງຮັບປະເຄນສັນເທີ້ນ ເຮົາອນຸຍາຕໃຫ້ພິກຂຸສັນແລ້ວ ຫ້າມພັຕແລ້ວ ສັນໂກຊນະອັນບໍ່ເປັນເດນ ຊຶ່ງນຳມາຈາກສຖານທີ່ສັນ.

ຕະກູລອຸປັຕຖາກຂອງພຣະອຸປນັນທສາກຍບຸຕຣ໌

[໕໔] ກໍສມັຍນັ້ນແລ ຕະກູລອຸປັຕຖາກຂອງທ່ານພຣະອຸປນັນທສາກຍບຸຕຣ໌ ໄດ້ສົ່ງຂອງຍ້ຳໄປເພື່ອຖວາຍພຣະສົງຄ໌ ສັ່ງວ່າ ຕ້ອງມອບໃຫ້ພຣະຄຸຕເຈົ້າອຸປນັນທ໌ຖວາຍສົງຄ໌ ແຕ່ເວລານັ້ນທ່ານພຣະອຸປນັນທສາກຍບຸຕຣ໌ກຳລັງເຂົ້າໄປບິຕທບາຕໃນບ້ານ ເມື່ອຊາວບ້ານພວກນັ້ນໄປເຖິງອາຣາມແລ້ວຖາມພິກຂຸທັ້ງຫລາຍວ່າ ພຣະຄຸຕເຈົ້າອຸປນັນທ໌ໄປໃສ ເຈົ້າຂ້າ?

ພິກຂຸທັ້ງຫລາຍຕອບວ່າ ທ່ານພຣະອຸປນັນທສາກຍບຸຕຣ໌ນັ້ນເຂົ້າໄປບິຕທບາຕໃນບ້ານແລ້ວ.

ຊາວບ້ານສັ່ງວ່າ ທ່ານເຈົ້າຂ້າ ຂອງຍ້ຳນີ້ຕ້ອງມອບໃຫ້ພຣະຄຸຕເຈົ້າອຸປນັນທ໌ຖວາຍພິກຂຸສົງຄ໌.

ພິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ. ພຣະຜູ້ມີພຣະພາຄຕຣັສວ່າ ດູຣາພິກຂຸທັ້ງຫລາຍ ຖ້າເຊັ່ນນັ້ນ ພວກທ່ານຈົ່ງຮັບປະເຄນເກັບໄວ້ຈົນກວ່າອຸປນັນທ໌ຈະມາ.

ເມື່ອທ່ານພຣະອຸປນັນທສາກຍບຸຕຣ໌ ເຂົ້າໄປຢ້ຽມຕະກູລທັ້ງຫລາຍກ່ອນເວລາສັນ ແລ້ວມາເຖິງຕໍ່ກາງວັນ ກໍຄູາວນັ້ນເປັນສມັຍທຸພພິກຂກັຍ ພິກຂຸທັ້ງຫລາຍຮັບສິ່ງຂອງຫນ້ອຍນຶ່ງແລ້ວຫ້າມເສັຽແດ່ ພິຈາຣຕາແລ້ວຫ້າມເສັຽແດ່ ເປັນອັນວ່າພິກຂຸສົງຄ໌ລ້ວນເປັນຜູ້ຫ້າມພັຕຣ໌ທັ້ງນັ້ນ ພິກຂຸທັ້ງຫລາຍບໍ່ພໍໃຈບໍ່ຮັບປະເຄນ.

ພຣະຜູ້ມີພຣະພາຄຕຣັສອນຸຍາຕແກ່ພິກຂຸທັ້ງຫລາຍວ່າ ດູຣາພິກຂຸທັ້ງຫລາຍ ພວກທ່ານຈົ່ງຮັບປະເຄນສັນເທີ້ນ ເຮົາອນຸຍາຕໃຫ້ພິກຂຸຜູ້ສັນແລ້ວ ຫ້າມພັຕຣ໌ແລ້ວ ສັນໂກຊນະອັນບໍ່ເປັນເດນ ຊຶ່ງຮັບປະເຄນໄວ້ໃນປຸເຣພັຕຣໄດ້.

ພຣະສາຣີບຸຕຣ໌ເຖຣະອາພາສ

[໕໕] ຄັ້ງນັ້ນ ພຣະຜູ້ມີພຣະກາຄປະທັບຢູ່ໃນພຣະນຄຣຣາຊຄຣິຫ໌ ຕາມພຣະພຸທສ ຫາີຣົມຍ໌ ແລ້ວສເດັຈພຣະພຸທສດຳເນີນມຸ່ງໄປທາງພຣະນຄຣສາວັຕຖີ ສເດັຈຈາຣິກໂດຍລຳດັບ ເຖິງພຣະນຄຣສາວັຕຖີ ແລ້ວ ຮູ້ວ່າພຣະອົງຄ໌ປະທັບຢູ່ໃນພຣະວິຫາຣເຊຕວັນ ອາຣາມຂອງອນາຖບິຕທິກຄຫບໍດີ ເຂຕ ພຣະນຄຣສາວັຕຖີນັ້ນ ວັນຕໍ່ມາ ທ່ານພຣະສາຣີບຸຕຣ໌ອາພາສເປັນໄຂ້ໂຕຮ້ອນ ທ່ານພຣະມຫາໂມຄຄັລລານະ ເຂົ້າໄປຢ້ຽມທ່ານພຣະສາຣີບຸຕຣ໌ ໄດ້ຖາມທ່ານພຣະສາຣີບຸຕຣ໌ວ່າ ອາວຸໂສ ສາຣີບຸຕຣ໌ ເມື່ອກ່ອນທ່ານອາພາສ ເປັນໄຂ້ໂຕຮ້ອນ ຮັກສາຫາຍດ້ວຍເພສັຊຫຍັງ?

ທ່ານພຣະສາຣີບຸຕຣ໌ຕອບວ່າ ຮັກສາຫາຍດ້ວຍຮາກບົວແລະເຫງົ້າບົວ.

ຈຶ່ງທ່ານພຣະມຫາໂມຄຄັລລານະໄດ້ຫາຍໂຕໄປໃນພຣະວິຫາຣເຊຕວັນທັນທີ ມາປຣາກົຕຢູ່ ໓ ຮິມຝັ່ງ ສະໂບກຂຣຕີມັນທາກີນີ ປຽບເໝືອນບຸຣຸษມີກຳລັງຢຽດແຂນທີ່ຄູ້ ຫຼືຄູ້ແຂນທີ່ຢຽດ ຈັ່ງຊັ້ນ

ຊ້າງເຊືອກນຶ່ງໄດ້ເຫັນທ່ານພຣະມຫາໂມຄຄັລລານະກຳລັງມາແຕ່ໄກ ເມື່ອແລ້ວໄດ້ກ່າວຄຳນີ້ກັບທ່ານ ພຣະມຫາໂມຄຄັລລານະວ່າ ນິມົນຕ໌ພຣະຄຸຕເຈົ້າມຫາໂມຄຄັລລານະມາ ພຣະຄຸຕເຈົ້າມຫາໂມຄຄັລລານະມາດີ ແລ້ວ ພຣະຄຸຕເຈົ້າຕ້ອງປະສົງຄ໌ສິ່ງໃດ ຂ້າພເຈົ້າຈະຖວາຍສິ່ງໃດ ຂ້ານ້ອຍ?

ທ່ານພຣະມຫາໂມຄຄັລລານະຕອບວ່າ ຂ້ານ້ອຍປະສົງຄ໌ເຫງົ້າບົວແລະຮາກບົວ ຂ້ານ້ອຍ.

ຊ້າງເຊືອກນັ້ນສັ່ງຊ້າງອີກເຊືອກນຶ່ງທັນທີວ່າ ພນາຍ ຫາກຈັ່ງຊັ້ນ ເຈົ້າຈົ່ງຖວາຍເຫງົ້າບົວແລະຮາກບົວ ແກ່ພຣະຄຸຕເຈົ້າ ຈົນພໍແກ່ຄວາມຕ້ອງກາຣ.

ຈຶ່ງຊ້າງເຊືອກທີ່ຖືກໃຊ້ນັ້ນລົງສູ່ສະໂບກຂຣຕີມັນທາກີນີ ໃຊ້ງວງຖອນເຫງົ້າບົວແລະຮາກບົວລ້າງນ້ຳ ໃຫ້ສະອາດ ມ້ວນເປັນຫໍ່ເຂົ້າໄປຫາທ່ານພຣະມຫາໂມຄຄັລລານະ ທັນໃດນັ້ນ ທ່ານພຣະມຫາໂມຄຄັລລານະ ໄດ້ຫາຍໂຕໄປທີ່ຮິມຝັ່ງສະໂບກຂຣຕີມັນທາກີນີ ມາປຣາກົຕໂຕທີ່ພຣະວິຫາຣເຊຕວັນ ປຽບເໝືອນບຸຣຸษ ຜູ້ມີກຳລັງ ຢຽດແຂນທີ່ຄູ້ ຫຼືຄູ້ແຂນທີ່ຢຽດ ຈັ່ງຊັ້ນ ແມ້ຊ້າງເຊືອກນັ້ນກໍໄດ້ຫາຍໄປກົງຮິມຝັ່ງ ສະໂບກຂຣຕີມັນທາກີນີ ມາປຣາກົຕໂຕທີ່ພຣະວິຫາຣເຊຕວັນ ໄດ້ປະເຄນເຫງົ້າບົວແລະຮາກບົວແກ່ທ່ານ ພຣະມຫາໂມຄຄັລລານະ ແລ້ວຫາຍໂຕໄປທີ່ພຣະວິຫາຣເຊຕວັນມາປຣາກົຕໂຕທີ່ຮິມຝັ່ງສະໂບກຂຣຕີມັນທາກີນີ ລຳດັບນັ້ນ ທ່ານພຣະມຫາໂມຄຄັລລານະນ້ອມເຫງົ້າບົວແລະຮາກບົວເຂົ້າໄປຖວາຍທ່ານພຣະສາຣີບຸຕຣ໌ ເມື່ອ ທ່ານພຣະສາຣີບຸຕຣ໌ສັນເຫງົ້າບົວແລະຮາກບົວແລ້ວ ໂຣຄໄຂ້ໂຕຮ້ອນກໍຫາຍທັນທີ ເຫງົ້າບົວແລະຮາກບົວຍັງເຫລືອຢູ່ ຫຼວງຫຼາຍ

ກໍແລສມັຍນັ້ນອັຕຄັດອາຫາຣ ກິກຂຸທັ້ງຫລາຍຮັບສິ່ງຂອງຫນ້ອຍນຶ່ງແລ້ວຫ້າມເສັຽແດ່ ພິຈາຣຕາ ແລ້ວຫ້າມເສັຽແດ່ ເປັນອັນວ່າກິກຂຸສົງຄ໌ລ້ວນເປັນຜູ້ຫ້າມກັຕທັ້ງນັ້ນ ກິກຂຸທັ້ງຫລາຍບໍ່ພໍໃຈບໍ່ຮັບປະເຄນ.

ພຣະຜູ້ມີພຣະກາຄຕຣັສອນຸຄາຕແກ່ກິກຂຸທັ້ງຫລາຍວ່າ ດູຮາກິກຂຸທັ້ງຫລາຍ ພວກທ່ານຈົ່ງຮັບປະເຄນ ຈັນເທີ້ນ ເຮົາອນຸຄາຕໃຫ້ກິກຂຸຜູ້ຈັນແລ້ວ ຫ້າມກັຕແລ້ວ ຈັນໂກຊນະອັນບໍ່ເປັນເດນ ຊຶ່ງເກີດໃນປ່າ ເກີດໃນສະບົວ.

ພຣະພຸທສານຸຄາຕຜົລໄມ້ທີ່ໃຊ້ເພາະພັນສ໌ບໍ່ໄດ້

[໕໙] ກໍໂດຍສມັຍນັ້ນແລ ໃນພຣະນຄຣສາວັຕຖີ ມີຂອງຈັນ ຄື ຜົລໄມ້ເກີດຂຶ້ນຫຼາຍ ແຕ່ ກັປປິຍກາຣົກບໍ່ມີ ກິກຂຸທັ້ງຫລາຍບໍ່ພໍໃຈບໍ່ຈັນຜົລໄມ້ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຄາຕແກ່ກິກຂຸທັ້ງຫລາຍວ່າ ດູຮາກິກຂຸທັ້ງຫລາຍ ເຮົາອນຸຄາຕໃຫ້ຈັນຜົລໄມ້ທີ່ໃຊ້ ເພາະພັນສ໌ບໍ່ໄດ້ ຫຼືທີ່ປອກເມັດອອກແລ້ວ ຍັງບໍ່ໄດ້ທຳກັປປະກໍຈັນໄດ້.

ພຣະພຸທສບັຄຄັຕິຫ້າມທຳສັຕຖກັມມ໌

[໕໑] ຄັ້ງນັ້ນ ພຣະຜູ້ມີພຣະກາຄປະທັບຢູ່ໃນພຣະນຄຣສາວັຕຖີຕາມພຣະພຸທສາກີຣົມຍ໌ແລ້ວ ສເດັຈພຣະພຸທສດຳເນີນໄປທາງພຣະນຄຣຣາຊຄຣຶຫ໌ ສເດັຈພຣະພຸທສດຳເນີນຜ່ານຣະຍະທາງໂດຍລຳດັບ ເຖິງພຣະນຄຣຣາຊຄຣຶຫ໌ ຮູ້ວ່າ ພຣະອົງຄ໌ປະທັບຢູ່ໃນພຣະເວລຸວັນວິຫາຣອັນເປັນສຖານທີ່ພຣະຣາຊທານ ເຍື່ອແກ່ກະແຕ ເຂຕພຣະນຄຣຣາຊຄຣຶຫ໌ນັ້ນ ຄາວນັ້ນກິກຂຸອົງຄ໌ນຶ່ງອາພາສເປັນໂຣຄຣິດສີຕາທວາຣ ນາຍແພທຍ໌ຊື່ອາກາສໂຄຕຕະກຳລັງທຳການຜ່າຕັດທວາຣຫນັກດ້ວຍສັສຕຣາ ຂຕະນັ້ນ ພຣະຜູ້ມີພຣະກາຄ ສເດັຈພຣະພຸທສດຳເນີນຕາມເສນາສນະ ສເດັຈໄປເຖິງວິຫາຣທີ່ຢູ່ຂອງກິກຂຸອົງຄ໌ນັ້ນ ນາຍແພທຍ໌ອາກາສໂຄຕຕະ ໄດ້ເຫັນພຣະຜູ້ມີພຣະກາຄກຳລັງສເດັຈມາແຕ່ໄກ ເມື່ອແລ້ວໄດ້ທູລຄຳນີ້ແດ່ພຣະຜູ້ມີພຣະກາຄວ່າ ຂໍອາຣາຊນາ ທ່ານພຣະໂຄດົມສເດັຈມາທອດພຣະເນຕຣ໌ວັຈຈມັຄຄ໌ຂອງກິກຂຸອົງຄ໌ນີ້ ເຫມືອນປາກຂີ້ຄັນຄາກ.

ທຣົງປະຊຸມກິກຂຸສົງຄ໌

ລຳດັບນັ້ນ ພຣະຜູ້ມີພຣະກາຄທຣົງດຳຣິວ່າ ໂມຄບຸຣຸษນີ້ເຍາະເຍີ້ຍເຮົາ ຈຶ່ງສເດັຈກັບຈາກທີ່ນັ້ນແລ ແລ້ວຮັບສັ່ງໃຫ້ປະຊຸມກິກຂຸສົງຄ໌ ໃນເພາະເຫຕຸເປັນເຄົ້າມູລນັ້ນ ໃນເພາະເຫຕຸແຣກເກີດນັ້ນ ແລ້ວ ທຣົງສອບຖາມກິກຂຸທັ້ງຫລາຍວ່າ ດູຮາກິກຂຸທັ້ງຫລາຍ ໃນວິຫາຣຫລັງນັ້ນ ມີກິກຂຸອາພາສບໍ່?

ກິກຂຸທັ້ງຫລາຍຂາບທູລວ່າ ມີ ຂ້ານ້ອຍ.

ພ. ດູຣາກິກຂຸທັ້ງຫລາຍ ກິກຂຸອົງຄ໌ນັ້ນອາພາຣເປັນຫຍັງ?

ກິ. ທ່ານອົງຄ໌ນັ້ນອາພາຣເປັນໂຣຄຣິດສີດາທວາຣ ນາຍແພທຍ໌ອາກາສໂຄຕຕະທຳກາຣຜ່າຕັດທວາຣຫນັກດ້ວຍສັສຕຣາ ຂ້ານ້ອຍ.

ພຣະຜູ້ມີພຣະກາຄພຸທຣເຈົ້າທຣົງຕິຕຽນວ່າ ດູຣາກິກຂຸທັ້ງຫລາຍ ກາຣກະທຳຂອງໂມຄບຸຣຸຫນັ້ນບໍ່ເຫມາະ ບໍ່ສົມ ບໍ່ຄວຣ ບໍ່ແມ່ນກິຈຂອງສມຕະ ໃຊ້ບໍ່ໄດ້ ບໍ່ຄວຣເຮັດ ດູຣາກິກຂຸທັ້ງຫລາຍ ເປັນຫຍັງໂມຄບຸຣຸຫນັ້ນຈຶ່ງໄດ້ໃຫ້ເຮັດສັດຖກັມມ໌ໃນທີ່ແຄບລະ ໃນທີ່ແຄບມີຜິວເນື້ອອ່ອນ ແຜລງອກເຕັມຍາກ ຜ່າຕັດບໍ່ສະດວກ ກາຣກະທຳຂອງໂມຄບຸຣຸຫນັ້ນບໍ່ເປັນໄປເພື່ອຄວາມເລື່ອມໃສຂອງຊຸມຊົນທີ່ຍັງບໍ່ເລື່ອມໃສ .... ເມື່ອແລ້ວທຣົງເຮັດສັມມີກຖາ ຮັບສັ່ງກະກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ກິກຂຸບໍ່ຄວຣໃຫ້ເຮັດສັດຖກັມມ໌ໃນທີ່ແຄບ ອົງຄ໌ໃດໃຫ້ເຮັດ ຕ້ອງອາບັຕິຖຸລລັຈຈັຍ.

ພຣະພຸທຣບັຍລັດຕິຫ້າມທຳວັຕຖິກັມມ໌

ສມັຍຕໍ່ມາ ພຣະລັພພັຄຄີຍ໌ຮູ້ວ່າ ພຣະຜູ້ມີພຣະກາຄທຣົງຫ້າມທຳກາຣຜ່າຕັດທວາຣຫນັກດ້ວຍສັສຕຣາ ຈຶ່ງລ່ຽງໃຫ້ເຮັດກາຣຮັດຫົວໄສ້ ບັຣດາກິກຂຸທີ່ມັກຫນ້ອຍ ... ຕ່າງກໍເພ່ງໂທຫ ຕິຕຽນ ໂພນທະນາວ່າເປັນຫຍັງພຣະລັພພັຄຄີຍ໌ຈຶ່ງໄດ້ໃຫ້ເຮັດວັຕຖິກັມມ໌ລະ ແລ້ວຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ.

ພຣະຜູ້ມີພຣະກາຄທຣົງສອບຖາມກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ຂ່າວວ່າ ກິກຂຸລັພພັຄຄີຍ໌ໃຫ້ເຮັດວັຕຖິກັມມ໌ ແທ້ບໍ່?

ກິກຂຸທັ້ງຫລາຍທູລຮັບວ່າ ແທ້ ຂ້ານ້ອຍ.

ພຣະຜູ້ມີພຣະກາຄພຸທຣເຈົ້າທຣົງຕິຕຽນວ່າ ... ເມື່ອແລ້ວທຣົງເຮັດສັມມ໌ມີກຖາ ຮັບສັ່ງຫ້າມກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ກິກຂຸບໍ່ຄວຣໃຫ້ເຮັດສັດຖກັມມ໌ ຫຼືວັຕຖິກັມມ໌ໃນທີ່ປະມາຓ ໔ ນີ້ວໂດຍຮອບແຫ່ງທີ່ແຄບ ອົງຄ໌ໃດໃຫ້ເຮັດ ຕ້ອງອາບັຕິຖຸລລັຈຈັຍ.

ອຸບາສິກາສຸປປິຍາຖວາຍເນື້ອຂາ

[໕໗] ຄັ້ງນັ້ນ ພຣະຜູ້ມີພຣະກາຄປະທັບຢູ່ໃນພຣະນຄຣຣາຊຄຣຶຫ໌ ຕາມພຣະພຸທຣາກິຣົມຍ໌ແລ້ວສເດັຈພຣະພຸທຣດຳເນີນໄປທາງພຣະນຄຣພາຣາຓສີ ສເດັຈພຣະພຸທຣດຳເນີນຜ່ານຣະຍະທາງໂດຍລຳດັບເຖິງພຣະນຄຣພາຣາຓສີແລ້ວ ຮູ້ວ່າ ພຣະອົງຄ໌ປະທັບຢູ່ ໓ ອິສິປຕນະມຣຶຄທາຍວັນເຂຕພຣະນຄຣພາຣາຓສີນັ້ນ ສມັຍນັ້ນ ອຸບາສົກສຸປປິຍະແລະອຸບາສິກາສຸປປິຍາ ໔ ຄົນ ເປັນຜູ້ເລື່ອມໃສ ເປັນທາຍົກ

ກັປປິຍກາຣົກ ບຳຣຸງພຣະສົງຈ໌ຢູ່ໃນພຣະນຄຣພາຣາຓສີ ວັນນຶ່ງ ອຸບາສິກາສຸປປິຍາໄປສູ່ອາຣາມ ທ່ຽວ ຢ່ຽມວິຫາຣແລະບໍຣິເວຓທົ່ວທຸກແຫ່ງ ແລ້ວຮຽນຖາມກິກຂຸທັ້ງຫລາຍວ່າ ກິກຂຸອົງຄ໌ໃດອາພາຣ ກິກຂຸອົງຄ໌ໃດ ໂປຼດໃຫ້ຂ້ານ້ອຍນຳຫຍັງມາຖວາຍ ຂ້ານ້ອຍ.

ຄັ້ງນັ້ນ ກິກຂຸອົງຄ໌ນຶ່ງດື່ມຢາຖ່າຍແລະໄດ້ບອກອຸບາສິກາສຸປປິຍາວ່າ ດູຣານ້ອງຍິງ ອາຕມາ ດື່ມຢາຖ່າຍ ອາຕມາຕ້ອງການນ້ຳຕົ້ມຊີ້ນ

ອຸບາສິກາສຸປປິຍາຮັບຄຳວ່າ ຂ້ານ້ອຍຈະນຳມາຖວາຍເປັນພິເສຈ ຂ້ານ້ອຍ ແລ້ວໄປເຮືອນສັ່ງຊາຍຄົນ ຮັບໃຊ້ວ່າ ເຈົ້າຈົ່ງໄປຫາຊື້ຊີ້ນສັຕວ໌ທີ່ເຂົາຂາຍມາ

ຊາຍຄົນຮັບໃຊ້ຮັບຄຳອຸບາສິກາສຸປປິຍາວ່າ ຂ້ານ້ອຍຂ້ານ້ອຍ ແລ້ວທ່ຽວຫາຊື້ທົ່ວພຣະນຄຣພາຣາຓສີ ກໍບໍ່ໄດ້ພົບຊີ້ນສັຕວ໌ທີ່ເຂົາຂາຍ ຈຶ່ງໄດ້ກັບໄປຫາອຸບາສິກາສຸປປິຍາແລ້ວຮຽນວ່າ ຊີ້ນສັຕວ໌ທີ່ເຂົາຂາຍບໍ່ມີ ຂ້ານ້ອຍ ເພາະວັນນີ້ຫ້າມຂ້າສັຕວ໌

ຈຶ່ງອຸບາສິກາສຸປປິຍາໄດ້ມີຄວາມປຣິວິຕົກວ່າ ກິກຂຸອາພາຣອົງຄ໌ນັ້ນແລ ເມື່ອບໍ່ໄດ້ລັບນ້ຳຕົ້ມຊີ້ນ ອາພາຣຈະຫຼາຍຂຶ້ນຫຼືຈະເຖິງມໍຣຕກາພ ການທີ່ເຮົາຮັບຄຳແລ້ວບໍ່ຈັດຫາໄປຖວາຍນັ້ນ ເປັນການບໍ່ສົມຄວຣ ແກ່ເຮົາເລີຍ ດັ່ງນີ້ ແລ້ວໄດ້ຫຍິບມີດປາດຊີ້ນມາປາດຂາສົ່ງໃຫ້ຍິງຄົນຮັບໃຊ້ສັ່ງວ່າ ແມ່ສາວໃຊ້ຫາກຈັ່ງຊັ້ນ ແມ່ຈົ່ງຕົ້ມເນື້ອນີ້ແລ້ວນຳໄປຖວາຍກິກຂຸອົງຄ໌ທີ່ອາພາຣຢູ່ໃນວິຫາຣຫລັງນັ້ນ ປະການນຶ່ງ ຜູ້ໃດຖາມເຖິງຂ້ານ້ອຍ ຈົ່ງບອກວ່າປ່ວຍ ແລ້ວເອົາຜ້າຫົ່ມພັນຂາ ເຂົ້າຫ້ອງນອນເທິງຕຽງ.

ຄັ້ງນັ້ນ ອຸບາສິກາສຸປປິຍະໄປເຮືອນແລ້ວຖາມຍິງຄົນຮັບໃຊ້ວ່າ ແມ່ສຸປປິຍາໄປໃສ?

ຍິງຄົນຮັບໃຊ້ຕອບວ່າ ຍາແມ່ນອນໃນຫ້ອງ ຂ້ານ້ອຍ.

ຈຶ່ງອຸບາສົກສຸປປິຍະເຂົ້າໄປຫາອຸບາສິກສຸປປິຍາເຖິງໃນຫ້ອງນອນ ແລ້ວໄດ້ຖາມວ່າ ທ່ານນອນເປັນ ຫຍັງອຸບາສິກາ.

ຂ້ານ້ອຍບໍ່ສບາຍຂ້ານ້ອຍ ອຸບາສົກ.

ທ່ານປ່ວຍເປັນຫຍັງ.

ທີນັ້ນ ອຸບາສິກາສຸປປິຍາຈຶ່ງເລົ່າເຣື່ອງນັ້ນໃຫ້ອຸບາສົກສຸປປິຍະຮູ້

ຂຓະນັ້ນ ອຸບາສົກສຸປປິຍະຣ່າເຣິງດີໃຈວ່າ ອັສຈັຣຍ໌ນັກຊາວເຮົາບໍ່ເຄີຍມີເລີຍຊາວເຮົາ ແມ່ສຸປປິຍາ ນີ້ມີສັທສາເລື່ອມໃສເຖິງແກ່ສລະເນື້ອຂອງຕົນເອງ ສິ່ງໃດອື່ນເປັນຫຍັງນາງຈະໃຫ້ບໍ່ໄດ້ລະ ແລ້ວເຂົ້າໄປເຝົ້າ ພຣະຜູ້ມີພຣະກາຄ. ຖວາຍບັງຄົມນັ່ງຢູ່ ໓ ທີ່ຄວຣສ່ວນຂ້າງນຶ່ງ ອຸບາສົກສຸປປິຍະນັ່ງຮຽບຮ້ອຍແລ້ວ

ໄດ້ຂາບທູລຄຳນີ້ແດ່ພຣະຜູ້ມີພຣະກາຄວ່າ ຂ້ານ້ອຍ ຂໍພຣະຜູ້ມີພຣະກາຄພ້ອມດ້ວຍພຣະສົງฆ໌ ຈົ່ງຫຣົງກຣຸຕາໂປຼດຮັບກັຕຕາຫາຣຂອງຂ້າພຣະພຸທສເຈົ້າໃນມື້ອື່ນເຊົ້າເພື່ອຈເຣີນມຫາກຸສົລ ແລະປີຕິປຼາໂມທຍ໌ແກ່ຂ້າພຣະພຸທສເຈົ້າດ້ວຍເທີ້ນ ພຣະຜູ້ມີພຣະກາຄຫຣົງຮັບນິມົນຕ໌ໂດຍດຸษณີກາພ ເມື່ອອຸບາສິກາສຸປປີຍະຮູ້ກາຣຮັບນິມົນຕ໌ຂອງພຣະຜູ້ມີພຣະກາຄແລ້ວລຸກຈາກທີ່ນັ່ງ ຖວາຍບັງຄົມພຣະຜູ້ມີພຣະກາຄ ທຳປະທັກษິณ ແລ້ວກັບໄປ ແລະສັ່ງໃຫ້ຕົກແຕ່ງຂອງຍ້ຳຂອງຈັນອັນປະณີຕໂດຍຜ່ານຣາຕຣີນັ້ນ ແລ້ວໃຫ້ຄົນໄປຂາບທູລກັຕກາລແດ່ພຣະຜູ້ມີພຣະກາຄວ່າ ເຖິງເວລາແລ້ວ ຂ້ານ້ອຍ ກັຕຕາຫາຣແລ້ວແລ້ວ.

ຂณะນັ້ນເປັນເວລາເຊົ້າ ພຣະຜູ້ມີພຣະກາຄຫຣົງຄອງອັນຕຣວາສົກ ແລ້ວຖືບາຕຣ໌ຈີວຣສເດັຈໄປສູ່ນິເວສນ໌ຂອງອຸບາສິກາສຸປປີຍະ ເມື່ອເຖິງແລ້ວປະທັບນັ່ງເຫນືອພຸທສອາສນ໌ທີ່ເຂົາຈັດຖວາຍພ້ອມດ້ວຍພຣະສົງฆ໌ ຈຶ່ງອຸບາສິກາສຸປປີຍະເຂົ້າໄປເຝົ້າພຣະຜູ້ມີພຣະກາຄ ຖວາຍບັງຄົມແລ້ວໄດ້ຢືນຢູ່ ໣ ທີ່ຄວຣສ່ວນຂ້າງນຶ່ງ

ພຣະຜູ້ມີພຣະກາຄໄດ້ຕຣັສຖາມອຸບາສິກາສຸປປີຍະຜູ້ຢືນຢູ່ ໣ ທີ່ຄວຣສ່ວນຂ້າງນຶ່ງວ່າ ອຸບາສິກາສຸປປີຍາໄປໃສ?

ອຸ. ນາງປ່ວຍ ຂ້ານ້ອຍ

ພ. ຖ້າເຊັ່ນນັ້ນ ເຊີญອຸບາສິກາສຸປປີຍາມາ

ອຸ. ນາງບໍ່ສາມາຖ ຂ້ານ້ອຍ

ພ. ຖ້າເຊັ່ນນັ້ນ ພວກທ່ານຊ່ວຍກັນໂຈມພາມາ

ຂณะນັ້ນ ອຸບາສິກາສຸປປີຍະໄດ້ໂຈມອຸບາສິກາສຸປປີຍາມາເຝົ້າ ພ້ອມກັນນາງໄດ້ເຫັນພຣະຜູ້ມີພຣະກາຄ ແຜລໃຫຍ່ພຽງນັ້ນໄດ້ງອກເຕັມ ມີຜິວພັຣຕ໌ຮຽບສນິທ ເກີດໂລມຊາຕິທັນທີ ຈຶ່ງອຸບາສິກາສຸປປີຍະແລະອຸບາສິກາສຸປປີຍາ ພາກັນຣ່າເຣິງຍິນດີວ່າ ອັສຈັຣຍ໌ນັກຊາວເຮົາ ບໍ່ເຄີຍມີເລີຍຊາວເຮົາ ພຣະຕຖາຄົຕຫຣົງມີຣິທທິ໌ຫຼາຍ ຫຣົງມີພຣະອານຸກາພຫຼາຍ ເພາະພໍເຫັນພຣະອົງຄ໌ເທົ່ານັ້ນ ແຜລໃຫຍ່ໂຕຍັງງອກຂຶ້ນເຕັມທັນທີ ມີຜິວພັຣຕ໌ຮຽບສນິທ ເກີດໂລມຊາຕິ ແລ້ວອັງຄາສກິກຂຸສົງฆ໌ມີພຣະພຸທສເຈົ້າເປັນປະມຸຂດ້ວຍຂາທນີຍໂກຊນີຍາຫາຣອັນປະณີຕດ້ວຍມືຂອງຕົນ ຈົນຍັງພຣະຜູ້ມີພຣະກາຄຜູ້ສເວີຍສເດັຈແລ້ວ ຫຣົງນຳພຣະຫັຕຖ໌ອອກຈາກບາຕຣ໌ໃຫ້ຫ້າມກັຕຣ໌ແລ້ວ ນັ່ງຢູ່ ໣ ທີ່ຄວຣສ່ວນຂ້າງນຶ່ງ.

ພຣະຜູ້ມີພຣະກາຄ ຫຣົງຊີ້ແຈງໃຫ້ອຸບາສິກາສຸປປີຍະແລະອຸບາສິກາສຸປປີຍາ ເຫັນແຈ້ງ ສມາທານ ອາຈຫານ ຣ່າເຣິງດ້ວຍທັມມີກຖາແລ້ວ ຫຣົງລຸກຈາກທີ່ປະທັບສເດັຈກັບ.

ປະຊຸມສົງຄ໌ທຮົງສອບຖາມ

[໕໙] ຄັ້ງນັ້ນ ພຣະຜູ້ມີພຣະກາຄຮັບສັ່ງໃຫ້ປະຊຸມກິກຂຸສົງຄ໌ໃນເພາະເຫຕຸເປັນເຄົ້າມູລນັ້ນ ໃນເພາະເຫຕຸແຮກເກີດນັ້ນ ແລ້ວທຮົງສອບຖາມກິກຂຸທັ້ງຫລາຍວ່າ ດູຮາກິກຂຸທັ້ງຫລາຍ ກິກຂຸອົງຄ໌ໃດ ຂໍຊີ້ນຕໍ່ອຸບາສິກາສຸປປິຢາ.

ເມື່ອພຣະຜູ້ມີພຣະກາຄຕຮັສເຊັ່ນນີ້ແລ້ວ ກິກຂຸອົງຄ໌ນັ້ນໄດ້ທູລຮັບຕໍ່ພຣະຜູ້ມີພຣະກາຄວ່າ ຂ້າພຣະ-ພຸທສເຈົ້າ ໄດ້ຂໍຊີ້ນຕໍ່ອຸບາສິກາສຸປປິຢາ ຂ້ານ້ອຍ

ພ. ເຂົານຳມາຖວາຍແລ້ວບໍ່ ກິກຂຸ

ກິ. ເຂົານຳມາຖວາຍແລ້ວ ຂ້ານ້ອຍ

ພ. ທ່ານຈັນແລ້ວບໍ່ ກິກຂຸ

ກິ. ຈັນແລ້ວ ຂ້ານ້ອຍ

ພ. ທ່ານພິຈາຣຕາຫຼືຫຍັງ ກິກຂຸ

ກິ. ບໍ່ໄດ້ພິຈາຣຕາ ຂ້ານ້ອຍ

ທຮົງຕິຕຽນ

ພຣະຜູ້ມີພຣະກາຄພຸທສເຈົ້າທຮົງຕິຕຽນວ່າ ດູຮາໂມຄບຸຣຸຍ ເປັນຫຍັງທ່ານຈຶ່ງບໍ່ໄດ້ພິຈາຣຕາ ແລ້ວຈັນເນື້ອລະ ທ່ານຈັນເນື້ອມນຸຍ໌ແລ້ວ ການກະທຳຂອງທ່ານທັ່ນ ບໍ່ເປັນໄປເພື່ອຄວາມເລື່ອມໃສຂອງຊຸມຊົນທີ່ຍັງບໍ່ເລື່ອມໃສ ... ເມື່ອແລ້ວທຮົງເຮັດສັມມີກາຖາຮັບສັ່ງກະກິກຂຸທັ້ງຫລາຍວ່າ

ພຣະພຸທສບັລລັຕິຫ້າມຈັນເນື້ອມນຸຍ໌

ດູຮາກິກຂຸທັ້ງຫລາຍ ບັຣດາຄົນທີ່ມີສັທສາເລື່ອມໃສມີຢູ່ ເຂົາສລະເນື້ອຂອງເຂົາຖວາຍກໍໄດ້ ດູຮາກິກຂຸທັ້ງຫລາຍ ກິກຂຸບໍ່ຄວຣຈັນເນື້ອມນຸຍ໌ ອົງຄ໌ໃດຈັນ ຕ້ອງອາບັຕິຖຸລລັຈຈັຍ ປະການນຶ່ງ ກິກຂຸຍັງບໍ່ໄດ້ພິຈາຣຕາ ບໍ່ຄວຣຈັນເນື້ອ ອົງຄ໌ໃດຈັນ ຕ້ອງອາບັຕິທຸກກົຄ.

ພຣະພຸທສບັລລັຕິຫ້າມຈັນເນື້ອຊ້າງ

[໖໐] ກໍໂດຍສມັຍນັ້ນແລ ຊ້າງຫລວງລົ້ມລົງຫລາຍເຊືອກ ສມັຍອັຕຄັຕອາຫາຣ ປະຊາຊົນພາກັນບໍຣິໂກຄເນື້ອຊ້າງ ແລະຖວາຍແກ່ພວກກິກຂຸຜູ້ທ່ຽວບິຕຫບາຕ ກິກຂຸທັ້ງຫລາຍຈັນຊີ້ນຊ້າງ ປະຊາຊົນຈຶ່ງເພ່ງໂທຍ ຕິຕຽນ ໂພນທະນາວ່າ ເປັນຫຍັງພຣະສມຕະເຊື້ອສາຍພຣະສາກຍບຸຕຣ໌ຈຶ່ງໄດ້ຈັນເນື້ອຊ້າງລະ ເພາະຊ້າງເປັນຣາຊພາຫນະ ຖ້າເຈົ້າມຫາຊີວິຕທຮົງຮູ້ຄົງບໍ່ທຮົງເລື່ອມໃສຕໍ່ພຣະສມຕະ

เหล่านั้นเป็นแม่ ภิกຂุทั้งหลายຂาบທູลเรื่องนั้นแด่พระผู้มีพระภาค. พระผู้มีพระภาคหรົງບັນຍັດ
ห้ามแก่ภิกຂุทั้งหลายว่า ดูราภิกຂุทั้งหลาย ภิกຂุบ่ควรฉันเนื้อຊ้าง ອົງຄ໌ໃດฉัน ต้องอาบัติทุกกฎ.

พระพุทธบັນຍັດຫ້າມฉันเนื้อม้า

สมัยต่อมา ม้าหลวงตายหลาย สมัยອັດຄັດอาหาร ປະຊາຊົນพากันบໍລິໂພคเนื้อม้า และ
ถวายแก่ภิกຂุผู้ท่องบิณฑบาต ภิกຂุทั้งหลายฉันຊີ້ນม้า ປະຊາຊົນจึงเพ่งโทษ ติเตียน โพนทะนาว่า
เป็นหยังพระสมณะเชื้อสายพระศากยบุตร์จึงได้ฉันຊີ້ນม้าละ เพาะม้าเป็นราชพาหนะ ถ้าเจ้ามหา
ชีวิตหรົງຮູ້ คงบ่เลื่อมใสต่อพระสมณะเหล่านั้นเป็นแม่ ภิกຂุทั้งหลายຂาบທູลเรื่องนั้นแด่พระผู้มี
พระภาค. พระผู้มีพระภาคหรົງບັນຍັດห้ามแก่ภิกຂุทั้งหลายว่า ดูราภิกຂุทั้งหลาย ภิกຂุบ่ควรฉัน
เนื้อม้า ອົງຄ໌ໃດฉัน ต้องอาบัติทุกกฎ.

พระพุทธบັນຍັດຫ້າມฉันเนื้อสุนัข

สมัยต่อมา เຖິງຄາວອັດຄັດอาหาร ປະຊາຊົນพากันบໍລິໂພคเนื้อสุนัข และถวายแก่พวก
ภิกຂุผู้ท่องบิณฑบาต ภิกຂุทั้งหลายฉันຊີ້ນสุนัข ປະຊາຊົນจึงเพ่งโทษ ติเตียน โพนทะนาว่า
เป็นหยังพระสมณะเชื้อสายพระศากยบุตร์จึงได้ฉันຊີ້ນสุนัขละ เพาะสุนัขเป็นสัตว์บ่จิบบ่งาม
ภิกຂุทั้งหลายຂาบທູลเรื่องนั้นแด่พระผู้มีพระภาค. พระผู้มีพระภาคหรົງບັນຍັດห้ามแก่ภิกຂุทั้งหลาย
ว่า ดูราภิกຂุทั้งหลาย ภิกຂุบ่ควรฉันเนื้อสุนัข ອົງຄ໌ໃດฉัน ต้องอาบัติทุกกฎ.

พระพุทธบັນຍັດຫ້າມฉันเนื้องູ

สมัยต่อมา เຖິງຄາວອັດຄັດอาหาร ປະຊາຊົນพากันบໍລິໂພคเนื้องູ และถวายแก่พวกภิกຂุ
ผู้ท่องบิณฑบาต ภิกຂุทั้งหลายฉันຊີ້ນງູ ປະຊາຊົນจึงเพ่งโทษ ติเตียน โพนทะนาว่า เป็นหยัง
พระสมณะเชื้อสายพระศากยบุตร์จึงได้ฉันຊີ້ນງູละ เพาะງູเป็นสัตว์บ่จิบบ่งาม แม้พระยานาค
ชื่อสุปัสสะก็เข้าไปในพุทธสำนักถวายบังคมพระผู้มีพระภาคแล้วได้ยืนอยู่ ณ ที่ส่วนข้างหนึ่ง
ได้ຂาบທູลคำนี้แด่พระผู้มีพระภาคว่า ข้าน้อย บัดดาที่บ่มีศรัทธา บ่เลื่อมใสมีอยู่
มันຄົງບຽດບຽນพวกภิกຂุจำนวนหน้อยแด่ ຂอງປະທານพระโอกาส ข้าน้อย ขอพระ-
คุณเจ้าทั้งหลายโปรดກຣຸณาอย่าฉันຊີ້ນງູ ลำดับนั้นพระผู้มีพระภาคหรົງຊີ້ແຈງให้พระยานาคสุปัสสะ
เห็นแจ้ง สมาทาน อาจหาญ ร่าเริงด้วยธัมมีกถา เมื่อพระยานาคสุปัสสะอันพระผู้มีพระภาค
หรົງให้เห็นแจ้งสมาทาน อาจหาญ ร่าเริงด้วยธัมมีกถาแล้วถวายบังคมพระผู้มีพระภาคทำ
ປະທັກษิณกับไป

ລຳດັບນັ້ນ ພຣະຜູ້ມີພຣະກາຄທຣົງເຮັດສັມມີກາຖາ ໃນເພາະເຫຕຸເປັນເຄົ້າມູລນັ້ນ ໃນເພາະເຫຕຸແຮກເກີດນັ້ນ ແລ້ວຮັບສັ່ງກະກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ກິກຂຸບໍ່ຄວຣຈັນເນື້ອງູ ອົງຄ໌ໃດຈັນ ຕ້ອງອາບັຕິທຸກກົຜ.

ພຣະພຸທສບັລລັຕິຫ້າມຈັນເນື້ອຣາຊສີຫ໌

ສມັຍຕໍ່ມາ ພວກພູານຜ່າຣາຊສີຫ໌ແລ້ວບໍຣິໂກຄເນື້ອຣາຊສີຫ໌ ແລະຖວາຍແກ່ພວກກິກຂຸຜູ້ທ່ຽວບິຕທບາຕ ພວກກິກຂຸຈັນເນື້ອຣາຊສີຫ໌ແລ້ວຢູ່ໃນປ່າ ຝູງຣາຊສີຫ໌ຜ່າພວກກິກຂຸເສັຽ ເພາະໄດ້ກິ່ນເນື້ອຣາຊສີຫ໌ ກິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄທຣົງບັລລັຕິຫ້າມກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ກິກຂຸບໍ່ຄວຣຈັນເນື້ອຣາຊສີຫ໌ ອົງຄ໌ໃດຈັນ ຕ້ອງອາບັຕິທຸກກົຜ.

ພຣະພຸທສບັລລັຕິຫ້າມຈັນເນື້ອເສືອໂຄ່ງ

ສມັຍຕໍ່ມາ ພວກພູານຜ່າເສືອໂຄ່ງແລ້ວບໍຣິໂກຄເນື້ອເສືອໂຄ່ງແລະຖວາຍແກ່ພວກກິກຂຸຜູ້ທ່ຽວບິຕທບາຕ ພວກກິກຂຸຈັນເສືອໂຄ່ງແລ້ວຢູ່ໃນປ່າ ເຫລົ່າເສືອໂຄ່ງຜ່າພວກກິກຂຸເສັຽເພາະໄດ້ກິ່ນເນື້ອເສືອໂຄ່ງ ກິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄທຣົງບັລລັຕິຫ້າມກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ກິກຂຸບໍ່ຄວຣຈັນເນື້ອເສືອໂຄ່ງ ອົງຄ໌ໃດຈັນ ຕ້ອງອາບັຕິທຸກກົຜ.

ພຣະພຸທສບັລລັຕິຫ້າມຈັນເນື້ອເສືອເຫລືອງ

ສມັຍຕໍ່ມາ ພວກພູານຜ່າເສືອເຫລືອງ ແລ້ວບໍຣິໂກຄເນື້ອເສືອເຫລືອງແລະຖວາຍແກ່ພວກກິກຂຸຜູ້ທ່ຽວບິຕທບາຕ ພວກກິກຂຸຈັນເນື້ອເສືອເຫລືອງແລ້ວຢູ່ໃນປ່າ ເຫລົ່າເສືອເຫລືອງຜ່າພວກກິກຂຸເສັຽເພາະໄດ້ກິ່ນເນື້ອເສືອເຫລືອງ ກິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄທຣົງບັລລັຕິຫ້າມກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ກິກຂຸບໍ່ຄວຣຈັນເນື້ອເສືອເຫລືອງ ອົງຄ໌ໃດຈັນ ຕ້ອງອາບັຕິທຸກກົຜ.

ພຣະພຸທສບັລລັຕິຫ້າມຈັນເນື້ອຫມີ

ສມັຍຕໍ່ມາ ພວກພູານຜ່າຫມີແລ້ວບໍຣິໂກຄເນື້ອຫມີ ແລະຖວາຍແກ່ພວກກິກຂຸຜູ້ທ່ຽວບິຕທບາຕ ພວກກິກຂຸຈັນຫມີແລ້ວຢູ່ໃນປ່າເຫລົ່າຫມີຜ່າພວກກິກຂຸເສັຽເພາະໄດ້ກິ່ນເນື້ອຫມີ ກິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄທຣົງບັລລັຕິຫ້າມກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ກິກຂຸບໍ່ຄວຣຈັນເນື້ອຫມີ ອົງຄ໌ໃດຈັນ ຕ້ອງອາບັຕິທຸກກົຜ.

ພຣະພຸທສບັຄລັຕິຫ້າມລັນເນື້ອເສືອດາວ

ສມັຍຕໍ່ມາ ພວກພຼານຜ່າເສືອດາວແລ້ວບໍຣິໂພຄເນື້ອເສືອດາວ ແລະຖວາຍແກ່ພວກກິກຂຸຜູ້ທ່ຽວບິຕທບາຕ ພວກກິກຂຸລັນເນື້ອເສືອດາວແລ້ວຢູ່ໃນປ່າ ເຫລົ່າເສືອດາວຜ່າພວກກິກຂຸເສັ່ງ ເພາະໄດ້ກິ່ນເນື້ອເສືອດາວ ກິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄ ທຣົງບັຄລັຕິຫ້າມກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ກິກຂຸບໍ່ຄວຣລັນເນື້ອເສືອດາວ ອົງຄ໌ໃດລັນ ຕ້ອງອາບັຕິທຸກກົຜ.

ສຸປປິຍກາຕວາຣ ທີ່ ໔ ຈົບ.

ເຣື່ອງພຣາຫ໌ມຕ໌ຖວາຍຢາຄູແລະຂນົມປຸງດ້ວຍນ້ຳຫວານ

[໖໑] ຄັ້ງນັ້ນ ພຣະຜູ້ມີພຣະກາຄປະທັບຢູ່ໃນພຣະນຄຣພາຣາຕສີ ຕາມພຣະພຸທສາກິຣົມຕ໌ແລ້ວສເດັຈພຣະພຸທສດຳເນີນມຸ່ງໄປທາງອັນສກວິນທະຊົນບົທ ພ້ອມດ້ວຍກິກຂຸສົງຜ໌ໝູ່ໃຫຍ່ປະມາຕ ໑,໒໕໐ ຮູປ ຄູາວນັ້ນປະຊາຊົນຊາວຊົນບົທບັຣທຸກເກືອແດ່ນ້□ານັນແດ່ ເຂົ້າສາຣແດ່ ຂອງຄວຣຍ້ຳແດ່ ເປັນຈຳນວນຫຼາຍມາໃນກຽນ ຍ່າງຕິດຕາມກິກຂຸສົງຜ໌ ມີພຣະພຸທສເຈົ້າເປັນປະມຸຂມາຂ້າງຫລັງໆ ດ້ວຍຕັ້ງໃຈວ່າ ໄດ້ໂອກາສເມື່ອໃດຈະທຳກັຕຕາຫາຣຖວາຍເມື່ອນັ້ນ ປະກາຣນຶ່ງ ຄົນກິນເດນປະມາຕ ໕໐໐ ຄົນກໍຄອຍຍ່າງຕິດຕາມໄປນຳ ເມື່ອພຣະຜູ້ມີພຣະກາຄສເດັຈພຣະພຸທສດຳເນີນຜ່ານຣະຍະທາງໂດຍລຳດັບສເດັຈເຖິງອັນສກວິນທຊົນບົທ.

ຂຕະນັ້ນພຣາຫ໌ມຕ໌ຄົນນຶ່ງ ຍັງຫາໂອກາສບໍ່ໄດ້ ຈຶ່ງດຳຣິໃນໃຈວ່າເຮົາຍ່າງຕິດຕາມກິກຂຸສົງຜ໌ມີພຣະພຸທສເຈົ້າເປັນປະມຸຂມາກວ່າ ໔ ເດືອນແລ້ວ ດ້ວຍຫມາຍໃຈວ່າໄດ້ໂອກາສເມື່ອໃດ ຈະທຳກັຕຕາຫາຣຖວາຍເມື່ອນັ້ນ ແຕ່ກໍຫາໂອກາສບໍ່ໄດ້ ປະກາຣນຶ່ງ ເຮົາໂຕຄົນດຽວແລະຍັງເສັ່ງປະໂຍຊນ໌ທາງພຣາວາສໄປມາກແນວໃດນໍ ເຮົາຄວຣກວດເບິ່ງໂຮງອາຫາຣ ສິ່ງໃດບໍ່ມີໃນໂຮງອາຫາຣ ເຮົາຄວຣຕົກແຕ່ງສິ່ງນັ້ນຖວາຍ ແລ້ວຈຶ່ງກວດເບິ່ງໂຮງອາຫາຣບໍ່ໄດ້ເຫັນມີຂອງ ໒ ສິ່ງ ຄືຢາຄູ ໑ ຂນົມປຸງດ້ວຍນ້ຳຫວານ ໑ ຈຶ່ງເຂົ້າໄປຫາທ່ານພຣະອານົນທ໌ເຖິງສຳນັກ ເມື່ອແລ້ວໄດ້ຂາບຮຽນຄຳນີ້ແດ່ທ່ານອານົນທ໌ວ່າ ຂ້າແຕ່ພຣະຄຸຕເຈົ້າອານົນທ໌ ຂ້າພເຈົ້າຫາໂອກາສໃນທີ່ນີ້ບໍ່ໄດ້ຈຶ່ງໄດ້ດຳຣິໃນໃຈວ່າ ຕົນຍ່າງຕິດຕາມກິກຂຸສົງຜ໌ ມີພຣະພຸທສເຈົ້າເປັນປະມຸຂມາ

ກວ່າ ໔ ເດືອນແລ້ວ ດ້ວຍຫມາຍໃຈວ່າໄດ້ໂອກາສເມື່ອໃດ ຈະທຳພັຕຕາຫາຣຖວາຍເມື່ອນັ້ນ ແຕ່ກໍຫາໂອກາສບໍ່ໄດ້ ປະກາຣນຶ່ງ ຕົນໂຕຄົນດຽວແລະຍັງເສັຽປະໂຍຊນ໌ທາງຄຣາວາສຂອງຕົນໄປຫຼາຍ ແນວໃດນໍ ຕົນຄວຣກວດເບິ່ງໂຮງອາຫາຣ ສິ່ງໃດບໍ່ມີໃນໂຮງອາຫາຣ ຄວຣຕົກແຕ່ງສິ່ງນັ້ນຖວາຍ ດັ່ງນີ້ ຂ້າແຕ່ພຣະຄຸຓເຈົ້າອານົນທ໌ ຂ້າພເຈົ້ານັ້ນກວດເບິ່ງໂຮງອາຫາຣ ບໍ່ໄດ້ເຫັນມີຂອງ ໘ ສິ່ງ ຄື ຢາຄູ ໑ ຂນົມປຸງດ້ວຍນ້ຳຫວານ ໑ ຖ້າຂ້າພເຈົ້າຕົກແຕ່ງຢາຄູ ແລະຂນົມປຸງດ້ວຍນ້ຳຫວານຖວາຍ ທ່ານພຣະໂຄດົມຈະຕ້ອງຮັບຂອງຂ້າພເຈົ້າບໍ່ຂ້ານ້ອຍ?

ທ່ານພຣະອານົນທ໌ກ່າວວ່າ ດູຣາພຣາຫ໌ມຓ໌ ຖ້າເຊັ່ນນັ້ນຂ້ານ້ອຍຈະທູລຖາມພຣະຜູ້ມີພຣະກາຄ ດັ່ງນີ້ແລ້ວຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄທັນທີ.

ພຣະຜູ້ມີພຣະກາຄຕຣັສວ່າ ດູຣາອານົນທ໌ ຖ້າເຊັ່ນນັ້ນພຣາຫ໌ມຓ໌ຈົ່ງຕົກແຕ່ງ ຖວາຍເທີ້ນ.

ທ່ານພຣະອານົນທ໌ ບອກພຣາຫ໌ມຓ໌ວ່າ ດູຣາພຣາຫ໌ມຓ໌ ຖ້າເຊັ່ນນັ້ນທ່ານຕົກແຕ່ງຖວາຍໄດ້ລະ.

ຈຶ່ງພຣາຫ໌ມຓ໌ນັ້ນຕົກແຕ່ງຢາຄູແລະຂນົມປຸງດ້ວຍນ້ຳຫວານຫຼວງຫຼາຍໂດຍຜ່ານຣາຕຣີນັ້ນ ແລ້ວນ້ອມເຂົ້າໄປຖວາຍແດ່ພຣະຜູ້ມີພຣະກາຄຂາບທູລວ່າ ຂໍທ່ານພຣະໂຄດົມໂປຼດກຣຸຓາຮັບຢາຄູແລະຂນົມປຸງດ້ວຍນ້ຳຫວານຂອງຂ້າພຣະພຸທສເຈົ້າດ້ວຍເທີ້ນ.

ພຣະຜູ້ມີພຣະກາຄຕຣັສວ່າ ດູຣາພຣາຫ໌ມຓ໌ ຖ້າເຊັ່ນນັ້ນທ່ານຈົ່ງຖວາຍແກ່ກິກຂຸທັ້ງຫລາຍໆ ບໍ່ພໍໃຈບໍ່ຮັບ ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກິກຂຸທັ້ງຫລາຍ ພວກທ່ານຈົ່ງຮັບປະເຄນຈັນເທີ້ນ.

ຈຶ່ງພຣາຫ໌ມຓ໌ນັ້ນອັງຄາສກິກຂຸສົງຄ໌ມີພຣະພຸທສເຈົ້າເປັນປະມຸຂ ດ້ວຍຢາຄູແລະຂນົມປຸງດ້ວຍນ້ຳຫວານຫຼວງຫຼາຍດ້ວຍມືຂອງຕົນ ຈົນຍັງພຣະຜູ້ມີພຣະກາຄຜູ້ສເວີຍແລ້ວລ້າງພຣະຫັຕຖ໌ແລ້ວ ທຣົງນຳພຣະຫັຕຖ໌ອອກຈາກບາຕຣ໌ ໃຫ້ຫ້າມກັຕຣ໌ແລ້ວ ຈຶ່ງນັ່ງຢູ່ ຓ ທີ່ຄວຣສ່ວນຂ້າງນຶ່ງ.

ເຂົ້າຢາຄູມີຄຸຓ ໑໐ ຢ່າງ

ພຣະຜູ້ມີພຣະກາຄໄດ້ຕຣັສພຣະພຸທສພົຈນ໌ນີ້ກະພຣາຫ໌ມຓ໌ນັ້ນ ຜູ້ນັ່ງຢູ່ ຓ ທີ່ຄວຣສ່ວນຂ້າງນຶ່ງວ່າ ດູຣາພຣາຫ໌ມຓ໌ ເຂົ້າຢາຄູມີຄຸຓ ໑໐ ຢ່າງນີ້ ໑໐ ຢ່າງເປັນແນວໃດ ຄືຜູ້ໃຫ້ເຂົ້າຢາຄູ ຊື່ວ່າໃຫ້ອາຍຸ ໑ ໃຫ້ວັຣຓະ ໑ ໃຫ້ສຸຂ ໑ ໃຫ້ກຳລັງ ໑ ໃຫ້ປຕິກາຓ ໑ ເຂົ້າຢາຄູທີ່ດື່ມແລ້ວກຳຈັດຄວາມຫິວ ໑ ບັຣເທົາຄວາມຣະຫາຍ ໑ ທຳລົມໃຫ້ຍ່າງສະດວກ ໑ ລ້າງລຳໄສ້ ໑ ຍ່ອຍອາຫາຣໃຫມ່ທີ່ເຫລືອຢູ່ ໑ ດູຣາພຣາຫ໌ມຓ໌ ເຂົ້າຢາຄູມີຄຸຓ ໑໐ ຢ່າງນີ້ແລ.

ພຣະຜູ້ມີພຣະກາຄໄດ້ຕຣັສໄວຍາກຣຓ໌ພົຈນ໌ນີ້ ເມື່ອແລ້ວພຣະສຸຄົຕຜູ້ພຣະສາສດາຈຶ່ງໄດ້ຕຣັສຄາຖາອນຸໂມທນານີ້ຕໍ່ໄປໃນກາຍຫລັງ ວ່າດັ່ງນີ້:-

คาถาอะนุโมทนา

[๖๔] ทายิกาใดถวายเຂົ້າຢາຄູໂດຍເຄົາຣົພຕາມກາລ ແກ່ປຕິຄາຫົກາ

ຜູ້ສຳຣວມແລ້ວ ບໍຣິໂភຄໂກຊນາອັນຜູ້ອື່ນຖວາຍ ທາຍິການັ້ນ

ຊື່ວ່າຕາມເພີ່ມໃຫ້ຊຶ່ງສຖານະ ໑໐ ຢ່າງແກ່ປຕິຄາຫົການັ້ນ ອາຍຸ

ວັຣຓະ ສຸຂະ ພລະ ແລະປຕິກາຓ ຍ່ອມເກີດແກ່ປຕິຄາຫົການັ້ນ

ແຕ່ນັ້ນຢາຄູຍ່ອມກຳຈັດຄວາມຫິວ ຄວາມຣະຫາຍ ທຳລົມໃຫ້ຍ່າງ

ສະດວກ ລ້າງລຳໄສ້ ແລະຍ່ອຍອາຫາຣ ຢາຄູນັ້ນພຣະສຸຄົຕຕຣັສ

ສັຣເສີຍວ່າເປັນເກສັຊ ເພາະເຫຕຸນັ້ນແລ ມນຸษຍ໌ຊົນທີ່ຕ້ອງ

ການສຸຂຍັ່ງຍືນ ປັຕຖນາສຸຂທີ່ເລີສ ຫຼືຢາກໄດ້ຄວາມງາມອັນ

ສວຍສຸດໃນມນຸษຍ໌ ຈຶ່ງຄວຣແທ້ເພື່ອຖວາຍເຂົ້າຢາຄູ.

ພຣະພຸທຮານຸຍາຕເຂົ້າຢາຄູແລະຂນົມປຸງດ້ວຍນ້ຳຫວານ

[๖๖] ເມື່ອພຣະຜູ້ມີພຣະກາຄທຣົງອະນຸໂມທນາແກ່ພຣາຫ໌ມຓ໌ນັ້ນດ້ວຍ ໓ ຄາຖານີ້ແລ້ວ ສເດັຈລຸກຈາກທີ່ປະທັບກັບໄປ.

ເມື່ອແລ້ວພຣະຜູ້ມີພຣະກາຄທຣົງເຮັດສັມມີກຖາ ໃນເພາະເຫຕຸເປັນເຄົ້າມູລນັ້ນ ໃນເພາະເຫຕຸແຣກເກີດນັ້ນ ແລ້ວຣັບສັ່ງກະກິກຊຸທັ້ງຫລາຍວ່າ ດູຣາກິກຊຸທັ້ງຫລາຍ ເຮົາອະນຸຍາຕເຂົ້າຢາຄູ ແລະຂນົມປຸງດ້ວຍນ້ຳຫວານ.

ເຣື່ອງມຫາອຳມາຕຍ໌ຜູ້ເຣີ່ມເລື່ອມໃສ

[๖๔] ປະຊາຊົນຮູ້ຂ່າວວ່າ ພຣະຜູ້ມີພຣະກາຄທຣົງອະນຸຍາຕຢາຄູແລະຂນົມປຸງດ້ວຍນ້ຳຫວານແກ່ກິກຊຸທັ້ງຫລາຍ ຈຶ່ງຕົກແຕ່ງຢາຄູທີ່ແຂ້ນແລະຂນົມປຸງດ້ວຍນ້ຳຫວານຖວາຍແຕ່ເຊົ້າ ກິກຊຸທັ້ງຫລາຍທີ່ໄດ້ຮັບອັງຄາສດ້ວຍຢາຄູທີ່ແຂ້ນແລະຂນົມປຸງດ້ວຍນ້ຳຫວານແຕ່ເຊົ້າ ຈັນກັຕຕາຫາຣໃນໂຣງອາຫາຣບໍ່ໄດ້ຕາມທີ່ຄາດໝາຍ ຄາວນັ້ນ ມຫາອຳມາຕຍ໌ຄົນນຶ່ງຜູ້ເຣີ່ມເລື່ອມໃສ ໄດ້ນິມົນຕ໌ກິກຊຸສົງฆ໌ມີພຣະພຸທຮເຈົ້າເປັນປະມຸຂເພື່ອຈັນໃນມື້ອື່ນເຊົ້າແລະໄດ້ມີຄວາມຄຶດວ່າ ຖ້າແນວໃດ ເຮົາຄວຣຕົກແຕ່ງສຳຫຼັບມັງສະ ໑,๔๕໐ ທີ່ເພື່ອກິກຊຸ ໑,๔๕໐ ຮູປ ນ້ອມເຂົ້າໄປຖວາຍກິກຊຸອົງຄ໌ລະ ໑ ຊຸດ ແລ້ວສັ່ງໃຫ້ຕົກແຕ່ງຂາທນີຍໂກຊນີຍາຫາຣອັນປະຓີຕແລະຊຸດມັງສະ ໑,๔๕໐ ທີ່ ໂດຍຜ່ານຣາຕຣີນັ້ນ ແລ້ວສັ່ງໃຫ້ເຈົ້າພນັກງານໄປຂາບທູລກັຕກາລແດ່ພຣະຜູ້ມີພຣະກາຄວ່າ ເຖິງເວລາແລ້ວ ຂ້ານ້ອຍ ກັຕຕາຫາຣສຳເຣັຈແລ້ວ.

ເມື່ອເວລາເຊົ້າ ພຣະຜູ້ມີພຣະກາຄທຣົງຄອງອັນຕຣວາສົກແລ້ວ ຖືບາຕຣ໌ຈີວຣສເດັຈພຣະພຸທສ ດຳເນີນສູ່ນິເວສນ໌ຂອງມຫາອຳມາຕຍ໌ຜູ້ເຣີ່ມເລື່ອມໃສນັ້ນແລ້ວ ປະທັບນັ່ງເຫນືອພຣະພຸທສອາສນ໌ທີ່ເຂົາຈັດຖວາຍ ພ້ອມດ້ວຍພຣະສົງຄ໌ ຈຶ່ງມຫາອຳມາຕຍ໌ຜູ້ເຣີ່ມເລື່ອມໃສນັ້ນ ອັງຄາສກິກຂຸທັ້ງຫລາຍຢູ່ໃນໂຮງອາຫາຣ

ກິກຂຸທັ້ງຫລາຍເວົ້າຢ່າງນີ້ວ່າ ຈົ່ງຖວາຍແຕ່ຫນ້ອຍເທີ້ນທ່ານ ຈົ່ງຖວາຍແຕ່ຫນ້ອຍເທີ້ນທ່ານ

ທ່ານມຫາອຳມາຕຍ໌ຂາບຮຽນວ່າ ທ່ານຂ້ານ້ອຍ ຂໍທ່ານທັ້ງຫລາຍຢ່າຮັບແຕ່ຫນ້ອຍໆ ດ້ວຍຄຶດວ່ານີ້ເປັນມຫາອຳມາຕຍ໌ທີ່ເຣີ່ມເລື່ອມໃສ ຂ້ານ້ອຍຕົກແຕ່ງຂາທນີຍໂກຊນີຍາຫາຣໄວ້ຫຼາຍ ກັບຊຸດມັງສະ ໑,໘໕໐ ທີ່ ຈະນ້ອມເຂົ້າໄປຖວາຍກິກຂຸອົງຄ໌ລະ ໑ ຊຸດ ຂໍທ່ານທັ້ງຫລາຍກຣຸຓາຮັບໃຫ້ພໍແກ່ຄວາມຕ້ອງການເທີ້ນ ຂ້ານ້ອຍ

ກິກຂຸທັ້ງຫລາຍວ່າ ທ່ານ ພວກອາຕມກາພຮັບແຕ່ຫນ້ອຍໆ ບໍ່ແມ່ນເພາະເຫຕຸນັ້ນເລີຍ ແຕ່ເພາະພວກອາຕມກາພໄດ້ຮັບອັງຄາສດ້ວຍຢາຄູທີ່ແຫ້ງ ແລະຂນົມປຸງດ້ວຍນ້ຳຫວານແຕ່ເຊົ້າ ຈັ່ງຊັ້ນ ພວກອາຕມກາພຈຶ່ງຂ້ານ້ອຍແຕ່ຫນ້ອຍໆ

ທັນໃດນັ້ນ ມຫາອຳມາຕຍ໌ຜູ້ເຣີ່ມເລື່ອມໃສນັ້ນຈຶ່ງເພ່ງໂທສ ຕິຕຽນ ໂພນທະນາວ່າ ເປັນຫຍັງພຣະຄຸຓເຈົ້າທັ້ງຫລາຍ ອັນຂ້ານ້ອຍນິມົນຕ໌ແລ້ວຈຶ່ງໄດ້ສັນຢາຄູທີ່ແຂ້ນຂອງຜູ້ອື່ນລະ ຂ້ານ້ອຍບໍ່ສາມາຖຈະຖວາຍໃຫ້ພໍແກ່ຄວາມຕ້ອງການຫຼື ແລ້ວໂກຼຣບໍ່ພໍໃຈ ເພ່ງຈະຫາໂທສໃຫ້ ໄດ້ບັຣຈຸບາຕຣ໌ຂອງກິກຂຸທັ້ງຫລາຍເຕັມພ້ອມກ່າວວ່າ ທ່ານທັ້ງຫລາຍຈະສັນກໍໄດ້ ນຳໄປກໍໄດ້ ເມື່ອແລ້ວອັງຄາສກິກຂຸສົງຄ໌ມີພຣະພຸທສເຈົ້າເປັນປະມຸຂ ດ້ວຍຂາທນີຍໂກຊນີຍາຫາຣອັນປະຓີຕດ້ວຍມືຂອງຕົນ ຈົນຍັງພຣະຜູ້ມີພຣະກາຄຜູ້ສເວີຍແລ້ວແລ້ວ ນຳພຣະຫັຕຖ໌ອອກຈາກບາຕຣ໌ໃຫ້ຫ້າມກັຕຣ໌ແລ້ວ ນັ່ງເຝົ້າຢູ່ ຓ ທີ່ຄວຣສ່ວນຂ້າງນຶ່ງ

ພຣະຜູ້ມີພຣະກາຄ ທຣົງຊີ້ແຈງແກ່ມຫາອຳມາຕຍ໌ຜູ້ເຣີ່ມເລື່ອມໃສນັ້ນ ຊຶ່ງນັ່ງເຝົ້າຢູ່ ຓ ທີ່ຄວຣສ່ວນຂ້າງນຶ່ງ ໃຫ້ເຫັນແຈ້ງ ສມາທານ ອາຈຫາຍ ຣ່າເຣີງ ດ້ວຍສັມມີກຖາແລ້ວ ທຣົງລຸກຈາກທີ່ປະທັບສເດັຈກັບ ເມື່ອພຣະຜູ້ມີພຣະກາຄສເດັຈກັບບໍ່ທັນນານ ມຫາອຳມາຕຍ໌ຜູ້ເຣີ່ມເລື່ອມໃສນັ້ນໄດ້ບັງເກີດຄວາມຣຳຄານແລະຄວາມເດືອດຮ້ອນວ່າ ບໍ່ແມ່ນລາກຂອງເຮົານໍ ລາກຂອງເຮົາບໍ່ມີນໍ ເຮົາໄດ້ຊົ່ວແລ້ວນໍ ເຮົາບໍ່ໄດ້ດີແລ້ວນໍ ເພາະເຮົາໂກຼຣບໍ່ພໍໃຈ ເພ່ງຈະຫາໂທສໃຫ້ ໄດ້ບັຣຈຸບາຕຣ໌ຂອງກິກຂຸທັ້ງຫລາຍເຕັມພ້ອມກ່າວວ່າ ທ່ານທັ້ງຫລາຍຈະສັນກໍໄດ້ ນຳໄປກໍໄດ້ ຫຍັງນໍແລ ເຮົາສ້າງສົມຫຼາຍ ຄື ບຸຄຫຼືບາປ ເມື່ອແລ້ວເຂົ້າໄປເຝົ້າພຣະຜູ້ມີພຣະກາຄຖວາຍບັງຄົມນັ່ງຢູ່ ຓ ທີ່ຄວຣສ່ວນຂ້າງນຶ່ງ ຈຶ່ງຂາບທູລວ່າ ຂ້ານ້ອຍ ເມື່ອພຣະຜູ້ມີພຣະກາຄສເດັຈກັບບໍ່ທັນນານ ຄວາມຣຳຄານແລະຄວາມເດືອດຮ້ອນໄດ້ບັງເກີດແກ່ຂ້າພຣະພຸທສເຈົ້າ ຓ ທີ່ນັ້ນວ່າ ບໍ່ແມ່ນລາກຂອງຂ້າພຣະພຸທສເຈົ້ານໍ ລາກຂອງຂ້າພຣະພຸທສເຈົ້າ

ບໍ່ມີບໍ ຂ້າພຣະພຸທສເຈົ້າໄດ້ຊົ່ວແລ້ວບໍ ຂ້າພຣະພຸທສເຈົ້າບໍ່ໄດ້ດີແລ້ວບໍ ເພາະຂ້າພຣະພຸທສເຈົ້າ ໂກຸສບໍ່ພໍໃຈ ເພ່ງຈະຫາໂທษໃຫ້ ໄດ້ບັຣຈຸບາຕຣ໌ຂອງກິກຂຸທັ້ງຫລາຍເຕັມພ້ອມກ່າວວ່າ ທ່ານທັ້ງຫລາຍ ຈະຈັນກໍໄດ້ ນຳໄປກໍໄດ້ ຫຍັງບໍແລ ຂ້າພຣະພຸທສເຈົ້າສ້າງສົມໄວ້ຫຼາຍ ຄື ບຸນຫຼືບາປ ດັ່ງນີ້ ຫຍັງກັນແທ້ທີ່ຂ້າພຣະພຸທສເຈົ້າສ້າງສົມຫຼາຍ ຄື ບຸນຫຼືບາປ ຂ້ານ້ອຍ?

ພຣະຜູ້ມີພຣະກາຄຕຣັສຕອບວ່າ ອາວຸໂສ ທ່ານນິມົນຕ໌ກິກຂຸສົງฆ໌ມີພຣະພຸທສເຈົ້າເປັນປະມຸຂ ເພື່ອຈເຣີນບຸນກຸສົລແລະປິຕິປຼາໂມທຍ໌ໃນມື້ອື່ນເຊົ້າດ້ວຍທານອັນເລີສໃດ ທ່ານຊື່ວ່າສ້າງສົມບຸນໄວ້ຫຼາຍ ເພາະທານອັນເລີສນັ້ນ ເມັດເຂົ້າສຸກເມັດນຶ່ງໆ ຂອງທ່ານ ອັນກິກຂຸອົງຄ໌ນຶ່ງໆ ຜູ້ເລີສດ້ວຍຄຸຓສົມບັຕິ ອັນໃດ ຮັບໄປແລ້ວ ທ່ານຊື່ວ່າສ້າງສົມບຸນໄວ້ຫຼາຍ ເພາະກິກຂຸຜູ້ເລີສດ້ວຍຄຸຓສົມບັຕິອັນນັ້ນ ສວັຣຄ໌ ເປັນອັນທ່ານປຣາຣົກໄວ້ແລ້ວ.

ລຳດັບນັ້ນ ມຫາອຳມາຕຍ໌ຜູ້ເຣີ່ມເລື່ອມໃສນັ້ນ ໄດ້ຮູ້ວ່າເປັນລາກຂອງຕົນ ຕົນໄດ້ດີແລ້ວ ສວັຣຄ໌ອັນຕົນປຣາຣົກໄວ້ແລ້ວ ກໍຮ່າເຣີງ ດີໃຈລຸກຈາກທີ່ນັ່ງຖວາຍບັງຄົມພຣະຜູ້ມີພຣະກາຄ ທຳປະທັກษິຓ ແລ້ວກັບໄປ.

ປະຊຸມສົງฆ໌ທຣົງສອບຖາມ

ລຳດັບນັ້ນ ພຣະຜູ້ມີພຣະກາຄຮັບສັ່ງໃຫ້ປະຊຸມກິກຂຸສົງฆ໌ ໃນເພາະເຫຕຸເປັນເຄົ້າມູລນັ້ນ ໃນເພາະເຫຕຸແຣກເກີດນັ້ນ ແລ້ວທຣົງສອບຖາມກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ຂ່າວວ່າ ກິກຂຸ-ທັ້ງຫລາຍອັນທາຍົກນິມົນຕ໌ໄວ້ແຫ່ງອື່ນ ຈັນຢາຄູທີ່ແຂ້ນຂອງຜູ້ອື່ນແທ້ບໍ່?

ກິກຂຸທັ້ງຫລາຍທູລຮັບວ່າ ແທ້ ຂ້ານ້ອຍ.

ພຣະພຸທສບັญญັຕິຫ້າມຈັນຢາຄູທີ່ແຂ້ນ

ພຣະຜູ້ມີພຣະກາຄພຸທສເຈົ້າ ທຣົງຕິຕຽນວ່າ ດູຣາກິກຂຸທັ້ງຫລາຍ ເປັນຫຍັງໂມฆບຸຣຸษເຫລົ່ານັ້ນ ອັນທາຍົກນິມົນຕ໌ໄວ້ແຫ່ງອື່ນ ຈຶ່ງໄດ້ຈັນຢາຄູທີ່ແຂ້ນຂອງຜູ້ອື່ນລະ ການກະທຳຂອງພວກໂມฆບຸຣຸษນັ້ນ ບໍ່ເປັນໄປເພື່ອຄວາມເລື່ອມໃສຂອງຊຸມຊົນທີ່ຍັງບໍ່ເລື່ອມໃສ ... ເມື່ອແລ້ວທຣົງເຮັດທັມມີກະຖາຮັບສັ່ງກະກິກຂຸ-ທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ກິກຂຸອັນທາຍົກນິມົນຕ໌ໄວ້ແຫ່ງອື່ນ ບໍ່ຄວຣຈັນຢາຄູທີ່ແຂ້ນຂອງຜູ້ອື່ນ ອົງຄ໌ໃດຈັນ ຄວຣປັບອາບັຕິຕາມທັມມ໌.

ເຣື່ອງພຣາຫ໌ມຓ໌ເວລັຕກຸກັຈຈານະຖວາຍບີບນ້ຳອ້ອຍ

[໗໕] ຄັ້ງນັ້ນ ພຣະຜູ້ມີພຣະກາຄປະທັບຢູ່ໃນອັນສກາວິນທຊິນບົທຕາມພຣະພຸທສາຫິຣົມຍ໌ ແລ້ວສເດັຈພຣະພຸທສດຳເນີນມຸ່ງໄປທາງພຣະນຄຣຣາຊຄຣືຫ໌ ພ້ອມດ້ວຍກິກຂຸສົງຄ໌ຫມູ່ໃຫຍ່ປະມາຓ ໑,໔໕໐ ອົງຄ໌ຄຼາວນັ້ນ ພຣາຫ໌ມຓ໌ເວລັຕກຸກັຈຈານະ ຍ່າງທາງໄກແຕ່ພຣະນຄຣຣາຊຄຣືຫ໌ໄປຍັງອັນສກາວິນທຊິນບົທພ້ອມດ້ວຍກຽນປະມາຓ ໕໐໐ ເຫຼັ້ມລ້ວນບັຣທຸກຫມໍ້ບີບນ້ຳອ້ອຍເຕັມທຸກເຫຼັ້ມ ພຣະຜູ້ມີພຣະກາຄທອດພຣະເນຕຣ໌ເຫັນເວລັຕກຸກັຈຈານະກຳລັງມາແຕ່ໄກ ເມື່ອແລ້ວ ສເດັຈແວະອອກຈາກທາງປະທັບນັ່ງ ໓ ໂຄນໄມ້ແຫ່ງນຶ່ງ.

ຈຶ່ງພຣາຫ໌ມຓ໌ເວລັຕກຸກັຈຈານະ ຍ່າງເຂົ້າໄປເຖິງທີ່ປະທັບ ຖວາຍບັງຄົມພຣະຜູ້ມີພຣະກາຄ ແລ້ວໄດ້ຢືນຢູ່ ໓ ທີ່ຄວຣສ່ວນຂ້າງນຶ່ງ ເມື່ອແລ້ວໄດ້ທູລຄຳນີ້ແດ່ພຣະຜູ້ມີພຣະກາຄວ່າ ຂ້ານ້ອຍຂ້າພຣະພຸທສເຈົ້າປັຕຖນາຈະຖວາຍບີບນ້ຳອ້ອຍ ແກ່ກິກຂຸອົງຄ໌ລະ ໑ ໝໍ້.

ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກັຈຈານະ ຖ້າເຊັ່ນນັ້ນ ທ່ານຈົ່ງນຳບີບນ້ຳອ້ອຍມາແຕ່ພຽງໝໍ້ດຽວ.

ພຣາຫ໌ມຓ໌ເວລັຕກຸກັຈຈານະທູລຮັບສນອງພຣະພຸທສດຳຣັສວ່າ ເປັນຢ່າງນັ້ນ ຂ້ານ້ອຍແລ້ວນຳບີບນ້ຳອ້ອຍມາແຕ່ໝໍ້ດຽວ ເຂົ້າໄປເຝົ້າພຣະຜູ້ມີພຣະກາຄ ແລ້ວໄດ້ທູລຄຳນີ້ແດ່ພຣະຜູ້ມີພຣະກາຄວ່າໝໍ້ບີບນ້ຳອ້ອຍ ຂ້າພຣະພຸທສເຈົ້ານຳມາແລ້ວ ຂ້ານ້ອຍ ຂ້າພຣະພຸທສເຈົ້າຈະປຕິບັຕິຢ່າງໃດຕໍ່ໄປ.

ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກັຈຈານະ ຖ້າເຊັ່ນນັ້ນ ທ່ານຈົ່ງຖວາຍບີບນ້ຳອ້ອຍແກ່ກິກຂຸທັ້ງຫລາຍ.

ພຣາຫ໌ມຓ໌ເວລັຕກຸກັຈຈານະ ທູລຮັບສນອງພຣະພຸທສດຳຣັສວ່າ ເປັນຢ່າງນັ້ນ ຂ້ານ້ອຍແລ້ວຖວາຍບີບນ້ຳອ້ອຍແກ່ກິກຂຸທັ້ງຫລາຍ ແລ້ວໄດ້ທູລຄຳນີ້ແດ່ພຣະຜູ້ມີພຣະກາຄວ່າ ບີບນ້ຳອ້ອຍຂ້າພຣະພຸທສເຈົ້າຖວາຍແກ່ກິກຂຸທັ້ງຫລາຍ ຂ້ານ້ອຍ ແຕ່ບີບນ້ຳອ້ອຍນີ້ຍັງເຫລືອຢູ່ຫຼາຍ ຂ້າພຣະພຸທສເຈົ້າຈະປຕິບັຕິຢ່າງໃດ ຂ້ານ້ອຍ.

ພຣະຜູ້ມີພຣະກາຄເຈົ້າຕຣັສວ່າ ດູຣາກັຈຈານະ ຖ້າຢ່າງນັ້ນ ທ່ານຈົ່ງຖວາຍບີບນ້ຳອ້ອຍແກ່ກິກຂຸທັ້ງຫລາຍຈົນພໍແກ່ຄວາມຕ້ອງການ.

ພຣາຫ໌ມຓ໌ເວລັຕກຸກັຈຈານະ ທູລຮັບສນອງພຣະພຸທສດຳຣັສວ່າ ເປັນຢ່າງນັ້ນ ຂ້ານ້ອຍແລ້ວຖວາຍບີບນ້ຳອ້ອຍແກ່ກິກຂຸທຸກອົງຄ໌ ຈົນພໍແກ່ຄວາມຕ້ອງການ ແລ້ວໄດ້ທູລຄຳນີ້ແດ່ພຣະຜູ້ມີພຣະກາຄວ່າ

ບີບນ້ຳອ້ອຍຂ້າພຣະພຸທຸສເຈົ້າຖວາຍແກ່ກິກຂຸທັ້ງຫລາຍ ຈົນພໍແກ່ຄວາມຕ້ອງການແລ້ວ ຂ້ານ້ອຍ ແຕ່ບີບນ້ຳອ້ອຍນີ້ຍັງເຫລືອຢູ່ຫຼາຍ ຂ້າພຣະພຸທຸສເຈົ້າຈະປຕິບັຕິຢ່າງໃດ ຂ້ານ້ອຍ.

ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກັຈຈານະ ຖ້າເຊັ່ນນັ້ນ ທ່ານຈົ່ງອັງຄາສກິກຂຸທັ້ງຫລາຍດ້ວຍນ້ຳອ້ອຍໃຫ້ອີ່ມຫນຳ.

ພຣາຫ໌ມນ໌ເວລັຕກັຈຈານະທູລຮັບສນອງພຣະພຸທຸສດຳຣັສວ່າ ເປັນຢ່າງນັ້ນ ຂ້ານ້ອຍ ແລ້ວອັງຄາສກິກຂຸທັ້ງຫລາຍດ້ວຍບີບນ້ຳອ້ອຍໃຫ້ອີ່ມຫນຳ ກິກຂຸບາງພວກບັຣຈຸບີບນ້ຳອ້ອຍເຕັມບາຕຣ໌ແດ່ ເຕັມໝໍ້ກອງນ້ຳແດ່ ເຕັມຖົງຢ່າມແດ່ ເມື່ອພຣາຫ໌ມນ໌ເວລັຕກັຈຈານະອັງຄາສກິກຂຸທັ້ງຫລາຍດ້ວຍນ້ຳອ້ອຍໃຫ້ອີ່ມຫນຳແລ້ວໄດ້ທູລຄຳນີ້ແດ່ພຣະຜູ້ມີພຣະກາຄວ່າ ກິກຂຸທັ້ງຫລາຍອັນຂ້າພຣະພຸທຸສເຈົ້າອັງຄາສດ້ວຍບີບນ້ຳອ້ອຍໃຫ້ອີ່ມຫນຳແລ້ວ ຂ້ານ້ອຍ ແຕ່ບີບນ້ຳອ້ອຍນີ້ຍັງເຫລືອຢູ່ຫຼາຍ ພຣະພຸທຸສເຈົ້າ-ຂ້ານ້ອຍແຕ່ບີບນ້ຳອ້ອຍນີ້ຍັງເຫລືອຢູ່ຫຼາຍ ຂ້າພຣະພຸທຸສເຈົ້າຈະປຕິບັຕິຢ່າງໃດ ຂ້ານ້ອຍ.

ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກັຈຈານະ ຖ້າເຊັ່ນນັ້ນ ທ່ານຈົ່ງໃຫ້ບີບນ້ຳອ້ອຍແກ່ພວກຄົນກິນເດນ.

ພຣາຫ໌ມນ໌ເວລັຕກັຈຈານະ ທູລຮັບສນອງພຣະພຸທຸສດຳຣັສວ່າ ເປັນຢ່າງນັ້ນ ຂ້ານ້ອຍ. ແລ້ວຈຶ່ງໃຫ້ບີບນ້ຳອ້ອຍແກ່ພວກຄົນກິນເດນ ແລ້ວໄດ້ທູລຄຳນີ້ແດ່ພຣະຜູ້ມີພຣະກາຄວ່າ ບີບນ້ຳອ້ອຍຂ້າພຣະພຸທຸສເຈົ້າ ໃຫ້ພວກຄົນກິນເດນແລ້ວ ຂ້ານ້ອຍ ແຕ່ບີບນ້ຳອ້ອຍນີ້ຍັງເຫລືອຢູ່ມາກ ຂ້າພຣະພຸທຸສເຈົ້າຈະປຕິບັຕິຢ່າງໃດ ຂ້ານ້ອຍ.

ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກັຈຈານະ ຖ້າຢ່າງນັ້ນ ທ່ານຈົ່ງໃຫ້ບີບນ້ຳອ້ອຍແກ່ພວກຄົນກິນເດນຈົນພໍແກ່ຄວາມຕ້ອງການ

ພຣາຫ໌ມນ໌ເວລັຕກັຈຈານະ ທູລຮັບສນອງພຣະພຸທຸສດຳຣັສວ່າ ເປັນຢ່າງນັ້ນ ຂ້ານ້ອຍ ແລ້ວຈຶ່ງໃຫ້ບີບນ້ຳອ້ອຍແກ່ພວກຄົນກິນເດນ ຈົນພໍແກ່ຄວາມຕ້ອງການ ແລ້ວໄດ້ທູລຄຳນີ້ແດ່ພຣະຜູ້ມີພຣະກາຄວ່າ ບີບນ້ຳອ້ອຍຂ້າພຣະພຸທຸສເຈົ້າໃຫ້ພວກຄົນກິນເດນ ຈົນພໍແກ່ຄວາມຕ້ອງການແລ້ວ ຂ້ານ້ອຍ ແຕ່ບີບນ້ຳອ້ອຍນີ້ຍັງເຫລືອຢູ່ຫຼາຍ ຂ້າພຣະພຸທຸສເຈົ້າຈະປຕິບັຕິຢ່າງໃດຕໍ່ໄປ ຂ້ານ້ອຍ.

ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກັຈຈານະ ຖ້າເຊັ່ນນັ້ນ ທ່ານຈົ່ງເບິ່ງແຍງພວກຄົນກິນເດນໃຫ້ອີ່ມຫນຳດ້ວຍບີບນ້ຳອ້ອຍ.

ພຣາຫ໌ມນ໌ເວລັຕກັຈຈານະ ທູລຮັບສນອງພຣະພຸທຸສດຳຣັສວ່າ ເປັນຢ່າງນັ້ນ ຂ້ານ້ອຍ ແລ້ວເບິ່ງແຍງພວກຄົນກິນເດນໃຫ້ອີ່ມຫນຳດ້ວຍບີບນ້ຳອ້ອຍ ຄົນກິນເດນບາງພວກບັຣຈຸບີບນ້ຳອ້ອຍເຕັມກະປ໋ອງແດ່ ເຕັມໝໍ້ນ້ຳແດ່ ຫໍ່ເຕັມຜ້າຂາວປູລາດແດ່ ເຕັມພົກແດ່ ເມື່ອພຣາຫ໌ມນ໌ເວລັຕກັຈຈານະ

ເບິ່ງແຍງພວກຄົນກິນເດນໃຫ້ອິ່ມຫນຳດ້ວຍບົບນ້ຳອ້ອຍ ແລ້ວທູລຄຳນີ້ແດ່ພຣະຜູ້ມີພຣະກາຄວ່າ ພວກຄົນກິນເດນ ອັນຂ້າພຣະພຸທສເຈົ້າເບິ່ງແຍງດ້ວຍບົບນ້ຳອ້ອຍໃຫ້ອິ່ມຫນຳແລ້ວ ຂ້ານ້ອຍ ແຕ່ບົບນ້ຳອ້ອຍນີ້ຍັງ ເຫລືອຢູ່ຫຼາຍ ຂ້າພຣະພຸທສເຈົ້າຈະປຕິບັຕິຢ່າງໃດຕໍ່ໄປ ຂ້ານ້ອຍ.

ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກັຈຈານະ ທົ່ວໂລກນີ້ພ້ອມທັ້ງເທວໂລກ ມາຣໂລກ ພຣົຫ໌ມໂລກ ທົ່ວຫຸກຫມູ່ສັຕວ໌ ພ້ອມທັ້ງສມຕພຣາຫ໌ມ໌ຕເທວດາແລະມນຸษຍ໌ ເຮົາບໍ່ເລັງເຫັນບຸຄຄົລຜູ້ທີ່ບໍຣິໂກຄບົບນ້ຳອ້ອຍ ນັ້ນແລ້ວຈະໃຫ້ຍ່ອຍໄດ້ດີ ນອກຈາກຕຖາຄົຕຫຼືສາວົກຂອງຕຖາຄົຕ ດູຣາກັຈຈານະ ຖ້າເຊັ່ນນັ້ນ ທ່ານຈົງ ຖິ້ມບົບນ້ຳອ້ອຍນັ້ນເສັຽໃນສຖານທີ່ອັນປຣາສຈາກຂອງຂຽວສົດ ຫຼືຈົງເທເສັຽໃນນ້ຳຊຶ່ງປຣາສຈາກໂຕສັຕວ໌.

ພຣາຫ໌ມ໌ຕເວລັຕກກັຈຈານະ ທູລຮັບສນອງພຣະພຸທສດຳຣັສວ່າ ເປັນຢ່າງນັ້ນ ຂ້ານ້ອຍ ແລ້ວເທບົບນ້ຳອ້ອຍນັ້ນລົງໃນນ້ຳຊຶ່ງປຣາສຈາກໂຕສັຕວ໌ ບົບນ້ຳອ້ອຍທີ່ເທລົງໃນນ້ຳນັ້ນ ເດືອດພລຸ່ງ ສົ່ງສຽງ ດັງຈິຕິຈິຕິ ພົ່ນໄອພົ່ນຄວັນທັນທີ ປຽບເຫມືອນຜາລທີ່ຮ້ອນແຮງຕລອດວັນອັນບຸຄຄົລຈຸ່ມລົງໃນນ້ຳ ຍ່ອມເດືອດພລຸ່ງ ສົ່ງສຽງດັງຈິຕິຈິຕິ ພົ່ນໄອພົ່ນຄວັນຢູ່ ແມ້ແນວໃດ ບົບນ້ຳອ້ອຍທີ່ເທລົງໃນນ້ຳນັ້ນ ຍ່ອມຮ້ອນຈ້າດໆ ສົ່ງສຽງດັງຈິຕິຈິຕິ ພົ່ນໄອພົ່ນຄວັນຢູ່ ແນວນັ້ນເຫມືອນກັນ.

ພຣາຫ໌ມ໌ຕເວລັຕກກັຈຈານະ ສລົດໃຈ ບັງເກີດໂລມຊາຕິຊູຊັນທັນທີ ແລ້ວເຂົ້າໄປໃນພຸທສສຳນັກ ຖວາຍບັງຄົມພຣະຜູ້ມີພຣະກາຄ ນັ່ງຢູ່ ຓ ທີ່ຄວຣສ່ວນຂ້າງນຶ່ງ.

ທຣົງສແດງອນຸປຸພພີກຖາແລະຈຕຸຣາຣິຍສັຈ

ເມື່ອພຣາຫ໌ມ໌ຕເວລັຕກກັຈຈານະນັ່ງຢູ່ ຓ ທີ່ຄວຣສ່ວນຂ້າງນຶ່ງແລ້ວ ພຣະຜູ້ມີພຣະກາຄຈຶ່ງທຣົງ ສແດງອນຸປຸພພີກຖາ ຄື ທຣົງປະກາສ ທານກຖາ ສີລກຖາ ສັຄຄກຖາ ໂທษ ຄວາມຕ່ຳຊາມ ຄວາມ ເສົ້າຫມອງຂອງກາມທັ້ງຫລາຍ ແລະອານິສົງສ໌ໃນຄວາມອອກຈາກກາມ ເມື່ອພຣະຜູ້ມີພຣະກາຄທຣົງຮູ້ວ່າ ພຣາຫ໌ມ໌ຕເວລັຕກກັຈຈານະມີຈິຕສງົບ ມີຈິຕອ່ອນ ມີຈິຕບໍ່ມີນີວຣຕ໌ ມີຈິຕເບີກບານ ມີຈິຕຜ່ອງໃສ ແລ້ວ ຈຶ່ງທຣົງປະກາສພຣະທັມມເທສນາທີ່ພຣະພຸທສເຈົ້າທັ້ງຫລາຍທຣົງຍົກຂຶ້ນສແດງດ້ວຍພຣະອົງຄ໌ເອງ ຄື ທຸກຂ໌ ສມຸທັຍ ນິໂຣຄ ມັຄຄ໌ ດວງຕາເຫັນທັມມ໌ປຣາສຈາກທຸລີ ປຣາສຈາກມົລທິນໄດ້ເກີດແກ່ພຣາຫ໌ມ໌ຕ-ເວລັຕກກັຈຈານະ ຓ ທີ່ນັ່ງນັ້ນແລວ່າ ສິ່ງໃດສິ່ງນຶ່ງມີຄວາມເກີດຂຶ້ນເປັນທັມມດາ ສິ່ງນັ້ນທັ້ງມວລມີ ຄວາມດັບເປັນທັມມດາ ເໝືອນຜ້າສະອາດປຣາສຈາກມົລທິນ ຄວຣໄດ້ຮັບນ້ຳຍ້ອມເປັນຢ່າງດີຈັ່ງຊັ້ນ ເມື່ອ ພຣາຫ໌ມ໌ຕເວລັຕກກັຈຈານະໄດ້ເຫັນທັມມ໌ແລ້ວ ໄດ້ບັຣລຸທັມມ໌ແລ້ວ ໄດ້ຮູ້ທັມມ໌ແຈ່ມແຈ້ງແລ້ວ ມີທັມມ໌ ອັນຫຍັ່ງລົງແລ້ວ ຂ້າມຄວາມສົງສັຍໄດ້ແລ້ວ ປຣາສຈາກຖ້ອຍຄຳສແດງຄວາມສົງສັຍແລ້ວ ເຖິງຄວາມເປັນ

ຜູ້ແກລ້ວກລ້າ ບໍ່ຕ້ອງເຊື່ອຜູ້ອື່ນໃນຄຳສອນຂອງພຣະສາສດາໄດ້ທູລຄຳນີ້ແດ່ພຣະຜູ້ມີພຣະກາຄວ່າ ກາษิต ຂອງພຣະອົງຄ໌ແຈ່ມແຈ້ງຫຼາຍ ຂ້ານ້ອຍ ກາษิตຂອງພຣະອົງຄ໌ງາມຫຼາຍ ຂ້ານ້ອຍ ພຣະຜູ້ມີພຣະກາຄທຣົງປະກາສສັມມ໌ໂດຍອເນກປຣິຍາຍຢ່າງນີ້ ປຽບເຫມືອນບຸຄຄົລຫງາຍຂອງທີ່ຄວ່ຳ ເປີດຂອງທີ່ປິດ ບອກທາງແກ່ຄົນຫລົງທາງ ຫຼືສ່ອງປະທີປໃນທີ່ມືດ ດ້ວຍຕັ້ງໃຈວ່າ ຄົນມີຈັກษุຈະເຫັນຮູປ ດັ່ງນີ້ ຂ້າພຣະພຸທສເຈົ້ານີ້ ຂໍເຖິງພຣະຜູ້ມີພຣະກາຄ ພຣະສັມມ໌ ແລະພຣະສົງฆ໌ວ່າເປັນສຣຓະ ຂໍ ພຣະຜູ້ມີພຣະກາຄໂປຼດທຣົງຈຳຂ້າພຣະພຸທສເຈົ້າວ່າ ເປັນອຸບາສົກຜູ້ມອບຊີວິຕເຖິງສຣຓະ ຈຳເດີມແຕ່ວັນນີ້ ເປັນຕົ້ນໄປ.

ພຣະພຸທສານຸຍາຕປົບນ້ຳອ້ອຍ

[໖໖] ຄັ້ງນັ້ນ ພຣະຜູ້ມີພຣະກາຄສເດັຈພຣະພຸທສດຳເນີນຜ່ານຣະຍະທາງໂດຍລຳດັບ ສເດັຈເຖິງ ພຣະນຄຣຣາຊຄຣຶຫ໌ແລ້ວ ຮູ້ວ່າ ພຣະຜູ້ມີພຣະກາຄປະທັບຢູ່ ໓ ພຣະເວຼຸວັນວິຫາຣ ອັນເປັນສຖານທີ່ ພຣະຣາຊທານເຍື່ອແກ່ກະແຕ ເຂຕພຣະນຄຣຣາຊຄຣຶຫ໌ນັ້ນ ຄັ້ງນັ້ນ ໃນພຣະນຄຣຣາຊຄຣຶຫ໌ມີປົບນ້ຳອ້ອຍ ຫຼາຍ ກິກຂຸທັ້ງຫລາຍບໍ່ພໍໃຈວ່າ ຜູ້ບໍ່ອາພາສ ຈຶ່ງບໍ່ຈັນປົບນ້ຳອ້ອຍ ແລ້ວຂາບທູລເຣື່ອງນັ້ນແດ່ ພຣະຜູ້ມີພຣະກາຄ.

ພຣະຜູ້ມີພຣະກາຄຕຣັສອນຸຍາຕແກ່ກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ເຮົາອນຸຍາຕປົບນ້ຳອ້ອຍ ແກ່ກິກຂຸຜູ້ອາພາສ ແລະປົບນ້ຳອ້ອຍລະລາຍນ້ຳແກ່ກິກຂຸຜູ້ບໍ່ອາພາສ.

ທຣົງຮັບອາຄາຣພັກແຮມ

[໖໗] ເມື່ອພຣະຜູ້ມີພຣະກາຄປະທັບຢູ່ໃນພຣະນຄຣຣາຊຄຣຶຫ໌ ຕາມພຣະພຸທສາກີຣົມຍ໌ແລ້ວ ສເດັຈພຣະພຸທສດຳເນີນມຸ່ງໄປທາງຕຳບົລບ້ານປາຕລີ ພ້ອມດ້ວຍພຣະສົງฆ໌ຫມູ່ໃຫຍ່ຈຳນວນ ໑,໒໕໐ ອົງຄ໌ ສເດັຈພຣະພຸທສດຳເນີນຜ່ານຣະຍະທາງໂດຍລຳດັບເຖິງຕຳບົລບ້ານປາຕລີແລ້ວ ອຸບາສົກອຸບາສິກາຊາວຕຳບົລ ບ້ານປາຕລີໄດ້ຮູ້ຂ່າວວ່າ ພຣະຜູ້ມີພຣະກາຄສເດັຈເຖິງຕຳບົລບ້ານປາຕລີແລ້ວ ຈຶ່ງພາກັນເຂົ້າໄປເຝົ້າ ໓ ທີ່ປະທັບຊົ່ວຄູາວ ຖວາຍບັງຄົມພຣະຜູ້ມີພຣະກາຄແລ້ວນັ່ງຢູ່ ໓ ທີ່ຄວຣສ່ວນຂ້າງນຶ່ງ ພຣະຜູ້ມີພຣະກາຄ ທຣົງຊີ້ແຈງໃຫ້ອຸບາສົກອຸບາສິກາຊາວຕຳບົລບ້ານປາຕລີຜູ້ນັ່ງຢູ່ ໓ ທີ່ຄວຣສ່ວນຂ້າງນຶ່ງເຫັນແຈ້ງ ສມາທານ ອາຈຫາຍ ຣ່າເຣີງ ດ້ວຍສັມມີກະຖາ.

ເມື່ອອຸບາສົກ ອຸບາສິກາຊາວຕຳບົລບ້ານປາຕລີອັນພຣະຜູ້ມີພຣະກາຄຊີ້ແຈງໃຫ້ເຫັນແຈ້ງ ສມາທານ ອາຈຫາຍ ຣ່າເຣີງ ດ້ວຍສັມມີກະຖາແລ້ວ ໄດ້ຂາບທູລຄຳນີ້ແດ່ພຣະຜູ້ມີພຣະກາຄວ່າ ຂໍພຣະຜູ້ມີພຣະກາຄ

ພ້ອມດ້ວຍພຣະສົງຆ໌ ໂປຼດທຣົງຮັບອາຄາຣພັກແຮມຂອງພວກຂ້າພຣະພຸທຸສເຈົ້າ ຂ້ານ້ອຍ.

ພຣະຜູ້ມີພຣະກາຄທຣົງຮັບໂດຍດຸສນີກາພ ເມື່ອອຸບາສົກອຸບາສິກາຊາວຕຳບົລບ້ານປາຕລິຮູ້ກາຣທຣົງຮັບຂອງພຣະຜູ້ມີພຣະກາຄແລ້ວ ຈຶ່ງລຸກຈາກທີ່ນັ່ງຖວາຍບັງຄົມພຣະຜູ້ມີພຣະກາຄ ທຳປະທັກສິຕແລ້ວພາກັນຍ່າງໄປທາງອາຄາຣພັກແຮມ ປູລາດດາດເພດານທົ່ວອາຄາຣພັກແຮມທຸກແຫ່ງ ຈັດອາສນະ ຕັ້ງໝໍ້ນ້ຳຕາມປະທີປນ້ຳມັນ ແລ້ວພາກັນເຂົ້າໄປທີ່ປະທັບຊົວຄາວ ຖວາຍບັງຄົມພຣະຜູ້ມີພຣະກາຄ ໄດ້ຢືນຢູ່ ໗ ທີ່ຄວຣສ່ວນຂ້າງນຶ່ງ ພວກເຂົາຢືນຢູ່ ໗ ທີ່ຄວຣສ່ວນຂ້າງນຶ່ງແລ້ວ ໄດ້ຂາບທູລຄຳນີ້ແດ່ພຣະຜູ້ມີ-ພຣະກາຄວ່າ ຂ້ານ້ອຍ ພວກຂ້າພຣະພຸທຸສເຈົ້າປູລາດດາດເພດານອາຄາຣພັກແຮມທຸກແຫ່ງ ຈັດອາສນະຕັ້ງໝໍ້ນ້ຳ ຕາມປະທີປນ້ຳມັນໄວ້ແລ້ວ ພຣະຜູ້ມີພຣະກາຄຍ່ອມທຣົງຮູ້ກາລ ອັນຄວຣໃນບັດນີ້ ຂ້ານ້ອຍ.

ລຳດັບນັ້ນ ພຣະຜູ້ມີພຣະກາຄທຣົງຄອງອັນຕຣວາສົກ ທຣົງຖືບາຕຣ໌ຈີວຣແລ້ວ ສເດັຈໄປທາງອາຄາຣພັກແຮມພ້ອມກັບພຣະສົງຆ໌ ທຣົງຊຳຣະພຣະບາທຍຸຄົລແລ້ວສເດັຈເຂົ້າສູ່ອາຄາຣພັກແຮມ ປະທັບນັ່ງພິງເສົາກາງຜິນພຣະພັກຕຣ໌ໄປທາງທິສຕະວັນອອກ ແມ້ພຣະສົງຆ໌ເຫລົ່ານັ້ນກໍລ້າງຕີນແລ້ວ ເຂົ້າສູ່ອາຄາຣພັກແຮມນັ່ງພິງຝາດ້ານຕະວັນຕົກ ຜິນໜ້າໄປທາງທິສຕະວັນອອກ ຫ້ອມລ້ອມພຣະຜູ້ມີພຣະກາຄ ແມ້ອຸບາສົກອຸບາສິກາຊາວຕຳບົລບ້ານປາຕລິກໍລ້າງຕີນແລ້ວເຂົ້າສູ່ອາຄາຣພັກແຮມ ນັ່ງພິງຝາດ້ານຕະວັນອອກ ຜິນໜ້າໄປທາງຕະວັນຕົກຫ້ອມລ້ອມພຣະຜູ້ມີພຣະກາຄ.

ຂຕະນັ້ນ ພຣະຜູ້ມີພຣະກາຄຕຣັສເທສນາໂປຼດອຸບາສົກ ອຸບາສິກາ ຊາວຕຳບົລບ້ານປາຕລິ ດັ່ງຕໍ່ໄປນີ້:-

ໂທສແຫ່ງສີລວິບັຕິ ໕ ປະກາຣ

[໖໗] ດູຣາຄຫບໍດີທັ້ງຫລາຍ ໂທສແຫ່ງສີລວິບັຕິຂອງຄົນທຸສີລມີ ໕ ປະກາຣ ເຫລົ່ານີ້ ໕ ປະກາຣເປັນແນວໃດ ດູຣາຄຫບໍດີທັ້ງຫລາຍ ຄົນທຸສີລ ຜູ້ມີສີລວິບັຕິໃນໂລກນີ້ຍ່ອມເຂົ້າເຖິງຄວາມເສື່ອມແຫ່ງໂກຄຊັພຍ໌ໃຫຍ່ຫລວງ ເພາະເຫຕຸແຫ່ງຄວາມປະມາທ ນີ້ເປັນໂທສຂໍ້ທີ່ ໑ ແຫ່ງສີລວິບັຕິ ຂອງຄົນທຸສີລ.

ດູຣາຄຫບໍດີທັ້ງຫລາຍ ປະກາຣນຶ່ງ ໂທສຂໍ້ອື່ນຍັງມີອີກ ຊື່ສຽງອັນລາມົກຂອງຄົນທຸສີລ ຜູ້ມີສີລວິບັຕິຍ່ອມເຟື່ອງຟຸ້ງໄປ ນີ້ເປັນໂທສຂໍ້ທີ່ ໔ ແຫ່ງສີລວິບັຕິ ຂອງຄົນທຸສີລ.

ດູຣາຄຫບໍດີທັ້ງຫລາຍ ປະກາຣນຶ່ງ ໂທສຂໍ້ອື່ນຍັງມີອີກ ຄົນທຸສີລ ຜູ້ມີສີລວິບັຕິ ເຂົ້າໄປຫາບໍຣິສັທໃດໆ ເຊັ່ນ ຂັຕຕິຍບໍຣິສັທ ພຣາຫ໌ມຕບໍຣິສັທ ຄຫບໍດີບໍຣິສັທ ສມຕບໍຣິສັທຍ່ອມເປັນຜູ້ສະທົກສະທ້ານ ຂວຍເຂີນເຂົ້າໄປຫາບໍຣິສັທນັ້ນໆ ນີ້ເປັນໂທສຂໍ້ທີ່ ໓ ແຫ່ງສີລວິບັຕິຂອງຄົນທຸສີລ.

ດູຣາຄຫບໍດີທັ້ງຫລາຍ ປະກາຣນຶ່ງ ໂທษຂໍ້ອື່ນຍັງມີອີກ ຄົນທຸສີລ ຜູ້ມີສີລວິບັຕິ ຍ່ອມເປັນຜູ້ຫລົງທຳກາລະ ນີ້ເປັນໂທษຂໍ້ທີ່ ໔ ແຫ່ງສີລວິບັຕິຂອງຄົນທຸສີລ.

ດູຣາຄຫບໍດີ ປະກາຣນຶ່ງ ໂທษຂໍ້ອື່ນຍັງມີອີກ ຄົນທຸສີລ ຜູ້ມີສີລວິບັຕິ ເບື້ອງຫນ້າແຕ່ແຕກກາຍຕາຍໄປ ຍ່ອມເຂົ້າເຖິງ ອບາຍ ທຸຄຕິ ວິນິບາຕ ນຣົກ ນີ້ເປັນໂທษຂໍ້ທີ່ ໕ ແຫ່ງສີລວິບັຕິ ຂອງຄົນທຸສີລ.

ດູຣາຄຫບໍດີທັ້ງຫລາຍ ໂທษແຫ່ງສີລວິບັຕິຂອງຄົນທຸສີລ ມີ ໕ ປະກາຣນີ້ແລ.

ອານິສົງສ໌ແຫ່ງສີລສົມບັຕິ ໕ ປະກາຣ

[໖໙] ດູຣາຄຫບໍດີທັ້ງຫລາຍ ອານິສົງສ໌ແຫ່ງສີລສົມບັຕິຂອງຄົນມີສີລມີ ໕ ປະກາຣ ເຫລົ່ານີ້ ໕ ປະກາຣເປັນແນວໃດ? ດູຣາຄຫບໍດີທັ້ງຫລາຍ ຄົນມີສີລ ເຖິງພ້ອມດ້ວຍສີລໃນໂລກນີ້ ຍ່ອມໄດ້ກອງໂກຄຊັພຍ໌ໃຫຍ່ຫລວງ ເພາະເຫຕຸແຫ່ງຄວາມບໍ່ປະມາທ ນີ້ເປັນອານິສົງສ໌ຂໍ້ທີ່ ໑ ແຫ່ງສີລສົມບັຕິ ຂອງຄົນມີສີລ.

ດູຣາຄຫບໍດີທັ້ງຫລາຍ ປະກາຣນຶ່ງ ອານິສົງສ໌ຂໍ້ອື່ນຍັງມີອີກ ຊື່ສຽງອັນດີງາມຂອງຄົນມີສີລເຖິງພ້ອມດ້ວຍສີລ ຍ່ອມເຟື່ອງຟຸ້ງໄປ ນີ້ເປັນອານິສົງສ໌ຂໍ້ທີ່ ໒ ແຫ່ງສີລສົມບັຕິຂອງຄົນມີສີລ.

ດູຣາຄຫບໍດີທັ້ງຫລາຍ ປະກາຣນຶ່ງ ອານິສົງສ໌ຂໍ້ອື່ນຍັງມີອີກ ຄົນມີສີລເຖິງພ້ອມດ້ວຍສີລ ເຂົ້າໄປຫາບໍຣິษັທໃດໆ ເຊັ່ນ ຂັຕຕິຍບໍຣິษັທ ພຣົຫ໌ມຕບໍຣິษັທ ຄຫບໍດີບໍຣິษັທ ສມຕບໍຣິษັທ ຍ່ອມເປັນຜູ້ແກລ້ວກລ້າບໍ່ຂວຍເຂີນເຂົ້າໄປຫາບໍຣິษັທນັ້ນໆ ນີ້ເປັນອານິສົງສ໌ຂໍ້ທີ່ ໓ ແຫ່ງສີລສົມບັຕິ ຂອງຄົນມີສີລ.

ດູຣາຄຫບໍດີທັ້ງຫລາຍ ປະກາຣນຶ່ງ ອານິສົງສ໌ຂໍ້ອື່ນຍັງມີອີກ ຄົນມີສີລເຖິງພ້ອມດ້ວຍສີລ ຍ່ອມບໍ່ຫລົງທຳກາລະ ນີ້ເປັນອານິສົງສ໌ຂໍ້ທີ່ ໔ ແຫ່ງສີລສົມບັຕິ ຂອງຄົນມີສີລ.

ດູຣາຄຫບໍດີທັ້ງຫລາຍ ປະກາຣນຶ່ງ ອານິສົງສ໌ຂໍ້ອື່ນຍັງມີອີກ ຄົນມີສີລເຖິງພ້ອມດ້ວຍສີລ ເບື້ອງຫນ້າແຕ່ແຕກກາຍຕາຍໄປ ຍ່ອມເຂົ້າເຖິງສຸຄຕິໂລກສວັຣຄ໌ ນີ້ເປັນອານິສົງສ໌ຂໍ້ທີ່ ໕ ແຫ່ງສີລສົມບັຕິ ຂອງຄົນມີສີລ.

ດູຣາຄຫບໍດີທັ້ງຫລາຍ ອານິສົງສ໌ແຫ່ງສີລສົມບັຕິ ຂອງຄົນມີສີລ ມີ ໕ ປະກາຣ ນີ້ແລ.

[໗໐] ເມື່ອພຣະຜູ້ມີພຣະກາຄຫຣົງຊີ້ແຈງ ໃຫ້ອຸບາສົກອຸບາສິກາຂອງຕຳບົລບ້ານປາຕລິເຫັນແຈ້ງ ສມາທານ ອາຈຫາຍ ຣ່າເຣີງ ດ້ວຍທັມມີກຖາຈົນເດິກດື່ນແລ້ວຫຣົງສົ່ງກັບດ້ວຍຣັບສັ່ງວ່າ ດູຣາຄຫບໍດີ-ທັ້ງຫລາຍ ຣາຕຣີກົບສີແຈ້ງແລ້ວ ບັດນີ້ ພວກທ່ານຈົ່ງຮູ້ກາລທີ່ຈະກັບເທີ້ນ ອຸບາສົກອຸບາສິກາຊາວຕຳບົລ

ບ້ານປາຕລີ ຮັບສນອງພຣະພຸທສດຳຣັສວ່າ ຮູ້ເຫຼົ້າໆ ເຊັ່ນນັ້ນແລ້ວ ຂ້ານ້ອຍ ແລ້ວລຸກຈາກ ທີ່ນັ່ງ ຖວາຍບັງຄົມພຣະຜູ້ມີພຣະກາຄ ທຳປະທັກສິຕແລ້ວພາກັນກັບ ເມື່ອອຸບາສົກອຸບາສິກາຊາວຕຳບົລ ບ້ານປາຕລີກັບໄປບໍ່ທັນນານ ພຣະຜູ້ມີພຣະກາຄໄດ້ສເດັຈເຂົ້າສຸญญາຄາຣແລ້ວ.

ເຣື່ອງສຸນີສະວັສສກາຣະມຫາອຳມາຕຍ໌

[໗໑] ກໍໂດຍສມັຍນັ້ນແລ ມຫາອຳມາຕຍ໌ແຫ່ງມຄສຣັຖ ໔ ທ່ານຊື່ ສຸນີສະ ໑ ວັສສກາຣ ໑ ກຳລັງຈັດການສ້າງພຣະນຄຣ ໓ ຕຳບົລບ້ານປາຕລີ ເພື່ອປ້ອງກັນຊາວວັຊຊີ ພຣະຜູ້ມີພຣະກາຄທຮົງຕື່ນບັຣທົມ ໃນເວລາປັຈຈຸສມັຍແຫ່ງຣາຕຣີ ໄດ້ທຮົງເລັງທິພຈັກษຸອັນບໍຣິສຸທຊີ່ລ່ວງວິສັຍຂອງມນຸษຍ໌ ທອດພຣະເນຕຣ໌ເຫັນ ເທວດາເປັນຈຳນວນຫຼາຍກຳລັງຍຶດຖືທີ່ດິນໃນຕຳບົລບ້ານປາຕລີ ຄື ໃນປະເທສທີ່ໃດ ພວກເທວດາມີສັກດິ໌ໃຫຍ່ ຍຶດຖືທີ່ດິນ ພວກເຈົ້າແລະຣາຊມຫາອຳມາຕຍ໌ຜູ້ມີສັກດິ໌ສູງໆ ຕ່າງກໍນ້ອມຈິຕເພື່ອສ້າງນິເວສນ໌ລົງໃນປະເທສ ທີ່ນັ້ນ ໃນປະເທສທີ່ໃດ ພວກເທວດາທີ່ມີສັກດິ໌ຊັ້ນກາງຍຶດຖືທີ່ດິນ ພວກເຈົ້າແລະຣາຊມຫາອຳມາຕຍ໌ ທີ່ມີສັກດິ໌ຊັ້ນກາງໆ ຕ່າງກໍນ້ອມຈິຕເພື່ອສ້າງນິເວສນ໌ລົງໃນປະເທສທີ່ນັ້ນ ໃນປະເທສທີ່ໃດ ເທວດາທີ່ມີ ສັກດິ໌ຊັ້ນຕ່ຳຍຶດຖືທີ່ດິນ ພວກເຈົ້າແລະຣາຊມຫາອຳມາຕຍ໌ຊັ້ນຕ່ຳໆ ຕ່າງກໍນ້ອມຈິຕເພື່ອສ້າງນິເວສນ໌ລົງໃນ ປະເທສທີ່ນັ້ນ ຈຶ່ງພຣະຜູ້ມີພຣະກາຄຮັບສັ່ງຖາມທ່ານພຣະອານົນທ໌ວ່າ ດູຣາອານົນທ໌ ຄົນພວກໃດກຳລັງ ສ້າງນຄຣລົງທີ່ຕຳບົລບ້ານປາຕລີ?

ອ. ມຫາອຳມາຕຍ໌ແຫ່ງມຄສຣັຖ ຊື່ ສຸນີສະ ໑ ວັສສກາຣະ ໑ ກຳລັງສ້າງນຄຣລົງທີ່ຕຳບົລ ບ້ານປາຕລີ ເພື່ອປ້ອງກັນຊາວວັຊຊີ ຂ້ານ້ອຍ.

ກ. ດູຣາອານົນທ໌ ສຸນີສະ ກັບ ວັສສກາຣະ ໔ ມຫາອຳມາຕຍ໌ແຫ່ງມຄສຣັຖກຳລັງສ້າງນຄຣ ລົງໃນຕຳບົລບ້ານປາຕລີ ເພື່ອປ້ອງກັນຊາວວັຊຊີເຫມືອນໄດ້ປຶກษາກັບພວກເທພເຈົ້າຊັ້ນດາວດຶງສ໌ ຈັ່ງຊັ້ນ ອານົນທ໌ ເມື່ອເວລາປັຈຈຸສມັຍແຫ່ງຣາຕຣີນີ້ ເຮົາລຸກຂຶ້ນ ໄດ້ເລັງທິພຈັກษຸອັນບໍຣິສຸທຊີ່ລ່ວງວິສັຍຂອງມນຸษຍ໌ ເຫັນພວກເທວດາເປັນຈຳນວນຫຼາຍກຳລັງຍຶດຖືທີ່ດິນໃນຕຳບົລບ້ານປາຕລີ ຄື ໃນປະເທສທີ່ໃດ ພວກເທວດາ ມີສັກດິ໌ສູງໆ ຍຶດຖືທີ່ດິນພວກເຈົ້າແລະຣາຊມຫາອຳມາຕຍ໌ຜູ້ມີສັກດິ໌ສູງໆ ຕ່າງກໍນ້ອມຈິຕເພື່ອສ້າງນິເວສນ໌ ລົງໃນປະເທສທີ່ນັ້ນ ໃນປະເທສທີ່ໃດ ເທວດາມີສັກດິ໌ຊັ້ນກາງໆ ຍຶດຖືທີ່ດິນ ພວກເຈົ້າແລະຣາຊ-ມຫາອຳມາຕຍ໌ຜູ້ມີສັກດິ໌ຊັ້ນກາງໆ ຕ່າງກໍນ້ອມຈິຕເພື່ອສ້າງນິເວສນ໌ລົງໃນປະເທສທີ່ນັ້ນ ໃນປະເທສທີ່ໃດ ເທວດາຜູ້ມີສັກດິ໌ຊັ້ນຕ່ຳໆ ຍຶດຖືທີ່ດິນ ພວກເຈົ້າແລະຣາຊມຫາອຳມາຕຍ໌ຜູ້ມີສັກດິ໌ຊັ້ນຕ່ຳໆ ຕ່າງກໍນ້ອມຈິຕ

ເພື່ອສ້າງນິເວສນ໌ລົງໃນປະເທສທີ່ນັ້ນ ອານົນທ໌ ຕລອດສຖານທີ່ອັນເປັນຍ່ານຊຸມນຸມແຫ່ງອາຣຍຊົນ ແລະ ເປັນທາງຄ້າຂາຍ ພຣະນຄຣນີ້ ຈະເປັນພຣະນຄຣຊັ້ນເອກ ເປັນທຳເລຄ້າຂາຍ ຊື່ປາຕລີບຸຕຣ໌ ແລເມືອງ ປາຕລີບຸຕຣ໌ ຈະບັງເກີດອັນຕຣາຍ ໓ ປະກາຣ ຄື ບັງເກີດແຕ່ໄຟ ໑ ບັງເກີດແຕ່ນ້ຳ ໑ ບັງເກີດແຕ່ກາຍໃນ ຄື ແຕກສາມັຄຄີກັນ ໑.

[໗໔] ຄັ້ງນັ້ນ ທ່ານສຸນີທະມຫາອຳມາຕຍ໌ແລະທ່ານວັສສກາຣະມຫາອຳມາຕຍ໌ແຫ່ງມຄຣຣັຖ ພາກັນເຂົ້າໄປເຝົ້າພຣະຜູ້ມີພຣະກາຄ ເມື່ອແລ້ວໄດ້ທູລປຣາສຣັຍກັບພຣະຜູ້ມີພຣະກາຄ ເມື່ອຜ່ານການປຣາສຣັຍພໍໃຫ້ເປັນທີ່ບັນເທີງເປັນທີ່ຣະລຶກເຖິງກັນໄປແລ້ວ ໄດ້ຢືນຢູ່ ຓ ທີ່ຄວຣສ່ວນຂ້າງນຶ່ງ ແລ້ວໄດ້ຂາບທູລອາຣາຊນາພຣະຜູ້ມີພຣະກາຄວ່າ ຂໍທ່ານພຣະໂຄດົມ ພ້ອມດ້ວຍກິກຂຸສົງຄ໌ ຈົງທຣົງພຣະກຣຸຕາໂປຼດຮັບກັຕຕາຫາຣຂອງຂ້າພຣະພຸທສເຈົ້າທັ້ງຫລາຍ ເພື່ອຈເຣີຍກຸສົລແລະປີຕິປຼາໂມທຍ໌ໃນວັນນີ້ດ້ວຍເທີ້ນ ພຣະພຸທສຂ້ານ້ອຍ ພຣະຜູ້ມີພຣະກາຄທຣົງຮັບອາຣາຊນາໂດຍດຸສນີກາພ ເມື່ອສຸນີທະມຫາອຳມາຕຍ໌ແລະວັສສກາຣະມຫາອຳມາຕຍ໌ ຮູ້ພຣະອາການທີ່ທຣົງຮັບອາຣາຊນາແລ້ວ ລຸກຈາກທີ່ນັ່ງກັບໄປ ເມື່ອຕົກແຕ່ງຂອງຍ້ຳຂອງຈັນອັນປະນີຕແລ້ວ ໃຫ້ເຈົ້າໜ້າທີ່ມາຂາບທູລກັຕກາລແດ່ພຣະຜູ້ມີພຣະກາຄວ່າ ເຖິງເວລາແລ້ວ ທ່ານພຣະໂຄດົມ ກັຕຕາຫາຣແລ້ວແລ້ວ.

ຄັ້ງນັ້ນເປັນເວລາເຊົ້າ ພຣະຜູ້ມີພຣະກາຄທຣົງຄອງອັນຕຣວາສົກ ທຣົງຖືບາຕຣ໌ຈີວຣສເດັຈພຣະພຸທສດຳເນີນໄປທາງສຖານທີ່ອັງຄາສ ຂອງສອງມຫາອຳມາຕຍ໌ແຫ່ງມຄຣຣັຖ ເມື່ອເຖິງແລ້ວປະທັບນັ່ງເໜືອພຣະພຸທສອາສນ໌ທີ່ເຂົາຈັດຖວາຍ ພ້ອມດ້ວຍກິກຂຸສົງຄ໌ ເມື່ອສອງມຫາອຳມາຕຍ໌ອັງຄາສກິກຂຸສົງຄ໌ມີພຣະພຸທສເຈົ້າເປັນປະມຸຂ ດ້ວຍຂາທນີຍໂກຊນີຍາຫາຣອັນປະນີຕ ດ້ວຍມືຂອງຕົນ ຈົນພຣະຜູ້ມີພຣະກາຄສເວີຍແລ້ວແລ້ວທຣົງນຳພຣະຫັຕຖ໌ອອກຈາກບາຕຣ໌ ຫ້າມກັຕຣ໌ແລ້ວ ໄດ້ນັ່ງຢູ່ ຓ ທີ່ຄວຣສ່ວນຂ້າງນຶ່ງ ພຣະຜູ້ມີພຣະກາຄທຣົງອນຸໂມທນາແກ່ສອງມຫາອຳມາຕຍ໌ນັ້ນດ້ວຍພຣະຄາຖາເຫລົ່ານີ້ ວ່າດັ່ງນີ້:-

ຄາຖາອນຸໂມທນາ

[໗໕] ບັຓທິຕຊາຕິຢູ່ໃນປະເທສໃດ ເບິ່ງແຍງທ່ານຜູ້ມີສີລ ຜູ້
ສຳຣວມ ປະພຶຕພຣົຫ໌ມຈັຣຍ໌ໃນປະເທສ ແລະໄດ້ອຸທິສ
ທັກນິຓາແກ່ເຫລົ່າເທພດາຜູ້ສຖິຕໃນສຖານທີ່ນັ້ນເທພດາເຫລົ່ານັ້ນ
ອັນບັຓທິຕຊາຕິບູຊາແລ້ວ ຍ່ອມບູຊາຕອບ ອັນບັຓທິຕຊາຕິ

ນັບຖືແລ້ວຍ່ອມນັບຖືຕອບ ຊຶ່ງບັຒທິຕຊາຕິນັ້ນ ແຕ່ນັ້ນ ຍ່ອມ
ອນຸເຄາະຫ໌ບັຒທິຕຊາຕິນັ້ນ ເໝືອນມາຣດາອນຸເຄາະຫ໌ບຸຕຣ໌ຜູ້ເກີດ
ຈາກທ້ອງ ຈັ່ງຊັ້ນ ຄົນທີ່ເທພດາອນຸເຄາະຫ໌ແລ້ວ ຍ່ອມພົບເຫັນ
ແຕ່ສິ່ງທີ່ຈເຣີນທຸກເມື່ອ.

[໗໔] ເມື່ອພຣະຜູ້ມີພຣະພາຄທຮົງອນຸໂມທນາແກ່ສອງມຫາອຳມາຕຍ໌ ດ້ວຍພຣະຄາຖາເຫລົ່ານີ້ແລ້ວ ທຮົງລຸກຈາກພຣະພຸທຮອາສນ໌ສເດັຈກັບ ຈຶ່ງສອງມຫາອຳມາຕຍ໌ຕາມສົ່ງສເດັຈພຣະຜູ້ມີພຣະພາຄ ໄປທາງເບື້ອງພຣະປຣືຟຜາງຄ໌ດ້ວຍຄວາມປະສົງຄ໌ວ່າ ວັນນີ້ ພຣະສມຓໂຄດົມຈະສເດັຈອອກທາງປະຕູດ້ານໃດ ປະຕູດ້ານນັ້ນຈະມີນາມວ່າ "ປະຕູພຣະໂຄດົມ" ຈະສເດັຈຂ້າມແມ່ນ້ຳຄົງຄາໂດຍທ່າໃດທ່ານັ້ນຈະມີນາມວ່າ "ທ່າພຣະໂຄດົມ" ຕໍ່ມາປະຕູທີ່ພຣະຜູ້ມີພຣະພາຄສເດັຈພຣະພຸທຮດຳເນີນຜ່ານໄປນັ້ນໄດ້ປຣາກົຕນາມວ່າ "ປະຕູພຣະໂຄດົມ."

ຄັ້ງນັ້ນ ຜູ້ມີພຣະພາຄສເດັຈພຣະພຸທຮດຳເນີນໄປທາງແມ່ນ້ຳຄົງຄາ ກໍເວລານັ້ນ ແມ່ນ້ຳຄົງຄາກຳລັງເຕັມ ນ້ຳສເມີຂອບຝັ່ງ ພໍກາດື່ມກິນໄດ້ ຄົນທັ້ງຫລາຍມັກຈະໄປຈາກຝັ່ງນີ້ສູ່ຝັ່ງນັ້ນ ຕ່າງກໍຫາເຮືອຕ່າງກໍຫາແພ ຕ່າງກໍຜູກແພລູກບວບ ພຣະຜູ້ມີພຣະພາຄໄດ້ທອດພຣະເນຕຣ໌ເຫັນຄົນເຫລົ່ານັ້ນຕ່າງກໍພາກັນຫາເຮືອ ຫາແພ ຜູກແພລູກບວບ ປະສົງຄ໌ຈະຂ້າມຈາກຝັ່ງນັ້ນ ຈຶ່ງໄດ້ທຮົງອັນຕຣະທານ ໓ ຝັ່ງນີ້ແຫ່ງແມ່ນ້ຳຄົງຄາ ໄປປຣາກົຕ ໓ ຝັ່ງນັ້ນພ້ອມກັບພິກຂຸສົງຆ໌ ເໝືອນບຸຣຸษມີກຳລັງຢຽດແຂນທີ່ຄູ້ ຫຼືຄູ້ແຂນທີ່ຢຽດ ຈັ່ງຊັ້ນ.

ຄັ້ງນັ້ນ ພຣະຜູ້ມີພຣະພາຄທຮົງຮູ້ຄວາມຂໍ້ນີ້ແລ້ວ ຈຶ່ງທຮົງພຣະອຸທານນີ້ໃນເວລານັ້ນ
ຊົນເຫລົ່າໃດຈະຂ້າມແມ່ນ້ຳທີ່ຫ້ວງເລິກ ຊົນເຫລົ່ານັ້ນຕ້ອງສ້າງ
ສະພານແລ້ວສລະສະຫນ້ອຍເສັຽ ຈຶ່ງຂ້າມສຖານອັນລຸ່ມເຕັມດ້ວຍ
ນ້ຳໄດ້ ສ່ວນຄົນທີ່ຈະຂ້າມແມ່ນ້ຳຫນ້ອຍນີ້ ກໍຜູກແພຂ້າມໄປໄດ້
ແຕ່ພວກຄົນມີປັຌຌາ ເວັ້ນແພເສັຽກໍຂ້າມໄດ້.

ທຣົງສແດງຈຕຸຣາຣິຍສັຈ

[໗໕] ຄັ້ງນັ້ນ ພຣະຜູ້ມີພຣະກາຄສເດັ່ຈພຣະພຸທຣດຳເນີນເຂົ້າໄປທາງຕຳບົລບ້ານໂກຕິ ຮູ້ວ່າ ພຣະອົງຄ໌ປະທັບຢູ່ທີ່ຕຳບົລບ້ານໂກຕິນັ້ນ

໓ ທີ່ນັ້ນແລພຣະຜູ້ມີພຣະກາຄຮັບສັ່ງພຣະກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ເຮົາແລະພວກທ່ານເຣ່ຣ່ອນທ່ອງທ່ຽວໄປ ຕລອດກາລນານຢ່າງນີ້ ເພາະບໍ່ໄດ້ຕຣັສຮູ້ ບໍ່ໄດ້ແທງຕລອດອຣິຍສັຈ ໔ ອຣິຍສັຈ ໔ ຫຍັງແດ່ ດູຣາກິກຂຸທັ້ງຫລາຍ ເຮົາແລະພວກທ່ານເຣ່ຣ່ອນທ່ອງທ່ຽວໄປຕລອດກາລນານຢ່າງນີ້ ເພາະບໍ່ໄດ້ຕຣັສຮູ້ ບໍ່ໄດ້ແທງຕລອດທຸກຂອຣິຍສັຈ ... ທຸກຂສມຸທຍອຣິຍສັຈ ... ທຸກຂນິໂຣຣອຣິຍສັຈ .... ທຸກຂນິໂຣຣຄາມີນີປຕິປທາອຣິຍສັຈ ດູຣາກິກຂຸທັ້ງຫລາຍ ທຸກຂອຣິຍສັຈ ທຸກຂສມຸທຍອຣິຍສັຈ ທຸກຂນິໂຣຣອຣິຍສັຈ ທຸກຂນິໂຣຣຄາມີນີປຕິປທາອຣິຍສັຈນີ້ນັ້ນ ອັນເຮົາແລະພວກທ່ານໄດ້ຕຣັສຮູ້ແລ້ວ ໄດ້ແທງຕລອດແລ້ວ ຕັດຕັຓຫາໃນກົພໄດ້ຂາດແລ້ວ ຕັຓຫາທີ່ຈະນຳໄປເກີດກໍສິ້ນແລ້ວ ບັດນີ້ ບໍ່ມີການເກີດອີກຕໍ່ໄປ.

ນິຄົມຄາຖາ

[໗໖] ເພາະບໍ່ເຫັນອຣິຍສັຈ ໔ ຕາມເປັນແທ້ ຈຶ່ງຕ້ອງທ່ອງທ່ຽວ
ໄປໃນຊາຕິນັ້ນໆ ຕລອດເວລານານ ອຣິຍສັຈເຫລົ່ານັ້ນທັ່ນ ເຮົາ
ແລະພວກທ່ານໄດ້ເຫັນແລ້ວ ຕັຓຫາທີ່ຈະນຳໄປເກີດເຮົາແລະພວກ
ທ່ານໄດ້ຖອນຂຶ້ນແລ້ວ ຣາກແຫ່ງທຸກຂ໌ ເຮົາແລະພວກທ່ານກໍໄດ້
ຕັດຂາດແລ້ວ ບັດນີ້ ບໍ່ມີການເກີດອີກ.

ເຣື່ອງເຈົ້າລິຈລວີຊາວພຣະນຄຣເວສາລີ

[໗໗] ນາງອັມພປາລີຄະນິກາໄດ້ຮູ້ຂ່າວວ່າ ພຣະຜູ້ມີພຣະພາຄສເດັຈມາໂດຍລຳດັບເຖິງຕຳບົລບ້ານໂກຕິແລ້ວ ຈຶ່ງໃຫ້ຈັດຍວດຍານທີ່ງາມໆ ແລ້ວຂຶ້ນສູ່ຍວດຍານທີ່ງາມໆ ມີຍວດຍານທີ່ງາມໆ ອອກໄປຈາກພຣະນຄຣເວສາລີ ເພື່ອເຝົ້າພຣະຜູ້ມີພຣະພາຄ ໄປດ້ວຍຍວດຍານຕລອດພື້ນທີ່ທີ່ຍວດຍານຈະໄປໄດ້ແລ້ວລົງຈາກຍວດຍານຍ່າງດ້ວຍຕີນເຂົ້າໄປເຖິງພຸທສຳນັກ ຖວາຍບັງຄົມພຣະຜູ້ມີພຣະພາຄແລ້ວ ໄດ້ນັ່ງຢູ່ ຓ ທີ່ຄວຣສ່ວນຂ້າງນຶ່ງ ພຣະຜູ້ມີພຣະພາຄທຣົງຊີ້ແຈງໃຫ້ນາງເຫັນແຈ້ງ ສມາທານ ອາຈຫານ ຣ່າເຣິງດ້ວຍສັມມີກຖາ ເມື່ອນາງອັມພປາລີຄທິກາ ອັນພຣະຜູ້ມີພຣະພາຄທຣົງຊີ້ແຈງໃຫ້ເຫັນແຈ້ງ ສມາທານ ອາຈຫານ ຣ່າເຣິງ ດ້ວຍສັມມີກຖາແລ້ວ ໄດ້ຂາບທູລຄຳນີ້ແດ່ພຣະຜູ້ມີພຣະພາຄວ່າ ຂໍພຣະຜູ້ມີພຣະພາຄພ້ອມດ້ວຍພຣະສົງຆ໌ ທຣົງພຣະກຣຸຓາໂປຼດຮັບກັຕຕາຫາຣຂອງຂ້ານ້ອຍເພື່ອຈເຣີນບຸຓກຸສົລແລະປີຕິປຼາໂມທຍ໌ໃນມື້ອື່ນເຊົ້າ ພຣະຜູ້ມີພຣະພາຄທຣົງຮັບອາຣາຘນາໂດຍດຸษຓີກາພ ເມື່ອນາງຮູ້ພຣະອາກາຣທີ່ທຣົງຮັບອາຣາຘນາແລ້ວ ລຸກຈາກທີ່ນັ່ງ ຖວາຍບັງຄົມພຣະຜູ້ມີພຣະພາຄ ທຳປະທັກษິຓແລ້ວກັບໄປ.

ພວກເຈົ້າລິຈລວີຊາວພຣະນຄຣເວສາລີ ໄດ້ທຣົງສດັບຂ່າວວ່າ ພຣະຜູ້ມີພຣະພາຄສເດັຈມາໂດຍລຳດັບເຖິງຕຳບົລບ້ານໂກຕິແລ້ວ ຈຶ່ງພາກັນຈັດຍວດຍານທີ່ງາມໆ ສເດັຈຂຶ້ນສູ່ຍວດຍານທີ່ງາມໆ ມີຍວດຍານທີ່ງາມໆອອກໄປຈາກພຣະນຄຣເວສາລີ ເພື່ອເຝົ້າພຣະຜູ້ມີພຣະພາຄ ເຈົ້າລິຈລວີບາງພວກຂຽວ ຄື ມີພຣະລວີຂຽວທຣົງວັຕຖາລັງກາຣຂຽວ ບາງພວກເຫລືອງ ຄື ມີພຣະລວີເຫລືອງ ທຣົງວັຕຖາລັງກາຣເຫລືອງ ບາງພວກແດງຄື ມີພຣະລວີແດງ ທຣົງວັຕຖາລັງກາຣແດງ ບາງພວກຂາວ ຄື ມີພຣະລວີຂາວ ທຣົງວັຕຖາລັງກາຣຂາວ

ຂຓະນັ້ນ ນາງອັມພປາລີຄທິກາ ເຮັດໃຫ້ງອນຣົຖກະທົບງອນຣົຖ ແອກກະທົບແອກ ລໍ້ກະທົບລໍ້ເພົາກະທົບເພົາ ຂອງເຈົ້າລິຈລວີຫນຸ່ມໆ ຈຶ່ງເຈົ້າລິຈລວີເຫລົ່ານັ້ນໄດ້ຕຣັສຖາມນາງວ່າ ແມ່ອັມພປາລີເຫຕຸເປັນຫຍັງທ່ານຈຶ່ງໄດ້ເຮັດໃຫ້ງອນຣົຖກະທົບງອນຣົຖ ແອກກະທົບແອກ ລໍ້ກະທົບລໍ້ ເພົາກະທົບເພົາຂອງເຈົ້າລິຈລວີຫນຸ່ມໆ ຂອງພວກເຮົາລະ?

ອັມ. ແທ້ຢ່າງນັ້ນ ຂ້ານ້ອຍ ເພາະຂ້ານ້ອຍໄດ້ນິມົນຕ໌ກິກຂຸສົງຆ໌ມີພຣະພຸທເຈົ້າເປັນປະມຸຂເພື່ອຈເຣີນບຸຓກຸສົລແລະປີຕິປຼາໂມທຍ໌ໃນມື້ອື່ນເຊົ້າ.

ລິຈ. ແມ່ອັມພປາລີ ທ່ານຈົ່ງໃຫ້ກັຕຕາຫາຣມື້ນີ້ແກ່ພວກຂ້ານ້ອຍ ດ້ວຍຣາຄາແສນກษາປຓ໌ເທີ້ນ.

ອັນ. ແມ້ວ່າຝ່າພຣະບາທ ຈຶ່ງຄວຣປະທານ ພຣະນຄຣເວສາລີພ້ອມທັ້ງຊົນບົທແກ່ຂ້ານ້ອຍ ຂ້ານ້ອຍກໍຖວາຍກັຕຕາຫາຣມື້ນັ້ນບໍ່ໄດ້ ຂ້ານ້ອຍ.

ຈຶ່ງເຈົ້າລິຈສວີເຫລົ່ານັ້ນໄດ້ທຣົງດີດພຣະອົງຄຸລີຕຣັສວ່າ ທ່ານທັ້ງຫລາຍ ພວກເຮົາແພ້ແມ່ອັມພປາລີ ແລ້ວ ທ່ານທັ້ງຫລາຍ ພວກເຮົາແພ້ແມ່ອັມພປາລີແລ້ວ ຈຶ່ງພາກັນເຂົ້າໄປເຝົ້າພຣະຜູ້ມີພຣະກາຄ. ພຣະຜູ້ມີ ພຣະກາຄໄດ້ທອດພຣະເນຕຣ໌ເຫັນເຈົ້າລິຈສວີເຫລົ່ານັ້ນກໍາລັງສເດັຈມາແຕ່ໄກ ເມື່ອແລ້ວຮັບສັ່ງກະກິກຂຸ ທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ກິກຂຸເຫລົ່າໃດບໍ່ເຄີຍເຫັນເທພເຈົ້າຊັ້ນດາວດຶງສ໌ກໍຈົ່ງເບິ່ງພວກເຈົ້າລິຈສວີ ພິຈາຣະນາເບິ່ງ ທຽບຄຽງເບິ່ງ ພວກເຈົ້າລິຈສວີກັບພວກເທພເຈົ້າຊັ້ນດາວດຶງສ໌ເທີ້ນ ຈຶ່ງເຈົ້າລິຈສວີເຫລົ່ານັ້ນໄດ້ ສເດັຈໄປດ້ວຍຍວດຍານ ຕລອດພື້ນທີ່ທີ່ຍວດຍານຈະໄປໄດ້ ແລ້ວສເດັຈລົງຈາກຍວດຍານທຣົງດໍາເນີນດ້ວຍ ພຣະບາທ ເຂົ້າໄປເຖິງພຸທສສໍານັກ ຖວາຍບັງຄົມພຣະຜູ້ມີພຣະກາຄແລ້ວ ປະທັບນັ່ງຢູ່ ຓ ທີ່ຄວຣສ່ວນຂ້າງ ນຶ່ງ ພຣະຜູ້ມີພຣະກາຄທຣົງຊີ້ແຈງໃຫ້ເຈົ້າລິຈສວີເຫລົ່ານັ້ນ ທຣົງເຫັນແຈ້ງສມາທານ ອາຈຫານ ຣ່າເຣິງດ້ວຍ ສັມມີກຖາ ຈຶ່ງເຈົ້າລິຈສວີເຫລົ່ານັ້ນ ອັນພຣະຜູ້ມີພຣະກາຄທຣົງຊີ້ແຈງໃຫ້ເຫັນແຈ້ງສມາທານ ອາຈຫານ ຣ່າເຣິງ ດ້ວຍສັມມີກຖາແລ້ວ ໄດ້ຂາບທູລອາຣາສນາພຣະຜູ້ມີພຣະກາຄວ່າ ຂໍພຣະອົງຄ໌ພ້ອມດ້ວຍກິກຂຸສົງฆ໌ທຣົງ ພຣະກຣຸຓາໂປຼດຮັບກັຕຕາຫາຣຂອງພວກຂ້າພຣະພຸທສເຈົ້າ ເພື່ອຈເຣີນບຸຌກຸສົລ ແລະປີຕິປຼາໂມທຍ໌ ໃນ ມື້ອື່ນເຊົ້າດ້ວຍເທີ້ນ ຂ້ານ້ອຍ.

ພຣະຜູ້ມີພຣະກາຄຕຣັສວ່າ ດູຣາລິຈສວີທັ້ງຫລາຍ ອາຕມາຮັບນິມົນຕ໌ລັບກັຕຕາຫາຣຂອງນາງ ອັມພປາລີຄຓິກາ ເພື່ອຈເຣີນບຸຌກຸສົລ ແລະປີຕິປຼາໂມທຍ໌ ໃນມື້ອື່ນເຊົ້າແລ້ວ.

ເຈົ້າລິຈສວີເຫລົ່ານັ້ນທຣົງດີດອົງຄຸລີແລ້ວຕຣັສໃນທັນໃດນັ້ນວ່າ ທ່ານທັ້ງຫລາຍ ພວກເຮົາແພ້ນາງ ອັມພປາລີຄຓິກາແລ້ວ ທ່ານທັ້ງຫລາຍ ພວກເຮົາແພ້ນາງອັມພປາລີຄຓິກາແລ້ວ ແລະໄດ້ທຣົງເພີດເພີນ ຍິນດີຕາມກາษິຕຂອງພຣະຜູ້ມີພຣະກາຄ ສເດັຈລຸກຈາກທີ່ປະທັບຖວາຍບັງຄົມພຣະຜູ້ມີພຣະກາຄ ທຣົງເຮັດ ປະທັກษິຓ ແລ້ວສເດັຈກັບ.

ນາງອັມພປາລີ ຖວາຍອັມພປາລີວັນ

ຄັ້ງນັ້ນ ພຣະຜູ້ມີພຣະກາຄປະທັບຢູ່ ຓ ຕໍາບົລບ້ານໂກຕິຕາມພຣະພຸທສາກິຣົມຍ໌ ແລ້ວສເດັຈພຣະ ພຸທສດໍາເນີນໄປທາງເມືອງນາທິກາ ຮູ້ວ່າ ພຣະອົງຄ໌ປະທັບຢູ່ທີ່ພຣະຕໍາຫນັກຕຶກ ເຂຕເມືອງນາທິການັ້ນ.

ສ່ວນນາງອັມພປາລີຄຓິກາ ສັ່ງໃຫ້ຕົກແຕ່ງຂອງຍໍ້າຂອງລັບອັນປະຓີຕ ໃນສວນຂອງຕົນໂດຍ ຜ່ານຣາຕຣີນັ້ນ ແລ້ວໃຫ້ຄົນໄປຂາບທູລກັຕກາລແດ່ພຣະຜູ້ມີພຣະກາຄວ່າ ເຖິງເວລາແລ້ວ ຂ້ານ້ອຍ ກັຕຕາຫາຣແລ້ວແລ້ວ.

ຂຓະນັ້ນເປັນເວລາເຊົ້າ ພຣະຜູ້ມີພຣະກາຄທຣົງຄອງອັນຕຣວາສົກແລ້ວ ຖືບາຕຣ໌ຈີວຣສເດັຈພຣະພຸທສດຳເນີນໄປສູ່ສຖານທີ່ອັງຄາສຂອງນາງອັມພປາລິຄຶກາ ເມື່ອເຖິງແລ້ວ ປະທັບນັ່ງເຫນືອພຣະພຸທສ-ອາສນ໌ທີ່ເຂົາຈັດຖວາຍ ພ້ອມດ້ວຍກິກຂຸສົງຆ໌ ຈຶ່ງນາງອັມພປາລິຄຶກາ ອັງຄາສກິກຂຸສົງຆ໌ມີພຣະພຸທສເຈົ້າເປັນປະມຸຂ ດ້ວຍຂາທນີຍໂກຊນີຍາຫາຣອັນປະຓີຕດ້ວຍມືຂອງຕົນ ຈົນພຣະຜູ້ມີພຣະກາຄສເວີຍແລ້ວແລ້ວ ທຣົງນຳພຣະຫັຕຖ໌ອອກຈາກບາຕຣ໌ ຫ້າມກັຕຣ໌ແລ້ວ ໄດ້ນັ່ງເຝົ້າຢູ່ ໓ ທີ່ຄວຣສ່ວນຂ້າງນຶ່ງ ນາງໄດ້ຂາບທູລຄຳນີ້ແດ່ພຣະຜູ້ມີພຣະກາຄວ່າ ຂ້ານ້ອຍຂໍຖວາຍສວນອັມພປາລິວັນນີ້ ແກ່ກິກຂຸສົງຆ໌ມີພຣະພຸທສເຈົ້າເປັນປະມຸຂ ຂ້ານ້ອຍ ພຣະຜູ້ມີພຣະກາຄທຣົງຮັບເປັນສັງຆາຣາມແລ້ວ ເມື່ອແລ້ວພຣະອົງຄ໌ທຣົງຊີ້ແຈງໃຫ້ນາງອັມພປາລິເຫັນແຈ້ງສມາທານ ອາຈຫາຍ ຣ່າເຣີງດ້ວຍສັມມິກຖາ ແລ້ວລຸກຈາກພຣະພຸທສອາສນ໌ແລ້ວ ສເດັຈພຣະພຸທສດຳເນີນໄປທາງປ່າມຫາວັນ ຮູ້ວ່າ ພຣະອົງຄ໌ປະທັບຢູ່ ໓ ກູຕາຄາຣສາລາ ປ່າມຫາວັນ ເຂຕພຣະນຄຣເວສາລີນັ້ນ.

ເຣື່ອງເຈົ້າລິຈສວີຊາວພຣະນຄຣເວສາລີ ຈົບ.

ລິຈສວີກາຓວາຣ ຈົບ.

ເຣື່ອງສີຫະເສນາບໍດີ

ດຳຣິເຂົ້າເຝົ້າພຣະຜູ້ມີພຣະກາຄ

[໗໘] ກໍໂດຍສມັຍນັ້ນແລ ເຈົ້າລິຈສວີບັຣດາທີ່ມີຊື່ສຽງ ມີຄົນຮູ້ຈັກ ນັ່ງປະຊຸມພ້ອມກັນ ໓ ຫ້ອງພຣະໂຮງ ຕ່າງພາກັນຕຣັສສັຣເສີນພຣະພຸທສຄຸຓ ພຣະທັມມຄຸຓ ພຣະສັງຆຄຸຓ ໂດຍອເນກປຣິຍາຍ ແລະເວລານັ້ນ ສີຫະເສນາບໍດີສາວົກຂອງນິຄຣົນຖ໌ ນັ່ງຢູ່ໃນທີ່ປະຊຸມນັ້ນດ້ວຍ ຈຶ່ງຄຶດວ່າພຣະຜູ້ມີພຣະກາຄພຣະອົງຄ໌ນັ້ນຈະເປັນພຣະອຣຫັນຕສັມມາສັມພຸທສເຈົ້າ ໂດຍບໍ່ຕ້ອງສົງສັຍເລີຍ ຄົງເປັນຄວາມແທ້ ເຈົ້າລິຈສວີບັຣດາທີ່ມີຊື່ສຽງ ມີຄົນຮູ້ຈັກເຫລົ່ານີ້ຈຶ່ງໄດ້ນັ່ງປະຊຸມພ້ອມກັນ ໓ ຫ້ອງພຣະໂຮງ ຕ່າງພາກັນຕຣັສສັຣເສີນພຣະພຸທສຄຸຓ ພຣະທັມມຄຸຓ ພຣະສັງຆຄຸຓໂດຍອເນກປຣິຍາຍ ຖ້າແນວໃດເຮົາຄວຣເຂົ້າໄປເຝົ້າພຣະຜູ້ມີພຣະກາຄອຣຫັນຕສັມມາສັມພຸທສເຈົ້າພຣະອົງຄ໌ນັ້ນ ແລ້ວຈຶ່ງໄດ້ເຂົ້າໄປຫານິຄຣົນຖ໌

ນາຕບຸຕຣ໌ເຖິງສຳນັກ ເມື່ອແລ້ວໃຫ້ນິຄຣິນຖ໌ນາຕບຸຕຣ໌ ນັ່ງ ຓ ທີ່ຄວຣສ່ວນຂ້າງນຶ່ງແລະໄດ້ແຈ້ງຄວາມ ປະສົງຄ໌ນີ້ ແກ່ນິຄຣິນຖ໌ນາຕບຸຕຣ໌ວ່າ ທ່ານຂ້ານ້ອຍ ຂ້າພເຈົ້າຢາກຈະໄປເຝົ້າພຣະສມຓໂຄຄົມ.

ອກິຣິຍວາທກາຖາ

ນິຄຣິນຖ໌ນາຕບຸຕຣ໌ເວົ້າຄ້ານວ່າ ທ່ານສີຫະ ກໍທ່ານເປັນຄົນກ່າວການທຳ ເປັນຫຍັງຈຶ່ງຈະໄປເຝົ້າ ພຣະສມຓໂຄຄົມຜູ້ເປັນຄົນກ່າວການບໍ່ເຮັດລະ ເພາະພຣະສມຓໂຄຄົມເປັນຜູ້ກ່າວການບໍ່ເຮັດ ທຣົງສແດງ ສັມມ໌ເພື່ອການບໍ່ເຮັດ ແລະທຣົງແນະນຳສາວົກຕາມແນວນັ້ນ.

ຂຓະນັ້ນ ຄວາມກະກຽມໃນອັນຈະໄປເຝົ້າພຣະຜູ້ມີພຣະພາຄຂອງສີຫະເສນາບໍດີໄດ້ເລີກລົ້ມໄປ.

ແມ້ຄັ້ງທີ່ສອງ ....

ແມ້ຄັ້ງທີ່ສາມ ເຈົ້າລິຈຈວີບັຣດາທີ່ມີຊື່ສຽງ ມີຄົນຮູ້ຈະໄດ້ນັ່ງປະຊຸມພ້ອມກັນ ຓ ຫ້ອງ ພຣະໂຮງ ຕ່າງພາກັນຕຣັສສັຣເສີນພຣະພຸທສຄຸຓ ພຣະສັມມຄຸຓ ພຣະສັງໝຄຸຓ ໂດຍອເນກປຣິຍາຍ ທ່ານສີຫະເສນາບໍດີກໍໄດ້ຄຶດເປັນຄັ້ງທີ່ສາມວ່າ ພຣະຜູ້ມີພຣະພາຄພຣະອົງຄ໌ນັ້ນ ຈະເປັນພຣະອຣຫັນຕ-ສັມມາສັມພຸທສເຈົ້າ ໂດຍບໍ່ຕ້ອງສົງສັຍເລີຍ ຄົງເປັນຄວາມແທ້ ເຈົ້າລິຈຈວີບັຣດາທີ່ມີຊື່ສຽງ ມີຄົນ ຮູ້ຈັກເຫລົ່ານີ້ ຈຶ່ງໄດ້ມານັ່ງປະຊຸມພ້ອມກັນ ຓ ຫ້ອງພຣະໂຮງ ຕ່າງພາກັນຕຣັສສັຣເສີນພຣະພຸທສຄຸຓ ພຣະສັມມຄຸຓ ພຣະສັງໝຄຸຓ ໂດຍອເນກປຣິຍາຍ ກໍພວກນິຄຣິນຖ໌ ເຮົາຈະບອກຫຼືບໍ່ບອກຈະເຮັດຫຍັງ ແກ່ເຮົາ ຫາກຈັ່ງຊັ້ນ ເຮົາຈະບໍ່ບອກພວກນິຄຣິນຖ໌ ໄປເຝົ້າພຣະຜູ້ມີພຣະພາຄອຣຫັນຕສັມມາສັມພຸທສເຈົ້າ ພຣະອົງຄ໌ນັ້ນເລີຍທີດຽວ ຈຶ່ງເວລາບ່າຍ ສີຫະເສນາບໍດີອອກຈາກພຣະນຄຣເວສາລີພ້ອມດ້ວຍຣົຖ ໕໐໐ ຄັນ ໄປເຝົ້າພຣະຜູ້ມີພຣະພາຄໄປດ້ວຍຍວດຍານຕລອດພື້ນທີ່ທີ່ຍວດຍານຈະຜ່ານໄປໄດ້ ແລ້ວລົງຈາກຍວດຍານຍ່າງ ເຂົ້າໄປເຖິງພຸທສສຳນັກ ຖວາຍບັງຄົມພຣະຜູ້ມີພຣະພາຄແລ້ວ ນັ່ງຢູ່ ຓ ທີ່ຄວຣສ່ວນຂ້າງນຶ່ງ ສີຫະເສນາບໍດີ ນັ່ງຢູ່ ຓ ທີ່ຄວຣສ່ວນຂ້າງນຶ່ງແລ້ວ ໄດ້ຂາບທູລເຣື່ອງນີ້ແດ່ພຣະຜູ້ມີພຣະພາຄວ່າ

ໂດຍ-ຂ້ານ້ອຍ ຂ້າພຣະພຸທສເຈົ້າຮູ້ມາວ່າ ພຣະສມຓໂຄຄົມກ່າວການບໍ່ເຮັດ ທຣົງສແດງ ສັມມ໌ເພື່ອການບໍ່ເຮັດ ແລະທຣົງແນະນຳສາວົກຕາມແນວນັ້ນ ບຸຄຄົລຈຳພວກທີ່ກ່າວຢ່າງນີ້ວ່າ ພຣະ ສມຓໂຄຄົມກ່າວການບໍ່ເຮັດ ທຣົງສແດງສັມມ໌ເພື່ອການບໍ່ເຮັດ ແລະທຣົງແນະນຳສາວົກຕາມແນວນັ້ນ ດັ່ງນີ້ນັ້ນ ໄດ້ກ່າວຕາມທີ່ພຣະຜູ້ມີພຣະພາຄຕຣັສແລ້ວ ບໍ່ກ່າວຕູ່ພຣະຜູ້ມີພຣະພາຄດ້ວຍຄຳອັນບໍ່ເປັນແທ້ ກ່າວອ້າງເຫຕຸສົມຄວຣແກ່ເຫຕຸ ແລະຖ້ອຍຄຳທີ່ສົມຄວຣເວົ້າບາງຢ່າງທີ່ມີເຫຕຸຜົລ ຈະບໍ່ມາເຖິງຖານະທີ່ ວິນຍູຊົນຈະຕ້ອງຕິຕຽນແດ່ບໍ່ ເພາະຂ້າພຣະພຸທສເຈົ້າບໍ່ປະສົງຄ໌ຈະກ່າວຕູ່ພຣະຜູ້ມີພຣະພາຄເລີຍ ຂ້ານ້ອຍ.

ພຣະພຸທສດຳຣັສຕອບ

[໑໙] ພຣະຜູ້ມີພຣະກາຄຕຣັສຕອບວ່າ ມີຢູ່ແທ້ ສີຫະ ເຫຕຸທີ່ເຂົາກ່າວຫາເຮົາວ່າ ພຣະສມຕະ-ໂຄດົມກ່າວການບໍ່ເຮັດ ສແດງສັມມ໌ເພື່ອການບໍ່ເຮັດ ແລະແນະນຳສາວົກຕາມແນວນັ້ນ ດັ່ງນີ້ ຊື່ວ່າກ່າວຖືກ.

ມີຢູ່ແທ້ ສີຫະ ເຫຕຸທີ່ເຂົາກ່າວຫາເຮົາວ່າ ພຣະສມຕໂຄດົມ ກ່າວການທຳສແດງສັມມ໌ເພື່ອການທຳ ແລະແນະນຳສາວົກຕາມແນວນັ້ນ ດັ່ງນີ້ ຊື່ວ່າກ່າວຖືກ.

ມີຢູ່ແທ້ ສີຫະ ເຫຕຸທີ່ເຂົາກ່າວຫາເຮົາວ່າ ພຣະສມຕໂຄດົມກ່າວຄວາມຂາດສູນ ສແດງສັມມ໌ເພື່ອຄວາມຂາດສູນ ແລະແນະນຳສາວົກຕາມແນວນັ້ນ ດັ່ງນີ້ ຊື່ວ່າກ່າວຖືກ.

ມີຢູ່ແທ້ ສີຫະ ເຫຕຸທີ່ເຂົາກ່າວຫາເຮົາວ່າ ພຣະສມຕໂຄດົມຊ່າງບໍ່ພໍໃຈ ສແດງສັມມ໌ເພື່ອຄວາມບໍ່ພໍໃຈ ແລະແນະນຳສາວົກຕາມແນວນັ້ນ ດັ່ງນີ້ ຊື່ວ່າກ່າວຖືກ.

ມີຢູ່ແທ້ ສີຫະ ເຫຕຸທີ່ເຂົາກ່າວຫາເຮົາວ່າ ພຣະສມຕໂຄດົມຊ່າງກຳຈັດ ສແດງສັມມ໌ເພື່ອຄວາມກຳຈັດ ແລະແນະນຳສາວົກຕາມແນວນັ້ນ ດັ່ງນີ້ ຊື່ວ່າກ່າວຖືກ.

ມີຢູ່ແທ້ ສີຫະ ເຫຕຸທີ່ເຂົາກ່າວຫາເຮົາວ່າ ພຣະສມຕໂຄດົມຊ່າງເຜົາຜລານ ສແດງສັມມ໌ເພື່ອຄວາມເຜົາຜລານ ແລະແນະນຳສາວົກຕາມແນວນັ້ນ ດັ່ງນີ້ ຊື່ວ່າກ່າວຖືກ.

ມີຢູ່ແທ້ ສີຫະ ເຫຕຸທີ່ເຂົາກ່າວຫາເຮົາວ່າ ພຣະສມຕໂຄດົມບໍ່ຜຸດເກີດ ສແດງສັມມ໌ເພື່ອຄວາມບໍ່ຜຸດເກີດ ແລະແນະນຳສາວົກຕາມແນວນັ້ນ ດັ່ງນີ້ ຊື່ວ່າກ່າວຖືກ.

ມີຢູ່ແທ້ ສີຫະ ເຫຕຸທີ່ເຂົາກ່າວຫາເຮົາວ່າ ພຣະສມຕໂຄດົມກ່າວເປັນຜູ້ເບົາໃຈ ສແດງສັມມ໌ເພື່ອຄວາມເບົາໃຈ ແລະແນະນຳສາວົກຕາມແນວນັ້ນ ດັ່ງນີ້ ຊື່ວ່າກ່າວຖືກ.

ດູຣາສີຫະ ກໍເຫຕຸທີ່ເຂົາກ່າວຫາເຮົາວ່າ ພຣະສມຕໂຄດົມກ່າວການບໍ່ເຮັດ ສແດງສັມມ໌ເພື່ອການບໍ່ເຮັດ ແລະແນະນຳສາວົກຕາມແນວນັ້ນ ດັ່ງນີ້ ຊື່ວ່າກ່າວຖືກນັ້ນເປັນຢ່າງໃດ ດູຣາສີຫະ ເພາະເຮົາກ່າວການບໍ່ເຮັດກາຍທຸຈຣິຕ ວຈີທຸຈຣິຕ ມໂນທຸຈຣິຕ ເຮົາກ່າວການບໍ່ເຮັດສິ່ງທີ່ເປັນບາປອກຸສົລຫລາຍຢ່າງນີ້ແລ ເຫຕຸທີ່ເຂົາກ່າວຫາເຮົາວ່າ ພຣະສມຕໂຄດົມກ່າວການບໍ່ເຮັດ ສແດງສັມມ໌ເພື່ອການບໍ່ເຮັດ ແລະແນະນຳສາວົກຕາມແນວນັ້ນ ດັ່ງນີ້ ຊື່ວ່າກ່າວຖືກ.

ດູຣາສີຫະ ປະການນຶ່ງ ເຫຕຸທີ່ເຂົາກ່າວຫາເຮົາວ່າ ພຣະສມຕໂຄດົມກ່າວການທຳສແດງສັມມ໌ເພື່ອການທຳ ແລະແນະນຳສາວົກຕາມແນວນັ້ນ ດັ່ງນີ້ ຊື່ວ່າກ່າວຖືກນັ້ນ ເປັນຢ່າງໃດ ດູຣາສີຫະ ເພາະ

ເພາະເຮົາກ່າວການທຳກາຍສຸຈຣິຕ ວຈີສຸຈຣິຕ ມໂນສຸຈຣິຕ ເຮົາກ່າວການທຳສິ່ງທີ່ເປັນອກຸສົລຫລາຍຢ່າງ ນີ້ແລ ເຫຕຸທີ່ເຂົາກ່າວຫາເຮົາວ່າ ພຣະສມຕໂຄດົມກ່າວການທຳ ສແດງສັມມ໌ເພື່ອການທຳ ແລະແນະນຳສາວົກຕາມແນວນັ້ນ ດັ່ງນີ້ ຊື່ວ່າກ່າວຖືກ.

ດູຣາສີຫະ ປະການນຶ່ງ ເຫຕຸທີ່ເຂົາກ່າວຫາເຮົາວ່າ ພຣະສມຕໂຄດົມກ່າວຄວາມຂາດສູນ ສແດງສັມມ໌ເພື່ອຄວາມຂາດສູນ ແລະແນະນຳສາວົກຕາມແນວນັ້ນ ດັ່ງນີ້ ຊື່ວ່າກ່າວຖືກນັ້ນ ເປັນຢ່າງໃດ ດູຣາສີຫະ ເພາະເຮົາກ່າວຄວາມຂາດສູນແຫ່ງຣາຄະ ໂທສະ ໂມຫະ ເຮົາກ່າວຄວາມຂາດສູນແຫ່ງສຖານະທີ່ເປັນບາປອກຸສົລຫລາຍຢ່າງ ນີ້ແລ ເຫຕຸທີ່ເຂົາກ່າວຫາເຮົາວ່າ ພຣະສມຕໂຄດົມກ່າວຄວາມຂາດສູນສແດງສັມມ໌ເພື່ອຄວາມຂາດສູນ ແລະແນະນຳສາວົກຕາມແນວນັ້ນ ດັ່ງນີ້ ຊື່ວ່າກ່າວຖືກ.

ດູຣາສີຫະ ປະການນຶ່ງ ເຫຕຸທີ່ເຂົາກ່າວຫາເຮົາວ່າ ພຣະສມຕໂຄດົມຊ່າງບໍ່ພໍໃຈ ສແດງສັມມ໌ເພື່ອຄວາມບໍ່ພໍໃຈ ແລະແນະນຳສາວົກຕາມແນວນັ້ນ ດັ່ງນີ້ ຊື່ວ່າກ່າວຖືກນັ້ນ ເປັນຢ່າງໃດ ດູຣາສີຫະ ເພາະເຮົາບໍ່ພໍໃຈກາຍທຸຈຣິຕ ວຈີທຸຈຣິຕ ມໂນທຸຈຣິຕ ເຮົາບໍ່ພໍໃຈຄວາມເຖິງພ້ອມແຫ່ງສຖານະທີ່ເປັນບາປອກຸສົລຫລາຍຢ່າງ ນີ້ແລ ເຫຕຸທີ່ເຂົາກ່າວຫາເຮົາວ່າ ພຣະສມຕໂຄດົມຊ່າງບໍ່ພໍໃຈ ສແດງສັມມ໌ເພື່ອຄວາມບໍ່ພໍໃຈ ແລະແນະນຳສາວົກຕາມແນວນັ້ນ ດັ່ງນີ້ ຊື່ວ່າກ່າວຖືກ.

ດູຣາສີຫະ ປະການນຶ່ງ ເຫຕຸທີ່ເຂົາກ່າວຫາເຮົາວ່າ ພຣະສມຕໂຄດົມຊ່າງກຳຈັດ ສແດງສັມມ໌ເພື່ອຄວາມ

ກຳຈັດ ແລະແນະນຳສາວົກຕາມແນວນັ້ນ ດັ່ງນີ້ ຊື່ວ່າກ່າວຖືກນັ້ນ ເປັນຢ່າງໃດ ດູຣາສີຫະ ເພາະເຮົາສແດງສັມມ໌ເພື່ອກຳຈັດ ຣາຄະ ໂທສະ ໂມຫະ ສແດງສັມມ໌ເພື່ອກຳຈັດສຖານະທີ່ເປັນບາປອກຸສົລຫລາຍຢ່າງ ນີ້ແລ ເຫຕຸທີ່ເຂົາກ່າວຫາເຮົາວ່າພຣະສມຕໂຄດົມຊ່າງກຳຈັດ ສແດງສັມມ໌ເພື່ອຄວາມກຳຈັດແລະແນະນຳສາວົກຕາມແນວນັ້ນ ດັ່ງນີ້ ຊື່ວ່າກ່າວຖືກ.

ດູຣາສີຫະ ປະການນຶ່ງ ເຫຕຸທີ່ເຂົາກ່າວຫາເຮົາວ່າ ພຣະສມຕໂຄດົມຊ່າງເຜົາຜລານ ສແດງສັມມ໌ເພື່ອຄວາມເຜົາຜລານ ແລະແນະນຳສາວົກຕາມແນວນັ້ນ ດັ່ງນີ້ ຊື່ວ່າກ່າວຖືກນັ້ນ ເປັນຢ່າງໃດ ດູຣາສີຫະເພາະເຮົາກ່າວສັມມ໌ທີ່ເປັນບາປອກຸສົລ ຄື ກາຍທຸຈຣິຕ ວຈີທຸຈຣິຕ ມໂນທຸຈຣິຕ ວ່າເປັນສັມມ໌ຄວຣເຜົາຜລານ ສັມມ໌ທີ່ເປັນບາປອກຸສົລ ຊຶ່ງຄວຣເຜົາຜລານ ອັນຜູ້ໃດລະໄດ້ແລ້ວ ຕັດຮາກຂາດແລ້ວ ເຮັດໃຫ້ເປັນເຫມືອນຕາລຍອດດ້ວນ ເຮັດບໍ່ໃຫ້ມີໃນກາຍຫລັງ ມີອັນບໍ່ເກີດອີກຕໍ່ໄປເປັນສັມມດາ ເຮົາກ່າວ

ຜູ້ນັ້ນວ່າ ເປັນຄົນຊ່າງເຜົາຜລານ ດູຣາສີຫະ ສັມມ໌ທີ່ເປັນບາປອກຸສົລຊຶ່ງຄວຣເຜົາຜລານຕຖາຄົຕລະໄດ້ແລ້ວ ຕັດຮາກຂາດແລ້ວ ເຮັດໃຫ້ເຫມືອນຕາລຍອດດ້ວນ ເຮັດບໍ່ໃຫ້ມີໃນກາຍຫລັງ ມີອັນບໍ່ເກີດອີກຕໍ່ໄປເປັນສັມມດາ ນີ້ແລ ເຫຕຸທີ່ເຂົາກ່າວຫາເຮົາວ່າ ພຣະສມຕໂຄດົມຊ່າງເຜົາຜລານ ສແດງສັມມ໌ເພື່ອຄວາມເຜົາຜລານ ແລະແນະນຳສາວົກຕາມແນວນັ້ນ ດັ່ງນີ້ ຊື່ວ່າກ່າວຖືກ.

ດູຣາສີຫະ ປະການນຶ່ງ ເຫຕຸທີ່ເຂົາກ່າວຫາເຮົາວ່າ ພຣະສມຕໂຄດົມບໍ່ຜຸດເກີດ ສແດງສັມມ໌ເພື່ອຄວາມບໍ່ຜຸດເກີດ ແລະແນະນຳສາວົກຕາມແນວນັ້ນ ດັ່ງນີ້ ຊື່ວ່າກ່າວຖືກນັ້ນ ເປັນຢ່າງໃດ ດູຣາສີຫະ ເພາະການນອນໃນຄັຣກ໌ຕໍ່ໄປ ການເກີດໃນກົພໃຫມ່ ອັນຜູ້ໃດລະໄດ້ແລ້ວ ຕັດຮາກຂາດແລ້ວ ເຮັດໃຫ້ເປັນເຫມືອນຕາລຍອດດ້ວນ ເຮັດບໍ່ໃຫ້ມີໃນກາຍຫລັງ ມີອັນບໍ່ເກີດອີກຕໍ່ໄປເປັນສັມມດາ ເຮົາກ່າວຜູ້ນັ້ນວ່າ ເປັນຄົນບໍ່ຜຸດເກີດ ດູຣາສີຫະ ການນອນໃນຄັຣກ໌ຕໍ່ໄປ ການເກີດໃນກົພໃຫມ່ ຕຖາຄົຕລະໄດ້ແລ້ວ ຕັດຮາກຂາດແລ້ວ ເຮັດໃຫ້ເປັນເຫມືອນຕາລຍອດດ້ວນ ເຮັດບໍ່ໃຫ້ມີໃນກາຍຫລັງ ມີອັນບໍ່ເກີດອີກຕໍ່ໄປເປັນສັມມດາ ນີ້ແລ ເຫຕຸທີ່ເຂົາກ່າວຫາເຮົາວ່າ ພຣະສມຕໂຄດົມບໍ່ຜຸດເກີດ ສແດງສັມມ໌ເພື່ອຄວາມບໍ່ຜຸດເກີດ ແລະແນະນຳສາວົກຕາມແນວນັ້ນ ດັ່ງນີ້ຊື່ວ່າກ່າວຖືກ.

ດູຣາສີຫະ ປະການນຶ່ງ ເຫຕຸທີ່ເຂົາກ່າວຫາເຮົາວ່າ ພຣະສມຕໂຄດົມເປັນຜູ້ເບົາໃຈ ສແດງສັມມ໌ເພື່ອຄວາມເບົາໃຈ ແລະແນະນຳສາວົກຕາມແນວນັ້ນ ດັ່ງນີ້ ຊື່ວ່າກ່າວຖືກນັ້ນ ເປັນຢ່າງໃດ ດູຣາສີຫະ ເພາະເຮົາເບົາໃຈ ດ້ວຍສັມມ໌ທີ່ໃຫ້ເກີດຄວາມໂລ່ງໃຈຢ່າງສູງແລະສແດງສັມມ໌ເພື່ອຄວາມເບົາໃຈ ແລະແນະນຳສາວົກຕາມແນວນັ້ນ ນີ້ແລ ເຫຕຸທີ່ເຂົາກ່າວຫາເຮົາວ່າ ພຣະສມຕໂຄດົມເປັນຜູ້ເບົາໃຈ ສແດງສັມມ໌ເພື່ອຄວາມເບົາໃຈ ແລະແນະນຳສາວົກຕາມແນວນັ້ນ ດັ່ງນີ້ ຊື່ວ່າກ່າວຖືກ.

ສແດງຕົນເປັນອຸບາສົກ

[໗໐] ເມື່ອພຣະຜູ້ມີພຣະກາຄຕຣັສຢ່າງນີ້ແລ້ວ ທ່ານສີຫະເສນາບໍດີ ໄດ້ຂາບທູລຄຳນີ້ແດ່ພຣະຜູ້ມີພຣະກາຄວ່າ ກາຫິຕຂອງພຣະອົງຄ໌ແຈ່ມແຈ້ງນັກ ກາຫິຕຂອງພຣະອົງຄ໌ງາມຫຼາຍ ພຣະພຸທສເຈົ້າຂ້ານ້ອຍພຣະອົງຄ໌ທຣົງປະກາສສັມມ໌ໂດຍອເນກປຣິຍາຍຢ່າງນີ້ ປຽບເຫມືອນບຸຄຄົລຫງາຍຂອງທີ່ຄວ່ຳ ເປີດຂອງທີ່ປິດ ບອກທາງແກ່ຄົນຫລົງທາງ ຫຼືສ່ອງປະທີປໃນທີ່ມືດດ້ວຍຕັ້ງໃຈວ່າ ຄົນມີຈັກຊຸຈະເຫັນຮູປ ດັ່ງນີ້ ຂ້າພຣະພຸທສເຈົ້ານີ້ຂໍເຖິງພຣະຜູ້ມີພຣະກາຄ ພຣະສັມມ໌ ແລະພຣະສົງຄ໌ວ່າເປັນສຣຕະ ຂໍພຣະອົງຄ໌ໂປຼດທຣົງຈຳຂ້າພຣະພຸທສເຈົ້າວ່າ ເປັນອຸບາສົກຜູ້ມອບຊີວິຕເຖິງສຣຕະ ຈຳເດີມແຕ່ວັນນີ້ເປັນຕົ້ນໄປ.

ກ. ດູຣາສີຫະ ທ່ານຈົງທຳການທີ່ຄິດອ່ານເສັຽກ່ອນແລ້ວທຳ ເພາະການຄິດອ່ານເສັຽກ່ອນແລ້ວທຳ ເປັນຄວາມດີສຳຫຼັບຄົນມີຊື່ສຽງເຊັ່ນທ່ານ.

ສີ. ຂ້ານ້ອຍ ໂດຍພຣະພຸທສດຳຣັສແມ້ນີ້ ຂ້າພຣະພຸທສເຈົ້າຍິນດີ ພໍໃຈຍິ່ງກວ່າຄາດ ຫມາຍໄວ້ ເພາະພຣະອົງຄ໌ຕຣັສຢ່າງນີ້ກະຂ້າພຣະພຸທສເຈົ້າວ່າ ດູຣາສີຫະ ທ່ານຈົ່ງທຳການທີ່ຄຶດອ່ານ ເສັຽກ່ອນແລ້ວທຳ ເພາະການຄຶດອ່ານເສັຽກ່ອນແລ້ວເຮັດເປັນຄວາມດີສຳຫຼັບຄົນມີຊື່ສຽງເຊັ່ນທ່ານ ຄວາມແທ້ ພວກອັລລເດັຽຣຖີຍ໌ໄດ້ຂ້າພຣະພຸທສເຈົ້າເປັນສາວົກ ຄວຣຍົກລິງທ່ຽວປະກາສທົ່ວພຣະນຄຣເວສາລີ ວ່າ ສີຫະເສນາບໍດີເຂົ້າເຖິງຄວາມເປັນສາວົກຂອງພວກເຮົາແລ້ວ ແຕ່ສ່ວນພຣະອົງຄ໌ສີ ມາຕຣັສຢ່າງນີ້ ກະຂ້າພຣະພຸທສເຈົ້າວ່າ ດູຣາສີຫະ ທ່ານຈົ່ງທຳການທີ່ຄຶດອ່ານເສັຽກ່ອນແລ້ວທຳ ເພາະການຄຶດອ່ານ ເສັຽກ່ອນແລ້ວທຳ ເປັນຄວາມດີສຳຫຼັບຄົນມີຊື່ສຽງເຊັ່ນທ່ານ ຂ້າພຣະພຸທສເຈົ້ານີ້ ຂໍເຖິງພຣະຜູ້ມີພຣະກາຄ ພຣະທັມມ໌ແລະພຣະສົງຆ໌ວ່າເປັນສຣຕະ ແມ້ຄັ້ງທີ່ສອງ ຂໍພຣະອົງຄ໌ໂປຼດທຣົງຈຳຂ້າພຣະພຸທສເຈົ້າວ່າ ເປັນອຸບາສົກຜູ້ມອບຊີວິຕເຖິງສຣຕະ ຈຳເດີມແຕ່ວັນນີ້ເປັນຕົ້ນໄປ ພຣະພຸທສເຈົ້າ.

ກ. ດົນປານໃດແລ ສີຫະ ຕະກູລຂອງທ່ານໄດ້ເປັນສຖານທີ່ຮັບຮອງພວກນິຄຣົນຖ໌ມາ ດ້ວຍເຫຕຸນັ້ນ ທ່ານຄວຣສຳຄັລເຫັນບິຕຫບາຕວ່າເປັນຂອງຄວຣໃຫ້ນິຄຣົນຖ໌ເຫລົ່ານັ້ນຜູ້ເຂົ້າໄປເຖິງແລ້ວ.

ສີ. ໂດຍພຣະພຸທສດຳຣັສແມ້ນີ້ ຂ້າພຣະພຸທສເຈົ້າຍິນດີພໍໃຈຍິ່ງກວ່າຄາດຫມາຍໄວ້ ເພາະ ພຣະອົງຄ໌ຕຣັສຢ່າງນີ້ກະຂ້າພຣະພຸທສເຈົ້າວ່າ ດົນປານໃດແລ ສີຫະ ຕະກູລຂອງທ່ານໄດ້ເປັນສຖານທີ່ຮັບຮອງ ພວກນິຄຣົນຖ໌ມາ ດ້ວຍເຫຕຸນັ້ນ ທ່ານຄວຣສຳຄັລບິຕຫບາຕວ່າເປັນຂອງຄວຣໃຫ້ນິຄຣົນຖ໌ເຫລົ່ານັ້ນຜູ້ເຂົ້າໄປເຖິງ ແລ້ວ ດັ່ງນີ້ ຂ້າພຣະພຸທສເຈົ້າໄດ້ຮູ້ວ່າ ພຣະສມຕະໂຄດົມຮັບສັ່ງຢ່າງນີ້ວ່າ ຄວຣໃຫ້ທານແກ່ເຮົາຜູ້ດຽວ ບໍ່ຄວຣໃຫ້ທານແກ່ຄົນພວກອື່ນ ຄວຣໃຫ້ທານແກ່ສາວົກຂອງເຮົາເທົ່ານັ້ນ ບໍ່ຄວຣໃຫ້ທານແກ່ສາວົກຂອງ ສາສດາອື່ນ ເພາະທານທີ່ໃຫ້ແກ່ເຮົາເທົ່ານັ້ນ ມີຜົລຫຼາຍ ທານທີ່ໃຫ້ແກ່ຄົນພວກອື່ນບໍ່ມີຜົລຫຼາຍ ທານ ທີ່ໃຫ້ແກ່ສາວົກຂອງເຮົາເທົ່ານັ້ນ ມີຜົລຫຼາຍ ທານທີ່ໃຫ້ແກ່ສາວົກຂອງສາສດາອື່ນບໍ່ມີຜົລຫຼາຍ ແຕ່ສ່ວນ ພຣະອົງຄ໌ທຣົງຊັກຊວນຂ້າພຣະພຸທສເຈົ້າ ໃນການໃຫ້ແມ້ໃນພວກນິຄຣົນຖ໌ ແຕ່ຂ້າພຣະພຸທສເຈົ້າຈັກຮູ້ການໃນ ຂໍ້ນີ້ເອງ ຂ້າພຣະພຸທສເຈົ້ານີ້ຂໍເຖິງພຣະຜູ້ມີພຣະກາຄ ພຣະທັມມ໌ ແລະພຣະສົງຆ໌ວ່າເປັນສຣຕະ ແມ້ ຄັ້ງທີ່ສາມ ຂໍພຣະອົງຄ໌ໂປຼດທຣົງຈຳຂ້າພຣະພຸທສເຈົ້າວ່າ ເປັນອຸບາສົກຜູ້ມອບຊີວິຕເຖິງສຣຕະ ຈຳເດີມ ແຕ່ວັນນີ້ເປັນຕົ້ນໄປ ຂ້ານ້ອຍ.

ສີຫເສນາບໍດີໄດ້ທັມມ໌ຈັກຂຸ

ລຳດັບນັ້ນ ພຣະຜູ້ມີພຣະກາຄໄດ້ທຣົງສແດງອນຸປຸພພິກຖາແກ່ສີຫະເສນາບໍດີ ຄື ທຣົງປະກາສ ທານກຖາ ສີລກຖາ ສັຄຄກຖາ ໂທສ ຄວາມຕ່ຳຊາມ ຄວາມເສົ້າຫມອງຂອງການທັ້ງຫລາຍ ແລະ

ອານິສົງສ໌ໃນຄວາມອອກຈາກກາມ ເມື່ອພຣະອົງຄ໌ທຣົງຮູ້ວ່າ ສີຫະເສນາບໍດີມີຈິຕສະດວກ ມີຈິຕອ່ອນ ມີຈິຕບໍ່ມີນິວຣຕ໌ ມີຈິຕເບີກບານ ມີຈິຕຜ່ອງໃສແລ້ວ ຈຶ່ງໄດ້ທຣົງປະກາສພຣະສັມມເທສນາທີ່ ພຣະພຸທສເຈົ້າທັ້ງຫລາຍ ທຣົງຍົກຂຶ້ນສແດງດ້ວຍພຣະອົງຄ໌ເອງ ຄື ທຸກຂ໌ ສມຸທັຍ ນິໂຣຣ ມັຄຄ໌ ດວງຕາເຫັນສັມມ໌ປຣາສຈາກສຸລີ ປຣາສຈາກມົລທິນໄດ້ເກີດແກ່ສີຫະເສນາບໍດີ ຓ ສຖານທີ່ນັ່ງນັ້ນແລວ່າ ສິ່ງໃດສິ່ງນຶ່ງມີຄວາມເກີດຂຶ້ນເປັນສັມມດາ ສິ່ງນັ້ນທັ້ງມວລມີຄວາມດັບເປັນສັມມດາ ເໝືອນຜ້າທີ່ສະອາດ ປຣາສຈາກມົລທິນຄວຣຮັບນ້ຳຍ້ອມເປັນຢ່າງດີ ຈັ່ງຊັ້ນ.

ເມື່ອສີຫະເສນາບໍດີເຫັນສັມມ໌ແລ້ວ ບັຣລຸສັມມ໌ແລ້ວ ຮູ້ສັມມ໌ແຈ່ມແຈ້ງແລ້ວ ຫຢັ່ງລົງສູ່ສັມມ໌ ແລ້ວ ຂ້າມຄວາມສົງສັຍໄດ້ແລ້ວ ປຣາສຈາກຖ້ອຍຄຳສແດງຄວາມສົງສັຍ ເຖິງຄວາມເປັນຜູ້ແກລ້ວກລ້າ ບໍ່ ຕ້ອງເຊື່ອຜູ້ອື່ນ ໃນຄຳສອນຂອງພຣະສາສດາ ໄດ້ຂາບທູລຄຳນີ້ແດ່ພຣະຜູ້ມີພຣະກາຄວ່າ ຂໍພຣະຜູ້ມີພຣະກາຄ ພ້ອມກັບກິກຂຸສົງຄ໌ ຈົ່ງທຣົງພຣະກຣຸຕາໂປຼດຮັບກັຕຕາຫາຣຂອງຂ້າພຣະພຸທສເຈົ້າ ເພື່ອຈເຣີນບຸລກຸສົລ ແລະປີຕີປຼາໂມທຍ໌ໃນມື້ອື່ນເຊົ້າດ້ວຍເທີ້ນ ຂ້ານ້ອຍ ພຣະຜູ້ມີພຣະກາຄທຣົງຮັບອາຣາສນາໂດຍ ດຸษณີກາພ ເມື່ອສີຫະເສນາບໍດີຮູ້ອາກາຣທີ່ທຣົງຮັບອາຣາສນາຂອງພຣະຜູ້ມີພຣະກາຄແລ້ວໄດ້ລຸກຈາກທີ່ນັ່ງ ຖວາຍບັງຄົມພຣະຜູ້ມີພຣະກາຄ ທຳປະທັກນິຓກັບໄປ ຕໍ່ມາສີຫະເສນາບໍດີໃຊ້ມຫາດເລັກຜູ້ນຶ່ງວ່າ ພນາຍ ເຈົ້າຈົ່ງໄປຫາຊີ້ຊິ້ນສົດທີ່ເຂົາຂາຍ ແລ້ວສັ່ງໃຫ້ຕົກແຕ່ງຂາທນີຍໂກຊນີຍາຫາຣ ອັນປະณີຕໂດຍຜ່ານ ຣາຕຣີນັ້ນແລ້ວ ໃຫ້ມຫາດເລັກໄປຂາບທູລກັຕກາລແດ່ພຣະຜູ້ມີພຣະກາຄວ່າ ເຖິງເວລາແລ້ວພຣະພຸທສເຈົ້າ-ຂ້ານ້ອຍກັຕຕາຫາຣແລ້ວແລ້ວ.

ເມື່ອເວລາເຊົ້າ ພຣະຜູ້ມີພຣະກາຄທຣົງຄອງອັນຕຣວາສົກ ຖືບາຕຣ໌ຈີວຣສເດັຈພຣະພຸທສດຳເນີນ ໄປທາງນິເວສນ໌ຂອງສີຫະເສນາບໍດີ ເມື່ອເຖິງແລ້ວປະທັບນັ່ງເໜືອພຸທສອາສນ໌ທີ່ເຂົາຈັດຖວາຍ ພ້ອມກັບ ກິກຂຸສົງຄ໌.

ກໍໂດຍສມັຍນັ້ນແລ ພວກນິຄຣົນຖ໌ເປັນຈຳນວນຫຼາຍ ພາກັນປະຄອງແຂນ ຮ້ອງໄຫ້ໄປຕາມຖນົນ ຫົນທາງສີ່ແຍກ ສາມແຍກທົ່ວທຸກສາຍໃນພຣະນຄຣເວສາລີວ່າ ວັນນີ້ ສີຫະເສນາບໍດີລົ້ມສັຕວ໌ຂອງລ້ຽງຕົວ ອ້ວນໆ ທຳອາຫາຣຖວາຍພຣະສມຓະໂຄດົມ ພຣະສມຓະໂຄດົມທຣົງຮູ້ຢູ່ຍັງສເວີຍເນື້ອນັ້ນຊຶ່ງເຂົາທຳ ສະເພາະເຈາະຈົງຕົນ ຂຓະນັ້ນ ມຫາດເລັກຜູ້ນຶ່ງເຂົ້າໄປເຝົ້າສີຫະເສນາບໍດີທູລກະຊິບວ່າ ຂໍເດຊະ ຝ່າພຣະບາທຄວຣຮູ້ວ່ານິຄຣົນຖ໌ຫຼວງຫຼາຍເຫລົ່ານັ້ນ ພາກັນປະຄອງແຂນຮ້ອງໄຫ້ໄປຕາມຖນົນຫົນທາງ

ສີ່ແຍກສາມແຍກທົ່ວທຸກສາຍໃນພຣະນຄຣເວສາລີວ່າ ວັນນີ້ສີຫະເສນາບໍດີ ລົ້ມສັຕວ໌ຂອງລ້ຽງຕົວອ້ວນໆ ທຳອາຫາຣຖວາຍພຣະສມຕາໂຄດົມ ພຣະສມຕາໂຄດົມທຣົງຮູ້ຢູ່ ຍັງສເວີຍເນື້ອນັ້ນ ຊຶ່ງເຂົາທຳສະເພາະເຈາະຈົງຕົນ.

ສີຫະເສນາບໍດີຕອບວ່າ ຊ່າງເທີ້ນເຈົ້າ ທ່ານເຫລົ່ານັ້ນມຸ່ງຕິຕຽນພຣະພຸທສເຈົ້າມຸ່ງຕິຕຽນພຣະທັມມ໌ ມຸ່ງຕິຕຽນພຣະສົງຄ໌ມາດົນແລ້ວ ແຕ່ກໍກ່າວຕູ່ພຣະຜູ້ມີພຣະກາຄພຣະອົງຄ໌ນັ້ນດ້ວຍຖ້ອຍຄຳອັນບໍ່ມີ ເວົ້າບໍ່ຈິງບໍ່ແທ້ ຍັງບໍ່ຫນຳໃຈ ສ່ວນພວກເຮົາບໍ່ຕັ້ງໃຈຂ້າສັຕວ໌ຈາກຊີວິຕ ແມ້ເພາະເຫຕຸແຫ່ງຊີວິຕເລີຍ.

ຄັ້ງນັ້ນ ສີຫະເສນາບໍດີອັງຄາສກິກຂຸສົງຄ໌ມີພຣະພຸທສເຈົ້າເປັນປະມຸຂ ດ້ວຍຂາທນີຍໂກຊນີຍາຫາຣອັນປະຕີຕດ້ວຍມືຂອງຕົນ ຈົນພຣະຜູ້ມີພຣະກາຄສເວີຍແລ້ວ ທຣົງນຳພຣະຫັຕຖ໌ອອກຈາກບາຕຣ໌ຫ້າມກັຕຣ໌ແລ້ວ ນັ່ງເຝົ້າຢູ່ ນ ທີ່ຄວຣສ່ວນຂ້າງນຶ່ງ ພຣະຜູ້ມີພຣະກາຄທຣົງຊີ້ແຈງໃຫ້ສີຫະເສນາບໍດີຜູ້ນັ່ງເຝົ້າຢູ່ ນ ທີ່ຄວຣສ່ວນຂ້າງນຶ່ງເຫັນແຈ້ງ ສມາທານ ອາຈຫານ ຣ່າເຣີງ ດ້ວຍທັມມີກະຖາແລ້ວ ທຣົງລຸກຈາກທີ່ປະທັບສເດັຈກັບໄປ.

ເຣື່ອງສີຫະເສນາບໍດີ ຈົບ.

ພຣະພຸທສບັນລັຕິຫ້າມສັນເນື້ອທີ່ເຮັດສະເພາະ

ຄັ້ງນັ້ນພຣະຜູ້ມີພຣະກາຄທຣົງເຮັດທັມມີກະຖາໃນເພາະເຫຕຸເປັນເຄົ້າມູລນັ້ນ ໃນເພາະເຫຕຸແຮກເກີດນັ້ນ ແລ້ວຮັບສັ່ງກະກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ກິກຂຸຮູ້ຢູ່ບໍ່ຄວຣສັນເນື້ອທີ່ເຂົາທຳຈຳເພາະອົງຄ໌ໃດສັນ ຕ້ອງອາບັຕິທຸກກົຝ.

ດູຣາກິກຂຸທັ້ງຫລາຍ ເຮົາອນຸຍາຕ ປາ ເນື້ອ ທີ່ບໍຣິສຸທສິ໌ໂດຍສ່ວນສາມ ຄື ບໍ່ໄດ້ເຫັນບໍ່ໄດ້ຍິນ ບໍ່ໄດ້ບໍ່ພໍໃຈ.

ພຣະພຸທສບັນລັຕິຫ້າມກັຕຕາຫາຣບາງຊນິດ

[໗໑] ກໍໂດຍສມັຍນັ້ນແລ ພຣະນຄຣເວສາລີມີກິກຂາຫາຣຫຼາຍ ມີເຂົ້າກລ້າງອກງາມ ບິຕຫບາຕກໍງ່າຍ ກິກຂຸສົງຄ໌ຈະຍັງອັຕກາພໃຫ້ເປັນໄປດ້ວຍກາຣຖືບາຕຣ໌ສແວງຫາກໍເຮັດໄດ້ງ່າຍ ຄັ້ງນັ້ນ ພຣະຜູ້ມີພຣະກາຄປະທັບຫລີກເຮັ້ນຢູ່ໃນທີ່ສງັດ ທຣົງປຣິວິຕົກນີ້ວ່າ ກັຕຕາຫາຣທີ່ເຮົາອນຸຍາຕແກ່ກິກຂຸທັ້ງຫລາຍ ເມື່ອຄູາວ

ອັຕຄັດອາຫາຣ ມີເຂົ້າກລ້າຫນ້ອຍ ບິຓຫບາຕໄດ້ຝືດເຄືອງ ຄືອາຫາຣທີ່ເກັບໄວ້ພາຍໃນທີ່ຢູ່ ໑ ອາຫາຣທີ່ຫຸງຕົ້ມພາຍໃນທີ່ຢູ່ ໑ ອາຫາຣທີ່ຫຸງຕົ້ມເອງ ໑ ອາຫາຣທີ່ຈັບຕ້ອງແລ້ວຮັບປະເຄນໃຫມ່ ໑ ອາຫາຣທີ່ທາຍົກນຳມາຈາກທີ່ນິມົນຕ໌ນັ້ນ ໑ ອາຫາຣທີ່ຮັບປະເຄນສັນໃນປຸເຣພັຕ ໑ ອາຫາຣທີ່ເກີດໃນປ່າແລະເກີດໃນສະນົວ ໑ ພັຕຕາຫາຣເຫລົ່ານັ້ນ ພິກຂຸທັ້ງຫລາຍຍັງສັນຢູ່ທຸກວັນນີ້ຫຼືບໍ່.

ເມື່ອເວລາເຢັນ ພຣະຜູ້ມີພຣະພາຄສເດັຈອອກຈາກທີ່ປະທັບພັກເຮັ້ນ ແລ້ວຮັບສັ່ງຖາມທ່ານພຣະອານົນທ໌ວ່າ ດູຣາອານົນທ໌ ພັຕຕາຫາຣທີ່ເຮົາອນຸຍາຕແກ່ພິກຂຸທັ້ງຫລາຍ ເມື່ອຄາວອັຕຄັດອາຫາຣ ມີເຂົ້າກລ້າຫນ້ອຍ ບິຓຫບາຕໄດ້ຝືດເຄືອງ ຄືອາຫາຣທີ່ເກັບໄວ້ພາຍໃນທີ່ຢູ່ ໑ ອາຫາຣທີ່ຫຸງຕົ້ມພາຍໃນທີ່ຢູ່ ໑ ອາຫາຣທີ່ຫຸງຕົ້ມເອງ ໑ ອາຫາຣທີ່ຈັບຕ້ອງແລ້ວຮັບປະເຄນໃຫມ່ ໑ ອາຫາຣທີ່ທາຍົກນຳມາຈາກທີ່ນິມົນຕ໌ນັ້ນ ໑ ອາຫາຣທີ່ຮັບປະເຄນສັນໃນປຸເຣພັຕ ໑ ອາຫາຣທີ່ເກີດໃນປ່າແລະເກີດໃນສະນົວ ໑ ພັຕຕາຫາຣເຫລົ່ານັ້ນ ພິກຂຸທັ້ງຫລາຍຍັງສັນຢູ່ທຸກວັນນີ້ບໍ່?

ທ່ານພຣະອານົນທ໌ທູລວ່າ ຍັງສັນຢູ່ ຂ້ານ້ອຍ.

ລຳດັບນັ້ນ ຜູ້ມີພຣະພາຄທຮົງເຮັດສັມມີກຖາໃນເພາະເຫຕຸເປັນເຄົ້າມູລນັ້ນ ໃນເພາະເຫຕຸແຮກເກີດນັ້ນ ແລ້ວຮັບສັ່ງກະພິກຂຸທັ້ງຫລາຍວ່າ ດູຣາພິກຂຸທັ້ງຫລາຍ ພັຕຕາຫາຣທີ່ເຮົາອນຸຍາຕແກ່ພິກຂຸທັ້ງຫລາຍເມື່ອຄາວອັຕຄັດອາຫາຣ ມີເຂົ້າກລ້າຫນ້ອຍ ບິຓຫບາຕໄດ້ຝືດເຄືອງ ຄືອາຫາຣທີ່ເກັບໄວ້ພາຍໃນທີ່ຢູ່ ໑ ອາຫາຣທີ່ຫຸງຕົ້ມພາຍໃນທີ່ຢູ່ ໑ ອາຫາຣທີ່ຫຸງຕົ້ມເອງ ໑ ອາຫາຣທີ່ຈັບຕ້ອງແລ້ວປະເຄນໃຫມ່ ໑ ອາຫາຣທີ່ທາຍົກນຳມາຈາກທີ່ນິມົນຕ໌ນັ້ນ ໑ ອາຫາຣທີ່ຮັບປະເຄນສັນໃນປຸເຣພັຕ ໑ ອາຫາຣທີ່ເກີດໃນປ່າແລະເກີດໃນສະນົວ ໑ ພັຕຕາຫາຣເຫລົ່ານັ້ນ ເຮົາຫ້າມຈຳເດີມນີ້ເປັນຕົ້ນໄປ

ດູຣາພິກຂຸທັ້ງຫລາຍ ພິກຂຸບໍ່ຄວຣສັນອາຫາຣທີ່ເກັບໄວ້ພາຍໃນທີ່ຢູ່ ອາຫາຣທີ່ຫຸງຕົ້ມພາຍໃນທີ່ຢູ່ ອາຫາຣທີ່ຫຸງຕົ້ມເອງ ອາຫາຣທີ່ຈັບຕ້ອງແລ້ວປະເຄນໃຫມ່ ອົງຄ໌ໃດສັນ ຕ້ອງອາບັຕິທຸກກົຎ.

ດູຣາພິກຂຸທັ້ງຫລາຍ ສ່ວນອາຫາຣທີ່ທາຍົກນຳມາຈາກທີ່ນິມົນຕ໌ນັ້ນ ອາຫາຣທີ່ຮັບປະເຄນສັນໃນປຸເຣພັຕ ອາຫາຣທີ່ເກີດໃນປ່າແລະເກີດໃນສະນົວ ຍັງບໍ່ເປັນເດນ ພິກຂຸສັນແລ້ວ ຫ້າມພັຕແລ້ວບໍ່ຄວຣສັນ ອົງຄ໌ໃດສັນ ຄວຣປັບອາບັຕິຕາມສັມມ໌.

ພຣະພຸທສານຸຍາຕກັບປີຢກູມີ

[໗໔] ກໍໂດຍສມັຍນັ້ນແລ ປະຊາຊົນຊາວຊົນນົທບັຣທຸກເກືອແດ່ ນ້ຳມັນແດ່ ເຂົ້າສາຣແດ່ ຂອງຂົບສັນແດ່ ໄວ້ໃນກຽນເປັນຈຳນວນຫຼາຍ ແລ້ວຕັ້ງວງລ້ອມກຽນຢູ່ນອກຊຸ້ມປະຕູພຣະອາຣາມຄອຍທ່າວ່າເມື່ອໃດ ເຮົາທັ້ງຫລາຍໄດ້ລຳດັບທີ່ຈະຖວາຍ ເມື່ອນັ້ນເຮົາຈະທຳພັຕຕາຫາຣຖວາຍ ຝົນຕັ້ງເຄົ້າມາຈະຕົກໃຫຍ່

ຈຶ່ງຄົນເຫລົ່ານັ້ນພາກັນເຂົ້າໄປຫາທ່ານພຣະອານົນທ໌ຂາບຮຽນວ່າ ທ່ານພຣະອານົນທ໌ຂ້ານ້ອຍ ເກືອ ນ້ຳມັນ ເຂົ້າສາຣ ແລະຂອງຂົບລັ່ນເປັນຈຳນວນຫຼາຍ ພວກຂ້າພເຈົ້າບັຣທຸກໄວ້ໃນກຽນຕັ້ງຢູ່ຫນ້າວັດນີ້ ແລະຝົນຕັ້ງເຄົ້າມາຈະຕົກໃຫຍ່ ທ່ານພຣະອານົນທ໌ຂ້ານ້ອຍ ພວກຂ້າພເຈົ້າຄວຣປຕິບັຕິຢ່າງໃດ? ຈຶ່ງທ່ານພຣະອານົນທ໌ຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສວ່າ ດູຣາອານົນທ໌ ຖ້າເຊັ່ນນັ້ນ ສົງຄ໌ຈົ່ງສົມມຸຕິວິຫາຣທີ່ຕັ້ງຢູ່ສຸດເຂຕວັດ ໃຫ້ເປັນສຖານທີ່ເກັບຂອງກັປປີຍະ ແລ້ວໃຫ້ເກັບໄວ້ໃນສຖານທີ່ທີ່ສົງຄ໌ຈຳນົງຫມາຍ ຄືວິຫາຣ ເຮືອນມຸງແຖບດຽວ ເຮືອນຊັ້ນ ເຮືອນໂລ້ນ ຫຣືອຖ້ຳກໍໄດ້.

ວິທີສົມມຸຕິກັປປີຍກູມິ

ດູຣາກິກຂຸທັ້ງຫລາຍ ກໍແລສົງຄ໌ຄວຣສົມມຸຕິຢ່າງນີ້

ກິກຂຸຜູ້ລລາດ ຜູ້ສາມາຖ ຄວຣປະກາສໃຫ້ສົງຄ໌ຮູ້ດ້ວຍລັຕຕິທຸຕິຍກັມມ໌ວາຈາ ວ່າດັ່ງນີ້:-

ກັມມ໌ວາຈາສົມມຸຕິກັປປີຍກູມິ

ທ່ານຂ້ານ້ອຍ ຂໍສົງຄ໌ຈົ່ງຟັງຂ້າພເຈົ້າ ຖ້າຄວາມພ້ອມພຽງຂອງສົງຄ໌ເຖິງທີ່ແລ້ວ ສົງຄ໌ຄວຣສົມມຸຕິວິຫາຣມີຊື່ນີ້ ໃຫ້ເປັນກັປປີຍກູມິ ນີ້ເປັນລັຕຕິ

ທ່ານຂ້ານ້ອຍ ຂໍສົງຄ໌ຈົ່ງຟັງຂ້າພເຈົ້າ ສົງຄ໌ສົມມຸຕິວິຫາຣມີຊື່ນີ້ໃຫ້ເປັນກັປປີຍກູມິ ກາຣສົມມຸຕິວິຫາຣມີຊື່ນີ້ໃຫ້ເປັນກັປປີຍກູມິ ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເປັນຜູ້ນິ່ງ ບໍ່ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເວົ້າ

ວິຫາຣມີຊື່ນີ້ ສົງຄ໌ສົມມຸຕິໃຫ້ເປັນກັປປີຍກູມິແລ້ວ ຊອບແກ່ສົງຄ໌ ເຫຕຸນັ້ນຈຶ່ງນິ່ງ ຂ້າພເຈົ້າທຣົງຄວາມນີ້ໄວ້ດ້ວຍຢ່າງນີ້.

ສມັຍຕໍ່ມາ ຊາວບ້ານຕົ້ມເຂົ້າຕົ້ມ ຫຸງເຂົ້າສວຍ ຕົ້ມແກງ ສັບຊີ້ນ ຜ່າຟືນ ສົ່ງສຽງເຊັງແຊ່ຮ້ອງໂຮ ໓ ສຖານທີ່ກັປປີຍກູມິ ທີ່ສົງຄ໌ສົມມຸຕິໄວ້ນັ້ນແລ.

ພຣະຜູ້ມີພຣະກາຄ ທຣົງຕື່ນບັຣທົມໃນເວລາປັຈຈຸສມັຍແຫ່ງຣາຕຣີ ໄດ້ທຣົງສດັບສຽງເຊັງແຊ່ຮ້ອງໂຮ ແລະສຽງກາຮ້ອງກ້ອງ ເມື່ອແລ້ວຣັບສັ່ງຖາມທ່ານພຣະອານົນທ໌ວ່າ ດູຣາອານົນທ໌ ສຽງເຊັງແຊ່ຮ້ອງໂຮ ແລະສຽງກາຮ້ອງກ້ອງນັ້ນ ຫຍັງກັນນໍ?

ທ່ານພຣະອານົນທ໌ຂາບທູລວ່າ ຂ້ານ້ອຍ ບັດນີ້ຊາວບ້ານມາຕົ້ມເຂົ້າຕົ້ມ ຫຸງເຂົ້າສວຍ ຕົ້ມແກງ ສັບຊີ້ນ ຜ່າຟືນ ໓ ສຖານທີ່ກັປປີຍກູມິຊຶ່ງສົມມຸຕິໄວ້ນັ້ນແລ ສຽງເຊັງແຊ່ຮ້ອງໂຮ ແລະສຽງກາຮ້ອງກ້ອງຫັ້ນຄືສຽງນັ້ນ ຂ້ານ້ອຍ.

ພຣະພຸທສານຸຌາຕກັປປິຍភູມິ ៣ ຊນິດ

ລຳດັບນັ້ນ ພຣະຜູ້ມີພຣະກາຄທຣົງເຮັດສົມມີກຖາ ໃນເພາະເຫຕຸເປັນເຄົ້າມູລນັ້ນ ໃນເພາະເຫຕຸແຮກເກີດນັ້ນ ແລ້ວຮັບສັ່ງກະກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ກິກຂຸບໍ່ຄວຣໃຊ້ສຖານທີ່ກັປປິຍភູມິ ຊຶ່ງສົງฆ໌ສົມມຸຕິ ອົງຄ໌ໃດໃຊ້ ຕ້ອງອາບັຕິທຸກກົฎ.

ດູຣາກິກຂຸທັ້ງຫລາຍ ເຮົາອນຸຌາຕສຖານທີ່ກັປປິຍភູມິ ៣ ຊນິດ ຄື ອຸສສາວນັນຕິກາ ໑ ໂຄນິສາທິກາ ໑ ຄຫປຕິກາ ໑

ພຣະພຸທສານຸຌາຕກັປປິຍភູມິ ໔ ຊນິດ

ສມັຍຕໍ່ມາ ທ່ານພຣະຍໂສຊະອາພາຮ ຊາວບ້ານນຳເກສັຊມາຖວາຍທ່ານ ກິກຂຸທັ້ງຫລາຍໃຫ້ເກັບເກສັຊເຫລົ່ານັ້ນໄວ້ຂ້າງນອກ ສັຕວ໌ກິນເສັຽແດ່ ຂໂມຍລັກໄປເສັຽແດ່ ກິກຂຸທັ້ງຫລາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຌາຕແກ່ກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ເຮົາອນຸຌາຕໃຫ້ໃຊ້ສຖານທີ່ກັປປິຍភູມິທີ່ສົງฆ໌ສົມມຸຕິ.

ດູຣາກິກຂຸທັ້ງຫລາຍ ເຮົາອນຸຌາຕສຖານທີ່ກັປປິຍភູມິ ໔ ຊນິດ ຄື ອຸສສາວນັນຕິກາ ໑ ໂຄນິສາທິກາ ຄຫປຕິກາ ໑ ສົມມຸຕິກາ ໑.

ເຣື່ອງເມຓຫກະຄຫບໍດີ

[໗៣] ກໍໂດຍສມັຍນັ້ນແລ ເມຓຫກະຄຫບໍດີຕັ້ງບ້ານເຮືອນຢູ່ໃນພຣະນຄຣກັທທິຍະ ທ່ານມີອິທສານຸກາພເຫັນປານນີ້ ຄື ທ່ານສະເກຼົ້າ ແລ້ວໃຫ້ກວາດຉາງເຂົ້ານັ່ງຢູ່ນອກປະຕູ ທໍ່ຮາຣເຂົ້າເປືອກຕົກຈາກອາກາສເຕັມຉາງ ກຣິຍາມີອິທສານຸກາພເຫັນປານນີ້ ຄື ນາງນັ່ງໃກ້ກະຖາງເຂົ້າສຸກຂນາດຈຸນ້ຳນຶ່ງອາລຫົກໃບດຽວເທົ່ານັ້ນ ແລະໝໍ້ແກງໝໍ້ນຶ່ງ ລ້ຽງອາຫາຣແກ່ບຸຣຸษທີ່ເປັນທາສແລະກັມມກຣອາຫາຣນັ້ນບໍ່ຫມົດສິ້ນຕລອດເວລາທີ່ນາງຍັງບໍ່ລຸກໄປຈາກທີ່ ບຸຕຣ໌ມີອິທສານຸກາພເຫັນປານນີ້ ຄືເຂົາຖືຖົງຈຸເງີນພັນນຶ່ງ ຖົງດຽວເທົ່ານັ້ນ ແລ້ວແຈກເບ້ຍຫວັດກາງປີແກ່ບຸຣຸษທີ່ເປັນທາສແລະກັມມກຣເງີນນັ້ນບໍ່ຫມົດສິ້ນ ຕລອດເວລາທີ່ຖົງເງີນຍັງຢູ່ໃນມືຂອງເຂົາ ສະໃພ້ມີອິທສານຸກາພເຫັນປານນີ້ ຄືນາງນັ່ງໃກ້ກະເຊີຈຸເຂົ້າ ໔ ທະນານໃບດຽວເທົ່ານັ້ນ ແລ້ວແຈກເຂົ້າກາງປີແກ່ບຸຣຸษທີ່ເປັນທາສແລະກັມມກຣ ເຂົ້ານັ້ນບໍ່ໄດ້ຫມົດສິ້ນຕລອດເວລາທີ່ນາງຍັງບໍ່ລຸກໄປຈາກທີ່ ທາສມີອິທສານຸກາພເຫັນປານນີ້ ຄືເມື່ອເຂົາໄຖນາດ້ວຍໄຖຄັນດຽວ ມີຮອຍໄຖເຖິງ ໗ ຮອຍ.

ພຣະເຈົ້າພິມພິສາຣຈອມເສນາມາຄົສຣາຊໄດ້ທຣົງສດັບຂ່າວວ່າ ເມດກະກະຄຫບໍດີຕັ້ງບ້ານເຮືອນຢູ່ໃນພຣະນຄຣກັທທິຍະແຄວ້ນຂອງພຣະອົງຄ໌ ທ່ານມີອິທສານຸກາພເຫັນປານນີ້ ຄື ທ່ານສະເກຼົ້າແລ້ວໃຫ້ກວາດລາງເຂົ້າ ນັ່ງຢູ່ນອກປະຕູ ທໍ່ສາຣເຂົ້າເປືອກຕົກຈາກອາກາສເຕັມລາງ ກຣິຍາມີອິທສານຸກາພເຫັນປານນີ້ ຄື ນາງນັ່ງໃກ້ກະຖາງເຂົ້າສຸກຂນາດຈຸນໍ້ານຶ່ງອາລຫົກໃບດຽວເທົ່ານັ້ນ ແລະໝໍ້ແກງໝໍ້ນຶ່ງ ລ້ຽງອາຫາຣແກ່ບຸຣຸษທີ່ເປັນທາສແລະກັມມກຣ ອາຫາຣນັ້ນບໍ່ຫມົດສິ້ນຕລອດເວລາທີ່ນາງຍັງບໍ່ລຸກໄປຈາກທີ່ ບຸຕຣ໌ມີອິທສານຸກາພເຫັນປານນີ້ ຄື ເຂົາຖືຖົງຈຸເງິນພັນນຶ່ງຖົງດຽວເທົ່ານັ້ນແລ້ວແຈກເບັ້ຍຫວັດກາງປີແກ່ບຸຣຸษທີ່ເປັນທາສແລະກັມມກຣ ເງິນນັ້ນບໍ່ຫມົດສິ້ນ ຕລອດເວລາທີ່ຖົງເງິນຍັງຢູ່ໃນມືຂອງເຂົາ ສະໃພ້ມີອິທສານຸກາພເຫັນປານນີ້ ຄື ນາງນັ່ງໃກ້ກະເຊີຈຸເຂົ້າ ໔ ທະນານໃບດຽວເທົ່ານັ້ນ ແລ້ວແຈກເຂົ້າກາງປີແກ່ບຸຣຸษທີ່ເປັນທາສແລະກັມມກຣ ເຂົ້ານັ້ນບໍ່ໄດ້ຫມົດສິ້ນຕລອດເວລາທີ່ນາງຍັງບໍ່ລຸກໄປຈາກທີ່ ທາສມີອິທສານຸກາພເຫັນປານນີ້ ຄື ເມື່ອເຂົາໄຖນາດ້ວຍໄຖຄັນດຽວມີຮອຍໄຖເຖິງ ໗ ຮອຍ.

ຄັ້ງນັ້ນ ພຣະເຈົ້າພິມພິສາຣຈອມເສນາມາຄົສຣາຊ ໄດ້ຕຣັສເອີ້ນມຫາອຳມາຕຍ໌ຜູ້ສຳເຣັຈຣາຊກາຣມາຮັບສັ່ງວ່າ ຂ່າວວ່າເມດກະກະຄຫບໍດີຕັ້ງບ້ານເຮືອນຢູ່ໃນພຣະນຄຣກັທທິຍະແຄວ້ນຂອງເຮົາ ທ່ານມີອິທສານຸກາພເຫັນປານນີ້ ຄື ທ່ານສະເກຼົ້າແລ້ວໃຫ້ກວາດລາງເຂົ້ານັ່ງຢູ່ນອກປະຕູ ທໍ່ສາຣເຂົ້າເປືອກຕົກຈາກອາກາສເຕັມລາງ ກຣິຍາມີອິທສານຸກາພເຫັນປານນີ້ ຄື ນາງນັ່ງໃກ້ກະຖາງເຂົ້າສຸກຂນາດຈຸນໍ້ານຶ່ງອາລຫົກໃບດຽວເທົ່ານັ້ນ ແລະໝໍ້ແກງໃບນຶ່ງ ລ້ຽງອາຫາຣແກ່ບຸຣຸษທີ່ເປັນທາສແລະກັມມກຣອາຫາຣນັ້ນບໍ່ຫມົດສິ້ນຕລອດເວລາທີ່ນາງຍັງບໍ່ລຸກໄປຈາກທີ່ ບຸຕຣ໌ມີອິທສານຸກາພເຫັນປານນີ້ ຄື ເຂົາຖືຖົງຈຸເງິນພັນນຶ່ງຖົງດຽວເທົ່ານັ້ນ ແລ້ວແຈກເບັ້ຍຫວັດກາງປີແກ່ບຸຣຸษທີ່ເປັນທາສແລະກັມມກຣ ເງິນນັ້ນບໍ່ຫມົດສິ້ນຕລອດເວລາທີ່ຖົງເງິນຍັງຢູ່ໃນມືຂອງເຂົາ ສະໃພ້ມີອິທສານຸກາພເຫັນປານນີ້ ຄືນາງນັ່ງໃກ້ກະເຊີຈຸເຂົ້າ ໔ ທະນານໃບດຽວເທົ່ານັ້ນ ແລ້ວແຈກເຂົ້າກາງປີແກ່ບຸຣຸษທີ່ເປັນທາສແລະກັມມກຣ ເຂົ້ານັ້ນບໍ່ໄດ້ຫມົດສິ້ນຕລອດເວລາທີ່ນາງຍັງບໍ່ລຸກໄປຈາກທີ່ ທາສມີອິທສານຸກາພເຫັນປານນີ້ຄື ເມື່ອເຂົາໄຖນາດ້ວຍໄຖຄັນດຽວ ມີຮອຍໄຖເຖິງ ໗ ຮອຍ ພນາຍ ທ່ານຈົ່ງໄປເບິ່ງໃຫ້ຮູ້ເຫັນເຫມືອນຢ່າງເຮົາໄດ້ເຫັນດ້ວຍຕົນເອງ.

ທ່ານມຫາອຳມາຕຍ໌ຮັບພຣະບໍຣົມຣາຊໂອງການຂອງພຣະເຈົ້າພິມພິສາຣຈອມເສນາມາຄົສຣາຊວ່າ ເປັນດັ່ງພຣະຣາຊປະສົງຄ໌ ຂ້ານ້ອຍ ແລ້ວພ້ອມດ້ວຍເສນາ ໔ ເຫລົ່າ ຍ່າງທາງໄປຍັງພັທທິຍະນຄຣ ຍ່າງໄປໂດຍລຳດັບຈົນເຖິງເມືອງພັທທິຍະ ເຂົ້າໄປຫາເມຕຫກະຄຫບໍດີ ເມື່ອແລ້ວໄດ້ກ່າວຄຳນີ້ກະເມຕຫກະຄຫບໍດີວ່າ ທ່ານຄຫບໍດີ ຄວາມແທ້ຂ້າພເຈົ້າມາໂດຍມີພຣະບໍຣົມຣາຊໂອງການວ່າ ພນາຍ ຂ່າວວ່າເມຕຫກະຄຫບໍດີຕັ້ງບ້ານເຮືອນຢູ່ໃນພຣະນຄຣພັທທິຍະແຄວັ້ນຂອງເຮົາ ຄອບຄົວຂອງທ່ານມີອິທສານຸພາພເຫັນປານນີ້ ຄື ທ່ານສະເຫຼົ້າແລ້ວໃຫ້ກວາດລາງເຂົ້າ ນັ່ງຢູ່ນອກປະຕູ ທໍ່ສາຣເຂົ້າເປືອກຕົກຈາກອາກາສເຕັມລາງ ພຣິຍາມີອິທສານຸພາພເຫັນປານນີ້ ຄື ນາງນັ່ງໃກ້ກະຖາງເຂົ້າສຸກຂນາດຈຸນ້ຳນຶ່ງອາລຫົກໃບດຽວເທົ່ານັ້ນ ແລະໝໍ້ແກງໝໍ້ນຶ່ງ ລ້ຽງອາຫາຣແກ່ບຸຣຸษທີ່ເປັນທາສແລະກັມມກຣ ອາຫາຣນັ້ນບໍ່ຫມົດສິ້ນຕລອດເວລາທີ່ນາງຍັງບໍ່ລຸກໄປຈາກທີ່ ບຸຕຣ໌ມີອິທສານຸພາພເຫັນປານນີ້ ຄື ເຂົາຖືຖົງຈຸເງິນພັນນຶ່ງຖົງດຽວເທົ່ານັ້ນ ແລ້ວແຈກເບັ້ຍຫວັດກາງປີແກ່ບຸຣຸษທີ່ເປັນທາສແລະກັມມກຣ ເງິນນັ້ນບໍ່ຫມົດສິ້ນຕລອດເວລາທີ່ຖົງເງິນຍັງຢູ່ໃນມືຂອງເຂົາ ສະໃພ້ມີອິທສານຸພາພເຫັນປານນີ້ ຄືນາງນັ່ງໃກ້ກະເຊີຈຸເຂົ້າ ໔ ທະນານໃບດຽວເທົ່ານັ້ນ ແລ້ວແຈກເຂົ້າກາງປີແກ່ບຸຣຸษທີ່ເປັນທາສແລະກັມມກຣ ເຂົ້ານັ້ນບໍ່ໄດ້ຫມົດສິ້ນຕລອດເວລາທີ່ນາງຍັງບໍ່ລຸກໄປຈາກທີ່ ທາສມີອິທສານຸພາພເຫັນປານນີ້ ຄື ເມື່ອເຂົາໄຖນາດ້ວຍໄຖຄັນດຽວ ມີຮອຍໄຖເຖິງ ໗ ຮອຍ ພນາຍ ທ່ານຈົ່ງໄປເບິ່ງໃຫ້ຮູ້ເຫັນເຫມືອນຢ່າງເຮົາ ໄດ້ເຫັນດ້ວຍຕົນເອງ ທ່ານຄຫບໍດີ ຂ້າພເຈົ້າຂໍຊົມອິທສານຸພາພຂອງທ່ານ.

ຈົ່ງເມຕຫກະຄຫບໍດີສະເຫຼົ້າແລ້ວ ໃຫ້ກວາດລາງເຂົ້າ ນັ່ງຢູ່ນອກປະຕູ ທໍ່ສາຣເຂົ້າເປືອກຕົກລົງມາຈາກອາກາສເຕັມລາງ

ມຫາອຳມາຕຍ໌ສັຣເສີນວ່າ ທ່ານຄຫບໍດີ ອິທສານຸພາພຂອງທ່ານ ຂ້າພເຈົ້າໄດ້ເຫັນແລ້ວ ຂໍຊົມອິທສານຸພາພຂອງພັຣຍາທ່ານ

ເມຕຫກະຄຫບໍດີສັ່ງພັຣຍາໃນທັນໃດວ່າ ຖ້າເຊັ່ນນັ້ນ ທ່ານຈົ່ງລ້ຽງອາຫາຣແກ່ເສນາ ໔ ເຫລົ່າ

ຂຕະນັ້ນ ພັຣຍາທ່ານເມຕຫກະຄຫບໍດີໄດ້ນັ່ງໃກ້ກະຖາງເຂົ້າສຸກຂນາດຈຸນ້ຳນຶ່ງອາລຫົກໃບດຽວເທົ່ານັ້ນ ກັບໝໍ້ແກງໝໍ້ນຶ່ງ ແລ້ວລ້ຽງອາຫາຣແກ່ເສນາ ໔ ເຫລົ່າ ອາຫາຣນັ້ນບໍ່ໄດ້ຫມົດສິ້ນໄປຕລອດເວລາທີ່ນາງຍັງບໍ່ລຸກໄປຈາກທີ່

ມຫາອຳມາຕຍ໌ສັຣເສີນວ່າ ທ່ານຄຫບໍດີ ອິທສານຸພາພຂອງພັຣຍາທ່ານ ຂ້າພເຈົ້າໄດ້ເຫັນແລ້ວ ຂໍຊົມອິທສານຸພາພຂອງບຸຕຣ໌ທ່ານ

ຈຶ່ງເມຕຫກະຄຫບໍດີສັ່ງບຸຕຣ໌ວ່າ ຖ້າເຊັ່ນນັ້ນ ພໍ່ຈົ່ງແຈກເບັ້ຍຫວັດກາງປີແກ່ເສນາ ໔ ເຫລົ່າ

ຂຕະນັ້ນ ບຸຕຣ໌ຂອງທ່ານເມຕຫກະຄຫບໍດີຖືຖົງຈຸເງິນພັນນຶ່ງ ຖົງດຽວເທົ່ານັ້ນ ແລ້ວໄດ້ແຈກເບັ້ຍຫວັດກາງປີແກ່ເສນາ ໔ ເຫລົ່າ ເງິນນັ້ນບໍ່ໄດ້ຫມົດສິ້ນໄປ ຕລອດເວລາທີ່ຖົງເງິນຍັງຢູ່ໃນມືຂອງເຂົາ

ທ່ານມຫາອຳມາຕຍ໌ສັຣເສີນວ່າ ທ່ານຄຫບໍດີ ອິທສານຸກາພຂອງບຸຕຣ໌ທ່ານ ຂ້າພເຈົ້າໄດ້ເຫັນແລ້ວ ຂໍຊົມອິທສານຸກາພຂອງສະໃພ້ທ່ານ

ເມຕຫກະຄຫບໍດີສັ່ງສະໃພ້ທັນທີວ່າ ຖ້າເຊັ່ນນັ້ນ ແມ່ຈົ່ງແຈກເຂົ້າກາງປີແກ່ເສນາ ໔ ເຫລົ່າ

ຂຕະນັ້ນ ສະໃພ້ຂອງເມຕຫກະຄຫບໍດີໄດ້ນັ່ງໃກ້ກະເຊົ້າຈຸເຂົ້າ ໔ ທະນານໃບດຽວເທົ່ານັ້ນ ແລ້ວໄດ້ແຈກເຂົ້າກາງປີແກ່ເສນາ ໔ ເຫລົ່າ ເຂົ້ານັ້ນບໍ່ໄດ້ຫມົດສິ້ນໄປຕລອດເວລາທີ່ນາງຍັງບໍ່ລຸກໄປຈາກທີ່

ມຫາອຳມາຕຍ໌ສັຣເສີນວ່າ ທ່ານຄຫບໍດີ ອິທສານຸກາພຂອງສະໃພ້ທ່ານ ຂ້າພເຈົ້າໄດ້ເຫັນແລ້ວ ຂໍຊົມອິທສານຸກາພຂອງທາສທ່ານ

ເມຕ. ອິທສານຸກາພຂອງທາສຂ້າເຈົ້າ ທ່ານຕ້ອງຊົມທີ່ນາ ຂ້ານ້ອຍ.

ມ. ບໍ່ຕ້ອງລະທ່ານຄຫບໍດີ ແມ້ອິທສານຸກາພຂອງທາສທ່ານ ກໍເປັນອັນຂ້າພເຈົ້າໄດ້ເຫັນແລ້ວ ເມື່ອແລ້ວຣາຊກາຣນັ້ນແລ້ວ ທ່ານມຫາອຳມາຕຍ໌ນັ້ນພ້ອມດ້ວຍເສນາ ໔ ເຫລົ່າ ກໍຍ່າງທາງກັບພຣະນຄຣຣາຊຄຣິຫ໌ ເຂົ້າເຝົ້າພຣະເຈົ້າພິມພິສາຣຈອມເສນາມາຄົສຣາຊຂາບທູລເຣື່ອງນັ້ນໃຫ້ທຣົງຮູ້ທຸກປະກາຣ.

[໗໔] ຄັ້ງນັ້ນ ພຣະຜູ້ມີພຣະກາຄປະທັບຢູ່ໃນພຣະນຄຣເວສາລີຕາມພຣະພຸທສາກີຣົມຍ໌ ແລ້ວສເດັຈຈາຣິກທາງພຣະນຄຣກັທທິຍະ ພ້ອມດ້ວຍກິກຂຸສົງຜ໌ຫມູ່ໃຫຍ່ປະມາຕ ໑,໒໕໐ ອົງຄ໌ ສເດັຈຈາຣິກໂດຍລຳດັບ ໄດ້ສເດັຈເຖິງພຣະນຄຣກັທທິຍະແລ້ວຮູ້ວ່າ ພຣະອົງຄ໌ປະທັບຢູ່ ຕ ຊາຕິຍາວັນ ເຂຕພຣະນຄຣກັທທິຍະນັ້ນ.

ພຣະພຸທສຄຸຕ

ເມຕຫກະຄຫບໍດີໄດ້ສດັບຂ່າວຖນັດແນ່ວ່າ ທ່ານຜູ້ຈເຣີນ ພຣະສມຕະໂຄດົມສາກຍບຸຕຣ໌ ທຣົງຜນວຊຈາກສາກຍຕະກູລ ສເດັຈໂດຍລຳດັບເຖິງພຣະນຄຣກັທທິຍະ ປະທັບຢູ່ ຕ ຊາຕິຍາວັນ ເຂຕພຣະນຄຣກັທທິຍະ ກໍພຣະກິຕຕິສັພທ໌ອັນງາມຂອງທ່ານພຣະໂຄດົມພຣະອົງຄ໌ນັ້ນ ຂຈອຣໄປແລ້ວຢ່າງນີ້ວ່າ ແມ້ເພາະເຫຕຸນີ້ໆ ພຣະຜູ້ມີພຣະກາຄພຣະອົງຄ໌ນັ້ນທຣົງເປັນພຣະອຣຫັນຕ໌ ຕຣັສຮູ້ເອງໂດຍດີ ທຣົງບັຣລຸວິຊຊາແລະຈຣຕະ ສເດັຈໄປດີແລ້ວທຣົງຮູ້ແຈ້ງໂລກ ເປັນສາຣຖີຝຶກບຸຣຸຮທີ່ຄວຣຝຶກ ບໍ່ມີຜູ້ອື່ນຍິ່ງກວ່າ ເປັນສາສດາ

ຂອງຫວຍເທພແລະມນຸษย໌ ເປັນຜູ້ເບີກບານແລ້ວ ເປັນຜູ້ຈຳແນກສັມມ໌ ພຣະອົງຄ໌ທຣົງເຮັດໂລກນີ້ ພ້ອມທັ້ງເທວໂລກ ມາຣໂລກ ພຣົຫ໌ມໂລກ ໃຫ້ແຈ້ງຊັດດ້ວຍພຣະປັญญາອັນຍິ່ງຂອງພຣະອົງຄ໌ເອງ ແລ້ວທຣົງສອນຫມູ່ສັຕວ໌ ພ້ອມທັ້ງສມຕະພຣາຫ໌ມຕ໌ ທວຍເທພແລະມນຸษย໌ໃຫ້ຮູ້ ທຣົງສແດງສັມມ໌ ງາມໃນເບື້ອງຕົ້ນງາມໃນທ່າມກາງ ງາມໃນທີ່ສຸດ ທຣົງປະກາສພຣົຫ໌ມຈັຣຍ໌ພ້ອມທັ້ງອັຖທັ້ງພຍັญชນະຄົບບໍຣິບູຣຕ໌ບໍຣິສຸທສິ໌ ປະການນຶ່ງ ການເຫັນພຣະອຣຫັນຕ໌ທັ້ງຫລາຍເຫັນປານນັ້ນ ເປັນຄວາມດີ

ຫລັງຈາກນັ້ນ ເມຕຫກະຄຫບໍດີໃຫ້ຈັດແຈງຍວດຍານທີ່ງາມໆ ແລ້ວຂຶ້ນສູ່ຍວດຍານທີ່ງາມໆ ມີຍວດຍານທີ່ງາມໆ ຫລາຍຄັນແລ່ນອອກຈາກພຣະນຄຣກັຫທີຍະໄປເຝົ້າພຣະຜູ້ມີພຣະກາຄ.

ພວກເດັຽຣຖີຍ໌ເປັນຈຳນວນຫຼາຍ ໄດ້ເຫັນເມຕຫກະຄຫບໍດີກຳລັງມາແຕ່ໄກ ເມື່ອແລ້ວໄດ້ທັກຖາມເມຕຫກະຄຫບໍດີວ່າ ທ່ານຄຫບໍດີ ທ່ານຈະໄປທີ່ໃດ?

ເມຕ. ຂ້າພເຈົ້າຈະໄປເຝົ້າພຣະສມຕະໂຄດົມ ຂ້ານ້ອຍ.

໑. ຄຫບໍດີ ກໍທ່ານເປັນກິຣິຍວາທ ຈະໄປເຝົ້າສມຕະໂຄດົມຜູ້ເປັນອກິຣິຍວາທເປັນຫຍັງ ເພາະພຣະສມຕະໂຄດົມເປັນອກິຣິຍວາທ ສແດງສັມມ໌ເພື່ອຄວາມບໍ່ເຮັດ ແລະແນະນຳສາວົກຕາມແນວນັ້ນ

ລຳດັບນັ້ນ ເມຕຫກະຄຫບໍດີຄຶດວ່າ ພຣະຜູ້ມີພຣະກາຄພຣະອົງຄ໌ນັ້ນ ຈະເປັນພຣະອຣຫັນຕ-ສັມມາສັມພຸທສເຈົ້າແນ່ແທ້ບໍ່ຕ້ອງສົງສັຍ ເພາະຈັ່ງຊັ້ນ ເດັຽຣຖີຍ໌ພວກນີ້ຈຶ່ງພາກັນຮິษยา ແລ້ວໄປດ້ວຍຍວດຍານຕລອດພູມີກາຄທີ່ຍວດຍານຈະໄປໄດ້ ລົງຈາກຍວດຍານແລ້ວ ຍ່າງເຂົ້າໄປໃນພຸທສຳນັກ ຖວາຍບັງຄົມພຣະຜູ້ມີພຣະກາຄ ນັ່ງຢູ່ ຓ ທີ່ຄວຣສ່ວນຂ້າງນຶ່ງ.

ທຣົງສແດງສັມມ໌ໂປຼດ

ພຣະຜູ້ມີພຣະກາຄໄດ້ທຣົງສແດງອນຸປຸພພພິກຖາແກ່ເມຕຫກະຄຫບໍດີ ຜູ້ນັ່ງຢູ່ ຓ ທີ່ຄວຣສ່ວນຂ້າງນຶ່ງ ຄື ທຣົງປະກາສທານກຖາ ສີລກຖາ ສັຄຄກຖາ ໂທษ ຄວາມຕ່ຳຊາມ ຄວາມເສົ້າຫມອງຂອງກາມທັ້ງຫລາຍ ແລະອານິສົງສ໌ໃນຄວາມອອກຈາກກາມ ຂຕະເມື່ອພຣະອົງຄ໌ທຣົງຮູ້ວ່າ ທ່ານເມຕຫກະຄຫບໍດີມີຈິຕສະດວກ ມີຈິຕອ່ອນ ມີຈິຕບໍ່ມີນິວຣຕ໌ ມີຈິຕເບີກບານ ມີຈິຕຜ່ອງໃສແລ້ວຈຶ່ງທຣົງປະກາສພຣະສັມມເທສນາທີ່ພຣະພຸທສເຈົ້າທັ້ງຫລາຍທຣົງຍົກຂຶ້ນສແດງດ້ວຍພຣະອົງຄ໌ເອງ ຄື ທຸກຂ໌ສມຸທັຍ ນິໂຣສ ມັຄຄ໌ ດວງຕາເຫັນສັມມ໌ປຣາສຈາກສຸລີ ປຣາສຈາກມົລທິນ ໄດ້ເກີດແກ່ທ່ານເມຕຫກະ-ຄຫບໍດີ ຓ ສຖານທີ່ນັ່ງນັ້ນແລວ່າ ສິ່ງໃດສິ່ງນຶ່ງມີຄວາມເກີດຂຶ້ນເປັນສັມມດາ ສິ່ງນັ້ນທັ້ງມວລມີຄວາມດັບເປັນສັມມດາ ເໝືອນຜ້າທີ່ສະອາດປຣາສຈາກມົລທິນ ຄວຣຮັບນ້ຳຍ້ອມດ້ວຍດີຈັ່ງຊັ້ນ.

ສແດງຕົນເປັນອຸບາສິກາ

ເມື່ອເມຕຫກະຄຫບໍດີເຫັນສັມມ໌ແລ້ວ ບັຣລຸສັມມ໌ແລ້ວ ຮູ້ສັມມ໌ແຈ່ມແຈ້ງແລ້ວ ຫຢັ່ງລົງສູ່ສັມມ໌ແລ້ວ ຂ້າມຄວາມສົງສັຍໄດ້ແລ້ວ ປຣາສຈາກຖ້ອຍຄຳສແດງຄວາມສົງສັຍເຖິງຄວາມເປັນຜູ້ອົງອາຈ ບໍ່ຕ້ອງເຊື່ອຜູ້ອື່ນໃນຄຳສອນຂອງພຣະສາສດາ ໄດ້ຂາບທູລຄຳນີ້ແດ່ພຣະຜູ້ມີພຣະກາຄວ່າ ກາຫິຕຂອງພຣະອົງຄ໌ແຈ່ມແຈ້ງຫຼາຍ ຂ້ານ້ອຍ ກາຫິຕຂອງພຣະອົງຄ໌ງາມຫຼາຍ ຂ້ານ້ອຍ ພຣະອົງຄ໌ທຮົງປະກາສສັມມ໌ໂດຍອເນກປຣິຍາຍຢ່າງນີ້ປຽບເຫມືອນບຸຄຄົລຫງາຍຂອງທີ່ຄວ່ຳ ເປີດຂອງທີ່ປິດບອກທາງແກ່ຄົນຫລົງທາງຫຼືສ່ອງປະທີປໃນທີ່ມືດ ດ້ວຍປະສົງຄ໌ວ່າ ຄົນມີຈັກຫຸຈະເຫັນຮູປຈັ່ງຊັ້ນ ຂ້າພຣະພຸທສເຈົ້ານີ້ຂໍເຖິງພຣະຜູ້ມີພຣະກາຄ ພຣະສັມມ໌ແລະພຣະສົງຆ໌ວ່າເປັນສຣຕະ ຂໍພຣະອົງຄ໌ໂປຼດທຮົງຈຳຂ້າພຣະພຸທສເຈົ້າວ່າ ເປັນອຸບາສິກາຜູ້ມອບຊີວິຕເຖິງສຣຕະ ຈຳເດີມແຕ່ວັນນີ້ເປັນຕົ້ນໄປ ແລະຂໍພຣະອົງຄ໌ພ້ອມກັບກິກຂຸສົງຆ໌ ຈົ່ງທຮົງພຣະກຣຸຕາໂປຼດຮັບກັຕຕາຫາຣຂອງຂ້າພຣະພຸທສເຈົ້າ ເພື່ອຈເຣີນບຸນກຸສລແລະປີຕິປາໂມທຍ໌ໃນມື້ອື່ນເຊົ້າດ້ວຍເທີ້ນ ຂ້ານ້ອຍ. ພຣະຜູ້ມີພຣະກາຄທຮົງຮັບອາຣາຣນາດ້ວຍດຸສຕີກາພ

ເມື່ອເມຕຫກະຄຫບໍດີຮູ້ການຮັບອາຣາຣນາຂອງພຣະຜູ້ມີພຣະກາຄແລ້ວ ລຸກຈາກທີ່ນັ່ງ ຖວາຍບັງຄົມທຳປະທັກສິຕກັບໄປ ແລ້ວສັ່ງໃຫ້ຕົກແຕ່ງຂອງຍ້ຳຂອງຈັນອັນປະຕີຕໂດຍຜ່ານຣາຕຣີນັ້ນ ແລ້ວໃຫ້ເຈົ້າຫນ້າທີ່ໄປຂາບທູລກັຕກາລແດ່ພຣະຜູ້ມີພຣະກາຄວ່າ ເຖິງເວລາແລ້ວ ຂ້ານ້ອຍ ກັຕຕາຫາຣແລ້ວແລ້ວ.

ເມື່ອເວລາເຊົ້າ ພຣະຜູ້ມີພຣະກາຄທຮົງຄອງອັນຕຣວາສົກ ຖືບາຕຣ໌ຈີວຣສເດັຈພຣະພຸທສດຳເນີນເຂົ້າໄປທາງນິເວສນ໌ຂອງເມຕຫກະຄຫບໍດີ ເມື່ອເຖິງແລ້ວປະທັບນັ່ງເຫນືອພຸທສອາສນ໌ທີ່ຈັດໄວ້ ພ້ອມດ້ວຍກິກຂຸສົງຆ໌

ຂຕະນັ້ນ ກັຣຍາ ບຸຕຣ໌ ສະໃພ້ ແລະທາສ ຂອງເມຕຫກະຄຫບໍດີໄດ້ເຂົ້າເຝົ້າພຣະຜູ້ມີພຣະກາຄຖວາຍບັງຄົມແລ້ວນັ່ງຢູ່ ໓ ທີ່ຄວຣສ່ວນຂ້າງນຶ່ງ ພຣະຜູ້ມີພຣະກາຄທຮົງສແດງອນຸປຸພພິກາຖາແກ່ເຂົາທັ້ງຫລາຍ ຄື ທຮົງປະກາສທານກາຖາ ສີລກາຖາ ສັຄຄກາຖາ ໂທສ ຄວາມຕ່ຳຊາມ ຄວາມເສົ້າຫມອງຂອງກາມທັ້ງຫລາຍ ແລະອານິສົງສ໌ໃນຄວາມອອກຈາກກາມ ເມື່ອພຣະອົງຄ໌ທຮົງຮູ້ວ່າ ຊົນເຫລົ່ານັ້ນມີຈິຕສະດວກ ມີຈິຕອ່ອນ ມີຈິຕບໍ່ມີນິວຣຕ໌ ມີຈິຕເບີກບານ ມີຈິຕຜ່ອງໃສແລ້ວ ຈຶ່ງທຮົງປະກາສພຣະສັມມເທສນາທີ່ພຣະພຸທສເຈົ້າທັ້ງຫລາຍທຮົງຍົກຂຶ້ນສແດງດ້ວຍພຣະອົງຄ໌ເອງ ຄື ທຸກຂ໌ ສມຸທັຍ ນິໂຣຮ ມັຄຄ໌ ດວງຕາເຫັນສັມມ໌ປຣາສຈາກຣຸລີ ປຣາສຈາກມົລທິນ ໄດ້ເກີດແກ່ເຂົາທັ້ງຫລາຍ ໓ ສຖານທີ່ນັ່ງນັ້ນແລວ່າ ສິ່ງໃດສິ່ງນຶ່ງມີ

ຄວາມເກີດຂຶ້ນເປັນສັມມດາ ສິ່ງນັ້ນທັ້ງມວລມີຄວາມດັບເປັນສັມມດາ ເໝືອນຜ້າທີ່ສະອາດ ປຣາສຈາກມົລທິນ ຄວຣຮັບນ້ຳຍ້ອມດ້ວຍດີ ຈັ່ງຊັ້ນ.

ເມື່ອຊົນເຫລົ່ານັ້ນເຫັນສັມມ໌ແລ້ວ ບັຣລຸສັມມ໌ແລ້ວ ຮູ້ສັມມ໌ແຈ່ມແຈ້ງແລ້ວຫຍັ່ງລົງສູ່ສັມມ໌ແລ້ວ ຂ້າມຄວາມສົງສັຍໄດ້ແລ້ວ ປຣາສຈາກຖ້ອຍຄຳສແດງຄວາມສົງສັຍແລ້ວ ເຖິງຄວາມເປັນຜູ້ອົງອາຈ ບໍ່ຕ້ອງເຊື່ອຜູ້ອື່ນໃນຄຳສອນຂອງພຣະສາສດາ ໄດ້ຂາບທູລຄຳນີ້ແດ່ພຣະຜູ້ມີພຣະພາຄວ່າ ພາຫິຕຂອງພຣະອົງຄ໌ແຈ່ມແຈ້ງຫຼາຍ ຂ້ານ້ອຍ ພາຫິຕຂອງພຣະອົງຄ໌ງາມຫຼາຍ ຂ້ານ້ອຍ ພຣະອົງຄ໌ທຣົງປະກາສສັມມ໌ ໂດຍອເນກປຣິຍາຍຢ່າງນີ້ ປຽບເຫມືອນບຸຄຄົລຫງາຍຂອງທີ່ຄວ່ຳ ເປີດຂອງທີ່ປິດ ບອກທາງແກ່ຄົນຫລົງທາງ ຫຼືສ່ອງປະທີປໃນທີ່ມືດດ້ວຍປະສົງຄ໌ວ່າ ຄົນມີຈັກຂຸຈະເຫັນຮູປຈັ່ງຊັ້ນ ຂ້າພຣະພຸທສເຈົ້າເຫລົ່ານີ້ ຂໍເຖິງພຣະຜູ້ມີພຣະພາຄ ພຣະສັມມ໌ ແລະພຣະສົງຄ໌ ວ່າເປັນສຣຓະ ຂໍພຣະອົງຄ໌ໂປຼດທຣົງຈຳຂ້າພຣະພຸທສເຈົ້າທັ້ງຫລາຍວ່າ ເປັນອຸບາສົກອຸບາສິກາຜູ້ມອບຊີວິຕເຖິງສຣຓະ ຈຳເດີມແຕ່ວັນນີ້ເປັນຕົ້ນໄປ.

ເມື່ອເມຕຫກະຄຫບໍດີອັງຄາສກິກຂຸສົງຄ໌ ມີພຣະພຸທສເຈົ້າເປັນປະມຸຂ ດ້ວຍຂາທນີຍໂພຊນີຍາຫາຣອັນປະນີຕ ດ້ວຍມືຂອງຕົນຈົນຍັງພຣະຜູ້ມີພຣະພາຄຜູ້ສເວີຍແລ້ວ ທຣົງນຳພຣະຫັຕຖ໌ຈາກບາຕຣ໌ໃຫ້ຫ້າມກັຕຣ໌ແລ້ວຈຶ່ງນັ່ງຢູ່ ໃນ ທີ່ຄວຣສ່ວນຂ້າງນຶ່ງ ໄດ້ຂາບທູລປວາຣຕາແດ່ພຣະຜູ້ມີພຣະພາຄວ່າ ຕາບໃດທີ່ພຣະອົງຄ໌ຍັງປະທັບຢູ່ ໃນ ພຣະນຄຣັກທິຍະ ຂ້າພຣະພຸທສເຈົ້າຂໍຖວາຍກັຕຕາຫາຣເປັນປະຈຳແກ່ກິກຂຸສົງຄ໌ມີພຣະພຸທສເຈົ້າເປັນປະມຸຂ.

ລຳດັບນັ້ນ ພຣະຜູ້ມີພຣະພາຄທຣົງຊີ້ແຈງໃຫ້ເມຕຫກະຄຫບໍດີເຫັນແຈ້ງສມາທານ ອາຈຫານ ຣ່າເຣິງດ້ວຍສັມມີກະຖາ ແລ້ວທຣົງລຸກຈາກທີ່ປະທັບສເດັຈກັບໄປ.

ເມຕຫກຄຫບໍດີອັງຄາສພຣະສົງຄ໌

[໗໕] ຄັ້ງນັ້ນ ພຣະຜູ້ມີພຣະພາຄປະທັບຢູ່ໃນພຣະນຄຣັກທິຍະຕາມພຣະພຸທສາກີຣົມຍ໌ ແລ້ວບໍ່ໄດ້ທຣົງລາເມຕຫກະຄຫບໍດີ ສເດັຈພຣະພຸທສດຳເນີນໄປທາງຊົນບົທອັງຄຸຕຕຣາປະ ພ້ອມດ້ວຍກິກຂຸສົງຄ໌ຫມູ່ໃຫຍ່ປະມາຓ ໑,໒໕໐ ອົງຄ໌ ເມຕຫກະຄຫບໍດີໄດ້ຮູ້ຂ່າວແນ່ຊັດວ່າ ພຣະຜູ້ມີພຣະພາຄສເດັຈພຣະພຸທສດຳເນີນໄປທາງຊົນບົທອັງຄຸຕຕຣາປະ ພ້ອມດ້ວຍກິກຂຸສົງຄ໌ຫມູ່ໃຫຍ່ປະມາຓ ໑,໒໕໐ ອົງຄ໌ ຈຶ່ງສັ່ງທາສແລະກັມມກຣວ່າ ພນາຍທັ້ງຫລາຍ ຖ້າຈັ່ງຊັ້ນ ພວກເຈົ້າຈົ່ງບັຣທຸກເກືອແດ່ ນ້ຳມັນແດ່ ເຂົ້າສາຣແດ່ ຂອງຂົບລັບແດ່ ລົງໃນກຽນໃຫ້ມາກໆ ແລະຄົນລ້ຽງງົວ ໑,໒໕໐ ຄົນ ຈົ່ງພາແມ່ໂຄນົມ ໑,໒໕໐ ໂຕມາດ້ວຍ ເຮົາຈະລ້ຽງພຣະສົງຄ໌ດ້ວຍນ້ຳນົມສົດອັນຮີດໃຫມ່ທີ່ມີນ້ຳຍັງອຸ່ນໆ ໃນ ສຖານທີ່ໆ ເຮົາໄດ້ພົບ

ພຣະຜູ້ມີພຣະກາຄ ເມື່ອເມຕາຫກະຄຫບໍດີຕາມໄປພົ້ພຣະຜູ້ມີພຣະກາຄ ໓ ຣະຫວ່າງທາງກັນດາຣ ຈຶ່ງເຂົ້າເຝົ້າພຣະຜູ້ມີພຣະກາຄ ຖວາຍບັງຄົມຢືນ ໓ ທີ່ຄວຣສ່ວນຂ້າງນຶ່ງ ແລ້ວໄດ້ຂາບທູລອາຣາຂນາວ່າ ຂ້ານ້ອຍຂໍພຣະຜູ້ມີພຣະກາຄພ້ອມກັບກິກຂຸສົງຄ໌ ຈົ່ງທຣົງພຣະກຣຸຕາໂປຼດຮັບກັຕຕາຫາຣຂອງຂ້າພຣະພຸທສເຈົ້າເພື່ອຈເຣີນບຸນກຸສົລແລະປີຕິປຼາໂມທຍ໌ໃນມື້ອື່ນເຊົ້າດ້ວຍເທີ້ນ ພຣະຜູ້ມີພຣະກາຄທຣົງຮັບອາຣາຂນາໂດຍດຸສນີກາພ ເມື່ອເມຕາຫກະຄຫບໍດີ ຮູ້ກາຣທຣົງຮັບອາຣາຂນາຂອງພຣະຜູ້ມີພຣະກາຄແລ້ວ ລຸກຈາກທີ່ນັ່ງຖວາຍບັງຄົມທຳປະທັກສິນກັບໄປ ແລ້ວສັ່ງໃຫ້ຕົກແຕ່ງຂອງຍ້ຳຂອງລົ້ນອັນປະນີຕ ໂດຍຜ່ານຣາຕຣີນັ້ນແລ້ວໃຫ້ຄົນໄປຂາບທູລກັຕກາລແດ່ພຣະຜູ້ມີພຣະກາຄວ່າ ເຖິງເວລາແລ້ວ ຂ້ານ້ອຍ ກັຕຕາຫາຣແລ້ວແລ້ວ.

ເມື່ອເວລາເຊົ້າ ພຣະຜູ້ມີພຣະກາຄທຣົງຄອງອັນຕຣວາສົກແລ້ວ ຖືບາຕຣ໌ຈີວຣສເດັຈພຣະພຸທສ-ດຳເນີນເຂົ້າສຖານທີ່ອັງຄາສຂອງເມຕາຫກະຄຫບໍດີ ເມື່ອແລ້ວປະທັບນັ່ງເຫນືອພຸທສອາສນ໌ທີ່ເຂົາປູລາດຖວາຍພ້ອມດ້ວຍກິກຂຸສົງຄ໌ ຈຶ່ງເມຕາຫກະຄຫບໍດີສັ່ງຄົນລ້ຽງງົວ ໑,໒໕໐ ຄົນວ່າ ພນາຍທັ້ງຫລາຍ ຖ້າເຊັ່ນນັ້ນຈົ່ງຊ່ວຍກັນຈັບແມ່ໂຄນົມຄົນລະໂຕ ແລ້ວຢືນໃກ້ໆ ກິກຂຸອົງຄ໌ລະຄົນໆ ເຮົາຈະລ້ຽງພຣະດ້ວຍນ້ຳນົມສົດອັນຮີດໃຫມ່ທີ່ມີນ້ຳຍັງອຸ່ນໆ ເມື່ອແລ້ວໄດ້ອັງຄາສກິກຂຸສົງຄ໌ມີພຣະພຸທສເຈົ້າເປັນປະມຸຂ ດ້ວຍຂາທນີຍ-ໂກຊນີຍາຫາຣອັນປະນີຕ ແລະດ້ວຍນ້ຳນົມສົດອັນຮີດໃຫມ່ດ້ວຍມືຂອງຕົນ ຈົນໃຫ້ຫ້າມກັຕຣ໌ແລ້ວ ກິກຂຸທັ້ງຫລາຍບໍ່ພໍໃຈ ບໍ່ຍອມຮັບປະເຄນນ້ຳນົມສົດ ພຣະຜູ້ມີພຣະກາຄຕຣັສອນຸຍາຕວ່າ ດູຣາກິກຂຸທັ້ງຫລາຍຈົ່ງຮັບປະເຄນລົ້ນເທີ້ນ.

ເມື່ອເມຕາຫກະຄຫບໍດີອັງຄາສກິກຂຸສົງຄ໌ມີພຣະພຸທສເຈົ້າເປັນປະມຸຂ ດ້ວຍຂາທນີຍໂກຊນີຍາຫາຣອັນປະນີຕ ແລະດ້ວຍນ້ຳນົມສົດຮີດໃຫມ່ດ້ວຍມືຂອງຕົນຈົນຍັງພຣະຜູ້ມີພຣະກາຄຜູ້ສເວີຍແລ້ວ ທຣົງນຳພຣະຫັຕຖ໌ອອກຈາກບາຕຣ໌ໃຫ້ຫ້າມກັຕຣ໌ແລ້ວ ໄດ້ນັ່ງຢູ່ ໓ ທີ່ຄວຣສ່ວນຂ້າງນຶ່ງ ເມຕາຫກະຄຫບໍດີນັ່ງຢູ່ ໓ ທີ່ຄວຣສ່ວນຂ້າງນຶ່ງ ແລ້ວໄດ້ຂາບທູລຄຳນີ້ແດ່ພຣະຜູ້ມີພຣະກາຄວ່າ ມີຢູ່ ຂ້ານ້ອຍ ຫົນທາງກັນດາຣອັຕຄັດນ້ຳ ອັຕຄັດອາຫາຣ ກິກຂຸບໍ່ມີສບຽງຈະເດີນທາງໄປ ເຮັດບໍ່ໄດ້ງ່າຍ ຂໍປະທານພອຣະວໂຣກາສ ຂໍພຣະອົງຄ໌ໂປຼດທຣົງອນຸຍາຕສບຽງເດີນທາງແກ່ກິກຂຸທັ້ງຫລາຍດ້ວຍເທີ້ນ ຂ້ານ້ອຍ.

ເມຕາຫການຸຍາຕ

ລຳດັບນັ້ນ ພຣະຜູ້ມີພຣະກາຄທຣົງຊີ້ແຈງໃຫ້ເມຕາຫກະຄຫບໍດີເຫັນແຈ້ງສມາທານ ອາຈຫານ ຣ່າເຣີງດ້ວຍທັມມີກະຖາແລ້ວ ທຣົງລຸກຈາກທີ່ປະທັບສເດັຈກັບໄປ ຫລັງຈາກນັ້ນພຣະອົງຄ໌ທຣົງເຮັດທັມມີກະຖາ

ໃນເພາະເຫຕຸເປັນເຄົ້າມູລນັ້ນ ໃນເພາະເຫຕຸແຣກເກີດນັ້ນ ແລ້ວຣັບສັ່ງອນຸຄາຕແກ່ກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ເຮົາອນຸຄາຕໂຄຣົສ ໕ ຄື ນົມສົດ ນົມສົ້ມ ປຽງ ເນີຍຂົ້ນ ເນີຍໃສ.

ມີຢູ່ ກິກຂຸທັ້ງຫລາຍ ຫົນທາງກັນດາຣອັຕຄັດນ້ຳ ອັຕຄັຕອາຫາຣ ກິກຂຸບໍ່ມີສບຽງຈະເດີນທາງໄປ ເຮັດບໍ່ໄດ້ງ່າຍ ເຮົາອນຸຄາຕໃຫ້ສແວງຫາສບຽງໄດ້ ຄື ກິກຂຸຕ້ອງການເຂົ້າສາຣ ຄວຣສແວງຫາເຂົ້າສາຣ ຕ້ອງການຖົ່ວຂຽວ ຄວຣສແວງຫາຖົ່ວຂຽວ ຕ້ອງການຖົ່ວຣາຊມາສ ຄວຣສແວງຫາຖົ່ວຣາຊມາສ ຕ້ອງການເກືອ ຄວຣສແວງຫາເກືອ ຕ້ອງການນ້ຳອ້ອຍ ຄວຣສແວງຫານ້ຳອ້ອຍ ຕ້ອງການນ້ຳມັນ ຄວຣສແວງຫານ້ຳມັນ ຕ້ອງການເນີຍໃສ ກໍຄວຣສແວງຫາເນີຍໃສ.

ມີຢູ່ ກິກຂຸທັ້ງຫລາຍ ຊາວບ້ານທີ່ມີສັທທາເລື່ອມໃສ ເຂົາມອບເງິນທອງໄວ້ໃນມືກັປປິຍກາຣົກ ສັ່ງວ່າ ສິ່ງໃດຄວຣແກ່ພຣະຜູ້ເປັນເຈົ້າ ຂໍທ່ານຈົ່ງຖວາຍສິ່ງນັ້ນດ້ວຍກັປປິຍກັຕຫ໌ນີ້.

ດູຣາກິກຂຸທັ້ງຫລາຍ ເຮົາອນຸຄາຕໃຫ້ຍິນດີຂອງອັນເປັນກັປປິຍະຈາກກັປປິຍກັຕຫ໌ນັ້ນໄດ້ ແຕ່ເຮົາບໍ່ໄດ້ກ່າວວ່າ ຄວຣຍິນດີ ຄວຣສແວງຫາທອງແລະເງິນໂດຍປຣິຍາຍໃດໆ ເລີຍ.

ເຣື່ອງເກຕິຍຊຜິລ

[໗໖] ຄັ້ງນັ້ນ ພຣະຜູ້ມີພຣະກາຄສເດັຈພຣະພຸທສດຳເນີນຜ່ານຣະຍະທາງໂດຍລຳດັບ ສເດັຈເຖິງອາປຕນິຄົມແລ້ວ ເກຕິຍຊຜິລໄດ້ສດັບຂ່າວຖນັດແນ່ວ່າ ທ່ານຜູ້ຈເຣີນ ພຣະສມຕໂຄດົມ ສາກຍບຸຕຣ໌ ທຣົງຜນວຊຈາກສາກຍຕະກູລ ສເດັຈໂດຍລຳດັບເຖິງອາປຕນິຄົມແລ້ວ ກໍເພາະກິຕຕິສັພທ໌ອັນງາມຂອງທ່ານພຣະໂຄດົມພຣະອົງຄ໌ນັ້ນຂຈອຣໄປແລ້ວຢ່າງນີ້ວ່າ ແມ້ເພາະເຫຕຸນີ້ໆ ພຣະຜູ້ມີພຣະກາຄພຣະອົງຄ໌ນັ້ນທຣົງເປັນພຣະອຣຫັນຕ໌ ຕຣັສຣູ້ເອງໂດຍດີ ທຣົງບັຣລຸວິຊຊາແລະຈຣຕະ ສເດັຈໄປດີແລ້ວ ທຣົງຮູ້ແຈ້ງໂລກ ເປັນສາຣຖີຝຶກບຸຣຸຜທີ່ຄວຣຝຶກ ບໍ່ມີຜູ້ອື່ນຍິ່ງກວ່າ ເປັນສາສດາຂອງທວຍເທພແລະມນຸຜຍ໌ ເປັນຜູ້ເບີກບານແລ້ວ ເປັນຜູ້ຈຳແນກສັມມ໌ ພຣະອົງຄ໌ທຣົງເຮັດໂລກນີ້ພ້ອມທັ້ງເທວໂລກ ມາຣໂລກ ພຣົຫ໌ມໂລກໃຫ້ແຈ້ງຊັດດ້ວຍພຣະປັຌຌາອັນຍິ່ງຂອງພຣະອົງຄ໌ເອງ ແລ້ວທຣົງສັ່ງສອນຫມູ່ສັຕວ໌ພ້ອມທັ້ງສມຕະ ພຣາຫ໌ມຕ໌ ທວຍເທພແລະມນຸຜຍ໌ໃຫ້ຮູ້ ທຣົງສແດງສັມມ໌ງາມໃນເບື້ອງຕົ້ນ ງາມໃນທ່າມກາງ ງາມໃນທີ່ສຸດ ທຣົງປະກາສພຣົຫ໌ມຈັຣຍ໌ພ້ອມທັ້ງອັຖ ທັ້ງພຍັຌຊນະຄົບບໍຣິບູຣຕ໌ບໍຣິສຸທສໍ໌ ປະການນຶ່ງ ການເຫັນພຣະອຣຫັນຕ໌ທັ້ງຫລາຍເຫັນປານນັ້ນເປັນຄວາມດີ.

ຫລັງຈາກນັ້ນ ເກຕິຍຊຜິລໄດ້ດຳຣິວ່າ ເຮົາຈະໃຫ້ນຳຫຍັງໄປຖວາຍພຣະສມຕໂຄດົມດີນໍ ຈຶ່ງໄດ້ດຳຣິຕໍ່ໄປວ່າ ບັຣດາຣືສີຜູ້ເປັນບຸຣພາຈາຣຍ໌ຂອງພວກພຣາຫ໌ມຕ໌ ຄື ຣືສີອັຕກະກະ ຣືສີວາມກະ

ຣືສີວາມເທວະ ຣືສີເວສສາມິຕຕະ ຣືສີຍມັຕັຄຄີ ຣືສີອັງຄີຣສະ ຣືສີກາຣທວາຊະ ຣືສີວາເສຕຖະ ຣືສີກັສສປະ ຣືສີກຄຸ ຊຶ່ງເປັນຜູ້ຜູກມົນຕ໌ມາກ່ອນພວກພຣາຫ໌ມຓ໌ໃນບັດນີ້ ຂັບຕາມກ່າວຕາມຊຶ່ງບົທມົນຕ໌ຂອງເກົ່ານີ້ ທີ່ທ່ານຂັບແລ້ວບອກວ່າ ຮອບຮອມໄວ້ແລ້ວ ກ່າວໄດ້ຖືກຕ້ອງ ບອກໄດ້ຖືກຕ້ອງຕາມທີ່ກ່າວໄວ້ບອກໄວ້ ເປັນຜູ້ເວັ້ນຈັນໃນຣາຕຣີ ງົດຈັນໃນເວລາວິກາລ ຣືສີເຫລົ່ານັ້ນໄດ້ຍິນດີນ້ຳປານະເຫັນປານນີ້ ແມ້ພຣະສມຓະໂຄດົມກໍເວັ້ນຈັນໃນຣາຕຣີ ງົດຈັນໃນເວລາວິກາລ ກໍຄວຣຈະຍິນດີນ້ຳປານະເຫັນປານນີ້ແດ່ ແລ້ວສັ່ງໃຫ້ຕົກແຕ່ງນ້ຳປານະເປັນຈຳນວນຫຼາຍ ໃຫ້ຄົນຫາບໄປເຖິງພຸທສສຳນັກ ເມື່ອເຖິງແລ້ວໄດ້ທູລປຣາສຮັຍພໍໃຫ້ເປັນທີ່ບັນເທີງ ເປັນທີ່ຣະລຶກເຖິງກັນໄປແລ້ວ ໄດ້ຢືນຢູ່ ຓ ທີ່ຄວຣສ່ວນຂ້າງນຶ່ງ ແລ້ວຂາບທູລອາຣາຮນາພຣະຜູ້ມີພຣະພາຄວ່າ ຂໍທ່ານພຣະໂຄດົມໂປຼດທຣົງຮັບນ້ຳປານະຂອງຂ້າພຣະເຈົ້າ.

ພຣະຜູ້ມີພຣະພາຄຕຣັສວ່າ ເກຓີຍະ ຖ້າເຊັ່ນນັ້ນຈົ່ງຖວາຍແກ່ກິກຂຸທັ້ງຫລາຍ ກິກຂຸທັ້ງຫລາຍບໍ່ພໍໃຈບໍ່ຍອມຮັບປະເຄນ ພຣະຜູ້ມີພຣະພາຄທຣົງອນຸຍາຕວ່າ ດູຣາກິກຂຸທັ້ງຫລາຍ ຈົ່ງຮັບປະເຄນຈັນເທີ້ນ ຄັ້ງນັ້ນເກຓີຍຊຊິລໄດ້ອັງຄາສກິກຂຸສົງຄ໌ມີພຣະພຸທສເຈົ້າເປັນປະມຸຂ ດ້ວຍນ້ຳປານະອັນມາກດ້ວຍມືຂອງຕົນຈົນຍັງພຣະຜູ້ມີພຣະພາຄຜູ້ລ້າງພຣະຫັຕຖ໌ ນຳພຣະຫັຕຖ໌ຈາກບາຕຣໃຫ້ຫ້າມກັຕຣ໌ແລ້ວ ໄດ້ນັ່ງເຝົ້າຢູ່ ຓ ທີ່ຄວຣສ່ວນຂ້າງນຶ່ງ.

ພຣະຜູ້ມີພຣະພາຄໄດ້ທຣົງຊີ້ແຈງໃຫ້ເກຓີຍຊຊິລຜູ້ນັ່ງເຝົ້າຢູ່ ຓ ທີ່ຄວຣສ່ວນຂ້າງນຶ່ງ ເຫັນແຈ້ງສມາທານ ອາຈຫານ ຮ່າເຣີງດ້ວຍສັມມີກຖາ.

ຄັ້ງນັ້ນ ເກຓີຍຊຊິລອັນພຣະຜູ້ມີພຣະພາຄທຣົງຊີ້ແຈງໃຫ້ເຫັນແຈ້ງ ສມາທານ ອາຈຫານ ຮ່າເຣີງດ້ວຍສັມມີກຖາແລ້ວ ໄດ້ຂາບທູລອາຣາຮນາພຣະຜູ້ມີພຣະພາຄວ່າ ຂໍທ່ານພຣະໂຄດົມພ້ອມກັບກິກຂຸສົງຄ໌ຈົ່ງທຣົງພຣະກຣຸຓາໂປຼດຮັບກັຕຕາຫາຣຂອງຂ້າພຣະພຸທສເຈົ້າ ເພື່ອຈເຣີນບຸນກຸສົລແລະປີຕີປຼາໂມທຍ໌ໃນມື້ເຊົ້າດ້ວຍເທີ້ນ ຂ້ານ້ອຍ.

ພຣະຜູ້ມີພຣະພາຄຕຣັສເຕືອນວ່າ ເກຓີຍະ ກິກຂຸສົງຄ໌ມີຫຼາຍເຖິງ ໑,໒໕໐ ອົງຄ໌ ແລະທ່ານກໍເລື່ອມໃສຍິ່ງນັກໃນຫມູ່ພຣາຫ໌ມຓ໌.

ເກຓີຍຊຊິລ ໄດ້ທູລອາຣາຮນາພຣະຜູ້ມີພຣະພາຄເປັນເທື່ອທີ່ສອງວ່າ ແມ້ກິກຂຸສົງຄ໌ຈະມີຫຼາຍເຖິງ ໑,໒໕໐ ອົງຄ໌ ແລະຂ້າພຣະພຸທສເຈົ້າໄດ້ເລື່ອມໃສຍິ່ງນັກໃນຫມູ່ພຣາຫ໌ມຓ໌ກໍແທ້ ເຖິງຢ່າງນັ້ນ ກໍຂໍທ່ານພຣະໂຄດົມພ້ອມກັບກິກຂຸສົງຄ໌ ຈົ່ງທຣົງພຣະກຣຸຓາໂປຼດຮັບກັຕຕາຫາຣຂອງພຣະພຸທສເຈົ້າ ເພື່ອຈເຣີນບຸນກຸສົລແລະປີຕີປຼາໂມທຍ໌ໃນມື້ອື່ນເຊົ້າດ້ວຍເທີ້ນ ຂ້ານ້ອຍ.

ພຣະຜູ້ມີພຣະກາຄຕຣັສເຕືອນເກາຕິຍະວ່າ ກິກຂຸສົງຄ໌ມີຫຼາຍເຖິງ ໑,໒໕໐ ອົງຄ໌ ແລະທ່ານກໍເລື່ອມໃສຍິ່ງນັກໃນຫມູ່ພຣາຫ໌ມຕ໌.

ເກາຕິຍຊຟິລ ກໍໄດ້ຂາບທູລອາຣາຣນາພຣະຜູ້ມີພຣະກາຄເປັນເທື່ອສາມວ່າ ແມ້ກິກຂຸສົງຄ໌ຈະມີຫຼາຍເຖິງ ໑,໒໕໐ ອົງຄ໌ ແລະຂ້າພຣະພຸທສເຈົ້າໄດ້ເລື່ອມໃສຍິ່ງນັກໃນຫມູ່ພຣາຫ໌ມຕ໌ກໍແທ້ ເຖິງຢ່າງນັ້ນ ກໍຂໍທ່ານພຣະໂຄດົມພ້ອມກິກຂຸສົງຄ໌ ຈົ່ງຫຣົງພຣະກຣຸຕາໂປຼດຮັບກັຕຕາຫາຣຂອງຂ້າພຣະພຸທສເຈົ້າ ເພື່ອຈເຣີນບຸນກຸສົລແລະປີຕິປຼາໂມທຍ໌ໃນມື້ອື່ນເຊົ້າດ້ວຍເທີ້ນ ຂ້ານ້ອຍ.

ພຣະຜູ້ມີພຣະກາຄຫຣົງຮັບອາຣາຣນາໂດຍດຸສນີກາພ ເມື່ອເກາຕິຍຊຟິລຮູ້ອາກາຣ ຮັບອາຣາຣນາຂອງພຣະຜູ້ມີພຣະກາຄແລ້ວ ລຸກຈາກທີ່ນັ່ງກັບໄປ.

ພຣະພຸທສານຸຍາຕນ້ຳອັຕກຸບານ

ລຳດັບນັ້ນ ພຣະຜູ້ມີພຣະກາຄຫຣົງເຮັດສັມມີກາຖາ ໃນເພາະເຫຕຸເປັນເຄົ້າມູລນັ້ນ ໃນເພາະເຫຕຸແຣກເກີດນັ້ນ ແລ້ວຕຣັສອນຸຍາຕແກ່ກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ເຮົາອນຸຍາຕນ້ຳປານະ ໘ ຊນິດ ຄື ນ້ຳປານະເຮັດດ້ວຍໝາກມ່ວງ ໑ ນ້ຳປານະເຮັດດ້ວຍໝາກຫວ້າ ໑ ນ້ຳປານະເຮັດດ້ວຍໝາກກ້ວຍມີເມັດ ໑ ນ້ຳປານະເຮັດດ້ວຍໝາກກ້ວຍບໍ່ມີເມັດ ໑ ນ້ຳປານະເຮັດດ້ວຍໝາກທຣາງ ໑ ນ້ຳປານະເຮັດດ້ວຍໝາກຈັນທນ໌ຫຼືອງຸ່ນ ໑ ນ້ຳປານະເຮັດດ້ວຍເຫງົ້າບົວ ໑ ນ້ຳປານະເຮັດດ້ວຍໝາກປາງຫຼືລີ້ນຈີ່ ໑.

ດູຣາກິກຂຸທັ້ງຫລາຍ ເຮົາອນຸຍາຕນ້ຳຜົລໄມ້ທຸກຊນິດ ເວັ້ນນ້ຳຕົ້ມເມັດເຂົ້າເປືອກ.

ດູຣາກິກຂຸທັ້ງຫລາຍ ເຮົາອນຸຍາຕນ້ຳໃບໄມ້ທຸກຊນິດ ເວັ້ນນ້ຳຜັກດອງ.

ດູຣາກິກຂຸທັ້ງຫລາຍ ເຮົາອນຸຍາຕນ້ຳດອກໄມ້ທຸກຊນິດ ເວັ້ນນ້ຳດອກໝາກທຣາງ.

ດູຣາກິກຂຸທັ້ງຫລາຍ ເຮົາອນຸຍາຕນ້ຳອ້ອຍສົດ.

ຄັ້ງນັ້ນ ເກາຕິຍຊຟິລສັ່ງໃຫ້ຕົກແຕ່ງຂອງຍ້ຳຂອງລັ້ນອັນປະຕີຕ ໓ ອາສຣົມຂອງຕົນໂດຍຜ່ານຣາຕຣີນັ້ນ ແລ້ວໃຫ້ຄົນຂາບທູລກັຕກາລແດ່ພຣະຜູ້ມີພຣະກາຄວ່າ ເຖິງເວລາແລ້ວ ທ່ານພຣະໂຄດົມ ກັຕຕາຫາຣແລ້ວແລ້ວ ຂຕະນັ້ນເປັນເວລາເຊົ້າ ພຣະຜູ້ມີພຣະກາຄຫຣົງຄອງອັນຕຣວາສົກ ແລ້ວຖືບາຕຣ໌ຈີວຣສເດັຈພຣະພຸທສດຳເນີນໄປທາງອາສຣົມຂອງເກາຕິຍຊຟິລ ເມື່ອເຖິງແລ້ວ ປະທັບນັ່ງເຫນືອພຣະພຸທສອາສນ໌ທີ່ເຂົາຈັດຖວາຍ ພ້ອມກັບກິກຂຸສົງຄ໌ ຈຶ່ງເກາຕິຍຊຟິລອັງຄາສກິກຂຸສົງຄ໌ມີພຣະພຸທສເຈົ້າເປັນປະມຸຂ ດ້ວຍຂອງຍ້ຳ ຂອງລັ້ນອັນປະຕີຕ ດ້ວຍມືຂອງຕົນ ຈົນພຣະຜູ້ມີພຣະກາຄສເວີຍແລ້ວ ນຳພຣະຫັຕຖ໌ຈາກບາຕຣ໌ຫ້າມກັຕຣ໌ແລ້ວ ໄດ້ນັ່ງຢູ່ ໓ ທີ່ຄວຣສ່ວນຂ້າງນຶ່ງ.

ພຣະຜູ້ມີພຣະກາຄ ໄດ້ທຮົງອນຸໂມທນາເກາຕິຍຊຜິລດ້ວຍຄາຖາເຫລົ່ານີ້ ວ່າດັ່ງນີ້:-

[໘໗] ຍັລທັ້ງຫລາຍມີການບູຊາໄຟເປັນທົວຫນ້າ ສາວິຕຕິລັນທ໌

ເປັນຍອດຂອງລັນທສາສຕຣ໌ ພຣະມຫາຣາຊເຈົ້າເປັນປະມຸຂຂອງ

ມນຸຊຍນິກຣ ສມຸທຣ໌ສາຄຣເປັນປະສານຂອງແມ່ນ້ຳທັ້ງຫລາຍ

ຕາຈັນທຣ໌ໃຫຍ່ກວ່າຕາດາວນັກຂັຕຣ໌ໃນອາກາສ ຕາກາຕຸມາສ

ໃຫຍ່ກວ່າບັຣດາສິ່ງຂອງທີ່ມີແສງຮ້ອນທັ້ງຫລາຍ ແນວໃດ ພຣະ-

ສົງຆ໌ ຍ່ອມເປັນໃຫຍ່ສຳຫຼັບທາຍົກຜູ້ຫວັງບຸລບຳເພັລທານຢູ່

ແນວນັ້ນ.

ເມື່ອພຣະຜູ້ມີພຣະກາຄທຮົງອນຸໂມທນາເກາຕິຍຊຜິລ ດ້ວຍຄາຖາເຫລົ່ານີ້ແລ້ວ ທຮົງລຸກຈາກທີ່ປະທັບສເດັຈກັບ.

ຕຽມການຕ້ອນຮັບພຣະພຸທສເຈົ້າ

[໘໘] ຄັ້ງນັ້ນ ພຣະຜູ້ມີພຣະກາຄປະທັບຢູ່ ໓ ອາປຕານິຄົມຕາມພຣະພຸທສາກິຣົມຍ໌ ແລ້ວສເດັຈຈາຣິກໄປທາງພຣະນຄຣກຸສິນາຣາ ພ້ອມດ້ວຍກິກຊຸຫມູ່ໃຫຍ່ປະມາຓ ໑,໒໕໐ ອົງຄ໌.

ພວກມັລລກັຕຣິຍ໌ຊາວພຣະນຄຣກຸສິນາຣາ ໄດ້ທຮົງຮູ້ຂ່າວແນ່ຖນັດວ່າ ພຣະຜູ້ມີພຣະກາຄກຳລັງສເດັຈມາພຣະນຄຣກຸສິນາຣາ ພ້ອມດ້ວຍກິກຊຸສົງຆ໌ຫມູ່ໃຫຍ່ປະມາຓ ໑,໒໕໐ ອົງຄ໌ ມັລລກັຕຣິຍ໌ເຫລົ່ານັ້ນໄດ້ຕັ້ງກຕິກາໄວ້ວ່າ ຜູ້ໃດບໍ່ຕ້ອນຮັບສເດັຈພຣະຜູ້ມີພຣະກາຄ ຈະຕ້ອງຖືກປັບສິນໄຫມເປັນເງິນ ໕໐໐ ກຫາປຕ໌ ສມັຍນັ້ນ ໂຣຊະມັລລກັຕຣິຍ໌ເປັນພຣະສຫາຍຂອງພຣະອານົນທ໌ ເມື່ອພຣະຜູ້ມີພຣະກາຄສເດັຈຈາຣິກໂດຍລຳດັບ ເຖິງພຣະນຄຣກຸສິນາຣາແລ້ວ ພວກມັລລກັຕຣິຍ໌ຊາວພຣະນຄຣກຸສິນາຣາໄດ້ຈັດການຕ້ອນຮັບສເດັຈພຣະຜູ້ມີພຣະກາຄແລ້ວ ເມື່ອໂຣຊະມັລລກັຕຣິຍ໌ຮັບສເດັຈພຣະຜູ້ມີພຣະກາຄແລ້ວ ເຂົ້າໄປຫາທ່ານພຣະອານົນທ໌ເຖິງທີ່ພັກ ທຮົງອກິວາທແລ້ວປະທັບຢືນ ໓ ທີ່ຄວຣສ່ວນຂ້າງນຶ່ງ.

ທ່ານພຣະອານົນທ໌ໄດ້ປຣາສຣັຍກະໂຣຊະມັລລກັຕຣິຍ໌ຜູ້ປະທັບຢືນ ໓ ທີ່ຄວຣສ່ວນຂ້າງນຶ່ງວ່າ ທ່ານໂຣຊະ ການຮັບສເດັຈພຣະຜູ້ມີພຣະກາຄຂອງທ່ານໂອລາຣແທ້.

ໂຣຊະມັລລກັຕຣິຍ໌ຕຣັສວ່າ ພຣະຄຸຓເຈົ້າອານົນທ໌ ພຣະພຸທສເຈົ້າກໍດີ ພຣະທັມມ໌ກໍດີ ພຣະສົງຆ໌ກໍດີ ບໍ່ໄດ້ເຮັດໃຫ້ຂ້າພເຈົ້າໃຫຍ່ໂຕ ພວກຄາຕິຕ່າງຫາກໄດ້ຕັ້ງກຕິກາໄວ້ວ່າ ຜູ້ໃດບໍ່ຕ້ອນຮັບສເດັຈພຣະຜູ້ມີພຣະກາຄ ຈະຕ້ອງຖືກປັບສິນໄຫມເປັນເງິນ ໕໐໐ ກຫາປຕ໌ ຂ້າພເຈົ້ານັ້ນແລໄດ້ຕ້ອນຮັບສເດັຈພຣະຜູ້ມີພຣະກາຄເຊັ່ນນີ້ ເພາະຢ້ານພວກຄາຕິປັບສິນໄຫມ.

ທັນໃດທ່ານພຣະອານົນທ໌ສແດງຄວາມບໍ່ພໍໃຈວ່າ ເປັນຫຍັງ ໂຣຊະມັລລກັບັຕຣິຍ໌ຈຶ່ງໄດ້ຕຣັສຢ່າງນີ້ ແລ້ວເຂົ້າໄປເຝົ້າພຣະຜູ້ມີພຣະກາຄ ຖວາຍບັງຄົມ ນັ່ງເຝົ້າຢູ່ ໓ ທີ່ຄວຣສ່ວນຂ້າງນຶ່ງ ແລ້ວໄດ້ຂາບທູລຄຳນີ້ແດ່ພຣະຜູ້ມີພຣະກາຄວ່າ ຂ້ານ້ອຍ ໂຣຊະມັລລກັບັຕຣິຍ໌ຜູ້ນີ້ ເປັນຄົນມີຊື່ສຽງ ມີຄົນຮູ້ຈັກມາກ ແລະຄວາມເລື່ອມໃສໃນພຣະສັມມ໌ວິນັຍນີ້ ຂອງຄົນທີ່ມີຜູ້ຮູ້ຈັກມາກເຊັ່ນນີ້ ມີອິທຣິພົລມາກຫຼາຍ ຂໍປະທານພຣະວໂຣກາສ ຂໍພຣະອົງຄ໌ທຣົງກຣຸຕາໂປຼດບັນດາລໃຫ້ໂຣຊະມັລລກັບັຕຣິຍ໌ເລື່ອມໃສໃນພຣະສັມມ໌ວິນັຍນີ້ດ້ວຍເທີ້ນ ຂ້ານ້ອຍ.

ພຣະຜູ້ມີພຣະກາຄຕຣັສວ່າ ດູຣາອານົນທ໌ ກາຣທີ່ຈະບັນດາລໃຫ້ໂຣຊະມັລລກັບັຕຣິຍ໌ເລື່ອມໃສໃນພຣະສັມມ໌ວິນັຍນີ້ນັ້ນ ຕຖາຄົຕເຮັດໄດ້ບໍ່ຍາກເລີຍ.

ລຳດັບນັ້ນ ພຣະຜູ້ມີພຣະກາຄທຣົງແຜ່ເມຕຕາຈິຕໄປຍັງໂຣຊະມັລລກັບັຕຣິຍ໌ ແລ້ວທຣົງລຸກຈາກທີ່ປະທັບສເດັຈເຂົ້າພຣະວິຫາຣ ເມື່ອໂຣຊະມັລລກັບັຕຣິຍ໌ ອັນພຣະເມຕຕາຈິຕຂອງພຣະຜູ້ມີພຣະກາຄຖືກຕ້ອງແລ້ວ ໄດ້ທ່ຽວຄົ້ນຫາຕາມວິຫາຣ ຕາມບໍຣິເວຕທົ່ວທຸກແຫ່ງ ເໝືອນງົວແມ່ລູກອ່ອນ ແລ້ວຕຣັສຖາມກິກຂຸທັ້ງຫລາຍວ່າ ທ່ານຂ້ານ້ອຍ ເວລານີ້ ພຣະຜູ້ມີພຣະກາຄອຣຫັນຕສັມມາສັມພຸທສເຈົ້າພຣະອົງຄ໌ນັ້ນ ປະທັບຢູ່ທີ່ໃດ ເພາະຂ້າພເຈົ້າມັກຈະເຝົ້າພຣະອົງຄ໌.

ກິກຂຸທັ້ງຫລາຍຖວາຍພຣະພອຣວ່າ ທ່ານໂຣຊະ ພຣະວິຫາຣທັ່ນເຂົາປິດພຣະທວາຣເສັຽແລ້ວ ຂໍທ່ານໂປຼດສງົບສຽງ ສເດັຈເຂົ້າໄປທາງພຣະວິຫາຣນັ້ນ ຄ່ອຍໆ ຢ່ອງເຂົ້າໄປທີ່ຫນ້າມຸຂ ທຣົງອະແຮມແລ້ວທຣົງເຄາະພຣະທວາຣເທີ້ນ ພຣະຜູ້ມີພຣະກາຄຈະທຣົງເປີດພຣະທວາຣຮັບທ່ານ ຖວາຍພຣະພອຣ.

ໂຣຊະມັລລກັບັຕຣິຍ໌ໄດ້ສັມມ໌ຈັກຂຸ

ຂຓະນັ້ນ ໂຣຊະມັລລກັບັຕຣິຍ໌ທຣົງສງົບສຽງ ສເດັຈເຂົ້າໄປທາງພຣະວິຫາຣຊຶ່ງປິດພຣະທວາຣເສັຽແລ້ວນັ້ນ ຄ່ອຍໆ ຢ່ອງເຂົ້າໄປທີ່ຫນ້າມຸຂ ທຣົງອະແຮມແລ້ວເຄາະບານພຣະທວາຣ ພຣະຜູ້ມີພຣະກາຄທຣົງເປີດພຣະທວາຣຮັບ ຈຶ່ງໂຣຊະມັລລກັບັຕຣິຍ໌ສເດັຈເຂົ້າພຣະວິຫາຣ ຖວາຍບັງຄົມພຣະຜູ້ມີພຣະກາຄແລ້ວປະທັບນັ່ງເຝົ້າຢູ່ ໓ ທີ່ຄວຣສ່ວນຂ້າງນຶ່ງ ພຣະຜູ້ມີພຣະກາຄໄດ້ທຣົງສແດງອນຸປຸພພິກຖາແກ່ໂຣຊະມັລລກັບັຕຣິຍ໌ ຄື ທຣົງປະກາສ ທານກຖາ ສີລກຖາ ສັຄຄກຖາ ໂທບ ຄວາມຕ່ຳຊາມ ຄວາມເສົ້າຫມອງຂອງກາມທັ້ງຫລາຍ ແລະອານິສົງສ໌ໃນຄວາມອອກຈາກກາມ ຂຓະເມື່ອພຣະອົງຄ໌ທຣົງຮູ້ວ່າ ໂຣຊະມັລລກັບັຕຣິຍ໌ມີຈິຕສະດວກ ມີຈິຕອ່ອນ ມີຈິຕປຣາສຈາກນິວຣຓ໌ ມີຈິຕເບີກບານ ມີຈິຕຜ່ອງໃສແລ້ວ ຈຶ່ງທຣົງປະກາສພຣະສັມມເທສນາ ທີ່ພຣະພຸທສເຈົ້າທັ້ງຫລາຍທຣົງຍົກຂຶ້ນສແດງດ້ວຍພຣະອົງຄ໌ເອງ ຄືທຸກຂ໌ ສມຸທັຍ ນິໂຣຣ

ມັຄຄ໌ ດວງຕາເຫັນສັມມ໌ປຣາສຈາກສຸລີ ປຣາສຈາກມົລທິນ ໄດ້ບັງເກີດແກ່ໂຣຊະມັລລກັສັຕຣີຍ໌ ໓ ສຖານທີ່ປະທັບນັ້ນແລວ່າ ສິ່ງໃດສິ່ງນຶ່ງມີຄວາມເກີດຂຶ້ນເປັນສັມມດາ ສິ່ງນັ້ນທັ້ງມວລມີຄວາມດັບເປັນສັມມດາ ເໝືອນຜ້າທີ່ສະອາດປຣາສຈາກມົລທິນຄວຣຮັບນ້ຳຍ້ອມດ້ວຍດີ ຈັ່ງຊັ້ນ ໂຣຊະມັລລກັສັຕຣີຍ໌ໄດ້ທຣົງເຫັນສັມມ໌ແລ້ວໄດ້ທຣົງບັຣລຸສັມມ໌ແລ້ວ ໄດ້ຮູ້ສັມມ໌ແຈ່ມແຈ້ງ ໄດ້ຫຍັ່ງລົງສູ່ສັມມ໌ແລ້ວ ຂ້າມຄວາມສົງສັຍໄດ້ແລ້ວ ປຣາສຈາກຖ້ອຍຄຳສແດງຄວາມສົງສັຍ ເຖິງຄວາມເປັນຜູ້ອົງອາຈບໍ່ຕ້ອງເຊື່ອຜູ້ອື່ນໃນຄຳສອນຂອງພຣະສາສດາ ໄດ້ຂາບທູລຄຳນີ້ແດ່ພຣະຜູ້ມີພຣະກາຄວ່າ ຂໍປະທານພຣະວໂຣກາສ ຂໍພຣະຄຸຓເຈົ້າທັ້ງຫລາຍໂປຼດຮັບຈີວຣ ບິຓທບາຕ ເສນາສນະ ແລະຄິລານປັຈຈັຍເກສັຊບໍຣິຂາຣ ຂອງຂ້າພຣະພຸທສເຈົ້າຜູ້ດຽວ ຢ່າຮັບຂອງຄົນອື່ນ.

ພຣະຜູ້ມີພຣະກາຄຕຣັສວ່າ ດູຣາໂຣຊະ ແມ້ອຣິຍບຸຄຄົລຜູ້ໄດ້ເຫັນສັມມ໌ແລ້ວດ້ວຍຌາຓຂອງພຣະເສຂະ ດ້ວຍທັສສນະຂອງພຣະເສຂະເຫມືອນຢ່າງທ່ານ ກໍຄົງມີຄວາມປຣາຣົກຢ່າງນີ້ວ່າ ໂອ ພຣະຄຸຓເຈົ້າທັ້ງຫລາຍຄົງກຣຸຓາຮັບຈີວຣ ບິຓທບາຕ ເສນາສນະຄິລານປັຈຈັຍເກສັຊບໍຣິຂາຣຂອງພວກເຮົາເທົ່ານັ້ນ ຄົງບໍ່ຮັບຂອງຜູ້ອື່ນເປັນແນ່ ເພາະຈັ່ງຊັ້ນແລ ກິກຂຸທັ້ງຫລາຍຈະຮັບປັຈຈັຍຂອງທ່ານດ້ວຍ ຂອງຄົນອື່ນດ້ວຍ.

ກໍໂດຍສມັຍນັ້ນແລ ປະຊາຊົນທັ້ງຫລາຍໄດ້ຈັດຕັ້ງລຳດັບກັຕຕາຫາຣອັນປະຓີຕໄວ້ທີ່ນຄຣກຸສິນາຣາ ເມື່ອໂຣຊະມັລລກັສັຕຣີຍ໌ບໍ່ໄດ້ລຳດັບທີ່ຈະຖວາຍກັຕຕາຫາຣຈຶ່ງໄດ້ທຣົງດຳຣິວ່າ ແນວໃດນໍ ເຮົາຄວຣກວດເບິ່ງໂຣງອາຫາຣ ສິ່ງໃດບໍ່ມີໃນໂຣງອາຫາຣ ເຮົາຄວຣຕົກແຕ່ງສິ່ງນັ້ນຖວາຍ ເມື່ອແລ້ວທຣົງກວດເບິ່ງໃນໂຣງອາຫາຣບໍ່ທອດພຣະເນຕຣ໌ເຫັນຂອງ ໒ ຢ່າງ ຄືຜັກສົດ ໑ ຂອງຂົບຈົບທີ່ເຮັດດ້ວຍແປ້ງ ໑ ຈຶ່ງສເດັຈເຂົ້າໄປຫາທ່ານພຣະອານົນທ໌ ເມື່ອແລ້ວໄດ້ທູລຫາຣືວ່າ ທ່ານພຣະອານົນທ໌ຂ້ານ້ອຍ ເມື່ອຂ້າພເຈົ້າບໍ່ໄດ້ລຳດັບທີ່ຈະຖວາຍກັຕຕາຫາຣ ໓ ສຖານທີ່ແຫ່ງນີ້ ໄດ້ມີຄວາມດຳຣິວ່າ ແນວໃດນໍ ເຮົາຄວຣກວດເບິ່ງໂຣງອາຫາຣ ສິ່ງໃດບໍ່ມີໃນໂຣງອາຫາຣ ເຮົາຄວຣຕົກແຕ່ງສິ່ງນັ້ນຖວາຍ ທ່ານພຣະອານົນທ໌ຂ້ານ້ອຍ ຂ້າພເຈົ້ານັ້ນເມື່ອກວດເບິ່ງໂຣງອາຫາຣ ບໍ່ໄດ້ເຫັນຂອງ ໒ ຢ່າງ ຄືຜັກສົດ ໑ ຂອງຂົບຈົບທີ່ເຮັດດ້ວຍແປ້ງ ໑ ຫາກຂ້າພເຈົ້າຄວຣຕົກແຕ່ງຜັກສົດແລະຂອງຂົບຈົບທີ່ເຮັດດ້ວຍແປ້ງຖວາຍ ພຣະຜູ້ມີພຣະກາຄຈະຄວຣທຣົງຮັບຂອງຂ້າພເຈົ້າຫຼືບໍ່ ຂ້ານ້ອຍ?

ທ່ານພຣະອານົນທ໌ຖວາຍພຣະພອຣວ່າ ທ່ານໂຣຊະ ຖ້າຈັ່ງຊັ້ນອາຕມາຈະທູລຖາມພຣະຜູ້ມີພຣະກາຄເບິ່ງແລ້ວໄດ້ຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ.

ພຣະຜູ້ມີພຣະກາຄຕຣັສວ່າ ອານິນທ໌ ຖ້າເຊັ່ນນັ້ນຈົງໃຫ້ເຂົາຕົກແຕ່ງເທີ້ນ.

ທ່ານພຣະອານິນທ໌ຖວາຍພຣະພອຣວ່າ ທ່ານໂຣຊະ ຖ້າຈັ່ງຊັ້ນ ທ່ານຈົງຕົກແຕ່ງຖວາຍ.

ໂຣຊະມັລລກັບັຕຣິຍ໌ ຈຶ່ງສັ່ງໃຫ້ຕົກແຕ່ງຜັກສົດ ແລະຂອງຂົບຍ້ຳທີ່ເຮັດດ້ວຍແປ້ງເປັນຈຳນວນຫຼາຍ ໂດຍຜ່ານຣາຕຣີນັ້ນແລ້ວ ນ້ອມຖວາຍແດ່ພຣະຜູ້ມີພຣະກາຄພ້ອມຂາບທູລວ່າ ຂໍພຣະຜູ້ມີພຣະກາຄຈົງໂປຼດ ຮັບຜັກສົດ ແລະຂອງຂົບລັ້ນທີ່ເຮັດດ້ວຍແປ້ງ ຂອງຂ້າພຣະພຸທສເຈົ້າເທີ້ນ ຂ້ານ້ອຍ.

ພຣະຜູ້ມີພຣະກາຄຕຣັສວ່າ ດູຣາໂຣຊະ ຖ້າເຊັ່ນນັ້ນ ຈົງຖວາຍກິກຂຸທັ້ງຫລາຍ ກິກຂຸທັ້ງຫລາຍ ບໍ່ພໍໃຈ ບໍ່ຮັບປະເຄນ ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກິກຂຸທັ້ງຫລາຍ ພວກທ່ານຈົງຮັບປະເຄນລັ້ນເທີ້ນ. ຂຶນະນັ້ນ ໂຣຊະມັລລກັບັຕຣິຍ໌ ທຣົງອັງຄາສກິກຂຸສົງຄ໌ມີພຣະພຸທສເຈົ້າເປັນປະມຸຂດ້ວຍຜັກສົດ ແລະຂອງ ຂົບລັ້ນທີ່ເຮັດດ້ວຍແປ້ງຫຼວງຫຼາຍ ດ້ວຍພຣະຫັຕຖ໌ຂອງພຣະອົງຄ໌ ຈົນຍັງພຣະຜູ້ມີພຣະກາຄຜູ້ລ້າງພຣະຫັຕຖ໌ແລ້ວ ທຣົງນຳພຣະຫັຕຖ໌ຈາກບາຕຣ໌ ໃຫ້ຫ້າມກັຕແລ້ວ ໄດ້ປະທັບເຝົ້າຢູ່ ຓ ທີ່ຄວຣສ່ວນຂ້າງນຶ່ງ ພຣະຜູ້ມີພຣະກາຄ ທຣົງຊີ້ແຈງໃຫ້ໂຣຊະມັລລກັບັຕຣິຍ໌ຜູ້ນັ່ງ ຓ ທີ່ຄວຣສ່ວນຂ້າງນຶ່ງ ທຣົງເຫັນແຈ້ງ ສມາທານ ອາຈຫານ ຣ່າເຣີງ ດ້ວຍສັມມີກຖາແລ້ວ ທຣົງລຸກຈາກທີ່ປະທັບສເດັຈກັບ.

ພຣະພຸທສານຸຌາຕຜັກແລະແປ້ງ

ກາຍຫລັງພຣະຜູ້ມີພຣະກາຄທຣົງເຮັດສັມມີກຖາແລ້ວ ໃນເພາະເຫຕຸເປັນເຄົ້າມູລນັ້ນ ໃນເພາະ ເຫຕຸແຣກເກີດນັ້ນ ແລ້ວຕຣັສອນຸຌາຕແກ່ກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ເຣົາອນຸຌາຕຜັກສົດທຸກຊນິດ ແລະຂອງຂົບລັ້ນທີ່ເຮັດດ້ວຍແປ້ງທຸກຊນິດ.

ເຣື່ອງວຸທຒບັຣພຊິຕ

[໗ຓ] ຄັ້ງນັ້ນ ພຣະຜູ້ມີພຣະກາຄ ປະທັບຢູ່ໃນພຣະນຄຣກຸສິນາຣາຕາມພຣະພຸທສາກິຣົມຍ໌ ແລ້ວສເດັຈພຣະພຸທສດຳເນີນທາງອາຕຸມານຄຣພ້ອມດ້ວຍກິກຂຸສົງຄ໌ຫມູ່ໃຫລ່ປະມາຓ ໑,໒໕໐ ອົງຄ໌ ສມັຍນັ້ນ ມີກິກຂຸບວຊກາຍແກ່ອົງຄ໌ນຶ່ງ ເຄີຍເປັນຊ່າງກັລບົກ ອາສັຍຢູ່ໃນອາຕຸມານຄຣ ທ່ານມີບຸຕຣ໌ຊາຍສອງຄົນ ເປັນເດັກເວົ້າຈາອ່ອນຫວານ ມີໄຫວພິບດີ ຂຍັນແຂ້ງແຮງ ມີສີມືຍອດຢ້ຽມໃນກາຣຊ່າງກັລບົກຂອງຕົນ ດີເທົ່າອາຈາຣຍ໌ ທ່ານໄດ້ຮູ້ຂ່າວວ່າ ພຣະຜູ້ມີພຣະກາຄກຳລັງສເດັຈມາສູ່ອາຕຸມານຄຣ ພ້ອມດ້ວຍກິກຂຸສົງຄ໌ ຫມູ່ໃຫລ່ປະມາຓ ໑,໒໕໐ ອົງຄ໌ ເມື່ອແລ້ວໄດ້ແຈ້ງຄວາມປະສົງຄ໌ອັນນັ້ນແກ່ບຸຕຣ໌ທັ້ງສອງນັ້ນວ່າ ພໍ່ ທັ້ງຫລາຍຂ່າວວ່າ ພຣະຜູ້ມີພຣະກາຄກຳລັງສເດັຈສູ່ອາຕຸມານຄຣ ພ້ອມດ້ວຍກິກຂຸສົງຄ໌ຫມູ່ໃຫລ່ປະມາຓ

໑,໔໕໐ ໄປເທີ້ນ ພໍ່ທັ້ງສອງ ຈົ່ງຖືເຄື່ອງມືຕັດຜົມ ແລະໂກນຜົມ ກັບທະນານແລະຖົງ ທ່ຽວໄປຕັດ ແລະໂກນຜົມ ຕາມບ້ານເຮືອນທຸກແຫ່ງ ແລກເກືອແດ່ ນ້ຳມັນແດ່ ເຂົ້າສາຣແດ່ ຂອງຂົບຈັບແດ່ ພໍ່ຈະທຳຢາຄູທີ່ດື່ມໄດ້ຖວາຍພຣະຜູ້ມີພຣະກາຄຜູ້ສເດັຈມາເຖິງແລ້ວ.

ບຸຕຮ໌ຊາຍທັ້ງສອງຮັບຄຳສັ່ງຂອງຫລວງພໍ່ວ່າ ຈະປຕິບັຕິເຊັ່ນນັ້ນ ແລ້ວຖືເຄື່ອງມືຕັດຜົມ ໂກນຜົມກັບທະນານແລະຖົງ ທ່ຽວໄປຕັດແລະໂກນຜົມຕາມບ້ານເຮືອນທຸກແຫ່ງ ແລກເກືອແດ່ ນ້ຳມັນແດ່ ເຂົ້າສາຣແດ່ ຂອງຂົບຈັບແດ່ ຊາວບ້ານເຫັນເດັກນ້ອຍສອງຄົນນັ້ນເວົ້າຈາອ່ອນຫວານ ມີໄຫວພິບດີ ແມ້ຜູ້ທີ່ ບໍ່ປະສົງຄ໌ຈະໃຫ້ຕັດແລະໂກນຜົມ ກໍໃຫ້ຕັດໃຫ້ໂກນຜົມ ເຖິງໃຫ້ຕັດໃຫ້ໂກນຜົມແລ້ວ ກໍໃຫ້ຄ່າແຮງມາກ ເປັນອັນວ່າເດັກທັ້ງສອງຄົນນັ້ນເກັບຮວບຮວມເກືອແດ່ ນ້ຳມັນແດ່ ເຂົ້າສາຣແດ່ ຂອງຂົບຈັບແດ່ ໄດ້ເປັນຈຳນວນຫຼາຍ.

ເມື່ອພຣະຜູ້ມີພຣະກາຄສເດັຈຈາຣິກໂດຍລຳດັບ ສເດັຈເຖິງອາຕຸມານຄຣແລ້ວ ຮູ້ວ່າພຣະອົງຄ໌ ປະທັບຢູ່ທີ່ກູສາຄາຣເຂຕອາຕຸມານຄຣນັ້ນ ພຣະຂຣັວຕາຈຶ່ງ ສັ່ງໃຫ້ຄົນຕົກແຕ່ງເຂົ້າຢາຄູເປັນຈຳນວນຫຼາຍ ໂດຍຜ່ານຣາຕຣີນັ້ນແລ້ວ ນ້ອມຖວາຍພຣະຜູ້ມີພຣະກາຄຂາບທູລວ່າ ຂ້ານ້ອຍ ຂໍພຣະຜູ້ມີພຣະກາຄ ຈົ່ງໂປຼດຮັບເຂົ້າຢາຄູຂອງຂ້າພຣະພຸທສເຈົ້າ.

ພຸທສປະເພຕີ

ພຣະຕຖາຄົຕທັ້ງຫລາຍທຣົງຮູ້ຢູ່ ຍ່ອມຕຣັສຖາມກໍມີ ທຣົງຮູ້ຢູ່ ຍ່ອມບໍ່ຕຣັສຖາມກໍມີ ທຣົງຮູ້ກາລແລ້ວຕຣັສຖາມ ທຣົງຮູ້ກາລແລ້ວບໍ່ຕຣັສຖາມ ພຣະຕຖາຄົຕທັ້ງຫລາຍ ຍ່ອມຕຣັສຖາມ ສິ່ງທີ່ປະກອບດ້ວຍປະໂຍຊນ໌ ບໍ່ຕຣັສຖາມສິ່ງທີ່ບໍ່ປະກອບດ້ວຍປະໂຍຊນ໌ ສິ່ງທີ່ບໍ່ປະກອບດ້ວຍ ປະໂຍຊນ໌ ພຣະອົງຄ໌ທຣົງກຳຈັດດ້ວຍຂໍ້ປຕິບັຕິ ພຣະຜູ້ມີພຣະກາຄພຸທສເຈົ້າທັ້ງຫລາຍ ທຣົງສອບຖາມ ກິກຂຸທັ້ງຫລາຍດ້ວຍອາການ ໒ ຢ່າງ ຄື ຈະທຣົງສແດງທັມມ໌ຢ່າງ ໑ ຈະທຣົງບັญญັຕິສິກຂາບົທ ແກ່ພຣະສາວົກທັ້ງຫລາຍຢ່າງ ໑.

ຄັ້ງນັ້ນ ພຣະຜູ້ມີພຣະກາຄໄດ້ຕຣັສຖາມພຣະຂຣັວຕານັ້ນວ່າ ດູຣາກິກຂຸ ເຂົ້າຢາຄູນີ້ທ່ານໄດ້ມາ ຈາກໃສ ພຣະຂຣັວຕາຈຶ່ງຂາບທູລເຣື່ອງນັ້ນໃຫ້ທຣົງຮູ້ທຸກປະການ.

ຫ້າມກິກຂຸຜູ້ເຄີຍເປັນຊ່າງກັລບົກເກັບຮັກສາມີດໂກນ

ພຣະຜູ້ມີພຣະກາຄທຣົງຕິຕຽນວ່າ ດູຣາໂມຄບຸຣຸຊ ການກະທຳຂອງທ່ານນັ້ນບໍ່ເຫມາະ ບໍ່ສົມ ບໍ່ຄວຣ ບໍ່ແມ່ນກິຈຂອງສມຕະ ໃຊ້ບໍ່ໄດ້ ບໍ່ຄວຣເຮັດ ເປັນຫຍັງທ່ານບວຊແລ້ວຈຶ່ງໄດ້ຊັກຈູງທາຍົກໃນສິ່ງອັນ ບໍ່ຄວຣລະ ການກະທຳຂອງທ່ານນັ້ນ ບໍ່ເປັນໄປເພື່ອຄວາມເລື່ອມໃສຂອງຊຸມຊົນທີ່ຍັງບໍ່ເລື່ອມໃສ ....

ເມື່ອແລ້ວທຣົງເຮັດສັມມີກະຖາຮັບສັ່ງກະພິກຂຸທັ້ງຫລາຍວ່າ ດູຣາພິກຂຸທັ້ງຫລາຍ ບັຣພຊິຕບໍ່ຄວຣຊັກຈູງຫາຍົກ ໃນສິ່ງອັນບໍ່ຄວຣ ອົງຄ໌ໃດຊັກຈູງ ຕ້ອງອາບັຕິທຸກກົຜ.

ດູຣາພິກຂຸທັ້ງຫລາຍ ປະການນຶ່ງ ພິກຂຸຜູ້ເຄີຍເປັນຊ່າງກັລບົກ ບໍ່ຄວຣເກັບຮັກສາເຄື່ອງຕັດໂກນຜົມ ໄວ້ສຳຫຼັບຕົວ ອົງຄ໌ໃດເກັບຮັກສາໄວ້ ຕ້ອງອາບັຕິທຸກກົຜ.

ພຣະພຸທສານຸຍາຕຜົລໄມ້

[໗໐] ເມື່ອພຣະຜູ້ມີພຣະກາຄປະທັບຢູ່ ຓ ອາຕຸມານຄຣຕາມພຣະພຸທສາພິຣົມຍ໌ ແລ້ວສເດັຈ ພຸທສດຳເນີນໄປທາງພຣະນຄຣສາວັຕຖີ ສເດັຈຈາຣິກໂດຍລຳດັບ ເຖິງພຣະນຄຣສາວັຕຖີແລ້ວ ຮູ້ວ່າພຣະອົງຄ໌ ປະທັບຢູ່ທີ່ພຣະເຊຕວັນ ອາຮາມຂອງອນາຖບິຕຫິກຄຫບໍດີ ເຂຕພຣະນຄຣສາວັຕຖີນັ້ນ ເວລານັ້ນ ຂອງຂົບຈັນຄືຜົລໄມ້ໃນນຄຣສາວັຕຖີມີດາດດື່ນຫຼາຍ ຈຶ່ງພິກຂຸທັ້ງຫລາຍໄດ້ມີຄວາມສົງສັຍວ່າ ຂອງຂົບຈັນຄື ຜົລໄມ້ ພຣະຜູ້ມີພຣະກາຄທຣົງອນຸຍາຕໄວ້ແລ້ວບໍ່ບໍ່ໄດ້ທຣົງອນຸຍາຕ ແລ້ວໄດ້ຂາບທູລເຣື່ອງນັ້ນແດ່ ພຣະຜູ້ມີພຣະກາຄ.

ພຣະຜູ້ມີພຣະກາຄຕຣັສວ່າ ດູຣາພິກຂຸທັ້ງຫລາຍ ເຮົາອນຸຍາຕຜົລໄມ້ທຸກຊນິດ.

ພືຊຂອງສົງຆ໌ແລະຂອງບຸຄຄົລ

[໗໑] ກໍໂດຍສມັຍນັ້ນແລ ພືຊຂອງສົງຆ໌ເຂົາເພາະປູກໃນທີ່ຂອງບຸຄຄົລ ພືຊຂອງບຸຄຄົລ ເຂົາເພາະປູກໃນທີ່ຂອງສົງຆ໌ ພິກຂຸທັ້ງຫລາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ.

ພຣະຜູ້ມີພຣະກາຄຕຣັສກະພິກຂຸທັ້ງຫລາຍວ່າ ດູຣາພິກຂຸທັ້ງຫລາຍ ພືຊຂອງສົງຆ໌ທີ່ເພາະປູກໃນທີ່ ຂອງບຸຄຄົລ ຄວຣໃຫ້ສ່ວນແບ່ງ ແລ້ວບໍຣິໂພຄ ພືຊຂອງບຸຄຄົລທີ່ເພາະປູກໃນທີ່ຂອງສົງຆ໌ ຄວຣໃຫ້ສ່ວນແບ່ງ ແລ້ວບໍຣິໂພຄ.

ພຣະພຸທສານຸຍາຕມຫາປະເທສ ໔

[໗໔] ກໍໂດຍສມັຍນັ້ນແລ ພິກຂຸທັ້ງຫລາຍເກີດຄວາມບໍ່ພໍໃຈໃນພຣະບັນຍັຕິບາງສິ່ງບາງຢ່າງວ່າ ສິ່ງໃດນໍ ພຣະຜູ້ມີພຣະກາຄທຣົງອນຸຍາຕໄວ້ ສິ່ງໃດບໍ່ໄດ້ທຣົງອນຸຍາຕ ຈຶ່ງຂາບທູລເຣື່ອງນັ້ນແດ່ ພຣະຜູ້ມີພຣະກາຄ.

ວັຕຖຸເປັນກັປປິຍະແລະອກັປປິຍະ

ພຣະຜູ້ມີພຣະກາຄໄດ້ຕຣັສປະທານສຳຫຼັບອ້າງ ໔ ຂໍ້ ດັ່ງຕໍ່ໄປນີ້:-

໑. ດູຣາພິກຂຸທັ້ງຫລາຍ ສິ່ງໃດທີ່ເຮົາບໍ່ໄດ້ຫ້າມໄວ້ວ່າ ສິ່ງນີ້ບໍ່ຄວຣ ຫາກສິ່ງນັ້ນເຂົ້າກັບສິ່ງທີ່ ບໍ່ຄວຣ ຂັດກັບສິ່ງທີ່ຄວຣ ສິ່ງນັ້ນບໍ່ຄວຣແກ່ທ່ານທັ້ງຫລາຍ

໔. ດູຣາພິກຂຸທັ້ງຫລາຍ ສິ່ງທີ່ເຮົາບໍ່ໄດ້ຫ້າມໄວ້ວ່າ ສິ່ງນີ້ບໍ່ຄວຣ ຫາກສິ່ງນັ້ນເຂົ້າກັບສິ່ງທີ່ຄວຣ ຂັດກັບສິ່ງທີ່ບໍ່ຄວຣ ສິ່ງນັ້ນຄວຣແກ່ທ່ານທັ້ງຫລາຍ

໓. ດູຣາພິກຂຸທັ້ງຫລາຍ ສິ່ງໃດທີ່ເຮົາບໍ່ໄດ້ອນຸຍາຕໄວ້ວ່າ ສິ່ງນີ້ຄວຣ ຫາກສິ່ງນັ້ນເຂົ້າກັບສິ່ງທີ່ບໍ່ຄວຣ ຂັດກັບສິ່ງທີ່ຄວຣ ສິ່ງນັ້ນບໍ່ຄວຣແກ່ທ່ານທັ້ງຫລາຍ

໔. ດູຣາພິກຂຸທັ້ງຫລາຍ ສິ່ງໃດທີ່ເຮົາບໍ່ໄດ້ອນຸຍາຕໄວ້ວ່າ ສິ່ງນີ້ຄວຣ ຫາກສິ່ງນັ້ນເຂົ້າກັບສິ່ງທີ່ຄວຣ ຂັດກັບສິ່ງທີ່ບໍ່ຄວຣ ສິ່ງນັ້ນຄວຣແກ່ທ່ານທັ້ງຫລາຍ.

ພຣະພຸທສານຸຍາຕກາລິກຣະຄົນ

[໑໓] ຄັ້ງນັ້ນ ພິກຂຸທັ້ງຫລາຍໄດ້ມີຄວາມປຣິວິຕົກວ່າ ຍາມ**ກາລິກ**[8]ຣະຄົນກັບຍາວກາລິກ ຄວຣຫຼືບໍ່ຄວຣນໍ ສັຕຕາຫກາລິກຣະຄົນກັບຍາວກາລິກ ຄວຣຫຼືບໍ່ຄວຣນໍ ຍາວຊີວິກຣະຄົນກັບຍາວ-ກາລິກຄວຣຫຼືບໍ່ຄວຣນໍ ສັຕຕາຫກາລິກຣະຄົນກັບຍາມກາລິກ ຄວຣຫຼືບໍ່ຄວຣນໍ ຍາວຊີວິກຣະຄົນກັບຍາມກາລິກ ຄວຣຫຼືບໍ່ຄວຣນໍ ຍາວຊີວິກຣະຄົນກັບສັຕຕາຫກາລິກ ຄວຣຫຼືບໍ່ຄວຣນໍ ແລ້ວຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ.

ພຣະຜູ້ມີພຣະກາຄຕຣັສ ວ່າດັ່ງນີ້:-

໑. ດູຣາພິກຂຸທັ້ງຫລາຍ ຍາມກາລິກຣະຄົນກັບຍາວກາລິກທີ່ຮັບປະເຄນໃນວັນນັ້ນ ຄວຣໃນກາລ ບໍ່ຄວຣໃນວິກາລ

໒. ສັຕຕາຫກາລິກຣະຄົນກັບຍາວກາລິກທີ່ຮັບປະເຄນໃນວັນນັ້ນ ຄວຣໃນກາລ ບໍ່ຄວຣໃນວິກາລ

໓. ຍາວຊີວິກຣະຄົນກັບຍາວກາລິກທີ່ຮັບປະເຄນໃນວັນນັ້ນ ຄວຣໃນກາລ ບໍ່ຄວຣໃນວິກາລ

໔. ສັຕຕາຫກາລິກຣະຄົນກັບຍາມກາລິກທີ່ຮັບປະເຄນໃນວັນນັ້ນ ຄວຣຊົ່ວຍາມ ລ່ວງຍາມແລ້ວບໍ່ຄວຣ.

໕. ຍາວຊີວິກຣະຄົນກັບຍາມກາລິກທີ່ຮັບປະເຄນໃນວັນນັ້ນ ຄວຣຊົ່ວຍາມ ລ່ວງຍາມແລ້ວບໍ່ຄວຣ.

໖. ຍາວຊີວິກຣະຄົນກັບສັຕຕາຫກາລິກທີ່ຮັບປະເຄນໃນວັນນັ້ນ ຄວຣຕລອດ ໗ ວັນ ລ່ວງ ໗ ວັນແລ້ວບໍ່ຄວຣ.

ເພສັຊຊຂັນສກະ ທີ່ ໖ ຈົບ.

ໃນຂັນສກະນີ້ມີ ໑໐໖ ເຣື່ອງ.

---

[8] **ກາລິກ** (ອ່ານວ່າ ກາ-ລິ-ກະ) ເນື່ອງດ້ວຍກາລ, ຂຶ້ນກັບກາລ, ຂອງອັນຈະກືນກິນໃຫ້ລ່ວງລຳຄໍເຂົ້າໄປຊຶ່ງພຣະວິນັຍບັຍລັຕິໃຫ້ພິກຂຸຮັບເກັບໄວ້ແລະຈັນໄດ້ກາຍໃນເວລາທີ່ກຳຫນົດ ຈຳແນກເປັນ ໔ ຢ່າງ ຄື **໑.** ຍາວກາລິກ ຮັບປະເຄນໄວ້ແລະຈັນໄດ້ຊົ່ວເວລາເຊົ້າເຖິງທ່ຽງຂອງວັນນັ້ນ ເຊັ່ນ: ເຂົ້າ ປາ ຊີ້ນ ຜັກ ໝາກໄມ້ ຂນົມຕ່າງ ໆ **໒.** ຍາມກາລິກ ຮັບປະເຄນໄວ້ແລະຈັນໄດ້ຊົ່ວວັນນຶ່ງກັບຄືນນຶ່ງ ຄືກ່ອນອຣຸຕຂອງວັນ ໃຫມ່ ໄດ້ແກ່ ປານະ ຄື ນ້ຳຄັ້ນໝາກໄມ້ທີ່ທຣົງອນຸຍາຕ **໓.** ສັຕຕາຫກາລິກ ຮັບປະເຄນໄວ້ແລະຈັນໄດ້ກາຍໃນເວລາ ໗ ວັນ ໄດ້ແກ່ ເພສັຊທັ້ງຫ້າ **໔.** ຍາວຊີວິກ ຮັບປະເຄນແລ້ວ ຈັນໄດ້ຕລອດໄປບໍ່ຈຳກັດເວລາ ໄດ້ແກ່ຂອງທີ່ໃຊ້ປຸງເປັນຢານອກຈາກກາລິກ ໓ ຂໍ້ຕົ້ນ (ຄວາມຈິງຍາວຊີວິກ ບໍ່ເປັນກາລິກ ແຕ່ນັບເຂົ້າດ້ວຍໂດຍປຣິຍາຍ ເພາະເປັນຂອງກ່ຽວເນື່ອງກັນ)

ຫົວຂໍ້ປະຈຳຂັນສກະ

[໙໒] ໑. ເຣື່ອງອາພາສທີ່ເກີດຊຸມໃນຣະດູສາຣທ໌ ໒. ເຣື່ອງຈັນເອາສັຊນອກກາລ ໓. ເຣື່ອງນ້ຳມັນຕິດໜັງສັຕວ໌ເປັນຢາ ໔. ເຣື່ອງຮາກໄມ້ທີ່ເປັນຕົວຢາ ໕. ເຣື່ອງຮາກໄມ້ທຳຢາຜົງ ໖. ເຣື່ອງນ້ຳຝາດ ໗. ເຣື່ອງໃບໄມ້ ໘. ເຣື່ອງຜົລໄມ້ ໙. ເຣື່ອງຢາງໄມ້ ໑໐. ເຣື່ອງເກືອ ໑໑. ເຣື່ອງມູລງົວ ໑໒. ເຣື່ອງຢາຜົງແລະວັຕຖຸເຄື່ອງຮ່ອນຢາ ໑໓. ເຣື່ອງເນື້ອດິບເລືອດສົດ ໑໔. ເຣື່ອງຢາຕາ ໑໕. ເຣື່ອງເຄື່ອງຢາຜສົມກັບຢາຕາ ໑໖. ເຣື່ອງກ່ອງຕາ ກ່ອງຕາຊນິດຕ່າງໆ ແລະກ່ອງຕາບໍ່ມີຝາປິດ ໑໗. ເຣື່ອງໄມ້ທາຢາຕາ ໑໘. ເຣື່ອງກາຊນະເກັບໄມ້ທາຢາຕາ ຖົງກ່ອງຕາ ແລະເຊືອກຜູກເປັນສາຍສະພາຍ ໑໙. ເຣື່ອງນ້ຳມັນທາມັນທາສີຣษະ ໒໐. ເຣື່ອງການັຕຖ໌ ໒໑. ເຣື່ອງບ້ອງນັຕຖ໌ຢາ ໒໒. ເຣື່ອງສູບຄວັນ ບ້ອງສູບຄວັນ ຝາປິດບ້ອງສູບຄວັນ ໒໓. ເຣື່ອງຖົງເກັບບ້ອງສູບຄວັນ ໒໔. ເຣື່ອງນ້ຳມັນຫຸງ ໒໕. ເຣື່ອງນ້ຳເມົາທີ່ຜສົມໃນນ້ຳມັນທີ່ຫຸງ ໒໖. ເຣື່ອງນ້ຳມັນເຈືອນ້ຳເມົາມາກ ໒໗. ເຣື່ອງນ້ຳມັນເຈືອນ້ຳເມົາມາກໃຊ້ເປັນຢາທາ ໒໘. ເຣື່ອງລັກຈັ່ນ ໒໙. ເຣື່ອງເຂົ້າກະໂຈມ ໓໐. ເຣື່ອງຮົມດ້ວຍໃບໄມ້ຕ່າງໆ ໓໑. ເຣື່ອງການຮົມໃຫຍ່ແລະເອົາໃບໄມ້ມາຕົ້ມຮົມ ໓໒. ເຣື່ອງອ່າງນ້ຳ ໓໓. ເຣື່ອງຣະບາຍເລືອດອອກ ໓໔. ເຣື່ອງກອກໂລຫິຕດ້ວຍເຂົາ ໓໕. ເຣື່ອງຢາທາຕີນ ໓໖. ເຣື່ອງປຸງນ້ຳມັນທາຕີນ ໓໗. ເຣື່ອງຜ່າຝີ ໓໘. ເຣື່ອງຊະແຜລດ້ວຍນ້ຳຝາດ ໓໙. ເຣື່ອງງາທີ່ບົດແລ້ວ ໔໐. ເຣື່ອງຢາພອກແຜລ ໔໑. ເຣື່ອງຜ້າພັນແຜລ ໔໒. ເຣື່ອງຊະແຜລດ້ວຍນ້ຳແປ້ງພັຕຜັກກາດ ໔໓. ເຣື່ອງຮົມແຜລດ້ວຍຄວັນ ໔໔. ເຣື່ອງຕັດເນື້ອງອກດ້ວຍກ້ອນເກືອ ໔໕. ເຣື່ອງນ້ຳມັນທາແຜລ ໔໖. ເຣື່ອງຜ້າປິດກັນນ້ຳມັນເຍີ້ມ ໔໗. ເຣື່ອງຢາມຫາວິກັຕ ໔໘. ເຣື່ອງຮັບປະເຄນ ໔໙. ເຣື່ອງດື່ມນ້ຳເຈືອຄູຖ ແລະຫຍິບຄູຖເມື່ອກຳລັງຖ່າຍ ໕໐. ເຣື່ອງດື່ມນ້ຳທີ່ລະລາຍຈາກດິນຕິດຜາລໄຖ ໕໑. ເຣື່ອງດື່ມນ້ຳດ່າງອາມິສ ໕໒. ເຣື່ອງດື່ມນ້ຳສມໍດອງມູຕຣ໌ ໕໓. ເຣື່ອງທາຂອງຫອມ ໕໔. ເຣື່ອງດື່ມຢາຖ່າຍ ໕໕. ເຣື່ອງນ້ຳເຂົ້າໃສ ໕໖. ເຣື່ອງນ້ຳຖົ່ວຂຽວຕົ້ມທີ່ບໍ່ຂົ້ນ ໕໗. ເຣື່ອງນ້ຳຖົ່ວຂຽວທີ່ຂົ້ນໜ່ອຍດຽວ ໕໘. ເຣື່ອງນ້ຳຕົ້ມຊີ້ນ ໕໙. ເຣື່ອງຊຳຣະເງື້ອມເຂົາ ແລະພຣະຣາຊທານຄົນທຳການວັດ ໖໐. ເຣື່ອງຈັນເອາສັຊທີ່ເກັບໄວ້ ໗ ວັນ ໖໑. ເຣື່ອງນ້ຳອ້ອຍ ໖໒. ເຣື່ອງຖົ່ວຂຽວ ໖໓. ເຣື່ອງຢາດອງໂລຓໂສຈິຣກະ

໖໔. ເຣື່ອງອາມິສທີ່ຫຸງຕົ້ມເອງ ໖໕. ເຣື່ອງກັຕຕາຫານທີ່ຕ້ອງອຸ່ນ ໖໖. ເຣື່ອງໃຫ້ເກັບທີ່ຫຸງຕົ້ມອາມິສ ໃນກາຍໃນແລະຫຸງຕົ້ມເອງ ເມື່ອຄຼາວອັຕຄັຕອາຫານຕໍ່ໄປອີກ ໖໗. ເຣື່ອງຮັບປະເຄນຜົລໄມ້ທີ່ເປັນ ອຸຄຄຫິຕໄດ້ ໖໘. ເຣື່ອງຖວາຍຢາ ໖໙. ເຣື່ອງຂອງຂົບສັນທີ່ຮັບປະເຄນໄວ້ຕອນເຊົ້າ ໗໐. ເຣື່ອງ ເປັນໄຂ້ໂຕຮ້ອນ ໗໑. ເຣື່ອງສັນຜົລໄມ້ທີ່ປອກເມັດອອກ ໗໒. ເຣື່ອງຣິດສີຕາທວາຣ ໗໓. ເຣື່ອງ ສັຕຖກັມມ໌ແລະວັຕຖິກັມມ໌ ໗໔. ເຣື່ອງອຸບາສິກາສຸປປິຍາ ໗໕. ເຣື່ອງທຣົງຫ້າມສັນເນື້ອມນຸຩຍ໌ ໗໖. ເຣື່ອງທຣົງຫ້າມສັນເນື້ອຊ້າງ ໗໗. ເຣື່ອງທຣົງຫ້າມສັນເນື້ອມ້າ ໗໘. ເຣື່ອງທຣົງຫ້າມສັນເນື້ອສຸນັຂ ໗໙. ເຣື່ອງທຣົງຫ້າມສັນເນື້ອງູ ໘໐. ເຣື່ອງທຣົງຫ້າມສັນເນື້ອຣາຊສີຫ໌ ໘໑. ເຣື່ອງທຣົງຫ້າມສັນເນື້ອ ເສືອໂຄ່ງ ໘໒. ເຣື່ອງທຣົງຫ້າມສັນເນື້ອເສືອເຫລືອງ ໘໓. ເຣື່ອງທຣົງຫ້າມສັນເນື້ອຫມີ ໘໔. ເຣື່ອງ ທຣົງຫ້າມສັນເນື້ອເສືອດາວ ໘໕. ເຣື່ອງຄອຍໂອກາສຖວາຍກັຕຣ໌ ແລະເຂົ້າຢາຄູ ໘໖. ເຣື່ອງມຫາອຳມາຕຍ໌ ເຣິ່ມເລື່ອມໃສ ເປັນຕົ້ນເຫຕຸໃຫ້ທຣົງຫ້າມກິກຂຸຮັບນິມົນຕ໌ໄວ້ແຫ່ງນຶ່ງແລ້ວໄປສັນໃນທີ່ອື່ນ ໘໗. ເຣື່ອງ ຖວາຍຢາ ນ້ຳອ້ອຍ ໘໘. ເຣື່ອງທຣົງຮັບອາຄາຣພັກແຮມ ໘໙. ເຣື່ອງມຫາອຳມາຕຍ໌ສຸນິຣະແລະວັສສກາຣະ ໙໐. ເຣື່ອງແມ່ນ້ຳຄົງຄາ ໙໑. ເຣື່ອງສເດັຈຕຳບົລບ້ານໂກຕິ ທຣົງສແດງອຣິຍສັຈຈກຖາ ໙໒. ເຣື່ອງ ນາງອັມພປາລີຄຓິກາ ໙໓. ເຣື່ອງເຈົ້າລິຈຈວີ ໙໔. ເຣື່ອງອຸທິສມັງສະ ໙໕. ເຣື່ອງພຣະນຄຣເວສາລີ ຫາອາຫານໄດ້ງ່າຍ ໙໖. ເຣື່ອງທຣົງຫ້າມອາມິສທີ່ເປັນອັນໂຕວຸຕຖະເປັນຕົ້ນໃຫມ່ ໙໗. ເຣື່ອງຝົນຕັ້ງເຄົ້າ ໙໘. ເຣື່ອງພຣະໂສຊະອາພາສ ໙໙. ເຣື່ອງເມຓຑກະຄຫບໍດີ ຖວາຍປັຎຈໂຄຣົສກັບສບຽງເດີນທາງ ໑໐໐. ເຣື່ອງເກຓິຍຊຏິລຖວາຍນ້ຳອັຕຖບານ ຄື ນ້ຳໝາກມ່ວງ ນ້ຳໝາກຫວ້າ ນ້ຳກ້ວຍມີເມັດ ນ້ຳກ້ວຍ ບໍ່ມີເມັດ ນ້ຳໝາກຊາງ ນ້ຳໝາກຈັນທນ໌ ນ້ຳເຫງົ້າບົວ ນ້ຳໝາກປາງ ໑໐໑. ເຣື່ອງໂຣຊະມັລລກະສັຕຣິຍ໌ຖວາຍ ຜັກສົດແລະຂອງຂົບສັນທີ່ສຳເຣັຈດ້ວຍແປ້ງ ໑໐໒. ເຣື່ອງກິກຂຸຊ່າງກັລບົກໃນເມືອງອາຕຸມາ ໑໐໓. ເຣື່ອງ ຜົລໄມ້ດາດດື່ນໃນພຣະນຄຣສາວັຕຖີ ໑໐໔. ເຣື່ອງພືຊ ໑໐໕. ເຣື່ອງເກີດສົງສັຍໃນພຣະບັຎຎັຕິບາງ ສິ່ງບາງຢ່າງ ໑໐໖. ເຣື່ອງກາລິກຣະຄົນ.

ຫົວຂໍ້ປະຈຳຂັນສກະ ຈົບ.

ກຖິນຂັນສກະ

ພິກຂຸປາໄກຍຣັກເດີນທາງເຂົ້າເຝົ້າ

[໙໕] ສມັຍນັ້ນ ພຣະຜູ້ມີພຣະກາຄພຸທສເຈົ້າປະທັບຢູ່ ຓ ພຣະເຊຕວັນ ອາຣາມຂອງອນາຖບິຕ-ຫິກຄຫບໍດີ ເຂຕພຣະນຄຣສາວັຕຖີ. ຄັ້ງນັ້ນ ພິກຂຸປາໄກຍຣັກຈຳນວນ ໓໐ ອົງຄ໌ ລ້ວນຖືອາຣັນຍິກສຸດົງຄ໌ ບິຕຫປາຕິກສຸດົງຄ໌ ແລະເຕຈີວຣິກສຸດົງຄ໌ເດີນທາງໄປພຣະນຄຣສາວັຕຖີເພື່ອເຝົ້າພຣະຜູ້ມີພຣະກາຄ ເມື່ອຈວນເຖິງວັນເຂົ້າພັຣຊາ ບໍ່ສາມາຖຈະເດີນທາງໃຫ້ທັນວັນເຂົ້າພັຣຊາໃນພຣະນຄຣສາວັຕຖີ ຈຶ່ງຈຳພັຣຊາ ຓ ເມືອງສາເກຕ ໃນຣະຫວ່າງທາງ ພິກຂຸເຫລົ່ານັ້ນຈຳພັຣຊາມີໃຈປັ່ນປ່ວນວ່າ ພຣະຜູ້ມີພຣະກາຄປະທັບຢູ່ໃກ້ໆ ເຮົາ ຣະຍະທາງຫ່າງພຽງ ໖ ໂຍຊນ໌ ແຕ່ພວກເຮົາກໍບໍ່ໄດ້ເຝົ້າພຣະອົງຄ໌ ເມື່ອລ່ວງໄຕຣມາສ ພິກຂຸເຫລົ່ານັ້ນອອກພັຣຊາທຳປວາຣຕາແລ້ວແລ້ວ ເມື່ອຝົນຍັງຕົກແຮງ ພື້ນກູມີກາຄເຕັມໄປດ້ວຍນ້ຳ ເປັນຫລົ່ມຕົມ ມີຈີວຣຊຸ່ມຊື້ນດ້ວຍນ້ຳ ລຳບາກກາຍ ຍ່າງທາງໄປເຖິງພຣະນຄຣສາວັຕຖີ ພຣະເຊຕວັນ ອາຣາມຂອງອນາຖບິຕ-ຫິກຄຫບໍດີ ເຂົ້າເຝົ້າພຣະຜູ້ມີພຣະກາຄ ຖວາຍບັງຄົມແລ້ວນັ່ງ ຓ ທີ່ຄວຣສ່ວນຂ້າງນຶ່ງ.

ກາຣທີ່ພຣະຜູ້ມີພຣະກາຄພຸທສເຈົ້າທັ້ງຫລາຍ ທຣົງປຣາສຣັຍກັບພຣະອາຄັນຕຸກະທັ້ງຫລາຍຫັ່ນເປັນພຸທສປະເພຕີ.

ພຸທສປະເພຕີ

ຄັ້ງນັ້ນ ພຣະຜູ້ມີພຣະກາຄຕຣັສຖາມກິກຂຸເຫລົ່ານັ້ນວ່າ ດູຣາກິກຂຸທັ້ງຫລາຍ ພວກທ່ານຍັງພໍທົນໄດ້ບໍ່ ພໍຍັງອັຕກາພໃຫ້ເປັນໄປໄດ້ບໍ່ ພວກທ່ານເປັນຜູ້ພ້ອມພຽງກັນ ຮ່ວມໃຈກັນ ບໍ່ວິວາທກັນ ຈຳພັຣຊາເປັນຜາສຸກ ແລະບໍ່ລຳບາກດ້ວຍບິຕຫບາຕບໍ່?

ກິກຂຸເຫລົ່ານັ້ນຂາບທູລວ່າ ພວກຂ້າພຣະພຸທສເຈົ້າຍັງພໍທົນໄດ້ ພໍຍັງອັຕກາພໃຫ້ເປັນໄປໄດ້ ຂ້ານ້ອຍ ປະກາຣນຶ່ງ ຂ້າພຣະພຸທສເຈົ້າທັ້ງຫລາຍເປັນຜູ້ພ້ອມພຽງກັນ ຮ່ວມໃຈກັນ ບໍ່ວິວາທກັນ ຈຳພັຣຊາເປັນຜາສຸກ ແລະບໍ່ລຳບາກດ້ວຍບິຕຫບາຕ ຂ້ານ້ອຍ ພວກຂ້າພຣະພຸທສເຈົ້າໃນຊຸມນຸມນີ້ເປັນກິກຂຸປາໄກຍຣັກຈຳນວນ ໓໐ ອົງຄ໌ ຍ່າງທາງມາພຣະນຄຣສາວັຕຖີ ເພື່ອເຝົ້າພຣະຜູ້ມີພຣະກາຄ ເມື່ອຈວນເຖິງວັນເຂົ້າພັຣຊາ ບໍ່ສາມາຖຈະເດີນທາງໃຫ້ທັນວັນເຂົ້າພັຣຊາໃນພຣະນຄຣສາວັຕຖີ ຈຶ່ງຈຳພັຣຊາ ຓ ເມືອງສາເກຕ ໃນຣະຫວ່າງທາງ ພວກຂ້າພຣະພຸທສເຈົ້ານັ້ນຈຳພັຣຊາມີໃຈປັ່ນປ່ວນວ່າ ພຣະຜູ້ມີພຣະກາຄປະທັບຢູ່ໃກ້ໆ ເຮົາ ຣະຍະທາງຫ່າງພຽງ ໖ ໂຍຊນ໌ ແຕ່ພວກເຮົາກໍບໍ່ໄດ້ເຝົ້າພຣະຜູ້ມີພຣະກາຄ ເມື່ອລ່ວງໄຕຣມາສ ພວກຂ້າພຣະພຸທສເຈົ້າອອກພັຣຊາທຳປວາຣຕາແລ້ວແລ້ວ ເມື່ອຝົນຍັງຕົກແຮງ ພື້ນກູມີກາຄເຕັມໄປດ້ວຍນ້ຳ ເປັນຫລົ່ມຕົມ ມີຈີວຣຊຸ່ມຊື້ນດ້ວຍນ້ຳ ລຳບາກກາຍ ຍ່າງທາງມາ ຂ້ານ້ອຍ.

พระพุทธานุญาตให้ກຼານກຖິນ

[໑໖] ลำดับนั้นพระผู้มีพระภาค ทรงเຮັດสัมมิกถา ในเพาะເຫตุเป็นເຄົ້າມູລนั้น ในเพาะเหตุแรกเกิดนั้น แล้วรับสั่งภะภิกขุทั้งหลายว่า ดูรາภิกขุทั้งหลาย เรีอนุญาตให้ภิกขุทั้งหลายผู้จำพัรษาแล้วได้ກຼານກຖິນ พວກท่านผู้ได้ກຼານກຖິນແລ້ວ จะได้อานิสົງส์ ๕ ประการ คือ

๑. ທ່ຽວໄປໃສບໍ່ຕ້ອງບອກລາ

๒. ບໍ່ຕ້ອງຖືໄຕຣຈີວຣໄປຄົບຊຸດ

๓. ฉันຄຸນະໂພຊນ໌ໄດ້

๔. ທຣົງອະຕິເຣກຈີວຣໄວ້ໄດ້ຕາມປັຕຖນາ

๕. ຈີວຣອັນເກີດຂຶ້ນ ໃນ ທີ່ນັ້ນຈະໄດ້ແກ່ພວກທ່ານ

ດູຣາພິກຂຸທັ້ງຫລາຍ ອານິສົງສ໌ ๕ ປະການນີ້ ຈະໄດ້ແກ່ທ່ານທັ້ງຫລາຍຜູ້ໄດ້ກຼານກຖິນແລ້ວ.

ວິທີກຼານກຖິນ

ດູຣາພິກຂຸທັ້ງຫລາຍ ກໍແລ ສົງฆ໌ຄວຣກຼານກຖິນຢ່າງນີ້ ຄືພິກຂຸຜູ້ສລາດ ຜູ້ສາມາຖ ຄວຣປະກາສໃຫ້ສົງฆ໌ຮູ້ດ້ວຍຍັຕຕິທຸຕິຍກັມມ໌ວາຈາ ວ່າດັ່ງນີ້:-

ກັມມ໌ວາຈາໃຫ້ຜ້າກຖິນ

ທ່ານຂ້ານ້ອຍ ຂໍສົງฆ໌ຈົ່ງຟັງຂ້າພເຈົ້າ ຜ້າກຖິນຜືນນີ້ເກີດແລ້ວແກ່ສົງฆ໌ ຖ້າຄວາມພ້ອມພຽງຂອງສົງฆ໌ເຖິງທີ່ແລ້ວ ສົງฆ໌ຄວຣໃຫ້ຜ້າກຖິນຜືນນີ້ແກ່ພິກຂຸມີຊື່ນີ້ ເພື່ອກຼານກຖິນ ນີ້ເປັນຍັຕຕິ

ທ່ານຂ້ານ້ອຍ ຂໍສົງฆ໌ຈົ່ງຟັງຂ້າພເຈົ້າ ຜ້າກຖິນຜືນນີ້ເກີດແລ້ວແກ່ສົງฆ໌ ສົງฆ໌ໃຫ້ຜ້າກຖິນຜືນນີ້ແກ່ພິກຂຸມີຊື່ນີ້ເພື່ອກຼານກຖິນ ການໃຫ້ຜ້າກຖິນຜືນນີ້ແກ່ພິກຂຸຊື່ນີ້ ເພື່ອກຼານກຖິນ ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເປັນຜູ້ນິ່ງ ບໍ່ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເວົ້າ

ຜ້າກຖິນຜືນນີ້ ສົງฆ໌ໃຫ້ແລ້ວແກ່ພິກຂຸມີຊື່ນີ້ ເພື່ອກຼານກຖິນ ຊອບແກ່ສົງฆ໌ ເຫຕຸນັ້ນຈຶ່ງນິ່ງ ຂ້າພເຈົ້າທຣົງຄວາມນີ້ໄວ້ ດ້ວຍຢ່າງນີ້.

ດູຣາພິກຂຸທັ້ງຫລາຍ ຢ່າງນີ້ແລ ກຖິນເປັນອັນກຼານ ຢ່າງນີ້ບໍ່ເປັນອັນກຼານ.

ກຖິນບໍ່ເປັນອັນກຼານ

[໑໗] ດູຣາພິກຂຸທັ້ງຫລາຍ ຢ່າງໃດລະ ກຖິນບໍ່ເປັນອັນກຼານ ຄື:-

໑. ກຖິນບໍ່ເປັນອັນກຼານ ດ້ວຍອາການພຽງຂີດຮອຍ

໔. ກຖິນບໍ່ເປັນອັນກຼານ ດ້ວຍອາກາຣພຽງຊັກຜ້າ
໓. ກຖິນບໍ່ເປັນອັນກຼານ ດ້ວຍອາກາຣພຽງກະຜ້າ
໔. ກຖິນບໍ່ເປັນອັນກຼານ ດ້ວຍອາກາຣພຽງຕັດຜ້າ
໕. ກຖິນບໍ່ເປັນອັນກຼານ ດ້ວຍອາກາຣພຽງເນົາຜ້າ
໖. ກຖິນບໍ່ເປັນອັນກຼານ ດ້ວຍອາກາຣພຽງຍິບດົ້ນ
໗. ກຖິນບໍ່ເປັນອັນກຼານ ດ້ວຍອາກາຣພຽງເຮັດລູກດຸມ
໘. ກຖິນບໍ່ເປັນອັນກຼານ ດ້ວຍອາກາຣພຽງເຮັດຮັງດຸມ
໙. ກຖິນບໍ່ເປັນອັນກຼານ ດ້ວຍອາກາຣພຽງປະກອບຜ້າອນຸວາຕ
໑໐. ກຖິນບໍ່ເປັນອັນກຼານ ດ້ວຍອາກາຣພຽງປະກອບຜ້າອນຸວາຕດ້ານຫນ້າ
໑໑. ກຖິນບໍ່ເປັນອັນກຼານ ດ້ວຍອາກາຣພຽງດາມຜ້າ
໑໔. ກຖິນບໍ່ເປັນອັນກຼານ ດ້ວຍອາກາຣພຽງຍ້ອມເປັນສີຫມົ່ນເທົ່ານັ້ນ
໑໓. ກຖິນບໍ່ເປັນອັນກຼານ ດ້ວຍຜ້າທີ່ເຮັດນິມິຕໄດ້ມາ
໑໔. ກຖິນບໍ່ເປັນອັນກຼານ ດ້ວຍຜ້າທີ່ເວົ້າລຽບຄຽງໄດ້ມາ
໑໕. ກຖິນບໍ່ເປັນອັນກຼານ ດ້ວຍຜ້າທີ່ຢືມເຂົາມາ
໑໖. ກຖິນບໍ່ເປັນອັນກຼານ ດ້ວຍຜ້າທີ່ເກັບໄວ້ຄ້າງຄືນ
໑໗. ກຖິນບໍ່ເປັນອັນກຼານ ດ້ວຍຜ້າທີ່ເປັນນິສສັຄຄິຍ໌
໑໘. ກຖິນບໍ່ເປັນອັນກຼານ ດ້ວຍຜ້າທີ່ບໍ່ໄດ້ທຳກັປປະພິນທຸ
໑໙. ກຖິນບໍ່ເປັນອັນກຼານ ເວັ້ນຈາກຜ້າສັງຄາຕິເສັຽ
໔໐. ກຖິນບໍ່ເປັນອັນກຼານ ເວັ້ນຈາກຜ້າອຸດຕຣາສົງຄ໌ເສັຽ
໔໑. ກຖິນບໍ່ເປັນອັນກຼານ ເວັ້ນຈາກຜ້າອັນຕຣວາສົກເສັຽ
໔໔. ກຖິນບໍ່ເປັນອັນກຼານ ເວັ້ນຈາກຈີວຣມີຂັນ໌ ໕ ຫຼືເກີນ ໕ ຊຶ່ງຕັດດີແລ້ວ ເຮັດໃຫ້ມີມົຫຼາຫົລ ແລ້ວໃນວັນນັ້ນ
໔໓. ກຖິນບໍ່ເປັນອັນກຼານ ເວັ້ນຈາກການກຼານແຫ່ງບຸຄຄົລ
໔໔. ກຖິນບໍ່ເປັນອັນກຼານໂດຍດີ ຖ້າພິກຂຸຜູ້ຢູ່ນອກສີມາອນຸໂມທນາກຖິນນັ້ນ ແມ້ຢ່າງນີ້ ກຖິນກໍເຊື່ວ່າບໍ່ເປັນອັນກຼານ.

ດູຣາພິກຂຸທັ້ງຫລາຍ ຢ່າງນີ້ແລ ກຖິນບໍ່ເປັນອັນກຼານ.

ກຖິນເປັນອັນກຼານ

[໙໗] ດູຣາພິກຂຸທັ້ງຫລາຍ ຢ່າງໃດລະ ກຖິນເປັນອັນກຼານ ຄື:-

໑. ກຖິນເປັນອັນກຼານ ດ້ວຍຜ້າໃຫມ່

໒. ກຖິນເປັນອັນກຼານ ດ້ວຍຜ້າຫຼຸມໃຫມ່

໓. ກຖິນເປັນອັນກຼານ ດ້ວຍຜ້າເກົ່າ

໔. ກຖິນເປັນອັນກຼານ ດ້ວຍຜ້າບັງສຸກຸລ

໕. ກຖິນເປັນອັນກຼານ ດ້ວຍຜ້າທີ່ຕົກຕາມຮ້ານ

໖. ກຖິນເປັນອັນກຼານ ດ້ວຍຜ້າທີ່ບໍ່ໄດ້ທຳນິມິຕໄດ້ມາ

໗. ກຖິນເປັນອັນກຼານ ດ້ວຍຜ້າທີ່ບໍ່ໄດ້ເວົ້າລຽບຄຽງໄດ້ມາ

໘. ກຖິນເປັນອັນກຼານ ດ້ວຍຜ້າທີ່ບໍ່ໄດ້ຢືມເຂົາມາ

໙. ກຖິນເປັນອັນກຼານ ດ້ວຍຜ້າທີ່ບໍ່ໄດ້ເກັບໄວ້ຄ້າງຄືນ

໑໐. ກຖິນເປັນອັນກຼານ ດ້ວຍຜ້າທີ່ບໍ່ໄດ້ເປັນນິສສັຄຄີຍ໌

໑໑. ກຖິນເປັນອັນກຼານ ດ້ວຍຜ້າທີ່ເຮັດກັປປະພິນທຸແລ້ວ

໑໒. ກຖິນເປັນອັນກຼານ ດ້ວຍຜ້າສັງຆາຕິ

໑໓. ກຖິນເປັນອັນກຼານ ດ້ວຍຜ້າອຸຕຣາສົງຄ໌

໑໔. ກຖິນເປັນອັນກຼານ ດ້ວຍຜ້າອັນຕຣວາສົກ

໑໕. ກຖິນເປັນອັນກຼານ ດ້ວຍຈີວຣມີຂັນ໌ ໕ ຫຼືເກີນ ໕ ຊຶ່ງຕັດດີແລ້ວ ເຮັດໃຫ້ມີມົຕທົລແລ້ວ ໃນວັນນັ້ນ

໑໖. ກຖິນເປັນອັນກຼານ ເພາະກາຣແຫ່ງບຸຄຄົລ

໑໗. ກຖິນເປັນອັນກຼານ ຖ້າພິກຂຸຢູ່ໃນສີມາອນຸໂມທນາກຖິນນັ້ນ ແມ້ຢ່າງນີ້ ກຖິນກໍຊື່ວ່າ ເປັນອັນກຼານ.

ດູຣາພິກຂຸທັ້ງຫລາຍ ຢ່າງນີ້ແລ ກຖິນເປັນອັນກຼານ.

[໙໙] ດູຣາພິກຂຸທັ້ງຫລາຍ ຢ່າງໃດລະ ກຖິນເປັນອັນເດາະ.

ມາຕິກາ ໘

ດູຣາພິກຂຸທັ້ງຫລາຍ ມາຕິກາເພື່ອເດາະກຖິນ ໘ ຂໍ້ນີ້ ຄື:-

໑. ກຳຫນົດດ້ວຍຫລີກໄປ ໒. ກຳຫນົດດ້ວຍຈີວຣທຳແລ້ວ

໓. ກຳຫນົດດ້ວຍຕົກລົງໃຈ ໔. ກຳຫນົດດ້ວຍຜ້າເສັ່ງຫາຍ

໕. ກຳຫນົດດ້ວຍໄດ້ຍິນຂ່າວ ໖. ກຳຫນົດດ້ວຍສິ້ນຫວັງ

໗. ກຳຫນົດດ້ວຍລ່ວງເຂຕ ໘. ກຳຫນົດດ້ວຍເດາະພ້ອມກັນ.

ອາຫາຍສັຕຕກະ ທີ່ ໖

[໑໐໐] ໑. ພິກຂຸໄດ້ກຼານກຖິນແລ້ວ ຖືຈີວຣທີ່ເຮັດແລ້ວແລ້ວຫລີກໄປ ດ້ວຍຄຶດວ່າຈະບໍ່ກັບມາ ກາຣເດາະກຖິນຂອງພິກຂຸນັ້ນ ກຳຫນົດດ້ວຍຫລີກໄປ.

໒. ພິກຂຸໄດ້ກຼານກຖິນແລ້ວ ຖືຈີວຣຫລີກໄປ ທ່ານຢູ່ນອກສີມາ ເກີດຄວາມຄຶດຢ່າງນີ້ວ່າ ຈະໃຫ້ເຮັດຈີວຣຜືນນີ້ ໓ ພາຍນອກສີມານີ້ແຫລະ ຈະບໍ່ກັບມາລະ ທ່ານໃຫ້ເຮັດຈີວຣຜືນນັ້ນແລ້ວ ກາຣເດາະກຖິນຂອງພິກຂຸນັ້ນ ກຳຫນົດດ້ວຍທຳຈີວຣແລ້ວ

໓. ພິກຂຸໄດ້ກຼານກຖິນແລ້ວ ຖືຈີວຣຫລີກໄປ ທ່ານຢູ່ນອກສີມາ ເກີດຄວາມຄຶດຢ່າງນີ້ວ່າ ຈະບໍ່ໃຫ້ຈີວຣຜືນນີ້ ຈະບໍ່ກັບ ກາຣເດາະກຖິນຂອງພິກຂຸນັ້ນ ກຳຫນົດດ້ວຍຕົກລົງໃຈ

໔. ພິກຂຸໄດ້ກຼານກຖິນແລ້ວ ຖືຈີວຣຫລີກໄປ ທ່ານຢູ່ນອກສີມາ ເກີດຄວາມຄຶດຢ່າງນີ້ວ່າ ຈະໃຫ້ເຮັດຈີວຣຜືນນີ້ ໓ ພາຍນອກສີມານີ້ແຫລະ ຈະບໍ່ກັບ ແລ້ວທຳຈີວຣຜືນນັ້ນ ຈີວຣຂອງທ່ານ ທີ່ກຳລັງທຳຢູ່ນັ້ນໄດ້ເສັ່ງຫາຍ ກາຣເດາະກຖິນຂອງພິກຂຸນັ້ນກຳຫນົດດ້ວຍຜ້າເສັ່ງຫາຍ

໕. ພິກຂຸໄດ້ກຼານກຖິນແລ້ວ ຖືຈີວຣຫລີກໄປດ້ວຍຄຶດວ່າຈະກັບມາ ທ່ານຢູ່ນອກສີມາ ໃຫ້ເຮັດຈີວຣຜືນນັ້ນ ເມື່ອທຳຈີວຣແລ້ວແລ້ວ ໄດ້ຍິນຂ່າວວ່າໃນອາວາສນັ້ນກຖິນເດາະເສັ່ງແລ້ວ ກາຣເດາະກຖິນຂອງພິກຂຸນັ້ນ ກຳຫນົດດ້ວຍໄດ້ຍິນຂ່າວ

໖. ພິກຂຸໄດ້ກຼານກຖິນແລ້ວ ຖືຈີວຣຫລີກໄປ ດ້ວຍຄຶດວ່າຈະກັບມາ ທ່ານຢູ່ນອກສີມາ ໃຫ້ເຮັດຈີວຣຜືນນັ້ນ ເມື່ອທຳຈີວຣແລ້ວ ຄຶດວ່າຈະກັບມາ ຈະກັບມາ ແລ້ວລ່ວງຄຼາວກຖິນເດາະ ໓ ພາຍນອກສີມາ ກາຣເດາະກຖິນຂອງພິກຂຸນັ້ນກຳຫນົດດ້ວຍລ່ວງເຂຕ

໗. ພິກຂຸໄດ້ກຼານກຖິນແລ້ວ ຖືຈີວຣຫລີກໄປດ້ວຍຄຶດວ່າຈະກັບມາ ທ່ານຢູ່ນອກສີມາ ໃຫ້ເຮັດຈີວຣຜືນນັ້ນ ເມື່ອທຳຈີວຣແລ້ວ ຄຶດວ່າຈະກັບມາ ຈະກັບມາ ແລ້ວກັບມາທັນກຖິນເດາະ ກາຣເດາະກຖິນຂອງພິກຂຸນັ້ນ ພ້ອມກັບພິກຂຸທັ້ງຫລາຍ.

ອາຫາຍສັຕຕກະທີ່ ໑ ຈົບ.

ສມາທາຍສັຕຕກະ ທີ່ ๘

[໑໐໑] ໑. ພິກຂຸໄດ້ກຖານກຖິນແລ້ວ ນຳຈີວຣທີ່ເຮັດແລ້ວແລ້ວຫລີກໄປ ດ້ວຍຄຶດວ່າຈະບໍ່ກັບມາ ການເດາະກຖິນຂອງພິກຂຸນັ້ນ ກຳໜົດດ້ວຍຫລີກໄປ

๒. ພິກຂຸໄດ້ກຖານກຖິນແລ້ວ ນຳຈີວຣຫລີກໄປ ທ່ານຢູ່ນອກສີມາ ເກີດຄວາມຄຶດຢ່າງນີ້ວ່າ ຈະໃຫ້ເຮັດຈີວຣຜືນນີ້ ๓ ພາຍນອກສີມານີ້ແຫລະ ຈະບໍ່ກັບ ທ່ານໃຫ້ເຮັດຈີວຣຜືນນັ້ນແລ້ວ ການເດາະກຖິນຂອງພິກຂຸນັ້ນ ກຳໜົດດ້ວຍທຳຈີວຣແລ້ວ

๓. ພິກຂຸໄດ້ກຖານກຖິນແລ້ວ ນຳຈີວຣຫລີກໄປ ທ່ານຢູ່ນອກສີມາ ເກີດຄວາມຄຶດຢ່າງນີ້ວ່າ ຈະບໍ່ໃຫ້ເຮັດຈີວຣຜືນນີ້ ຈະບໍ່ກັບ ການເດາະກຖິນຂອງພິກຂຸນັ້ນ ກຳໜົດດ້ວຍຕົກລົງໃຈ

๔. ພິກຂຸໄດ້ກຖານກຖິນແລ້ວ ນຳຈີວຣຫລີກໄປ ທ່ານຢູ່ນອກສີມາ ເກີດຄວາມຄຶດຢ່າງນີ້ວ່າ ຈະໃຫ້ເຮັດຈີວຣຜືນນີ້ ๓ ພາຍນອກສີມານີ້ແຫລະ ຈະບໍ່ກັບ ທ່ານໃຫ້ເຮັດຈີວຣຜືນນັ້ນ ຈີວຣຂອງທ່ານທີ່ເຮັດຢູ່ນັ້ນ ໄດ້ເສັຽຫຼືຫາຍ ການເດາະກຖິນຂອງພິກຂຸນັ້ນ ກຳໜົດດ້ວຍຜ້າເສັຽຫຼືຫາຍ

๕. ພິກຂຸໄດ້ກຖານກຖິນແລ້ວ ນຳຈີວຣຫລີກໄປ ດ້ວຍຄຶດວ່າຈະກັບມາ ທ່ານຢູ່ນອກສີມາ ໃຫ້ທຳຈີວຣຜືນນັ້ນ ເມື່ອທຳຈີວຣແລ້ວແລ້ວ ໄດ້ຍິນຂ່າວວ່າ ໃນອາວາສນັ້ນ ກຖິນເດາະເສັຽແລ້ວ ການເດາະກຖິນຂອງພິກຂຸນັ້ນ ກຳໜົດດ້ວຍໄດ້ຍິນຂ່າວ

๖. ພິກຂຸໄດ້ກຖານກຖິນແລ້ວ ນຳຈີວຣຫລີກໄປ ດ້ວຍຄຶດວ່າຈະກັບມາ ທ່ານຢູ່ນອກສີມາ ໃຫ້ທຳຈີວຣຜືນນັ້ນ ເມື່ອທຳຈີວຣແລ້ວແລ້ວຄຶດວ່າຈະກັບມາ ຈະກັບມາ ແລ້ວລ່ວງຄາວກຖິນເດາະ ๓ ພາຍນອກສີມາ ການເດາະກຖິນຂອງພິກຂຸນັ້ນ ກຳໜົດດ້ວຍລ່ວງເຂດ

๗. ພິກຂຸໄດ້ກຖານກຖິນແລ້ວ ນຳຈີວຣຫລີກໄປ ດ້ວຍຄຶດວ່າຈະກັບມາ ທ່ານຢູ່ ๓ ພາຍນອກສີມາໃຫ້ເຮັດຈີວຣຜືນນັ້ນ ເມື່ອທຳຈີວຣແລ້ວແລ້ວ ຄຶດວ່າຈະກັບມາ ຈະກັບມາ ແລ້ວກັບມາທັນກຖິນເດາະ ການເດາະກຖິນຂອງພິກຂຸນັ້ນ ພ້ອມກັບພິກຂຸທັ້ງຫລາຍ.

ສມາທາຍສັຕຕກະ ທີ່ ๘ ຈົບ.

ອາຫາຍລັກຂະ ທີ່ ໓

[໑໐໔] ໑. ພິກຂຸໄດ້ກຖານກຖິນແລ້ວ ຖືຈີວອທີ່ເຮັດຄ້າງໄວ້ຫລີກໄປ ທ່ານຢູ່ນອກສີມາ ເກີດຄວາມຄຶດຢ່າງນີ້ວ່າ ເຮົາຈະໃຫ້ເຮັດຈີວອຜືນນີ້ ໓ ກາຍນອກສີມານີ້ແຫລະ ຈະບໍ່ກັບ ແລ້ວໃຫ້ເຮັດຈີວອຜືນນັ້ນແລ້ວ ການເດາະກຖິນຂອງພິກຂຸນັ້ນ ກຳຫນົດດ້ວຍທຳຈີວອແລ້ວ

໒. ພິກຂຸໄດ້ກຖານກຖິນແລ້ວ ຖືຈີວອທີ່ເຮັດຄ້າງໄວ້ຫລີກໄປ ທ່ານຢູ່ນອກສີມາ ເກີດຄວາມຄຶດຢ່າງນີ້ວ່າ ຈະບໍ່ໃຫ້ເຮັດຈີວອຜືນນີ້ ຈະບໍ່ກັບມາ ການເດາະກຖິນຂອງພິກຂຸນັ້ນ ກຳຫນົດດ້ວຍຕົກລົງໃຈ

໓. ພິກຂຸໄດ້ກຖານກຖິນແລ້ວ ຖືຈີວອທີ່ເຮັດຄ້າງໄວ້ຫລີກໄປ ທ່ານຢູ່ນອກສີມາ ເກີດຄວາມຄຶດຢ່າງນີ້ວ່າ ຈະໃຫ້ເຮັດຈີວອຜືນນີ້ ໓ ກາຍນອກສີມານີ້ແຫລະ ຈະບໍ່ກັບ ແລ້ວໃຫ້ເຮັດຈີວອຜືນນັ້ນ ຈີວອຂອງທ່ານທີ່ເຮັດຢູ່ນັ້ນໄດ້ເສັຽຫຼືຫາຍ ການເດາະກຖິນຂອງພິກຂຸນັ້ນ ກຳຫນົດດ້ວຍຜ້າເສັຽຫຼືຫາຍ

໔. ພິກຂຸໄດ້ກຖານກຖິນແລ້ວ ຖືຈີວອທີ່ເຮັດຄ້າງໄວ້ຫລີກໄປດ້ວຍຄຶດວ່າ ຈະກັບມາ ທ່ານຢູ່ນອກສີມາ ໃຫ້ເຮັດຈີວອຜືນນັ້ນ ເມື່ອທຳຈີວອແລ້ວແລ້ວ ໄດ້ຮູ້ຂ່າວວ່າ ໃນອາວາສນັ້ນກຖິນເດາະແລ້ວ ການເດາະກຖິນຂອງພິກຂຸນັ້ນ ກຳຫນົດດ້ວຍໄດ້ຍິນຂ່າວ

໕. ພິກຂຸໄດ້ກຖານກຖິນແລ້ວ ຖືຈີວອທີ່ເຮັດຄ້າງໄວ້ຫລີກໄປ ດ້ວຍຄຶດວ່າຈະກັບມາ ທ່ານຢູ່ນອກສີມາ ໃຫ້ເຮັດຈີວອຜືນນັ້ນ ເມື່ອທຳຈີວອແລ້ວແລ້ວຄຶດວ່າຈະກັບມາ ຈະກັບມາ ແລ້ວລ່ວງຄາວກຖິນເດາະ ໓ ກາຍນອກສີມາ ການເດາະກຖິນຂອງພິກຂຸນັ້ນ ກຳຫນົດດ້ວຍລ່ວງເຂດ.

ຊີວົກໂກມາຣັກຈ໌ທູລຮັບສນອງພຣະບໍຣົມຣາຊໂອງການວ່າ ຢ່າງນັ້ນຂໍເດຊະໆ ແລ້ວໄປພຣະນຄຣພາຣາຕສີ ເຂົ້າໄປຫາເສຕຖີບຸຕຣ໌ຊາວພຣະນຄຣພາຣາຕສີ ສັງເກຕອາການທີ່ຜິດແປກຂອງເສຕຖີບຸຕຣ໌ຊາວພຣະນຄຣພາຣາຕສີ ເຊີນປະຊາຊົນໃຫ້ອອກໄປເສັຽ ຂຶງມ່ານມັດເສຕຖີບຸຕຣໄວ້ກັບເສົາ ໃຫ້ກັຣຍາຢູ່ຂ້າງຫນ້າ ຜ່າຫນັງທ້ອງ ນຳເນື້ອງອກທີ່ລຳໄສ້ອອກສແດງແກ່ກັຣຍາວ່າ ທ່ານຈົ່ງເບິ່ງຄວາມເຈັບປ່ວຍຂອງສາມີທ່ານ ເຂົ້າຢາຄູທີ່ສາມີທ່ານດື່ມກໍດີ ເຂົ້າສວຍທີ່ສາມີທ່ານຮັບປະທານກໍດີ ບໍ່ຍ່ອຍ ອຸຈຈາຣະແລະປັສສາວະອອກບໍ່ສະດວກ ເພາະໂຣຄນີ້ ສາມີທ່ານນີ້ຈຶ່ງຈອຍແຫ້ງ ເສົ້າຫມອງ ມີຜິວພັຣຕຂູບຊີດ ເຫລືອງຂຶ້ນໆ ມີຕົວເຕັມໄປດ້ວຍເອັນດັ່ງນີ້ ແລ້ວຕັດເນື້ອງອກໃນລຳໄສ້ອອກ ສອດໃສ່ລຳໄສ້ກັບດັ່ງເດີມ ແລ້ວຍິບຫນັງທ້ອງທາຢາສມານແຜລ ຕໍ່ມາບໍ່ດົນປານໃດ ເສຕຖີບຸຕຣ໌ຊາວພຣະນຄຣພາຣາຕສີ ໄດ້ຫາຍໂຣຄແລ້ວ

ຄັ້ງນັ້ນ ເສຕຖີຊາວພຣະນຄຣພາຣາຓສີຄິດວ່າ ບຸຕຣ໌ຂອງເຮົາຫາຍໂຣຄພົ້ນອັນຕຣາຍແລ້ວ ຈຶ່ງໃຫ້ຣາງວັລແກ່ຊີວົກໂກມາຣພັຈຈ໌ເປັນເງິນ ໑໖,໐໐໐ ກຫາປຓ໌ ຊີວົກໂກມາຣພັຈຈ໌ຮັບເງິນ ໑໖,໐໐໐ ກຫາປຓ໌ນັ້ນ ເດີນທາງກັບມາສູ່ພຣະນຄຣຣາຊຄຣິຫ໌ຕາມເດີມ.

ເຣື່ອງພຣະເຈົ້າຈັຓຫປັຊໂຊຕຫຣົງປະຊວຣໂຣຄຜອມເຫລືອງ

[໑໘໔] ກໍໂດຍສມັຍນັ້ນແລ ພຣະເຈົ້າປັຊໂຊຕຣາຊາໃນກຸງອຸຊເຊນີ ທຣົງປະຊວຣໂຣຄຜອມເຫລືອງ ນາຍແພທຍ໌ທີ່ໃຫຍ່ໆ ມີຊື່ສຽງໂດ່ງດັງຫລາຍຄົນ ມາຮັກສາ ກໍບໍ່ອາຈເຮັດໃຫ້ໂຣຄຫາຍ ໄດ້ຂົນເງິນໄປເປັນຈຳນວນຫຼາຍ ຄັ້ງນັ້ນ ພຣະເຈົ້າປັຊໂຊຕໄດ້ສົ່ງຣາຊທູຕຖືພຣະຣາຊສາສ໌ນ ໄປໃນພຣະຣາຊສຳນັກພຣະເຈົ້າພິມພິສາຣຈອມເສນາມາຄົ໌ຣາຊ ມີໃຈຄວາມວ່າ ຂ້ານ້ອຍເຈັບປ່ວຍເປັນຢ່າງນັ້ນ ຂໍພຣະຣາຊທານພຣະບໍຣົມຣາຊວໂຣກາສ ຂໍພຣະອົງຄ໌ໂປຼດສັ່ງໝໍຊີວົກ ເຂົາຈະຮັກສາຂ້ານ້ອຍ ຈຶ່ງພຣະເຈົ້າພິມພິສາຣຈອມເສນາມາຄົ໌ຣາຊ ໄດ້ດຳຣັສສັ່ງຊີວົກໂກມາຣພັຈຈ໌ວ່າ ໄປເທີ້ນ ພໍ່ນາຍຊີວົກ ເຈົ້າຈົ່ງໄປເມືອງອຸຊເຊນີຮັກສາພຣະເຈົ້າປັຊໂຊຕ

ຊີວົກໂກມາຣພັຈຈ໌ທູລຮັບສນອງພຣະບໍຣົມຣາຊໂອງກາຣ ແລ້ວເດີນທາງໄປເມືອງອຸຊເຊນີ ເຂົ້າໄປໃນພຣະຣາຊສຳນັກ ແລ້ວເຂົ້າເຝົ້າພຣະເຈົ້າປັຊໂຊຕ ໄດ້ກວດອາກາຣທີ່ຜິດແປກຂອງພຣະເຈົ້າປັຊໂຊຕ ແລ້ວໄດ້ຂາບທູລຄຳນີ້ແດ່ທ້າວທ່ານວ່າ ຂໍເດຊະໆ ຂ້າພຣະພຸທຸສເຈົ້າຈະຫຸງເນີຍໃສ ພຣະອົງຄ໌ຈະສເວີຍເນີຍໃສນັ້ນ

ພຣະເຈົ້າປັຊໂຊຕຮັບສັ່ງຫ້າມວ່າ ຢ່າເລີຍ ພໍ່ນາຍຊີວົກ ທ່ານເວັ້ນເນີຍໃສເສັຽ ອາຈຮັກສາເຮົາໃຫ້ຫາຍໂຣຄໄດ້ດ້ວຍວິຣີໃດ ທ່ານຈົ່ງທຳວິຣີນັ້ນເທີ້ນ ເນີຍໃສເປັນຂອງບໍ່ຈັບ ເປັນຕາຂີ້ດຽດສຳຫຼັບເຮົາ

ຂຓະນັ້ນ ຊີວົກໂກມາຣພັຈຈໄດ້ມີຄວາມປຣິວິຕົກວ່າ ເຈົ້າມຫາຊີວິຕພຣະອົງຄ໌ນີ້ແລ ທຣົງປະຊວຣເຊັ່ນນີ້ ເຮົາເວັ້ນເນີຍໃສເສັຽ ບໍ່ອາຈຮັກສາພຣະອົງຄ໌ໃຫ້ຫາຍໂຣຄໄດ້ ເອົາລະເຮົາຄວຣຫຸງເນີຍໃສໃຫ້ມີສີກິ່ນ ຣົສ ເຫມືອນນ້ຳຝາດ ດັ່ງນີ້ ແລ້ວໄດ້ຫຸງເນີຍໃສດ້ວຍເພາສັຊນານາຊນິດ ໃຫ້ມີສີ ກິ່ນ ຣົສເຫມືອນນ້ຳຝາດ ເມື່ອແລ້ວຫວນຄຶດໄດ້ວ່າ ເນີຍໃສທີ່ເຈົ້າມຫາຊີວິຕພຣະອົງຄ໌ນີ້ສເວີຍແລ້ວ ເມື່ອຍ່ອຍຈະເຮັດໃຫ້ອ້ວກ ເຈົ້າມຫາຊີວິຕພຣະອົງຄ໌ນີ້ທຣົງໂວດວາຍ ຈະຕ້ອງຮັບສັ່ງໃຫ້ພິຄາຕເຮົາເສັຽກໍໄດ້ ຖ້າແນວໃດເຮົາຄວຣທູລລາໄວ້ກ່ອນ ວັນຕໍ່ມາຈຶ່ງໄປໃນພຣະຣາຊສຳນັກ ເຂົ້າເຝົ້າພຣະເຈົ້າປັຊໂຊຕ ແລ້ວໄດ້ຂາບທູລຄຳນີ້ແດ່ທ້າວທ່ານວ່າ ຂໍເດຊະ ໆ ພວກຂ້າພຣະພຸທຸສເຈົ້າຊື່ວ່າເປັນນາຍແພທຍ໌ ຈະຖອນຣາກໄມ້ມາຜສົມຢາຊົ່ວຍາມນຶ່ງເຊັ່ນທີ່ປະສົງຄ໌ນັ້ນ ຂໍປະທານພອຣະບໍຣົມຣາຊວໂຣກາສ ຂໍຝ່າລະອອງສຸລີພຣະບາທ ຈົ່ງທຣົງມີພຣະຣາຊໂອງກາຣຕຣັສສັ່ງເຈົ້າພນັກງານໃນໂຮງຣາຊພາຫນະແລະທີ່ປະຕູທັ້ງຫລາຍວ່າ ໝໍຊີວົກຕ້ອງກາຣ

ໄປດ້ວຍພາຫນະໃດ ຈົ່ງໄປດ້ວຍພາຫນະນັ້ນ ປັຕຖນາໄປທາງປະຕູໃດ ຈົ່ງໄປທາງປະຕູນັ້ນ ຕ້ອງການໄປເວລາໃດ ຈົ່ງໄປເວລານັ້ນ ປັຕຖນາຈະເຂົ້າມາເວລາໃດ ຈົ່ງເຂົ້າມາເວລານັ້ນ ຈຶ່ງພຣະເຈົ້າປັຊໂຊຕໄດ້ມີພຣະຣາຊດຳຣັສສັ່ງເຈົ້າພນັກງານໃນໂຮງຣາຊພາຫນະແລະທີ່ປະຕູທັ້ງຫລາຍ ຕາມທີ່ໝໍຊີວົກຂາບທູລຂໍບໍຣົມຣາຊານຸຍາຕໄວ້ທຸກປະການ

ກໍໂດຍສມັຍນັ້ນແລ ພຣະເຈົ້າປັຊໂຊຕມີຊ້າງພັງຊື່ກັທທວດີ ຍ່າງທາງໄດ້ວັນລະ ໕໐ ໂຍຊນ໌ ຈຶ່ງໝໍຊີວົກໂກມາຣກັຈຈ໌ໄດ້ທູລຖວາຍເນີຍໃສນັ້ນແດ່ພຣະເຈົ້າປັຊໂຊຕດ້ວຍຂາບທູລວ່າ ຂໍໃຕ້ຝ່າລະອອງສຸລີພຣະບາທຈົ່ງສເວີຍນ້ຳຝາດ ເມື່ອໃຫ້ພຣະເຈົ້າປັຊໂຊຕສເວີຍເນີຍໃສແລ້ວກໍໄປໂຮງຊ້າງຫນີອອກຈາກພຣະນຄຣໄປໂດຍຊ້າງພັງກັທທວດີ ຂຓະດຽວກັນນັ້ນ ເນີຍໃສທີ່ພຣະເຈົ້າປັຊໂຊຕສເວີຍນັ້ນຍ່ອຍ ໄດ້ເຮັດໃຫ້ຫຣົ່ງອ້ວກຂຶ້ນຈຶ່ງພຣະເຈົ້າປັຊໂຊຕໄດ້ຮັບສັ່ງແກ່ພວກມຫາດເລັກວ່າ ພນາຍທັ້ງຫລາຍ ເຮົາຖືກໝໍຊີວົກຊາຕິຊົ່ວລວງໃຫ້ດື່ມເນີຍໃສ ພວກເຈົ້າຈົ່ງຄົ້ນຈັບໝໍຊີວົກມາໂດຍດ່ວນ

ພວກມຫາດເລັກຂາບທູລວ່າ ໝໍຊີວົກຫນີອອກຈາກພຣະນຄຣໄປໂດຍຊ້າງພັງກັທທວດີແລ້ວຂ້ານ້ອຍ

ກໍໂດຍສມັຍນັ້ນແລ ພຣະເຈົ້າປັຊໂຊຕມີມຫາດເລັກຊື່ກາກະ ຊຶ່ງອາສັຍເກີດກັບອມນຸษย໌ ຍ່າງທາງໄດ້ວັນລະ ໖໐ ໂຍຊນ໌ ຈຶ່ງພຣະເຈົ້າປັຊໂຊຕດຳຣັສສັ່ງກາກະມຫາດເລັກວ່າ ພໍ່ນາຍກາກະ ເຈົ້າຈົ່ງໄປເຊີນໝໍຊີວົກກັບມາ ດ້ວຍອ້າງວ່າ ທ່ານອາຈາຣຍ໌ ເຈົ້າມຫາຊີວິຕຮັບສັ່ງໃຫ້ເຊີນທ່ານກັບໄປ ຂຶ້ນຊື່ວ່າໝໍເຫລົ່ານີ້ແລມີມາຣຍາຫຼາຍ ເຈົ້າຢ່າຮັບວັຕຖຸຫຍັງໆ ຂອງເຂົາ

ຄັ້ງນັ້ນ ກາກະມຫາດເລັກໄດ້ຍ່າງໄປທັນຊີວົກໂກມາຣກັຈຈ໌ ຜູ້ກຳລັງຮັບປະທານອາຫາຣມື້ເຊົ້າໃນຣະຫວ່າງທາງເຂຕພຣະນຄຣໂກສັມພີ ຈຶ່ງໄດ້ຮຽນແກ່ຊີວົກໂກມາຣກັຈຈ໌ວ່າ ທ່ານອາຈາຣຍ໌ ເຈົ້າມຫາຊີວິຕຮັບສັ່ງໃຫ້ເຊີນທ່ານກັບໄປ

ຊີ. ພໍ່ນາຍກາກະ ທ່ານຈົ່ງຖ້າຢູ່ພຽງຊົ່ວເວລາທີ່ເຮົາຮັບປະທານອາຫາຣ ເຊີນທ່ານຮັບປະທານອາຫາຣດ້ວຍກັນເທີ້ນ

ກ. ຊ່າງເທີ້ນທ່ານອາຈາຣຍ໌ ເຈົ້າມຫາຊີວິຕດຳຣັສສັ່ງຂ້າພເຈົ້າໄວ້ວ່າ ພໍ່ນາຍກາກະ ຂຶ້ນຊື່ວ່າໝໍເຫລົ່ານີ້ມີມາຣຍາຫຼາຍ ຢ່າຮັບວັຕຖຸຫຍັງ ຂອງເຂົາ

ທັນໃດນັ້ນ ຊີວົກໂກມາຣภัจจ์ ໄດ້ແຊກຢາທາງເລັບ ພ້ອມຍ້ຳໝາກຂາມປ້ອມ ແລະດື່ມນ້ຳຮັບປະທານ ແລ້ວໄດ້ຮ້ອງເຊື້ອເຊີນກາກະມຫາດເລັກວ່າ ເຊີນພໍ່ນາຍກາກະມາຍ້ຳໝາກຂາມປ້ອມແລະດື່ມນ້ຳຮັບປະທານດ້ວຍກັນ ຈຶ່ງກາກະມຫາດເລັກຄິດວ່າ ໝໍຄົນນີ້ແລກຳລັງຍ້ຳໝາກຂາມປ້ອມແລະດື່ມນ້ຳຮັບປະທານ ຄົງບໍ່ມີຫຍັງຈະໃຫ້ໂທษ ແລ້ວຍ້ຳໝາກຂາມປ້ອມເຄິ່ງໝາກ ແລະດື່ມນ້ຳຮັບປະທານ ໝາກຂາມປ້ອມເຄິ່ງໝາກທີ່ເຂົາຍ້ຳນັ້ນໄດ້ຣະບາຍອຸຈຈາຣະອອກມາໃນທີ່ນັ້ນເອງ

ຄັ້ງນັ້ນ ກາກະມຫາດເລັກໄດ້ຮຽນຖາມຊີວົກໂກມາຣภัจจ์ວ່າ ທ່ານອາຈາຣຍ໌ ຊີວິຕຂອງຂ້າພເຈົ້າຈະຣອດໄປໄດ້ບໍ່?

ຊີວົກໂກມາຣภัจจ์ຕອບວ່າ ຢ່າຢ້ານເລີຍ ພໍ່ນາຍກາກະ ທ່ານຈະບໍ່ມີອັນຕຣາຍ ແຕ່ພຣະເຈົ້າ-ຢູ່ຫົວຫຣົງໂວດວາຍ ຈະຕ້ອງຮັບສັ່ງໃຫ້ພິฆາຕເຮົາເສັຽກໍໄດ້ ເພາະເຫຕຸນັ້ນ ເຮົາບໍ່ກັບລະ ແລ້ວມອບຊ້າງພັງภัทທວດີແກ່ນາຍກາກະ ຍ່າງທາງໄປພຣະນຄຣຣາຊຄຣິຫ໌ ຮອນແຮມໄປໂດຍລຳດັບ ເຖິງພຣະນຄຣຣາຊຄຣິຫ໌ແລ້ວເຝົ້າພຣະເຈົ້າພິມພິສາຣຈອມເສນາມາຄົธຣາຊ ຂາບທູລເຣື່ອງນັ້ນໃຫ້ຫຣົງຮູ້ທຸກປະການ

ພຣະເຈົ້າພິມພິສາຣຮັບສັ່ງວ່າ ພໍ່ນາຍຊີວົກ ເຈົ້າບໍ່ກັບໄປນັ້ນຊື່ວ່າໄດ້ທຳຖືກແລ້ວ ເພາະພຣະຣາຊາອົງຄ໌ນັ້ນຫຽ້ມໂຫດ ຈະຕ້ອງສັ່ງໃຫ້ສຳເຣັຈໂທษເຈົ້າເສັຽກໍໄດ້

ເມື່ອພຣະເຈົ້າປັຊໂຊຕຫຣົງຫາຍປະຊວຣ ຫຣົງສົ່ງຣາຊທູຕໄປທີ່ສຳນັກຊີວົກໂກມາຣภัจจ์ວ່າ ເຊີນໝໍຊີວົກມາ ເຮົາຈະໃຫ້ພອຣ

ຊີວົກຂາບທູລຕອບໄປວ່າ ບໍ່ຕ້ອງໄປກໍໄດ້ ຂ້ານ້ອຍ ຂໍໃຕ້ຝ່າລະອອງສຸລີພຣະບາທຈົ່ງຫຣົງໂປຼດອນຸສຣຕ໌ເຖິງຄວາມດີຂອງຂ້າພຣະພຸທธເຈົ້າ.

ພຣະຣາຊທານຜ້າສີໄວຍກະ

ກໍໂດຍສມັຍນັ້ນແລ ຜ້າສີໄວຍກະຄູ່ນຶ່ງບັງເກີດແກ່ພຣະເຈົ້າປັຊໂຊຕ ເປັນຜ້າເນື້ອດີເລີศ ປະເສີฐ ມີຊື່ເດັ່ນ ອຸດົມ ແລະເປັນເລີສກວ່າຜ້າທັ້ງຫລາຍເປັນຈຳນວນຫຼາຍ ຕັ້ງຫລາຍຄູ່ ຕັ້ງຫລາຍຮ້ອຍຄູ່ ຫລາຍພັນຄູ່ ຫລາຍແສນຄູ່

ເມື່ອນັ້ນ ພຣະເຈົ້າປັຊໂຊຕ ຫຣົງສົ່ງຜ້າສີໄວຍກະຄູ່ນັ້ນໄປພຣະຣາຊທານແກ່ຊີວົກໂກມາຣภัจจ์ ຈຶ່ງຊີວົກໂກມາຣภัจจ์ໄດ້ມີຄວາມດຳຣິວ່າຜ້າສີໄວຍກະຄູ່ນີ້ ພຣະເຈົ້າປັຊໂຊຕສົ່ງມາພຣະຣາຊທານ ເປັນຜ້າເນື້ອດີເລີศ ປະເສີฐ ມີຊື່ເດັ່ນ ອຸດົມ ແລະເປັນເລີສກວ່າຜ້າທັ້ງຫລາຍເປັນຈຳນວນຫຼາຍ ຕັ້ງຫລາຍຄູ່ ຕັ້ງຫລາຍຮ້ອຍຄູ່ ຫລາຍພັນຄູ່ ຫລາຍແສນຄູ່ ນອກຈາກພຣະຜູ້ມີພຣະภາຄອຣຫັນຕສັມມາສັມພຸທธເຈົ້າພຣະອົງຄ໌ນັ້ນ ຫຼືພຣະເຈົ້າພິມພິສາຣຈອມເສນາມາຄົธຣາຊແລ້ວ ຄົນອື່ນບໍ່ຄວຣຢ່າງຍິ່ງເພື່ອໃຊ້ຜ້າສີໄວຍກະຄູ່ນີ້.

ພຣະຜູ້ມີພຣະກາຄສເວີຍພຣະໂອສົຖຖ່າຍ

[໑໓໕] ກໍໂດຍສມັຍນັ້ນແລ ພຣະກາຍຂອງພຣະຜູ້ມີພຣະກາຄຫມັກຫມົມດ້ວຍສິ່ງອັນເປັນໂທຬ ຈຶ່ງພຣະຜູ້ມີພຣະກາຄຮັບສັ່ງກັບທ່ານພຣະອານົນທ໌ວ່າ ດູຮາອານົນທ໌ ກາຍຂອງຕຖາຄົຕຫມັກຫມົມດ້ວຍສິ່ງອັນເປັນໂທຬ ຕຖາຄົຕຕ້ອງການຈະສັນຍາຖ່າຍ.

ຄັ້ງນັ້ນ ທ່ານພຣະອານົນທ໌ຍ່າງໄປຫາຊີວົກໂກມາຣັກຈ໌ ເມື່ອເຖິງແລ້ວໄດ້ກ່າວຄຳນີ້ກະຊີວົກ-ໂກມາຣັກຈ໌ວ່າ ທ່ານຊີວົກ ພຣະກາຍຂອງພຣະຕຖາຄົຕຫມັກຫມົມດ້ວຍສິ່ງອັນເປັນໂທຬ ພຣະຕຖາຄົຕຕ້ອງການຈະສເວີຍພຣະໂອສົຖຖ່າຍ ຊີວົກໂກມາຣັກຈ໌ກ່າວວ່າ ພຣະຄຸຓເຈົ້າ ຖ້າຍ່າງນັ້ນ ຂໍທ່ານຈົ່ງໂປຼດທຳພຣະກາຍຂອງພຣະຜູ້ມີພຣະກາຄໃຫ້ຊຸ່ມຊື່ນຈັກ ໒-໓ ວັນ

ຄັ້ງນັ້ນ ທ່ານພຣະອານົນທ໌ໄດ້ທຳພຣະກາຍຂອງພຣະຜູ້ມີພຣະກາຄໃຫ້ຊຸ່ມຊື່ນ ໒-໓ ວັນແລ້ວຍ່າງໄປຫາຊີວົກໂກມາຣັກຈ໌ ເມື່ອເຖິງແລ້ວໄດ້ກ່າວຄຳນີ້ກະຊີວົກໂກມາຣັກຈ໌ວ່າ

ທ່ານຊີວົກ ພຣະກາຍຂອງພຣະຕຖາຄົຕຊຸ່ມຊື່ນແລ້ວ ບັດນີ້ ທ່ານຮູ້ກາລອັນຄວຣເທີ້ນ

ຄັ້ງນັ້ນ ຊີວົກໂກມາຣັກຈ໌ໄດ້ມີຄວາມປຣິວິຕົກດັ່ງນີ້ວ່າ ການທີ່ເຮົາຈະຕ້ອງທູລຖວາຍ ພຣະໂອສົຖຖ່າຍທີ່ຫຍາບແດ່ພຣະຜູ້ມີພຣະກາຄນັ້ນ ບໍ່ສົມຄວຣເລີຍ ຖ້າແນວໃດ ເຮົາຄວຣອບກ້ານອຸບົລ ໓ ກ້ານດ້ວຍຢາຕ່າງໆ ແລ້ວທູລຖວາຍພຣະຕຖາຄົຕ ເມື່ອແລ້ວໄດ້ອົບກ້ານອຸບົລ ໓ ກ້ານດ້ວຍຢາຕ່າງໆ ແລ້ວເຂົ້າເຝົ້າພຣະຜູ້ມີພຣະກາຄ ເມື່ອແລ້ວໄດ້ທູລຖວາຍກ້ານອຸບົລກ້ານທີ່ນຶ່ງແດ່ພຣະຜູ້ມີພຣະກາຄ ຂາບທູລວ່າ ຂ້ານ້ອຍ ຂໍພຣະຜູ້ມີພຣະກາຄຈົ່ງທຣົງສູບກ້ານອຸບົລກ້ານທີ່ ໑ ນີ້ ການທຣົງສູບກ້ານອຸບົລນີ້ຈະຍັງພຣະຜູ້ມີພຣະກາຄໃຫ້ຖ່າຍເຖິງ ໑໐ ຄັ້ງ ແລ້ວໄດ້ທູລຖວາຍກ້ານອຸບົລກ້ານທີ່ ໒ ແດ່ພຣະຜູ້ມີພຣະກາຄຂາບທູລວ່າ ຂ້ານ້ອຍ ຂໍພຣະຜູ້ມີພຣະກາຄຈົ່ງທຣົງສູບອຸບົລກ້ານທີ່ ໒ ນີ້ ການທຣົງສູບກ້ານອຸບົລນີ້ຈະຍັງພຣະຜູ້ມີພຣະກາຄໃຫ້ຖ່າຍເຖິງ ໑໐ ຄັ້ງ ແລ້ວໄດ້ທູລຖວາຍກ້ານອຸບົລກ້ານທີ່ ໓ ແດ່ພຣະຜູ້ມີພຣະກາຄ ຂາບທູລວ່າ ຂ້ານ້ອຍ ຂໍພຣະຜູ້ມີພຣະກາຄຈົ່ງທຣົງສູບກ້ານອຸບົລກ້ານທີ່ ໓ ນີ້ ການທຣົງສູບກ້ານອຸບົລນີ້ຈະຍັງພຣະຜູ້ມີພຣະກາຄໃຫ້ຖ່າຍເຖິງ ໑໐ ຄັ້ງ ດ້ວຍວິທີນີ້ ພຣະຜູ້ມີພຣະກາຄຈະທຣົງຖ່າຍເຖິງ ໓໐ ຄັ້ງ

ເມື່ອຊີວົກໂກມາຣັກຈ໌ ທູລຖວາຍພຣະໂອສົຖຖ່າຍແດ່ພຣະຜູ້ມີພຣະກາຄເພື່ອຖ່າຍຄົບ ໓໐ ຄັ້ງແລ້ວ ຖວາຍບັງຄົມພຣະຜູ້ມີພຣະກາຄ ທຳປະທັກຂິຓກັບໄປ ຂຓະເມື່ອຊີວົກໂກມາຣັກຈ໌ຍ່າງອອກໄປນອກຊຸ້ມປະຕູແລ້ວໄດ້ມີຄວາມປຣິວິຕົກດັ່ງນີ້ວ່າ ເຮົາທູລຖວາຍພຣະໂອສົຖຖ່າຍແດ່ພຣະຜູ້ມີພຣະກາຄເພື່ອຖ່າຍຄົບ ໓໐ ຄັ້ງ ພຣະກາຍຂອງພຣະຕຖາຄົຕຫມັກຫມົມດ້ວຍສິ່ງອັນເປັນໂທຬ ຈະບໍ່ຍັງພຣະຜູ້ມີພຣະກາຄໃຫ້ຖ່າຍຄົບ ໓໐ ຄັ້ງ ຈະໃຫ້ຖ່າຍພຽງ ໒໙ ຄັ້ງ ແຕ່ພຣະຜູ້ມີພຣະກາຄທຣົງຖ່າຍແລ້ວຈະສົງພຣະກາຍ ເມື່ອສົງພຣະກາຍແລ້ວ ຈະຖ່າຍອີກຄັ້ງນຶ່ງ ຍ່າງນີ້ ພຣະຜູ້ມີພຣະກາຄຈະທຣົງຖ່າຍຄົບ ໓໐ ຄັ້ງ

ຄັ້ງນັ້ນ ພຣະຜູ້ມີພຣະກາຄທຣົງຮູ້ຄວາມປຣິວິຕົກແຫ່ງຈິຕຂອງຊີວົກໂກມາຣັກຈ໌ດ້ວຍພຣະທັຍແລ້ວ ຮັບສັ່ງກັບທ່ານພຣະອານົນທ໌ວ່າ ອານົນທ໌ ຊີວົກໂກມາຣັກຈ໌ ກຳລັງຍ່າງອອກນອກຊຸ້ມປະຕູວິຫາຣນີ້ ໄດ້ມີຄວາມປຣິວິຕົກດັ່ງນີ້ວ່າ ເຮົາຖວາຍພຣະໂອສົຖຖ່າຍແດ່ພຣະຜູ້ມີພຣະກາຄເພື່ອຖ່າຍຄົບ ໓໐ ຄັ້ງແລ້ວ ພຣະກາຍຂອງພຣະຕຖາຄົຕຫມັກຫມົມດ້ວຍສິ່ງອັນເປັນໂທຯ ຈະບໍ່ຍັງພຣະຜູ້ມີພຣະກາຄໃຫ້ຖ່າຍຄົບ ໓໐ ຄັ້ງ ຈະໃຫ້ຖ່າຍພຽງ ໒໙ ຄັ້ງ ແຕ່ພຣະຜູ້ມີພຣະກາຄທຣົງສົງພຣະກາຍ ເມື່ອສົງພຣະກາຍແລ້ວຈະຖ່າຍອີກ ຄັ້ງນຶ່ງ ຢ່າງນີ້ ພຣະຜູ້ມີພຣະກາຄຈະທຣົງຖ່າຍຄົບ ໓໐ ຄັ້ງ ອານົນທ໌ຖ້າຢ່າງນັ້ນ ທ່ານຈົ່ງຈັດຕຽມ ນ້ຳຮ້ອນໄວ້

ພຣະອານົນທ໌ທູລຮັບສນອງພຣະພຸທສພົຈນ໌ແລ້ວ ຈັດຕຽມນ້ຳຮ້ອນໄວ້ຖວາຍຕໍ່ມາ ຊີວົກໂກມາຣັກຈ໌ ໄປໃນພຸທສສຳນັກ ເມື່ອເຖິງແລ້ວຖວາຍບັງຄົມພຣະຜູ້ມີພຣະກາຄນັ່ງຢູ່ ໗ ທີ່ຄວຣສ່ວນຂ້າງນຶ່ງ ເມື່ອແລ້ວ ໄດ້ຂາບທູລຖາມພຣະຜູ້ມີພຣະກາຄວ່າ ພຣະຜູ້ມີພຣະກາຄທຣົງຖ່າຍແລ້ວບໍ່ ຂ້ານ້ອຍ

ກ. ເຮົາຖ່າຍແລ້ວ ຊີວົກ

ຊີ. ຂ້ານ້ອຍ ຂ້າພຣະພຸທສເຈົ້າກຳລັງຍ່າງອອກໄປນອກຊຸ້ມປະຕູພຣະວິຫາຣນີ້ ໄດ້ມີຄວາມ ປຣິວິຕົກດັ່ງນີ້ວ່າ ເຮົາຖວາຍພຣະໂອສົຖຖ່າຍແດ່ພຣະຜູ້ມີພຣະກາຄເພື່ອຖ່າຍຄົບ ໓໐ ຄັ້ງແລ້ວ ພຣະກາຍຂອງ ພຣະຜູ້ມີພຣະກາຄຫມັກຫມົມດ້ວຍສິ່ງອັນເປັນໂທຯ ຈະບໍ່ຍັງພຣະຜູ້ມີພຣະກາຄໃຫ້ຖ່າຍຄົບ ໓໐ ຄັ້ງ ແຕ່ພຣະຜູ້ມີພຣະກາຄທຣົງຖ່າຍແລ້ວຈະສົງພຣະກາຍ ເມື່ອສົງພຣະກາຍແລ້ວຈະຖ່າຍອີກຄັ້ງນຶ່ງຢ່າງນີ້ ພຣະຜູ້ມີພຣະກາຄຈະທຣົງຖ່າຍຄົບ ໓໐ ຄັ້ງ ຂ້ານ້ອຍ ຂໍພຣະຜູ້ມີພຣະກາຄຈົ່ງໂປຼດສົງພຣະກາຍ ຂໍພຣະສຸຄົຕຈົ່ງໂປຼດສົງພຣະກາຍ

ຄັ້ງນັ້ນ ພຣະຜູ້ມີພຣະກາຄທຣົງສົງນ້ຳອຸ່ນ ເມື່ອສົງແລ້ວ ທຣົງຖ່າຍອີກຄັ້ງນຶ່ງຢ່າງນີ້ ເປັນອັນພຣະຜູ້ມີພຣະກາຄທຣົງຖ່າຍຄົບ ໓໐ ຄັ້ງ ລຳດັບນັ້ນ ຊີວົກໂກມາຣັກຈ໌ໄດ້ຂາບທູລຄຳນີ້ແດ່ ພຣະຜູ້ມີພຣະກາຄວ່າ ຂ້ານ້ອຍ ພຣະຜູ້ມີພຣະກາຄບໍ່ຄວຣສເວີຍພຣະກຣະຍາຫາຣທີ່ປຸງດ້ວຍນ້ຳຕົ້ມຜັກ ຕ່າງໆ ຈົນກວ່າຈະມີພຣະກາຍເປັນປົກຕິ

ຕໍ່ມາບໍ່ດົນປານໃດ ພຣະກາຍຂອງພຣະຜູ້ມີພຣະກາຄໄດ້ເປັນປົກຕິແລ້ວ.

ຂາບທູລຂໍພອຣ

ຄັ້ງນັ້ນ ຊີວົກໂກມາຣັກຈ໌ ຖືຜ້າສີໄວຍກະຄູ່ນັ້ນໄປໃນພຸທສສຳນັກ ເມື່ອເຖິງແລ້ວຖວາຍບັງຄົມ ພຣະຜູ້ມີພຣະກາຄ ນັ່ງຢູ່ ໗ ທີ່ຄວຣສ່ວນຂ້າງນຶ່ງ ຊີວົກໂກມາຣັກຈ໌ນັ່ງຮຽບຮ້ອຍແລ້ວ ໄດ້ຂາບທູລຄຳນີ້ ແດ່ພຣະຜູ້ມີພຣະກາຄວ່າ ຂ້າພຣະພຸທສເຈົ້າຈະຂໍປະທານພອຣຕໍ່ພຣະຜູ້ມີພຣະກາຄຈັກຢ່າງນຶ່ງ ພຣະພຸທສ-ຂ້ານ້ອຍ

ກ. ພຣະຕຖາຄົຕທັ້ງຫລາຍເລີກໃຫ້ພອຣເສັຽແລ້ວ ຊີວົກ

ຊີ. ຂ້າພຣະພຸທສເຈົ້າຂໍປະທານພອຣທີ່ສົມຄວຣແລະບໍ່ມີໂທษ ຂ້ານ້ອຍ

ກ. ຈົ່ງວ່າມາເທີ້ນ ຊີວົກ

ຊີ. ຂ້ານ້ອຍ ພຣະຜູ້ມີພຣະກາຄແລະພຣະສົງฆ໌ທຣົງຖືຜ້າບັງສຸກຸລເປັນປົກຕິຢູ່ ຜ້າສີໄວຍກະຂອງຂ້າພຣະພຸທສເຈົ້າຄູ່ນີ້ ພຣະເຈົ້າປັຊໂຊຕທຣົງສົ່ງມາພຣະຣາຊທານ ເປັນຜ້າເນື້ອດີເລີສ ປະເສີກ ມີຊື່ສຽງເດັ່ນອຸດົມ ແລະເປັນເລີສກວ່າຜ້າທັ້ງຫລາຍເປັນຈຳນວນຫຼາຍ ຕັ້ງຫລາຍຄູ່ ຕັ້ງຫລາຍຮ້ອຍຄູ່ ຫລາຍພັນຄູ່ ຫລາຍແສນຄູ່ ຂໍພອຣະຜູ້ມີພຣະກາຄຈົ່ງທຣົງພຣະກຣຸຓາໂປຼດຮັບຜ້າຄູ່ສີໄວຍກະຂອງຂ້າພຣະພຸທສເຈົ້າ ແລະຂໍຈົ່ງທຣົງພຣະພຸທສານຸຍາຕຄຫບໍດີຈີວຣແກ່ພຣະສົງฆ໌ດ້ວຍເທີ້ນ ຂ້ານ້ອຍ.

ພຣະຜູ້ມີພຣະກາຄທຣົງຮັບຜ້າຄູ່ສີໄວຍກະແລ້ວ ເມື່ອແລ້ວທຣົງຊີ້ແຈົງໃຫ້ຊີວົກໂກມາຣກັຈຈ໌ ເຫັນແຈ້ງ ສມາທານ ອາຈຫານ ຣ່າເຣີງດ້ວຍສັມມີກຖາ ເມື່ອຊີວົກໂກມາຣກັຈຈ໌ ອັນພຣະຜູ້ມີພຣະກາຄທຣົງຊີ້ແຈງໃຫ້ເຫັນແຈ້ງ ສມາທານ ອາຈຫານ ຣ່າເຣີງດ້ວຍສັມມີກຖາ ແລ້ວລຸກຈາກທີ່ນັ່ງຖວາຍບັງຄົມພຣະຜູ້ມີພຣະກາຄ ທຳປະທັກษິຓກັບໄປ.

ພຣະພຸທສານຸຍາຕຄຫບໍດີຈີວຣ

ລຳດັບນັ້ນ ພຣະຜູ້ມີພຣະກາຄທຣົງເຮັດສັມມີກຖາ ໃນເພາະເຫຕຸເປັນເຄົ້າມູລນັ້ນ ໃນເພາະເຫຕຸແຣກເກີດນັ້ນ ແລ້ວຮັບສັ່ງກະກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ເຮົາອນຸຍາຕຄຫບໍດີຈີວຣ ອົງຄ໌ໃດປັຕຖນາ ຈົ່ງຖືຜ້າບັງສຸກຸລ ອົງຄ໌ໃດປັຕຖນາ ຈົ່ງຖືຜ້າບັງສຸກຸລ ອົງຄ໌ໃດປັຕຖນາ ຈົ່ງຍິນດີຄຫບໍດີຈີວຣ ແຕ່ເຮົາສັຣເສີຍການຍິນດີ ດ້ວຍປັຈຈັຍຕາມມີຕາມໄດ້.

[໑໓໖] ປະຊາຊົນໃນພຣະນຄຣຣາຊຄຣືຫ໌ໄດ້ຮູ້ຂ່າວວ່າ ພຣະຜູ້ມີພຣະກາຄທຣົງອນຸຍາຕຄຫບໍດີຈີວຣແກ່ກິກຂຸທັ້ງຫລາຍ ຕ່າງພາກັນຍິນດີຣ່າເຣີງວ່າ ບັດນີ້ແລ ພວກເຮົາຈະຖວາຍທານ ຈະບຳເພັຍບຸຍເພາະພຣະຜູ້ມີພຣະກາຄທຣົງອນຸຍາຕຄຫບໍດີຈີວຣແກ່ກິກຂຸທັ້ງຫລາຍ ພຽງວັນດຽວເທົ່ານັ້ນ ຈີວຣຫລາຍພັນຜືນໄດ້ເກີດຂຶ້ນໃນພຣະນຄຣຣາຊຄຣືຫ໌ ປະຊາຊົນຊາວຊົນບົທໄດ້ຮູ້ຂ່າວວ່າ ພຣະຜູ້ມີພຣະກາຄທຣົງອນຸຍາຕຄຫບໍດີຈີວຣແກ່ກິກຂຸທັ້ງຫລາຍ ຕ່າງພາກັນຍິນດີຣ່າເຣີງວ່າ ບັດນີ້ແລ ພວກເຮົາຈະຖວາຍທານ ຈະບຳເພັຍບຸຍເພາະພຣະຜູ້ມີພຣະກາຄທຣົງອນຸຍາຕຄຫບໍດີຈີວຣແກ່ກິກຂຸທັ້ງຫລາຍ ພຽງວັນດຽວເທົ່ານັ້ນ ຈີວຣຫລາຍພັນຜືນໄດ້ເກີດຂຶ້ນແມ້ໃນຊົນບົທ.

ພຣະພຸທສານຸຌາຕຜ້າປາວາຣແລະຜ້າໂກເຊົາວ໌

[໑໘໗] ກໍໂດຍສມັຍນັ້ນແລ ຜ້າປາວາຣເກີດຂຶ້ນແກ່ສົງຄ໌ ກິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສອນຸຌາຕວ່າ ດູຣາກິກຂຸທັ້ງຫລາຍ ເຮົາອນຸຌາຕຜ້າປາວາຣ

ຜ້າປາວາຣແກມໄຫມ ເກີດຂຶ້ນແກ່ພຣະສົງຄ໌ ກິກຂຸທັ້ງຫລາຍໄດ້ຂາບທູລເຣື່ອງນັ້ນແດ່ພຣະຜູ້ມີ-ພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຌາຕວ່າ ດູຣາກິກຂຸທັ້ງຫລາຍ ເຮົາອນຸຌາຕຜ້າປາວາຣແກມໄຫມ

ຜ້າໂກເຊົາວ໌ເກີດຂຶ້ນແກ່ພຣະສົງຄ໌ ກິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຌາຕວ່າ ດູຣາກິກຂຸທັ້ງຫລາຍ ເຮົາອນຸຌາຕຜ້າໂກເຊົາວ໌.

ປຖົມກາຌວາຣ ຈົບ.

ພຣະພຸທສານຸຌາຕຜ້າກັມພົລ

[໑໘໘] ກໍໂດຍສມັຍນັ້ນແລ ພຣະເຈົ້າກາສີທຣົງພຣະກຣຸຌາສົ່ງຜ້າກັມພົລ ມີຣາຄາເຄິ່ງກາສີ ຄື ຄວຣຣາຄາເຄິ່ງກາສີ ມາພຣະຣາຊທານແກ່ຊີວົກໂກມາຣກັຈຈ໌ ຄັ້ງນັ້ນ ຊີວົກໂກມາຣກັຈຈ໌ຮັບພຣະຣາຊທານຜ້າກັມພົລຣາຄາເຄິ່ງກາສີນັ້ນແລ້ວ ເຂົ້າໄປໃນພຸທສຳນັກ ເມື່ອເຖິງແລ້ວຖວາຍບັງຄົມພຣະຜູ້ມີພຣະກາຄນັ່ງຢູ່ ຌ ທີ່ຄວຣສ່ວນຂ້າງນຶ່ງ ຊີວົກໂກມາຣກັຈຈ໌ນັ່ງເຝົ້າຮຽບຮ້ອຍແລ້ວ ໄດ້ຂາບທູລຄຳນີ້ແດ່ພຣະຜູ້ມີພຣະກາຄວ່າຂ້ານ້ອຍ ຜ້າກັມພົລຂອງຂ້າພຣະພຸທສເຈົ້າຜືນນີ້ຣາຄາເຄິ່ງກາສີ ຄື ຄວຣຣາຄາເຄິ່ງກາສີພຣະເຈົ້າກາສີທຣົງພຣະກຣຸຌາສົ່ງມາພຣະຣາຊທານ ຂໍພຣະຜູ້ມີພຣະກາຄຈົ່ງທຣົງພຣະກຣຸຌາໂປຼດຮັບຜ້າກັມພົລຂອງຂ້າພຣະພຸທສເຈົ້າ ເພື່ອປະໂຍຊນ໌ແລະຄວາມສຸຂແກ່ຂ້າພຣະພຸທສເຈົ້າ ຕລອດກາລນານດ້ວຍເທີ້ນ ຂ້ານ້ອຍ.

ພຣະຜູ້ມີພຣະກາຄທຣົງຮັບຜ້າກັມພົລ ເມື່ອແລ້ວທຣົງຊີ້ແຈງໃຫ້ຊີວົກໂກມາຣກັຈຈ໌ ເຫັນແຈ້ງ ສມາທານອາຈຫາຌ ຮ່າເຣີງ ດ້ວຍສັມມີກຖາ ເມື່ອຊີວົກໂກມາຣກັຈຈ໌ ອັນພຣະຜູ້ມີພຣະກາຄທຣົງຊີ້ແຈງ ໃຫ້ເຫັນແຈ້ງສມາທານ ອາຈຫາຌ ຮ່າເຣີງດ້ວຍສັມມີກຖາແລ້ວລຸກຈາກທີ່ນັ່ງຖວາຍບັງຄົມພຣະຜູ້ມີພຣະກາຄ ທຳປະທັກສິຌກັບໄປ.

ຄັ້ງນັ້ນ ພຣະຜູ້ມີພຣະພາຄທຣົງເຮັດສັມມີກຖາ ໃນເພາະເຫຕຸເປັນເຄົ້າມູລນັ້ນ ໃນເພາະເຫຕຸແຮກເກີດນັ້ນ ແລ້ວຮັບສັ່ງກະພິກຂຸທັ້ງຫລາຍວ່າ ດູຣາພິກຂຸທັ້ງຫລາຍ ເຮົາອນຸຍາຕຜ້າກັມພົລ.

ພຣະພຸທສານຸຍາຕຄຫບໍດີຈີວຣ ໖ ຊນິດ

[໑໓໙] ກໍໂດຍສມັຍນັ້ນແລ ຈີວຣທັ້ງເນື້ອດີແລະບໍ່ດີເກີດຂຶ້ນແກ່ສົງฆ໌ ຄັ້ງນັ້ນ ພິກຂຸທັ້ງຫລາຍໄດ້ມີຄວາມປຣິວິຕົກດັ່ງນີ້ວ່າ ຈີວຣຊນິດໃດນໍແລ ພຣະຜູ້ມີພຣະພາຄທຣົງອນຸຍາຕ ຊນິດໃດບໍ່ທຣົງອນຸຍາຕ ແລ້ວຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ. ພຣະຜູ້ມີພຣະພາຄຕຣັສອນຸຍາຕວ່າ ດູຣາພິກຂຸທັ້ງຫລາຍເຮົາອນຸຍາຕຈີວຣ ໖ ຊນິດ ຄືຈີວຣເຮັດດ້ວຍເປືອກໄມ້ ໑ ເຮັດດ້ວຍຝ້າຍ ໑ ເຮັດດ້ວຍໄຫມ ໑ ເຮັດດ້ວຍຂົນສັຕວ໌ ໑ ເຮັດດ້ວຍປ່ານ ໑ ເຮັດດ້ວຍຂອງເຈືອກັນ ໑

ສມັຍຕໍ່ມາ ພິກຂຸທັ້ງຫລາຍທີ່ຍິນດີຄຫບໍດີຈີວຣນັ້ນພາກັນບໍ່ພໍໃຈ ບໍ່ຍິນດີຜ້າບັງສຸກຸລດ້ວຍຄຶດວ່າພຣະຜູ້ມີພຣະພາຄທຣົງອນຸຍາຕຈີວຣຢ່າງດຽວເທົ່ານັ້ນ ບໍ່ແມ່ນ ໒ ຢ່າງ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີ-ພຣະພາຄ. ພຣະຜູ້ມີພຣະພາຄຕຣັສອນຸຍາຕວ່າ ດູຣາພິກຂຸທັ້ງຫລາຍ ເຮົາອນຸຍາຕໃຫ້ພິກຂຸຜູ້ຍິນດີຄຫບໍດີຈີວຣຍິນດີຜ້າບັງສຸກຸລໄດ້ ແຕ່ເຮົາສັຣເສີນຄວາມສັນໂດษດ້ວຍຈີວຣທັ້ງສອງນັ້ນ.

ເຣື່ອງຂໍສ່ວນແບ່ງ

[໑໔໐] ກໍໂດຍສມັຍນັ້ນແລ ພິກຂຸຫລາຍອົງຄ໌ດ້ວຍກັນ ຍ່າງທາງໄກໄປໃນໂກສົລຊົນບົທ ບາງພວກແວະເຂົ້າສຸສານ ເພື່ອສແວງຫາຜ້າບັງສຸກຸລ ບາງພວກບໍ່ຣໍຄອຍ ບັຣດາພິກຂຸທີ່ແວະເຂົ້າສຸສານເພື່ອສແວງຫາຜ້າບັງສຸກຸລນັ້ນ ຕ່າງກໍໄດ້ຜ້າບັງສຸກຸລ ພວກທີ່ບໍ່ຣໍຄອຍນັ້ນເວົ້າຢ່າງນີ້ວ່າ ອາວຸໂສທັ້ງຫລາຍຂໍທ່ານຈົ່ງໃຫ້ສ່ວນແບ່ງແກ່ພວກຂ້າພເຈົ້າແດ່ ພິກຂຸພວກນັ້ນເວົ້າຢ່າງນີ້ວ່າ ອາວຸໂສທັ້ງຫລາຍ ເຮົາບໍ່ໃຫ້ສ່ວນແບ່ງແກ່ພວກທ່ານ ເພາະເຫຕຸໃດ ພວກທ່ານຈຶ່ງບໍ່ຣໍຄອຍລະ ແລ້ວຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ. ພຣະຜູ້ມີພຣະພາຄຕຣັສວ່າ ດູຣາພິກຂຸທັ້ງຫລາຍ ເຮົາອນຸຍາຕໃຫ້ພິກຂຸທັ້ງຫລາຍ ຜູ້ບໍ່ປັຕຖນາ ບໍ່ຕ້ອງໃຫ້ສ່ວນແບ່ງແກ່ພິກຂຸພວກທີ່ບໍ່ຣໍຄອຍ.

ສມັຍຕໍ່ມາ ພິກຂຸຫລາຍອົງຄ໌ດ້ວຍກັນ ຍ່າງທາງໄກໄປໃນໂກສົລຊົນບົທ ບາງພວກແວະເຂົ້າສຸສານເພື່ອສແວງຫາຜ້າບັງສຸກຸລ ບາງພວກຣໍຄອຍຢູ່ ບັຣດາພວກທີ່ແວະເຂົ້າສຸສານເພື່ອສແວງຫາຜ້າບັງສຸກຸລນັ້ນຕ່າງກໍໄດ້ຜ້າບັງສຸກຸລ ພວກພິກຂຸທີ່ຣໍຄອຍຢູ່ນັ້ນ ເວົ້າຢ່າງນີ້ວ່າ ອາວຸໂສທັ້ງຫລາຍ ຂໍພວກທ່ານຈົ່ງໃຫ້ສ່ວນແບ່ງແກ່ພວກຂ້າພເຈົ້າແດ່ ພິກຂຸພວກນັ້ນເວົ້າຢ່າງນີ້ວ່າ ອາວຸໂສທັ້ງຫລາຍ ພວກຂ້າພເຈົ້າຈະບໍ່ໃຫ້ສ່ວນແບ່ງແກ່ພວກທ່ານ ເພາະເຫຕຸໃດ ພວກທ່ານຈຶ່ງບໍ່ແວະເຂົ້າໄປລະ ແລ້ວຂາບທູລເຣື່ອງນັ້ນແດ່

ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕວ່າ ດູຣາພິກຂຸທັ້ງຫລາຍ ເຮົາອນຸຍາຕໃຫ້ພິກຂຸທັ້ງຫລາຍ ຜູ້ບໍ່ປັຕຖນາ ກໍຕ້ອງໃຫ້ສ່ວນແບ່ງແກ່ພິກຂຸພວກທີ່ຣໍຄອຍ.

ສມັຍຕໍ່ມາ ພິກຂຸຫລາຍອົງຄ໌ດ້ວຍກັນ ຍ່າງທາງໄກໄປໃນໂກສົລຊົນບົທ ບາງພວກແວະເຂົ້າສຸສານກ່ອນ ເພື່ອສແວງຫາຜ້າບັງສຸກຸລ ບາງພວກແວະເຂົ້າທີຫລັງ ບັຣດາພິກຂຸທີ່ແວະເຂົ້າສຸສານກ່ອນເພື່ອສແວງຫາຜ້າບັງສຸກຸລນັ້ນ ຕ່າງກໍໄດ້ຜ້າບັງສຸກຸລ ພວກພິກຂຸທີ່ແວະເຂົ້າທີຫລັງບໍ່ໄດ້ຈຶ່ງເວົ້າຢ່າງນີ້ວ່າ ອາວຸໂສທັ້ງຫລາຍ ຂໍພວກທ່ານຈົ່ງໃຫ້ສ່ວນແບ່ງແກ່ພວກຂ້າພເຈົ້າແດ່ ພິກຂຸເຫລົ່ານັ້ນຕອບຢ່າງນີ້ວ່າ ພວກຂ້າພເຈົ້າຈະບໍ່ໃຫ້ສ່ວນແບ່ງແກ່ພວກທ່ານ ເພາະເຫຕຸໃດ ພວກທ່ານຈຶ່ງແວະເຂົ້າໄປທີຫລັງລະ ແລ້ວຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕວ່າ ດູຣາພິກຂຸທັ້ງຫລາຍ ເຮົາອນຸຍາຕໃຫ້ພິກຂຸທັ້ງຫລາຍຜູ້ບໍ່ປັຕຖນາບໍ່ຕ້ອງໃຫ້ສ່ວນແບ່ງແກ່ພິກຂຸພວກທີ່ແວະເຂົ້າໄປທີຫລັງ.

ສມັຍຕໍ່ມາ ພິກຂຸຫລາຍອົງຄ໌ດ້ວຍກັນ ຍ່າງທາງໄກໄປໃນໂກສົລຊົນບົທ ພິກຂຸເຫລົ່ານັ້ນແວະເຂົ້າສຸສານ ເພື່ອສແວງຫາຜ້າບັງສຸກຸລພ້ອມກັນ ບາງພວກໄດ້ຜ້າບັງສຸກຸລບາງພວກບໍ່ໄດ້ ພວກທີ່ບໍ່ໄດ້ເວົ້າຢ່າງນີ້ວ່າ ອາວຸໂສທັ້ງຫລາຍ ຂໍພວກທ່ານຈົ່ງໃຫ້ສ່ວນແບ່ງແກ່ພວກຂ້າພເຈົ້າແດ່ ພິກຂຸເຫລົ່ານັ້ນຕອບຢ່າງນີ້ວ່າ ອາວຸໂສທັ້ງຫລາຍ ພວກຂ້າພເຈົ້າຈະບໍ່ໃຫ້ສ່ວນແບ່ງແກ່ພວກທ່ານ ເປັນຫຍັງພວກທ່ານຈຶ່ງຫາບໍ່ໄດ້ລະ ແລ້ວຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕວ່າ ດູຣາພິກຂຸທັ້ງຫລາຍ ເຮົາອນຸຍາຕໃຫ້ພິກຂຸທັ້ງຫລາຍບໍ່ປັຕຖນາກໍຕ້ອງໃຫ້ສ່ວນແບ່ງແກ່ພິກຂຸທັ້ງຫລາຍທີ່ແວະເຂົ້າໄປພ້ອມກັນ.

ສມັຍຕໍ່ມາ ພິກຂຸຫລາຍອົງຄ໌ດ້ວຍກັນ ຍ່າງທາງໄກໄປໃນໂກສົລຊົນບົທ ພິກຂຸເຫລົ່ານັ້ນນັດແນະກັນແລ້ວແວະເຂົ້າສຸສານ ເພື່ອສແວງຫາຜ້າບັງສຸກຸລ ບາງພວກໄດ້ຜ້າບັງສຸກຸລ ບາງພວກບໍ່ໄດ້ ພວກທີ່ບໍ່ໄດ້ເວົ້າຢ່າງນີ້ວ່າ ອາວຸໂສທັ້ງຫລາຍ ຂໍພວກທ່ານຈົ່ງໃຫ້ສ່ວນແບ່ງແກ່ພວກຂ້າພເຈົ້າແດ່ ພິກຂຸເຫລົ່ານັ້ນເວົ້າຢ່າງນີ້ວ່າ ອາວຸໂສທັ້ງຫລາຍ ພວກຂ້າພເຈົ້າຈະບໍ່ໃຫ້ສ່ວນແບ່ງແກ່ພວກທ່ານ ເປັນຫຍັງພວກທ່ານຈຶ່ງຫາບໍ່ໄດ້ລະ ແລ້ວຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕວ່າ ດູຣາພິກຂຸທັ້ງຫລາຍ ເຮົາອນຸຍາຕໃຫ້ພິກຂຸທັ້ງຫລາຍບໍ່ປັຕຖນາກໍຕ້ອງໃຫ້ສ່ວນແບ່ງແກ່ພິກຂຸພວກທີ່ນັດແນະກັນໄວ້ແລ້ວແວະເຂົ້າໄປ.

ອົງຄ໌ຂອງເຈົ້າຫນ້າທີ່ຜູ້ຮັບຈີວຣ

[໑໔໑] ກໍໂດຍສມັຍນັ້ນແລ ປະຊາຊົນຖືຈີວຣມາສູ່ອາຮາມ ພວກເຂົາຫາພິກຂຸເຈົ້າຫນ້າທີ່ຮັບບໍ່ໄດ້ຈຶ່ງນຳກັບໄປ ຈີວຣເກີດຂຶ້ນຫນ້ອຍ ພິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີ-ພຣະກາຄຕຣັສອນຸຍາຕວ່າ ດູຣາພິກຂຸທັ້ງຫລາຍ ເຮົາອນຸຍາຕໃຫ້ສົມມຸຕິພິກຂຸຜູ້ປະກອບດ້ວຍອົງຄ໌ ໕ ເປັນເຈົ້າຫນ້າທີ່ຮັບຈີວຣ ຄື

໑. ບໍ່ເຖິງຄວາມລຳອຽງເພາະຄວາມຮັກແພງ
໒. ບໍ່ເຖິງຄວາມລຳອຽງເພາະຄວາມບໍ່ມັກ
໓. ບໍ່ເຖິງຄວາມລຳອຽງເພາະຄວາມງົມງາຍ
໔. ບໍ່ເຖິງຄວາມລຳອຽງເພາະຄວາມຢ້ານ ແລະ
໕. ຮູ້ຈັກຈີວຣຈຳນວນທີ່ຮັບໄວ້ ແລະຍັງບໍ່ໄດ້ຮັບ

ວິຘີສົມມຸຕິ

ດູຣາພິກຂຸທັ້ງຫລາຍ ກໍແລສົງຆ໌ຄວຣສົມມຸຕິຢ່າງນີ້.

ສົງຆ໌ຄວຣຂໍຮ້ອງພິກຂຸກ່ອນ ເມື່ອແລ້ວພິກຂຸຜູ້ສລາດ ຜູ້ສາມາຖ ຄວຣປະກາສໃຫ້ສົງຆ໌ຮູ້ດ້ວຍຍັຕຕິທຸຕິຍກັມມ໌ວາຈາ ວ່າດັ່ງນີ້:-

ກັມມ໌ວາຈາສົມມຸຕິ

ທ່ານຂ້ານ້ອຍ ຂໍສົງຆ໌ຈົ່ງຟັງຂ້າພເຈົ້າ ຖ້າຄວາມພ້ອມພຽງຂອງສົງຆ໌ເຖິງທີ່ແລ້ວ ສົງຆ໌ຄວຣສົມມຸຕິພິກຂຸມີຊື່ນີ້ໃຫ້ເປັນເຈົ້າຫນ້າທີ່ຮັບຈີວຣ ນີ້ເປັນຍັຕຕິ

ທ່ານຂ້ານ້ອຍ ຂໍສົງຆ໌ຈົ່ງຟັງຂ້າພເຈົ້າ ສົງຆ໌ສົມມຸຕິພິກຂຸມີຊື່ນີ້ໃຫ້ເປັນເຈົ້າຫນ້າທີ່ຮັບຈີວຣ ການສົມມຸຕິພິກຂຸມີຊື່ນີ້ໃຫ້ເປັນເຈົ້າຫນ້າທີ່ຮັບຈີວຣ ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເປັນຜູ້ນິ່ງ ບໍ່ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເວົ້າ.

ສົງຆ໌ສົມມຸຕິພິກຂຸມີຊື່ນີ້ໃຫ້ເປັນເຈົ້າຫນ້າທີ່ຮັບຈີວຣແລ້ວ ຊອບແກ່ສົງຆ໌ ເຫຕຸນັ້ນຈຶ່ງນິ່ງ ຂ້າພເຈົ້າທຮົງຄວາມນີ້ໄວ້ດ້ວຍຢ່າງນີ້.

ອົງຄ໌ຂອງເຈົ້າຫນ້າທີ່ຜູ້ເກັບຈີວຣ

[໑໔໔] ກໍໂດຍສມັຍນັ້ນແລ ພິກຂຸທັ້ງຫລາຍຜູ້ເປັນເຈົ້າຫນ້າທີ່ຮັບຈີວຣ ຮັບຈີວຣແລ້ວຖິ້ມໄວ້ໃນທີ່ນັ້ນແຫລະ ແລ້ວຫລີກໄປ ຈີວຣເສັຽຫາຍ ພິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ ພຣະຜູ້ມີພຣະພາຄຕຣັສອນຸຍາຕວ່າ ດູຣາພິກຂຸທັ້ງຫລາຍ ເຮົາອນຸຍາຕໃຫ້ສົມມຸຕິພິກຂຸຜູ້ປະກອບດ້ວຍອົງຄ໌ ໕ ເປັນເຈົ້າຫນ້າທີ່ເກັບຈີວຣ ຄື:-

໑. ບໍ່ເຖິງຄວາມລຳອຽງເພາະຄວາມຮັກແພງ
໒. ບໍ່ເຖິງຄວາມລຳອຽງເພາະຄວາມບໍ່ມັກ
໓. ບໍ່ເຖິງຄວາມລຳອຽງເພາະຄວາມງົມງາຍ
໔. ບໍ່ເຖິງຄວາມລຳອຽງເພາະຄວາມຢ້ານ ແລະ
໕. ຮູ້ຈັກຈີວຣຈຳນວນທີ່ເກັບໄວ້ ແລະຍັງບໍ່ໄດ້ເກັບ

ວິຣີສົມມຸຕິ

ດູຣາກິກຂຸທັ້ງຫລາຍ ກໍແລສົງຄ໌ຄວຣສົມມຸຕິຢ່າງນີ້.

ສົງຄ໌ຄວຣຂໍຮ້ອງກິກຂຸກ່ອນ ເມື່ອແລ້ວກິກຂຸຜູ້ສລາດ ຜູ້ສາມາຖ ຄວຣປະກາສໃຫ້ສົງຄ໌ຮູ້ດ້ວຍລັຕຕິທຸຕິຍກັມມ໌ວາຈາ ວ່າດັ່ງນີ້:-

ກັມມ໌ວາຈາສົມມຸຕິ

ທ່ານຂ້ານ້ອຍ ຂໍສົງຄ໌ຈົ່ງຟັງຂ້າພເຈົ້າ ຖ້າຄວາມພ້ອມພຽງຂອງສົງຄ໌ເຖິງທີ່ແລ້ວ ສົງຄ໌ຄວຣສົມມຸຕິກິກຂຸມີຊື່ນີ້ໃຫ້ເປັນເຈົ້າຫນ້າທີ່ເກັບຈີວຣ ນີ້ເປັນລັຕຕິ.

ທ່ານຂ້ານ້ອຍ ຂໍສົງຄ໌ຈົ່ງຟັງຂ້າພເຈົ້າ ສົງຄ໌ສົມມຸຕິກິກຂຸມີຊື່ນີ້ໃຫ້ເປັນເຈົ້າຫນ້າທີ່ເກັບຈີວຣ ການສົມມຸຕິກິກຂຸມີຊື່ນີ້ໃຫ້ເປັນເຈົ້າຫນ້າທີ່ເກັບຈີວຣ ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເປັນຜູ້ນິ່ງ ບໍ່ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເວົ້າ.

ສົງຄ໌ສົມມຸຕິກິກຂຸມີຊື່ນີ້ ໃຫ້ເປັນເຈົ້າຫນ້າທີ່ເກັບຈີວຣ ຊອບແກ່ສົງຄ໌ ເຫຕຸນັ້ນຈຶ່ງນິ່ງ ຂ້າພເຈົ້າຫຣົງຄວາມນີ້ໄວ້ດ້ວຍຢ່າງນີ້.

ພຣະພຸທສານຸຍາຕເຮືອນຄັງ

[໑໔໓] ກໍໂດຍສມັຍນັ້ນແລ ກິກຂຸທັ້ງຫລາຍຜູ້ເປັນເຈົ້າຫນ້າທີ່ເກັບຈີວຣ ໄດ້ເກັບຈີວຣໄວ້ໃນມັຕທັປແດ່ ທີ່ໂຄນໄມ້ແດ່ ທີ່ຊາຍຄາແດ່ ທີ່ກາງແຈ້ງແດ່ ຈີວຣຖືກຫນູກັດແດ່ ຖືກປລວກກິນແດ່ ກິກຂຸທັ້ງຫລາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕວ່າ ດູຣາກິກຂຸທັ້ງຫລາຍ ເຮົາອນຸຍາຕໃຫ້ສົມມຸຕິ ວິຫາຣ ພານ ເຮືອນຊັ້ນ ເຮືອນໂລ້ນ ຫຣືອຖ້ຳ ທີ່ສົງຄ໌ຈຳຫມາຍໃຫ້ເປັນເຮືອນຄັງ.

ວິທີສົມມຸຕິ

ດູຣາພິກຂຸທັ້ງຫລາຍ ກໍແລ ສົງຆ໌ຄວຣສົມມຸຕິຢ່າງນີ້ ຄື ພິກຂຸຜູ້ຈລາດ ຜູ້ສາມາຖ ຄວຣປະກາສ ໃຫ້ສົງຆ໌ຮູ້ດ້ວຍຍັດຕິທຸຕິຍກັມມ໌ວາຈາ ວ່າດັ່ງນີ້:-

ກັມມ໌ວາຈາສົມມຸຕິ

ທ່ານຂ້ານ້ອຍ ຂໍສົງຆ໌ຈົ່ງຟັງຂ້າພເຈົ້າ ຖ້າຄວາມພ້ອມພຽງຂອງສົງຆ໌ເຖິງທີ່ແລ້ວ ສົງຆ໌ຄວຣ ສົມມຸຕິວິຫາຣມີຊື່ນີ້ໃຫ້ເປັນເຮືອນຄັງ ນີ້ເປັນຍັດຕິ.

ທ່ານຂ້ານ້ອຍ ຂໍສົງຆ໌ຈົ່ງຟັງຂ້າພເຈົ້າ ສົງຆ໌ສົມມຸຕິວິຫາຣມີຊື່ນີ້ໃຫ້ເປັນເຮືອນຄັງ ການ ສົມມຸຕິວິຫາຣມີຊື່ນີ້ໃຫ້ເປັນເຮືອນຄັງ ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເປັນຜູ້ນິ່ງ ບໍ່ຊອບແກ່ ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເວົ້າ

ສົງຆ໌ສົມມຸຕິວິຫາຣມີຊື່ນີ້ ໃຫ້ເປັນເຮືອນຄັງແລ້ວ ຊອບແກ່ສົງຆ໌ ເຫຕຸນັ້ນຈຶ່ງນິ່ງ ຂ້າພເຈົ້າ ທຣົງຄວາມນີ້ໄວ້ດ້ວຍຢ່າງນີ້.

ອົງຄ໌ຂອງເຈົ້າຫນ້າທີ່ຜູ້ຮັກษາເຮືອນຄັງ

[໑໔໔] ກໍໂດຍສມັຍນັ້ນແລ ຈີວຣໃນເຮືອນຄັງຂອງສົງຆ໌ ບໍ່ມີຄົນເຝົ້າ ພິກຂຸທັ້ງຫລາຍຂາບທູລ ເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ. ພຣະຜູ້ມີພຣະພາຄຕຣັສອນຸຍາຕວ່າ ດູຣາພິກຂຸທັ້ງຫລາຍ ເຮົາອນຸຍາຕໃຫ້ ສົມມຸຕິພິກຂຸຜູ້ປະກອບດ້ວຍອົງຄ໌ ໕ ເປັນເຈົ້າຫນ້າທີ່ຮັກษາເຮືອນຄັງ ຄື:-

໑. ບໍ່ເຖິງຄວາມລຳອຽງເພາະຄວາມຮັກແພງ

໒. ບໍ່ເຖິງຄວາມລຳອຽງເພາະຄວາມບໍ່ມັກ

໓. ບໍ່ເຖິງຄວາມລຳອຽງເພາະຄວາມງົມງາຍ

໔. ບໍ່ເຖິງຄວາມລຳອຽງເພາະຄວາມຢ້ານ ແລະ

໕. ຮູ້ຈັກຈີວຣຈຳນວນທີ່ຮັກษາ ແລະຍັງບໍ່ໄດ້ຮັກษາ

ວິທີສົມມຸຕິ

ດູຣາພິກຂຸທັ້ງຫລາຍ ກໍແລສົງຆ໌ຄວຣສົມມຸຕິຢ່າງນີ້

ສົງຆ໌ຄວຣຂໍຮ້ອງພິກຂຸກ່ອນ ເມື່ອແລ້ວພິກຂຸຜູ້ຈລາດ ຜູ້ສາມາຖ ຄວຣປະກາສໃຫ້ສົງຆ໌ຮູ້ ດ້ວຍຍັດຕິທຸຕິຍກັມມ໌ວາຈາ ວ່າດັ່ງນີ້:-

ກັມມ໌ວາຈາສົມມຸຕິ

ທ່ານຂ້ານ້ອຍ ຂໍສົງຄ໌ຈົ່ງຟັງຂ້າພເຈົ້າ ຖ້າຄວາມພ້ອມພຽງຂອງສົງຄ໌ເຖິງທີ່ແລ້ວ ສົງຄ໌ຄວຣສົມມຸຕິກິກຂຸມີຊື່ນີ້ໃຫ້ເປັນເຈົ້າຫນ້າທີ່ຮັກສາເຮືອນຄັງ ນີ້ເປັນຍັດຕິ.

ທ່ານຂ້ານ້ອຍ ຂໍສົງຄ໌ຈົ່ງຟັງຂ້າພເຈົ້າ ສົງຄ໌ສົມມຸຕິກິກຂຸມີຊື່ນີ້ໃຫ້ເປັນເຈົ້າຫນ້າທີ່ຮັກສາເຮືອນຄັງ ການສົມມຸຕິກິກຂຸມີຊື່ນີ້ໃຫ້ເປັນເຈົ້າຫນ້າທີ່ຮັກສາເຮືອນຄັງ ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເປັນຜູ້ນິ່ງ ບໍ່ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເວົ້າ.

ສົງຄ໌ສົມມຸຕິ ກິກຂຸມີຊື່ນີ້ ໃຫ້ເປັນເຈົ້າຫນ້າທີ່ຮັກສາເຮືອນຄັງແລ້ວ ຊອບແກ່ສົງຄ໌ ເຫຕຸນັ້ນຈຶ່ງນິ່ງ ຂ້າພເຈົ້າທຣົງຄວາມນີ້ໄວ້ດ້ວຍຢ່າງນີ້.

ພຣະພຸທສບັຍຍັດຕິຫ້າມຍ້າຍເຈົ້າຫນ້າທີ່ຮັກສາເຮືອນຄັງ

[໑໘໕] ກໍໂດຍສມັຍນັ້ນແລ ພຣະວັພພັຄຄີຍ໌ຍ້າຍເຈົ້າຫນ້າທີ່ຮັກສາເຮືອນຄັງ ກິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສຫ້າມວ່າ ດູຣາກິກຂຸທັ້ງຫລາຍ ກິກຂຸບໍ່ຄວຣຍ້າຍເຈົ້າຫນ້າທີ່ຜູ້ຮັກສາເຮືອນຄັງ ອົງຄ໌ໃດຍ້າຍ ຕ້ອງອາບັຕິທຸກກົຍ.

ອົງຄ໌ຂອງເຈົ້າຫນ້າທີ່ຜູ້ແຈກຈີວຣ

[໑໘໖] ກໍໂດຍສມັຍນັ້ນແລ ຈີວຣໃນເຮືອນຄັງຂອງສົງຄ໌ມີຫຼາຍ ກິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕວ່າ ດູຣາກິກຂຸທັ້ງຫລາຍ ເຮົາອນຸຍາຕໃຫ້ສົງຄ໌ຜູ້ຢູ່ພ້ອມຫນ້າແຈກ.

ສມັຍຕໍ່ມາ ສົງຄ໌ທັ້ງປວງກຳລັງແຈກຈີວຣໄດ້ສົ່ງສຽງອື້ອຶງ ກິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສອນຸຍາຕວ່າ ດູຣາກິກຂຸທັ້ງຫລາຍ ເຮົາອນຸຍາຕໃຫ້ສົມມຸຕິກິກຂຸຜູ້ປະກອບດ້ວຍອົງຄ໌ ໕ ເປັນເຈົ້າຫນ້າທີ່ແຈກຈີວຣ ຄື:-

໑. ບໍ່ເຖິງຄວາມລຳອຽງເພາະຄວາມຮັກແພງ
໒. ບໍ່ເຖິງຄວາມລຳອຽງເພາະຄວາມບໍ່ມັກ
໓. ບໍ່ເຖິງຄວາມລຳອຽງເພາະຄວາມງົມງາຍ
໔. ບໍ່ເຖິງຄວາມລຳອຽງເພາະຄວາມຢ້ານ ແລະ
໕. ຮູ້ຈັກຈີວຣຈຳນວນທີ່ແຈກແລ້ວ ແລະຍັງບໍ່ໄດ້ແຈກ

ວິທີສົມມຸຕິ

ດູຣາພິກຂຸທັ້ງຫລາຍ ກໍແລ ສົງຜ໌ຄວຣສົມມຸຕິຢ່າງນີ້

ສົງຜ໌ຄວຣຂໍຮ້ອງພິກຂຸກ່ອນ ເມື່ອແລ້ວພິກຂຸຜູ້ລລາດ ຜູ້ສາມາຖ ຄວຣປະກາສໃຫ້ສົງຜ໌ຮູ້ດ້ວຍຍັຕຕິທຸຕິຍກັມມ໌ວາຈາ ວ່າດັ່ງນີ້:-

ກັມມ໌ວາຈາສົມມຸຕິ

ທ່ານຂ້ານ້ອຍ ຂໍສົງຜ໌ຈົ່ງຟັງຂ້າພເຈົ້າ ຖ້າຄວາມພ້ອມພຽງຂອງສົງຜ໌ເຖິງທີ່ ແລ້ວສົງຜ໌ຄວຣສົມມຸຕິພິກຂຸຊື່ນີ້ໃຫ້ເປັນເຈົ້າຫນ້າທີ່ແຈກຈີວຣ ນີ້ເປັນຍັຕຕິ.

ທ່ານຂ້ານ້ອຍ ຂໍສົງຜ໌ຈົ່ງຟັງຂ້າພເຈົ້າ ສົງຜ໌ສົມມຸຕິພິກຂຸມີຊື່ນີ້ໃຫ້ເປັນເຈົ້າຫນ້າທີ່ແຈກຈີວຣ ການສົມມຸຕິພິກຂຸມີຊື່ນີ້ເປັນເຈົ້າຫນ້າທີ່ແຈກຈີວຣ ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເປັນຜູ້ນິ່ງ ບໍ່ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເວົ້າ.

ສົງຜ໌ສົມມຸຕິພິກຂຸຊື່ນີ້ໃຫ້ເປັນເຈົ້າຫນ້າທີ່ແຈກຈີວຣແລ້ວ ຊອບແກ່ສົງຜ໌ ເຫຕຸນັ້ນຈຶ່ງນິ່ງ ຂ້າພເຈົ້າທຮົງຄວາມນີ້ໄວ້ດ້ວຍຢ່າງນີ້

ຄັ້ງນັ້ນ ພິກຂຸທັ້ງຫລາຍຜູ້ເປັນເຈົ້າຫນ້າທີ່ແຈກຈີວຣ ໄດ້ມີຄວາມປຣິວິຕົກດັ່ງນີ້ວ່າ ຄວຣແຈກຈີວຣຢ່າງໃດນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ. ພຣະຜູ້ມີພຣະພາຄຕຣັສແນະວິທີແຈກວ່າ ດູຣາພິກຂຸທັ້ງຫລາຍ ເຮົາອນຸຍາຕໃຫ້ຄັດເລືອກຜ້າກ່ອນ ແລ້ວຕີຣາຄາຄຶດຖົວກັນ ນັບພິກຂຸ ຜູກຜ້າເປັນມັດໆ ແລ້ວຕັ້ງສ່ວນຈີວຣໄວ້.

ຄັ້ງນັ້ນ ພິກຂຸທັ້ງຫລາຍຜູ້ເປັນເຈົ້າຫນ້າທີ່ແຈກຈີວຣ ໄດ້ມີຄວາມປຣິວິຕົກວ່າ ຄວຣໃຫ້ສ່ວນຈີວຣແກ່ສາມເຕຣຢ່າງໃດນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ. ພຣະຜູ້ມີພຣະພາຄຕຣັສອນຸຍາຕວ່າ ດູຣາພິກຂຸທັ້ງຫລາຍ ເຮົາອນຸຍາຕໃຫ້ມອບສ່ວນເຄິ່ງນຶ່ງໃຫ້ແກ່ພວກສາມເຕຣ.

ສມັຍຕໍ່ມາ ພິກຂຸອົງຄ໌ນຶ່ງປັຕຖນາຈະຟ້າວເດີນທາງໄປກັບສ່ວນຂອງຕົນ ພິກຂຸທັ້ງຫລາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ. ພຣະຜູ້ມີພຣະພາຄຕຣັສອນຸຍາຕວ່າ ດູຣາພິກຂຸທັ້ງຫລາຍ ເຮົາອນຸຍາຕໃຫ້ມອບສ່ວນຂອງຕົນແກ່ພິກຂຸຜູ້ຟ້າວເດີນທາງໄປ.

ສມັຍຕໍ່ມາ ກິກຂຸອົງຄ໌ນຶ່ງ ປັຕຖນາຈະຟ້າວເດີນທາງໄປກັບສ່ວນພິເສษ ກິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕວ່າ ດູຣາກິກຂຸທັ້ງຫລາຍ ເຮົາອນຸຍາຕໃຫ້ມອບສ່ວນພິເສษໃນເມື່ອໃຫ້ສິ່ງທົດແທນສົມກັນ.

ຄັ້ງນັ້ນ ກິກຂຸເຈົ້າຫນ້າທີ່ແຈກຈີວຣຄຶດວ່າ ຄວຣໃຫ້ສ່ວນຈີວຣຢ່າງໃດນໍ ຄື ຄວຣໃຫ້ຕາມລຳດັບກິກຂຸຜູ້ມາ ຫຼືຄວຣໃຫ້ຕາມລຳດັບກິກຂຸຜູ້ແກ່ພັຣษາ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕວ່າ ດູຣາກິກຂຸທັ້ງຫລາຍ ເຮົາອນຸຍາຕໃຫ້ສົມຍອມສ່ວນທີ່ບົກພ່ອງ ແລ້ວທຳການຈັບສລາກ.

ພຣະພຸທສານຸຍາຕນ້ຳຍ້ອມເປັນຕົ້ນ

[໑໔໗] ກໍໂດຍສມັຍນັ້ນແລ ກິກຂຸທັ້ງຫລາຍຍ້ອມຈີວຣດ້ວຍໂຄມັຍແດ່ ດ້ວຍດິນແດງແດ່ ຈີວຣມີສີຄລ້ຳ ກິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕວ່າ ດູຣາກິກຂຸທັ້ງຫລາຍ ເຮົາອນຸຍາຕນ້ຳຍ້ອມ ໖ ຢ່າງ ຄື ນ້ຳຍ້ອມເກີດແຕ່ຮາກຫຼືເຫງົ້າ ໑ ນ້ຳຍ້ອມເກີດແຕ່ຕົ້ນໄມ້ ໑ ນ້ຳຍ້ອມເກີດແຕ່ເປືອກໄມ້ ໑ ນ້ຳຍ້ອມເກີດແຕ່ໃບໄມ້ ໑ ນ້ຳຍ້ອມເກີດແຕ່ດອກໄມ້ ໑ ນ້ຳຍ້ອມເກີດແຕ່ຜົລໄມ້ ໑.

ສມັຍຕໍ່ມາ ກິກຂຸທັ້ງຫລາຍຍ້ອມຈີວຣດ້ວຍນ້ຳຍ້ອມທີ່ເຢັນ ຈີວຣມີກິ່ນສາບ ກິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕວ່າ ດູຣາກິກຂຸທັ້ງຫລາຍ ເຮົາອນຸຍາຕໝໍ້ຍ້ອມຂນາດນ້ອຍເພື່ອຕົ້ມນ້ຳຍ້ອມ.

ນ້ຳຍ້ອມລົ້ນໝໍ້ ກິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕວ່າ ດູຣາກິກຂຸທັ້ງຫລາຍ ເຮົາອນຸຍາຕໃຫ້ຜູກຕະນ່າງກັນລົ້ນ.

ສມັຍຕໍ່ມາ ກິກຂຸທັ້ງຫລາຍບໍ່ຮູ້ວ່ານ້ຳຍ້ອມຕົ້ມສຸກແລ້ວ ຫຼືຍັງບໍ່ສຸກ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕວ່າ ດູຣາກິກຂຸທັ້ງຫລາຍ ເຮົາອນຸຍາຕໃຫ້ຫຍົດຫຍາດນ້ຳລົງໃນນ້ຳ ຫຼືຫລັງເລັບ.

ສມັຍຕໍ່ມາ ກິກຂຸທັ້ງຫລາຍຍົກໝໍ້ນ້ຳຍ້ອມລົງ ເຮັດໝໍ້ກິ້ງໄປ ໝໍ້ແຕກ ກິກຂຸທັ້ງຫລາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕວ່າ ດູຣາກິກຂຸທັ້ງຫລາຍ ເຮົາອນຸຍາຕກະບວຍຕັກນ້ຳຍ້ອມອັນເປັນການຊນະມີດ້າມ.

ສມັຍຕໍ່ມາ ກິກຂຸທັ້ງຫລາຍບໍ່ມີກາຊນະສຳຫຼັບຍ້ອມ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕວ່າ ດູຮາກິກຂຸທັ້ງຫລາຍ ເຮົາອນຸຍາຕອ່າງສຳຫຼັບຍ້ອມ ໝໍ້ສຳຫຼັບຍ້ອມ.

ສມັຍຕໍ່ມາ ກິກຂຸທັ້ງຫລາຍຊັກຈີວຣໃນຖາດແດ່ ໃນບາຕຣ໌ແດ່ ຈີວຣຂາດປຣິ ກິກຂຸທັ້ງຫລາຍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕວ່າ ດູຮາກິກຂຸທັ້ງຫລາຍ ເຮົາອນຸຍາຕຮາງສຳຫຼັບຍ້ອມ.

ສມັຍຕໍ່ມາ ກິກຂຸທັ້ງຫລາຍຕາກຈີວຣເທິງພື້ນດິນ ຈີວຣເປື້ອນຝຸ່ນ ກິກຂຸທັ້ງຫລາຍຈຶ່ງຂາບທູລ ເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕວ່າ ດູຮາກິກຂຸທັ້ງຫລາຍ ເຮົາອນຸຍາຕເຄື່ອງຮອງເຮັດດ້ວຍຫຍ້າ.

ເຄື່ອງຮອງເຮັດດ້ວຍຫຍ້າຖືກປລວກກັດ ກິກຂຸທັ້ງຫລາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕວ່າ ດູຮາກິກຂຸທັ້ງຫລາຍ ເຮົາອນຸຍາຮາວຈີວຣ ສາຍຣະດຽງ.

ກິກຂຸທັ້ງຫລາຍຕາກຈີວຣຕອນກາງ ນ້ຳຍ້ອມຫຍົດອອກທັ້ງສອງຊາຍ ກິກຂຸທັ້ງຫລາຍຂາບທູລ ເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕວ່າ ດູຮາກິກຂຸທັ້ງຫລາຍ ເຮົາອນຸຍາຕໃຫ້ຜູກ ມຸມຈີວຣໄວ້.

ມຸມຈີວຣຊຳຣຸດ ກິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສ ອນຸຍາຕວ່າ ດູຮາກິກຂຸທັ້ງຫລາຍ ເຮົາອນຸຍາຕດ້າຍຜູກມຸມຈີວຣ.

ນ້ຳຍ້ອມຫຍົດອອກຊາຍດຽວ ກິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີ ພຣະກາຄຕຣັສອນຸຍາຕວ່າ ດູຮາກິກຂຸທັ້ງຫລາຍ ເຮົາອນຸຍາຕໃຫ້ຍ້ອມຈີວຣພິກກັບໄປກັບມາ ແຕ່ເມື່ອ ຫຍາດນ້ຳຍັງຫຍົດບໍ່ຂາດສາຍ ຢ່າຫລີກໄປ.

ສມັຍຕໍ່ມາ ຈີວຣເປັນຜ້າເນື້ອແຂງ ກິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕວ່າ ດູຮາກິກຂຸທັ້ງຫລາຍ ເຮົາອນຸຍາຕໃຫ້ຈຸ່ມລົງໃນນ້ຳ.

ສມັຍຕໍ່ມາ ຈີວຣເປັນຜ້າກະດ້າງ ກິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕວ່າ ດູຮາກິກຂຸທັ້ງຫລາຍ ເຮົາອນຸຍາຕໃຫ້ທຸບດ້ວຍຝ່າມື.

ພຣະພຸທສບັນຍັຕິຫ້າມໃຊ້ຈີວຣທີ່ບໍ່ຕັດ

[໑໔໗] ກໍໂດຍສມັຍນັ້ນແລ ພຣະຈັພພັຄຄີຍ໌ໃຊ້ຈີວຣທີ່ບໍ່ໄດ້ຕັດ ໃຊ້ຈີວຣທີ່ຍ້ອມນ້ຳຝາດ ມີສີເຫມືອນງາຊ້າງ ປະຊາຊົນຈຶ່ງພາກັນເພ່ງໂທສ ຕິຕຽນ ໂພນທະນາ ກິກຂຸທັ້ງຫລາຍຂາບທູລ

ເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສຫ້າມວ່າ ດູຣາກິກຂຸທັ້ງຫລາຍ ກິກຂຸບໍ່ຄວຣໃຊ້ຈີວຣທີ່ບໍ່ໄດ້ຕັດ ອົງຄ໌ໃດໃຊ້ ຕ້ອງອາບັຕິທຸກກົຍ.

ພຣະພຸທສບັລຊາໃຫ້ແຕ່ງຈີວຣ

[໑໘໙] ຄັ້ງນັ້ນ ພຣະຜູ້ມີພຣະກາຄປະທັບຢູ່ໃນພຣະນຄຣຣາຊຄຣິຫ໌ຕາມພຣະພຸທສາກິຣົມຍ໌ ແລ້ວສເດັຈພຣະພຸທສດຳເນີນໄປທາງທັກຂິຕາຄິຣີຊົນບົທ ພຣະອົງຄ໌ທອດພຣະເນຕຣ໌ເຫັນນາຂອງຊາວມຄສ ຊຶ່ງເຂົາພູນດິນຂຶ້ນເປັນຄັນນາສີ່ຫຼ່ຽມ ພູນຄັນນາຍາວທັ້ງດ້ານຍາວແລະດ້ານກວ້າງ ພູນຄັນນາຄັ່ນໃນຣະຫວ່າງໆ ດ້ວຍຄັນນາສັ້ນໆ ພູນຄັນນາເຊື່ອມກັນດັ່ງທາງ ໔ ແຍກ ຕາມທີ່ຊຶ່ງຄັນນາກັບຄັນນາຜ່ານຕັດກັນໄປ ເມື່ອແລ້ວ ຣັບສັ່ງກັບທ່ານພຣະອານົນທ໌ວ່າ ອານົນທ໌ທ່ານເຫັນນາຂອງຊາວມຄສ ຊຶ່ງເຂົາພູນດິນຂຶ້ນເປັນຄັນນາສີ່ຫຼ່ຽມພູນຄັນນາຍາວທັ້ງດ້ານຍາວແລະດ້ານກວ້າງ ພູນຄັນນາຄັ່ນໃນຣະຫວ່າງໆ ດ້ວຍຄັນນາສັ້ນໆ ພູນຄັນນາເຊື່ອມກັນທາງ ໔ ແຍກ ຕາມທີ່ຊຶ່ງຄັນນາກັບຄັນນາຜ່ານຕັດກັນໄປຫຼືບໍ່?

ອາ. ເຫັນຕາມພຣະພຸທສດຳຣັສ ຂ້ານ້ອຍ.

ກ. ທ່ານສາມາຖແຕ່ງຈີວຣຂອງກິກຂຸທັ້ງຫລາຍໃຫ້ມີຮູປຢ່າງນັ້ນໄດ້ບໍ່ລະ?

ອາ. ສາມາຖ ຂ້ານ້ອຍ.

ຄັ້ງນັ້ນ ພຣະຜູ້ມີພຣະກາຄປະທັບຢູ່ ໓ ທັກຂິຕາຄິຣີຊົນບົທຕາມພຣະພຸທສາກິຣົມຍ໌ ແລ້ວສເດັຈກັບມາພຣະນຄຣຣາຊຄຣິຫ໌ອີກ ຄັ້ງນັ້ນທ່ານພຣະອານົນທ໌ແຕ່ງຈີວຣສຳຫຼັບກິກຂຸຫລາຍອົງຄ໌ ເມື່ອແລ້ວເຂົ້າໄປເຝົ້າພຣະຜູ້ມີພຣະກາຄໄດ້ຂາບທູລວ່າ ຂໍພອຣະຜູ້ມີພຣະກາຄຈົ່ງທຣົງທອດພຣະເນຕຣ໌ຈີວຣທີ່ຂ້າພຣະ-ພຸທສເຈົ້າແຕ່ງແລ້ວ ຂ້ານ້ອຍ.

ຕຣັສສັຣເສີຣທ່ານພຣະອານົນທ໌

ລຳດັບນັ້ນ ພຣະຜູ້ມີພຣະກາຄທຣົງເຮັດສັມມີກຖາ ໃນເພາະເຫຕຸເປັນເຄົ້າມູລນັ້ນ ໃນເພາະເຫຕຸແຮກເກີດນັ້ນ ແລ້ວຣັບສັ່ງກະກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ອານົນທ໌ເປັນຄົນສລາດ ອານົນທ໌ໄດ້ຊາບຊຶ້ງເຖິງເນື້ອຄວາມແຫ່ງຖ້ອຍຄຳທີ່ເຮົາກ່າວຢໍ່ໄດ້ໂດຍກວ້າງຂວາງ ອານົນທ໌ທຳຜ້າກຸສີກໍໄດ້ ທຳຜ້າຊື່ອັທຒກຸສີກໍໄດ້ ທຳຜ້າຊື່ມົຕຫົລກໍໄດ້ ທຳຜ້າຊື່ອັທຒມົຕຫົລກໍໄດ້ ທຳຜ້າຊື່ວິວັຕຕະກໍໄດ້ ທຳຜ້າຊື່ອນຸວິວັຕຕະກໍໄດ້ ທຳຜ້າຊື່ຄີເວີຍຍະກະກໍໄດ້ ທຳຜ້າຊື່ຊັງເຜີຍຍະກະກໍໄດ້ ແລະທຳຜ້າຊື່ພາຫັນຕະກໍໄດ້ ຈີວຣຈະເປັນຜ້າທີ່ຕັດແລ້ວ ເສົ້າຫມອງດ້ວຍສັສຕຣາ ສົມຄວຣແກ່ສມຕະ ແລະພວກສັຕຣູບໍ່ຕ້ອງການ

ດູຣາກິກຂຸທັ້ງຫລາຍ ເຮົາອນຸຍາຕຜ້າສັງຆາຕິຕັດ ຜ້າອຸຕຣາສົງຄ໌ຕັດ ຜ້າອັນຕຣວາສົກຕັດ.

ສເດັຈພຣະພຸທສດຳເນີນທາງໄກ

[໑໕໐] ຄັ້ງນັ້ນ ພຣະຜູ້ມີພຣະກາຄປະທັບຢູ່ ຓ ພຣະນຄຣຣາຊຄຣືຫ໌ຕາມພຣະພຸທສາກີຣົມຍ໌ ແລ້ວສເດັຈພຣະພຸທສດຳເນີນໄປທາງພຣະນຄຣເວສາລີ ພຣະອົງຄ໌ສເດັຈພຣະພຸທສດຳເນີນທາງໄກຣະຫວ່າງ ພຣະນຄຣຣາຊຄຣືຫ໌ ແລະຣະຫວ່າງພຣະນຄຣເວສາລີຕໍ່ກັນ ໄດ້ທອດພຣະເນຕຣ໌ເຫັນກິກຂຸຫລາຍອົງຄ໌ ຫອບຜ້າ ພະຣຸງພະຣັງ ບ້າງກໍທູນຫໍ່ຜ້າທີ່ພັບດັ່ງຟູກຂຶ້ນເທິງສີຣະ ບ້າງກໍແບກຂຶ້ນບ່າ ບ້າງກໍເກັ່ງໄວ້ທີ່ແອວ ຍ່າງມາຢູ່ ເມື່ອແລ້ວ ໄດ້ທຣົງດຳຣິວ່າ ໂມຄບຸຣຸຫເຫລົ່ານີ້ ວຽນມາເພື່ອຄວາມມັກມາກໃນຈີວຣໄວແທ້ ເຮົາຈະຕ້ອງກັ້ນເຂຕ ຕັ້ງກົຝ ໃນເຣື່ອງຜ້າແກ່ກິກຂຸທັ້ງຫລາຍ ເມື່ອພຣະຜູ້ມີພຣະກາຄສເດັຈພຣະພຸທສດຳເນີນຜ່ານ ຣະຍະທາງໂດຍລຳດັບ ເຖິງພຣະນຄຣເວສາລີ ຮູ້ວ່າ ພຣະຜູ້ມີພຣະກາຄປະທັບຢູ່ ຓ ໂຄຕມກເຈດີຍ໌ ເຂຕພຣະນຄຣເວສາລີນັ້ນ.

ກໍໂດຍສມັຍນັ້ນແລ ພຣະຜູ້ມີພຣະກາຄທຣົງຜ້າຈີວຣຜືນດຽວ ປະທັບນັ່ງຢູ່ກາງແຈ້ງຕອນ ກາງຄືນ ຂຓະນ້ຳຄ້າງຕົກ ໃນຣາຕຣີເຫມັນຕ໌ຣະດູ ກຳລັງຫນາວ ຕັ້ງຢູ່ຣະຫວ່າງເດືອນ ໓ ກັບເດືອນ ໔ ຕໍ່ກັນ ຄວາມຫນາວບໍ່ໄດ້ມີແກ່ພຣະຜູ້ມີພຣະກາຄ ເມື່ອປຖົມຍາມຜ່ານໄປແລ້ວ ຄວາມຫນາວຈຶ່ງໄດ້ມີແກ່ ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຈຶ່ງທຣົງຫົ່ມຈີວຣຜືນທີ່ສອງ ຄວາມຫນາວບໍ່ໄດ້ມີແກ່ພຣະຜູ້ມີພຣະກາຄ ເມື່ອມັຊຊິມຍາມຜ່ານໄປແລ້ວ ຄວາມຫນາວຈຶ່ງໄດ້ມີແກ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຈຶ່ງທຣົງຫົ່ມຈີວຣ ຜືນທີ່ສາມ ຄວາມຫນາວບໍ່ໄດ້ມີແກ່ພຣະຜູ້ມີພຣະກາຄ ເມື່ອປັຈສິມຍາມຜ່ານໄປແລ້ວ ຂຓະຣຸ່ງອຣຸຓແຫ່ງ ຣາຕຣີອັນເປັນເບື້ອງຕົ້ນແຫ່ງຄວາມສົດຊື່ນ ຄວາມຫນາວໄດ້ມີແກ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຈຶ່ງ ທຣົງຫົ່ມຈີວຣຜືນທີ່ສີ່ ຄວາມຫນາວບໍ່ໄດ້ມີແກ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄໄດ້ທຣົງພຣະດຳຣິວ່າ ກຸລບຸຕຣ໌ໃນສັມມ໌ວິນັຍນີ້ ທີ່ເປັນຄົນຂີ້ຫນາວ ຢ້ານຕໍ່ຄວາມຫນາວ ອາຈດຳຣົງຊີວິຕຢູ່ໄດ້ດ້ວຍຜ້າສາມຜືນ ແນວໃດນໍເຮົາຈະຕ້ອງກັ້ນເຂຕ ຕັ້ງກົຝ ໃນເຣື່ອງຜ້າແກ່ກິກຂຸທັ້ງຫລາຍ ເຮົາຄວຣອນຸຍາຕຜ້າສາມຜືນ.

ພຣະພຸທສານຸຍາຕໄຕຣຈີວຣ

ຄັ້ງນັ້ນ ພຣະຜູ້ມີພຣະກາຄທຣົງເຮັດສັມມີກຖາໃນເພາະເຫຕຸເປັນເຄົ້າມູລນັ້ນ ໃນເພາະເຫຕຸແຮກ ເກີດນັ້ນ ແລ້ວຮັບສັ່ງກະກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ເຮົາເດີນທາງໄກໃນຣະຫວ່າງພຣະນຄຣ ຣາຊຄຣືຫ໌ ແລະຣະຫວ່າງພຣະນຄຣເວສາລີຕໍ່ກັນ ໄດ້ເຫັນກິກຂຸຫລາຍອົງຄ໌ໃນສັມມ໌ວິນັຍນີ້ ຫອບຜ້າພະຣຸງພະຣັງ ບ້າງກໍທູນຫໍ່ຜ້າທີ່ພັບດັ່ງຟູກຂຶ້ນເທິງສຣີຣະ ບ້າງກໍແບກຂຶ້ນບ່າ ບ້າງກໍເກັ່ງໄວ້ທີ່ແອວ ຍ່າງມາຢູ່

ເມື່ອແລ້ວເຮົາໄດ້ດຳຣິວ່າ ໂມฆບຸຣຸษເຫລົ່ານີ້ ວຽນມາເພື່ອຄວາມມັກມາກໃນຈີວຣໄວແທ້ ແນວໃດນໍເຮົາຈະຄວຣກັ້ນເຂຕຕັ້ງກົฒ ໃນເຣື່ອງຜ້າແກ່ກິກຂຸທັ້ງຫລາຍ

ດູຣາກິກຂຸທັ້ງຫລາຍ ເຮົາຄອງຜ້າຜືນດຽວ ນັ່ງຢູ່ກາງແຈ້ງ ๓ ຕຳບົລນີ້ຕອນກາງຄືນ ຂຓະນ້ຳຄ້າງຕົກ ໃນຣາຕຣີເຫມັນຕ໌ຣະດູ ກຳລັງຫນາວ ຕັ້ງຢູ່ຣະຫວ່າງເດືອນ ๑ ກັບຣະຫວ່າງເດືອນ ๔ ຕໍ່ກັນ ຄວາມຫນາວບໍ່ໄດ້ມີແກ່ເຮົາ ເມື່ອປຖົມຍາມຜ່ານໄປແລ້ວ ຄວາມຫນາວຈຶ່ງໄດ້ມີແກ່ເຮົາ ເຮົາຈຶ່ງຫົ່ມຈີວຣຜືນທີ່ສອງ ຄວາມຫນາວບໍ່ໄດ້ມີແກ່ເຮົາ ເມື່ອມັຊຊິມຍາມຜ່ານໄປແລ້ວ ຄວາມຫນາວໄດ້ມີແກ່ເຮົາ ເຮົາຈຶ່ງຫົ່ມຈີວຣຜືນທີ່ສາມ ຄວາມຫນາວບໍ່ໄດ້ມີແກ່ເຮົາ ເມື່ອປັຈຈິມຍາມຜ່ານໄປແລ້ວ ຂຓະຣຸ່ງອຣຸຓແຫ່ງຣາຕຣີອັນເປັນເບື້ອງຕົ້ນແຫ່ງຄວາມສົດຊື່ນ ຄວາມຫນາວຈຶ່ງໄດ້ມີແກ່ເຮົາ ເຮົາຈຶ່ງຫົ່ມຈີວຣຜືນທີ່ສີ່ ຄວາມຫນາວບໍ່ໄດ້ມີແກ່ເຮົາ

ດູຣາກິກຂຸທັ້ງຫລາຍ ເຮົານັ້ນໄດ້ດຳຣິວ່າ ກຸລບຸຕຣ໌ໃນສັມມ໌ວິນັຍນີ້ ທີ່ເປັນຄົນຂີ້ຫນາວ ຢ້ານຕໍ່ຄວາມຫນາວ ກໍອາຈດຳຣົງຊີວິຕຢູ່ໄດ້ດ້ວຍຜ້າສາມຜືນ ແນວໃດນໍ ເຮົາຈະຕ້ອງກັ້ນເຂຕ ຕັ້ງກົฒ ໃນເຣື່ອງຜ້າແກ່ກິກຂຸທັ້ງຫລາຍ ເຮົາຈະຄວຣອນຸຍາຕໄຕຣຈີວຣ

ດູຣາກິກຂຸທັ້ງຫລາຍ ເຮົາອນຸຍາຕໄຕຣຈີວຣ ຄື ຜ້າສັງฆາຕິ ๒ ຊັ້ນ ຜ້າອຸຕຣາສົງຄ໌ຊັ້ນດຽວ ຜ້າອັນຕຣວາສົກຊັ້ນດຽວ.

ພຣະພຸທສບັນລັຕິອດິເຣກຈີວຣ

[໑໕໑] ກໍໂດຍສມັຍນັ້ນແລ ພຣະວັພພັຄຄີຍ໌ຮູ້ວ່າ ພຣະຜູ້ມີພຣະກາຄທຣົງອນຸຍາຕໄຕຣຈີວຣ ຈຶ່ງໃຊ້ຈີວຣຊຸດນຶ່ງສຳຫຼັບເຂົ້າບ້ານ ຊຸດນຶ່ງສຳຫຼັບຢູ່ໃນອາຣາມ ຊຸດນຶ່ງສຳຫຼັບລົງສົງນ້ຳ ບັຣດາກິກຂຸທີ່ເປັນຜູ້ມັກຫນ້ອຍ ... ຕ່າງກໍເພ່ງໂທษ ຕິຕຽນ ໂພນທະນາວ່າ ເປັນຫຍັງພຣະວັພພັຄຄີຍ໌ຈຶ່ງໄດ້ທຣົງອດິເຣກຈີວຣລະ ແລ້ວຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ.

ຄັ້ງນັ້ນ ພຣະຜູ້ມີພຣະກາຄທຣົງເຮັດສັມມີກຖາໃນເພາະເຫຕຸເປັນເຄົ້າມູລນັ້ນ ໃນເພາະເຫຕຸແຮກເກີດນັ້ນ ແລ້ວຮັບສັ່ງກະກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ກິກຂຸບໍ່ຄວຣທຣົງອດິເຣກຈີວຣ ອົງຄ໌ໃດທຣົງຄວຣປັບອາບັຕິຕາມສັມມ໌

ສມັຍຕໍ່ມາ ອດິເຣກຈີວຣບັງເກີດຂຶ້ນແກ່ທ່ານພຣະອານົນທ໌ ແລະທ່ານປະສົງຄ໌ຈະຖວາຍຈີວຣນັ້ນແດ່ທ່ານພຣະສາຣີບຸຕຣ໌ ແຕ່ທ່ານພຣະສາຣີບຸຕຣ໌ຢູ່ເຖິງເມືອງສາເກຕ ຈຶ່ງທ່ານພຣະອານົນທ໌ໄດ້ມີຄວາມປຣິວິຕົກ

ວ່າ ພຣະຜູ້ມີພຣະກາຄທຣົງບັນລັດຕິໄວ້ວ່າ ກິກຂຸບໍ່ຄວຣທຣົງອດິເຣກຈີວຣ ກໍອດິເຣກຈີວຣນີ້ບັງເກີດແກ່ເຮົາ ແລະເຮົາກໍມັກຈະຖວາຍຈີວຣຜືນນີ້ແກ່ທ່ານພຣະສາຣີບຸຕຣ໌ ແຕ່ທ່ານຢູ່ເຖິງເມືອງສາເກຕ ເຮົາຈະຕ້ອງປຕິບັຕິຢ່າງໃດນໍ ແລ້ວຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ

ພຣະຜູ້ມີພຣະກາຄຕຣັສຖາມວ່າ ອານົນທ໌ ຍັງອີກນານເທົ່າໃດ ສາຣີບຸຕຣ໌ຈຶ່ງຈະກັບມາ?

ທ່ານພຣະອານົນທ໌ຂາບທູລວ່າ ຍັງອີກ ໙ ວັນ ຫຼື ໑໐ ວັນ ຂ້ານ້ອຍ.

ຄັ້ງນັ້ນ ພຣະຜູ້ມີພຣະກາຄທຣົງເຮັດສັມມີກຖາ ໃນເພາະເຫຕຸເປັນເຄົ້າມູລນັ້ນ ໃນເພາະເຫຕຸແຣກເກີດນັ້ນ ແລ້ວຮັບສັ່ງກະກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ເຮົາອນຸຍາຕໃຫ້ທຣົງອດິເຣກຈີວຣໄວ້ໄດ້ ໑໐ ວັນເປັນຢ່າງຍິ່ງ.

ພຣະພຸທສານຸຍາຕໃຫ້ວິກັປອດິເຣກຈີວຣ

ສມັຍຕໍ່ມາ ອດິເຣກຈີວຣບັງເກີດແກ່ກິກຂຸທັ້ງຫລາຍ ຂຕະນັ້ນ ກິກຂຸທັ້ງຫລາຍໄດ້ມີຄວາມປຣິວິຕົກວ່າ ພວກເຮົາຈະຕ້ອງປຕິບັຕິໃນອດິເຣກຈີວຣຢ່າງໃດນໍ ແລ້ວຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຍາຕວ່າ ດູຣາກິກຂຸທັ້ງຫລາຍ ເຮົາອນຸຍາຕໃຫ້ວິກັປອດິເຣກຈີວຣ.

ພຣະພຸທສານຸຍາຕຜ້າປະເປັນຕົ້ນ

[໑໕໔] ເມື່ອພຣະຜູ້ມີພຣະກາຄປະທັບຢູ່ໃນພຣະນຄຣເວສາລີຕາມພຣະພຸທສາກີຣົມຍ໌ ແລ້ວສເດັຈພຣະພຸທສດຳເນີນໄປທາງພຣະນຄຣພາຣາຕສີ ສເດັຈພຣະພຸທສດຳເນີນຜ່ານຣະຍະທາງໂດຍລຳດັບ ເຖິງພຣະນຄຣພາຣາຕສີ ຮູ້ວ່າ ພຣະຜູ້ມີພຣະກາຄປະທັບຢູ່ ຓ ອິສິປຕນະມຣິຄທາຍວັນ ເຂຕພຣະນຄຣພາຣາຕສີນັ້ນ ສມັຍນັ້ນ ຜ້າອັນຕຣວາສົກຂອງກິກຂຸອົງຄ໌ນຶ່ງຂາດທະລຸ ແລະທ່ານໄດ້ມີຄວາມປຣິວິຕົກວ່າ ພຣະຜູ້ມີພຣະກາຄທຣົງອນຸຍາຕຜ້າ ໓ ຜືນ ຄື ຜ້າສັງຄາຕິສອງຊັ້ນ ຜ້າອຸຕຣາສົງຄ໌ຊັ້ນດຽວ ຜ້າອັນຕຣວາສົກຊັ້ນດຽວ ກໍຜ້າອັນຕຣວາສົກຂອງເຮົານີ້ຂາດທະລຸ ແນວໃດນໍ ເຮົາຄວຣດາມຜ້າປະ ໂດຍຮອບຈະເປັນສອງຊັ້ນ ກົງກາງຈະເປັນຊັ້ນດຽວ ດັ່ງນີ້ແລ້ວ ດາມຜ້າປະທັນທີ ພຣະຜູ້ມີພຣະກາຄສເດັຈພຣະພຸທສດຳເນີນໄປຕາມເສນາສນະ ໄດ້ທອດພຣະເນຕຣ໌ເຫັນກິກຂຸນັ້ນກຳລັງດາມຜ້າປະ ເມື່ອແລ້ວສເດັຈເຂົ້າໄປໃກ້ກິກຂຸນັ້ນ ໄດ້ຕຣັສຖາມວ່າ ທ່ານກຳລັງເຮັດຫຍັງ ກິກຂຸ?

ກິ. ກຳລັງຕາບຜ້າ ຂ້ານ້ອຍ

ກ. ດີລະ ດີລະ ກິກຂຸ ເປັນການຊອບແທ້ ກິກຂຸ ທີ່ທ່ານດາມຜ້າປະ

ຄັ້ງນັ້ນ ພຣະຜູ້ມີພຣະກາຄທຣົງສັມມີກຖາໃນເພາະເຫຕຸເປັນເຄົ້າມູລນັ້ນ ໃນເພາະເຫຕຸແຮກເກີດນັ້ນ ແລ້ວຮັບສັ່ງກະກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ເຮົາອນຸຍາຕຜ້າສັງຄາຕິ ໔ ຊັ້ນ ຜ້າອຸຕຣາສົງຄ໌ຊັ້ນດຽວ ຜ້າອັນຕຣວາສົກຊັ້ນດຽວ ສຳຫຼັບຜ້າໃຫມ່ມີກັບປະໃຫມ່ ຜ້າສັງຄາຕິ ໔ ຊັ້ນ ຜ້າອຸຕຣາສົງຄ໌ ໔ ຊັ້ນ ອັນຕຣວາສົກ ໔ ຊັ້ນ ສຳຫຼັບຜ້າທີ່ເກັບໄວ້ລ່ວງຣະດູ ຄວຣທຳອຸຕສາຫະໃນຜ້າບັງສຸກຸລຈົນພໍຕ້ອງການ ຫຼືເຮັດອຸຕສາຫະໃນຜ້າທີ່ຕົກຈາກຮ້ານຕລາດ

ດູຣາກິກຂຸທັ້ງຫລາຍ ເຮົາອນຸຍາຕຜ້າປະ ການຊຸນ ຮັງດຸມ ລູກດຸມ ການເຮັດໃຫ້ມັ່ນ.

ເຣື່ອງນາງວິສາຂາ ມິຄາຣມາຕາ

[໑໕໓] ຄັ້ງນັ້ນ ພຣະຜູ້ມີພຣະກາຄປະທັບຢູ່ໃນພຣະນຄຣພາຣາຌສີ ຕາມພຣະພຸທສາກິຣົມຍ໌ແລ້ວສເດັຈພຣະພຸທສດຳເນີນໄປທາງພຣະນຄຣສາວັຕຖີ ສເດັຈພຣະພຸທສດຳເນີນຜ່ານຣະຍະທາງໂດຍລຳດັບເຖິງພຣະນຄຣສາວັຕຖີ ຮູ້ວ່າພຣະຜູ້ມີພຣະກາຄປະທັບຢູ່ໃນພຣະເຊຕວັນ ອາຣາມຂອງອນາຖບິຌທ◌ິກະຄຫບໍດີ ເຂຕພຣະນຄຣສາວັຕຖີນັ້ນ ຄັ້ງນັ້ນ ນາງວິສາຂາ ມິຄາຣມາຕາເຂົ້າເຝົ້າພຣະຜູ້ມີພຣະກາຄ ຖວາຍບັງຄົມແລ້ວນັ່ງ ໓ ທີ່ຄວຣສ່ວນຂ້າງນຶ່ງ ພຣະຜູ້ມີພຣະກາຄທຣົງຊີ້ແຈ໋ງໃຫ້ນາງຜູ້ນັ່ງຮຽບຮ້ອຍແລ້ວ ເຫັນແຈ້ງສມາທານ ອາຈຫານ ຣ່າເຣິງດ້ວຍສັມມີກຖາ ຈຶ່ງນາງຜູ້ອັນພຣະຜູ້ມີພຣະກາຄທຣົງຊີ້ແຈ໋ງໃຫ້ເຫັນແຈ້ງ ສມາທານ ອາຈຫານ ຣ່າເຣິງ ດ້ວຍສັມມີກຖາ ແລ້ວໄດ້ຂາບທູລອາຣາธນາພຣະຜູ້ມີພຣະກາຄວ່າ ຂໍພອຣະຜູ້ມີພຣະກາຄພ້ອມດ້ວຍພຣະສົງฆ໌ຈົ່ງທຣົງພຣະກຣຸຌາໂປຼດຮັບກັຕຕາຫາຣຂອງຂ້ານ້ອຍ ເພື່ອຈເຣີນບຸຌກຸສົລແລະປິຕິປຼາໂມທຍ໌ໃນມື້ອື່ນເຊົ້າດ້ວຍເທີ້ນ ຂ້ານ້ອຍ ພຣະຜູ້ມີພຣະກາຄທຣົງຮັບອາຣາธນາດ້ວຍດຸษຌີກາພ ເມື່ອນາງຮູ້ການຮັບອາຣາธນາຂອງພຣະຜູ້ມີພຣະກາຄແລ້ວ ລຸກຈາກທີ່ນັ່ງ ຖວາຍບັງຄົມພຣະຜູ້ມີພຣະກາຄທຳປະທັກษິຌກັບໄປ ເມື່ອຜ່ານຣາຕຣີນັ້ນໄປ ຝົນຕັ້ງເຄົ້າຂຶ້ນໃນທວີປທັ້ງ ໔ ຕົກລົງມາຫ່າໃຫຍ່

ຄັ້ງນັ້ນ ພຣະຜູ້ມີພຣະກາຄຮັບສັ່ງກະກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ຝົນຕົກໃນເຊຕວັນແນວໃດ ຕົກໃນທວີປທັ້ງ ໔ ກໍແນວນັ້ນ ພວກທ່ານຈົ່ງສົງສນານກາຍກັນເທີ້ນ ເພາະເປັນຄັ້ງສຸດທ້າຍທີ່ຝົນຫ່າໃຫຍ່ຕັ້ງເຄົ້າຂຶ້ນໃນທວີປທັ້ງ ໔

ກິກຂຸເຫລົ່ານັ້ນຮັບສນອງພຣະພຸທສບັຌຊາວ່າ ເປັນດັ່ງພຣະພຸທສດຳຣັສ ຂ້ານ້ອຍ ແລ້ວພາກັນແກ້ຜ້າສົງສນານກາຍຢູ່

ຄັ້ງນັ້ນ ນາງວິສາຂາ ມິຄາຣມາຕາ ສັ່ງໃຫ້ຕົກແຕ່ງຂອງຍ້ຳຂອງບໍຣິໂກຄອັນປະຌີຕ ແລ້ວສັ່ງທາສີວ່າ ໄປເທີ້ນແມ່ ເຈົ້າຈົ່ງໄປອາຣາມແລ້ວແຈ້ງກັຕກາລວ່າ ເຖິງເວລາແລ້ວ ກັຕຕາຫາຣແລ້ວແລ້ວ ຂ້ານ້ອຍ

ທາສີນັ້ນຮັບຄຳວ່າ ເປັນເຊັ່ນນັ້ນຂ້ານ້ອຍ ແລ້ວໄປວັດ ໄດ້ເຫັນພິກຂຸແກ້ຜ້າສົງສນານກາຍ ເມື່ອແລ້ວເຂົ້າໃຈຜິດຄິດວ່າ ໃນອາຮາມບໍ່ມີພິກຂຸ ມີແຕ່ພວກອາຊີວົກສົງສນານຢູ່ ຈຶ່ງກັບໄປບ້ານໄດ້ ແຈ້ງຄວາມແກ່ນາງວິສາຂາມິຄາຣມາຕາວ່າ ຍາແມ່ ພິກຂຸບໍ່ມີໃນອາຮາມ ມີແຕ່ພວກອາຊີວົກສົງສນານຢູ່ ໂດຍຂ້ານ້ອຍ

ນາງວິສາຂາມິຄາຣມາຕາ ເປັນສຕຣີສລາດ ລຽບແຫລມ ມີປັນຍາຮູ້ໄດ້ທັນທີວ່າ ພຣະຄຸນເຈົ້າທັ້ງຫລາຍຄົງແກ້ຜ້າພາກັນສົງສນານກາຍເປັນແນ່ ນາງຄົນນີ້ໂງ່ຈຶ່ງສຳຄັນວ່າ ບໍ່ມີພິກຂຸໃນອາຮາມ ມີແຕ່ພວກອາຊີວົກສົງສນານກາຍຢູ່ ຈຶ່ງສັ່ງສາວໃຊ້ວ່າ ໄປເທີ້ນແມ່ທາສີ ເຈົ້າຈົ່ງໄປອາຮາມ ແລ້ວແຈ້ງພັຕກາລວ່າ ເຖິງເວລາແລ້ວ ພັຕຕາຫາຣແລ້ວແລ້ວຂ້ານ້ອຍ.

ເມື່ອເວລາຕໍ່ມາ ພິກຂຸເຫລົ່ານັ້ນ ທຳຕົວໃຫ້ເຢັນ ມີກາຍງາມ ຕ່າງຖືຈີວຣເຂົ້າໄປສູ່ທີ່ຢູ່ຕາມເດີມ ຈຶ່ງທາສີນັ້ນໄປວັດບໍ່ເຫັນພິກຂຸທັ້ງຫລາຍ ຈຶ່ງເຂົ້າໃຈຜິດຄິດວ່າ ບໍ່ມີພິກຂຸໃນອາຮາມ ອາຮາມວ່າງເປົ່າ ຈຶ່ງກັບໄປບ້ານແລ້ວແຈ້ງຄວາມນັ້ນແກ່ນາງວິສາຂາມິຄາຣມາຕາວ່າ ບໍ່ມີພິກຂຸໃນອາຮາມ ອາຮາມວ່າງເປົ່າ ໂດຍຂ້ານ້ອຍ.

ນາງວິສາຂາ ມິຄາຣມາຕາ ເປັນສຕຣີສລາດ ລຽບແຫລມ ມີປັນຍາຮູ້ໄດ້ທັນທີວ່າ ພຣະຄຸນເຈົ້າທັ້ງຫລາຍ ຄົງເຮັດຕົວໃຫ້ເຢັນ ມີກາຍງາມ ຕ່າງຖືຈີວຣເຂົ້າໄປສູ່ທີ່ຢູ່ຕາມເດີມເປັນແນ່ ນາງຄົນນີ້ໂງ່ ຈຶ່ງສຳຄັນວ່າ ບໍ່ມີພິກຂຸໃນອາຮາມ ອາຮາມວ່າງເປົ່າ ແລ້ວສັ່ງສາວໃຊ້ອີກວ່າ ໄປເທີ້ນແມ່ທາງທາສີ ເຈົ້າຈົ່ງໄປອາຮາມ ແລ້ວແຈ້ງພັຕກາລວ່າ ເຖິງເວລາແລ້ວພັຕຕາຫາຣແລ້ວແລ້ວ ຂ້ານ້ອຍ.

ຄັ້ງນັ້ນ ພຣະຜູ້ມີພຣະພາຄຮັບສັ່ງກະພິກຂຸທັ້ງຫລາຍວ່າ ດູຣາພິກຂຸທັ້ງຫລາຍ ພວກທ່ານຈົ່ງຕຽມບາຕຣ໌ຈີວຣ ເຖິງເວລາພັຕຕາຫາຣແລ້ວ.

ພິກຂຸເຫລົ່ານັ້ນທູລຮັບສນອງພຣະພຸທສບັນຊາວ່າ ເປັນຢ່າງນັ້ນ ຂ້ານ້ອຍ.

ເມື່ອເວລາເຊົ້າ ພຣະຜູ້ມີພຣະພາຄທຮົງຄອງອັນຕຣວາສົກ ຖືບາຕຣ໌ຈີວຣ ສເດັຈຫາຍໄປໃນພຣະເຊຕວັນ ມາປຣາກົຕທີ່ຊຸ້ມປະຕູບ້ານນາງວິສາຂາມິຄາຣມາຕາ ເໝືອນບຸຣຸษມີກຳລັງຢຽດແຂນທີ່ຄູ້ ຫຼືຄູ້ແຂນທີ່ຢຽດຈັ່ງຊັ້ນ ພຣະອົງຄ໌ປະທັບນັ່ງເຫນືອພຸທສອາສນ໌ທີ່ເຂົາປູລາດຖວາຍ ພ້ອມດ້ວຍພຣະສົງฆ໌.

ຂណະນັ້ນ ນາງວິສາຂາມິຄາຣມາຕາກ່າວວ່າ ຊາວເຮົາຜູ້ຈເຣີນ ໜ້າອັສຈັຣຍ໌ແທ້ນໍ ຊາວເຮົາຜູ້ຈເຣີນປາດແທ້ນໍ ພຣະຕຖາຄົຕ ຊື່ວ່າມີຣິທສິ໌ຫຼາຍ ມີອານຸພາພຫຼາຍ ເພາະເມື່ອຫ້ວງນ້ຳໄຫລນອງ

ໄປພຽງເຂົ່າແດ່ ພຽງແອວແດ່ ຕົນຫຼືຈີວອຣຂອງກິກຂຸ ແມ້ອົງຄ໌ນຶ່ງ ກໍບໍ່ໄດ້ປຽກນ້ຳ ດັ່ງນີ້ແລ້ວ ຣ່າເຣີງ ເບີກບານໃຈ ອັງຄາສກິກຂຸສົງຄ໌ມີພຣະພຸທສເຈົ້າເປັນປະມຸຂ ດ້ວຍຂາທນີຍໂກຊນີຍາຫາຣອັນປະຜີຕ ດ້ວຍມືຂອງຕົນ ຈົນພຣະຜູ້ມີພຣະກາຄຜູ້ສເວີຍແລ້ວແລ້ວ ທຣົງນຳພຣະຫັຕຖ໌ອອກຈາກບາຕຣ໌ຫ້າມກັຕຣ໌ ແລ້ວນັ່ງຢູ່ ຓ ທີ່ຄວຣສ່ວນຂ້າງນຶ່ງ ໄດ້ຂາບທູລແດ່ພຣະຜູ້ມີພຣະກາຄວ່າ ຂ້ານ້ອຍທູລຂໍປະທານພອຣ ໘ ປະກາຣຕໍ່ພຣະຜູ້ມີພຣະກາຄ ຂ້ານ້ອຍ.

ກ. ຕຖາຄົຕເລີກໃຫ້ພອຣເສັຽແລ້ວ ວິສາຂາ

ວິ. ຂ້ານ້ອຍທູລຂໍປະທານພອຣທີ່ສົມຄວຣແລະບໍ່ມີໂທษ ຂ້ານ້ອຍ

ກ. ຈົ່ງບອກມາເທີ້ນ ວິສາຂາ

ວິ. ຂ້ານ້ອຍ ສຳຫຼັບພຣະສົງຄ໌ ຂ້ານ້ອຍປັຕຖນາຈະຖວາຍຜ້າວັສສິກສາຜົກ ຈະຖວາຍກັຕຣ໌ເພື່ອພຣະອາຄັນຕຸກະ ຈະຖວາຍກັຕຣ໌ເພື່ອພຣະທີ່ຕຽມຈະໄປ ຈະຖວາຍກັຕຣ໌ເພື່ອພຣະອາພາສ ຈະຖວາຍກັຕຣ໌ເພື່ອພຣະທີ່ພຍາບາລພຣະອາພາສ ຈະຖວາຍເກສັຊສຳຫຼັບພຣະອາພາສ ຈະຖວາຍຢາຄູປະຈຳ ແລະສຳຫຼັບກິກຂຸຕີສົງຄ໌ ຂ້ານ້ອຍປັຕຖນາຈະຖວາຍອຸທກສາຜົກ ຈົນຕລອດຊີພ.

ກ. ວິສາຂາ ກໍທ່ານເຫັນອຳນາຈປະໂຍຊນ໌ຫຍັງ ຈຶ່ງຂໍພອຣ ໘ ປະກາຣ ຕໍ່ຕຖາຄົຕ.

ວິ. ຂ້ານ້ອຍ ວັນນີ້ຂ້ານ້ອຍສັ່ງທາສີວ່າ ໄປເທີ້ນ ແມ່ທາສີ ເຈົ້າຈົ່ງໄປອາຣາມ ແລ້ວບອກກັຕຣ໌ກາລວ່າ ກັຕຕາຫາຣແລ້ວແລ້ວ ຂ້ານ້ອຍ ແລະນາງກໍໄປວັດ ໄດ້ເຫັນກິກຂຸທັ້ງຫລາຍແກ້ຜ້າສົງສນານກາຍຢູ່ ເຂົ້າໃຈຜິດຄຶດວ່າ ບໍ່ມີກິກຂຸໃນອາຣາມ ມີແຕ່ພວກອາຊີວົກສົງສນານກາຍຢູ່ ຈຶ່ງກັບມາບ້ານ ແລ້ວຣາຍງານແກ່ຂ້ານ້ອຍວ່າ ຍາແມ່ ບໍ່ມີກິກຂຸໃນອາຣາມ ມີແຕ່ພວກອາຊີວົກສົງສນານກາຍຢູ່.

໑. ຂ້ານ້ອຍ ຄວາມເປືອຍກາຍບໍ່ງາມ ບໍ່ຈົບ ບໍ່ງາມ ຂ້ານ້ອຍເຫັນອຳນາຈປະໂຍຊນ໌ນີ້ ຈຶ່ງປັຕຖນາຈະຖວາຍຜ້າວັສສິກສາຜົກແກ່ພຣະສົງຄ໌ ຈົນຕລອດຊີພ.

໔. ປະກາຣນຶ່ງ ຂໍ້ອື່ນຍັງມີອີກ ຂ້ານ້ອຍ ພຣະອາຄັນຕຸກະບໍ່ຊຳນານໜົນທາງ ບໍ່ຮູ້ຈັກທີ່ໂຄຈຣ ຍ່ອມທ່ຽວບິຕຫບາຕລຳບາກ ທ່ານສັນອາຄັນຕຸກັຕຣ໌ຂອງຂ້ານ້ອຍພໍຊຳນານໜົນທາງ ຮູ້ຈັກທີ່ໂຄຈຣ ຈະທ່ຽວບິຕຫບາຕໄດ້ບໍ່ລຳບາກ ຂ້ານ້ອຍເຫັນອຳນາຈປະໂຍຊນ໌ນີ້ ຈຶ່ງປັຕຖນາຈະຖວາຍອາຄັນຕຸກັຕຣ໌ແກ່ພຣະສົງຄ໌ ຈົນຕລອດຊີພ.

໓. ປະການນຶ່ງ ຂໍ້ອື່ນຍັງມີອີກ ຂ້ານ້ອຍ ພຣະຜູ້ຈຽມຕົວຈະໄປມົວສແວງຫາກັຕຕາຫານ ເພື່ອຕົນຢູ່ ຈະຫລົງຈາກຫມູ່ກຽນ ຫຼືຈະເຖິງສຖານທີ່ທີ່ຕົນຕ້ອງການຈະໄປຢູ່ເມື່ອຍາມແລງ ຈະເດີນທາງລຳບາກ ທ່ານລັບຄມິກັຕຣ໌ຂອງຂ້ານ້ອຍແລ້ວ ຈະບໍ່ຫລົງຈາກຫມູ່ກຽນ ຫຼືຈະເຖິງສຖານທີ່ທີ່ຕົນຕ້ອງການຈະໄປຢູ່ບໍ່ຍາມແລງ ຈະເດີນທາງບໍ່ລຳບາກ ຂ້ານ້ອຍເຫັນອຳນາຈປະໂຍຊນ໌ນີ້ ຈຶ່ງປັຕຖນາຈະຖວາຍຄມິກັຕຣ໌ແກ່ພຣະສົງຄ໌ ຈົນຕລອດຊີພ.

໔. ປະການນຶ່ງ ຂໍ້ອື່ນຍັງມີອີກ ຂ້ານ້ອຍ ເມື່ອພຣະອາພາຣບໍ່ໄດ້ໂກຊນາຫານທີ່ເປັນສັປປາຍະ ອາພາຣກຳເຣີບ ຫຼືທ່ານຈະເຖິງມໍຣຕກາພ ເມື່ອທ່ານລັບຄິລານກັຕຣ໌ຂອງຂ້ານ້ອຍແລ້ວ ອາພາຣຈະທຸເລົາ ທ່ານຈະບໍ່ເຖິງມໍຣຕກາພ ຂ້ານ້ອຍເຫັນອຳນາຈປະໂຍຊນ໌ນີ້ ຈຶ່ງປັຕຖນາຈະຖວາຍຄິລານກັຕຣ໌ແກ່ສົງຄ໌ ຈົນຕລອດຊີພ.

໕. ປະການນຶ່ງ ຂໍ້ອື່ນຍັງມີອີກ ຂ້ານ້ອຍ ພຣະຜູ້ພຍາບາລພຣະອາພາຣ ມົວສແວງຫາກັຕຕາຫານ ເພື່ອຕົນ ຈະນຳກັຕຕາຫານໄປຖວາຍພຣະອາພາຣຈົນສາຍ ຕົນເອງຈະອົດອາຫານ ທ່ານໄດ້ລັບຄິລານຸປັຕຖາກ-ກັຕຣ໌ຂອງຂ້ານ້ອຍແລ້ວ ຈະນຳກັຕຕາຫານໄປຖວາຍພຣະອາພາຣຕາມເວລາ ຕົນເອງກໍຈະບໍ່ອົດອາຫານ ຂ້ານ້ອຍເຫັນອຳນາຈປະໂຍຊນ໌ນີ້ ຈຶ່ງປັຕຖນາຈະຖວາຍຄິລານຸປັຕຖາກກັຕຣ໌ແກ່ພຣະສົງຄ໌ ຈົນຕລອດຊີພ.

໖. ປະການນຶ່ງ ຂໍ້ອື່ນຍັງມີອີກ ຂ້ານ້ອຍ ເມື່ອພຣະອາພາຣບໍ່ໄດ້ເກສັຊທີ່ເປັນສັປປາຍະ ອາພາຣຈະກຳເຣີບ ຫຼືຈະເຖິງມໍຣຕກາພ ເມື່ອທ່ານລັບຄິລານເກສັຊຂອງຂ້ານ້ອຍແລ້ວ ອາພາຣຈະທຸເລົາ ທ່ານຈະບໍ່ເຖິງມໍຣຕກາພ ຂ້ານ້ອຍເຫັນອຳນາຈປະໂຍຊນ໌ນີ້ ຈຶ່ງປັຕຖນາຈະຖວາຍຄິລານເກສັຊແກ່ພຣະສົງຄ໌ ຈົນຕລອດຊີພ.

໗. ປະການນຶ່ງ ຂໍ້ອື່ນຍັງມີອີກ ຂ້ານ້ອຍ ພຣະອົງຄ໌ທຣົງເຫັນອານິສົງສ໌ ໑໐ ປະການ ໄດ້ທຣົງອນຸຍາຕຍາຄູໄວ້ແລ້ວ ທີ່ເມືອງອັນຣກວິນທະ ຂ້ານ້ອຍເຫັນອານິສົງສ໌ຕາມທີ່ພຣະອົງຄ໌ຕຣັສນັ້ນ ຈຶ່ງປັຕຖນາຈະຖວາຍຍາຄູປະຈຳແກ່ສົງຄ໌ ຈົນຕລອດຊີພ.

໘. ຂ້ານ້ອຍ ກິກຊຸຕີທັ້ງຫລາຍເປືອຍກາຍອາບນ້ຳຮ່ວມທ່າກັບຍິງແພສຍາ ໓ ແມ່ນ້ຳ ອຈິຣວດີນີ້ ຍິງແພສຍາເຫລົ່ານັ້ນພາກັນເຍີ້ຍຫຍັນກິກຊຸຕີວ່າ ແມ່ເຈົ້າເອີ່ຍພວກທ່ານກຳລັງສາວປະພຶຕ ພຣົຫ໌ມຈັຣຍ໌ຈະໄດ້ປະໂຍຊນ໌ຫຍັງ ຄວຣບໍຣິໂກຄກາມບໍ່ແມ່ນບໍ່ ປະພຶຕພຣົຫ໌ມຈັຣຍ໌ຄັນເມື່ອແກ່ເຖົ້າ ຢ່າງນີ້ ຈະເປັນອັນພວກທ່ານຍຶດສ່ວນທັ້ງສອງໄວ້ໄດ້ ກິກຊຸຕີເຫລົ່ານັ້ນຖືກພວກຍິງແພສຍາເຍີ້ຍຫຍັນຢູ່ ໄດ້ເປັນຜູ້ເກີ້ ຄວາມເປືອຍກາຍຂອງມາຕຸຄາມບໍ່ງາມ ບໍ່ຈົບ ບໍ່ງາມ ຂ້ານ້ອຍເຫັນອຳນາຈ ປະໂຍຊນ໌ນີ້ ຈຶ່ງປັຕຖນາຈະຖວາຍຜ້າອຸທກສາຕົກ ແກ່ກິກຊຸຕີສົງຄ໌ ຈົນຕລອດຊີພ.

ກ. ວິສາຂາ ກໍທ່ານເຫັນອານິສົງສ໌ອັນໃດ ຈຶ່ງຂໍພອຣ ໘ ປະກາຣຕໍ່ຕຖາຄົຕ

ວິ. ຂ້ານ້ອຍ ກິກຂຸທັ້ງຫລາຍໃນພຣະສັມມ໌ວິນັຍນີ້ ຈໍາພັຣษາໃນທິສທັ້ງຫລາຍແລ້ວ ຈະມາພຣະນຄຣສາວັຕຖີ ເພື່ອເຝົ້າພຣະອົງຄ໌ ແລ້ວຈະທູລຖາມວ່າ ກິກຂຸມີຊື່ນີ້ເຖິງມໍຣຕກາພແລ້ວ ທ່ານມີຄຕິຢ່າງໃດ ມີກົພຫນ້າຢ່າງໃດ ຂ້ານ້ອຍ ພຣະອົງຄ໌ຈະທຣົງພຍາກຣຕ໌ກິກຂຸນັ້ນໃນໂສດາປັຕຕິຜົລ ສກທາຄາມິຜົລ ອານາຄາມິຜົລ ຫຼືອຣຫັຕຜົລ ຂ້ານ້ອຍຈະເຂົ້າໄປຫາກິກຂຸພວກນັ້ນ ແລ້ວຮຽນຖາມວ່າ ພຣະຄຸຕເຈົ້າອົງຄ໌ນັ້ນເຄີຍມາພຣະນຄຣສາວັຕຖີບໍ່ຂ້ານ້ອຍ ຖ້າທ່ານເຫລົ່ານັ້ນຈະຕອບແກ່ຂ້ານ້ອຍວ່າ ກິກຂຸນັ້ນເຄີຍມາພຣະນຄຣສາວັຕຖີ ຂ້ານ້ອຍຈະເຖິງຄວາມຕົກລົງໃຈໃນການມາຂອງພຣະຄຸຕເຈົ້າອົງຄ໌ນັ້ນວ່າ ພຣະ-ຄຸຕເຈົ້າອົງຄ໌ນັ້ນຄົງໃຊ້ສອຍຜ້າວັສສິກສາຜົກ ຄົງລັບອາຄັນຕຸກກັຕຣ໌ ຄມິກກັຕຣ໌ຄິລານກັຕຣ໌ ຄິລານຸປັຕຖາກກັຕຣ໌ ຄິລານເກສັຊ ຫຼືຢາຄູປະຈໍາເປັນແນ່ ເມື່ອຂ້ານ້ອຍຣະລຶກເຖິງກຸສົລນັ້ນຢູ່ ຄວາມປີ້ມໃຈຈະບັງເກີດ ເມື່ອຂ້ານ້ອຍປີ້ມໃຈແລ້ວ ຄວາມອິ່ມໃຈຈະບັງເກີດ ເມື່ອມີໃຈອິ່ມເອີບແລ້ວ ກາຍຈະສງົບ ເມື່ອມີກາຍສງົບແລ້ວ ຈະສເວີຍສຸຂ ເມື່ອມີຄວາມສຸຂ ຈິຕຈະຕັ້ງມັ່ນ ຈະເປັນອັນຂ້ານ້ອຍໄດ້ອົບຮົມອິນທຣີຍ໌ ອົບຮົມພລະ ອົບຮົມໂພຊຊົງຄ໌ນັ້ນ ຂ້ານ້ອຍເຫັນອານິສົງສ໌ນີ້ ຈຶ່ງຂໍປະທານພອຣ ໘ ປະກາຣຕໍ່ພຣະອົງຄ໌ຂ້ານ້ອຍ.

ກ. ດີລະ ດີລະ ວິສາຂາ ດີແທ້ ວິສາຂາ ທ່ານເຫັນອານິສົງສ໌ນີ້ ຈຶ່ງຂໍພອຣ ໘ ປະກາຣຕໍ່ຕຖາຄົຕ ເຮົາອນຸຍາຕພອຣ ໘ ປະກາຣແກ່ທ່ານ.

ຄັ້ງນັ້ນ ພຣະຜູ້ມີພຣະກາຄທຣົງອນຸໂມທນານາງວິສາຂາມິຄາຣມາຕາ ດ້ວຍພຣະຄາຖາເຫລົ່ານີ້ວ່າດັ່ງນີ້:-

ຄາຖາອນຸໂມທນາ

[໑໕໔] ສຕຣີໃດ ໃຫ້ເຂົ້າແລະນໍ້າ ມີໃຈເບີກບານແລ້ວ ສົມບູຣຕ໌ດ້ວຍສີລ

ເປັນສາວິກາຂອງພຣະສຸຄົຕ ຄອບງໍາຄວາມຂີ້ຖີ່ແລ້ວ ບໍຣິຈາຄ

ທານອັນເປັນເຫຕຸແຫ່ງສວັຣຄ໌ ເປັນເຄື່ອງບັຣເທົາຄວາມໂສກ

ນໍາມາຊຶ່ງຄວາມສຸຂ ສຕຣີນັ້ນ ອາສັຍມັຄຄ໌ປຕິບັຕິ ປຣາສຈາກສ5ລີ

ບໍ່ມີກິເລສເຄື່ອງຍົ່ວໃຈ ຍ່ອມໄດ້ກໍາລັງແລະອາຍຸເປັນທິພຍ໌ ສຕຣີ

ຜູ້ປະສົງຄ໌ບຸຍນັ້ນ ເປັນຄົນມີສຸຂ ສົມບູຣຕ໌ດ້ວຍອນາມັຍ ຍ່ອມ

ປີ້ມໃຈໃນສວັຣຄ໌ສິ້ນກາລນານ.

ພຣະພຸທສານຸຌາຕຜ້າວັສສິກສາຜົກເປັນຕົ້ນ

[໑໕໕] ເມື່ອພຣະຜູ້ມີພຣະພາຄທຣົງອນຸໂມທນາ ນາງວິສາຂາ ມິຄາຣມາຕາ ດ້ວຍພຣະຄາຖາເຫລົ່ານີ້ແລ້ວ ສເດັຈລຸກຈາກທີ່ປະທັບກັບໄປ ເມື່ອແລ້ວທຣົງເຮັດສັມມີກຖາໃນເພາະເຫຕຸເປັນເຄົ້າມູລນັ້ນ ໃນເພາະເຫຕຸແຮກເກີດນັ້ນ ແລ້ວຮັບສັ່ງກະພິກຂຸທັ້ງຫລາຍວ່າ ດູຣາພິກຂຸທັ້ງຫລາຍ ເຮົາອນຸຌາຕຜ້າວັສສິກສາຜົກອາຄັນຕຸກະພັຕຣ໌ ຄມິກະພັຕຣ໌ ຄິລານພັຕຣ໌ ຄິລານຸປັຕຖາກພັຕຣ໌ ຄິລານເພສັຊ ຢາຄູປະຈຳ ອນຸຌາຕຜ້າອຸທກສາຜົກສຳຫຼັບພິກຂຸຓີສົງຂ໌.

ວິສາຂາພາຓວາຣ ຈົບ.

ພຣະນອນຫລັບລືມສຕິ

[໑໕໖] ກໍໂດຍສມັຍນັ້ນແລ ພິກຂຸທັ້ງຫລາຍສັນໂພຊນາຫາຣອັນປະຓີຕແລ້ວນອນຫລັບ ລືມສຕິ ບໍ່ຮູ້ສຶກຕົວ ເມື່ອພິກຂຸເຫລົ່ານັ້ນນອນຫລັບ ລືມສຕິ ບໍ່ຮູ້ສຶກຕົວ ນ້ຳອສຸຈິເຄື່ອນເພາະຄວາມຝັນ ເສນາສນະເປື້ອນນ້ຳອສຸຈິ ຄັ້ງນັ້ນ ພຣະຜູ້ມີພຣະພາຄມີທ່ານພຣະອານົນທ໌ເປັນປັຈສາສມຓະ ສເດັຈພຣະພຸທສດຳເນີນໄປຕາມເສນາສນະ ໄດ້ທອດພຣະເນຕຣ໌ເຫັນເສນາສນະເປື້ອນນ້ຳອສຸຈິ ເມື່ອແລ້ວຮັບສັ່ງຖາມທ່ານພຣະອານົນທ໌ວ່າ ອານົນທ໌ ເສນາສນະທັ່ນເປື້ອນຫຍັງ?

ອາ. ຂ້ານ້ອຍ ດ່ງວນີ້ພິກຂຸທັ້ງຫລາຍສັນໂພຊນາຫາຣອັນປະຓີຕແລ້ວນອນຫລັບ ລືມສຕິ ບໍ່ຮູ້ສຶກຕົວ ເມື່ອພິກຂຸເຫລົ່ານັ້ນນອນຫລັບ ລືມສຕິ ບໍ່ຮູ້ສຶກຕົວ ນ້ຳອສຸຈິເຄື່ອນເພາະຄວາມຝັນ ເສນາສນະນີ້ນັ້ນຈຶ່ງເປື້ອນນ້ຳອສຸຈິ ຂ້ານ້ອຍ.

ພ. ຂໍ້ທີ່ກ່າວມາທັ່ນຍ່ອມເປັນຢ່າງນັ້ນ ອານົນທ໌ ຂໍ້ທີ່ກ່າວມາທັ່ນຍ່ອມເປັນຢ່າງນັ້ນ ອານົນທ໌ ຄວາມແທ້ ເມື່ອພິກຂຸເຫລົ່ານັ້ນນອນຫລັບ ລືມສຕິ ບໍ່ຮູ້ສຶກຕົວ ນ້ຳອສຸຈິຈຶ່ງເຄື່ອນເພາະຄວາມຝັນ ພິກຂຸເຫລົ່າໃດນອນຫລັບ ມີສຕິຕັ້ງມັ່ນ ຮູ້ສຶກຕົວ ນ້ຳອສຸຈິຂອງພິກຂຸເຫລົ່ານັ້ນບໍ່ເຄື່ອນ ປະການນຶ່ງ

ນ້ຳອສຸຈິຂອງກິກຂຸປຸຖຸຊົນ ຜູ້ປຣາສຈາກຄວາມກຳຫນັດໃນກາມ ກໍບໍ່ເຄື່ອນ ຂໍ້ທີ່ນ້ຳອສຸຈິຂອງພຣະອຣຫັນຕ໌ຈະຕ້ອງເຄື່ອນນັ້ນບໍ່ແມ່ນຖານະ ບໍ່ແມ່ນໂອກາສ.

ຄັ້ງນັ້ນ ພຣະຜູ້ມີພຣະກາຄຫຣົງເຮັດສັມມີກຖາໃນເພາະເຫຕຸເປັນເຄົ້າມູລນັ້ນ ໃນເພາະເຫຕຸແຣກເກີດນັ້ນ ແລ້ວຮັບສັ່ງກະກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ວັນນີ້ເຮົາມີອານົນທ໌ເປັນປັຈຈາສມຕະທ່ຽວຍ່າງໄປຕາມເສນາສນະ ໄດ້ເຫັນເສນາສນະເປື້ອນນ້ຳອສຸຈິ ຈຶ່ງໄດ້ຖາມອານົນທ໌ວ່າ ເສນາສນະທັ່ນເປື້ອນຫຍັງ ອານົນທ໌ຊີ້ແຈງວ່າ ຂ້ານ້ອຍ ດ່ຽວນີ້ກິກຂຸທັ້ງຫລາຍຈັນໂກຊນາຫາຣອັນປະຕີຕແລ້ວ ນອນຫລັບ ລືມສຕິ ບໍ່ຮູ້ສຶກຕົວ ເມື່ອກິກຂຸເຫລົ່ານັ້ນນອນຫລັບລືມສຕິບໍ່ຮູ້ສຶກຕົວ ນ້ຳອສຸຈິເຄື່ອນເພາະຄວາມຝັນ ເສນາສນະນີ້ນັ້ນຈຶ່ງໄດ້ເປື້ອນນ້ຳອສຸຈິ ເຮົາໄດ້ກ່າວຮັບຮອງວ່າ ຂໍ້ທີ່ກ່າວມາທັ່ນຍ່ອມເປັນຢ່າງນັ້ນ ອານົນທ໌ ຂໍ້ທີ່ກ່າວມານັ້ນຍ່ອມເປັນຢ່າງນັ້ນ ອານົນທ໌ ຄວາມແທ້ເມື່ອກິກຂຸເຫລົ່ານັ້ນນອນຫລັບລືມສຕິ ບໍ່ຮູ້ສຶກຕົວ ນ້ຳອສຸຈິຈຶ່ງເຄື່ອນເພາະຄວາມຝັນ ກິກຂຸເຫລົ່າໃດນອນຫລັບ ມີສຕິຕັ້ງມັ່ນ ຮູ້ສຶກຕົວ ນ້ຳອສຸຈິຂອງກິກຂຸເຫລົ່ານັ້ນບໍ່ເຄື່ອນ ປະກາຣນຶ່ງ ນ້ຳອສຸຈິຂອງກິກຂຸປຸຖຸຊົນຜູ້ປຣາສຈາກຄວາມກຳຫນັດໃນກາມ ກໍບໍ່ເຄື່ອນ ຂໍ້ທີ່ນ້ຳອສຸຈິຂອງພຣະອຣຫັນຕ໌ຈະຕ້ອງເຄື່ອນນັ້ນ ບໍ່ແມ່ນຖານະ ບໍ່ແມ່ນໂອກາສ.

ນອນຫລັບລືມສຕິ ມີໂທษ ໕ ປະກາຣ

ດູຣາກິກຂຸທັ້ງຫລາຍ ກິກຂຸທີ່ນອນຫລັບ ລືມສຕິ ບໍ່ຮູ້ສຶກຕົວ ມີໂທษ ໕ ປະກາຣ ນີ້ຄື ຫລັບເປັນທຸກຂ໌ ໑ ຕື່ນເປັນທຸກຂ໌ ໑ ເຫັນຄວາມຝັນອັນລາມົກ ໑ ເທພດາບໍ່ຮັກษາ ໑ ອສຸຈິເຄື່ອນ ໑ ດູຣາກິກຂຸທັ້ງຫລາຍ ກິກຂຸທີ່ນອນຫລັບ ລືມສຕິ ບໍ່ຮູ້ສຶກຕົວ ມີໂທษ ໕ ປະກາຣນີ້ແລ.

ນອນຫລັບຄຸມສຕິ ມີຄຸຓ ໕ ປະກາຣ

ດູຣາກິກຂຸທັ້ງຫລາຍ ກິກຂຸທີ່ນອນຫລັບ ມີສຕິຕັ້ງມັ່ນ ຮູ້ສຶກຕົວຢູ່ ມີຄຸຓ ໕ ປະກາຣນີ້ ຄືຫລັບເປັນສຸຂ ໑ ຕື່ນເປັນສຸຂ ໑ ບໍ່ເຫັນຄວາມຝັນອັນລາມົກ ໑ ເທພດາຮັກษາ ໑ ອສຸຈິບໍ່ເຄື່ອນ ໑ ດູຣາກິກຂຸທັ້ງຫລາຍ ກິກຂຸທີ່ນອນຫລັບ ມີສຕິຕັ້ງມັ່ນ ຮູ້ສຶກຕົວ ມີຄຸຓ ໕ ປະກາຣ ນີ້ແລ.

ພຣະພຸທສານຸຌາຕຜ້ານິສີທນະ

ດູຣາກິກຂຸທັ້ງຫລາຍ ເຮົາອນຸຌາຕຜ້ານິສີທນະ ເພື່ອຮັກษາກາຍ ຮັກษາຈີວຣ ຮັກษາເສນາສນະ.

ພຣະພຸທສານຸຍາຕຜ້າປັຈຈັຕຖຣຕະ

ສມັຍຕໍ່ມາ ຜ້ານິສີທນະນ້ອຍເກີນໄປ ປ້ອງກັນເສນາສນະໄດ້ບໍ່ຫມົດ ກິກຂຸທັ້ງຫລາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ພຣະຜູ້ມີພຣະກາຄຕຣັສອນຸຍາຕວ່າ ດູຣາກິກຂຸທັ້ງຫລາຍ ກິກຂຸຕ້ອງການຜ້າປູນອນໃຫຍ່ພຽງໃດ ເຮົາອນຸຍາຕໃຫ້ເຮັດຜ້າປູນອນໃຫຍ່ພຽງນັ້ນ.

ພຣະພຸທສານຸຍາຕຜ້າປິດຝີ

[໑໕໗] ກໍໂດຍສມັຍນັ້ນແລ ທ່ານພຣະເວລັຕຖສີສະພຣະອຸປັຊຊາຍ໌ຂອງທ່ານພຣະອານົນທ໌ອາພາຣເປັນໂຣຄຝີດາດຫຼືອີສຸກອີໃສ ຜ້ານຸ່ງຜ້າຫົ່ມກຣັງຢູ່ທີ່ຕົວເພາະນ້ຳຫນອງຂອງໂຣຄນັ້ນ ກິກຂຸທັ້ງຫລາຍເອົານ້ຳຊຸບໆ ຜ້າເຫລົ່ານັ້ນ ແລ້ວຄ່ອຍໆ ດຶງອອກມາ ຂຓະນັ້ນ ພຣະຜູ້ມີພຣະກາຄສເດັຈພຣະພຸທສ-ດຳເນີນໄປຕາມເສນາສນະທອດພຣະເນຕຣ໌ເຫັນກິກຂຸເຫລົ່ານັ້ນກຳລັງເອົານ້ຳຊຸບໆ ຜ້ານັ້ນແລ້ວຄ່ອຍໆ ດຶງອອກມາ ເມື່ອແລ້ວ ຈຶ່ງສເດັຈພຣະພຸທສດຳເນີນເຂົ້າໄປທາງກິກຂຸເຫລົ່ານັ້ນ ໄດ້ຕຣັສວ່າ ດູຣາກິກຂຸທັ້ງຫລາຍກິກຂຸອົງຄ໌ນີ້ອາພາຣເປັນໂຣຄຫຍັງ?

ກິກຂຸທັ້ງຫລາຍຂາບທູລວ່າ ຂ້ານ້ອຍ ທ່ານອົງຄ໌ນີ້ອາພາຣເປັນໂຣຄຝີດາດຫຼືອີສຸກອີໃສຜ້າກຣັງຢູ່ທີ່ຕົວ ເພາະນ້ຳຫນອງ ພວກຂ້າພຣະພຸທສເຈົ້າເອົານ້ຳຊຸບໆ ຜ້າເຫລົ່ານັ້ນແລ້ວຄ່ອຍໆ ດຶງອອກໄປ.

ຄັ້ງນັ້ນ ພຣະຜູ້ມີພຣະກາຄທຣົງເຮັດສັມມີກຖາ ໃນເພາະເຫຕຸເປັນເຄົ້າມູລນັ້ນ ໃນເພາະເຫຕຸແຣກເກີດນັ້ນ ແລ້ວຮັບສັ່ງກະກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ເຮົາອນຸຍາຕຜ້າປິດຝີແກ່ກິກຂຸທີ່ອາພາຣເປັນຝີກໍດີ ເປັນພຸພອງກໍດີ ເປັນສິວກໍດີ ເປັນໂຣຄຝີດາດຫຼືອີສຸກອີໃສກໍດີ.

ພຣະພຸທສານຸຍາຕ ຜ້າເຊັດຫນ້າ ຜ້າເຊັດປາກ

[໑໕໘] ຄັ້ງນັ້ນ ນາງວິສາຂາ ມິຄາຣມາຕາ ຖືຜ້າເຊັດຫນ້າ ຜ້າເຊັດປາກ ເຂົ້າໄປໃນພຸທສ-ສຳນັກ ຖວາຍບັງຄົມພຣະຜູ້ມີພຣະກາຄແລ້ວນັ່ງ ຓ ທີ່ຄວຣສ່ວນຂ້າງນຶ່ງ ໄດ້ຂາບທູລຄຳນີ້ແດ່ພຣະຜູ້ມີພຣະກາຄວ່າ ຂ້ານ້ອຍ ຂໍພອຣະຜູ້ມີພຣະກາຄ ຈົ່ງທຣົງພຣະກຣຸຕາໂປຼດຮັບຜ້າເຊັດຫນ້າ ຜ້າເຊັດປາກຂອງຂ້ານ້ອຍ ຊຶ່ງຈະເປັນໄປເພື່ອປະໂຍຊນ໌ສຸຂແກ່ຂ້ານ້ອຍ ຕລອດກາລນານດ້ວຍເທີ້ນ.

ພຣະຜູ້ມີພຣະກາຄທຣົງຮັບຜ້າເຊັດຫນ້າ ຜ້າເຊັດປາກ ເມື່ອແລ້ວໄດ້ທຣົງຊີ້ແຈງ ໃຫ້ນາງວິສາຂາມິຄາຣມາຕາເຫັນແຈ້ງ ສມາທານ ອາຈຫານ ຣ່າເຣີງດ້ວຍສັມມີກຖາ ເມື່ອນາງວິສາຂາ ມິຄາຣມາຕາ ອັນ

ພຣະຜູ້ມີພຣະກາຄທຮົງຊີ້ແຈ໊ງໃຫ້ເຫັນແຈ້ງ ສມາທານ ອາຈຫາຌ ຣ່າເຣີງດ້ວຍສັມມີກຖາແລ້ວ ລຸກຈາກທີ່ນັ່ງ ຖວາຍບັງຄົມພຣະຜູ້ມີພຣະກາຄ ທຳປະທັກษິຕກັບໄປ.

ລຳດັບນັ້ນ ພຣະຜູ້ມີພຣະກາຄທຮົງເຮັດສັມມີກຖາໃນເພາະເຫຕຸເປັນເຄົ້າມູລນັ້ນ ໃນເພາະເຫຕຸແຮກເກີດນັ້ນ ແລ້ວຮັບສັ່ງກະພິກຂຸທັ້ງຫລາຍວ່າ ດູຮາພິກຂຸທັ້ງຫລາຍ ເຮົາອນຸຌາຕຜ້າເຊັດຫນ້າຜ້າເຊັດປາກ.

ອົງຄ໌ຂອງການຖືວິສາສະ ໕ ປະການ

[໑໕໙] ກໍໂດຍສມັຍນັ້ນແລ ເຈົ້າໂຮຊະມັລລກັษຕຣິຍ໌ ເປັນພຣະສຫາຍຂອງທ່ານພຣະອານົນທ໌ ໄດ້ຝາກຜ້າໂຂມພັສຕຣ໌ຜືນເກົ່າໆ ໄວ້ກັບທ່ານພຣະອານົນທ໌ ແລະທ່ານພຣະອານົນທ໌ກໍມີຄວາມຕ້ອງການດ້ວຍຜ້າໂຂມພັສຕຣ໌ຜືນເກົ່າໆ ພິກຂຸທັ້ງຫລາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຌາຕວ່າ ດູຮາພິກຂຸທັ້ງຫລາຍ ເຮົາອນຸຌາຕໃຫ້ຖືວິສາສະແກ່ບຸຄຄົລຜູ້ປະກອບດ້ວຍອົງຄ໌ ໕ ຄື ເຄີຍເຫັນກັນມາ ໑ ເຄີຍຄົບກັນມາ ໑ ເຄີຍບອກອນຸຌາຕກັນໄວ້ ໑ ເຂົາຍັງມີຊີວິຕຢູ່ ໑ ຮູ້ວ່າເມື່ອເຮົາຖືເອົາແລ້ວ ເຂົາຈະພໍໃຈ ໑ ດູຮາພິກຂຸທັ້ງຫລາຍ ເຮົາອນຸຌາຕໃຫ້ຖືວິສາສະແກ່ບຸຄຄົລທີ່ປະກອບດ້ວຍອົງຄ໌ ໕ ເຫລົ່ານີ້.

ພຣະພຸທຘານຸຌາຕຜ້າບໍຣິຂາຣ

[໑໖໐] ກໍໂດຍສມັຍນັ້ນແລ ພິກຂຸທັ້ງຫລາຍມີໄຕຣຈີວຣບໍຣິບູຣຕ໌ແຕ່ຍັງຕ້ອງການຜ້າກຼອງນ້ຳແດ່ ຖົງແດ່ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຌາຕວ່າ ດູຮາພິກຂຸທັ້ງຫລາຍ ເຮົາອນຸຌາຕຜ້າບໍຣິຂາຣ.

ພຣະພຸທຘານຸຌາຕຜ້າທີ່ຕ້ອງອธิษฐานແລະວິກັປ

ຄັ້ງນັ້ນ ພິກຂຸທັ້ງຫລາຍໄດ້ມີຄວາມປຣິວິຕົກວ່າ ພຣະຜູ້ມີພຣະກາຄທຮົງອນຸຌາຕໄຕຣຈີວຣແດ່ ຜ້າອາບນ້ຳຝົນແດ່ ຜ້າປູນັ່ງແດ່ ຜ້າປູນອນແດ່ ຜ້າປິດຝີແດ່ ຜ້າເຊັດຫນ້າ ຜ້າເຊັດປາກແດ່ ຜ້າບໍຣິຂາຣແດ່ ຜ້າທັ້ງຫມົດນັ້ນ ຕ້ອງອธิษฐานຫຼືຕ້ອງວິກັປນໍ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຌາຕວ່າ ດູຮາພິກຂຸທັ້ງຫລາຍ ຜ້າໄຕຣຈີວຣ ເຮົາອນຸຌາຕໃຫ້ອธิษฐาน ບໍ່ແມ່ນໃຫ້ວິກັປ ຜ້າວັສສິກສາฏົກໃຫ້ອธิษฐานຕລອດ ໔ ເດືອນແຫ່ງຣະດູຝົນ ພົ້ນຈາກນັ້ນ ໃຫ້ວິກັປ ຜ້ານິສີທນະໃຫ້ອธิษฐาน ບໍ່ແມ່ນໃຫ້ວິກັປ ຜ້າປັຈຈັຕຖຣຕະ ໃຫ້ອธิษฐาน ບໍ່ແມ່ນໃຫ້ວິກັປ ຜ້າປິດຝີ ໃຫ້ອธิษฐานຕລອດເວລາທີ່ອາພາຘ ພົ້ນຈາກນັ້ນໃຫ້ວິກັປ ຜ້າເຊັດຫນ້າ ຜ້າເຊັດປາກ ໃຫ້ອธิษฐาน ບໍ່ແມ່ນໃຫ້ວິກັປ ຜ້າບໍຣິຂາຣ ໃຫ້ອธิษฐาน ບໍ່ແມ່ນໃຫ້ວິກັປ.

ຄັ້ງນັ້ນ ກິກຂຸທັ້ງຫລາຍໄດ້ມີຄວາມສົງສັຍວ່າ ຜ້າຂນາດນ້ອຍພຽງເທົ່າໃດນໍຕ້ອງວິກັປ ຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຌາຕວ່າ ດູຣາກິກຂຸທັ້ງຫລາຍ ຜ້າຂນາດນ້ອຍຍາວ ໘ ນີ້ວ ກວ້າງ ໔ ນີ້ວ ໂດຍນີ້ວພຣະສຸຄົຕ ເຮົາອນຸຌາຕໃຫ້ວິກັປ

ສມັຍຕໍ່ມາ ຜ້າອຸຕຣາສົງຄ໌ທີ່ເຮັດດ້ວຍຜ້າບັງສຸກຸລ ຂອງທ່ານພຣະມຫາກັສສປເປັນຂອງຫນັກ ກິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຌາຕວ່າ ດູຣາກິກຂຸທັ້ງຫລາຍເຮົາອນຸຌາຕໃຫ້ເຮັດການຍິບດາມດ້ວຍດ້າຍ.

ມຸມສັງໝາຕິບໍ່ສເມີກັນ ກິກຂຸທັ້ງຫລາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຌາຕວ່າ ດູຣາກິກຂຸທັ້ງຫລາຍ ເຮົາອນຸຌາຕໃຫ້ຕັດມຸມທີ່ບໍ່ສເມີອອກເສັຽ.

ດ້າຍລຸ່ຍອອກ ກິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຌາຕວ່າ ດູຣາກິກຂຸທັ້ງຫລາຍ ເຮົາອນຸຌາຕໃຫ້ຕິດຜ້າອນຸວາຕ ຜ້າຫຸ້ມຂອບ.

ສມັຍຕໍ່ມາ ແຜ່ນຜ້າສັງໝາຕິລຸ່ຍອອກ ກິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຌາຕວ່າ ດູຣາກິກຂຸທັ້ງຫລາຍ ເຮົາອນຸຌາຕໃຫ້ຍິບຕະເຂັບດັງຕາຫມາກຫ໊ອຕ.

ພຣະພຸທສານຸຌາຕຜ້າທີ່ຕັດແລະບໍ່ຕັດ

[໑໗໑] ກໍໂດຍສມັຍນັ້ນແລ ເມື່ອສົງຆ໌ກຳລັງທຳຈີວຣໃຫ້ກິກຂຸອົງຄ໌ນຶ່ງ ຜ້າຕັດທັ້ງຫມົດບໍ່ພໍ ກິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຌາຕວ່າ ດູຣາກິກຂຸທັ້ງຫລາຍ ເຮົາອນຸຌາຕຜ້າທີ່ຕ້ອງຕັດ ໔ ຜືນ ບໍ່ຕ້ອງຕັດ ໑ ຜືນ.

ຜ້າຕ້ອງຕັດ ໔ ຜືນ ບໍ່ຕ້ອງຕັດຜືນນຶ່ງ ຜ້າກໍຍັງບໍ່ພໍ ກິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຌາຕວ່າ ດູຣາກິກຂຸທັ້ງຫລາຍ ເຮົາອນຸຌາຕຜ້າ ໔ ຜືນບໍ່ຕ້ອງຕັດ ຜືນນຶ່ງຕ້ອງຕັດ.

ຜ້າ ໔ ຜືນບໍ່ຕ້ອງຕັດ ຜືນນຶ່ງຕ້ອງຕັດ ຜ້າກໍຍັງບໍ່ພໍ ກິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸຌາຕວ່າ ດູຣາກິກຂຸທັ້ງຫລາຍ ເຮົາອນຸຌາຕໃຫ້ເພີ່ມຜ້າເພີາະ ແຕ່ຜ້າທຸກຜືນທີ່ບໍ່ໄດ້ຕັດ ກິກຂຸບໍ່ຄວຣໃຊ້ ອົງຄ໌ໃດໃຊ້ ຕ້ອງອາບັຕິທຸກກົຏ.

ພຣະໃຫ້ຜ້າແກ່ໂຍມມາຣດາບິດາໄດ້

[໑໗໔] ກໍໂດຍສມັຍນັ້ນແລ ຜ້າເກີດຂຶ້ນແກ່ກິກຂຸອົງຄ໌ນຶ່ງຫລາຍຜືນແລະທ່ານປັຕຖນາຈະໃຫ້ຜ້ານັ້ນແກ່ໂຍມມາຣດາບິດາ ກິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສ

ອນຸຍາຕວ່າ ດູຣາກິກຂຸທັ້ງຫລາຍ ເມື່ອກິກຂຸໃຫ້ດ້ວຍຮູ້ວ່າມາຣດາບິດາ ເຮົາຈະຕ້ອງວ່າຫຍັງ ເຮົາອນຸຍາຕໃຫ້ສລະແກ່ມາຣດາບິດາ ແຕ່ກິກຂຸບໍ່ຄວຣທຳສັທສາໄທຍໃຫ້ຕົກໄປ ອົງຄ໌ໃດໃຫ້ຕົກໄປ ຕ້ອງອາບັຕິທຸກກົຍ.

ພຣະພຸທສບັນຍັຕິໃຫ້ຄອງຜ້າ ໔ ຜືນເຂົ້າບ້ານ

[໑໗໘] ກໍໂດຍສມັຍນັ້ນແລ ກິກຂຸອົງຄ໌ນຶ່ງເກັບຜ້າສັງຆາຕິໄວ້ໃນວິຫາຣອັນຊວັນ ແລ້ວຄອງຜ້າອຸຕຣາສົງຄ໌ກັບຜ້າອັນຕຣວາສົກເຂົ້າບ້ານເພື່ອບິຓທບາຕ ຄົນຮ້າຍຂໂມຍຜ້າສັງຆາຕິນັ້ນໄປ ກິກຂຸນັ້ນຈຶ່ງໃຊ້ຜ້າເກົ່າຄອງຈີວຣເກົ່າໆ.

ກິກຂຸທັ້ງຫລາຍເວົ້າຢ່າງນີ້ວ່າ ອາວຸໂສ ເພາະເຫຕຸໃດ ທ່ານຈຶ່ງໃຊ້ຜ້າເກົ່າ ຄອງຈີວຣເກົ່າໆລະ?

ກິກຂຸນັ້ນຕອບວ່າ ອາວຸໂສທັ້ງຫລາຍ ຂ້ານ້ອຍເກັບຜ້າສັງຆາຕິໄວ້ໃນວິຫາຣອັນຊວັນນີ້ ແລ້ວຄອງອຸຕຣາສົງຄ໌ກັບຜ້າອັນຕຣວາສົກເຂົ້າບ້ານເພື່ອບິຓທບາຕ ຄົນຮ້າຍຂໂມຍຜ້າສັງຆາຕິນັ້ນໄປ ເພາະເຫຕຸນັ້ນຂ້ານ້ອຍຈຶ່ງໃຊ້ຜ້າເກົ່າ ຄອງຈີວຣເກົ່າໆ.

ກິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສຫ້າມວ່າ ດູຣາກິກຂຸທັ້ງຫລາຍ ກິກຂຸມີແຕ່ຜ້າອຸຕຣາສົງຄ໌ກັບຜ້າອັນຕຣວາສົກບໍ່ຄວຣເຂົ້າບ້ານ ອົງຄ໌ໃດເຂົ້າໄປ ຕ້ອງອາບັຕິທຸກກົຍ.

ສມັຍຕໍ່ມາ ທ່ານພຣະອານົນທ໌ ລືມສຕິຄອງແຕ່ຜ້າອຸຕຣາສົງຄ໌ກັບຜ້າອັນຕຣວາສົກເຂົ້າບ້ານເພື່ອບິຓທບາຕ ກິກຂຸທັ້ງຫລາຍໄດ້ກ່າວຄຳນີ້ແກ່ທ່ານພຣະອານົນທ໌ວ່າ ອາວຸໂສອານົນທ໌ ພຣະຜູ້ມີພຣະກາຄທຣົງບັນຍັຕິຫ້າມໄວ້ແລ້ວ ບໍ່ແມ່ນບໍ່ວ່າ ກິກຂຸມີແຕ່ຜ້າອຸຕຣາສົງຄ໌ກັບຜ້າອັນຕຣວາສົກ ບໍ່ຄວຣເຂົ້າບ້ານ ດັ່ງນີ້ ເປັນຫຍັງພຣະຄຸຓເຈົ້າຈຶ່ງມີແຕ່ຜ້າອຸຕຣາສົງຄ໌ກັບຜ້າອັນຕຣວາສົກເຂົ້າບ້ານລະ?

ພຣະອານົນທ໌ຕອບວ່າ ແທ້ ຂ້ານ້ອຍ ພຣະຜູ້ມີພຣະກາຄທຣົງບັນຍັຕິຫ້າມໄວ້ແລ້ວວ່າ ກິກຂຸມີແຕ່ຜ້າອຸຕຣາສົງຄ໌ກັບຜ້າອັນຕຣວາສົກບໍ່ຄວຣເຂົ້າບ້ານ ກໍແຕ່ວ່າ ຂ້ານ້ອຍເຂົ້າບ້ານດ້ວຍລືມສຕິ.

ກິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ.

ເຫຕຸທີ່ເກັບຜ້າໄຕຣຈີວຣໄວ້ໄດ້

ລຳດັບນັ້ນ ພຣະຜູ້ມີພຣະກາຄທຣົງເຮັດທັມມີກຖາ ໃນເພາະເຫຕຸເປັນເຄົ້າມູລນັ້ນ ໃນເພາະເຫຕຸແຮກເກີດນັ້ນ ແລ້ວຮັບສັ່ງກະກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ເຫຕຸທີ່ເກັບຜ້າສັງຆາຕິໄວ້ໄດ້ ມີ ໕ ຢ່າງ ຄື ເຈັບໄຂ້ ໑ ສັງເກຕເຫັນວ່າຝົນຈະຕົກ ໑ ໄປສູ່ຝັ່ງແມ່ນ້ຳ ໑ ທີ່ຢູ່ຄຸ້ມໄດ້ດ້ວຍດານ ໑ ໄດ້ກຖານກຖິນ ໑ ດູຣາກິກຂຸທັ້ງຫລາຍ ເຫຕຸທີ່ເກັບຜ້າສັງຆາຕິໄວ້ໄດ້ມີ ໕ ຢ່າງນີ້ແລ.

ດູຣາກິກຂຸທັ້ງຫລາຍ ເຫຕຸທີ່ເກັບຜ້າອຸຕຣາສົງຄ໌ໄວ້ໄດ້ມີ ໕ ຢ່າງນີ້ ຄື ເຈັບໄຂ້ ໑ ສັງເກຕເຫັນວ່າຝົນຈະຕົກ ໑ ໄປສູ່ຝັ່ງແມ່ນ້ຳ ໑ ທີ່ຢູ່ຄຸ້ມໄດ້ດ້ວຍດາລ ໑ ໄດ້ກຖານກຖິນ ໑ ດູຣາກິກຂຸທັ້ງຫລາຍ ເຫຕຸທີ່ເກັບຜ້າອຸຕຣາສົງຄ໌ໄວ້ໄດ້ມີ ໕ ຢ່າງນີ້ແລ.

ດູຣາກິກຂຸທັ້ງຫລາຍ ເຫຕຸທີ່ເກັບຜ້າອັນຕຣວາສົກໄວ້ໄດ້ມີ ໕ ຢ່າງນີ້ ຄື ເຈັບໄຂ້ ໑ ສັງເກຕເຫັນວ່າຝົນຈະຕົກ ໑ ໄປສູ່ຝັ່ງແມ່ນ້ຳ ໑ ທີ່ຢູ່ຄຸ້ມໄດ້ດ້ວຍດາລ ໑ ໄດ້ກຖານກຖິນ ໑ ດູຣາກິກຂຸທັ້ງຫລາຍ ເຫຕຸທີ່ເກັບຜ້າອັນຕຣວາສົກໄວ້ໄດ້ມີ ໕ ຢ່າງນີ້ແລ.

ດູຣາກິກຂຸທັ້ງຫລາຍ ເຫຕຸທີ່ເກັບຜ້າອາບນ້ຳຝົນໄວ້ໄດ້ມີ ໕ ຢ່າງນີ້ ຄື ເຈັບໄຂ້ ໑ ໄປນອກສີມາ ໑ ໄປສູ່ຝັ່ງແມ່ນ້ຳ ໑ ທີ່ຢູ່ຄຸ້ມໄດ້ດ້ວຍດາລ ໑ ຜ້າອາບນ້ຳຝົນຍັງບໍ່ໄດ້ທຳຫຼືເຮັດຄ້າງໄວ້ ໑ ດູຣາກິກຂຸທັ້ງຫລາຍ ເຫຕຸທີ່ເກັບຜ້າອາບນ້ຳຝົນໄວ້ໄດ້ມີ ໕ ຢ່າງນີ້ແລ.

ຖວາຍຈີວຣເປັນຂອງສົງຆ໌

[໑໒໔] ກໍໂດຍສມັຍນັ້ນແລ ກິກຂຸອົງຄ໌ນຶ່ງຈຳພັຣษາຢູ່ແຕ່ຜູ້ດຽວ ຄົນທັ້ງຫລາຍໃນຖິ່ນນັ້ນໄດ້ຖວາຍຈີວຣດ້ວຍກ່າວຄຳວ່າ ຂ້າພເຈົ້າທັ້ງຫລາຍຖວາຍແກ່ສົງຆ໌ ຈຶ່ງກິກຂຸອົງຄ໌ນັ້ນໄດ້ມີຄວາມປຣິວິຕົກວ່າ ພຣະຜູ້ມີພຣະກາຄທຣົງບັຌລັຕິໄວ້ວ່າ ກິກຂຸ ໔ ອົງຄ໌ເປັນຢ່າງຫນ້ອຍຊື່ວ່າສົງຆ໌ ແຕ່ເຮົາອົງຄ໌ດຽວ ແລະຄົນເຫລົ່ານີ້ໄດ້ຖວາຍຈີວຣດ້ວຍກ່າວຄຳວ່າ ຂ້າພເຈົ້າທັ້ງຫລາຍຖວາຍແກ່ສົງຆ໌ ດັ່ງນີ້ ຖ້າເປັນຫຍັງເຮົາຈະຕ້ອງນຳຈີວຣຂອງສົງຆ໌ເຫລົ່ານີ້ໄປພຣະນຄຣສາວັຕຖີ ເມື່ອແລ້ວໄດ້ນຳຈີວຣເຫລົ່ານັ້ນໄປພຣະນຄຣສາວັຕຖີ ຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກິກຂຸ ຈີວຣເຫລົ່ານັ້ນເປັນຂອງທ່ານຜູ້ດຽວ ຈົນເຖິງເວລາເດາະກຖິນ.

ດູຣາກິກຂຸທັ້ງຫລາຍ ກໍໃນຂໍ້ນີ້ ກິກຂຸຈຳພັຣษາອົງຄ໌ດຽວ ປະຊາຊົນໃນຖິ່ນນັ້ນຖວາຍຈີວຣດ້ວຍກ່າວຄຳວ່າ ພວກຂ້າພເຈົ້າຖວາຍແກ່ສົງຆ໌ ດູຣາກິກຂຸທັ້ງຫລາຍ ເຮົາອນຸຌາຕຈີວຣເຫລົ່ານັ້ນແກ່ທ່ານອົງຄ໌ດຽວຈົນເຖິງເວລາເດາະກຖິນ.

ສມັຍຕໍ່ມາ ກິກຂຸອົງຄ໌ນຶ່ງຢູ່ອົງຄ໌ດຽວຕລອດຣະດູກາລ ປະຊາຊົນໃນຖິ່ນນັ້ນໄດ້ຖວາຍຈີວຣກ່າວຄຳວ່າ ພວກຂ້າພເຈົ້າຖວາຍແກ່ສົງຆ໌ ຈຶ່ງກິກຂຸອົງຄ໌ນັ້ນໄດ້ດຳຣິດັ່ງນີ້ວ່າ ພຣະຜູ້ມີພຣະກາຄທຣົງບັຌລັຕິໄວ້ວ່າ ກິກຂຸ ໔ ອົງຄ໌ເປັນຢ່າງຫນ້ອຍຊື່ວ່າສົງຆ໌ ແຕ່ເຮົາຢູ່ຜູ້ດຽວ ແລະຄົນເຫລົ່ານີ້ໄດ້ຖວາຍຈີວຣດ້ວຍກ່າວຄຳວ່າ ພວກຂ້າພເຈົ້າຖວາຍແກ່ສົງຆ໌ ຖ້າເປັນຫຍັງເຮົາຈະຕ້ອງນຳຈີວຣຂອງສົງຆ໌ເຫລົ່ານີ້ໄປພຣະນຄຣສາວັຕຖີ ເມື່ອແລ້ວໄດ້ນຳຈີວຣເຫລົ່ານັ້ນໄປພຣະນຄຣສາວັຕຖີ ແຈ້ງຄວາມນັ້ນແກ່ກິກຂຸທັ້ງຫລາຍ ກິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນ

ແດ່ພຣະຜູ້ມີພຣະພາຄ. ພຣະຜູ້ມີພຣະພາຄຕຣັສອນຸຍາຕວ່າ ດູຣາພິກຂຸທັ້ງຫລາຍ ເຮົາອນຸຍາຕໃຫ້ສົງຄ໌ຜູ້ຢູ່ພ້ອມຫນ້າກັນແຈກ.

ດູຣາພິກຂຸທັ້ງຫລາຍ ກໍໃນຂໍ້ນີ້ ພິກຂຸຢູ່ຜູ້ດຽວຕລອດຣະດູກາລ ປະຊາຊົນໃນຖິ່ນນັ້ນໄດ້ຖວາຍຈີວຣດ້ວຍກ່າວຄຳວ່າພວກຂ້າພເຈົ້າຖວາຍແກ່ສົງຄ໌ ດູຣາພິກຂຸທັ້ງຫລາຍ ເຮົາອນຸຍາຕໃຫ້ພິກຂຸອົງຄ໌ນັ້ນອະທິຏຖານຈີວຣເຫລົ່ານັ້ນວ່າ ຈີວຣເຫລົ່ານີ້ຂອງເຮົາ ຖ້າເມື່ອພິກຂຸອົງຄ໌ນັ້ນຍັງບໍ່ໄດ້ອະທິຏຖານຈີວຣນັ້ນ ມີພິກຂຸອົງຄ໌ອື່ນມາ ຄວຣໃຫ້ສ່ວນແບ່ງເທົ່າໆ ກັນ ຖ້າເມື່ອພິກຂຸ ໔ ອົງຄ໌ກຳລັງແບ່ງຈີວຣນັ້ນ ແຕ່ຍັງບໍ່ໄດ້ຈັບສລາກ ມີພິກຂຸອົງຄ໌ອື່ນມາ ຄວຣໃຫ້ສ່ວນແບ່ງເທົ່າໆ ກັນ ຖ້າເມື່ອພິກຂຸ ໑ ອົງຄ໌ກຳລັງແບ່ງຈີວຣນັ້ນ ແລະຈັບສລາກແລ້ວແລ້ວ ມີພິກຂຸອົງຄ໌ອື່ນມາ ພວກທ່ານບໍ່ປັຕຖນາກໍບໍ່ຕ້ອງໃຫ້ສ່ວນແບ່ງ.

ສມັຍຕໍ່ມາ ມີພຣະເຖຣະ ໒ ອ້າຍນ້ອງ ຄື ທ່ານພຣະອິສິທາສ ໑ ທ່ານພຣະອິສິພັຕຕະ ໑ ຈຳພັຣືາຢູ່ໃນພຣະນຄຣສາວັຕຖີ ໄດ້ໄປອາວາສໃກ້ບ້ານແຫ່ງນຶ່ງ ຄົນທັ້ງຫລາຍກ່າວກັນວ່າ ນານໆ ພຣະເຖຣະທັ້ງສອງຈະໄດ້ມາ ຈຶ່ງໄດ້ຖວາຍພັຕຕາຫາຣພ້ອມທັ້ງຈີວຣ

ພວກພິກຂຸປະຈຳຖິ່ນຖາມພຣະເຖຣະທັ້ງສອງວ່າ ທ່ານຂ້ານ້ອຍ ຈີວຣຂອງສົງຄ໌ເຫລົ່ານີ້ ເກີດຂຶ້ນເພາະອາສັຍພຣະຄຸຓເຈົ້າທັ້ງສອງ ພຣະຄຸຓເຈົ້າທັ້ງຫລາຍຈະຍິນດີຮັບສ່ວນແບ່ງບໍ່?

ພຣະເຖຣະທັ້ງສອງຕອບຢ່າງນີ້ວ່າ ອາວຸໂສທັ້ງຫລາຍ ຂ້ານ້ອຍຮູ້ທົ່ວເຖິງທັມມ໌ທີ່ພຣະຜູ້ມີພຣະພາຄທຣົງສແດງແລ້ວ ໂດຍປະການທີ່ຈີວຣເຫລົ່ານັ້ນເປັນຂອງພວກທ່ານເທົ່ານັ້ນຈົນເຖິງເວລາເດາະກຖິນ.

ສມັຍຕໍ່ມາ ພິກຂຸ ໑ ຮູປ ຈ□າພັຣືາຢູ່ໃນພຣະນຄຣຣາຊຄຣຶຫ໌ ປະຊາຊົນໃນເມືອງນັ້ນຖວາຍຈີວຣດ້ວຍກ່າວຄຳວ່າ ພວກຂ້າພເຈົ້າຖວາຍແກ່ສົງຄ໌ ຈຶ່ງພິກຂຸເຫລົ່ານັ້ນໄດ້ດຳຣິດັ່ງນີ້ວ່າ ພຣະຜູ້ມີພຣະພາຄທຣົງບັນຍັຕິໄວ້ວ່າ ພິກຂຸ ໔ ອົງຄ໌ເປັນຢ່າງຫນ້ອຍຊື່ວ່າສົງຄ໌ ແຕ່ເຮົາມີ ໑ ອົງຄ໌ດ້ວຍກັນ ແລະຄົນເຫລົ່ານີ້ຖວາຍຈີວຣດ້ວຍກ່າວຄຳວ່າ ພວກຂ້າພເຈົ້າຖວາຍແກ່ສົງຄ໌ ພວກເຮົາຈະຕ້ອງປຕິບັຕິຢ່າງໃດນໍ ສມັຍນັ້ນ ພຣະເຖຣະຫລາຍອົງຄ໌ ຄື ທ່ານພຣະນິລວາສີ ທ່ານພຣະສາຓວາສີ ທ່ານພຣະໂຄປກະ ທ່ານພຣະພຄຸ ແລະທ່ານພຣະຜລິກສັນທານະ ຢູ່ ຓ ວັດກຸກກຸຕາຣາມ ເຂຕນຄຣປາຕລິບຸຕຣ໌ ຈຶ່ງພິກຂຸເຫລົ່ານັ້ນເດີນທາງໄປນຄຣປາຕລິບຸຕຣ໌ແລ້ວຮຽນຖາມພຣະເຖຣະທັ້ງຫລາຍ ພຣະເຖຣະທັ້ງຫລາຍກ່າວຢ່າງນີ້ວ່າ ພວກເຮົາຮູ້ທົ່ວເຖິງທັມມ໌ທີ່ພຣະຜູ້ມີພຣະພາຄທຣົງສແດງແລ້ວ ໂດຍປະການທີ່ຈີວຣເຫລົ່ານັ້ນເປັນຂອງພວກທ່ານນັ້ນ ຈົນເຖິງເວລາເດາະກຖິນ.

ເຣື່ອງພຣະອຸປນັນທ໌

[໑໗໕] ກໍໂດຍສມັຍນັ້ນແລ ທ່ານພຣະອຸປນັນທສາກຍບຸຕຣ໌ ຈຳພັຣືາຢູ່ໃນພຣະນຄຣສາວັຕຖີໄດ້ໄປອາວາສໃກ້ບ້ານແຫ່ງນຶ່ງ ພິກຂຸທັ້ງຫລາຍໃນວັດນັ້ນປັຕຖນາຈະແບ່ງຈີວຣ ຈຶ່ງປະຊຸມກັນ ພິກຂຸ

ເຫລົ່ານັ້ນ ເວົ້າຢ່າງນີ້ວ່າ ອາວຸໂສ ກິກຂຸທັ້ງຫລາຍຈະແບ່ງຈີວຣຂອງສົງໝ໌ເຫລົ່ານີ້ແລ ທ່ານຈະຍິນດີສ່ວນແບ່ງບໍ່ ຂ້ານ້ອຍ ທ່ານພຣະອຸປນັນທ໌ຕອບວ່າ ອາວຸໂສທັ້ງຫລາຍ ຂ້ານ້ອຍຍິນດີ ຂ້ານ້ອຍ ແລ້ວໄດ້ຮັບສ່ວນຈີວຣແຕ່ອາວາສນັ້ນໄປວັດອື່ນ ແມ້ກິກຂຸທັ້ງຫລາຍໃນວັດນັ້ນກໍປັຕຖນາຈະແບ່ງຈີວຣ ຈຶ່ງປະຊຸມກັນ ແລະເວົ້າຢ່າງນີ້ວ່າ ອາວຸໂສ ກິກຂຸທັ້ງຫລາຍຈະແບ່ງຈີວຣຂອງສົງໝ໌ເຫລົ່ານີ້ແລ ທ່ານຈະຍິນດີສ່ວນແບ່ງບໍ່ຂ້ານ້ອຍ ທ່ານພຣະອຸປນັນທ໌ຕອບວ່າ ອາວຸໂສທັ້ງຫລາຍ ຂ້ານ້ອຍຍິນດີ ຂ້ານ້ອຍ ແລ້ວໄດ້ຮັບສ່ວນຈີວຣແຕ່ອາວາສນັ້ນໄປວັດອື່ນ ແມ້ກິກຂຸທັ້ງຫລາຍໃນວັດນັ້ນກໍປັຕຖນາຈະແບ່ງຈີວຣຈຶ່ງປະຊຸມກັນ ແລະກໍເວົ້າຢ່າງນີ້ວ່າ ອາວຸໂສ ກິກຂຸທັ້ງຫລາຍຈະແບ່ງຈີວຣຂອງສົງໝ໌ເຫລົ່ານີ້ແລ ທ່ານຈະຍິນດີສ່ວນແບ່ງບໍ່ ຂ້ານ້ອຍ ທ່ານພຣະອຸປນັນທ໌ຕອບວ່າ ອາວຸໂສທັ້ງຫລາຍ ຂ້ານ້ອຍຍິນດີ ຂ້ານ້ອຍ ແລ້ວໄດ້ຮັບຈີວຣແຕ່ອາວາສແມ້ນັ້ນ ຖືຈີວຣຫໍ່ໃຫຍ່ກັບມາພຣະນຄຣສາວັຕຖີຕາມເດີມ.

ກິກຂຸທັ້ງຫລາຍຊົມເຊີຍຢ່າງນີ້ວ່າ ພຣະຄຸຓເຈົ້າອຸປນັນທ໌ ທ່ານເປັນຜູ້ມີບຸຓຫຼາຍ ຈີວຣຈຶ່ງເກີດຂຶ້ນແກ່ທ່ານຫຼວງຫຼາຍ.

ອຸປ. ອາວຸໂສທັ້ງຫລາຍ ບຸຓຂອງຂ້ານ້ອຍທີ່ໃດ ຂ້ານ້ອຍຈຳພັຣສາຢູ່ໃນພຣະນຄຣສາວັຕຖີນີ້ ໄດ້ໄປອາວາສໃກ້ບ້ານແຫ່ງນຶ່ງ ພວກກິກຂຸໃນວັດນັ້ນ ປັຕຖນາຈະແບ່ງຈີວຣ ຈຶ່ງປະຊຸມກັນ ພວກທ່ານກ່າວກັບຂ້ານ້ອຍຢ່າງນີ້ວ່າ ອາວຸໂສ ກິກຂຸທັ້ງຫລາຍຈະແບ່ງຈີວຣຂອງສົງໝ໌ເຫລົ່ານີ້ແລ ທ່ານຈະຍິນດີສ່ວນແບ່ງບໍ່ ຂ້ານ້ອຍ ຂ້ານ້ອຍຕອບວ່າ ອາວຸໂສທັ້ງຫລາຍ ຂ້ານ້ອຍຍິນດີ ຂ້ານ້ອຍ ແລ້ວໄດ້ຮັບສ່ວນຈີວຣແຕ່ອາວາສນັ້ນໄປວັດອື່ນແມ້ກິກຂຸໃນວັດນັ້ນ ກໍປັຕຖນາຈະແບ່ງຈີວຣ ຈຶ່ງປະຊຸມກັນ ແລະພວກທ່ານກໍໄດ້ກ່າວກັບຂ້ານ້ອຍຢ່າງນີ້ວ່າ ອາວຸໂສ ກິກຂຸທັ້ງຫລາຍຈະແບ່ງຈີວຣຂອງສົງໝ໌ເຫລົ່ານີ້ແລ ທ່ານຈະຍິນດີສ່ວນແບ່ງບໍ່ ຂ້ານ້ອຍ ຂ້ານ້ອຍຕອບວ່າ ອາວຸໂສທັ້ງຫລາຍ ຂ້ານ້ອຍຍິນດີ ຂ້ານ້ອຍ ແລ້ວໄດ້ຮັບສ່ວນຈີວຣແຕ່ອາວາສນັ້ນ ໄປວັດອື່ນ ແມ້ກິກຂຸໃນວັດນັ້ນກໍປັຕຖນາຈະແບ່ງຈີວຣ ຈຶ່ງປະຊຸມກັນ ແລະກ່າວກັບຂ້ານ້ອຍຢ່າງນີ້ວ່າ ອາວຸໂສ ກິກຂຸທັ້ງຫລາຍຈະແບ່ງຈີວຣຂອງສົງໝ໌ເຫລົ່ານີ້ແລ ທ່ານຈະຍິນດີສ່ວນແບ່ງບໍ່ ຂ້ານ້ອຍ ຂ້ານ້ອຍຕອບວ່າ ອາວຸໂສທັ້ງຫລາຍ ຂ້ານ້ອຍຍິນດີຂ້ານ້ອຍ ແລ້ວໄດ້ຮັບສ່ວນຈີວຣແຕ່ອາວາສແມ້ນັ້ນ ເພາະຢ່າງນີ້ ຈີວຣຈຶ່ງເກີດຂຶ້ນແກ່ຂ້ານ້ອຍຫຼວງຫຼາຍ.

ກິ. ພຣະຄຸຓເຈົ້າອຸປນັນທ໌ ທ່ານຈຳພັຣສາໃນວັດນຶ່ງ ແລ້ວຍັງຍິນດີສ່ວນຈີວຣໃນອີກວັດນຶ່ງບໍ່?

ອຸປ. ຢ່າງນັ້ນ ຂ້ານ້ອຍ.

ບັຣດາພິກຂຸທີ່ເປັນຜູ້ມັກຫນ້ອຍ ... ຕ່າງກໍເພ່ງໂທษ ຕິຕຽນ ໂພນທະນາວ່າ ເປັນຫຍັງ ທ່ານພຣະອຸປນັນທສາກຍບຸຕຣ໌ ຈຳພັຣษາໃນວັດນຶ່ງແລ້ວ ຈຶ່ງໄດ້ຍິນດີສ່ວນຈີວຣໃນອີກວັດນຶ່ງລະ ແລ້ວຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ

ພຣະຜູ້ມີພຣະກາຄທຣົງສອບຖາມທ່ານພຣະອຸປນັນທ໌ວ່າ ດູຣາອຸປນັນທ໌ ຂ່າວວ່າທ່ານຈຳພັຣษາໃນວັດນຶ່ງແລ້ວ ຍິນດີສ່ວນຈີວຣໃນອີກວັດນຶ່ງ ແທ້ບໍ່?

ທ່ານພຣະອຸປນັນທ໌ທູລຮັບວ່າ ແທ້ຂ້ານ້ອຍ.

ພຣະຜູ້ມີພຣະກາຄພຸທສເຈົ້າທຣົງຕິຕຽນວ່າ ດູຣາໂມฆບຸຣຸษ ທ່ານຈຳພັຣษາໃນວັດນຶ່ງແລ້ວ ເປັນຫຍັງຈຶ່ງໄດ້ຍິນດີສ່ວນຈີວຣໃນອີກວັດນຶ່ງລະ ການກະທຳຂອງທ່ານຫັ້ນບໍ່ເປັນໄປເພື່ອຄວາມເລື່ອມໃສຂອງຊຸມຊົນທີ່ຍັງບໍ່ເລື່ອມໃສ ... ເມື່ອແລ້ວ ທຣົງເຮັດສັມມີກາຖາ ຮັບສັ່ງກະພິກຂຸທັ້ງຫລາຍວ່າ ດູຣາພິກຂຸທັ້ງຫລາຍ ພິກຂຸຈຳພັຣษາໃນວັດນຶ່ງແລ້ວ ບໍ່ຄວຣຍິນດີສ່ວນຈີວຣໃນວັດອື່ນ ອົງຄ໌ໃດຍິນດີ ຕ້ອງອາບັຕິທຸກກົฎ.

ສມັຍຕໍ່ມາ ທ່ານພຣະອຸປນັນທສາກຍບຸຕຣ໌ ອົງຄ໌ດຽວຈຳພັຣษາຢູ່ສອງວັດ ດ້ວຍຄຶດວ່າໂດຍວິธີຢ່າງນີ້ ຈີວຣຈະເກີດຂຶ້ນແກ່ເຮົາຫຼາຍ ຄັ້ງນັ້ນ ພິກຂຸທັ້ງຫລາຍໄດ້ມີຄວາມສົງສັຍວ່າ ພວກເຮົາຈະໃຫ້ສ່ວນຈີວຣແກ່ທ່ານພຣະອຸປນັນທສາກຍບຸຕຣ໌ຢ່າງໃດນໍ ແລ້ວຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ

ພຣະຜູ້ມີພຣະກາຄຕຣັສແນະວ່າ ດູຣາພິກຂຸທັ້ງຫລາຍ ພວກທ່ານຈົ່ງໃຫ້ສ່ວນແກ່ໂມฆບຸຣຸษສ່ວນດຽວ.

ພິກຂຸທັ້ງຫລາຍ ກໍໃນຂໍ້ນີ້ພິກຂຸອົງຄ໌ດຽວ ຈຳພັຣษາຢູ່ ໔ ວັດ ດ້ວຍຄຶດວ່າໂດຍວິธີຢ່າງນີ້ ຈີວຣຈະເກີດຂຶ້ນແກ່ເຮົາຫຼາຍ ຖ້າພິກຂຸຈຳພັຣษາໃນວັດນັ້ນເຄິ່ງນຶ່ງ ວັດນັ້ນເຄິ່ງນຶ່ງ ຄວຣໃຫ້ສ່ວນຈີວຣໃນວັດນັ້ນເຄິ່ງນຶ່ງ ວັດນັ້ນເຄິ່ງນຶ່ງ ຫຼືຈຳພັຣษາໃນວັດໃດຫຼາຍກ່ອນ ຄວຣໃຫ້ສ່ວນຈີວຣໃນວັດນັ້ນ.

ເຣື່ອງພຣະອາພາธໂຣຄທ້ອງຣ່ວງ

[໑໗໗] ກໍໂດຍສມັຍນັ້ນແລ ພິກຂຸອົງຄ໌ນຶ່ງອາພາธເປັນໂຣຄທ້ອງຣ່ວງ ນອນຈົມກອງມູຕຣ໌ກອງຄູຖຂອງຕົນຢູ່ ຄັ້ງນັ້ນ ພຣະຜູ້ມີພຣະກາຄມີທ່ານພຣະອານົນທ໌ເປັນປັຈฉາສມຕะ ສເດັຈພຣະພຸທສດຳເນີນໄປຕາມເສນາສນະ ໄດ້ສເດັຈເຂົ້າໄປທາງທີ່ຢູ່ຂອງພິກຂຸອົງຄ໌ນັ້ນ ໄດ້ທອດພຣະເນຕຣ໌ເຫັນພິກຂຸອົງຄ໌ນັ້ນ ນອນຈົມກອງມູຕຣ໌ກອງຄູຖຂອງຕົນຢູ່ ເມື່ອແລ້ວສເດັຈເຂົ້າໄປໃກ້ພິກຂຸອົງຄ໌ນັ້ນ ແລ້ວຕຣັສຖາມວ່າ ທ່ານອາພາธເປັນໂຣຄຫຍັງພິກຂຸ?

ກິ. ຂ້າພຣະພຸທຸສເຈົ້າອາພາສເປັນໂຣຄທ້ອງຣ່ວງ ຂ້ານ້ອຍ.

ພ. ທ່ານມີຜູ້ພຍາບາລບໍ່ລະ ກິກຂຸ?

ກິ. ບໍ່ມີ ພຣະພຸທຸສເຈົ້າ.

ພ. ເພາະເຫຕຸໃດ ກິກຂຸທັ້ງຫລາຍຈຶ່ງບໍ່ພຍາບາລທ່ານ?

ກິ. ເພາະຂ້າພຣະພຸທຸສເຈົ້າບໍ່ໄດ້ທຳອຸປກາຣະແກ່ກິກຂຸທັ້ງຫລາຍ ຈັ່ງຊັ້ນກິກຂຸທັ້ງຫລາຍຈຶ່ງບໍ່ພຍາບາລຂ້າພຣະພຸທຸສເຈົ້າ ຂ້ານ້ອຍ.

ຈຶ່ງພຣະຜູ້ມີພຣະກາຄຮັບສັ່ງກັບທ່ານພຣະອານົນທ໌ວ່າ ອານົນທ໌ ທ່ານໄປຕັກນ້ຳມາ ເຮົາຈະສົງນ້ຳກິກຂຸອົງຄ໌ນີ້.

ທ່ານພຣະອານົນທ໌ທູລຮັບສນອງພຣະພຸທຸສບັລຊາວ່າ ເປັນດັ່ງນັ້ນ ຂ້ານ້ອຍ ດັ່ງນີ້ແລ້ວຕັກນ້ຳມາຖວາຍ ພຣະຜູ້ມີພຣະກາຄທຣົງຣົດນ້ຳ ທ່ານພຣະອານົນທ໌ຂັດສີ ພຣະຜູ້ມີພຣະກາຄທຣົງຍົກສີຣະທ່ານພຣະອານົນທ໌ຍົກຕີນແລ້ວວາງເທິງຕຽງ

ຄັ້ງນັ້ນ ພຣະຜູ້ມີພຣະກາຄຮັບສັ່ງໃຫ້ປະຊຸມກິກຂຸສົງຄ໌ ໃນເພາະເຫຕຸເປັນເຄົ້າມູລນັ້ນ ໃນເພາະເຫຕຸແຮກເກີດນັ້ນ ແລ້ວທຣົງສອບຖາມກິກຂຸທັ້ງຫລາຍວ່າ ໃນວິຫາຣຫລັງນັ້ນ ມີກິກຂຸອາພາສບໍ່ ກິກຂຸທັ້ງຫລາຍ?

ກິ. ມີ ຂ້ານ້ອຍ

ພ. ກິກຂຸອົງຄ໌ນັ້ນອາພາສເປັນໂຣຄຫຍັງ ກິກຂຸທັ້ງຫລາຍ?

ກິ. ທ່ານອົງຄ໌ນັ້ນ ອາພາສເປັນໂຣຄທ້ອງຣ່ວງ ຂ້ານ້ອຍ.

ພ. ກິກຂຸອົງຄ໌ນັ້ນ ມີຜູ້ພຍາບາລບໍ່ລະ ກິກຂຸທັ້ງຫລາຍ?

ກິ. ບໍ່ມີ ພຣະພຸທຸສເຈົ້າ

ພ. ເພາະເຫຕຸໃດ ກິກຂຸທັ້ງຫລາຍຈຶ່ງບໍ່ພຍາບາລທ່ານ?

ກິ. ເພາະທ່ານອົງຄ໌ນັ້ນບໍ່ໄດ້ທຳອຸປກາຣະແກ່ກິກຂຸທັ້ງຫລາຍ ຈັ່ງຊັ້ນ ກິກຂຸທັ້ງຫລາຍຈຶ່ງບໍ່ພຍາບາລທ່ານອົງຄ໌ນັ້ນ ຂ້ານ້ອຍ.

ພ. ດູຣາກິກຂຸທັ້ງຫລາຍ ພວກທ່ານບໍ່ມີມາຣດາບໍ່ມີບິດາ ຜູ້ໃດລະຈະຄວຣພຍາບາລພວກທ່ານຖ້າພວກທ່ານຈະບໍ່ພຍາບາລກັນເອງ ໃຄຣລະຈະພຍາບາລ ດູຣາກິກຂຸທັ້ງຫລາຍ ຜູ້ໃດຈະຕ້ອງອຸປັຕຖາກເຮົາ

ຜູ້ນັ້ນຈຶ່ງພຍາບາລກິກຂຸອາພາຣ ຖ້າມີອຸປັຊຊາຍະ ອຸປັຊຊາຍະຄວຣພຍາບາລຈົນຕລອດຊີວິຕ ຫຼືຈົນກວ່າຈະຫາຍ ຖ້າມີອາຈາຣຍ໌ ອາຈາຣຍ໌ຄວຣພຍາບາລຈົນຕລອດຊີວິຕ ຫຼືຈົນກວ່າຈະຫາຍ ຖ້າມີສັທທິວິຫາຣິກ ສັທທິວິຫາຣິກຄວຣພຍາບາລຈົນຕລອດຊີວິຕ ຫຼືຈົນກວ່າຈະຫາຍ ຖ້າມີອັນເຕວາສິກ ອັນເຕວາສິກຄວຣພຍາບາລຈົນຕລອດຊີວິຕ ຫຼືຈົນກວ່າຈະຫາຍ ຖ້າມີກິກຂຸຜູ້ຮ່ວມອຸປັຊຊາຍະ ກິກຂຸຜູ້ຮ່ວມອຸປັຊຊາຍະຄວຣພຍາບາລຈົນຕລອດຊີວິຕ ຫຼືຈົນກວ່າຈະຫາຍ ຖ້າມີກິກຂຸຜູ້ຮ່ວມອາຈາຣຍ໌ ກິກຂຸຜູ້ຮ່ວມອາຈາຣຍ໌ຄວຣພຍາບາລຈົນຕລອດຊີວິຕ ຫຼືຈົນກວ່າຈະຫາຍ ຖ້າບໍ່ມີອຸປັຊຊາຍະ ອາຈາຣຍ໌ ສັທທິວິຫາຣິກ ອັນເຕວາສິກ ກິກຂຸຜູ້ຮ່ວມອຸປັຊຊາຍະ ຫຼືກິກຂຸຜູ້ຮ່ວມອາຈາຣຍ໌ ສົງฆ໌ຕ້ອງພຍາບາລ ຖ້າບໍ່ພຍາບາລ ຕ້ອງອາບັຕິທຸກກົฎ.

ອົງຄ໌ຂອງກິກຂຸອາພາຣທີ່ພຍາບາລໄດ້ຍາກ ໕ ຢ່າງ

ດູຣາກິກຂຸທັ້ງຫລາຍ ກິກຂຸອາພາຣທີ່ປະກອບດ້ວຍອົງຄ໌ ໕ ເປັນຜູ້ພຍາບາລໄດ້ຍາກ ຄື ບໍ່ເຮັດຄວາມສບາຍ ໑ ບໍ່ຮູ້ປະມາຕໃນຄວາມສບາຍ ໑ ບໍ່ฉັນຍາ ໑ ບໍ່ບອກອາການໄຂ້ຕາມແທ້ແກ່ຜູ້ພຍາບາລທີ່ມຸ່ງປະໂຍຊນ໌ ຄື ບໍ່ບອກອາການໄຂ້ທີ່ກຳເຣີບວ່າ ກຳເຣີບ ອາການໄຂ້ທີ່ທຸເລົາວ່າທຸເລົາ ອາການໄຂ້ທີ່ທຣົງຢູ່ວ່າທຣົງຢູ່ ໑ ມີນິສັຍເປັນຄົນບໍ່ອົດທົນຕໍ່ທຸກຂເວທນາທີ່ເກີດປຣາກົຕໃນຮ່າງກາຍ ອັນກລ້າແຂງ ຮຸນແຮງ ບໍ່ເປັນທີ່ຍິນດີ ບໍ່ເປັນທີ່ພໍໃຈ ອັນຈະຈົບຊີວິຕໄປເສັຽ ໑ ດູຣາກິກຂຸທັ້ງຫລາຍ ກິກຂຸອາພາຣທີ່ປະກອບດ້ວຍອົງຄ໌ ໕ ນີ້ແລ ເປັນຜູ້ພຍາບາລໄດ້ຍາກ.

ອົງຄ໌ຂອງກິກຂຸອາພາຣທີ່ພຍາບາລໄດ້ງ່າຍ ໕ ຢ່າງ

ດູຣາກິກຂຸທັ້ງຫລາຍ ກິກຂຸອາພາຣທີ່ປະກອບດ້ວຍອົງຄ໌ ໕ ເປັນຜູ້ພຍາບາລໄດ້ງ່າຍ ຄືທຳຄວາມສບາຍ ໑ ຮູ້ປະມາຕໃນຄວາມສບາຍ ໑ ฉັນຍາ ໑ ບອກອາການປ່ວຍໄຂ້ຕາມແທ້ແກ່ຜູ້ພຍາບາລທີ່ມຸ່ງປະໂຍຊນ໌ ຄືບອກອາການໄຂ້ທີ່ກຳເຣີບວ່າກຳເຣີບອາການໄຂ້ທີ່ທຸເລົາວ່າທຸເລົາ ອາການໄຂ້ທີ່ທຣົງຢູ່ວ່າທຣົງຢູ່ ໑ ມີນິສັຍເປັນຄົນອົດທົນຕໍ່ທຸກຂເວທນາ ອັນກລ້າແຂງ ຮຸນແຮງ ບໍ່ເປັນທີ່ຍິນດີ ບໍ່ເປັນທີ່ພໍໃຈ ອັນຈະຈົບຊີວິຕໄປເສັຽ ໑ ດູຣາກິກຂຸທັ້ງຫລາຍ ກິກຂຸອາພາຣທີ່ປະກອບດ້ວຍອົງຄ໌ ໕ ນີ້ແລ ເປັນຜູ້ພຍາບາລໄດ້ງ່າຍ.

ອົງຄ໌ຂອງກິກຂຸຜູ້ບໍ່ເຂົ້າໃຈພຍາບາລ ໕ ຢ່າງ

ດູຣາກິກຂຸທັ້ງຫລາຍ ກິກຂຸຜູ້ພຍາບາລໄຂ້ທີ່ປະກອບດ້ວຍອົງຄ໌ ໕ ບໍ່ຄວຣພຍາບາລໄຂ້ ຄືເປັນຜູ້ບໍ່ສາມາຖເພື່ອປະກອບ ໑ ບໍ່ຮູ້ຈັກຂອງສແລງແລະບໍ່ສແລງ ຄື ນຳຂອງສແລງເຂົ້າໄປໃຫ້ ກັນຂອງ

ບໍ່ສແລງອອກເສັຽ ໑ ພຍາບາລໄຂ້ເຫັນແກ່ອາມິສ ບໍ່ມີຈິຕເມຕຕາ ໑ ເປັນຜູ້ບໍ່ມັກທີ່ຈະນຳອຸຈຈາຣະ ປັສສາວະ ເຂຕະ ຫຼືຂອງທີ່ອາຕັດອອກໄປ ໑ ເປັນຜູ້ບໍ່ສາມາຖຈະຊີ້ແຈ້ງໃຫ້ຄົນໄຂ້ເຫັນແຈ້ງ ສມາທານ ອາຈຫາຌ ຣ່າເຣີງ ດ້ວຍສັມມິກາຖາໃນກາລທຸກເມື່ອ ໑ ດູຣາກິກຂຸທັ້ງຫລາຍ ກິກຂຸຜູ້ພຍາບາລໄຂ້ທີ່ປະກອບດ້ວຍອົງຄ໌ ໔ ນີ້ແລ ບໍ່ຄວຣພຍາບາລໄຂ້.

ອົງຄ໌ຂອງກິກຂຸຜູ້ເຂົ້າໃຈພຍາບາລ ໕ ຢ່າງ

ດູຣາກິກຂຸທັ້ງຫລາຍ ກິກຂຸຜູ້ພຍາບາລໄຂ້ທີ່ປະກອບດ້ວຍອົງຄ໌ ໕ ຄວຣພຍາບາລໄຂ້ ຄືເປັນຜູ້ສາມາຖປະກອບຍາ ໑ ຮູ້ຈັກຂອງສແລງ ແລະບໍ່ສແລງ ຄືກັນຂອງສແລງອອກ ນຳຂອງບໍ່ສແລງເຂົ້າໄປໃຫ້ ໑ ມີຈິຕເມຕຕາພຍາບາລໄຂ້ ບໍ່ເຫັນແກ່ອາມິສ ໑ ເປັນຜູ້ບໍ່ບໍ່ມັກທີ່ຈະນຳອຸຈຈາຣະ ປັສສາວະ ເຂຕະ ຫຼືຂອງທີ່ອາຕັດອອກໄປເສັຽ ໑ ເປັນຜູ້ສາມາຖທີ່ຈະຊີ້ແຈ້ງໃຫ້ຄົນໄຂ້ ເຫັນແຈ້ງ ສມາທານ ອາຈຫາຌ ຣ່າເຣີງ ດ້ວຍສັມມິກາຖາ ໃນກາລທຸກເມື່ອ ໑ ດູຣາກິກຂຸທັ້ງຫລາຍ ກິກຂຸພຍາບາລໄຂ້ທີ່ປະກອບດ້ວຍອົງຄ໌ ໕ ນີ້ແລ ຄວຣພຍາບາລໄຂ້.

ເຣື່ອງໃຫ້ບາຕຣ໌ຈີວຣຂອງຜູ້ເຖີງມໍຣຕາະກາພແກ່ຄິລານຸປັຕາກາ

[໑໘໗] ກໍໂດຍສມັຍນັ້ນແລ ກິກຂຸ ໔ ອົງຄ໌ເດີນທາງໄກໄປໃນໂກສົລຊົນບົທໄດ້ເຂົ້າໄປຢູ່ອາວາສແຫ່ງນຶ່ງ ບັຣດາກິກຂຸ ໔ ອົງຄ໌ນັ້ນ ອົງຄ໌ນຶ່ງອາພາຊ ຈຶ່ງກິກຂຸເຫລົ່ານັ້ນໄດ້ປຶກສາຕົກລົງກັນດັ່ງນີ້ວ່າ ອາວຸໂສທັ້ງຫລາຍ ພຣະຜູ້ມີພຣະກາຄທຣົງສັຣເສີຌກາຣພຍາບາລກິກຂຸອາພາຊ ຫາກຈັ່ງຊັ້ນ ພວກເຮົາຈຶ່ງພຍາບາລກິກຂຸອົງຄ໌ນີ້ເທີ້ນ ແລ້ວພາກັນພຍາບາລກິກຂຸອາພາຊນັ້ນ ທ່ານອັນກິກຂຸເຫລົ່ານັ້ນພຍາບາລຢູ່ໄດ້ເຖີງມໍຣຕາກາພ ຈຶ່ງກິກຂຸເຫລົ່ານັ້ນຖືບາຕຣ໌ຈີວຣຂອງທ່ານໄປພຣະນຄຣສາວັຕຖີ ແລ້ວຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກິກຂຸທັ້ງຫລາຍ ສົງຄ໌ເປັນເຈົ້າຂອງບາຕຣ໌ຈີວຣ ແຕ່ກິກຂຸຜູ້ພຍາບາລໄຂ້ມີອຸປກາຣະຫຼາຍ ເຮົາອນຸຌາຕໃຫ້ສົງຄ໌ມອບໄຕຣຈີວຣແລະບາຕຣ໌ ແກ່ກິກຂຸຜູ້ພຍາບາລໄຂ້.

ວິຣີໃຫ້

ດູຣາກິກຂຸທັ້ງຫລາຍ ກໍແລສົງຄ໌ຄວຣໃຫ້ໄຕຣຈີວຣແລະບາຕຣ໌ຢ່າງນີ້ ຄື ກິກຂຸຜູ້ພຍາບາລໄຂ້ນັ້ນ ຄວຣເຂົ້າໄປຫາສົງຄ໌ ແລ້ວກ່າວຢ່າງນີ້ວ່າ

ທ່ານຂ້ານ້ອຍ ກິກຂຸມີຊື່ນີ້ເຖີງມໍຣຕາກາພ ນີ້ຈີວຣແລະບາຕຣ໌ຂອງທ່ານ

ກິກຂຸຜູ້ຌລາດ ຜູ້ສາມາຖ ຄວຣປະກາສໃຫ້ສົງຄ໌ຮູ້ດ້ວຍຌັຕຕິທຸຕິຍກັມມ໌ວາຈາ ວ່າດັ່ງນີ້:-

ທ່ານຂ້ານ້ອຍ ຂໍສົງຄ໌ຈົ່ງຟັງຂ້າພເຈົ້າ ກິກຂຸມີຊື່ນີ້ເຖິງມໍຣຕກາພ ນີ້ໄຕຣຈີວຣແລະບາຕຣ໌ຂອງທ່ານ ຖ້າຄວາມພ້ອມພຽງຂອງສົງຄ໌ເຖິງທີ່ແລ້ວ ສົງຄ໌ຄວຣໃຫ້ໄຕຣຈີວຣແລະບາຕຣ໌ນີ້ ແກ່ກິກຂຸຜູ້ພຍາບາລໄຂ້ ນີ້ເປັນຍັຕຕິ

ທ່ານຂ້ານ້ອຍ ຂໍສົງຄ໌ຈົ່ງຟັງຂ້າພເຈົ້າ ກິກຂຸມີຊື່ນີ້ເຖິງມໍຣຕກາພ ນີ້ໄຕຣຈີວຣແລະບາຕຣ໌ຂອງທ່ານ ສົງຄ໌ໃຫ້ໄຕຣຈີວຣແລະບາຕຣ໌ນີ້ແກ່ກິກຂຸຜູ້ພຍາບາລໄຂ້ ການໃຫ້ໄຕຣຈີວຣແລະບາຕຣ໌ນີ້ແກ່ກິກຂຸຜູ້ພຍາບາລໄຂ້ ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເປັນຜູ້ນິ່ງ ບໍ່ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເວົ້າ.

ສົງຄ໌ໃຫ້ຈີວຣແລະບາຕຣ໌ນີ້ແກ່ກິກຂຸຜູ້ພຍາບາລໄຂ້ແລ້ວ ຊອບແກ່ສົງຄ໌ ເຫຕຸນັ້ນຈຶ່ງນິ່ງ ຂ້າພເຈົ້າຫຽງຄວາມນີ້ໄວ້ດ້ວຍຢ່າງນີ້.

ສາມເຕຣເຖິງມໍຣຕກາພ

ສມັຍຕໍ່ມາ ສາມເຕຣອົງຄ໌ນຶ່ງເຖິງມໍຣຕກາພ ກິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກິກຂຸທັ້ງຫລາຍ ເມື່ອສາມເຕຣເຖິງມໍຣຕກາພ ສົງຄ໌ເປັນເຈົ້າຂອງບາຕຣ໌ຈີວຣ ແຕ່ກິກຂຸຜູ້ພຍາບາລໄຂ້ມີອຸປກາຣະຫຼາຍ ເຮົາອນຸຍາຕໃຫ້ສົງຄ໌ມອບຈີວຣແລະບາຕຣ໌ແກ່ກິກຂຸຜູ້ພຍາບາລໄຂ້.

ວິທີໃຊ້

ດູຣາກິກຂຸທັ້ງຫລາຍ ກໍແລສົງຄ໌ຄວຣໃຫ້ຈີວຣແລະບາຕຣ໌ຢ່າງນີ້ ຄື

ກິກຂຸຜູ້ພຍາບາລໄຂ້ນັ້ນ ຄວຣເຂົ້າໄປຫາສົງຄ໌ ແລ້ວກ່າວຢ່າງນີ້ວ່າ

ທ່ານຂ້ານ້ອຍ ສາມເຕຣຊື່ນີ້ເຖິງມໍຣຕກາພ ນີ້ຈີວຣແລະບາຕຣ໌ຂອງທ່ານ

ກິກຂຸຜູ້ສລາດ ຜູ້ສາມາຖ ຄວຣປະກາສໃຫ້ສົງຄ໌ຮູ້ດ້ວຍຍັຕຕິທຸຕິຍກັມມ໌ວາຈາ ວ່າດັ່ງນີ້:-

ກັມມ໌ວາຈາໃຫ້ຈີວຣແລະບາຕຣ໌

ທ່ານຂ້ານ້ອຍ ຂໍສົງຄ໌ຈົ່ງຟັງຂ້າພເຈົ້າ ສາມເຕຣມີຊື່ນີ້ເຖິງມໍຣຕກາພ ນີ້ຈີວຣແລະບາຕຣ໌ຂອງທ່ານ ຖ້າຄວາມພ້ອມພຽງຂອງສົງຄ໌ເຖິງທີ່ແລ້ວ ສົງຄ໌ຄວຣໃຫ້ຈີວຣແລະບາຕຣ໌ນີ້ແກ່ຜູ້ພຍາບາລໄຂ້ ນີ້ເປັນຍັຕຕິ

ທ່ານຂ້ານ້ອຍ ຂໍສົງຄ໌ຈົ່ງຟັງຂ້າພເຈົ້າ ສາມເຕຣມີຊື່ນີ້ເຖິງມໍຣຕກາພ ນີ້ຈີວຣແລະບາຕຣ໌ຂອງທ່ານ ສົງຄ໌ໃຫ້ຈີວຣແລະບາຕຣ໌ນີ້ ແກ່ກິກຂຸຜູ້ພຍາບາລໄຂ້ ການໃຫ້ຈີວຣແລະບາຕຣ໌ນີ້ ແກ່ກິກຂຸຜູ້ພຍາບາລໄຂ້ ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເປັນຜູ້ນິ່ງ ບໍ່ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເວົ້າ.

ສົງฆ໌ໃຫ້ຈີວຣແລະບາຕຣ໌ນີ້ແກ່ກິກຂຸຜູ້ພຍາບາລໄຂ້ແລ້ວ ຊອບແກ່ສົງฆ໌ ເຫຕຸນັ້ນຈຶ່ງນີ້ງ ຂ້າພເຈົ້າຫຣົງຄວາມນີ້ໄວ້ດ້ວຍຢ່າງນີ້.

ກິກຂຸແລະສາມເณຣຊ່ວຍກັນພຍາບາລໄຂ້

ສມັຍຕໍ່ມາ ກິກຂຸອົງຄ໌ນຶ່ງ ສາມເณຣອົງຄ໌ນຶ່ງ ຊ່ວຍກັນພຍາບາລກິກຂຸອາພາธ ທ່ານອັນກິກຂຸ ແລະສາມເณຣນັ້ນພຍາບາລຢູ່ ໄດ້ເຖິງມໍຣຕກາພ ຈຶ່ງກິກຂຸຜູ້ພຍາບາລໄຂ້ນັ້ນ ໄດ້ມີຄວາມປຣິວິຕົກວ່າ ເຮົາ ຄວຣໃຫ້ສ່ວນຈີວຣແກ່ສາມເณຣຜູ້ພຍາບາລໄຂ້ຢ່າງໃດນໍ ກິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີ-ພຣະກາຄ. ພຣະຜູ້ມີພຣະກາຄຕຣັສອນຸญາຕວ່າ ດູຣາກິກຂຸທັ້ງຫລາຍ ເຮົາອນຸญາຕໃຫ້ມອບສ່ວນແກ່ສາມເณຣ ຜູ້ພຍາບາລໄຂ້ເທົ່າໆ ກັນ.

ສມັຍຕໍ່ມາ ກິກຂຸອົງຄ໌ນຶ່ງມີຂອງໃຊ້ຫຼາຍ ມີບໍຣິຂາຣຫຼາຍ ໄດ້ເຖິງແກ່ມໍຣຕກາພ ກິກຂຸທັ້ງຫລາຍ ຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ. ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກິກຂຸທັ້ງຫລາຍ ເມື່ອກິກຂຸເຖິງ ມໍຣຕກາພ ສົງฆ໌ເປັນເຈົ້າຂອງບາຕຣ໌ຈີວຣ ແຕ່ກິກຂຸຜູ້ພຍາບາລໄຂ້ມີອຸປກາຣະຫຼາຍ ເຮົາອນຸญາຕໃຫ້ສົງฆ໌ມອບ ໄຕຣຈີວຣແລະບາຕຣ໌ໃຫ້ແກ່ກິກຂຸຜູ້ພຍາບາລໄຂ້ ບັຣດາສິ່ງຂອງເຫລົ່ານັ້ນ ສິ່ງໃດເປັນລຫຸກັຕຫ໌ ລຫຸບໍຣິຂາຣ ສິ່ງນັ້ນເຮົາອນຸญາຕໃຫ້ສົງฆ໌ພ້ອມພຽງກັນແບ່ງ ບັຣດາສິ່ງຂອງເຫລົ່ານັ້ນ ສິ່ງໃດເປັນຄຣຸກັຕຫ໌ ຄຣຸບໍຣິຂາຣ ສິ່ງນັ້ນເປັນຂອງສົງฆ໌ຜູ້ຢູ່ໃນຈຕຸຣທິສ ທັ້ງທີ່ມາແລ້ວແລະຍັງບໍ່ມາ ບໍ່ຄວຣແບ່ງ ບໍ່ຄວຣແຈກ.

ເຣື່ອງສມາທານຕິຕຖິຍມີວັຕຣ໌ເປືອຍກາຍເປັນຕົ້ນ

[໑໗໗] ກໍໂດຍສມັຍນັ້ນ ກິກຂຸອົງຄ໌ນຶ່ງເປືອຍກາຍເຂົ້າໄປເຝົ້າພຣະຜູ້ມີພຣະກາຄ ແລ້ວໄດ້ຂາບ ທູລຄຳນີ້ແດ່ພຣະຜູ້ມີພຣະກາຄວ່າ ຂ້ານ້ອຍ ພຣະຜູ້ມີພຣະກາຄຫຣົງພັຣນາຄຸณແຫ່ງຄວາມມັກຫນ້ອຍ ຄວາມສັນໂດษ ຄວາມຂັດເກຼົາ ຄວາມກຳຈັດ ອາກາຣທີ່ໜ້າເລື່ອມໃສ ກາຣບໍ່ສະສົມ ກາຣປຣາຣົກຄວາມພຽຣ ໂດຍອເນກປຣິຍາຍ ກາຣເປືອຍກາຍນີ້ ຍ່ອມເປັນໄປເພື່ອຄວາມມັກຫນ້ອຍ ຄວາມສັນໂດษ ຄວາມຂັດເກຼົາ ຄວາມກຳຈັດ ອາກາຣທີ່ໜ້າເລື່ອມໃສ ກາຣບໍ່ສະສົມ ກາຣປຣາຣົກຄວາມພຽຣ ໂດຍອເນກປຣິຍາຍ ຂ້າພຣະ-ພຸທธເຈົ້າຂໍປະທານພຣະວໂຣກາສ ຂໍພອຣະຜູ້ມີພຣະກາຄຈົ່ງຫຣົງພຣະກຣຸณາໂປຼດອນຸญາຕກາຣເປືອຍກາຍ ແກ່ກິກຂຸທັ້ງຫລາຍດ້ວຍເທີ້ນ ຂ້ານ້ອຍ.

ພຣະຜູ້ມີພຣະກາຄພຸທธເຈົ້າ ຫຣົງຕິຕຽນວ່າ ດູຣາໂມฆບຸຣຸษ ກາຣກະທຳຂອງທ່ານນັ້ນບໍ່ສົມຄວຣ .... ດູຣາໂມฆະບຸຣຸษ ເປັນຫຍັງທ່ານຈຶ່ງໄດ້ສມາທານກາຣເປືອຍກາຍທີ່ພວກເດັຽຣຖີຍ໌ສມາທານລະ ກາຣກະທຳຂອງ

ທ່ານທັ່ນບໍ່ເປັນໄປເພື່ອຄວາມເລື່ອມໃສຂອງຊຸມຊົນທີ່ຍັງບໍ່ເລື່ອມໃສ ... ເມື່ອແລ້ວ ທຣົງເຮັດສັມມີກາຖາຮັບສັ່ງກະກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ກິກຂຸບໍ່ຄວຣສມາທານການເປືອຍກາຍທີ່ພວກເດັ່ງຣຖີຍ໌ສມາທານ ອົງຄ໌ໃດສມາທານ ຕ້ອງອາບັຕິຖຸລລັຈຈັຍ.

ສມັຍຕໍ່ມາ ກິກຂຸອົງຄ໌ນຶ່ງນຸ່ງຜ້າຄາກຼອງ ... ອົງຄ໌ນຶ່ງນຸ່ງຜ້າເປືອກໄມ້ກຼອງ ... ອົງຄ໌ນຶ່ງນຸ່ງຜ້າຜົລໄມ້ກຼອງ ... ອົງຄ໌ນຶ່ງນຸ່ງຜ້າກັມພົລເຮັດດ້ວຍຜົມຄົນ ... ອົງຄ໌ນຶ່ງນຸ່ງຜ້າກັມພົລເຮັດດ້ວຍຂົນສັຕວ໌ ... ອົງຄ໌ນຶ່ງນຸ່ງຜ້າເຮັດດ້ວຍປີກນົກເຄົ້າ ... ອົງຄ໌ນຶ່ງນຸ່ງຫນັງເສືອ ເຂົ້າໄປເຝົ້າພຣະຜູ້ມີພຣະກາຄ ແລ້ວຂາບທູລຄຳນີ້ແດ່ພຣະຜູ້ມີພຣະກາຄວ່າ ຂ້ານ້ອຍ ພຣະຜູ້ມີພຣະກາຄທຣົງພັຓນາຄຸຓແຫ່ງຄວາມມັກຫນ້ອຍ ຄວາມສັນໂດษ ຄວາມຂັດເກຼົາ ຄວາມກຳຈັດ ອາການທີ່ໜ້າເລື່ອມໃສ ການບໍ່ສະສົມ ການປຣາຣົກຄວາມພຽຣ ໂດຍອເນກປຣິຍາຍ ຫນັງເສືອນີ້ຍ່ອມເປັນໄປເພື່ອຄວາມມັກຫນ້ອຍ ຄວາມສັນໂດษ ຄວາມຂັດເກຼົາ ຄວາມກຳຈັດ ອາການທີ່ໜ້າເລື່ອມໃສ ຄວາມບໍ່ສະສົມ ການປຣາຣົກຄວາມພຽຣ ໂດຍອເນກປຣິຍາຍ ຂ້າພຣະພຸທສເຈົ້າຂໍປະທານພຣະວໂຣກາສ ຂໍພອຣະຜູ້ມີພຣະກາຄຈົງທຣົງພຣະກຣຸຓາໂປຼດອນຸຓາຕຫນັງເສືອແກ່ກິກຂຸທັ້ງຫລາຍດ້ວຍເທີ້ນ ຂ້ານ້ອຍ.

ພຣະຜູ້ມີພຣະກາຄພຸທສເຈົ້າ ທຣົງຕິຕຽນວ່າ ດູຣາໂມฆບຸຣຸษ ການຣະທຳຂອງທ່ານທັ່ນບໍ່ສົມຄວຣ .... ດູຣາໂມฆບຸຣຸษ ເປັນຫຍັງທ່ານຈຶ່ງໄດ້ທຣົງຫນັງເສືອອັນເປັນລົງຊັຍຂອງເດັ່ງຣຖີຍ໌ລະ ການຣະທຳຂອງທ່ານທັ່ນບໍ່ເປັນໄປເພື່ອຄວາມເລື່ອມໃສຂອງຊຸມຊົນທີ່ຍັງບໍ່ເລື່ອມໃສ ... ເມື່ອແລ້ວທຣົງເຮັດສັມມີກາຖາຮັບສັ່ງແກ່ກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ກິກຂຸບໍ່ຄວຣທຣົງຫນັງເສືອອັນເປັນລົງຊັຍຂອງເດັ່ງຣຖີຍ໌ ອົງຄ໌ໃດທຣົງຕ້ອງອາບັຕິຖຸລລັຈຈັຍ.

ສມັຍຕໍ່ມາ ກິກຂຸອົງຄ໌ນຶ່ງນຸ່ງຜ້າເຮັດດ້ວຍກ້ານດອກຮັກ ... ອົງຄ໌ນຶ່ງນຸ່ງຜ້າເຮັດດ້ວຍເປືອກປໍ ເຂົ້າໄປເຝົ້າພຣະຜູ້ມີພຣະກາຄ ແລ້ວໄດ້ຂາບທູລຄຳນີ້ແດ່ພຣະຜູ້ມີພຣະກາຄວ່າ ພຣະຜູ້ມີພຣະກາຄທຣົງພັຓນາຄຸຓແຫ່ງຄວາມມັກຫນ້ອຍ ຄວາມສັນໂດษ ຄວາມຂັດເກຼົາ ຄວາມກຳຈັດ ອາການທີ່ໜ້າເລື່ອມໃສ ການບໍ່ສະສົມການປຣາຣົກຄວາມພຽຣ ໂດຍອເນກປຣິຍາຍ ຜ້າເຮັດດ້ວຍເປືອກປໍນີ້ ຍ່ອມເປັນໄປເພື່ອຄວາມມັກຫນ້ອຍ ຄວາມສັນໂດษ ຄວາມຂັດເກຼົາ ຄວາມກຳຈັດ ອາການທີ່ໜ້າເລື່ອມໃສ ການບໍ່ສະສົມ ການປຣາຣົກຄວາມພຽຣ ໂດຍອເນກປຣິຍາຍ ຂ້າພຣະພຸທສເຈົ້າຂໍປະທານພຣະວໂຣກາສຂໍພອຣະຜູ້ມີພຣະກາຄຈົງທຣົງພຣະກຣຸຓາອນຸຓາຕຜ້າເຮັດດ້ວຍເປືອກປໍແກ່ກິກຂຸທັ້ງຫລາຍດ້ວຍເທີ້ນ ຂ້ານ້ອຍ.

ພຣະຜູ້ມີພຣະກາຄພຸທສເຈົ້າທຣົງຕິຕຽນວ່າ ດູຣາໂມฆບຸຣຸษ ການຣະທຳຂອງທ່ານທັ່ນບໍ່ສົມຄວຣ .... ດູຣາໂມฆບຸຣຸษ ເປັນຫຍັງທ່ານຈຶ່ງໄດ້ນຸ່ງຜ້າເຮັດດ້ວຍເປືອກປໍລະ ການຣະທຳຂອງທ່ານທັ່ນ ບໍ່ເປັນໄປເພື່ອ

ຄວາມເລື່ອມໃສຂອງຊຸມຊົນທີ່ຍັງບໍ່ເລື່ອມໃສ ... ເມື່ອແລ້ວໄດ້ທຮົງເຮັດສັມມີກຖາຮັບສັ່ງກະພິກຂຸທັ້ງຫລາຍວ່າ ດູຮາພິກຂຸທັ້ງຫລາຍ ພິກຂຸບໍ່ຄວຮນຸ່ງຜ້າເຮັດດ້ວຍເປືອກປໍ ອົງຄ໌ໃດນຸ່ງ ຕ້ອງອາບັຕິທຸກກົຎ.

ພຣະຈັພພັຄຄີຍ໌ທຮົງຈີວຮສີຄູາມລ້ວນເປັນຕົ້ນ

[໑໗໙] ກໍໂດຍສມັຍນັ້ນແລ ພຣະຈັພພັຄຄີຍ໌ທຮົງຈີວຮສີຄູາມລ້ວນ ທຮົງຈີວຮສີເຫລືອງລ້ວນ ທຮົງຈີວຮສີແດງລ້ວນ ທຮົງຈີວຮສີບານເຢັນລ້ວນ ທຮົງຈີວຮສີດໍາລ້ວນ ທຮົງຈີວຮສີແສດລ້ວນ ທຮົງຈີວຮສີຊົມພູລ້ວນ ທຮົງຈີວຮທີ່ບໍ່ຕັດຊາຍ ທຮົງຈີວຮມີຊາຍຍາວ ທຮົງຈີວຮມີຊາຍເປັນລາຍດອກໄມ້ ທຮົງຈີວຮມີຊາຍເປັນແຜ່ນ ໃສ່ເສື້ອ ໃສ່ໝວກ ທຮົງຜ້າໂພກ ປະຊາຊົນພາກັນເພ່ງໂທຜ ຕິຕຽນ ໂພນທະນາວ່າ ເໝືອນພວກຄຣິຫັສຖ໌ຜູ້ບໍຣິໂກຄກາມ ພິກຂຸທັ້ງຫລາຍຈຶ່ງຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ.

ພຣະຜູ້ມີພຣະກາຄຕຣັສຫ້າມວ່າ ດູຮາພິກຂຸທັ້ງຫລາຍ ພິກຂຸບໍ່ຄວຮທຮົງຈີວຮສີຄູາມລ້ວນ ບໍ່ຄວຮທຮົງຈີວຮສີເຫລືອງລ້ວນ ບໍ່ຄວຮທຮົງຈີວຮສີແດງລ້ວນ ບໍ່ຄວຮທຮົງຈີວຮສີບານເຢັນລ້ວນ ບໍ່ຄວຮທຮົງຈີວຮສີດໍາລ້ວນ ບໍ່ຄວຮທຮົງຈີວຮສີແດງລ້ວນ ບໍ່ຄວຮທຮົງຈີວຮສີຊົມພູລ້ວນ ບໍ່ຄວຮທຮົງຈີວຮທີ່ບໍ່ຕັດຊາຍ ບໍ່ຄວຮທຮົງຈີວຮມີຊາຍຍາວ ບໍ່ຄວຮທຮົງຈີວຮມີຊາຍເປັນລາຍດອກໄມ້ ບໍ່ຄວຮທຮົງຈີວຮມີຊາຍເປັນແຜ່ນ ບໍ່ຄວຮສວມເສື້ອ ບໍ່ຄວຮສວມໝວກ ບໍ່ຄວຮທຮົງຜ້າໂພກ ອົງຄ໌ໃດທຮົງ ຕ້ອງອາບັຕິທຸກກົຎ.

ເຣື່ອງຈີວຮຍັງບໍ່ເກີດແກ່ຜູ້ຈໍາພັຣຜາ

[໑໘໐] ກໍໂດຍສມັຍນັ້ນແລ ພິກຂຸທັ້ງຫລາຍທີ່ຈໍາພັຣຜາແລ້ວ ເມື່ອຈີວຮຍັງບໍ່ເກີດຂຶ້ນ ຫລີກໄປເສັຽແດ່ ສິກເສັຽແດ່ ເຖິງມໍຣຕກາພແດ່ ປຕິຍາຓເປັນສາມເຕຣແດ່ ປຕິຍາຓເປັນຜູ້ບອກລາສິກຂາແດ່ ປຕິຍາຓເປັນຜູ້ຕ້ອງອັນຕິມວັຕຖຸແດ່ ປຕິຍາຓເປັນຜູ້ວິກົລຈຣິຕແດ່ ປຕິຍາຓເປັນຜູ້ມີຈິຕຟຸ້ງຊ່ານແດ່ ປຕິຍາຓເປັນຜູ້ກະສັບກະສ່າຍເພາະເວທນາແດ່ ປຕິຍາຓເປັນຜູ້ຖືກສົງຄ໌ຍົກເສັຽການບໍ່ເຫັນອາບັຕິແດ່ ປຕິຍາຓເປັນຜູ້ຖືກສົງຄ໌ຍົກການບໍ່ເຮັດຄືນອາບັຕິແດ່ ປຕິຍາຓເປັນຜູ້ຖືກສົງຄ໌ຍົກເສັຽການບໍ່ສລະຄືນທິຕຖິອັນລາມົກແດ່ ປຕິຍາຓເປັນບັຕເທາະກ໌ແດ່ ປຕິຍາຓເປັນຄົນລັກເພສແດ່ ປຕິຍາຓເປັນຜູ້ເຂົ້າຮີດເດັຽຣຖີຍ໌ແດ່ ປຕິຍາຓເປັນສັຕວ໌ດິຣັຈສານແດ່ ປຕິຍາຓເປັນຜູ້ຂ້າມາຣດາແດ່ ປຕິຍາຓເປັນຜູ້ຂ້າບິດາແດ່ ປຕິຍາຓເປັນຜູ້ຂ້າພຣະອຣຫັນຕ໌ແດ່ ປຕິຍາຓເປັນຜູ້ປະທຸຜຮ້າຍພິກຂຸຕີແດ່ ປຕິຍາຓເປັນ

ຜູ້ທຳລາຍສົງຄ໌ແດ່ ປຕິລາຕເປັນຜູ້ທຳຮ້າຍພຣະສາສດາຈົນເຖິງຫໍ້ພຣະໂລຫິຕແດ່ ປຕິລາຕເປັນອຸກໂຕພຍັລຊນກແດ່ ກິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ.

ພຣະຜູ້ມີພຣະກາຄຕຣັສແນະນຳ ດັ່ງຕໍ່ໄປນີ້

ດູຣາກິກຂຸທັ້ງຫລາຍ ກໍໃນຂໍ້ນີ້ ກິກຂຸທີ່ຈຳພັຣษາແລ້ວ ເມື່ອຈີວຣຍັງບໍ່ເກີດຂຶ້ນ ຫລີກໄປເສັຽ ເມື່ອຜູ້ຮັບແທນທີ່ສົມຄວຣມີຢູ່ ສົງຄ໌ຄວຣໃຫ້

ດູຣາກິກຂຸທັ້ງຫລາຍ ປະກາຣນຶ່ງ ໃນຂໍ້ນີ້ ກິກຂຸທີ່ຈຳພັຣษາແລ້ວ ເມື່ອຈີວຣຍັງບໍ່ເກີດຂຶ້ນ ສຶກເສັຽ ເຖິງມໍຣຕກາພ ປຕິລາຕເປັນສາມເຕຣ ປຕິລາຕເປັນຜູ້ບອກລາສິກຂາ ປຕິລາຕເປັນຜູ້ຕ້ອງອັນຕິມວັຕຖຸ

ດູຣາກິກຂຸທັ້ງຫລາຍ ປະກາຣນຶ່ງ ໃນຂໍ້ນີ້ ກິກຂຸທີ່ຈຳພັຣษາແລ້ວ ເມື່ອຈີວຣຍັງບໍ່ເກີດຂຶ້ນ ປຕິລາຕເປັນຜູ້ວິກົລຈຣິຕ ປຕິລາຕເປັນຜູ້ມີຈິຕຟຸ້ງຊ່ານ ປຕິລາຕເປັນຜູ້ກະສັບກະສ່າຍເພາະເວທນາ ປຕິລາຕເປັນຜູ້ຖືກສົງຄ໌ຍົກເສັຽການບໍ່ເຫັນອາບັຕິ ປຕິລາຕເປັນຜູ້ຖືກສົງຄ໌ຍົກເສັຽການບໍ່ເຮັດຄືນອາບັຕິ ປຕິລາຕເປັນຜູ້ຖືກສົງຄ໌ຍົກເສັຽການບໍ່ສລະຄືນທິຕຖິອັນລາມົກ ເມື່ອຜູ້ຮັບແທນທີ່ສົມຄວຣມີຢູ່ ສົງຄ໌ຄວຣໃຫ້

ດູຣາກິກຂຸທັ້ງຫລາຍ ປະກາຣນຶ່ງ ໃນຂໍ້ນີ້ ກິກຂຸທີ່ຈຳພັຣษາແລ້ວ ເມື່ອຈີວຣຍັງບໍ່ເກີດຂຶ້ນ ປຕິລາຕເປັນບັຕເທາະກ໌ ... ປຕິລາຕເປັນ**ອຸກໂຕພຍັລຊນກ**[9] ສົງຄ໌ເປັນເຈົ້າຂອງ

ດູຣາກິກຂຸທັ້ງຫລາຍ ປະກາຣນຶ່ງ ໃນຂໍ້ນີ້ ກິກຂຸທີ່ຈຳພັຣษາແລ້ວ ເມື່ອຈີວຣເກີດຂຶ້ນແລ້ວ ແຕ່ຍັງບໍ່ທັນໄດ້ແບ່ງກັນ ຫລີກໄປເສັຽ ເມື່ອຜູ້ຮັບແທນທີ່ສົມຄວຣມີຢູ່ ສົງຄ໌ຄວຣໃຫ້

ດູຣາກິກຂຸທັ້ງຫລາຍ ປະກາຣນຶ່ງ ໃນຂໍ້ນີ້ ກິກຂຸທີ່ຈຳພັຣษາແລ້ວ ເມື່ອຈີວຣເກີດຂຶ້ນແລ້ວ ແຕ່ຍັງບໍ່ທັນໄດ້ແບ່ງກັນ ສຶກເສັຽ ເຖິງມໍຣຕກາພ ປຕິລາຕເປັນສາມເຕຣ ປຕິລາຕເປັນຜູ້ບອກລາສິກຂາ ປຕິລາຕເປັນຜູ້ຕ້ອງອັນຕິມວັຕຖຸ ສົງຄ໌ເປັນເຈົ້າຂອງ

ດູຣາກິກຂຸທັ້ງຫລາຍ ປະກາຣນຶ່ງ ໃນຂໍ້ນີ້ ກິກຂຸທີ່ຈຳພັຣษາແລ້ວ ເມື່ອຈີວຣເກີດຂຶ້ນ ແຕ່ຍັງບໍ່ທັນໄດ້ແບ່ງກັນ ປຕິລາຕເປັນຜູ້ວິກົລຈຣິຕ ປຕິລາຕເປັນຜູ້ມີຈິຕຟຸ້ງຊ່ານ ປຕິລາຕເປັນຜູ້ກະສັບກະສ່າຍເພາະເວທນາ ປຕິລາຕເປັນຜູ້ຖືກສົງຄ໌ຍົກເສັຽການບໍ່ເຫັນອາບັຕິ ປຕິລາຕເປັນຜູ້ຖືກສົງຄ໌ຍົກເສັຽການບໍ່ເຮັດຄືນອາບັຕິ ປຕິລາຕເປັນຜູ້ຖືກສົງຄ໌ຍົກເສັຽການບໍ່ສລະຄືນທິຕຖິອັນລາມົກ ເມື່ອຜູ້ຮັບແທນທີ່ສົມຄວຣມີຢູ່ ສົງຄ໌ຄວຣໃຫ້

ດູຣາກິກຂຸທັ້ງຫລາຍ ປະກາຣນຶ່ງ ໃນຂໍ້ນີ້ ກິກຂຸທີ່ຈຳພັຣษາແລ້ວ ເມື່ອຈີວຣເກີດຂຶ້ນແລ້ວ ແຕ່ຍັງບໍ່ທັນໄດ້ແບ່ງກັນ ປຕິລາຕເປັນບັຕເທາະກ໌ ... ປຕິລາຕເປັນອຸກໂຕພຍັລຊນກ ສົງຄ໌ເປັນເຈົ້າຂອງ

---

[9] **ອຸກໂຕພຍັລຊນກ** ອ່ານວ່າ "ອຸພະໂຕພະຍັນຊະນະກະ" ຄືນມີທັ້ງ ໒ ເພສ

ດູຣາພິກຂຸທັ້ງຫລາຍ ປະການນຶ່ງ ໃນຂໍ້ນີ້ ເມື່ອຈີວຣຍັງບໍ່ເກີດຂຶ້ນແກ່ພິກຂຸທັ້ງຫລາຍທີ່ຈໍາພັຣษາແລ້ວ ສົງฆ์ແຕກກັນ ຄົນທັ້ງຫລາຍໃນຖິ່ນນັ້ນ ຖວາຍນ້ຳໃນຝ່າຍນຶ່ງ ຖວາຍຈີວຣໃນຝ່າຍນຶ່ງ ດ້ວຍກ່າວຄຳ ວ່າ ຂ້າພເຈົ້າຖວາຍແກ່ສົງฆ์ ທັ່ນເປັນຂອງສົງฆ์ຝ່າຍດຽວ.

ດູຣາພິກຂຸທັ້ງຫລາຍ ປະການນຶ່ງ ໃນຂໍ້ນີ້ ເມື່ອຈີວຣຍັງບໍ່ເກີດຂຶ້ນແກ່ພິກຂຸທັ້ງຫລາຍທີ່ຈໍາພັຣษາແລ້ວ ສົງฆ์ແຕກກັນ ຄົນທັ້ງຫລາຍໃນຖິ່ນນັ້ນ ຖວາຍນ້ຳໃນຝ່າຍນຶ່ງ ຖວາຍຈີວຣໃນຝ່າຍນັ້ນເຫມືອນກັນ ດ້ວຍ ກ່າວຄຳວ່າ ຂ້າພເຈົ້າຖວາຍແກ່ສົງฆ์ ທັ່ນເປັນຂອງສົງฆ์ຝ່າຍດຽວ.

ດູຣາພິກຂຸທັ້ງຫລາຍ ປະການນຶ່ງ ໃນຂໍ້ນີ້ ເມື່ອຈີວຣຍັງບໍ່ເກີດຂຶ້ນແກ່ພິກຂຸທັ້ງຫລາຍທີ່ຈໍາພັຣษາແລ້ວ ສົງฆ์ແຕກກັນ ຄົນທັ້ງຫລາຍໃນຖິ່ນນັ້ນ ຖວາຍນ້ຳໃນຝ່າຍນຶ່ງ ຖວາຍຈີວຣໃນຝ່າຍນຶ່ງ ດ້ວຍກ່າວຄຳ ວ່າ ຂ້າພເຈົ້າຖວາຍຝ່າຍນຶ່ງ ທັ່ນເປັນຂອງສະເພາະຝ່າຍນຶ່ງ.

ດູຣາພິກຂຸທັ້ງຫລາຍ ປະການນຶ່ງ ໃນຂໍ້ນີ້ ເມື່ອຈີວຣຍັງບໍ່ເກີດຂຶ້ນແກ່ພິກຂຸທັ້ງຫລາຍທີ່ຈໍາພັຣษາ ສົງฆ์ ແຕກກັນ ຄົນທັ້ງຫລາຍໃນຖິ່ນນັ້ນ ຖວາຍນ້ຳໃນຝ່າຍນຶ່ງ ຖວາຍຈີວຣໃນຝ່າຍນັ້ນເຫມືອນກັນ ດ້ວຍກ່າວ ວາຈາວ່າ ຂ້າພເຈົ້າຖວາຍແກ່ຝ່າຍນຶ່ງ ທັ່ນເປັນຂອງສະເພາະຝ່າຍນຶ່ງ.

ດູຣາພິກຂຸທັ້ງຫລາຍ ປະການນຶ່ງ ໃນຂໍ້ນີ້ ເມື່ອຈີວຣເກີດຂຶ້ນແລ້ວແກ່ພິກຂຸທັ້ງຫລາຍທີ່ຈໍາພັຣษາ ແຕ່ ຍັງມິທັນໄດ້ແບ່ງ ສົງฆ์ແຕກກັນ ຄວຣແບ່ງສ່ວນໃຫ້ພິກຂຸທຸກອົງຄ໌ເທົ່າໆ ກັນ.

ເຣື່ອງພຣະເຣວຕເຖຣະຝາກຈີວຣ

[໑໗໑] ກໍໂດຍສມັຍນັ້ນແລ ທ່ານພຣະເຣວຕະຝາກຈີວຣແກ່ພິກຂຸອົງຄ໌ນຶ່ງໄປຖວາຍທ່ານພຣະ ສາຣີບຸຕຣ໌ ດ້ວຍສັ່ງວ່າ ຈົ່ງຖວາຍຈີວຣຜືນນີ້ແກ່ພຣະເຖຣະ ຈຶ່ງໃນຣະຫວ່າງທາງ ພິກຂຸອົງຄ໌ນັ້ນໄດ້ຖືເອົາຈີວຣ ນັ້ນເສັຽ ເພາະວິສາສະຕໍ່ທ່ານພຣະເຣວຕະ

ກາລຕໍ່ມາ ທ່ານພຣະເຣວຕະມາພົບທ່ານພຣະສາຣີບຸຕຣ໌ ຈຶ່ງຮຽນຖາມວ່າ ຂ້ານ້ອຍຝາກຈີວຣມາຖວາຍ ພຣະເຖຣະ. ພຣະເຖຣະໄດ້ຮັບຈີວຣນັ້ນແລ້ວບໍ່ ຂ້ານ້ອຍ?

ທ່ານພຣະສາຣີບຸຕຣ໌ຕອບວ່າ ຂ້ານ້ອຍຍັງບໍ່ເຫັນຈີວຣນັ້ນເລີຍ ຄຸ໓.

ຈຶ່ງທ່ານພຣະເຣວຕະໄດ້ຖາມພິກຂຸອົງຄ໌ນັ້ນວ່າ ອາວຸໂສ ຂ້ານ້ອຍຝາກຈີວຣມາແກ່ທ່ານໃຫ້ຖວາຍພຣະ ເຖຣະ ຢູ່ໃສຈີວຣນັ້ນ?

ພິກຂຸນັ້ນຕອບວ່າ ຂ້ານ້ອຍໄດ້ຖືເອົາຈີວຣນັ້ນເສັຽ ເພາະ**ວິສາສະ**[10]ຕໍ່ທ່ານ ຂ້ານ້ອຍ.

---

[10] **ວິສາສະ, ວິສສາສະ** **໑.** ຄວາມຄຸ້ນເຄີຍ, ຄວາມສນິທສນົມ ການຖືວ່າເປັນກັນເອງ, ໃນທາງພຣະວິນັຍ ການຖືເອົາຂອງ ຂອງຜູ້ອື່ນທີ່ຈັດວ່າເປັນການຖືວິສສາສະ ມີອົງຄ໌ ໓ ຄື *໑. ເຄີຍເຫັນກັນມາ* ເຄີຍຄົບກັນມາຫຼືໄດ້ເວົ້າກັນໄວ້ *໔. ເຈົ້າຂອງຍັງມີ ຊີວິຕຢູ່ ໓. ຮູ້ວ່າຂອງນັ້ນເຮົາຖືເອົາແລ້ວເຂົາຈັກພໍໃຈ,* ບັດນີ້ນິຍົມຂຽນ ວິສາສະ **໔.** ຄວາມນອນໃຈ ດັ່ງພຸທສດຳຣັສວ່າ ພິກຂຸທ່ານຍັງບໍ່ເຖິງຄວາມສິ້ນອາສວະແລ້ວຢ່າໄດ້ເຖິງ ວິສສາສະ (ຄວາມນອນໃຈ)

ພິກຂຸທັ້ງຫລາຍຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ.

ພຣະຜູ້ມີພຣະພາຄຕຣັສແນະນຳ ດັ່ງຕໍ່ໄປນີ້:-

ເຣື່ອງຖືວິສາສະ

ດູຣາພິກຂຸທັ້ງຫລາຍ ປະການນຶ່ງ ໃນຂໍ້ນີ້ ພິກຂຸຝາກຈີວຣແກ່ພິກຂຸໄປດ້ວຍສັ່ງວ່າ ຈົ່ງໃຫ້ຈີວຣຜືນນີ້ແກ່ພິກຂຸມີຊື່ນີ້ ພິກຂຸຜູ້ຮັບຝາກຖືເອົາເສັຽໃນຣະຫວ່າງທາງ ເພາະວິສາສະຕໍ່ຜູ້ຝາກ ຊື່ວ່າຖືເອົາຖືກຕ້ອງ ຖືເອົາເສັຽເພາະວິສາສະຕໍ່ຜູ້ຮັບ ຊື່ວ່າຖືເອົາບໍ່ຖືກຕ້ອງ.

ດູຣາພິກຂຸທັ້ງຫລາຍ ປະການນຶ່ງ ໃນຂໍ້ນີ້ ພິກຂຸຝາກຈີວຣແກ່ພິກຂຸໄປດ້ວຍສັ່ງວ່າ ຈົ່ງໃຫ້ຈີວຣຜືນນີ້ແກ່ພິກຂຸມີຊື່ນີ້ ພິກຂຸຜູ້ຮັບຝາກຖືເອົາເສັຽໃນຣະຫວ່າງທາງ ເພາະວິສາສະຕໍ່ຜູ້ຮັບ ຊື່ວ່າຖືເອົາບໍ່ຖືກຕ້ອງ ຖືເອົາເສັຽເພາະວິສາສະຕໍ່ຜູ້ຝາກ ຊື່ວ່າຖືເອົາຖືກຕ້ອງ.

ດູຣາພິກຂຸທັ້ງຫລາຍ ປະການນຶ່ງ ໃນຂໍ້ນີ້ ພິກຂຸຝາກຈີວຣແກ່ພິກຂຸໄປດ້ວຍສັ່ງວ່າ ຈົ່ງໃຫ້ຈີວຣຜືນນີ້ແກ່ພິກຂຸມີຊື່ນີ້ ພິກຂຸຜູ້ຮັບຝາກຮູ້ຂ່າວໃນຣະຫວ່າງທາງວ່າ ຜູ້ຝາກເຖິງມໍຣຕກາພເສັຽແລ້ວ ຈຶ່ງອະທິຖານເປັນຈີວຣມໍຣດົກຂອງພິກຂຸຜູ້ຝາກ ຊື່ວ່າອະທິຖານຖືກຕ້ອງແລ້ວ ຖືເອົາເສັຽເພາະວິສາສະຕໍ່ຜູ້ຮັບ ຊື່ວ່າຖືເອົາບໍ່ຖືກຕ້ອງ.

ດູຣາພິກຂຸທັ້ງຫລາຍ ປະການນຶ່ງ ໃນຂໍ້ນີ້ ພິກຂຸຝາກຈີວຣແກ່ພິກຂຸໄປດ້ວຍສັ່ງວ່າ ຈົ່ງໃຫ້ຈີວຣຜືນນີ້ແກ່ພິກຂຸມີຊື່ນີ້ ພິກຂຸຜູ້ຮັບຝາກຮູ້ຂ່າວໃນຣະຫວ່າງທາງວ່າ ຜູ້ຮັບເຖິງມໍຣຕກາພເສັຽແລ້ວ ຈຶ່ງອະທິຖານເປັນຈີວຣມໍຣດົກຂອງຜູ້ຮັບ ຊື່ວ່າອະທິຖານບໍ່ຖືກຕ້ອງ ຖືເອົາເສັຽເພາະວິສາສະຕໍ່ຜູ້ຝາກ ຊື່ວ່າຖືເອົາຖືກຕ້ອງ

ດູຣາພິກຂຸທັ້ງຫລາຍ ປະການນຶ່ງ ໃນຂໍ້ນີ້ ພິກຂຸຝາກຈີວຣແກ່ພິກຂຸໄປດ້ວຍສັ່ງວ່າ ຈົ່ງໃຫ້ຈີວຣຜືນນີ້ແກ່ພິກຂຸມີຊື່ນີ້ ພິກຂຸຜູ້ຮັບຝາກຮູ້ຂ່າວໃນຣະຫວ່າງທາງວ່າ ທັ້ງສອງອົງຄ໌ເຖິງມໍຣຕກາພເສັຽແລ້ວ ຈຶ່ງອະທິຖານເປັນມໍຣດົກຂອງຜູ້ຝາກ ຊື່ວ່າອະທິຖານຖືກຕ້ອງ ອະທິຖານເປັນຈີວຣມໍຣດົກຂອງຜູ້ຮັບ ຊື່ວ່າອະທິຖານບໍ່ຖືກຕ້ອງ.

ດູຣາພິກຂຸທັ້ງຫລາຍ ປະການນຶ່ງ ໃນຂໍ້ນີ້ ພິກຂຸຝາກຈີວຣແກ່ພິກຂຸໄປດ້ວຍສັ່ງວ່າ ຂ້ານ້ອຍໃຫ້ຈີວຣຜືນນີ້ແກ່ພິກຂຸມີຊື່ນີ້ ພິກຂຸຜູ້ຮັບຝາກຖືເອົາເສັຽໃນຣະຫວ່າງທາງເພາະວິສາສະຕໍ່ຜູ້ຝາກ ຊື່ວ່າຖືເອົາບໍ່ຖືກຕ້ອງ ຖືເອົາເສັຽເພາະວິສາສະຕໍ່ຜູ້ຮັບ ຊື່ວ່າຖືເອົາຖືກຕ້ອງ.

ດູຣາພິກຂຸທັ້ງຫລາຍ ປະການນຶ່ງ ໃນຂໍ້ນີ້ ພິກຂຸຝາກຈີວຣແກ່ພິກຂຸໄປດ້ວຍສັ່ງວ່າ ຂ້ານ້ອຍໃຫ້ຈີວຣຜືນນີ້ແກ່ພິກຂຸມີຊື່ນີ້ ພິກຂຸຜູ້ຮັບຝາກຖືເອົາເສັຽໃນຣະຫວ່າງທາງເພາະວິສາສະຕໍ່ຜູ້ຮັບ ຊື່ວ່າຖືເອົາຖືກຕ້ອງ ຖືເອົາເສັຽເພາະວິສາສະຕໍ່ຜູ້ຝາກ ຊື່ວ່າຖືເອົາບໍ່ຖືກຕ້ອງ.

ດູຣາພິກຂຸທັ້ງຫລາຍ ປະການນຶ່ງ ໃນຂໍ້ນີ້ ພິກຂຸຝາກຈີວຣແກ່ພິກຂຸໄປດ້ວຍສັ່ງວ່າ ຂ້ານ້ອຍໃຫ້ຈີວຣຜືນນີ້ແກ່ພິກຂຸມີຊື່ນີ້ ພິກຂຸຜູ້ຝາກຮູ້ຂ່າວໃນຣະຫວ່າງທາງວ່າ ຜູ້ຝາກເຖິງມໍຣຕກາພເສັຽແລ້ວ ຈຶ່ງອະທິຖານເປັນຈີວຣມໍຣດົກຂອງຜູ້ຝາກ ຊື່ວ່າອະທິຖານບໍ່ຖືກຕ້ອງ ຖືເອົາເສັຽເພາະວິສາສະຕໍ່ຜູ້ຮັບ ຊື່ວ່າຖືເອົາຖືກຕ້ອງ.

ດູຣາພິກຂຸທັ້ງຫລາຍ ປະການນຶ່ງ ໃນຂໍ້ນີ້ ພິກຂຸຝາກຈີວຣແກ່ພິກຂຸໄປດ້ວຍສັ່ງວ່າ ຂ້ານ້ອຍໃຫ້ຈີວຣຜືນນີ້ແກ່ພິກຂຸມີຊື່ນີ້ ພິກຂຸຜູ້ຮັບຝາກຮູ້ຂ່າວໃນຣະຫວ່າງທາງວ່າ ຜູ້ຮັບເຖິງມໍຣຕກາພເສັຽແລ້ວ ຈຶ່ງອະທິຖານເປັນຈີວຣມໍຣດົກຂອງຜູ້ຮັບ ຊື່ວ່າອະທິຖານຖືກຕ້ອງ ຖືເອົາເສັຽເພາະວິສາສະຕໍ່ຜູ້ຝາກ ຊື່ວ່າຖືເອົາບໍ່ຖືກຕ້ອງ.

ດູຣາພິກຂຸທັ້ງຫລາຍ ປະການນຶ່ງ ໃນຂໍ້ນີ້ ພິກຂຸຝາກຈີວຣແກ່ພິກຂຸໄປດ້ວຍສັ່ງວ່າ ຂ້ານ້ອຍໃຫ້ຈີວຣຜືນນີ້ແກ່ພິກຂຸມີຊື່ນີ້ ພິກຂຸຜູ້ຮັບຝາກຮູ້ຂ່າວໃນຣະຫວ່າງທາງວ່າ ທັ້ງສອງອົງຄ໌ເຖິງມໍຣຕກາພເສັຽແລ້ວ ຈຶ່ງອະທິຖານເປັນຈີວຣມໍຣດົກຂອງຜູ້ຝາກ ຊື່ວ່າອະທິຖານບໍ່ຖືກຕ້ອງ ອະທິຖານເປັນຈີວຣມໍຣດົກຂອງຜູ້ຮັບ ຊື່ວ່າອະທິຖານຖືກຕ້ອງ.

ຈີວຣທີ່ເກີດຂຶ້ນມີ ๘ ມາຕິກາ

[໑໗໔] ດູຣາພິກຂຸທັ້ງຫລາຍ ມາຕິກາເພື່ອຈີວຣເກີດຂຶ້ນນີ້ ມີ ๘ ຄື

໑. ຖວາຍແກ່ສີມາ

໒. ຖວາຍຕາມກະຕິກາ

໓. ຖວາຍໃນສຖານທີ່ຈັດພິກຂາ

໔. ຖວາຍແກ່ສົງຄ໌

໕. ຖວາຍແກ່ອຸກະໂຕສົງຄ໌

໖. ຖວາຍແກ່ສົງຄ໌ຜູ້ຈຳພັຣຊາແລ້ວ

ກ. ຖວາຍເຈາະຈົງ

ຖ. ຖວາຍແກ່ບຸຄຄົລ

ທີ່ຊື່ວ່າ ຖວາຍແກ່ສີມາ ຄື ພິກຂຸມີຈຳນວນເທົ່າໃດຢູ່ພາຍໃນສີມາ ພິກຂຸເຫລົ່ານັ້ນຄວຣແບ່ງກັນ

ທີ່ຊື່ວ່າ ຖວາຍຕາມກະຕິກາ ຄື ວັດມີຫລາຍແຫ່ງ ຍອມໃຫ້ມີລາພສເມີກັນ ເມື່ອທາຍົກຖວາຍໃນວັດນຶ່ງ ຊື່ວ່າເປັນອັນຖວາຍທຸກວັດ

ທີ່ຊື່ວ່າ ຖວາຍໃນສຖານທີ່ຈັດພິກຂາ ຄືຖວາຍໃນສຖານທີ່ໆ ທາຍົກທຳສັກກາຣະປະຈຳແກ່ສົງຄ໌

ທີ່ຊື່ວ່າ ຖວາຍແກ່ສົງຄ໌ ຄື ສົງຄ໌ຢູ່ພ້ອມຫນ້າກັນແບ່ງ

ທີ່ຊື່ວ່າ ຖວາຍແກ່ອຸພໂຕສົງຄ໌ ຄື ແມ້ມີພິກຂຸຫຼາຍ ມີພິກຂຸຕີອົງຄ໌ດຽວ ກໍຄວຣໃຫ້ຝ່າຍລະເຄິ່ງ ແມ້ມີພິກຂຸຕີຫຼາຍ ມີພິກຂຸອົງຄ໌ດຽວ ກໍຄວຣໃຫ້ຝ່າຍລະເຄິ່ງ

ທີ່ຊື່ວ່າ ຖວາຍແກ່ສົງຄ໌ຜູ້ຈຳພັຣຍາແລ້ວ ຄືພິກຂຸມີຈຳນວນເທົ່າໃດ ຈຳພັຣຍາຢູ່ໃນອາວາສນັ້ນ ພິກຂຸເຫລົ່ານັ້ນຄວຣແບ່ງກັນ

ທີ່ຊື່ວ່າ ຖວາຍເຈາະຈົງ ຄື ຖວາຍສະເພາະຢາຄູ ພັຕຕາຫາຣຂອງຄວຣຍ້ຳ ຈີວຣ ເສນາສນະ ຫຼືເພສັຊ

ທີ່ຊື່ວ່າ ຖວາຍແກ່ບຸຄຄົລ ຄື ຖວາຍດ້ວຍວາຈາວ່າ ຂ້າພເຈົ້າຖວາຍຈີວຣຜືນນີ້ແກ່ພິກຂຸມີຊື່ນີ້.

ຈີວຣຂັນສກະ ທີ່ ຘ ຈົບ.

ໃນຂັນສກະ ມີ ໙໖ ເຣື່ອງ.

ຫົວຂໍ້ປະຈຳຂັນສກະ

[໑໗໓] ໑. ເຣື່ອງຄົນມັ່ງມີຊາວພຣະນຄຣຣາຊຄຣິຫ໌ ເຫັນລິງງານເມືອງໃນພຣະນຄຣເວສາລີ ກັບມາພຣະນຄຣຣາຊຄຣິຫ໌ ແລ້ວຂາບທູລເຣື່ອງນັ້ນໃຫ້ພອຣະຣາຊາຫຣົງຮູ້ ໒. ເຣື່ອງບຸຕຣ໌ຊາຍຂອງ ນາງສາລວດີ ຊຶ່ງກາຍຫລັງເປັນໂອຣົສຂອງເຈົ້າຊາຍອກັຍ ເພາະເຫຕຸທີ່ຍັງມີຊີວິຕ ເຈົ້າຊາຍຈຶງປະທານຊື່ວ່າ ຊີວົກ ໓. ເຣື່ອງຊີວົກເດີນທາງໄປເມືອງຕັກກສີລາ ຮຽນວິຊາແພທຍ໌ສຳເຣັຈເປັນໝໍໃຫຍ່ໄດ້ຮັກສາໂຣຄ ຊຶ່ງເປັນຢູ່ເຖິງ ໗ ປີ ຫາຍດ້ວຍການໃຫ້ນັຕຖ໌ຍາ ໔. ເຣື່ອງຮັກສາໂຣຄຣິດສີຕາງອກຂອງພຣະເຈົ້າພິມພິສາຣ ຫາຍດ້ວຍການທາຍາ ໕. ເຣື່ອງພຣະຣາຊທານຕຳແຫນ່ງແພທຍ໌ຫລວງປະຈຳພຣະອົງຄ໌ ພຣະສນົມ ນາງ ກຳນັລ ພຣະພຸທສເຈົ້າແລະພຣະສົງຟ໌ ໖. ເຣື່ອງຮັກສາເສຕຖີຊາວພຣະນຄຣຣາຊຄຣິຫ໌ ໗. ເຣື່ອງຮັກສາ ເນື້ອງອກໃນລຳໄສ້ ໘. ເຣື່ອງຮັກສາໂຣຄສຳຄັລຂອງພຣະເຈົ້າປັຊໂຊຕຫາຍດ້ວຍໃຫ້ສເວີຍພຣະໂອສົຖຜສົມ ປຽງ ໄດ້ຮັບພຣະຣາຊທານຜ້າຄູ່ສີໄວຍກະເປັນຣາງວັລ ໙. ເຣື່ອງສູງພຣະກາຍຂອງພຣະຜູ້ມີພຣະກາຄ ຊຶ່ງຫມັກຫມົນດ້ວຍສິ່ງອັນເປັນໂທษໃຫ້ສົດຊື່ນ ໑໐. ໝໍຊີວົກທູລຖວາຍພຣະໂອສົຖ ໓໐ ຄັ້ງ ໂດຍອົບກ້ານ ອຸບົລ ໓ ກ້ານດ້ວຍຍາ ໑໑. ເມື່ອພຣະຕຖາຄົຕມີພຣະກາຍເປັນປົກຕິແລ້ວ ໝໍຊີວົກທູລຂໍປະທານພອຣ ໑໒. ທຣົງຮັບຜ້າຄູ່ສີໄວຍກະ ໑໓. ພຣະພຸທສານຸຍາຕຈີວຣທີ່ຄຣຶຫັສຖ໌ຖວາຍ ໑໔. ເຣື່ອງ ຈີວຣບັງເກີດມາກໃນພຣະນຄຣຣາຊຄຣິຫ໌ ໑໕. ເຣື່ອງພຣະພຸທສານຸຍາຕຜ້າປາວາຣ ຜ້າໄຫມ ຜ້າໂກເຊົາວ໌ ໑໖. ເຣື່ອງຜ້າກັມພົລມີຣາຄາເຄິ່ງກາສີ ໑໗. ເຣື່ອງຜ້າຊນິດດີ ຊນິດບໍ່ດີ ທຣົງສັຣເສີນຄວາມສັນໂດษ ໑໘. ເຣື່ອງຄອຍແລະບໍ່ຄອຍ ແລະກ່ອນແລະຫລັງແລະພ້ອມກັນທຳກຕິກາກັນໄວ້ ໑໙. ເຣື່ອງຫາຍົກນຳ ຈີວຣກັບຄືນໄປ ໒໐. ເຣື່ອງສົມມຸຕິເຮືອນຄັງ ໒໑. ເຣື່ອງຮັກສາຜ້າໃນເຮືອນຄັງ ໒໒. ເຣື່ອງ ສັ່ງຍ້າຍເຈົ້າຫນ້າທີ່ຮັກສາເຮືອນຄັງ ໒໓. ເຣື່ອງຈີວຣບັງເກີດຫຼາຍ ໒໔. ເຣື່ອງແຈກກັນສົ່ງສຽງໂກລາຫົລ ໒໕. ເຣື່ອງຈະແບ່ງກັນຢ່າງໃດ ໒໖. ເຣື່ອງຈະໃຫ້ແບ່ງກັນຢ່າງໃດ ໒໗. ເຣື່ອງແລກສ່ວນຂອງຕົນ ໒໘. ເຣື່ອງໃຫ້ສ່ວນພິເສษ ໒໙. ເຣື່ອງຈະໃຫ້ສ່ວນຈີວຣຢ່າງໃດ ໓໐. ເຣື່ອງຍ້ອມຈີວຣດ້ວຍໂຄມັຍ ໓໑. ເຣື່ອງຍ້ອມດ້ວຍນ້ຳເຢັນແລະນ້ຳຮ້ອນ ໓໒. ເຣື່ອງນ້ຳຍ້ອມລົ້ນ ໓໓. ເຣື່ອງບໍ່ຮູ້ວ່ານ້ຳຍ້ອມສຸກ ຫຼືບໍ່ສຸກ ໓໔. ເຣື່ອງຍົກໝໍ້ນ້ຳຍ້ອມລົງ ໓໕. ເຣື່ອງບໍ່ມີພາຊນະຍ້ອມ ໓໖. ເຣື່ອງຊັກຈີວຣ ໃນຖາດ ໓໗. ເຣື່ອງຕາກຈີວຣເທິງພື້ນດິນ ໓໘. ເຣື່ອງປລວກກັດ ໓໙. ເຣື່ອງຕາກຈີວຣກົງກາງ ໔໐. ເຣື່ອງຊາຍຈີວຣຊຳຣຸດ ໔໑. ເຣື່ອງນ້ຳຍ້ອມຫຍົດອອກຊາຍດຽວ ໔໒. ເຣື່ອງຈີວຣແຂ້ງ ໔໓. ເຣື່ອງ ຈີວຣກະດ້າງ ໔໔. ເຣື່ອງໃຊ້ຈີວຣບໍ່ໄດ້ຕັດ ໔໕. ເຣື່ອງຕັດຈີວຣຕາມແບບຄັນນາ ໔໖. ເຣື່ອງ

ພຣະຜູ້ມີພຣະຠາຄທອດພຣະເນຕຣ໌ເຫັນພວກຠິກຂຸແບກຫໍ່ຈີວຣ ໔໗. ເຣື່ອງພຣະຨາກຍມຸນີທຣົງທົດລອງແລ້ວ ທຣົງອນຸຎາຕຜ້າ ໓ ຜືນ ໔໘. ເຣື່ອງພຣະຉັພພັຄຄີຍ໌ທຣົງອດິເຣກຈີວຣຊຸດອື່ນເຂົ້າບ້ານ ໔໙. ເຣື່ອງ ອດິເຣກຈີວຣເກີດຂຶ້ນ ໕໐. ເຣື່ອງອັນຕຣວາສິກຂາດທະລຸ ໕໑. ເຣື່ອງຝົນຕົກພ້ອມກັນ ໔ ທວີປ ໕໒. ເຣື່ອງນາງວິສາຂາຂໍປະທານພອຣ ເພື່ອຖວາຍຜ້າອາບນ້ຳຝົນ ອາຄັນຕຸກຠັຕຣ໌ ຄມິກຠັຕຣ໌ ຄິລານຠັຕຣ໌ ຄິລານຸປັຏຐາກຠັຕຣ໌ ເຠສັຊ ຍາຄູປະຈຳ ແລະຖວາຍອຸທກສາຏົກແກ່ຠິກຂຸຓີສົງຆ໌ ໕໓. ເຣື່ອງຉັນໂຠຊນະ ປະຓີຕ ໕໔. ເຣື່ອງຜ້າປູນັ່ງນ້ອຍເກີນໄປ ໕໕. ເຣື່ອງຝີດາດຫຼືອີສຸກອີໃສ ໕໖. ເຣື່ອງຜ້າເຊັດຫນ້າ ເຊັດປາກ ໕໗. ເຣື່ອງຜ້າເປືອກໄມ້ ໕໘. ເຣື່ອງໄຕຣຈີວຣບໍຣິບູຣຓ໌ ໕໙. ເຣື່ອງອຘິຩຐານ ໖໐. ເຣື່ອງ ຈີວຣຂນາດນ້ອຍເທົ່າໃດຄວຣວິກັປ ໖໑. ເຣື່ອງຜ້າອຸຕຣາສົງຄ໌ທີ່ເຮັດດ້ວຍຜ້າບັງສຸກຸລຫນັກ ໖໒. ເຣື່ອງ ຊາຍສັງຆາຏິບໍ່ສເມີກັນ ໖໓. ເຣື່ອງດ້າຍລຸ່ຍ ໖໔. ເຣື່ອງແຜ່ນຜ້າສັງຆາຏິລຸ່ຍ ໖໕. ເຣື່ອງຜ້າບໍ່ພໍ ໖໖. ເຣື່ອງຜ້າດາມ ໖໗. ເຣື່ອງຈີວຣເກີດຂຶ້ນຫຼາຍ ໖໘. ເຣື່ອງເກັບຈີວຣໄວ້ໃນວິຫາຣອັນຘວັນ ໖໙. ເຣື່ອງ ເຜີສຕິ ໗໐. ເຣື່ອງຠິກຂຸອົງຄ໌ດຽວຈຳພັຣຩາ ໗໑. ເຣື່ອງຠິກຂຸຢູ່ອົງຄ໌ດຽວຕລອດຣະດູການ ໗໒. ເຣື່ອງ ພຣະເຖຣະສອງອ້າຍນ້ອງ ໗໓. ເຣື່ອງຠິກຂຸ ໓ ອົງຄ໌ ຈຳພັຣຩາໃນພຣະນຄຣຣາຊຄຣິຫ໌ ໗໔. ເຣື່ອງ ພຣະອຸປນັນທະຈຳພັຣຩາແລ້ວໄປວັດໃກ້ບ້ານ ໄດ້ຮັບສ່ວນແບ່ງ ແລ້ວກັບມາພຣະນຄຣສາວັຕຖີຕາມເດີມ ໗໕. ເຣື່ອງພຣະອຸປນັນທະຈຳພັຣຩາ ໒ ວັດ ໗໖. ເຣື່ອງຠິກຂຸອາພາຘເປັນໂຣຄທ້ອງຣ່ວງ ໗໗. ເຣື່ອງ ຠິກຂຸອາພາຘ ໗໘. ເຣື່ອງຠິກຂຸແລະສາມເຓຣ ໒ ອົງຄ໌ອາພາຘ ໗໙. ເຣື່ອງເປືອຍກາຍ ໘໐. ເຣື່ອງ ນຸ່ງຜ້າຄາກຼອງ ໘໑. ເຣື່ອງນຸ່ງຜ້າເປືອກໄມ້ກຼອງ ໘໒. ເຣື່ອງນຸ່ງຜ້າຜົລໄມ້ກຼອງ ໘໓. ເຣື່ອງ ນຸ່ງຜ້າກົມພົລເຮັດດ້ວຍຜົມຄົນ ໘໔. ເຣື່ອງນຸ່ງຜ້າກົມພົລເຮັດດ້ວຍຂົນສັຕວ໌ ໘໕. ເຣື່ອງນຸ່ງຜ້າກົມພົລເຮັດດ້ວຍ ຂົນປີກນົກເຄົ້າ ໘໖. ເຣື່ອງນຸ່ງຫນັງເສືອ ໘໗. ເຣື່ອງນຸ່ງຜ້າເຮັດດ້ວຍກ້ານດອກຮັກ ໘໘. ເຣື່ອງ ນຸ່ງຜ້າເຮັດດ້ວຍເປືອກປໍ ໘໙. ເຣື່ອງທຣົງຈີວຣສີລ້ວນໆ ຄື ສີຄຼາມ ສີແດງ ສີບານເຢັນ ສີແສດ ສີຊົມພູ ທຣົງຈີວຣບໍ່ຕັດຊາຍ ມີຊາຍຍາວ ມີຊາຍເປັນລາຍດອກໄມ້ ມີຊາຍເປັນແຜ່ນ ໃສ່ເສື້ອ ໃສ່ຫມວກ ໃຊ້ຜ້າໂພກຨີຣຩະ ໙໐. ເຣື່ອງຈີວຣຍັງບໍ່ເກີດຂຶ້ນ ຠິກຂຸຫລີກໄປເສັຽ ໙໑. ເຣື່ອງສົງຆ໌ແຕກກັນ ໙໒. ເຣື່ອງຖວາຍຈີວຣແກ່ສົງຆ໌ໃນຝ່າຍນຶ່ງ ໙໓. ເຣື່ອງທ່ານພຣະເຣວຕະຝາກຈີວຣ ໙໔. ເຣື່ອງຖືວິສາສະ ໙໕. ເຣື່ອງອຘິຩຐານ ໙໖. ເຣື່ອງມາຕິກາຂອງຈີວຣ ໘ ຂໍ້.

ຈັມເປີຍຍຂັນສກະ

ເຣື່ອງພຣະກັສສປໂຄຕຣ໌

[໑໗໔] ໂດຍສມັຍນັ້ນ ພຣະຜູ້ມີພຣະກາຄພຸທສເຈົ້າປະທັບຢູ່ຣິມຝັ່ງສະໂບກຂຣຕີຊື່ຄັຄຄຣາ ເຂຕຈັມປານຄຣ ຄັ້ງນັ້ນ ບ້ານວາສກຄາມຕັ້ງຢູ່ໃນກາສີຊົນບົທ ພຣະຊື່ກັສສປໂຄຕຣ໌ເປັນເຈົ້າອາວາສໃນວາສກ ຄາມນັ້ນຝັກໃຝ່ໃນການກໍ່ສ້າງ ເຖິງຄວາມຂວນຂວາຍວ່າ ທຳເປັນຫຍັງ ກິກຂຸຜູ້ມີສີລເປັນທີ່ຮັກ ທີ່ຍັງບໍ່ມາ ຄວຣມາ ທີ່ມາແລ້ວຄວຣຢູ່ເປັນຜາສຸກ ແລະອາວາສນີ້ຄວຣເຖິງຄວາມຈເຣີຍຣຸ່ງເຮືອງໄພບູລຍ໌ ສມັຍຕໍ່ມາ ກິກຂຸ ຫລາຍອົງຄ໌ ທ່ຽວຈາຣິກໃນກາສີຊົນບົທ ໄດ້ໄປເຖິງວາສກຄາມ ພຣະກັສສປໂຄຕຣໄດ້ເຫັນກິກຂຸເຫລົ່ານັ້ນມາ ແຕ່ໄກ ເມື່ອແລ້ວຈຶ່ງປູອາສນະ ຕັ້ງນ້ຳລ້າງຕີນ ຕັ່ງເກີບ ກະເບື້ອງເຊັດຕີນ ລຸກໄປັບບາຕຣ໌ຈີວຣ ນິມົນຕ໌ໃຫ້ລົບນ້ຳ ໄດ້ຈັດແຈງການສົງນ້ຳ ໄດ້ຈັດແຈງກະທັ່ງຢາຄູ ຂອງຄວຣຍ້ຳ ກັຕຕາຫາຣ ຈຶ່ງ ພຣະອາຄັນຕຸກະເຫລົ່ານັ້ນ ໄດ້ຫາຣືກັນດັ່ງນີ້ວ່າ ອາວຸໂສທັ້ງຫລາຍ ພຣະເຈົ້າອາວາສອົງຄ໌ນີ້ດີຫຼາຍ ໄດ້ຈັດແຈງ ການສົງນ້ຳ ໄດ້ຈັດແຈງກະທັ່ງຢາຄູ ຂອງຄວຣຍ້ຳ ກັຕຕາຫາຣ ຫາກຈັ່ງຊັ້ນ ພວກເຮົາຈົ່ງພັກຢູ່ໃນ ວາສກຄາມນີ້ແຫລະ ເມື່ອແລ້ວໄດ້ພັກຢູ່ໃນວາສກຄາມນັ້ນນັ່ນເອງ ຈຶ່ງພຣະກັສສປໂຄຕຣໄດ້ມີຄວາມປຣິວິຕົກ ຄວາມລຳບາກໂດຍການເປັນອາຄັນຕຸກະ ຂອງພຣະອາຄັນຕຸກະເຫລົ່ານີ້ ສງົບຫາຍແລ້ວ ພຣະອາຄັນຕຸກະ ທີ່ບໍ່ຊຳນານໃນທີ່ໂຄຈຣເຫລົ່ານີ້ ບັດນີ້ຊຳນານໃນທີ່ໂຄຈຣແລ້ວ ອັນການທຳຄວາມຂວນຂວາຍໃນສກຸລຄົນອື່ນ ຈົນຕລອດຊີວິຕ ເຮັດໄດ້ຍາກຫຼາຍ ແລະການຂໍກໍບໍ່ເປັນທີ່ພໍໃຈຂອງຄົນທັ້ງຫລາຍ ຖ້າແນວໃດເຮົາຄວຣເລີກ ທຳຄວາມຂວນຂວາຍໃນຢາຄູ ຂອງຄວຣຍ້ຳ ກັຕຕາຫາຣ ດັ່ງນີ້ ແລ້ວໄດ້ເລີກທຳຄວາມຂວນຂວາຍໃນຢາຄູ ຂອງຄວຣຍ້ຳ ກັຕຕາຫາຣ

ຈຶ່ງພຣະອາຄັນຕຸກະເຫລົ່ານັ້ນໄດ້ຫາຣືກັນດັ່ງນີ້ວ່າ ອາວຸໂສທັ້ງຫລາຍ ເມື່ອກ່ອນແລ ພຣະເຈົ້າອາວາສ ອົງຄ໌ນີ້ ຈັດແຈງການສົງນ້ຳ ຈັດແຈງກະທັ່ງຢາຄູ ຂອງຄວຣຍ້ຳ ກັຕຕາຫາຣ ບັດນີ້ທ່ານເລີກທຳຄວາມ ຂວນຂວາຍໃນຢາຄູ ຂອງຄວຣຍ້ຳ ກັຕຕາຫາຣ ອາວຸໂສທັ້ງຫລາຍ ດ່ຽວນີ້ພຣະເຈົ້າອາວາສອົງຄ໌ນີ້ຊົ່ວເສັຽແລ້ວ ຫາກຈັ່ງຊັ້ນພວກເຮົາຈົ່ງຍົກພຣະເຈົ້າອາວາສນີ້ເສັຽ ຕໍ່ມາພຣະອາຄັນຕຸກະເຫລົ່ານັ້ນປະຊຸມກັນແລ້ວ ໄດ້ກ່າວ ຄຳນີ້ຕໍ່ພຣະກັສສປໂຄຕຣ໌ວ່າ ອາວຸໂສ ເມື່ອກ່ອນແລ ທ່ານໄດ້ຈັດແຈງການສົງນ້ຳ ໄດ້ຈັດແຈງກະທັ່ງຢາຄູ ຂອງຄວຣຍ້ຳ ກັຕຕາຫາຣ ບັດນີ້ ທ່ານນັ້ນເລີກຈັດແຈງຢາຄູ ຂອງຄວຣຍ້ຳ ກັຕຕາຫາຣເສັຽແລ້ວ ທ່ານຕ້ອງອາບັຕິແລ້ວ ທ່ານເຫັນອາບັຕິນັ້ນບໍ່?

ພຣະກັສສປໂຄຕຣ໌ກ່າວວ່າ ອາວຸໂສທັ້ງຫລາຍ ຂ້ານ້ອຍບໍ່ມີອາບັຕິທີ່ຈະຕ້ອງເຫັນ.

ພຣະອາຄັນຕຸກະເຫລົ່ານັ້ນ ຈຶ່ງໄດ້ຍົກພຣະກັສສປໂຄຕຣ໌ເສັຽການບໍ່ເຫັນອາບັຕິທັນທີ ຈຶ່ງພຣະກັສສປໂຄຕຣໄດ້ມີຄວາມປຣິວິຕົກດັ່ງນີ້ວ່າ ເຮົາບໍ່ຮູ້ຂໍ້ນັ້ນວ່າ ນັ່ນອາບັຕິຫຼືບໍ່ແມ່ນອາບັຕິ ເຮົາຕ້ອງອາບັຕິແລ້ວຫຼືບໍ່ຕ້ອງ ຖືກຍົກເສັຽແລ້ວບໍ່ບໍ່ຖືກຍົກເສັຽ ໂດຍສັມມ໌ຫຼືບໍ່ເປັນສັມມ໌ ກຳເຮິບຫຼືບໍ່ກຳເຮິບຄວຣແກ່ການະຫຼືບໍ່ຄວຣແກ່ການະ ຖ້າແນວໃດ ເຮົາຄວຣໄປຈັມປານຄຣແລ້ວທູລຖາມເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ. ເມື່ອແລ້ວເກັບເສນາສນະຖືບາຕຣ໌ຈີວຣເດີນທາງໄປຈັມປານຄຣ ຍ່າງໄປໂດຍລຳດັບເຖິງຈັມປານຄຣເຂົ້າໄປໃນພຣະພຸທສສຳນັກ ຖວາຍບັງຄົມພຣະຜູ້ມີພຣະພາຄ ແລ້ວນັ່ງ ໓ ທີ່ຄວຣສ່ວນຂ້າງນຶ່ງ.

ພຸທສປະເພຕີ

ກິການທີ່ພຣະຜູ້ມີພຣະພາຄພຸທສເຈົ້າທັ້ງຫລາຍ ທຣົງປຣາສຣັຍກັບພຣະອາຄັນຕຸກະທັ້ງຫລາຍ ທັ່ນເປັນພຸທສປະເພຕີ.

ຄັ້ງນັ້ນ ພຣະຜູ້ມີພຣະພາຄໄດ້ຕຣັສປຕິສັນຖາຣຕໍ່ພຣະກັສສປໂຄຕຣ໌ວ່າ ກິກຂຸທ່ານຍັງພໍທົນໄດ້ຫຼື ຍັງພໍໃຫ້ອັຕພາພເປັນໄປໄດ້ບໍ່ ທ່ານເດີນທາງມາມີຄວາມລຳບາກຫນ້ອຍບໍ່ ແລະທ່ານມາຈາກໃສ?

ພຣະກັສສປໂຄຕຣ໌ຂາບທູລວ່າ ຂ້າພຣະພຸທສເຈົ້າຍັງພໍທົນຢູ່ໄດ້ ຍັງພໍໃຫ້ອັຕພາພເປັນໄປໄດ້ຂ້ານ້ອຍ ແລະຂ້າພຣະພຸທສເຈົ້າເດີນທາງມາບໍ່ສູ້ລຳບາກ ຂ້ານ້ອຍ ວາສພຄາມຕັ້ງຢູ່ໃນກາສີຊົນບົທຂ້າພຣະພຸທສເຈົ້າເປັນເຈົ້າອາວາສໃນວາສພຄາມນັ້ນ ຝັກໃຝ່ໃນການກໍ່ສ້າງ ເຖິງຄວາມຂວນຂວາຍວ່າ ທຳເປັນຫຍັງ ກິກຂຸຜູ້ມີສີລເປັນທີ່ຮັກ ທີ່ຍັງບໍ່ມາ ຄວຣມາ ທີ່ມາແລ້ວຄວຣຢູ່ເປັນຜາສຸກ ແລະອາວາສນີ້ຄວຣເຖິງຄວາມຈເຣີຍຮຸ່ງເຮືອງໄພບູລຍ໌ ຄັ້ງນັ້ນ ກິກຂຸຫລາຍອົງຄ໌ທ່ຽວຈາຣິກໃນກາສີຊົນບົທໄດ້ໄປເຖິງວາສພຄາມຂ້າພຣະພຸທສເຈົ້າໄດ້ເຫັນກິກຂຸເຫລົ່ານັ້ນກຳລັງມາແຕ່ໄກ ຈຶ່ງປູອາສນະ ຕັ້ງນ້ຳລ້າງຕີນ ຕັ່ງເກີບກະເບື້ອງເຊັດຕີນ ໄດ້ລຸກໄປັບບາຕຣ໌ຈີວຣ ນິມົນຕ໌ໃຫ້ລົມນ້ຳ ໄດ້ຈັດແຈງການສົງນ້ຳ ໄດ້ຈັດແຈງກະທັ່ງຢາຄູ ຂອງຄວຣຍ້ຳ ກັຕຕາຫານ ຈຶ່ງພຣະອາຄັນຕຸກະເຫລົ່ານັ້ນໄດ້ຫາຣືກັນດັ່ງນີ້ວ່າ ອາວຸໂສທັ້ງຫລາຍພຣະເຈົ້າອາວາສອົງຄ໌ນີ້ດີຫຼາຍ ໄດ້ຈັດແຈງການສົງນ້ຳ ໄດ້ຈັດແຈງກະທັ່ງຢາຄູຂອງຄວຣຍ້ຳ ກັຕຕາຫານຫາກຈັ່ງຊັ້ນ ພວກເຮົາຈົ່ງພັກຢູ່ໃນວາສພຄາມນີ້ແຫລະ ເມື່ອແລ້ວໄດ້ພັກຢູ່ໃນວາສພຄາມນັ້ນນັ່ນເອງຂ້າພຣະພຸທສເຈົ້ານັ້ນໄດ້ມີຄວາມປຣິວິຕົກດັ່ງນີ້ວ່າ ຄວາມລຳບາກໂດຍການະເປັນອາຄັນຕຸກະຂອງພຣະອາຄັນຕຸກະເຫລົ່ານີ້ ສງົບຫາຍແລ້ວ ທ່ານພຣະອາຄັນຕຸກະທີ່ບໍ່ຊຳນານໃນທີ່ໂຄຈຣເຫລົ່ານີ້ ບັດນີ້ເປັນຜູ້ຊຳນານໃນທີ່

ໂຄຈຣແລ້ວ ອັນການທຳຄວາມຂວນຂວາຍໃນສກຸລຄົນອື່ນຈົນຕລອດຊີວິຕ ເຮັດໄດ້ຍາກຫຼາຍ ແລະການຂໍກໍບໍ່ເປັນທີ່ພໍໃຈຂອງຄົນທັ້ງຫລາຍ ຖ້າແນວໃດ ເຮົາຄວຣເລີກທຳຄວາມຂວນຂວາຍໃນຢາຄູ ຂອງຄວຣຍ້ຳ ກັຕຕາຫາຣ ຂ້າພຣະພຸທສເຈົ້ານັ້ນໄດ້ເລີກທຳຄວາມຂວນຂວາຍໃນຢາຄູຂອງຄວຣຍ້ຳ ກັຕຕາຫາຣແລ້ວ ຈຶ່ງພຣະອາຄັນຕຸກະເຫລົ່ານັ້ນ ໄດ້ຫາຣືກັນດັ່ງນີ້ວ່າ ອາວຸໂສທັ້ງຫລາຍ ເມື່ອກ່ອນແລພຣະເຈົ້າອາວາສອົງຄ໌ນີ້ຈັດແຈງການສົງນ້ຳ ຈັດແຈງກະທັ່ງຢາຄູ ຂອງຄວຣຍ້ຳ ກັຕຕາຫາຣ ບັດນີ້ ທ່ານເລີກຈັດແຈງຢາຄູ ຂອງຄວຣຍ້ຳ ກັຕຕາຫາຣ ອາວຸໂສທັ້ງຫລາຍ ດ່ງວນີ້ພຣະເຈົ້າອາວາສອົງຄ໌ນີ້ຊົ່ວເສັຽແລ້ວ ຫາກຈັ່ງຊັ້ນ ພວກເຮົາຈົ່ງຍົກພຣະເຈົ້າອາວາສອົງຄ໌ນີ້ເສັຽ ຕໍ່ມາຈຶ່ງປະຊຸມກັນ ໄດ້ກ່າວຄຳນີ້ກະຂ້າພຣະພຸທສເຈົ້າວ່າ ເມື່ອກ່ອນແລ ທ່ານໄດ້ຈັດແຈງການສົງນ້ຳ ໄດ້ຈັດແຈງກະທັ່ງຢາຄູ ຂອງຄວຣຍ້ຳ ກັຕຕາຫາຣ ບັດນີ້ ທ່ານນັ້ນເລີກຈັດແຈງຢາຄູ ຂອງຄວຣຍ້ຳ ກັຕຕາຫາຣເສັຽແລ້ວ ອາວຸໂສ ທ່ານຕ້ອງອາບັຕິແລ້ວ ທ່ານເຫັນອາບັຕິນັ້ນບໍ່ ຂ້າພຣະພຸທສເຈົ້າຕອບວ່າ ອາວຸໂສທັ້ງຫລາຍ ຂ້ານ້ອຍບໍ່ມີອາບັຕິທີ່ຈະຕ້ອງເຫັນ ພຣະອາຄັນຕຸກະເຫລົ່ານັ້ນຈຶ່ງຍົກຂ້າພຣະພຸທສເຈົ້າເສັຽການບໍ່ເຫັນອາບັຕິທັນທີ ຂ້າພຣະພຸທສເຈົ້າໄດ້ມີຄວາມປຣິວິຕົກວ່າ ເຮົາບໍ່ຮູ້ຂໍ້ນັ້ນວ່າ ນັ່ນອາບັຕິຫຼືບໍ່ແມ່ນອາບັຕິ ເຮົາຕ້ອງອາບັຕິແລ້ວບໍ່ບໍ່ຕ້ອງ ຖືກຍົກເສັຽແລ້ວບໍ່ບໍ່ຖືກຍົກເສັຽ ໂດຍສັມມ໌ຫຼືບໍ່ເປັນສັມມ໌ກຳເຣີບຫຼືບໍ່ກຳເຣີບ ຄວຣແກ່ການະຫຼືບໍ່ຄວຣແກ່ການະ ຖ້າແນວໃດ ເຮົາຄວຣໄປຈັມປານຄຣ ແລ້ວທູລຖາມເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ ຂ້າພຣະພຸທສເຈົ້າມາຈາກວາສກຄາມນັ້ນ ຂ້ານ້ອຍ.

ພຣະຜູ້ມີພຣະກາຄຕຣັສວ່າ ກິກຂຸ ນັ້ນບໍ່ເປັນອາບັຕິ ທັ່ນເປັນອາບັຕິຫາບໍ່ໄດ້ ທ່ານບໍ່ຕ້ອງອາບັຕິ ທ່ານຕ້ອງອາບັຕິຫາບໍ່ໄດ້ ທ່ານບໍ່ຖືກຍົກເສັຽ ທ່ານຖືກຍົກເສັຽຫາບໍ່ໄດ້ ທ່ານຖືກຍົກເສັຽໂດຍກັມມ໌ບໍ່ເປັນສັມມ໌ ກຳເຣີບ ບໍ່ຄວຣແກ່ການະ ໄປເທີ້ນ ກິກຂຸ ທ່ານຈົ່ງອາສັຍຢູ່ໃນວາສກຄາມນັ້ນແຫລະ.

ພຣະກັສສປໂຄຕຣ໌ທູລຮັບສນອງພຣະພຸທສດຳຣັສວ່າ ເປັນຢ່າງນັ້ນຂ້ານ້ອຍ ແລ້ວລຸກຈາກທີ່ນັ່ງ ຖວາຍບັງຄົມພຣະຜູ້ມີພຣະກາຄ ທຳປະທັກສິນແລ້ວກັບໄປວາສກຄາມ.

ຄັ້ງນັ້ນ ຄວາມຣຳຄານ ຄວາມເດືອດຮ້ອນ ໄດ້ມີແກ່ພຣະອາຄັນຕຸກະເຫລົ່ານັ້ນວ່າ ບໍ່ແມ່ນລາກຂອງພວກເຮົານໍ ລາກຂອງພວກເຮົາບໍ່ມີນໍ ພວກເຮົາໄດ້ຊົ່ວແລ້ວນໍ ພວກເຮົາບໍ່ໄດ້ດີແລ້ວນໍເພາະພວກເຮົາຍົກກິກຂຸຜູ້ບໍຣິສຸທສິ໌ຫາອາບັຕິບໍ່ໄດ້ເສັຽ ເພາະເຣື່ອງບໍ່ຄວຣ ເພາະເຫຕຸບໍ່ຄວຣ ອາວຸໂສທັ້ງຫລາຍ ຫາກຈັ່ງຊັ້ນ ພວກເຮົາຈົ່ງໄປຈັມປານຄຣແລ້ວ ສແດງໂທສທີ່ລ່ວງເກີນ ໂດຍຄວາມເປັນໂທສລ່ວງເກີນ ໃນສຳນັກພຣະຜູ້ມີພຣະກາຄ. ຕໍ່ມາພຣະອາຄັນຕຸກະເຫລົ່ານັ້ນ ເກັບງຳເສນາສນະ ຖືບາຕຣ໌ ຈີວຣຢ່າງໄປ

ທາງຈັມປານຄຣ ຍ່າງໄປໂດຍລຳດັບ ເຖິງຈັມປານຄຣ ເຂົ້າໄປໃນພຣະພຸທສສຳນັກ ຖວາຍບັງຄົມພຣະຜູ້ມີ-ພຣະກາຄແລ້ວນັ່ງ ຓ ທີ່ຄວຣສ່ວນຂ້າງນຶ່ງ.

ພຸທສປະເພຕີ

ກໍການທີ່ພຣະຜູ້ມີພຣະກາຄພຸທສເຈົ້າທັ້ງຫລາຍ ທຣົງປຣາສຣັຍກັບພຣະອາຄັນຕຸກະທັ້ງຫລາຍ ທັ່ນເປັນພຸທສປະເພຕີ.

ຄັ້ງນັ້ນ ພຣະຜູ້ມີພຣະກາຄໄດ້ຕຣັສປຕິສັນຖາຣແກ່ກິກຂຸເຫລົ່ານັ້ນວ່າ ກິກຂຸທັ້ງຫລາຍ ພວກທ່ານຍັງພໍທົນໄດ້ບໍ່ ຍັງພໍໃຫ້ອັຕກາພເປັນໄປໄດ້ບໍ່ ພວກທ່ານເດີນທາງມາມີຄວາມລຳບາກໜ້ອຍບໍ່ ແລະພວກທ່ານມາແຕ່ໃສ?

ອຖ. ພວກຂ້າພຣະພຸທສເຈົ້າຍັງພໍທົນໄດ້ ຍັງພໍໃຫ້ອັຕກາພເປັນໄປໄດ້ ຂ້ານ້ອຍ ແລະພວກຂ້າພຣະພຸທສເຈົ້າເດີນທາງມາບໍ່ສູ້ລຳບາກ ຂ້ານ້ອຍ ວາສກຄາມຕັ້ງຢູ່ໃນກາສີຊົນບົທ ພວກຂ້າພຣະພຸທສເຈົ້າມາແຕ່ວາສກຄາມນັ້ນ ຂ້ານ້ອຍ.

ກ. ກິກຂຸທັ້ງຫລາຍ ພວກທ່ານແມ່ນບໍ່ທີ່ຍົກກິກຂຸເຈົ້າອາວາສເສັຽ?

ອຖ. ແມ່ນ ຂ້ານ້ອຍ.

ກ. ກິກຂຸທັ້ງຫລາຍ ພວກທ່ານຍົກກິກຂຸເຈົ້າອາວາສເສັຽ ເພາະເຣື່ອງຫຍັງ ເພາະເຫຕຸໃດ?

ອຖ. ເພາະເຣື່ອງບໍ່ສົມຄວຣ ເພາະເຫຕຸບໍ່ຄວຣ ຂ້ານ້ອຍ.

ທຣົງຕິຕຽນແລ້ວບັລລັຕິຫ້າມ

ພຣະຜູ້ມີພຣະກາຄພຸທສເຈົ້າທຣົງຕິຕຽນວ່າ ກິກຂຸທັ້ງຫລາຍ ການກະທຳຂອງພວກທ່ານທັ່ນ ບໍ່ເໝາະບໍ່ສົມ ບໍ່ສົມຄວຣ ບໍ່ແມ່ນກິຈຂອງສມຓະ ໃຊ້ບໍ່ໄດ້ ບໍ່ຄວຣເຮັດ ດູຣາໂມຄບຸຣຸษ ເປັນຫຍັງພວກທ່ານຈຶ່ງໄດ້ຍົກກິກຂຸຜູ້ບໍຣິສຸທສິ໌ ບໍ່ມີອາບັຕິເສັຽ ເພາະເຣື່ອງບໍ່ສົມຄວຣ ເພາະເຫຕຸບໍ່ສົມຄວຣລະ ການກະທຳຂອງພວກທ່ານທັ່ນ ບໍ່ເປັນໄປເພື່ອຄວາມເລື່ອມໃສຂອງຊຸມຊົນທີ່ຍັງບໍ່ເລື່ອມໃສ ... ເມື່ອແລ້ວທຣົງເຮັດທັມມີກຖາຮັບສັ່ງກະກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ກິກຂຸທີ່ບໍຣິສຸທສິ໌ບໍ່ມີອາບັຕິ ອັນກິກຂຸບໍ່ຄວຣຍົກເສັຽເພາະເຣື່ອງບໍ່ສົມຄວຣ ເພາະເຫຕຸບໍ່ສົມຄວຣ ອົງຄ໌ໃດຍົກເສັຽ ຕ້ອງອາບັຕິທຸກກົຎ.

ທັນໃດກິກຂຸເຫລົ່ານັ້ນລຸກຈາກທີ່ນັ່ງ ທຳຜ້າອຸຕຣາສົງຄ໌ພາດບ່າມູບສຽຣລົງທີ່ພຣະຍຸຄົລບາທຂອງພຣະຜູ້ມີພຣະກາຄ ແລ້ວຂາບທູລຄຳນີ້ແດ່ພຣະຜູ້ມີພຣະກາຄວ່າ ຂ້ານ້ອຍ ໂທษທີ່ລ່ວງເກີນໄດ້ລ່ວງ

ພວກຂ້າພຣະພຸທສເຈົ້າຜູ້ໂງ່ ຜູ້ຫລົງ ບໍ່ฉลาด ເພາະພວກຂ້າພຣະພຸທສເຈົ້າໄດ້ຍົກກິກຂຸທີ່ບໍຣິສຸທສິ໌ຫາອາບັຕິ ບໍ່ໄດ້ເສັ້ງ ເພາະເຣື່ອງບໍ່ສົມຄວຣ ເພາະເຫຕຸບໍ່ສົມຄວຣ ຂໍພອຣະຜູ້ມີພຣະກາຄຈົງຫຣົງພຣະກຣຸຕາຮັບໂທษ ທີ່ລ່ວງເກີນ ເພື່ອຄວາມສຳຣວມຕໍ່ໄປ ຂ້ານ້ອຍ.

ພຣະຜູ້ມີພຣະກາຄຕຣັສວ່າ ດູຣາກິກຂຸທັ້ງຫລາຍ ເອົາເທີ້ນ ໂທษທີ່ລ່ວງເກີນໄດ້ລ່ວງພວກທ່ານຜູ້ໂງ່ ຜູ້ຫລົງ ບໍ່ฉลาด ເພາະພວກທ່ານໄດ້ຍົກກິກຂຸທີ່ບໍຣິສຸທສິ໌ ຫາອາບັຕິບໍ່ໄດ້ເສັ້ງ ເພາະເຣື່ອງບໍ່ສົມຄວຣ ເພາະເຫຕຸບໍ່ສົມຄວຣ ແຕ່ເພາະພວກທ່ານເຫັນໂທษລ່ວງເກີນ ໂດຍຄວາມເປັນໂທษລ່ວງເກີນ ແລ້ວທຳ ຄືນຕາມສັມມ໌ ເຮົາຮັບໂທษນັ້ນຂອງພວກທ່ານລະ ແທ້ແທ້ ຂໍ້ທີ່ກິກຂຸເຫັນໂທษລ່ວງເກີນ ໂດຍຄວາມເປັນ ໂທษລ່ວງເກີນ ແລ້ວທຳຄືນຕາມສັມມ໌ ເຖິງຄວາມສຳຣວມຕໍ່ໄປ ທັ່ນເປັນຄວາມຈເຣີຍໃນອາຣຍະວິນັຍ.

ອຸກເຂປນີຍກັມມ໌

[໑໗໕] ກໍສມັຍນັ້ນແລ ກິກຂຸທັ້ງຫລາຍໃນເມືອງຈັມປາ ທຳກັມມ໌ເຫັນປານນີ້ ຄື ທຳກັມມ໌ເປັນ ວັຄຄ໌ໂດຍບໍ່ເປັນສັມມ໌ ທຳກັມມ໌ພ້ອມພຽງ ໂດຍບໍ່ເປັນສັມມ໌ ທຳກັມມ໌ເປັນວັຄຄ໌ໂດຍສັມມ໌ ທຳ ກັມມ໌ເປັນວັຄຄ໌ໂດຍຫຸງມສັມມ໌ ທຳກັມມ໌ພ້ອມພຽງໂດຍຫຸງມສັມມ໌ ກິກຂຸອົງຄ໌ດຽວຍົກກິກຂຸອົງຄ໌ດຽວ ເສັ້ງແດ່ ອົງຄ໌ດຽວຍົກກິກຂຸ ໔ ອົງຄ໌ເສັ້ງແດ່ ອົງຄ໌ດຽວຍົກກິກຂຸຫລາຍອົງຄ໌ເສັ້ງແດ່ ອົງຄ໌ດຽວຍົກສົງฆ໌ເສັ້ງ ແດ່ ສອງອົງຄ໌ຍົກກິກຂຸອົງຄ໌ດຽວເສັ້ງແດ່ ສອງອົງຄ໌ຍົກກິກຂຸສອງອົງຄ໌ເສັ້ງແດ່ ສອງອົງຄ໌ຍົກກິກຂຸຫລາຍອົງຄ໌ ເສັ້ງແດ່ ສອງອົງຄ໌ຍົກສົງฆ໌ເສັ້ງແດ່ ຫລາຍອົງຄ໌ຍົກກິກຂຸອົງຄ໌ດຽວເສັ້ງແດ່ ຫລາຍອົງຄ໌ຍົກກິກຂຸສອງອົງຄ໌ເສັ້ງ ແດ່ ຫລາຍອົງຄ໌ຍົກກິກຂຸຫລາຍອົງຄ໌ເສັ້ງແດ່ ຫລາຍອົງຄ໌ຍົກສົງฆ໌ເສັ້ງແດ່ ສົງฆ໌ຕໍ່ສົງฆ໌ຍົກກັນເສັ້ງແດ່ ບັຣດາກິກຂຸທີ່ເປັນຜູ້ມັກຫນ້ອຍ ... ຕ່າງກໍເພ່ງໂທษ ຕິຕຽນ ໂພນທະນາວ່າ ເປັນຫຍັງກິກຂຸທັ້ງຫລາຍໃນເມືອງ ຈັມປາ ຈຶ່ງໄດ້ກະທຳກັມມ໌ເຫັນປານນີ້ລະ ຄື ທຳກັມມ໌ເປັນວັຄຄ໌ໂດຍບໍ່ເປັນສັມມ໌ ... ສົງฆ໌ຕໍ່ສົງฆ໌ຍົກ ກັນເສັ້ງແດ່ ແລ້ວຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະກາຄ.

ພຣະຜູ້ມີພຣະກາຄຫຣົງສອບຖາມກິກຂຸທັ້ງຫລາຍວ່າ ດູຣາກິກຂຸທັ້ງຫລາຍ ຂ່າວວ່າກິກຂຸທັ້ງຫລາຍ ໃນເມືອງຈັມປາທຳກັມມ໌ເຫັນປານນີ້ ຄືທຳກັມມ໌ເປັນວັຄຄ໌ໂດຍບໍ່ເປັນສັມມ໌ ... ສົງฆ໌ຕໍ່ສົງฆ໌ຍົກກັນເສັ້ງ ແດ່ ແທ້ບໍ່?

ກິກຂຸທັ້ງຫລາຍທູລຮັບວ່າ ແທ້ ຂ້ານ້ອຍ.

ພຣະຜູ້ມີພຣະກາຄພຸທສເຈົ້າທຣົງຕິຕຽນ ... ເມື່ອແລ້ວ ທຣົງເຮັດສັມມີກາຖາຮັບສັ່ງກະກິກຂຸທັ້ງຫລາຍ ວ່າດັ່ງນີ້:-

ກັມມ໌ທີ່ໃຊ້ໄດ້ແລະໃຊ້ບໍ່ໄດ້

[໑໗໖] ດູຮາກິກຂຸທັ້ງຫລາຍ ຖ້າກັມມ໌ເປັນວັຄ໌ໂດຍສັມມໍໃຊ້ບໍ່ໄດ້ ແລະບໍ່ຄວຣເຮັດ
ຖ້າກັມມ໌ພ້ອມພຽງໂດຍບໍ່ເປັນສັມມ໌ ໃຊ້ບໍ່ໄດ້ ແລະບໍ່ຄວຣເຮັດ
ຖ້າກັມມ໌ເປັນວັຄ໌ໂດຍສັມມ໌ ໃຊ້ບໍ່ໄດ້ ແລະບໍ່ຄວຣເຮັດ
ຖ້າກັມມ໌ເປັນວັຄ໌ໂດຍທຽມສັມມ໌ ໃຊ້ບໍ່ໄດ້ ແລະບໍ່ຄວຣເຮັດ
ຖ້າກັມມ໌ພ້ອມພຽງໂດຍທຽມສັມມ໌ ໃຊ້ບໍ່ໄດ້ ແລະບໍ່ຄວຣເຮັດ
ກິກຂຸອົງຄ໌ດຽວຍົກກິກຂຸອົງຄ໌ດຽວເສັຽແດ່ ໃຊ້ບໍ່ໄດ້ ແລະບໍ່ຄວຣເຮັດ
ກິກຂຸອົງຄ໌ດຽວຍົກກິກຂຸສອງອົງຄ໌ເສັຽແດ່ ໃຊ້ບໍ່ໄດ້ ແລະບໍ່ຄວຣເຮັດ
ກິກຂຸອົງຄ໌ດຽວຍົກກິກຂຸຫລາຍອົງຄ໌ເສັຽແດ່ ໃຊ້ບໍ່ໄດ້ ແລະບໍ່ຄວຣເຮັດ
ກິກຂຸອົງຄ໌ດຽວຍົກສົງຄ໌ເສັຽແດ່ ໃຊ້ບໍ່ໄດ້ ແລະບໍ່ຄວຣເຮັດ
ກິກຂຸສອງອົງຄ໌ຍົກກິກຂຸອົງຄ໌ດຽວເສັຽແດ່ ໃຊ້ບໍ່ໄດ້ ແລະບໍ່ຄວຣເຮັດ
ກິກຂຸສອງອົງຄ໌ຍົກກິກຂຸສອງອົງຄ໌ເສັຽແດ່ ໃຊ້ບໍ່ໄດ້ ແລະບໍ່ຄວຣເຮັດ
ກິກຂຸສອງອົງຄ໌ຍົກກິກຂຸຫລາຍອົງຄ໌ເສັຽແດ່ ໃຊ້ບໍ່ໄດ້ ແລະບໍ່ຄວຣເຮັດ
ກິກຂຸສອງອົງຄ໌ຍົກສົງຄ໌ເສັຽແດ່ ໃຊ້ບໍ່ໄດ້ ແລະບໍ່ຄວຣເຮັດ
ກິກຂຸຫລາຍອົງຄ໌ຍົກກິກຂຸອົງຄ໌ດຽວເສັຽແດ່ ໃຊ້ບໍ່ໄດ້ ແລະບໍ່ຄວຣເຮັດ
ກິກຂຸຫລາຍອົງຄ໌ຍົກກິກຂຸສອງອົງຄ໌ເສັຽແດ່ ໃຊ້ບໍ່ໄດ້ ແລະບໍ່ຄວຣເຮັດ
ກິກຂຸຫລາຍອົງຄ໌ຍົກກິກຂຸຫລາຍອົງຄ໌ເສັຽແດ່ ໃຊ້ບໍ່ໄດ້ ແລະບໍ່ຄວຣເຮັດ
ກິກຂຸຫລາຍອົງຄ໌ຍົກສົງຄ໌ເສັຽແດ່ ໃຊ້ບໍ່ໄດ້ ແລະບໍ່ຄວຣເຮັດ
ສົງຄ໌ຕໍ່ສົງຄ໌ຍົກກັນເສັຽແດ່ ກໍໃຊ້ບໍ່ໄດ້ ແລະບໍ່ຄວຣເຮັດ.

ກັມມ໌ ໔ ປະເພທ

[໑໗໗] ດູຮາກິກຂຸທັ້ງຫລາຍ ກັມມ໌ນີ້ມີ ໔ ປະເພທ ຄືກັມມ໌ເປັນວັຄ໌ໂດຍບໍ່ເປັນສັມມ໌ ໑ ກັມມ໌ພ້ອມພຽງໂດຍບໍ່ເປັນສັມມ໌ ໑ ກັມມ໌ເປັນວັຄ໌ໂດຍສັມມ໌ ໑ ກັມມ໌ພ້ອມພຽງໂດຍສັມມ໌ ໑

ອະທິບາຍກັມມ໌ ໔ ປະເພທ

ດູຣາພິກຂຸທັ້ງຫລາຍ ໃນກັມມ໌ ໔ ປະເພທນັ້ນ ກັມມ໌ທີ່ເປັນວັຄຄ໌ໂດຍບໍ່ເປັນສັມມ໌ນີ້ ຊື່ວ່າກຳເຣິບ ບໍ່ຄວຣແກ່ຖານະ ເພາະບໍ່ເປັນສັມມ໌ ເພາະເປັນວັຄຄ໌ ກັມມ໌ເຫັນປານນີ້ບໍ່ຄວຣເຮັດ ແລະເຮົາກໍບໍ່ອນຸຍາຕ.

ດູຣາພິກຂຸທັ້ງຫລາຍ ໃນກັມມ໌ ໔ ປະເພທນັ້ນ ກັມມ໌ທີ່ພ້ອມພຽງໂດຍບໍ່ເປັນສັມມ໌ນີ້ ຊື່ວ່າກຳເຣິບ ບໍ່ຄວຣແກ່ຖານະ ເພາະບໍ່ເປັນສັມມ໌ ກັມມ໌ເຫັນປານນີ້ບໍ່ຄວຣເຮັດແລະເຮົາກໍບໍ່ອນຸຍາຕ.

ດູຣາພິກຂຸທັ້ງຫລາຍ ໃນກັມມ໌ ໔ ປະເພທນັ້ນ ກັມມ໌ທີ່ເປັນວັຄຄ໌ໂດຍສັມມ໌ນີ້ ຊື່ວ່າກຳເຣິບ ບໍ່ຄວຣແກ່ຖານະ ເພາະເປັນວັຄຄ໌ ກັມມ໌ເຫັນປານນີ້ບໍ່ຄວຣເຮັດ ແລະເຮົາກໍບໍ່ອນຸຍາຕ.

ດູຣາພິກຂຸທັ້ງຫລາຍ ໃນກັມມ໌ ໔ ປະເພທນັ້ນ ກັມມ໌ທີ່ພ້ອມພຽງໂດຍສັມມ໌ນີ້ ຊື່ວ່າບໍ່ກຳເຣິບ ຄວຣແກ່ຖານະ ເພາະເປັນສັມມ໌ ເພາະພ້ອມພຽງ ກັມມ໌ເຫັນປານນີ້ຄວຣເຮັດ ແລະເຮົາກໍອນຸຍາຕ.

ດູຣາພິກຂຸທັ້ງຫລາຍ ເພາະເຫຕຸດັ່ງກ່າວນັ້ນແລ ພວກທ່ານຄວຣສຳໜຽກຢ່າງນີ້ແຫລະວ່າ ພວກເຮົາຈະທຳກັມມ໌ທີ່ພ້ອມພຽງໂດຍສັມມ໌.

ພຣະລັພພັຄຄີຍ໌ທຳກັມມ໌ຫລາຍຢ່າງ

[໑໗໗] ໂດຍສມັຍນັ້ນແລ ພຣະລັພພັຄຄີຍ໌ທຳກັມມ໌ເຫັນປານນີ້ ຄື ທຳກັມມ໌ເປັນວັຄຄ໌ໂດຍບໍ່ເປັນສັມມ໌ ທຳກັມມ໌ພ້ອມພຽງໂດຍບໍ່ເປັນສັມມ໌ ທຳກັມມ໌ເປັນວັຄຄ໌ໂດຍສັມມ໌ ທຳກັມມ໌ເປັນວັຄຄ໌ໂດຍຫຼຸມສັມມ໌ ທຳກັມມ໌ພ້ອມພຽງໂດຍຫຼຸມສັມມ໌ ທຳກັມມ໌ບົກພ່ອງດ້ວຍຍັຕຕິແຕ່ສົມບູຣຕ໌ດ້ວຍອນຸສາວນາແດ່ ທຳກັມມ໌ບົກພ່ອງດ້ວຍອນຸສາວນາແຕ່ສົມບູຣຕ໌ດ້ວຍຍັຕຕິແດ່ ທຳກັມມ໌ບົກພ່ອງທັ້ງຍັຕຕິບົກພ່ອງທັ້ງອນຸສາວນາແດ່ ທຳກັມມ໌ເວັ້ນຈາກສັມມ໌ແດ່ ທຳກັມມ໌ເວັ້ນຈາກວິນັຍແດ່ ທຳກັມມ໌ເວັ້ນຈາກສັຕຖຸສາສນ໌ແດ່ ທຳກັມມ໌ທີ່ຖືກຄັດຄ້ານແລ້ວແລະຂືນເຮັດ ບໍ່ເປັນສັມມ໌ ກຳເຣິບ ບໍ່ຄວຣແກ່ຖານະແດ່

ບັຣດາພິກຂຸທີ່ເປັນຜູ້ມັກຫນ້ອຍ ... ເພ່ງໂທສ ຕິຕຽນ ໂພນທະນາວ່າ ເປັນຫຍັງພຣະລັພພັຄຄີຍ໌ ຈຶ່ງໄດ້ທຳກັມມ໌ເຫັນປານນີ້ ຄື ທຳກັມມ໌ເປັນວັຄຄ໌ໂດຍບໍ່ເປັນສັມມ໌ ... ທຳກັມມ໌ທີ່ຖືກຄັດຄ້ານແລ້ວແລະຂືນເຮັດ ບໍ່ເປັນສັມມ໌ກຳເຣິບ ບໍ່ຄວຣແກ່ຖານະແດ່ລະ ແລ້ວຂາບທູລເຣື່ອງນັ້ນແດ່ພຣະຜູ້ມີພຣະພາຄ.

ພຣະຜູ້ມີພຣະພາຄທຣົງສອບຖາມພິກຂຸທັ້ງຫລາຍວ່າ ດູຣາພິກຂຸທັ້ງຫລາຍ ຂ່າວວ່າພິກຂຸລັພພັຄຄີຍ໌ ທຳກັມມ໌ເຫັນປານນີ້ ຄື ທຳກັມມ໌ເປັນວັຄຄ໌ໂດຍບໍ່ເປັນສັມມ໌ ... ທຳກັມມ໌ທີ່ຖືກຄັດຄ້ານແລ້ວແລະຂືນເຮັດ ບໍ່ເປັນສັມມ໌ ກຳເຣິບ ບໍ່ຄວຣແກ່ຖານະແດ່ແທ້ບໍ່?

ກິກຂຸທັ້ງຫລາຍທູລຮັບວ່າ ແທ້ ຂ້ານ້ອຍ.

ພຣະຜູ້ມີພຣະກາຄພຸທສເຈົ້າທຣົງຕິຕຽນ ... ເມື່ອແລ້ວທຣົງເຮັດສັມມີກາຖາຮັບສັ່ງກະກິກຂຸທັ້ງຫລາຍວ່າດັ່ງນີ້:-

ກັມມ໌ທີ່ໃຊ້ບໍ່ໄດ້

[໑໓໙] ດູຣາກິກຂຸທັ້ງຫລາຍ ຖ້າກັມມ໌ເປັນວັຄຄ໌ໂດຍບໍ່ເປັນສັມມ໌ ໃຊ້ບໍ່ໄດ້ ແລະບໍ່ຄວຣເຮັດ

ຖ້າກັມມ໌ພ້ອມພຽງໂດຍບໍ່ເປັນສັມມ໌ ໃຊ້ບໍ່ໄດ້ ແລະບໍ່ຄວຣເຮັດ

ຖ້າກັມມ໌ເປັນວັຄຄ໌ໂດຍສັມມ໌ ໃຊ້ບໍ່ໄດ້ ແລະບໍ່ຄວຣເຮັດ

ຖ້າກັມມ໌ເປັນວັຄຄ໌ໂດຍທຽມສັມມ໌ ໃຊ້ບໍ່ໄດ້ ແລະບໍ່ຄວຣເຮັດ

ຖ້າກັມມ໌ພ້ອມພຽງໂດຍທຽມສັມມ໌ ໃຊ້ບໍ່ໄດ້ ແລະບໍ່ຄວຣເຮັດ

ຖ້າກັມມ໌ບົກພ່ອງດ້ວຍຌັຕຕິ ສົມບູຣຓ໌ດ້ວຍອນຸສາວນາ ໃຊ້ບໍ່ໄດ້ ແລະບໍ່ຄວຣເຮັດ

ຖ້າກັມມ໌ບົກພ່ອງດ້ວຍອນຸສາວນາສົມບູຣຓ໌ດ້ວຍຌັຕຕິ ໃຊ້ບໍ່ໄດ້ ແລະບໍ່ຄວຣເຮັດ

ຖ້າກັມມ໌ບົກພ່ອງທັ້ງຌັຕຕິ ບົກພ່ອງທັ້ງອນຸສາວນາ ໃຊ້ບໍ່ໄດ້ ແລະບໍ່ຄວຣເຮັດ

ກັມມ໌ແມ້ແຕກຕ່າງຈາກສັມມ໌ ກໍໃຊ້ບໍ່ໄດ້ ແລະບໍ່ຄວຣເຮັດ

ກັມມ໌ແມ້ແຕກຕ່າງຈາກວິນັຍ ກໍໃຊ້ບໍ່ໄດ້ ແລະບໍ່ຄວຣເຮັດ

ກັມມ໌ແມ້ແຕກຕ່າງຈາກສັຕຖຸສາສນ໌ ກໍໃຊ້ບໍ່ໄດ້ ແລະບໍ່ຄວຣເຮັດ

ຖ້າກັມມ໌ທີ່ຖືກຄັດຄ້ານແລ້ວແລະຂືນເຮັດ ບໍ່ເປັນສັມມ໌ ກຳເຣີບ ບໍ່ຄວຣແກ່ຖານະ ກໍໃຊ້ບໍ່ໄດ້ ແລະບໍ່ຄວຣເຮັດ.

ກັມມ໌ ໖ ປະເພທ

[໑໔໐] ດູຣາກິກຂຸທັ້ງຫລາຍ ກັມມ໌ນີ້ມີ ໖ ປະເພທ ຄື ກັມມ໌ບໍ່ເປັນສັມມ໌ ໑ ກັມມ໌ເປັນວັຄຄ໌ ໑ ກັມມ໌ພ້ອມພຽງ ໑ ກັມມ໌ເປັນວັຄຄ໌ໂດຍທຽມສັມມ໌ ໑ ກັມມ໌ພ້ອມພຽງໂດຍທຽມສັມມ໌ ໑ ກັມມ໌ພ້ອມພຽງໂດຍສັມມ໌ ໑.

ອະທິບາຍກັມມ໌ບໍ່ເປັນສັມມ໌

[໑໔໑] ດູຣາກິກຂຸທັ້ງຫລາຍ ກໍກັມມ໌ບໍ່ເປັນສັມມ໌ ເປັນແນວໃດ?

ດູຣາກິກຂຸທັ້ງຫລາຍ ໃນຌັຕຕິທຸຕິຍກັມມ໌ ກິກຂຸທຳກັມມ໌ດ້ວຍຕັ້ງຌັຕຕິຢ່າງດຽວ ແລະບໍ່ສູຕກັມມ໌ວາຈາ ຊື່ວ່າກັມມ໌ບໍ່ເປັນສັມມ໌

ໃນຌັຕຕິທຸຕິຍກັມມ໌ ຖ້າກິກຂຸທຳກັມມ໌ດ້ວຍຌັຕຕິສອງຄັ້ງ ແລະບໍ່ສູຕກັມມ໌ວາຈາ ຊື່ວ່າກັມມ໌ບໍ່ເປັນສັມມ໌

ພຣາຫ໌ມຓ໌ປຸໂຣຫິຕຂາບທູລວ່າ ຂໍເດຊະ ຖ້າຈັ່ງຊັ້ນ ຂ້ານ້ອຍຈະຂໍເຝົ້າພຣະເທວີກ່ອນ

ລໍາດັບນັ້ນ ພຣະມເຫສີຂອງພຣະເຈົ້າທີຄີຕິໂກສົລຣາຊ ໄດ້ສເດັຈເຂົ້າໄປຫາພຣາຫ໌ມຓ໌ປຸໂຣຫິຕຂອງເຈົ້າພຣົຫ໌ມທັຕກາສີກຣາຊ ພຣາຫ໌ມຓ໌ປຸໂຣຫິຕຂອງພຣະເຈົ້າພຣົຫ໌ມທັຕກາສີກຣາຊ ໄດ້ແລເຫັນພຣະມເຫສີຂອງພຣະເຈົ້າທີຄີຕິໂກສົລຣາຊ ກໍາລັງສເດັຈມາແຕ່ໄກ ເມື່ອແລ້ວລຸກຈາກທີ່ນັ່ງຫົ່ມຜ້າພາດບ່າ ນົບໄປທາງພຣະມເຫສີຂອງພຣະເຈົ້າທີຄີຕິໂກສົລຣາຊ ແລ້ວກ່າວອຸທານຂຶ້ນ ໓ ຄັ້ງວ່າ ທ່ານຜູ້ຈເຣີນ ພຣະເຈົ້າໂກສົລປະທັບຢູ່ໃນພຣະອຸທອຣແນ່ແລ້ວ ພຣະເຈົ້າໂກສົລປະທັບຢູ່ໃນພຣະອຸທອຣແນ່ແລ້ວ ພຣະເຈົ້າໂກສົລປະທັບຢູ່ໃນພຣະອຸທອຣແນ່ແລ້ວ ເພາະຈັ່ງຊັ້ນ ພຣະເທວີຢ່າໄດ້ເສັຽພຣະທັຍ ເມື່ອຍາມຮຸ່ງອຣຸຓ ຈະໄດ້ທອດພຣະເນຕຣ໌ຈຕຸຣົງຄເສນາ ຜູ້ຜູກສອດໃສ່ເສື້ອເກາະຢືນຢູ່ໃນສນາມຣົບ ແລະຈະໄດ້ທຣົງສເວີຍນໍ້າລ້າງພຣະແສງຂັຣຄ໌ເປັນແນ່

ຈຶ່ງພຣາຫ໌ມຓ໌ປຸໂຣຫິຕຂອງພຣະເຈົ້າພຣົຫ໌ມທັຕກາສີກຣາຊ ເຂົ້າໄປໃນພຣະຣາຊສໍານັກ ຄັ້ງເຖິງແລ້ວ ໄດ້ຂາບທູລພຣະເຈົ້າພຣົຫ໌ມທັຕກາສີກຣາຊວ່າ ຂໍເດຊະ ນິມິຕທັ້ງຫລາຍປຣາກົຕຕາມກໍາຫນົດວິຊີກາຣ ຄື ໃນເວລາຮຸ່ງອຣຸຓຕອນເຊົ້າ ຈຕຸຣົງຄເສນາຈະຜູກສອດໃສ່ເສື້ອເກາະຢືນຢູ່ໃນສນາມຣົບ ແລະເຈົ້າພນັກງານຈະເອົານໍ້າລ້າງພຣະແສງຂັຣຄ໌ດ້ວຍ ຂ້ານ້ອຍ

ລໍາດັບນັ້ນ ພຣະເຈົ້າພຣົຫ໌ມທັຕກາສີກຣາຊຈຶ່ງມີພຣະບໍຣົມຣາຊໂອງກາຣສັ່ງເຈົ້າພນັກງານທັ້ງຫລາຍວ່າ ດູຣາພນາຍ ພຣາຫ໌ມຓ໌ປຸໂຣຫິຕສັ່ງກາຣຢ່າງໃດ ພວກເຈົ້າຈົ່ງທໍາຢ່າງນັ້ນ

ພຣະມເຫສີຂອງພຣະເຈົ້າທີຄີຕິໂກສົລຣາຊໄດ້ທອດພຣະເນຕຣ໌ຈຕຸຣົງຄເສນາ ຜູ້ຜູກສອດໃສ່ເສື້ອເກາະຢືນຢູ່ໃນສນາມຣົບ ແລະໄດ້ສເວີຍນໍ້າລ້າງພຣະແສງຂັຣຄ໌ໃນເວລາຮຸ່ງອຣຸຓ ສົມຄວາມປັຕຖນາ ເມື່ອຕໍ່ມາ ທຣົງອາສັຍຄວາມແກ່ແຫ່ງພຣະຄັຣກ໌ນັ້ນ ໄດ້ປະສູຕິພຣະຣາຊໂອຣົສ ພຣະຊນົກຊົນນີໄດ້ຂນານພຣະນາມ ພຣະຣາຊໂອຣົສນັ້ນວ່າ ທີຄາວຸ ແລະຕໍ່ມາບໍ່ຊ້ານານເທົ່າໃດ ທີຄາວຸຣາຊກຸມາຣກໍເຖິງຄວາມເປັນຜູ້ຮູ້ດຽງສາ ຄັ້ງນັ້ນ ພຣະເຈົ້າທີຄີຕິໂກສົລຣາຊດໍາຣິວ່າ ພຣະເຈົ້າພຣົຫ໌ມທັຕກາສີກຣາຊນີ້ ກໍ່ຄວາມພິນາສໃຫ້ແກ່ພວກເຮົາຫຼວງຫຼາຍ ໄດ້ຍາດແຍ່ງເອົາຣີ້ພົລ ພາຫນະ ຊົນບົທ ຄັງສັສຕຣາວຸຊຍຸທສັກຕາຫ໌ ແລະຄັງສັລຍາຫາຣ ຂອງພວກເຮົາໄປ ຖ້າທ້າວທ່ານຈະສືບຮູ້ເຖິງພວກເຮົາ ຄົງສັ່ງໃຫ້ປະຫາຣຊີວິຕຫມົດທັ້ງສາມຄົນ ຖ້າແນວໃດ ເຮົາຄວຣໃຫ້ພໍ່ທີຄາວຸກຸມາຣຫລົບຢູ່ນອກພຣະນຄຣ ເມື່ອແລ້ວໄດ້ໃຫ້ທີຄາວຸຣາຊກຸມາຣຫລົບຢູ່ນອກພຣະນຄຣ ເມື່ອທີຄາວຸຣາຊກຸມາຣຫລົບຢູ່ນອກພຣະນຄຣ ບໍ່ດົນປານໃດ ກໍໄດ້ສຶກສາສິລປະສໍາເຣັຈທຸກສາຂາ.

ພຣະເຈົ້າໂກສົລແລະພຣະມເຫສີຖືກຈັບ

[໔໔໔] ດູຣາພິກຂຸທັ້ງຫລາຍ ກໍສມັຍນັ້ນ ນາຍຊ່າງກັລບົກຂອງພຣະເຈົ້າທີຄີຕິໂກສົລຣາຊໄດ້ສວາມິພັກດິ໌ຢູ່ໃນພຣະເຈົ້າພຣົຫ໌ມທັຕກາສີກຣາຊ ເຂົາໄດ້ເຫັນພຣະເຈົ້າທີຄີຕິໂກສົລຣາຊ ພ້ອມກັບມເຫສີທຣົງປອມແປງພຣະກາຍມິໃຫ້ໃຜຮູ້ຈັກ ທຣົງນຸ່ງຫົ່ມແບບປຣິພາຊົກ ສເດັຈອາສັຍຢູ່ໃນບ້ານຂອງຊ່າງໝໍ້ ຊຶ່ງຕັ້ງຢູ່ ໓ ຊາຍແດນແຫ່ງນຶ່ງ ເຂຕພຣະນຄຣພາຣາຓສີ ເມື່ອແລ້ວຈຶ່ງເຂົ້າໄປເຝົ້າພຣະເຈົ້າພຣົຫ໌ມທັຕ-ກາສີກຣາຊໄດ້ຂາບທູລວ່າ ຂໍເດຊະ ພຣະເຈົ້າທີຄີຕິໂກສົລຣາຊພ້ອມກັບມເຫສີທຣົງປອມແປງພຣະກາຍມິໃຫ້ໃຜຮູ້ຈັກ ທຣົງນຸ່ງຫົ່ມແບບປຣິພາຊົກ ສເດັຈອາສັຍຢູ່ໃນບ້ານຂອງຊ່າງໝໍ້ ຊຶ່ງຕັ້ງຢູ່ ໓ ຊາຍແດນແຫ່ງນຶ່ງ ເຂຕພຣະນຄຣພາຣາຓສີ ຂ້ານ້ອຍ

ຄັ້ງນັ້ນ ພຣະເຈົ້າພຣົຫ໌ມທັຕກາສີກຣາຊ ຈຶ່ງມີພຣະບໍຣົມຣາຊໂອງການສັ່ງເຈົ້າພນັກງານທັ້ງຫລາຍວ່າ ດູຣາພນາຍ ຖ້າຈັ່ງຊັ້ນ ພວກເຈົ້າຈົ່ງໄປຈັບພຣະເຈົ້າທີຄີຕິໂກສົລຣາຊພ້ອມກັບພຣະມເຫສີ

ພວກເຂົາທູລຮັບສນອງພຣະບໍຣົມຣາຊໂອງການວ່າ ເປັນດັ່ງກະແສຮັບສັ່ງ ຂ້ານ້ອຍ ດັ່ງນັ້ນ ແລ້ວໄປຈັບພຣະເຈົ້າທີຄີຕິໂກສົລຣາຊພ້ອມພຣະມເຫສີມາຖວາຍ

ພຣະເຈົ້າພຣົຫ໌ມທັຕກາສີກຣາຊ ຈຶ່ງພຣະບໍຣົມຣາຊໂອງການສັ່ງເຈົ້າພນັກງານທັ້ງຫລາຍວ່າ ດູຣາພນາຍ ຖ້າຈັ່ງຊັ້ນ ພວກເຈົ້າຈົ່ງເອົາເຊືອກທີ່ໜຽວໆ ມັດພຣະເຈົ້າທີຄີຕິໂກສົລຣາຊພ້ອມກັບພຣະມເຫສີ ມັດໃຫ້ແນ່ນ ໃຫ້ມີພຣະ**ພາຫາ**[12]ໄຂວ່ຫລັງ ແຖພຣະສຽຣ ແລ້ວນໍາຕະເວນໄປຕາມຖນົນ ຕາມຮ່ອມທຸກແຫ່ງດ້ວຍວັຊຊເພຣີມີສໍານຽງອັນຄົມຄາຍ ແລ້ວໃຫ້ອອກໄປທາງປະຕູດ້ານທັກສິຓ ຟັນໂຕອອກເປັນ ໔ ທ່ອນວາງຮຽງໄວ້ໃນຫລຸມ ໔ ທິສ ທາງດ້ານທັກສິຓແຫ່ງພຣະນຄຣ

ພວກເຂົາທູລຮັບສນອງພຣະບໍຣົມຣາຊໂອງການວ່າ ເປັນດັ່ງພຣະກະແສຮັບສັ່ງ ຂ້ານ້ອຍ ດັ່ງນັ້ນແລ້ວ ໄດ້ເອົາເຊືອກຢ່າງໜຽວມັດພຣະເຈົ້າທີຄີຕິໂກສົລຣາຊພ້ອມກັບມເຫສີ ມັດໃຫ້ແນ່ນໃຫ້ມີພຣະພາຫາໄຂວ່ຫລັງ ແຖພຣະສຽຣແລ້ວນໍາຕະເວນໄປຕາມຖນົນ ຕາມຮ່ອມທົ່ວທຸກແຫ່ງດ້ວຍວັຊຊເພຣີມີສໍານຽງຄົມຄາຍ

ຄັ້ງນັ້ນ ທີຜາວຸຣາຊກຸມາຣໄດ້ທຣົງດໍາຣິດັ່ງນີ້ວ່າ ນານມາແລ້ວທີ່ເຮົາໄດ້ມາເບິ່ງພຣະຊນົກຊົນນີຖ້າແນວໃດ ເຮົາຄວຣໄປເຝົ້າຢ້ຽມພຣະຊນົກຊົນນີ ເມື່ອແລ້ວເຂົ້າໄປສູ່ພຣະນຄຣພາຣາຓສີ ໄດ້ທອດພຣະເນຕຣ໌ເຫັນເຈົ້າພນັກງານທັ້ງຫລາຍ ເອົາເຊືອກຢ່າງໜຽວໆ ມັດພຣະຊນົກຊົນນີຈົນແນ່ນ ໃຫ້ມີພຣະພາຫາໄຂວ່ຫລັງແຖພຣະສຽຣແລ້ວ ນໍາຕະເວນໄປຕາມຮ່ອມ ດ້ວຍວັຊຊເພຣີມີສໍານຽງອັນຄົມຄາຍ ເມື່ອແລ້ວສເດັຈພຣະດໍາເນີນເຂົ້າໄປໃກ້ພຣະຊນົກຊົນນີ.

---

[12] **ພາຫາ** (ຣາຊາ) ແຂນ

ພຣະຣາໂຊວາທຂອງພຣະເຈົ້າທີຄິຕິໂກສົລຣາຊ

ພຣະເຈົ້າທີຄິຕິໂກສົລຣາຊ ໄດ້ທອດພຣະເນຕຣ໌ເຫັນທີຒາວຸກຸມາຣສເດັຈພຣະດຳເນີນມາແຕ່ໄກ ເມື່ອແລ້ວໄດ້ຕຣັສພຣະບໍຣົມຣາຊໂອວາທນີ້ແກ່ທີຒາວຸກຸມາຣວ່າ ພໍ່ທີຒາວຸ ເຈົ້າຢ່າເຫັນແກ່ຍາວ ເຈົ້າຢ່າເຫັນແກ່ສັ້ນ ເວຣທັ້ງຫລາຍຍ່ອມບໍ່ຣະງັບເພາະເວຣເລີຍ ແຕ່ຍ່ອມຣະງັບໄດ້ເພາະບໍ່ຈອງເວຣ

ເມື່ອທ້າວທ່ານຕຣັສຢ່າງນີ້ແລ້ວ ເຈົ້າພນັກງານເຫລົ່ານັ້ນໄດ້ທູລຄຳນີ້ແດ່ທ້າວທ່ານວ່າ ພຣະເຈົ້າທີຄິຕິໂກສົລຣາຊນີ້ເປັນຜູ້ວິກົລຈຣິຕຈຶ່ງຈົ່ມພຶມພຳຢູ່ ທີຒາວຸຂອງພຣະອົງຄ໌ຄືໃຜ ພຣະອົງຄ໌ຕຣັສຢ່າງນີ້ກັບໃຜວ່າ ພໍ່ທີຒາວຸ ເຈົ້າຢ່າເຫັນແກ່ຍາວ ເຈົ້າຢ່າເຫັນແກ່ສັ້ນ ເວຣທັ້ງຫລາຍຍ່ອມບໍ່ຣະງັບເພາະເວຣເລີຍ ແຕ່ຍ່ອມຣະງັບໄດ້ເພາະບໍ່ຈອງເວຣ

ພຣະເຈົ້າທີຄິຕິໂກສົລຣາຊຕຣັສວ່າ ພນາຍ ເຮົາບໍ່ໄດ້ເສັຽຈຣິຕຈົ່ມພຶມພຳຢູ່ ແຕ່ຜູ້ໃດຮູ້ເຣື່ອງ ຜູ້ນັ້ນຈະເຂົ້າໃຈ

ພຣະເຈົ້າທີຄິຕິໂກສົລຣາຊ ໄດ້ຕຣັສພຣະບໍຣົມຣາໂຊວາທນີ້ແກ່ທີຒາວຸຣາຊກຸມາຣເປັນເທື່ອທີ່ສອງວ່າ....

ພຣະເຈົ້າທີຄິຕິໂກສົລຣາຊ ໄດ້ຕຣັສພຣະບໍຣົມຣາໂຊວາທນີ້ແກ່ທີຒາວຸຣາຊກຸມາຣເປັນເທື່ອທີ່ສາມວ່າ ພໍ່ທີຒາວຸ ເຈົ້າຢ່າເຫັນແກ່ຍາວ ເຈົ້າຢ່າເຫັນແກ່ສັ້ນ ເວຣທັ້ງຫລາຍຍ່ອມບໍ່ຣະງັບເພາະເວຣເລີຍ ແຕ່ຍ່ອມຣະງັບໄດ້ເພາະບໍ່ຈອງເວຣ

ເຈົ້າພນັກງານເຫລົ່ານັ້ນ ໄດ້ທູລຄຳນີ້ແດ່ພຣະເຈົ້າທີຄິຕິໂກສົລຣາຊເປັນເທື່ອສາມວ່າ ເຈົ້າທີຄິຕິໂກສົລຣາຊນີ້ເປັນຜູ້ວິກົລຈຣິຕ ຈຶ່ງຈົ່ມພຶມພຳຢູ່ ທີຒາວຸຂອງພຣະອົງຄ໌ຄືໃຜ ພຣະອົງຄ໌ຕຣັສກັບໃຜຢ່າງນີ້ວ່າ ເຈົ້າຢ່າເຫັນແກ່ຍາວ ເຈົ້າຢ່າເຫັນແກ່ສັ້ນ ເວຣທັ້ງຫລາຍຍ່ອມບໍ່ຣະງັບເພາະເວຣເລີຍ ແຕ່ຍ່ອມຣະງັບໄດ້ເພາະບໍ່ຈອງເວຣ

ພຣະເຈົ້າທີຄິຕິໂກສົລຣາຊຕຣັສວ່າ ພນາຍ ເຮົາບໍ່ໄດ້ເສັຽຈຣິຕຈົ່ມພຶມພຳຢູ່ ແຕ່ຜູ້ໃດຮູ້ເຣື່ອງ ຜູ້ນັ້ນຈະເຂົ້າໃຈ

ຈຶ່ງພນັກງານເຫລົ່ານັ້ນ ໄດ້ນຳພຣະເຈົ້າທີຄິຕິໂກສົລຣາຊພ້ອມກັບພຣະມເຫສີໄປຕາມຖນົນຕາມຮ່ອມທົ່ວທຸກແຫ່ງ ແລ້ວໃຫ້ອອກໄປທາງປະຕູດ້ານທັກษິຒ ຟັນພຣະກາຍເປັນ ໔ ທ່ອນ ວາງຮຽງໄວ້ໃນຫລຸມ ໔ ທິສ ດ້ານທັກษິຒແຫ່ງພຣະນຄຣ ວາງຍາມຄອຍຣະວັງເຫຕຸກາຣຓ໌ໄວ້ແລ້ວກັບໄປ ຄັ້ງນັ້ນທີຒາວຸຣາຊກຸມາຣ ເຂົ້າໄປສູ່ພຣະນຄຣພາຣາຒສີ ນຳສຸຣາມາລ້ຽງພວກເຈົ້າໜ້າທີ່ຢູ່ຍາມ ເມື່ອເວລາທີ່ຄົນເຫລົ່ານັ້ນເມົາຟຸບລົງ ທີຒາວຸຣາຊກຸມາຣຈຶ່ງຈັດຫາຟືນມາວາງຮຽງກັນໄວ້ ຍົກພຣະບໍຣົມສົພຂອງພຣະຊນົກຊົນນີ

ຂຶ້ນສູ່ພຣະຈິຕກາສາຣ ຖວາຍພຣະເພລີງ ແລ້ວປະນົມພຣະຫັຕຖ໌ທຳປະທັກນິຕພຣະຈິຕກາສາຣ ໓ ຮອບ ຂຕະນັ້ນ ພຣະເຈົ້າພຣົຫ໌ມທັຕກາສີກຣາຊ ປະທັບຢູ່ຊັ້ນເທິງແຫ່ງປຣາສາທອັນປະເສີຖໄດ້ທອດພຣະເນຕຣ໌ ເຫັນທີ່ຟາວຸຣາຊກຸມາຣ ກຳລັງທຮົງປະນົມພຣະຫັຕຖ໌ທຳປະທັກນິຕພຣະຈິຕກາສາຣ ໓ ຮອບ ເມື່ອແລ້ວ ໄດ້ທຮົງພຣະດຳຣິແນ່ໃນພຣະທັຍວ່າ ເຈົ້າຄົນນັ້ນຄົງເປັນຍາຕິຫຼືສາຍໂລຫິຕ ຂອງພຣະເຈົ້າທີຄີຕິໂກສົລຣາຊ ແນ່ນອນ ໜ້າຢ້ານຈະກໍ່ຄວາມຈິບຫາຍແກ່ເຮົາ ຊ່າງບໍ່ມີໃຜບອກເຮົາເລີຍ.

ຄັ້ງນັ້ນ ທີ່ຟາວຸຣາຊກຸມາຣສເດັຈຫລົບເຂົ້າປ່າໄປ ທຮົງກັນແສງຮ້ອງໄຫ້ ຈົນພໍແກ່ເຫຕຸ ທຮົງຊັບນ້ຳພຣະເນຕຣ໌ ແລ້ວສເດັຈເຂົ້າພຣະນຄຣພາຣາຕສີ ໄປເຖິງໂຮງຊ້າງໃກ້ພຣະບໍຣົມມຫາຣາຊວັງ ແລ້ວໄດ້ຕຣັສ ຄຳນີ້ແກ່ນາຍຫັຕຖາຈາຣຍ໌ວ່າ ທ່ານອາຈາຣຍ໌ ຂ້າພເຈົ້າປັຕຖນາຈະສຶກษາສິລປະ

ນາຍຫັຕຖາຈາຣຍ໌ຕອບວ່າ ຖ້າຈັ່ງຊັ້ນ ເຊີນມາສຶກษາເທີ້ນພໍ່ຫນຸ່ມຫນ້ອຍ ຢູ່ມາວັນນຶ່ງ ທີ່ຟາວຸຣາຊກຸມາຣ ທຮົງຕື່ນບັຣທົມຕອນປັຈຈຸສສມັຍແຫ່ງຣາຕຣີແລ້ວທຮົງຂັບຮ້ອງແລະດີດພິຕມີສຽງ ອ່ອນຊອນຢູ່ທີ່ໂຮງຊ້າງ.

ພຣະເຈົ້າພຣົຫ໌ມທັຕກາສີກຣາຊ ທຮົງຕື່ນບັຣທົມເວລາປັຈຈຸສສມັຍແຫ່ງຣາຕຣີ ໄດ້ທຮົງສດັບ ສຽງເພລງແລະສຽງພິຕທີ່ດີດມີສຽງອັນອ່ອນຊອນດັງແວ່ວມາທາງໂຮງມຸງຄຸລຫັຕຖີ ຈຶ່ງມີພຣະດຳຣັສຖາມ ພວກມຫາດເລັກວ່າ ແນ່ພນາຍ ໃຜຕື່ນໃນເວລາເຊົ້າມືດແຫ່ງຣາຕຣີແລ້ວ ຂັບຮ້ອງແລະດີດພິຕແວ່ວມາທາງ ໂຮງຊ້າງ?

ພວກມຫາດເລັກຂາບທູລວ່າ ຂໍເດຊະ ຝ່າລະອອງສຸລີພຣະບາທປົກເກົ້າປົກກະຫມ່ອມ ຊາຍຫນຸ່ມ ສິษຍ໌ຂອງນາຍຫັຕຖາຈາຣຍ໌ຊື່ນັ້ນ ຕື່ນໃນເວລາເຊົ້າມືດແຫ່ງຣາຕຣີແລ້ວ ຂັບຮ້ອງແລະດີດພິຕມີສຽງ ອັນອ່ອນຊອນດັງທີ່ໂຮງຊ້າງ ຂ້ານ້ອຍ.

ພຣະເຈົ້າພຣົຫ໌ມທັຕກາສີກຣາຊຕຣັສວ່າ ພນາຍ ຖ້າຈັ່ງຊັ້ນ ຈົ່ງພາຊາຍຫນຸ່ມມາເຝົ້າ ພວກເຂົາ ທູລຮັບສນອງພຣະບໍຣົມຣາຊໂອງການແລ້ວ ພາທີ່ຟາວຸຣາຊກຸມາຣມາເຝົ້າ ຈຶ່ງພຣະເຈົ້າພຣົຫ໌ມທັຕກາສີກຣາຊ ໄດ້ຕຣັສຖາມທີ່ຟາວຸຣາຊກຸມາຣວ່າ ພໍ່ນາຍຊາຍຫນຸ່ມ ເຈົ້າຕື່ນໃນເວລາເຊົ້າແຫ່ງຣາຕຣີແລ້ວ ຂັບຮ້ອງແລະ ດີດພິຕມີສຽງອັນອ່ອນຊອນດັງທາງໂຮງຊ້າງບໍ່?

ທີ່ຟາວຸຣາຊກຸມາຣທູລຮັບວ່າ ເປັນດັງພຣະກະແສຮັບສັ່ງ ຂ້ານ້ອຍ.

ພຣະເຈົ້າພຣົຫ໌ມທັຕກາສີກຣາຊຕຣັສວ່າ ພໍ່ນາຍຊາຍຫນຸ່ມ ຖ້າເຊັ່ນນັ້ນ ເຈົ້າຈົ່ງຂັບຮ້ອງແລະດີດພິຕໄປ

ທີຟາວຸຣາຊກຸມາຣທູລຮັບສນອງພຣະບໍຣົມຣາຊໂອງການວ່າ ເປັນດັ່ງພຣະກະແສຣັບສັ່ງ ພຣະພຸທສ-ຂ້ານ້ອຍ ດັ່ງນັ້ນ ແລ້ວປະສົງຄ໌ຈະໃຫ້ທຣົງໂປຼດປຣານ ຈຶ່ງຂັບຮ້ອງແລະດີດພິຕດ້ວຍສຽງອັນໄພເຣາະ

ທີນັ້ນ ພຣະເຈົ້າພຣົຫ໌ມທັຕກາສີກຣາຊຕຣັສວ່າ ພໍ່ນາຍຊາຍຫນຸ່ມ ເຈົ້າຈົ່ງຢູ່ຮັບໃຊ້ເຮົາເທີ້ນ

ທີຟາວຸຣາຊກຸມາຣທູລຮັບສນອງພຣະບໍຣົມຣາຊໂອງການວ່າ ເປັນດັ່ງພຣະກະແສຣັບສັ່ງ ພຣະພຸທສ-ຂ້ານ້ອຍ ດັ່ງນັ້ນ ແລ້ວຈຶ່ງປະພຶຕທຳນອງຕື່ນກ່ອນນອນທີຫລັງ ຄອຍເຝົ້າຟັງພຣະຣາຊດຳຣັສໃຊ້ ປະພຶຕໃຫ້ຖືກພຣະອັສຍາສັຍ ເຈຣຈາຖ້ອຍຄຳໄພເຣາະ ຕໍ່ພຣະເຈົ້າພຣົຫ໌ມທັຕກາສີກຣາຊ ເມື່ອຕໍ່ມາບໍ່ດົນປານໃດທ້າວທ່ານທຣົງແຕ່ງຕັ້ງທີຟາວຸຣາຊກຸມາຣ ໄວ້ໃນຕຳແຫນ່ງຜູ້ໄວ້ວາງພຣະຣາຊຫຣືທັຍ ໃກ້ຊິດສນິທກາຍໃນຢູ່ມາວັນນຶ່ງ ທ້າວທ່ານໄດ້ຕຣັສຄຳນີ້ແກ່ທີຟາວຸຣາຊກຸມາຣວ່າ ພໍ່ນາຍຊາຍຫນຸ່ມ ຖ້າຈັ່ງຊັ້ນ ເຈົ້າຈົ່ງທຽມຣົຖພວກເຮົາຈະໄປລ່າເນື້ອ

ທີຟາວຸຣາຊກຸມາຣທູລຮັບສນອງພຣະບໍຣົມຣາຊໂອງການວ່າ ເປັນດັ່ງພຣະຣາຊກະແສຣັບສັ່ງຂ້ານ້ອຍ ແລ້ວຈັດທຽມຣົຖໄວ້ແລ້ວ ໄດ້ຂາບທູລຄຳນີ້ແດ່ພຣະເຈົ້າພຣົຫ໌ມທັຕກາສີກຣາຊວ່າ ຂໍເດຊະຣົຖພຣະທີ່ນັ່ງທຽມແລ້ວແລ້ວ ຂ້ານ້ອຍ ບັດນີ້ ຂໍຈົ່ງທຣົງພຣະກຣຸຓາໂປຼດຮູ້ກາລອັນຄວຣເທີ້ນຂ້ານ້ອຍ.

ລຳດັບນັ້ນ ພຣະເຈົ້າພຣົຫ໌ມທັຕກາສີກຣາຊ ສເດັຈຂຶ້ນຣາຊຣົຖ ທີຟາວຸຣາຊກຸມາຣຂັບຣາຊຣົຖໄປແຕ່ຂັບຣາຊຣົຖໄປໂດຍວິຣີທີ່ຫມູ່ເສນາໄດ້ແຍກໄປທາງນຶ່ງ ຣາຊຣົຖໄດ້ແຍກໄປທາງນຶ່ງ ຄັ້ງນັ້ນ ພຣະເຈົ້າ-ພຣົຫ໌ມທັຕກາສີກຣາຊສເດັຈໄປໄກ ແລ້ວໄດ້ຕຣັສຄຳນີ້ແກ່ທີຟາວຸຣາຊກຸມາຣວ່າ ພໍ່ນາຍຊາຍຫນຸ່ມ ຖ້າຈັ່ງຊັ້ນເຈົ້າຈົ່ງຈອດຣົຖ ເຮົາເຫນື່ອຍອ່ອນຈະນອນພັກ.

ທີຟາວຸຣາຊກຸມາຣທູລຮັບສນອງພຣະບໍຣົມຣາຊໂອງການວ່າ ເປັນດັ່ງພຣະຣາຊກະແສຣັບສັ່ງຂ້ານ້ອຍ ດັ່ງນັ້ນແລ້ວຈອດຣາຊຣົຖນັ່ງຂັດສມາຣິຢູ່ທີ່ພື້ນດິນ ຈຶ່ງພຣະເຈົ້າພຣົຫ໌ມທັຕກາສີກຣາຊທຣົງພາດພຣະສຽຣບັຣທົມຢູ່ເທິງຕັກຂອງທີຟາວຸຣາຊກຸມາຣ ເມື່ອທ້າວທ່ານທຣົງເຫນັດເຫນື່ອຍມາ ພຽງບຶດດຽວກໍບັຣທົມຫລັບ.

ຂຓະນັ້ນ ທີຟາວຸຣາຊກຸມາຣຄຶດເຖິງຄວາມຫລັງວ່າ ພຣະເຈົ້າພຣົຫ໌ມທັຕກາສີກຣາຊນີ້ແລ ທຣົງກໍ່ຄວາມຈິບຫາຍແກ່ພວກເຮົາຫຼວງຫຼາຍ ທ້າວທ່ານທຣົງຍາດແຍ່ງຣີ້ພົລ ຣາຊພາຫນະຊົນບົທ ຄັ້ງສັສຕຣາວຸສ

ຍຸທສກັຓຫາແລະຄັງສັຓຎາຫາຣຂອງພວກເຮົາໄປ ແລະຍັງໄດ້ປລົງພຣະຊົນມ໌ຊີພພຣະຊົນນີກຊົນນີຂອງເຮົາເສັຽດ້ວຍ ເວລານີ້ເປັນເວລາທີ່ເຮົາພົບຄູ່ເວຣ ດັ່ງນີ້ຈຶ່ງຊັກພຣະແສງຂັຣຄ໌ອອກຈາກຝັກ ແຕ່ເຈົ້າຊາຍໄດ້ທຮົງຢັ້ງພຣະທັຍໄວ້ໄດ້ໃນທັນທີວ່າ ພຣະຊົນກໄດ້ທຮົງສັ່ງເຮົາໄວ້ເມື່ອໃກ້ສວັຣຄົຕວ່າ ພໍ່ທີຘາວຸ ເຈົ້າຢ່າເຫັນແກ່ຍາວ ເຈົ້າຢ່າເຫັນແກ່ສັ້ນ ເວຣທັ້ງຫລາຍຍ່ອມບໍ່ຣະງັບເພາະເວຣເລີຍ ແຕ່ຍ່ອມຣະງັບໄດ້ເພາະບໍ່ຈອງເວຣ ການທີ່ເຮົາຈະລະເມີດພຣະດຳຣັສສັ່ງຂອງພຣະຊົນກນັ້ນ ບໍ່ສົມຄວຣແກ່ເຮົາເລີຍ ດັ່ງນີ້ ແລ້ວສອດພຣະຂັຣຄ໌ເຂົ້າໄວ້ໃນຝັກ

ທີຘາວຸຣາຊກຸມາຣ ໄດ້ທຮົງຄິດເຖິງຄວາມຫລັງເປັນເທື່ອທີ່ສອງວ່າ ....

ທີຘາວຸຣາຊກຸມາຣ ໄດ້ທຮົງຄິດເຖິງຄວາມຫລັງເປັນເທື່ອສາມວ່າ ພຣະເຈົ້າພຣົຫ໌ມທັຕກາສີກຣາຊນີ້ແລທຮົງກໍ່ຄວາມວິບຫາຍແກ່ພວກເຮົາຫຼວງຫຼາຍ ທ້າວທ່ານທຮົງຍາດແຍ່ງຮີ້ພົລຣາຊພາຫນະ ຊົນບົທ ຄັງຄັສຕຣາວຸສຍຸທສກັຓຫ໌ແລະຄັງສັຓຎາຫາຣຂອງພວກເຮົາໄປ ແລະຍັງໄດ້ປລົງພຣະຊົນມ໌ຊີພພຣະຊົນນີກຊົນນີຂອງເຮົາເສັຽດ້ວຍ ເວລານີ້ເປັນເວລາທີ່ເຮົາພົບຄູ່ເວຣ ດັ່ງນີ້ ຈຶ່ງຊັກພຣະແສງຂັຣຄ໌ອອກຈາກຝັກ ແຕ່ກໍທຮົງຢັ້ງພຣະທັຍໄວ້ໄດ້ທັນທີ ເປັນເທື່ອສາມວ່າ ພຣະຊົນກໄດ້ຕຣັສສັ່ງໄວ້ເມື່ອໃກ້ສວັຣຄົຕວ່າ ພໍ່ທີຘາວຸ ເຈົ້າຢ່າເຫັນແກ່ຍາວ ເຈົ້າຢ່າເຫັນແກ່ສັ້ນ ເວຣທັ້ງຫລາຍຍ່ອມບໍ່ຣະງັບເພາະເວຣເລີຍ ແຕ່ຍ່ອມຣະງັບໄດ້ເພາະບໍ່ຈອງເວຣ ການທີ່ເຮົາຈະລະເມີດພຣະດຳຣັສສັ່ງຂອງພຣະຊົນກນັ້ນ ບໍ່ສົມຄວຣແກ່ເຮົາເລີຍ ດັ່ງນີ້ ແລ້ວທຮົງສອດພຣະແສງຂັຣຄ໌ເຂົ້າໄວ້ໃນຝັກຕາມເດີມ.

ຂຓະນັ້ນ ພຣະເຈົ້າພຣົຫ໌ມທັຕກາສີກຣາຊ ທຮົງຢ້ານ ຫວັ່ນຫວາດ ສະດຸ້ງພຣະທັຍຟ້າວສເດັຈລຸກຂຶ້ນ ທີຘາວຸຣາຊກຸມາຣໄດ້ຂາບທູລຄຳນີ້ແດ່ພຣະເຈົ້າພຣົຫ໌ມທັຕກາສີກຣາຊໃນທັນທີວ່າ ຂໍເດຊະ ເພາະຫຍັງຫຼືພຣະອົງຄ໌ຈຶ່ງທຮົງຢ້ານ ຫວັ່ນຫວາດ ສະດຸ້ງພຣະທັຍຟ້າວສເດັຈລຸກຂຶ້ນຂ້ານ້ອຍ

ພຣະເຈົ້າພຣົຫ໌ມທັຕກາສີກຣາຊຕຣັສຕອບວ່າ ພໍ່ນາຍຊາຍຫນຸ່ມ ເຮົາຝັນວ່າທີຘາວຸຣາຊກຸມາຣໂອຣົສຂອງພຣະເຈົ້າທີຄີຕິໂກສົລຣາຊຟາດຟັນເຮົາດ້ວຍພຣະແສງຂັຣຄ໌ ໃນ ທີ່ນີ້ ເພາະເຫຕຸນັ້ນ ເຮົາຈຶ່ງຢ້ານຫວັ່ນຫວາດ ຕົກໃຈຟ້າວລຸກຂຶ້ນ

ທັນໃດນັ້ນ ທີຘາວຸຣາຊກຸມາຣຈັບພຣະສຽຣຂອງພຣະເຈົ້າພຣົຫ໌ມທັຕກາສີກຣາຊດ້ວຍພຣະຫັຕຖ໌ຊ້າຍ ຊັກພຣະແສງຂັຣຄ໌ດ້ວຍພຣະຫັຕຖ໌ຂວາ ແລ້ວໄດ້ກ່າວຄຳຂູ່ແກ່ພຣະເຈົ້າພຣົຫ໌ມທັຕກາສີກຣາຊວ່າ ຂໍເດຊະ ຂ້າພຣະພຸທສເຈົ້າ ຄື ທີຘາວຸຣາຊກຸມາຣ ໂອຣົສຂອງພຣະເຈົ້າທີຄີຕິໂກສົລຣາຊຄົນນັ້ນ ພຣະອົງຄ໌ທຮົງກໍ່ຄວາມ

ວິບຫາຍແກ່ພວກຂ້າພຣະພຸທສເຈົ້າຫຼວງຫຼາຍ ຄື ທຣົງຍາດແຍ່ງຣີ້ພົລ ຣາຊພາຫນະ ຊົນບົທ ຄັງສັສຕຣາວຸສ ຍຸທສພັຕຫ໌ ແລະຄັງສັລລາຫາຣ ຂອງຂ້າພຣະພຸທສເຈົ້າໄປ ມິຫນຳຊ້ຳຍັງປລົງພຣະຊນົມຊີພພຣະຊນົກຊົນນີ ຂອງຂ້າພຣະພຸທສເຈົ້າເສັຽດ້ວຍ ເວລານີ້ເປັນເວລາທີ່ຂ້າພຣະພຸທສເຈົ້າພົບຄູ່ເວຣລະ

ຈຶ່ງພຣະເຈົ້າພຣົຫ໌ມທັຕກາສີກຣາຊ ກົ້ມພຣະສຽຣລົງແນບຍຸຄົລບາທຂອງທີຜາວຸຣາຊກຸມາຣ ແລ້ວໄດ້ ຕຣັສຄຳວິງວອນແກ່ເຈົ້າຊາຍວ່າ ພໍ່ທີຜາວຸ ພໍ່ຈົ່ງໃຫ້ຊີວິຕແກ່ຂ້ານ້ອຍ ພໍ່ທີຜາວຸ ພໍ່ຈົ່ງໃຫ້ຊີວິຕແກ່ຂ້ານ້ອຍ ດ້ວຍເທີ້ນ

ເຈົ້າຊາຍຂາບທູລວ່າ ຂ້າພຣະພຸທສເຈົ້າຫຼືຈະເອື້ອມອາຈທູລເກຼົ້າຖວາຍຊີວິຕແກ່ພຣະອົງຄ໌ ພຣະອົງຄ໌ ຕ່າງຫາກຄວຣພຣະຣາຊທານຊີວິຕແກ່ພຣະພຸທສເຈົ້າ

ພຣະເຈົ້າພຣົຫ໌ມທັຕກາສີກຣາຊຕຣັສວ່າ ພໍ່ທີຜາວຸ ຖ້າເຊັ່ນນັ້ນພໍ່ຈົ່ງໃຫ້ຊີວິຕແກ່ເຣົາ ແລະເຣົາ ກໍໃຫ້ຊີວິຕແກ່ພໍ່.

ຄັ້ງນັ້ນ ພຣະເຈົ້າພຣົຫ໌ມທັຕກາສີກຣາຊ ແລະທີຜາວຸຣາຊກຸມາຣ ຕ່າງໄດ້ໃຫ້ຊີວິຕແກ່ກັນແລະກັນ ໄດ້ຈັບພຣະຫັຕຖ໌ກັນ ແລະໄດ້ທຳການສບົຖ ເພື່ອບໍ່ເຮັດຮ້າຍກັນ ຈຶ່ງພຣະເຈົ້າພຣົຫ໌ມທັຕກາສີກຣາຊໄດ້ຕຣັສ ຄຳນີ້ແກ່ທີຜາວຸຣາຊກຸມາຣວ່າ ພໍ່ທີຜາວຸ ຖ້າຈັ່ງຊັ້ນພໍ່ຈົ່ງທຽມຣົຖໄປກັນຖ້ອນ.

ທີຜາວຸຣາຊກຸມາຣທູລຮັບສນອງພຣະບໍຣົມຣາຊໂອງການວ່າ ເປັນດັ່ງພຣະກະແສຮັບສັ່ງ ພຣະພຸທສ-ຂ້ານ້ອຍ ດັ່ງນັ້ນ ແລ້ວທຽມຣົຖ ໄດ້ຂາບທູລພຣະເຈົ້າພຣົຫ໌ມທັຕກາສີກຣາຊວ່າ ຣົຖພຣະທີ່ນັ່ງທຽມແລ້ວແລ້ວ ຂ້ານ້ອຍ ບັດນີ້ ຂໍພຣະອົງຄ໌ໂປຼດທຣົງຮູ້ກາລອັນຄວຣເທີ້ນ ຂ້ານ້ອຍ.

ຈຶ່ງພຣະເຈົ້າພຣົຫ໌ມທັຕກາສີກຣາຊສເດັຈຂຶ້ນຣົຖທຣົງແລ້ວ ທີຜາວຸຣາຊກຸມາຣຂັບຣົຖໄປ ໄດ້ຂັບຣົຖໄປ ໂດຍວິທີບໍ່ດົນປານໃດກໍມາພົບກອງທຫາຣ ເມື່ອພຣະເຈົ້າພຣົຫ໌ມທັຕກາສີກຣາຊ ສເດັຈເຂົ້າສູ່ພຣະນຄຣພາຣາຓສີ ແລ້ວ ທຣົງພຣະກຣຸຓາໂປຼດໃຫ້ເອີ້ນປະຊຸມຫມູ່ອຳມາຕຍ໌ຣາຊບໍຣິພັທ ໄດ້ຕຣັສຖາມຄວາມເຫັນຂໍ້ນີ້ວ່າ ພໍ່ນາຍທັ້ງຫລາຍ ຖ້າພວກທ່ານພົບທີຜາວຸຣາຊກຸມາຣໂອຣົສຂອງພຣະເຈົ້າທີຄີຕິໂກສົລຣາຊ ຈະຕ້ອງເຮັດຫຍັງ ແກ່ເຂົາ.

ອຳມາຕຍ໌ບາງພວກຂາບທູລຢ່າງນີ້ວ່າ ຂໍເດຊະ ພວກຂ້າພຣະພຸທສເຈົ້າ ຈະຕ້ອງຕັດມື ຈະຕ້ອງ ຕັດຕີນ ຈະຕ້ອງຕັດທັ້ງມືແລະຕີນ ຈະຕ້ອງຕັດຫູ ຈະຕ້ອງຕັດດັງ ຈະຕ້ອງຕັດທັ້ງຫູແລະດັງ ຈະຕ້ອງຕັດສີຮະ ຂ້ານ້ອຍ.

ພຣະເຈົ້າພຣົຫ໌ມທັຕກາສີກຣາຊຕຣັສວ່າ ພໍ່ນາຍທັ້ງຫລາຍ ຊາຍໜຸ່ມຜູ້ນີ້ແລ ຄື ທີຜາວຸຣາຊກຸມາຣ ໂອຣົສຂອງພຣະເຈົ້າທີຄີຕິໂກສົລຣາຊຄົນນັ້ນ ຊາຍໜຸ່ມຜູ້ນີ້ໃຜໆ ຈະເຮັດຫຍັງບໍ່ໄດ້ ເພາະຊາຍໜຸ່ມຜູ້ນີ້ ໄດ້ໃຫ້ຊີວິຕແກ່ເຮົາ ແລະເຮົາກໍໄດ້ໃຫ້ຊີວິຕແກ່ຊາຍໜຸ່ມຜູ້ນີ້ ເມື່ອແລ້ວໄດ້ຕຣັສຖາມຄວາມຂໍ້ນີ້ແກ່ທີຜາວຸ-ຣາຊກຸມາຣວ່າ ພໍ່ທີຜາວຸ ພຣະຊນົກຂອງທ່ານໄດ້ຕຣັສຄຳໃດໄວ້ ເມື່ອໃກ້ຈະສວັຣຄົຕວ່າ ພໍ່ທີຜາວຸ ເຈົ້າຢ່າເຫັນແກ່ຍາວ ເຈົ້າຢ່າເຫັນແກ່ສັ້ນ ເວຣທັ້ງຫລາຍຍ່ອມບໍ່ຣະງັບໄດ້ ເພາະບໍ່ຈອງເວຣ ດັ່ງນີ້ ພຣະຊນົກຂອງທ່ານໄດ້ຕຣັສຄຳນັ້ນ ໝາຍຄວາມວ່າຢ່າງໃດ?

ທີຜາວຸຣາຊກຸມາຣຂາບທູລວ່າ ຂໍເດຊະ ພຣະຊນົກຂອງຂ້າພຣະພຸທສເຈົ້າໄດ້ຕຣັສພຣະບໍຣົມຣາໂຊວາທອັນໃດແລໄວ້ເມື່ອໃກ້ຈະສວັຣຄົຕວ່າ ເຈົ້າຢ່າເຫັນແກ່ຍາວ ດັ່ງນີ້ໝາຍຄວາມວ່າ ເຈົ້າຢ່າໄດ້ຈອງເວຣໃຫ້ຍືດເຍື້ອ ເພາະຈັ່ງຊັ້ນ ພຣະຊນົກຂອງຂ້າພຣະພຸທສເຈົ້າ ຈຶ່ງໄດ້ຕຣັສພຣະບໍຣົມຣາໂຊວາທອັນນີ້ແລໄວ້ເມື່ອໃກ້ຈະສວັຣຄົຕວ່າ ເຈົ້າຢ່າເຫັນແກ່ຍາວ ພຣະຊນົກຂອງຂ້າພຣະພຸທສເຈົ້າ ໄດ້ຕຣັສພຣະບໍຣົມຣາໂຊວາທອັນໃດແລໄວ້ເມື່ອໃກ້ຈະສວັຣຄົຕວ່າ ເຈົ້າຢ່າເຫັນແກ່ສັ້ນ ດັ່ງນີ້ ໝາຍຄວາມວ່າ ເຈົ້າຢ່າແຕກຮ້າວຈາກມິຕຣໄວແທ້ ເພາະຈັ່ງຊັ້ນ ພຣະຊນົກຂອງຂ້າພຣະພຸທສເຈົ້າ ຈຶ່ງໄດ້ຕຣັສພຣະບໍຣົມຣາໂຊວາທອັນນີ້ແລໄວ້ເມື່ອໃກ້ຈະສວັຣຄົຕວ່າ ເຈົ້າຢ່າເຫັນແກ່ສັ້ນ ພຣະຊນົກຂອງຂ້າພຣະພຸທສເຈົ້າໄດ້ຕຣັສພຣະບໍຣົມຣາໂຊວາທອັນໃດແລໄວ້ ເມື່ອໃກ້ຈະສວັຣຄົຕວ່າ ພໍ່ທີຜາວຸ ເວຣທັ້ງຫລາຍຍ່ອມບໍ່ຣະງັບເພາະເວຣເລີຍ ແຕ່ຍ່ອມຣະງັບໄດ້ເພາະບໍ່ຈອງເວຣ ດັ່ງນີ້ ໝາຍຄວາມວ່າ ພຣະຊນົກຊົນນີຂອງຂ້າພຣະພຸທສເຈົ້າ ຖືກພຣະອົງຄ໌ປລົງພຣະຊົນຊີພເສັຽ ຖ້າຂ້າພຣະພຸທສເຈົ້າ ຈະຕ້ອງປລົງພຣະຊົນຊີພຂອງພຣະອົງຄ໌ເສັຽແດ່ ຄົນເຫລົ່າໃດມັກຄວາມຈເຣີນແກ່ພຣະອົງຄ໌ ຄົນເຫລົ່ານັ້ນຈະຕ້ອງປລົງຊີວິຕຂ້າພຣະພຸທສເຈົ້າ ຄົນເຫລົ່າໃດມັກຄວາມຈເຣີນແກ່ຂ້າພຣະພຸທສເຈົ້າ ຄົນເຫລົ່ານັ້ນຈະຕ້ອງປລົງຊີວິຕຄົນເຫລົ່ານັ້ນ ເມື່ອເປັນເຊັ່ນນີ້ ເວຣນັ້ນບໍ່ຄວຣຣະງັບເພາະເວຣ ແຕ່ມາບັດນີ້ ພຣະອົງຄ໌ຫຣົງພຣະກຣຸຕາໂປຼດພຣະຣາຊທານຊີວິຕແກ່ຂ້າພຣະພຸທສເຈົ້າ ແລະຂ້າພຣະພຸທສເຈົ້າກໍໄດ້ທູລຖວາຍພຣະຊນົມຊີພແກ່ພຣະອົງຄ໌ ເປັນອັນວ່າເວຣນັ້ນຣະງັບແລ້ວເພາະບໍ່ຈອງເວຣ ພຣະຊນົກຂອງຂ້າພຣະພຸທສເຈົ້າ ຈຶ່ງໄດ້ຕຣັສພຣະບໍຣົມຣາໂຊວາທອັນນີ້ແລໄວ້ເມື່ອໃກ້ຈະສວັຣຄົຕວ່າ ພໍ່ທີຜາວຸ ເວຣທັ້ງຫລາຍຍ່ອມບໍ່ຣະງັບເພາະເວຣເລີຍ ແຕ່ຍ່ອມຣະງັບໄດ້ເພາະບໍ່ຈອງເວຣ ຂ້ານ້ອຍ.

ລຳດັບນັ້ນ ພຣະເຈົ້າພຣົຫ໌ມທັຕກາສີກຣາຊຕຣັສວ່າ ທ່ານຜູ້ຈເຣີນທັ້ງຫລາຍ ໜ້າອັສຈັຣຍ໌ຫຼາຍ ບໍ່ເຄີຍມີເລີຍ ທີຜາວຸຣາຊກຸມາຣນີ້ເປັນບັຕທິຕ ຈຶ່ງໄດ້ເຂົ້າໃຈຄວາມແຫ່ງກາພິຕ ອັນພຣະຊນົກຕຣັສແລ້ວໂດຍຍໍ່ໄດ້ໂດຍພິສດາຣ ແລ້ວຫຣົງພຣະກຣຸຕາໂປຼດພຣະຣາຊທານຄືນຣີພົລ ຣາຊພາຫນະ ຊົນບົທ ຄັງສັສຕຣາວຸຣ-

ຍຸທສກັຕທາແລະຄັງສັລລາຫາຣອັນເປັນພຣະຣາຊສົມບັຕິຂອງພຣະຊນົກ ແລະໄດ້ພຣະຣາຊທານພອຣະຣາຊສິດາ ອກີ ເບກາສົນຣົສດ້ວຍ

ດູຣາກິກຂຸທັ້ງຫລາຍ ຂັນຕິ ໂສຣັຈຈະ ເຫັນປານນີ້ ໄດ້ມີແລ້ວແກ່ພຣະຣາຊາເຫລົ່ານັ້ນ ຜູ້ຖື ອາຊລາ ຜູ້ຖືສັສຕຣາວຸຣ ກໍການທີ່ພວກທ່ານບວຊໃນສັມມ໌ວິນັຍ ອັນເຮົາກ່າວດີແລ້ວຢ່າງນີ້ ຈະຕ້ອງອົດທົນ ແລະສງົບສງ່ຽມນັ້ນ ກໍຈະຄວຣງາມໃນສັມມ໌ວິນັຍນີ້ແນ່.

[໔໔໕] ພຣະຜູ້ມີພຣະກາຄ ໄດ້ຕຣັສພຣະໂອວາທແກ່ກິກຂຸເຫລົ່ານັ້ນເປັນເທື່ອສາມວ່າ ຢ່າເລີຍ ກິກຂຸທັ້ງຫລາຍ ຢ່າບາດຫມາງກັນ ຢ່າຜິດຖຽງກັນ ຢ່າແກ່ງແຍ່ງກັນ ຢ່າວິວາທກັນເລີຍ ອສັມມ໌ວາທີ ກິກຂຸອົງຄ໌ນັ້ນ ໄດ້ຂາບທູລຄຳນີ້ແດ່ພຣະຜູ້ມີພຣະກາຄເປັນເທື່ອສາມ ຂ້ານ້ອຍ ຂໍພອຣະຜູ້ມີພຣະກາຄ ຜູ້ເປັນເຈົ້າຂອງແຫ່ງສັມມ໌ໄດ້ໂປຼດທຣົງຍັບຍັ້ງເທີ້ນ ຂໍພອຣະຜູ້ມີພຣະກາຄ ໄດ້ໂປຼດທຣົງມີຄວາມຂວນຂວາຍ ຫນ້ອຍ ປະກອບສຸຂວິຫາຣສັມມ໌ໃນປັຈຈຸບັນຢູ່ເທີ້ນ ພວກຂ້າພຣະພຸທສເຈົ້າຈະປຣາກົຕດ້ວຍຄວາມບາດຫມາງ ຄວາມຜິດຖຽງ ຄວາມແກ່ງແຍ່ງ ການວິວາທນັ້ນ ຈຶ່ງພຣະຜູ້ມີພຣະກາຄທຣົງດຳຣິວ່າ ໂມຜບຸຣຸສເຫລົ່ານີ້ຫົວດື້ ນັກແລ ເຮົາຈະໃຫ້ໂມຜບຸຣຸສເຫລົ່ານີ້ເຂົ້າໃຈກັນ ເຮັດບໍ່ໄດ້ງ່າຍເລີຍ ດັ່ງນີ້ ແລ້ວສເດັຈລຸກຈາກພຣະພຸທສອາສນ໌ ກັບໄປ.

ທີຜາວຸກາຕວາຣ ທີ່ ໑ ຈົບ.

---

[໔໔໖] ເມື່ອເວລາເຊົ້າ ພຣະຜູ້ມີພຣະກາຄທຣົງຄອງອັນຕຣວາສົກແລ້ວ ທຣົງຖືບາຕຣ໌ຈີວຣ ສເດັຈເຂົ້າພຣະນຄຣໂກສັມພີເພື່ອບິຕຫາບາຕ ສເດັຈທ່ຽວບິຕຫາບາຕໃນພຣະນຄຣໂກສັມພີແລ້ວ ເມື່ອ ເວລາບ່າຍ ສເດັຈກັບຈາກບິຕຫາບາຕ ທຣົງເກັບເສນາສນະຖືບາຕຣ໌ຈີວຣ ປະທັບຢືນທ່າມກາງພຣະສົງຄ໌ ໄດ້ຕຣັສພຣະຄາຖາເຫລົ່ານີ້ ວ່າດັ່ງນີ້:-

ເວຣຸປສມຄາຖາ

[໔໔໗] ກິກຂຸມີສຽງດັງເປັນສຽງດຽວກັນ ຈະໄດ້ສຳຄັລຕົວວ່າ
ເປັນພາລ ບໍ່ມີເລີຍຈັກອົງຄ໌ດຽວ ຍິ່ງເມື່ອສົງຄ໌ແຕກກັນ ກໍບໍ່ໄດ້
ສຳຄັລເຫຕຸອື່ນ ກິກຂຸທັ້ງຫລາຍລືມສຕິ ສຳຄັລຕົວວ່າເປັນບັຕທິຕ
ຊ່າງເວົ້າ ເຈົ້າຄາຣົມ ເວົ້າໄປຕາມທີ່ຕົນປັຕຖນາ ຈະຍື່ນປາກເວົ້າ
ບໍ່ຮູ້ສຶກວ່າຄວາມຜິດຖຽງເປັນເຫຕຸຊັກພາໄປ

ກໍຄົນເຫລົ່າໃດຈອງເວຣໄວ້ວ່າ ຄົນນັ້ນດ່າເຮົາ ຕີເຮົາ ຊນະເຮົາ
ໄດ້ລັກສິ່ງຂອງຂອງເຮົາໄປ ເວຣຂອງຄົນເຫລົ່ານັ້ນຍ່ອມບໍ່ສງົບ
ສ່ວນຄົນເຫລົ່າໃດບໍ່ຈອງເວຣໄວ້ວ່າ ຄົນນັ້ນດ່າເຮົາ ຕີເຮົາ ຊນະເຮົາ
ໄດ້ລັກສິ່ງຂອງຂອງເຮົາໄປ ເວຣຂອງຄົນເຫລົ່ານັ້ນຍ່ອມສງົບ

ແຕ່ໃສແຕ່ໃດມາ ເວຣທັ້ງຫລາຍໃນໂລກນີ້ຍ່ອມບໍ່ຣະງັບ
ເພາະເວຣເລີຍ ແຕ່ຍ່ອມຣະງັບ ເພາະບໍ່ຈອງເວຣ ຮັມມ໌ນີ້
ເປັນຂອງເກົ່າ

ກໍຄົນເຫລົ່າອື່ນບໍ່ຮູ້ສຶກວ່າ ພວກເຮົາກຳລັງຍັບເຍີນ ໓ ທ່າມ
ກາງສົງຆ໌ນີ້ ສ່ວນຄົນເຫລົ່າໃດໃນທ່າມກາງສົງຆ໌ນັ້ນ ຮູ້ສຶກ
ເພາະຄວາມຮູ້ສຶກຂອງຄົນເຫລົ່ານັ້ນ ຄວາມຫມາຍມັ່ນຍ່ອມຣະງັບ

ຄົນເຫລົ່າໃດຟັ່ນກະດູກ ຜລາຄຊີວິຕ ລັກຊັພຍ໌ ຄື ງົວ
ແລະມ້າ ຄົນເຫລົ່ານັ້ນເຖິງຍາດແຍ່ງແວ່ນແຄວ້ນກັນ ກໍຍັງຄົບຫາ
ສມາຄົມກັນໄດ້ ເຫຕຸເປັນຫຍັງພວກທ່ານຈຶ່ງຄົບຫາສມາຄົມກັນບໍ່ໄດ້ລະ

ຖ້າບຸຄຄົລຄວຣໄດ້ສຫາຍມີປັຍາ ທ່ຽວໄປດ້ວຍກັນ ເປັນ-
ນັກປຣາຊຍ໌ຄອຍຊ່ວຍເຫລືອກັນ ເຂົາຄອບງຳອັນຕຣາຍທັ້ງປວງ
ເສັຽໄດ້ ຄວຣພໍໃຈ ມີສຕິທ່ຽວໄປກັບສຫາຍນັ້ນ ຖ້າບໍ່ໄດ້
ສຫາຍມີປັຍາ ທ່ຽວໄປດ້ວຍກັນ ເປັນນັກປຣາຊຍ໌ຄອຍຊ່ວຍ
ເຫລືອກັນ ຄວຣທ່ຽວໄປຄົນດຽວ ເໝືອນພຣະຣາຊາທຣົງສລະແວ່ນ-
ແຄວ້ນ ຄືຣາຊອານາຈັກຣ໌ ແລະເໝືອນຊ້າງມາຕັງຄະ ລະຝູງທ່ຽວໄປ
ໃນປ່າ ຈັ່ງຊັ້ນ ການທ່ຽວໄປຄົນດຽວດີກວ່າ ເພາະຄຸຕເຄື່ອງ
ເປັນສຫາຍບໍ່ມີໃນຄົນພາລ ຄວຣທ່ຽວໄປຄົນດຽວ ແລະບໍ່ຄວຣ
ທຳບາປ ເໝືອນຊ້າງມາຕັງຄະ ມີຄວາມຂວນຂວາຍຫນ້ອຍ ທ່ຽວໄປ
ໃນປ່າແຕ່ລຳພັງ ຈັ່ງຊັ້ນ.

ສເດັຈພາລກໂລຕກາຣກຄາມ

[໔໗] ຄັ້ງນັ້ນ ພຣະຜູ້ມີພຣະກາຄກຳລັງປະທັບຢູ່ທ່າມກາງສົງຆ໌ຕຣັສພຣະຄາຖາເຫລົ່ານີ້ ແລ້ວສເດັຈພຣະພຸທສດຳເນີນໄປທາງບ້ານ**ພາລກໂລຕກາຣກຄາມ**[13] ກໍສມັຍນັ້ນທ່ານພຣະກຄຸພັກຢູ່ທີ່ບ້ານ

[13] **ພາລກໂລຕກາຣກຄາມ** ອ່ານວ່າ "ພາລະກະໂລຕະກາຣະກະຄາມ"

ພາລກໂລຕກາຣກາຄາມ ໄດ້ແລເຫັນພຣະຜູ້ມີພຣະກາຄກຳລັງສເດັຈພຣະພຸທສດຳເນີນມາແຕ່ໄກ ເມື່ອແລ້ວໄດ້ຈັດທີ່ປະທັບ ຕັ້ງນ້ຳລ້າງພຣະບາທ ຕັ່ງຮອງພຣະບາທ ກະເບື້ອງເຊັດພຣະບາທ ໄປັບສເດັຈຮັບບາຕຣ໌ຈີວຣ ພຣະຜູ້ມີພຣະກາຄປະທັບນັ່ງເຫນືອພຸທສອາສນ໌ທີ່ຈັດໄວ້ ເມື່ອແລ້ວໃຫ້ລ້າງພຣະບາທຍຸຄົລ ຝ່າຍທ່ານພຣະກຄຸຖວາຍບັງຄົມພຣະຜູ້ມີພຣະກາຄແລ້ວນັ່ງເຝົ້າຢູ່ ໓ ທີ່ຄວຣສ່ວນຂ້າງນຶ່ງ ພຣະຜູ້ມີພຣະກາຄໄດ້ຕຣັສຄຳນີ້ແກ່ທ່ານພຣະກຄຸຜູ້ນັ່ງຢູ່ ໓ ທີ່ຄວຣສ່ວນຂ້າງນຶ່ງວ່າ ດູຣາກິກຂຸ ທ່ານຍັງພໍທົນໄດ້ບໍ່ຍັງພໍໃຫ້ອັຕກາພເປັນໄປໄດ້ບໍ່ ທ່ານບໍ່ລຳບາກດ້ວຍອາຫາຣບິຕຫບາຕບໍ່?

ທ່ານພຣະກຄຸຂາບທູລວ່າ ຂ້າພຣະພຸທສເຈົ້າ ຍັງພໍທົນໄດ້ ຍັງພໍໃຫ້ອັຕກາພເປັນໄປໄດ້ ແລະຂ້າພຣະພຸທສເຈົ້າກໍບໍ່ລຳບາກດ້ວຍອາຫາຣບິຕຫບາຕ ຂ້ານ້ອຍ.

ຈຶ່ງພຣະຜູ້ມີພຣະກາຄ ທຣົງຊີ້ແຈງໃຫ້ທ່ານພຣະກຄຸເຫັນແຈ້ງ ສມາທານ ອາຈຫາລ ຣ່າເຣີງ ດ້ວຍສັມມີກຖາ ແລ້ວສເດັຈລຸກຈາກທີ່ປະທັບ ສເດັຈພຸທສດຳເນີນໄປທາງປຣາຈີນວັງສທາຍວັນ

ກໍສມັຍນັ້ນ ທ່ານພຣະອນຸຣຸທສະ ທ່ານພຣະນັນທິຍະ ແລະທ່ານພຣະກິມພິລະ ພັກຢູ່ທີ່ປຣາຈີນວັງສທາຍວັນ ຄົນເຝົ້າສວນໄດ້ແລເຫັນພຣະຜູ້ມີພຣະກາຄມາແຕ່ໄກ ເມື່ອແລ້ວໄດ້ທູລຄຳນີ້ແດ່ພຣະຜູ້ມີພຣະກາຄວ່າ ຂ້າແຕ່ພຣະສມຕະ ພຣະອົງຄ໌ຢ່າສເດັຈເຂົ້າມາສູ່ສວນນີ້ ເພາະໃນສວນນີ້ມີກຸລບຸຕຣ໌ຢູ່ ໓ ທ່ານ ຕ່າງກຳລັງມຸ່ງປະໂຍຊນ໌ຂອງຕົນຢູ່ ພຣະອົງຄ໌ຢ່າໄດ້ທຳຄວາມບໍ່ສຳຣາຄແກ່ພວກນັ້ນເລີຍ

ທ່ານພຣະອນຸຣຸທສະໄດ້ຍິນສຽງຄົນເຝົ້າສວນ ກຳລັງໂຕ້ຕອບຢູ່ກັບພຣະຜູ້ມີພຣະກາຄ ຈຶ່ງໄດ້ບອກຄົນເຝົ້າສວນວ່າ ນາຍທາຍບາລ ທ່ານຢ່າຫ້າມພຣະຜູ້ມີພຣະກາຄເລີຍ ພຣະອົງຄ໌ເປັນສາສດາຂອງພວກເຮົາສເດັຈມາເຖິງແລ້ວໂດຍລຳດັບ ເມື່ອແລ້ວເຂົ້າໄປຫາທ່ານພຣະນັນທິຍະ ແລະທ່ານພຣະກິມພິລະ ໄດ້ແຈ້ງຄວາມຂໍ້ນີ້ແກ່ທ່ານທັ້ງສອງວ່າ ຈົ່ງຣີບອອກໄປເທີ້ນ ພວກທ່ານ ຈົ່ງຣີບອອກໄປເທີ້ນ ພວກທ່ານ ພຣະຜູ້ມີພຣະກາຄຜູ້ເປັນສາສດາຂອງພວກເຮົາສເດັຈມາເຖິງແລ້ວ ໂດຍລຳດັບ ຈຶ່ງທ່ານພຣະອນຸຣຸທສະ ທ່ານພຣະນັນທິຍະ ແລະທ່ານພຣະກິມພິລະ ພາກັນລຸກໄປັບສເດັຈພຣະຜູ້ມີພຣະກາຄ ອົງຄ໌ນຶ່ງຮັບບາຕຣ໌ຈີວຣຂອງພຣະຜູ້ມີພຣະກາຄອົງຄ໌ນຶ່ງປູອາສນະ ອົງຄ໌ນຶ່ງຕັ້ງນ້ຳລ້າງພຣະບາທ ຕັ່ງຮອງພຣະບາທ ກະເບື້ອງເຊັດພຣະບາທ ພຣະຜູ້ມີພຣະກາຄປະທັບນັ່ງເຫນືອພຣະພຸທສອາສນ໌ທີ່ຈັດໄວ້ ເມື່ອແລ້ວໃຫ້ລ້າງພຣະບາທຍຸຄົລ ທ່ານເຫລົ່ານັ້ນກໍຖວາຍບັງຄົມພຣະຜູ້ມີພຣະກາຄແລ້ວ ນັ່ງເຝົ້າຢູ່ ໓ ທີ່ຄວຣສ່ວນຂ້າງນຶ່ງ ທ່ານພຣະອນຸຣຸທສະນັ່ງຮຽບຮ້ອຍແລ້ວ ພຣະຜູ້ມີພຣະກາຄຕຣັສຖາມວ່າ ອນຸຣຸທສະພວກທ່ານຍັງພໍທົນໄດ້ບໍ່ ຍັງພໍໃຫ້ອັຕກາພເປັນໄປໄດ້ບໍ່ ບໍ່ລຳບາກດ້ວຍອາຫາຣບິຕຫບາຕບໍ່?

ພວກທ່ານພຣະອນຸຣຸທສະຂາບທູລວ່າ ພວກຂ້າພຣະພຸທສເຈົ້າ ຍັງພໍທົນໄດ້ ຍັງພໍໃຫ້ອັຕຕາພ ເປັນໄປໄດ້ ແລະພວກຂ້າພຣະພຸທສເຈົ້າ ບໍ່ລຳບາກດ້ວຍອາຫາຣບິຓຫບາຕຂ້ານ້ອຍ

ກ. ດູຣາພວກອນຸຣຸທສະ ກໍພວກທ່ານຍັງພ້ອມພຽງກັນ ຍັງປອງດອງກັນ ບໍ່ວິວາທກັນ ເປັນເໝືອນນ້ຳນົມສົດກັບນ້ຳ ເບິ່ງກັນດ້ວຍດວງຕາອັນເປັນທີ່ຮັກຢູ່ບໍ່?

ອ. ຂ້າພຣະພຸທສເຈົ້າເຫລົ່ານັ້ນຍັງພ້ອມພຽງກັນ ຍັງປອງດອງກັນ ບໍ່ວິວາທກັນ ເປັນເໝືອນ ນ້ຳນົມສົດກັບນ້ຳ ເບິ່ງກັນດ້ວຍດວງຕາອັນເປັນທີ່ຮັກຢູ່ ໂດຍສ່ວນດຽວ ຂ້ານ້ອຍ

ກ. ດູຣາພວກອນຸຣຸທສະ ພວກທ່ານພ້ອມພຽງກັນ ປອງດອງກັນ ບໍ່ວິວາທກັນ ເປັນເໝືອນ ນ້ຳນົມສົດກັບນ້ຳ ເບິ່ງກັນດ້ວຍດວງຕາອັນເປັນທີ່ຮັກຢູ່ ດ້ວຍວິທີຢ່າງໃດລະ?

ສາມັຄຄີສັມມ໌

ອ. ຂ້ານ້ອຍ ໃນຂໍ້ນີ້ຂ້າພຣະພຸທສເຈົ້າມີຄວາມຄຶດຢ່າງນີ້ວ່າ ເປັນລາກຂອງເຮົານໍ ເຮົາໄດ້ດີແລ້ວ ທີ່ເຮົາໄດ້ຢູ່ຮ່ວມກັບເພື່ອນສພຣົຫ໌ມຈາຣີເຫັນປານນີ້ ຂ້າພຣະພຸທສເຈົ້ານັ້ນ ໄດ້ເຂົ້າໄປຕັ້ງ ເມຕຕາກາຍກັມມ໌ ເມຕຕາວຈີກັມມ໌ ເມຕຕາມໂນກັມມ໌ໄວ້ໃນທ່ານເຫລົ່ານີ້ ທັ້ງໃນທີ່ແຈ້ງແລະທີ່ລັບ ຂ້າພຣະພຸທສເຈົ້ານັ້ນມີຄວາມຄຶດຢ່າງນີ້ວ່າ ແນວໃດນໍ ເຮົາຄວຣວາງຈິຕຂອງຕົນໃຫ້ເປັນໄປຕາມອຳນາຈຈິຕ ຂອງທ່ານເຫລົ່ານີ້ເທົ່ານັ້ນ ດັ່ງນີ້ ແລ້ວວາງຈິຕຂອງຕົນໃຫ້ເປັນໄປຕາມອຳນາຈຈິຕຂອງທ່ານເຫລົ່ານີ້ແຫລະ ກາຍຂອງພວກຂ້າພຣະພຸທສເຈົ້າຕ່າງກັນກໍແທ້ແລ ແຕ່ຈິຕເປັນເຫມືອນຕາດຽວກັນ ຂ້ານ້ອຍ

ຝ່າຍທ່ານພຣະນັນທິຍະແລະທ່ານກິມພິລະ ຕ່າງໄດ້ຂາບທູລຄຳນີ້ແດ່ພຣະຜູ້ມີພຣະພາຄວ່າ ຂ້ານ້ອຍ ແມ້ຂ້າພຣະພຸທສເຈົ້າກໍມີຄວາມຄຶດຢ່າງນີ້ວ່າ ເປັນລາກຂອງເຮົານໍ ເຮົາໄດ້ດີແລ້ວນໍ ທີ່ເຮົາໄດ້ຢູ່ຮ່ວມກັບເພື່ອນສພຣົຫ໌ມຈາຣີເຫັນປານນີ້ ຂ້າພຣະພຸທສເຈົ້ານັ້ນໄດ້ເຂົ້າໄປຕັ້ງເມຕຕາກາຍກັມມ໌ ເມຕຕາວຈີກັມມ໌ ເມຕຕາມໂນກັມມ໌ ໄວ້ໃນທ່ານເຫລົ່ານີ້ ທັ້ງໃນທີ່ແຈ້ງແລະທີ່ລັບ ຂ້າພຣະພຸທສເຈົ້ານັ້ນມີ ຄວາມຄຶດຢ່າງນີ້ວ່າແນວໃດນໍ ເຮົາຄວຣວາງຈິຕຂອງຕົນໃຫ້ເປັນໄປຕາມອຳນາຈຈິຕຂອງທ່ານເຫລົ່ານີ້ເທົ່ານັ້ນ ດັ່ງນີ້ ແລ້ວວາງຈິຕຂອງຕົນໃຫ້ເປັນໄປຕາມອຳນາຈຈິຕຂອງທ່ານເຫລົ່ານີ້ແຫລະ ກາຍຂອງພວກຂ້າພຣະພຸທສເຈົ້າ ຕ່າງກັນກໍແທ້ແລ ແຕ່ຈິຕເປັນເຫມືອນຕາດຽວກັນ ຂ້ານ້ອຍ ພວກຂ້າພຣະພຸທສເຈົ້າເປັນຜູ້ພ້ອມ ພຽງກັນ ຍັງປອງດອງກັນ ບໍ່ວິວາທກັນ ເປັນເໝືອນນ້ຳນົມສົດກັບນ້ຳ ເບິ່ງກັນດ້ວຍດວງຕາອັນເປັນທີ່ ຮັກຢູ່ ດ້ວຍວິທີຢ່າງນີ້ແລ ຂ້ານ້ອຍ

ພ. ດູຣາພວກອນຸຣຸທສະ ກໍພວກທ່ານເປັນຜູ້ບໍ່ປະມາທ ມີຄວາມພຽຣເພີາກິເລສ ມີຕົນສົ່ງໄປຢູ່ບໍ່?

ອ. ພວກຂ້າພຣະພຸທສເຈົ້າເປັນຜູ້ບໍ່ປະມາທ ມີຄວາມພຽຣເພີາກິເລສ ມີຕົນສົ່ງໄປຢູ່ໂດຍສ່ວນດຽວ ຂ້ານ້ອຍ

ພ. ດູຣາພວກອນຸຣຸທສະ ພວກທ່ານເປັນຜູ້ບໍ່ປະມາທ ມີຄວາມພຽຣເພີາກິເລສ ມີຕົນສົ່ງໄປຢູ່ດ້ວຍວິທີຢ່າງໃດລະ?

ອ. ພຣະພຸທສເຈົ້າ ໃນຂໍ້ນີ້ ບັຣດາພວກຂ້າພຣະພຸທສເຈົ້າ ອົງຄ໌ໃດບິຕຊບາຕກັບຈາກບ້ານກ່ອນ ອົງຄ໌ນັ້ນກໍປູອາສນະ ຕັ້ງນ້ຳລ້າງຕີນ ຕັ່ງເກີບ ກະເບື້ອງເຊັດຕີນໄວ້ ລ້າງຊຸດກັບເຂົ້າແລ້ວຕັ້ງໄວ້ ຕັ້ງນ້ຳສັນນ້ຳໃຊ້ໄວ້ ອົງຄ໌ໃດບິຕຊບາຕກັບຈາກບ້ານທີຫລັງ ຖ້າມີອາຫາຣທີ່ສັນແລ້ວເຫລືອຢູ່ ຖ້າຕ້ອງການກໍສັນ ຖ້າບໍ່ຕ້ອງການ ກໍເທຖິ້ມໃນທີ່ປຣາສຈາກຂອງຂຽວສົດ ຫຼືລ້າງເສັຽໃນນ້ຳທີ່ບໍ່ມີໂຕສັຕວ໌ ອົງຄ໌ນັ້ນຮື້ອາສນະເກັບນ້ຳລ້າງຕີນ ຕັ່ງເກີບ ກະເບື້ອງເຊັດຕີນ ລ້າງຊຸດກັບເຂົ້າແລ້ວເກັບໄວ້ ເກັບນ້ຳສັນນ້ຳໃຊ້ ກວາດໂຮງສັນ ອົງຄ໌ໃດເຫັນໝໍ້ນ້ຳສັນ ໝໍ້ນ້ຳໃຊ້ ຫຼືໝໍ້ນ້ຳໃນວັຈຈກຸຜີວ່າງເປົ່າ ອົງຄ໌ນັ້ນກໍຕັກນ້ຳຕັ້ງໄວ້ ຖ້າອົງຄ໌ນັ້ນບໍ່ສາມາຖ ພວກຂ້າພຣະພຸທສເຈົ້າກໍກວັກມືເອີ້ນເພື່ອນມາ ແລ້ວຊ່ວຍກັນຕັກຍົກເຂົ້າໄປຕັ້ງໄວ້ ແຕ່ພວກຂ້າພຣະພຸທສເຈົ້າບໍ່ໄດ້ຈົ່ມວ່າ ເພາະຂໍ້ນັ້ນເປັນເຫຕຸເລີຍ ແລະພວກຂ້າພຣະພຸທສເຈົ້ານັ່ງປະຊຸມກັນດ້ວຍສັມມົນີກຖາຕລອດຄືນເຖິງເຊົ້າທຸກໆ ໕ ວັນ ພວກຂ້າພຣະພຸທສເຈົ້າເປັນຜູ້ບໍ່ປະມາທ ມີຄວາມພຽຣເພີາກິເລສ ມີຕົນສົ່ງໄປຢູ່ ດ້ວຍວິທີຢ່າງນີ້ແລ ຂ້ານ້ອຍ

ລຳດັບນັ້ນ ພຣະຜູ້ມີພຣະກາຄໄດ້ທຣົງຊີ້ແຈງ ໃຫ້ທ່ານພຣະອນຸຣຸທສະ ທ່ານພຣະນັນທິຍະ ແລະທ່ານພຣະກິມພິລະ ເຫັນແຈ້ງ ສມາທານ ອາຈຫານ ຣ່າເຣີງ ດ້ວຍສັມມີກຖາ ແລ້ວທຣົງລຸກຈາກທີ່ປະທັບສເດັຈພຣະພຸທສດຳເນີນໄປທາງຕຳບົລບ້ານປາຣີໄລຍກະ ສເດັຈຈາຣິກໂດຍລຳດັບ ເຖິງຕຳບົລບ້ານປາຣີໄລຍກະຮູ້ວ່າພຣະອົງຄ໌ປະທັບຢູ່ທີ່ໂຄນໄມ້ຮັງໃຫຍ່ ໃນໄພຣສົຕຫ໌ຣັກຂິຕວັນ ເຂຕຕຳບົລບ້ານປາຣີໄລຍກະນັ້ນ.

ເຣື່ອງຊ້າງໃຫຍ່ປາຣີໄລຍກະ

[໔໕໗] ຄັ້ງນັ້ນ ພຣະຜູ້ມີພຣະກາຄສເດັຈໄປໃນທີ່ສງັດທຣົງຫລີກເຮັ້ນຢູ່ ໄດ້ມີຄວາມປຣິວິຕົກແຫ່ງພຣະທັຍເກີດຂຶ້ນຢ່າງນີ້ວ່າ ເມື່ອກ່ອນເຮົາວຸ່ນດ້ວຍກິກຊຸຊາວເມືອງໂກສັມພີ ທີ່ກໍ່ຄວາມບາດຫມາງກໍ່ການຜິດຖຽງ ກໍ່ການວິວາທ ທຳຄວາມອື້ສາວ ກໍ່ອະທິກຣຕ໌ໃນສົງຄ໌ເຫລົ່ານັ້ນ ຢູ່ບໍ່ສຳຣາຄເລີຍດຽວນີ້ ເຮົາວ່າງເວັ້ນຈາກກິກຊຸຊາວເມືອງໂກສັມພີ ທີ່ກໍ່ຄວາມບາດຫມາງ ກໍ່ການຜິດຖຽງ ກໍ່ການວິວາທທຳຄວາມອື້ສາວ ກໍ່ອະທິກຣຕ໌ໃນສົງຄ໌ເຫລົ່ານັ້ນ ຢູ່ຄົນດຽວ ບໍ່ມີເພື່ອນ ເປັນສຸຂສຳຣາຄດີ

ແມ້ຊ້າງໃຫຍ່ເຊືອກນີ້ງກໍຢູ່ງຢູ່ດ້ວຍຊ້າງພລາຍ ຊ້າງພັງ ລູກຊ້າງໃຫຍ່ ລູກຊ້າງນ້ອຍ ໄດ້ກິນແຕ່ຫຍ້າຍອດດ້ວນ ສ່ວນກິ່ງໄມ້ທີ່ພຣະຍາຊ້າງນັ້ນຫັກລົງມາກອງໄວ້ ຊ້າງເຫລົ່ານັ້ນກໍກິນຫມົດ ໄດ້ດື່ມແຕ່ນ້ຳຂຸ່ນໆ ເມື່ອພຣະຍາຊ້າງນັ້ນລົງແລະຂຶ້ນຈາກທ່າ ຊ້າງພັງກໍຍ່າງສຽດສີກາຍໄປ ຕໍ່ມາພຣະຍາຊ້າງນັ້ນໄດ້ມີຄວາມປຣິວິຕົກດັ່ງນີ້ວ່າ ເຮົາຢູ່ງຢູ່ດ້ວຍຊ້າງພລາຍ ຊ້າງພັງ ລູກຊ້າງໃຫຍ່ ລູກຊ້າງນ້ອຍ ໄດ້ກິນແຕ່ຫຍ້າຍອດດ້ວນ ສ່ວນກິ່ງໄມ້ທີ່ເຮົາຫັກລົງມາກອງໄວ້ຊ້າງເຫລົ່ານັ້ນກໍກິນຫມົດ ໄດ້ດື່ມແຕ່ນ້ຳຂຸ່ນໆ ເມື່ອເຮົາລົງແລະຂຶ້ນຈາກທ່າ ຊ້າງພັງກໍຍ່າງສຽດສີກາຍໄປ ແນວໃດນໍ ເຮົາຄວຣຫລີກອອກຈາກໂຂງຢູ່ແຕ່ຜູ້ດຽວ ເມື່ອແລ້ວໄດ້ຫລີກອອກຈາກໂຂງຍ່າງໄປທາງບ້ານປາຣິໄລຍກະໄພຣສົາຫ໌ຣັກຂິຕວັນຄວງໄມ້ຮັງໃຫຍ່ ເຂົ້າໄປຫາພຣະຜູ້ມີພຣະກາຄ ແລ້ວໃຊ້ງວງຕັກນ້ຳຈັນນ້ຳໃຊ້ເຂົ້າໄປຕັ້ງໄວ້ເພື່ອພຣະຜູ້ມີພຣະກາຄ ແລະປາບສຖານທີ່ໃຫ້ປຣາສຈາກຂອງຂຽວສົດ ເມື່ອກາລຕໍ່ມາ ພຣະຍາຊ້າງນັ້ນໄດ້ຄຳນຶງວ່າ ເມື່ອກ່ອນເຮົາຢູ່ງດ້ວຍຊ້າງພລາຍ ຊ້າງພັງ ລູກຊ້າງໃຫຍ່ ລູກຊ້າງນ້ອຍ ຢູ່ບໍ່ຜາສຸກເລີຍ ໄດ້ກິນແຕ່ຫຍ້າຍອດດ້ວນ ສ່ວນກິ່ງໄມ້ທີ່ເຮົາຫັກລົງມາກອງໄວ້ ຊ້າງເຫລົ່ານັ້ນກໍກິນຫມົດ ໄດ້ດື່ມແຕ່ນ້ຳຂຸ່ນໆ ເມື່ອເຮົາລົງແລະຂຶ້ນຈາກທ່າ ຊ້າງພັງກໍຍ່າງສຽດສີກາຍໄປ ດຽວນີ້ ເຮົາວ່າງເວັ້ນຈາກຊ້າງພລາຍ ຊ້າງພັງ ລູກຊ້າງໃຫຍ່ ລູກຊ້າງນ້ອຍ ຢູ່ແຕ່ຜູ້ດຽວ ບໍ່ມີເພື່ອນ ເປັນສຸຂສຳຣາລດີ.

ຄັ້ງນັ້ນ ພຣະຜູ້ມີພຣະກາຄທຮົງຮູ້ຄວາມງຽບສງັດຂອງພຣະອົງຄ໌ ແລະທຮົງຮູ້ຄວາມປຣິວິຕົກແຫ່ງຈິຕຂອງພຣະຍາຊ້າງນັ້ນດ້ວຍພຣະທັຍ ຈຶ່ງທຮົງກ່າວອຸທານນີ້ຂຶ້ນໃນເວລານັ້ນ ວ່າດັ່ງນີ້:-

ຈິຕຂອງພຣະຍາຊ້າງຜູ້ມີງາງາມເໝືອນງອນຣົຖນັ້ນສເມີດ້ວຍຈິຕຂອງ

ທ່ານຜູ້ປະເສີຖ ເພາະເປັນຜູ້ດຽວຍິນດີໃນປ່າເຫມືອນກັນ.

[໔໕໐] ເມື່ອພຣະຜູ້ມີພຣະກາຄ ປະທັບຢູ່ທີ່ຕຳບົລບ້ານປາຣິໄລຍກະ ຕາມພຣະພຸທສາພິຣົມຍ໌ແລ້ວສເດັຈພຣະພຸທສດຳເນີນໄປທາງພຣະນຄຣສາວັຕຖີ ສເດັຈຈາຣິກໂດຍລຳດັບ ເຖິງພຣະນຄຣສາວັຕຖີແລ້ວຮູ້ວ່າພຣະອົງຄ໌ປະທັບຢູ່ທີ່ພຣະເຊຕວັນ ອາຣາມຂອງອນາຖບິຕຫິກຄຫບໍດີ ເຂຕພຣະນຄຣສາວັຕຖີນັ້ນ.

ອຸບາສົກອຸບາສິກາຊາວພຣະນຄຣໂກສັມພີບໍ່ອະພິວາທ

[໔໕໑] ຄັ້ງນັ້ນ ອຸບາສົກອຸບາສິກາຊາວພຣະນຄຣໂກສັມພີໄດ້ຫາຣືກັນດັ່ງນີ້ວ່າ ພຣະຄຸຕເຈົ້າເຫລົ່າພິກຂຸຊາວພຣະນຄຣໂກສັມພີນີ້ ທຳຄວາມພິນາສໃຫຍ່ໂຕໃຫ້ພວກເຮົາ ພຣະຜູ້ມີພຣະກາຄຖືກທ່ານເຫລົ່ານີ້ຣົບກວນຈຶ່ງສເດັຈຫລີກໄປເສັຽ ເອົາລະ ພວກເຮົາບໍ່ຕ້ອງອະພິວາທ ບໍ່ຕ້ອງລຸກຮັບ ບໍ່ຕ້ອງເຮັດອັຍຊລີກັມມ໌ສາມີຈິກັມມ໌ ບໍ່ຕ້ອງເຮັດສັກກາຣະ ບໍ່ຕ້ອງເຄາຣົພ ບໍ່ຕ້ອງນັບຖື ບໍ່ຕ້ອງບູຊາຊຶ່ງພຣະຄຸຕເຈົ້າເຫລົ່າພິກຂຸ

ຊາວພຣະນຄຣໂກສັມພີ ແມ້ເຂົ້າມາບິຓຫບາຕ ກໍບໍ່ຕ້ອງຖວາຍບິຓຫບາຕ ທ່ານເຫລົ່ານີ້ຖືກພວກເຮົາບໍ່ສັກກາຣະ ບໍ່ເຄາຣົພ ບໍ່ນັບຖື ບໍ່ບູຊາ ເປັນຜູ້ບໍ່ມີສັກກາຣະຢ່າງນີ້ ຈະຫລີກໄປເສັຽ ຫຼືຈະສິກເສັຽ ຫຼືຈະໃຫ້ພອຣະຜູ້ມີພຣະກາຄທຮົງໂປຼດ ເມື່ອແລ້ວບໍ່ອກິວາທ ບໍ່ລຸກຮັບ ບໍ່ເຮັດອັຌຊລີກັມມ໌ສາມີຈີກັມມ໌ ບໍ່ສັກກາຣະ ບໍ່ເຄາຣົພ ບໍ່ນັບຖື ບໍ່ບູຊາ ຊຶ່ງພວກກິກຂຸຊາວພຣະນຄຣໂກສັມພີແມ້ເຂົ້າມາບິຓຫບາຕກໍບໍ່ຖວາຍບິຓຫບາຕ.

ຄັ້ງນັ້ນ ພວກກິກຂຸຊາວພຣະນຄຣໂກສັມພີ ຖືກອຸບາສົກອຸບາສິກາຊາວພຣະນຄຣໂກສັມພີບໍ່ສັກກາຣະ ບໍ່ເຄາຣົພ ບໍ່ນັບຖື ບໍ່ບູຊາ ເປັນຜູ້ບໍ່ມີສັກກາຣະ ຈຶ່ງເວົ້າກັນຢ່າງນີ້ວ່າ ອາວຸໂສທັ້ງຫລາຍ ມີຈັ່ງຊັ້ນ ພວກເຮົາຄວຣໄປພຣະນຄຣສາວັຕຖີ ແລ້ວຣະງັບອະທິກຣຓ໌ນີ້ໃນສຳນັກພຣະຜູ້ມີພຣະກາຄເມື່ອແລ້ວ ເກັບງຳເສນາສນະ ຖືບາຕຣ໌ຈີວຣພາກັນເດີນທາງໄປພຣະນຄຣສາວັຕຖີ.

ພຣະສາຣີບຸຕຣ໌ເຂົ້າເຝົ້າທູລຖາມຂໍ້ປຕິບັຕິ

[໔໕໔] ທ່ານພຣະສາຣີບຸຕຣໄດ້ສດັບຂ່າວວ່າ ກິກຂຸຊາວພຣະນຄຣໂກສັມພີ ຜູ້ກໍ່ຄວາມບາດຫມາງກໍ່ກາຣຜິດຖຽງ ກໍ່ກາຣວິວາທ ທຳຄວາມອື້ລາວ ກໍ່ອະທິກຣຓ໌ໃນສົງຄ໌ ເຫລົ່ານັ້ນ ພາກັນມາສູ່ພຣະນຄຣສາວັຕຖີ ຈຶ່ງເຂົ້າໄປໃນພຣະພຸທສສຳນັກ ຖວາຍບັງຄົມພຣະຜູ້ມີພຣະກາຄ ນັ່ງເຝົ້າຢູ່ ຓ ທີ່ຄວຣສ່ວນຂ້າງນຶ່ງທ່ານພຣະສາຣີບຸຕຣ໌ນັ່ງຮຽບຮ້ອຍແລ້ວ ໄດ້ທູລຖາມຂໍ້ປຕິບັຕິນີ້ແດ່ພຣະຜູ້ມີພຣະກາຄວ່າ ຂ້ານ້ອຍໄດ້ຂ່າວມາວ່າ ກິກຂຸຊາວພຣະນຄຣໂກສັມພີທີ່ກໍ່ຄວາມບາດຫມາງ ກໍ່ກາຣຜິດຖຽງ ກໍ່ກາຣວິວາທ ທຳຄວາມອື້ລາວ ກໍ່ອະທິກຣຓ໌ໃນສົງຄ໌ເຫລົ່ານັ້ນ ພາກັນມາພຣະນຄຣສາວັຕຖີ ຂ້າພຣະພຸທສເຈົ້າຈະປຕິບັຕິໃນກິກຂຸເຫລົ່ານັ້ນຢ່າງໃດ ຂ້ານ້ອຍ?

ພຣະຜູ້ມີພຣະກາຄຕຣັສວ່າ ສາຣີບຸຕຣ໌ ຖ້າເຊັ່ນນັ້ນ ທ່ານຈົ່ງດຳຣົງຢູ່ຕາມທັມມ໌

ສາ. ຂ້າພຣະພຸທສເຈົ້າຈະຄວຣຮູ້ທັມມ໌ຫຼືທັມມ໌ຢ່າງໃດ ຂ້ານ້ອຍ?

ວັຕຖຸສຳຫຼັບອະທັມມ໌ວາທີ ໑໘ ປະກາຣ

ພ. ສາຣີບຸຕຣ໌ ທ່ານຄວຣຮູ້ອະທັມມ໌ວາທີກິກຂຸ ດ້ວຍວັຕຖຸ ໑໘ ປະກາຣ ຄືກິກຂຸໃນທັມມ໌ວິນັຍນີ້:-

໑. ສແດງສິ່ງທີ່ບໍ່ເປັນທັມມ໌ ວ່າເປັນທັມມ໌

໒. ສແດງສິ່ງທີ່ເປັນທັມມ໌ ວ່າບໍ່ເປັນທັມມ໌

໓. ສແດງສິ່ງທີ່ບໍ່ເປັນວິນັຍ ວ່າເປັນວິນັຍ

໔. ສແດງສິ່ງທີ່ເປັນວິນັຍ ວ່າບໍ່ເປັນວິນັຍ

໕. ສແດງສິ່ງທີ່ພຣະຕຖາຄົຕບໍ່ໄດ້ທຣົງກາษິຕໄວ້ ບໍ່ໄດ້ຕຣັສໄວ້ວ່າພຣະຕຖາຄົຕທຣົງກາษິຕໄວ້ ຕຣັສໄວ້

໖. ສແດງສິ່ງທີ່ພຣະຕຖາຄົຕທຣົງກາษິຕໄວ້ ຕຣັສໄວ້ວ່າພຣະຕຖາຄົຕບໍ່ໄດ້ທຣົງກາษິຕໄວ້ ຕຣັສໄວ້

໗. ສແດງມັຣຍາທອັນພຣະຕຖາຄົຕບໍ່ໄດ້ທຣົງປະພຶຕມາ ວ່າພຣະຕຖາຄົຕທຣົງປະພຶຕມາ

໘. ສແດງມັຣຍາທອັນພຣະຕຖາຄົຕທຣົງປະພຶຕມາແລ້ວ ວ່າພຣະຕຖາຄົຕບໍ່ໄດ້ທຣົງປະພຶຕມາ

໙. ສແດງສິ່ງທີ່ພຣະຕຖາຄົຕບໍ່ໄດ້ທຣົງບັญญັຕິໄວ້ ວ່າອັນພຣະຕຖາຄົຕທຣົງບັญญັຕິໄວ້

໑໐. ສແດງສິ່ງທີ່ພຣະຕຖາຄົຕທຣົງບັญญັຕິໄວ້ ວ່າພຣະຕຖາຄົຕບໍ່ໄດ້ທຣົງບັญญັຕິໄວ້

໑໑. ສແດງສິ່ງທີ່ບໍ່ແມ່ນອາບັຕິ ວ່າເປັນອາບັຕິ

໑໒. ສແດງອາບັຕິ ວ່າເປັນສິ່ງບໍ່ແມ່ນອາບັຕິ

໑໓. ສແດງອາບັຕິເບົາ ວ່າເປັນອາບັຕິໜັກ

໑໔. ສແດງອາບັຕິໜັກ ວ່າເປັນອາບັຕິເບົາ

໑໕. ສແດງອາບັຕິມີສ່ວນເຫລືອ ວ່າເປັນອາບັຕິຫາສ່ວນເຫລືອບໍ່ໄດ້

໑໖. ສແດງອາບັຕິຫາສ່ວນເຫລືອບໍ່ໄດ້ ວ່າເປັນອາບັຕິມີສ່ວນເຫລືອ

໑໗. ສແດງອາບັຕິຊົ່ວຫຍາບ ວ່າເປັນອາບັຕິບໍ່ຊົ່ວຫຍາບ

໑໘. ສແດງອາບັຕິບໍ່ຊົ່ວຫຍາບ ວ່າເປັນອາບັຕິຊົ່ວຫຍາບ

ສາຣີບຸຕຣ໌ ທ່ານຄວຣຮູ້ອັສັມມ໌ວາທີກິກຂຸ ດ້ວຍວັຕຖຸ ໑໘ ປະກາຣນີ້ແລ.

ວັຕຖຸສຳຫຼັບສັມມ໌ວາທີ ໑໘ ປະກາຣ

ສາຣີບຸຕຣ໌ ແລະຄວຣຮູ້ສັມມ໌ວາທີກິກຂຸ ດ້ວຍວັຕຖຸ ໑໘ ປະກາຣ ຄື ກິກຂຸໃນສັມມ໌ວິນັຍນີ້

໑. ສແດງສິ່ງທີ່ບໍ່ເປັນສັມມ໌ ວ່າບໍ່ເປັນສັມມ໌

໒. ສແດງສິ່ງທີ່ເປັນສັມມ໌ ວ່າເປັນສັມມ໌

໓. ສແດງສິ່ງທີ່ບໍ່ເປັນວິນັຍ ວ່າບໍ່ເປັນວິນັຍ

໔. ສແດງສິ່ງທີ່ເປັນວິນັຍ ວ່າເປັນວິນັຍ

໕. ສແດງສິ່ງທີ່ພຣະຕຖາຄົຕບໍ່ໄດ້ທຣົງກາษິຕໄວ້ ບໍ່ໄດ້ຕຣັສໄວ້ ວ່າພຣະຕຖາຄົຕບໍ່ໄດ້ທຣົງກາษິຕໄວ້ ບໍ່ໄດ້ຕຣັສໄວ້

໖. ສແດງສິ່ງທີ່ພຣະຕຖາຄົຕທຣົງກາษິຕໄວ້ ຕຣັສໄວ້ວ່າພຣະຕຖາຄົຕທຣົງກາษິຕໄວ້ ຕຣັສໄວ້

໗. ສແດງມັຣຍາທອັນພຣະຕຖາຄົຕບໍ່ໄດ້ທຣົງປະພຶຕມາ ວ່າພຣະຕຖາຄົຕບໍ່ໄດ້ທຣົງປະພຶຕມາ

໘. ສແດງມັຣຍາທອັນພຣະຕຖາຄົຕທຣົງປະພຶຕມາ ວ່າພຣະຕຖາຄົຕທຣົງປະພຶຕມາ

໙. ສແດງສິ່ງທີ່ພຣະຕຖາຄົຕບໍ່ໄດ້ທຣົງບັນລັຕິໄວ້ ວ່າພຣະຕຖາຄົຕບໍ່ໄດ້ທຣົງບັນລັຕິໄວ້

໑໐. ສແດງສິ່ງທີ່ພຣະຕຖາຄົຕທຣົງບັນລັຕິໄວ້ ວ່າພຣະຕຖາຄົຕທຣົງບັນລັຕິໄວ້

໑໑. ສແດງສິ່ງບໍ່ແມ່ນອາບັຕິ ວ່າເປັນສິ່ງບໍ່ແມ່ນອາບັຕິ

໑໒. ສແດງອາບັຕິ ວ່າເປັນອາບັຕິ

໑໓. ສແດງອາບັຕິເບົາ ວ່າເປັນອາບັຕິເບົາ

໑໔. ສແດງອາບັຕິຫນັກ ວ່າເປັນອາບັຕິຫນັກ

໑໕. ສແດງອາບັຕິມີສ່ວນເຫລືອ ວ່າເປັນອາບັຕິມີສ່ວນເຫລືອ

໑໖. ສແດງອາບັຕິຫາສ່ວນເຫລືອບໍ່ໄດ້ ວ່າເປັນອາບັຕິຫາສ່ວນເຫລືອບໍ່ໄດ້

໑໗. ສແດງອາບັຕິຊົ່ວຫຍາບ ວ່າເປັນອາບັຕິຊົ່ວຫຍາບ

໑໘. ສແດງອາບັຕິບໍ່ຊົ່ວຫຍາບ ວ່າເປັນອາບັຕິບໍ່ຊົ່ວຫຍາບ

ສາຣີບຸຕຣ໌ ທ່ານຄວຣຮູ້ສັມມ໌ອາທິກິກຂຸ ດ້ວຍວັຕຖຸ ໑໘ ປະການນີ້ແລ.

ພຣະເຖຣານຸເຖຣະເຂົ້າເຝົ້າທູລຖາມຂໍ້ປຕິບັຕິ

[໔໕໓] ທ່ານພຣະມຫາໂມຄຄັລລານະໄດ້ສດັບຂ່າວ ....

ທ່ານພຣະມຫາກັສສປະໄດ້ສດັບຂ່າວ ....

ທ່ານພຣະມຫາກັຈຈນະໄດ້ສດັບຂ່າວ ....

ທ່ານພຣະມຫາໂກຕຖິຕະໄດ້ສດັບຂ່າວ ....

ທ່ານພຣະມຫາກັປປິນະໄດ້ສດັບຂ່າວ ....

ທ່ານພຣະມຫາຈຸນທະໄດ້ສດັບຂ່າວ ....

ທ່ານພຣະອນຸຣຸທສະໄດ້ສດັບຂ່າວ ....

ທ່ານພຣະເຣວຕະໄດ້ສດັບຂ່າວ ....

ທ່ານພຣະອຸບາລີໄດ້ສດັບຂ່າວ ....

ທ່ານພຣະອານົນທ໌ໄດ້ສດັບຂ່າວ ....

ທ່ານພຣະຣາຫຼຸລໄດ້ສດັບຂ່າວວ່າ ກິກຂຸຊາວເມືອງໂກສັມພີທີ່ກໍ່ຄວາມບາດຫມາງ ກໍ່ການຜິດຖຽງ ກໍ່ການວິວາທ ທຳຄວາມອື້ລາວ ກໍ່ອະທິກຣຕ໌ໃນສົງຄ໌ ເຫລົ່ານັ້ນ ພາກັນມາສູ່ພຣະນຄຣສາວັຕຖີ ຈຶ່ງເຂົ້າໄປ

ໃນພຸທສສຳນັກ ຖວາຍບັງຄົມພຣະຜູ້ມີພຣະພາຄ ແລ້ວນັ່ງເຝົ້າຢູ່ ຓ ທີ່ຄວຣສ່ວນຂ້າງນຶ່ງ ທ່ານພຣະຣາຫຸລ ນັ່ງຮຽບຮ້ອຍແລ້ວ ໄດ້ທູລຖາມຂໍ້ປຕິບັຕິແດ່ພຣະຜູ້ມີພຣະພາຄວ່າ ພຣະພຸທສເຈົ້າ ໄດ້ຂ່າວມາວ່າ ພິກຂຸຊາວເມືອງໂກສັມພີທີ່ກໍ່ຄວາມບາດຫມາງ ກໍ່ການຜິດຖຽງ ກໍ່ການວິວາທ ທຳຄວາມອື້ສາວ ກໍ່ອະທິກຣຓ໌ໃນສົງฆ໌ ເຫລົ່ານັ້ນ ພາກັນມາສູ່ພຣະນຄຣສາວັຕຖີ ຂ້າພຣະພຸທສເຈົ້າຈະປຕິບັຕິໃນພິກຂຸເຫລົ່ານັ້ນຢ່າງໃດ ຂ້ານ້ອຍ?

ພຣະຜູ້ມີພຣະພາຄຕຣັສວ່າ ຣາຫຸລ ຖ້າເຊັ່ນນັ້ນ ທ່ານຈົ່ງດຳຣົງຢູ່ຕາມທັມມ໌

ຣາ. ຂ້າພຣະພຸທສເຈົ້າຈະຄວຣຮູ້ທັມມ໌ຫຼືອະທັມມ໌ຢ່າງໃດ ຂ້ານ້ອຍ?

ພ. ຣາຫຸລ ທ່ານຄວຣຮູ້ ອະທັມມວາທີພິກຂຸ ດ້ວຍວັຕຖຸ ໑໘ ປະການ ....

ຣາຫຸລ ທ່ານຄວຣຮູ້ອະທັມມວາທີພິກຂຸ ດ້ວຍວັຕຖຸ ໑໘ ປະການນີ້ແລ.

ຣາຫຸລ ແລະຄວຣຮູ້ທັມມວາທີພິກຂຸ ດ້ວຍວັຕຖຸ ໑໘ ປະການ ....

ຣາຫຸລ ທ່ານຄວຣຮູ້ທັມມວາທີພິກຂຸ ດ້ວຍວັຕຖຸ ໑໘ ປະການນີ້ແລ.

ພຣະມຫາປຊາບໍດີໂຄຕມີເຖຣີເຂົ້າເຝົ້າທູລຖາມຂໍ້ປຕິບັຕິ

[໔໕໔] ພຣະເຖຣີມຫາປຊາບໍດີໂຄຕມີ ໄດ້ສດັບຂ່າວວ່າ ພິກຂຸຊາວເມືອງໂກສັມພີທີ່ກໍ່ຄວາມບາດຫມາງ ກໍ່ການຜິດຖຽງ ກໍ່ການວິວາທ ທຳຄວາມອື້ສາວ ກໍ່ອະທິກຣຓ໌ໃນສົງฆ໌ ເຫລົ່ານັ້ນ ພາກັນມາສູ່ພຣະນຄຣສາວັຕຖີ ຈຶ່ງເຂົ້າໄປໃນພຸທສສຳນັກ ຖວາຍບັງຄົມພຣະຜູ້ມີພຣະພາຄແລ້ວ ໄດ້ຢືນເຝົ້າຢູ່ ຓ ທີ່ຄວຣສ່ວນຂ້າງນຶ່ງ ພຣະເຖຣີມຫາປຊາບໍດີໂຄຕມີຢືນເຝົ້າຮຽບຮ້ອຍແລ້ວ ທູລຖາມຂໍ້ປຕິບັຕິນີ້ແດ່ພຣະຜູ້ມີພຣະພາຄວ່າ ຂ້ານ້ອຍ ໄດ້ຂ່າວມາວ່າ ພິກຂຸຊາວເມືອງໂກສັມພີ ທີ່ກໍ່ຄວາມບາດຫມາງກໍ່ການຜິດຖຽງ ກໍ່ການວິວາທ ທຳຄວາມອື້ສາວ ກໍ່ອະທິກຣຓ໌ໃນສົງฆ໌ ເຫລົ່ານັ້ນ ພາກັນມາສູ່ພຣະນຄຣສາວັຕຖີ ຂ້ານ້ອຍຈະປຕິບັຕິໃນພິກຂຸເຫລົ່ານັ້ນຢ່າງໃດ ຂ້ານ້ອຍ?

ພຣະຜູ້ມີພຣະພາຄຕຣັສວ່າ ໂຄຕມີ ຖ້າເຊັ່ນນັ້ນ ທ່ານຈົ່ງຟັງທັມມ໌ໃນພິກຂຸສອງຝ່າຍ ເມື່ອຟັງທັມມ໌ໃນສອງຝ່າຍແລ້ວ ພິກຂຸເຫລົ່າໃດໃນສອງຝ່າຍນັ້ນເປັນທັມມວາທີ ທ່ານຈົ່ງພໍໃຈຄວາມເຫັນ ຄວາມຖືກໃຈຄວາມຊອບໃຈ ແລະຄວາມເຊື່ອຖື ຂອງພິກຂຸຝ່າຍທັມມວາທີນັ້ນ ປະການນຶ່ງ ວັຕຣ໌ຢ່າງນຶ່ງຢ່າງໃດອັນພິກຂຸນີສົງฆ໌ຄວຣຫວັງແຕ່ພິກຂຸສົງฆ໌ ວັຕຣ໌ນັ້ນທັ້ງຫມົດ ອັນທ່ານຄວຣຫວັງແຕ່ທັມມວາທີພິກຂຸຝ່າຍດຽວ.

ອນາຖບິຕຫິກຄຫບໍດີເຂົ້າເຝົ້າທູລຖາມຂໍ້ປຕິບັຕິ

[໔໕໕] ອນາຖບິຕຫິກຄຫບໍດີໄດ້ສດັບຂ່າວວ່າ ພິກຂຸຊາວເມືອງໂກສັມພີທີ່ກໍ່ຄວາມບາດຫມາງ ກໍ່ການຜິດຖຽງ ກໍ່ການວິວາທ ທຳຄວາມອື້ສາວ ກໍ່ອະທິກຣຓ໌ໃນສົງฆ໌ ເຫລົ່ານັ້ນ ພາກັນມາສູ່ພຣະນຄຣ

ສາວັຕຖີ ຈຶ່ງເຂົ້າໄປໃນພຸທສສຳນັກ ເມື່ອແລ້ວຖວາຍບັງຄົມພຣະຜູ້ມີພຣະກາຄ ນັ່ງເຝົ້າຢູ່ ໓ ທີ່ຄວຣສ່ວນຂ້າງນຶ່ງ ອນາຖບິຕທິກຄຫບໍດີນັ່ງເຝົ້າຮຽບຮ້ອຍແລ້ວ ໄດ້ທູລຖາມຂໍ້ປຕິບັຕິນີ້ແດ່ພຣະຜູ້ມີພຣະກາຄວ່າ ຂ້ານ້ອຍ ໄດ້ຍິນຂ່າວມາວ່າ ກິກຂຸຊາວເມືອງໂກສັມພີທີ່ກໍ່ຄວາມບາດໝາງ ກໍ່ກາຣຜິດຖຽງ ກໍ່ກາຣວິວາທ ທຳຄວາມອື້ສາວ ກໍ່ອະທິກຣຕ໌ໃນສົງຄ໌ ເຫລົ່ານັ້ນ ພາກັນມາສູ່ພຣະນຄຣສາວັຕຖີ ຂ້າພຣະພຸທສເຈົ້າຈະປຕິບັຕິໃນກິກຂຸເຫລົ່ານັ້ນຢ່າງໃດ ຂ້ານ້ອຍ?

ພຣະຜູ້ມີພຣະກາຄຕຣັສວ່າ ຄຫບໍດີ ຖ້າຈັ່ງຊັ້ນ ທ່ານຈົ່ງຖວາຍທານໃນກິກຂຸສອງຝ່າຍ ເມື່ອຖວາຍທານໃນກິກຂຸສອງຝ່າຍແລ້ວ ຈົ່ງຟັງທັມມ໌ໃນສອງຝ່າຍ ເມື່ອຟັງທັມມ໌ໃນສອງຝ່າຍແລ້ວ ກິກຂຸເຫລົ່າໃດໃນສອງຝ່າຍນັ້ນ ເປັນທັມມ໌ວາທີ ທ່ານຈົ່ງພໍໃຈໃນຄວາມເຫັນ ຄວາມຖືກໃຈ ຄວາມຊອບໃຈ ແລະຄວາມເຊື່ອຖື ຂອງກິກຂຸຝ່າຍທັມມ໌ວາທີນັ້ນ.

ນາງວິສາຂາມິຄາຣມາຕາເຂົ້າເຝົ້າທູລຖາມຂໍ້ປຕິບັຕິ

[໔໕໖] ນາງວິສາຂາມິຄາຣມາຕາໄດ້ສດັບຂ່າວວ່າ ກິກຂຸຊາວເມືອງໂກສັມພີທີ່ກໍ່ຄວາມບາດໝາງ ກໍ່ກາຣຜິດຖຽງ ກໍ່ກາຣວິວາທ ທຳຄວາມອື້ສາວ ກໍ່ອະທິກຣຕ໌ໃນສົງຄ໌ ເຫລົ່ານັ້ນ ພາກັນມາສູ່ພຣະນຄຣສາວັຕຖີ ຈຶ່ງເຂົ້າໄປໃນພຸທສສຳນັກ ເມື່ອແລ້ວຖວາຍບັງຄົມພຣະຜູ້ມີພຣະກາຄ ນັ່ງເຝົ້າຢູ່ ໓ ທີ່ຄວຣສ່ວນຂ້າງນຶ່ງ ນາງວິສາຂາມິຄາຣມາຕານັ່ງເຝົ້າຮຽບຮ້ອຍແລ້ວ ໄດ້ທູລຖາມຂໍ້ປຕິບັຕິນີ້ແດ່ພຣະຜູ້ມີພຣະກາຄວ່າ ຂ້ານ້ອຍ ໄດ້ຂ່າວມາວ່າ ກິກຂຸຊາວເມືອງໂກສັມພີ ທີ່ກໍ່ຄວາມບາດໝາງ ກໍ່ກາຣຜິດຖຽງ ກໍ່ກາຣວິວາທ ທຳຄວາມອື້ສາວ ກໍ່ອະທິກຣຕ໌ໃນສົງຄ໌ ເຫລົ່ານັ້ນ ພາກັນມາສູ່ພຣະນຄຣສາວັຕຖີ ຂ້ານ້ອຍຈະປຕິບັຕິໃນກິກຂຸເຫລົ່ານັ້ນຢ່າງໃດ ຂ້ານ້ອຍ?

ພຣະຜູ້ມີພຣະກາຄຕຣັສວ່າ ວິສາຂາ ຖ້າຈັ່ງຊັ້ນ ທ່ານຈົ່ງຖວາຍທານໃນກິກຂຸສອງຝ່າຍ ເມື່ອຖວາຍທານໃນສອງຝ່າຍແລ້ວ ຈົ່ງຟັງທັມມ໌ໃນສອງຝ່າຍ ເມື່ອຟັງທັມມ໌ໃນສອງຝ່າຍແລ້ວ ກິກຂຸເຫລົ່າໃດໃນສອງຝ່າຍນັ້ນເປັນທັມມ໌ວາທີ ທ່ານຈົ່ງພໍໃຈໃນຄວາມເຫັນ ຄວາມຖືກໃຈ ຄວາມຊອບແລະຄວາມເຊື່ອຖືຂອງກິກຂຸຝ່າຍທັມມ໌ວາທີນັ້ນ.

[໔໕໗] ຄັ້ງນັ້ນ ພວກຊາວເມືອງໂກສັມພີ ໄດ້ໄປເຖິງພຣະນຄຣສາວັຕຖີໂດຍລຳດັບ ຈຶ່ງທ່ານພຣະສາຣີບຸຕຣ໌ເຂົ້າໄປໃນພຸທສສຳນັກ ເມື່ອແລ້ວຖວາຍບັງຄົມພຣະຜູ້ມີພຣະກາຄ ນັ່ງເຝົ້າຢູ່ ໓ ທີ່ຄວຣສ່ວນຂ້າງນຶ່ງ ແລ້ວໄດ້ທູລຖາມຂໍ້ປຕິບັຕິນີ້ແດ່ພຣະຜູ້ມີພຣະກາຄວ່າ ຂ້ານ້ອຍ ໄດ້ຂ່າວມາວ່າ ກິກຂຸຊາວເມືອງໂກສັມພີທີ່ກໍ່ຄວາມບາດໝາງ ກໍ່ກາຣຜິດຖຽງ ກໍ່ກາຣວິວາທ ທຳຄວາມອື້ສາວ ກໍ່ອະທິກຣຕ໌

ໃນສົງຆ໌ ເຫລົ່ານັ້ນພາກັນມາເຖິງພຣະນຄຣສາວັຕຖີແລ້ວໂດຍລຳດັບ ຂ້າພຣະພຸທສເຈົ້າ ຈະຕ້ອງຈັດເສນາສນະສຳຫຼັບພິກຂຸເຫລົ່ານັ້ນຢ່າງໃດ ຂ້ານ້ອຍ?

ພຣະຜູ້ມີພຣະກາຄຕຣັສວ່າ ສາຣີບຸຕຣ໌ ຖ້າຈັ່ງຊັ້ນ ທ່ານຄວຣໃຫ້ເສນາສນະທີ່ວ່າງ

ສາ. ກໍຖ້າເສນາສນະວ່າງບໍ່ມີ ຈະຕ້ອງປຕິບັຕິຢ່າງໃດ ຂ້ານ້ອຍ?

ພ. ສາຣີບຸຕຣ໌ ຖ້າຈັ່ງຊັ້ນ ຄວຣທຳເສນາສນະໃຫ້ວ່າງແລ້ວໃຫ້ ແຕ່ເຮົາບໍ່ໄດ້ກ່າວວ່າ ຄວຣຫ້າມເສນາສນະແກ່ພິກຂຸຜູ້ແກ່ພັຣຊາ ໂດຍປຣິຍາຍຫຍັງໆ ຫາບໍ່ໄດ້ເລີຍ ອົງຄ໌ໃດຫ້າມ ຕ້ອງອາບັຕິທຸກກົฏ.

ສາ. ໃນອາມິສລະ ຈະຕ້ອງປຕິບັຕິຢ່າງໃດ ຂ້ານ້ອຍ?

ພ. ສາຣີບຸຕຣ໌ ຄວຣແບ່ງອາມິສໃຫ້ພິກຂຸທັ້ງຫມົດເທົ່າໆ ກັນ.

ຮັບພິກຂຸຜູ້ຖືກຍົກເຂົ້າຫມູ່

[໔໙] ຄັ້ງນັ້ນ ພິກຂຸຜູ້ຖືກຍົກອົງຄ໌ນັ້ນ ພິຈາຣຓາເຖິງຣັມມ໌ແລະວິນັຍຢູ່ ໄດ້ສຳນຶກຂໍ້ນີ້ວ່າ ທັ່ນເປັນອາບັຕິ ທັ່ນບໍ່ເປັນອາບັຕິຫາບໍ່ໄດ້ ເຮົາເປັນຜູ້ຕ້ອງອາບັຕິແລ້ວ ບໍ່ເປັນຜູ້ຕ້ອງອາບັຕິຫາບໍ່ໄດ້ ເຮົາເປັນຜູ້ຖືກຍົກແລ້ວ ບໍ່ເປັນຜູ້ຖືກຍົກຫາບໍ່ໄດ້ ເຮົາເປັນຜູ້ຖືກຍົກແລ້ວດ້ວຍກັມມ໌ເປັນຣັມມ໌ ບໍ່ກຳເຮີບ ຄວຣແກ່ຖານະ ເມື່ອແລ້ວເຂົ້າໄປຫາພິກຂຸພວກທີ່ສນັບສນຸນພິກຂຸຜູ້ຖືກຍົກ ແລ້ວໄດ້ກ່າວຄຳນີ້ແກ່ພິກຂຸພວກນັ້ນວ່າ ອາວຸໂສທັ້ງຫລາຍ ທັ່ນເປັນອາບັຕິ ທັ່ນບໍ່ເປັນອາບັຕິຫາບໍ່ໄດ້ ຜົມເປັນຜູ້ຕ້ອງອາບັຕິແລ້ວ ບໍ່ເປັນຜູ້ຕ້ອງອາບັຕິຫາບໍ່ໄດ້ ຜົມເປັນຜູ້ຖືກຍົກແລ້ວ ບໍ່ເປັນຜູ້ຖືກຍົກຫາບໍ່ໄດ້ ຂ້ານ້ອຍຖືກຍົກດ້ວຍກັມມ໌ເປັນຣັມມ໌ ບໍ່ກຳເຮີບ ຄວຣແກ່ຖານະ ມາເທີ້ນທ່ານທັ້ງຫລາຍ ຂໍໄດ້ກຣຸຓາຮັບຂ້ານ້ອຍເຂົ້າຫມູ່ດ້ວຍເທີ້ນ ຂ້ານ້ອຍ.

ລຳດັບນັ້ນ ພິກຂຸພວກທີ່ສນັບສນຸນພິກຂຸຜູ້ຖືກຍົກເຫລົ່ານັ້ນ ພາພິກຂຸຜູ້ຖືກຍົກອົງຄ໌ນັ້ນ ເຂົ້າໄປໃນພຸທສສຳນັກ ເມື່ອເຖິງແລ້ວ ຖວາຍບັງຄົມພຣະຜູ້ມີພຣະກາຄນັ່ງເຝົ້າຢູ່ ໗ ທີ່ຄວຣສ່ວນຂ້າງນຶ່ງ ແລ້ວໄດ້ຂາບທູລຄຳນີ້ແດ່ພຣະຜູ້ມີພຣະກາຄວ່າ ຂ້ານ້ອຍ ພິກຂຸຜູ້ຖືກຍົກອົງຄ໌ນີ້ ກ່າວຢ່າງນີ້ວ່າ ອາວຸໂສທັ້ງຫລາຍ ທັ່ນເປັນອາບັຕິ ທັ່ນບໍ່ເປັນອາບັຕິຫາບໍ່ໄດ້ ຜົມເປັນຜູ້ຕ້ອງອາບັຕິແລ້ວ ບໍ່ເປັນຜູ້ຕ້ອງອາບັຕິຫາບໍ່ໄດ້ ຜົມເປັນຜູ້ຖືກຍົກແລ້ວ ບໍ່ເປັນຜູ້ຖືກຍົກຫາບໍ່ໄດ້ ຜົມເປັນຜູ້ຖືກຍົກແລ້ວດ້ວຍກັມມ໌ເປັນຣັມມ໌ ບໍ່ກຳເຮີບ ຄວຣແກ່ຖານະ ມາເທີ້ນ ທ່ານທັ້ງຫລາຍ ຂໍໄດ້ກຣຸຓາຮັບຂ້ານ້ອຍເຂົ້າຫມູ່ດ້ວຍເທີ້ນ ຂ້ານ້ອຍ ດັ່ງນີ້ ພວກຂ້າພຣະພຸທສເຈົ້າຈະຕ້ອງປຕິບັຕິຢ່າງໃດ ຂ້ານ້ອຍ?

ພຣະຜູ້ມີພຣະກາຄຮັບສັ່ງວ່າ ດູຣາພິກຂຸທັ້ງຫລາຍ ທັ່ນເປັນອາບັຕິ ທັ່ນບໍ່ເປັນອາບັຕິຫາບໍ່ໄດ້ ພິກຂຸນັ່ນຕ້ອງອາບັຕິແລ້ວ ພິກຂຸທັ່ນບໍ່ຕ້ອງອາບັຕິຫາບໍ່ໄດ້ ພິກຂຸນັ່ນຖືກຍົກແລ້ວ ພິກຂຸທັ່ນບໍ່ຖືກຍົກ

ຫາບໍ່ໄດ້ ພິກຂຸນັ້ນຖືກຍົກແລ້ວດ້ວຍກັມມ໌ເປັນສັມມ໌ ບໍ່ກຳເຣີບ ຄວຣແກ່ຖານະ ເພາະພິກຂຸນັ້ນຕ້ອງອາບັຕິ ຖືກຍົກແລ້ວ ແລະເຫັນອາບັຕິ ຈັ່ງຊັ້ນ ພວກທ່ານຈົ່ງຮັບພິກຂຸນັ້ນເຂົ້າຫມູ່

ຈຶ່ງພິກຂຸພວກທີ່ສນັບສນຸນພິກຂຸຜູ້ຖືກຍົກເຫລົ່ານັ້ນ ຮັບພິກຂຸຜູ້ຖືກຍົກອົງຄ໌ນັ້ນເຂົ້າຫມູ່ແລ້ວ ເຂົ້າໄປຫາພິກຂຸພວກຍົກເຖິງທີ່ຢູ່ ໄດ້ກ່າວຄຳນີ້ແກ່ພິກຂຸພວກຍົກວ່າ ອາວຸໂສທັ້ງຫລາຍ ຄວາມບາດຫມາງ ຄວາມຜິດຖຽງ ຄວາມແກ່ງແຍ່ງ ການວິວາທແຫ່ງສົງຄ໌ ຄວາມແຕກແຫ່ງສົງຄ໌ ຄວາມຮ້າວຣານແຫ່ງສົງຄ໌ ການຖືຕ່າງກັນແຫ່ງສົງຄ໌ ການທຳຕ່າງກັນແຫ່ງສົງຄ໌ ໄດ້ມີແລ້ວເພາະເຣື່ອງໃດ ພິກຂຸນັ້ນນັ້ນ ຕ້ອງອາບັຕິແລ້ວ ຖືກຍົກແລ້ວເຫັນອາບັຕິ ແລະສົງຄ໌ຮັບເຂົ້າຫມູ່ແລ້ວ ເອົາລະ ພວກເຮົາຈະທຳສັງຄສາມັຄຄີ ເພື່ອຣະງັບເຣື່ອງນັ້ນ.

ຈຶ່ງພິກຂຸພວກຍົກເຫລົ່ານັ້ນ ເຂົ້າໄປໃນພຸທສສຳນັກ ເມື່ອແລ້ວຖວາຍບັງຄົມພຣະຜູ້ມີພຣະກາຄ ນັ່ງເຝົ້າຢູ່ ໓ ທີ່ຄວຣສ່ວນຂ້າງນຶ່ງ ແລ້ວໄດ້ຂາບທູລຄຳນີ້ແດ່ພຣະຜູ້ມີພຣະກາຄວ່າ ຂ້ານ້ອຍ ພິກຂຸພວກທີ່ສນັບສນຸນພິກຂຸຜູ້ຖືກຍົກເຫລົ່ານັ້ນ ກ່າວຢ່າງນີ້ວ່າ ອາວຸໂສທັ້ງຫລາຍ ຄວາມບາດຫມາງ ຄວາມຜິດຖຽງ ຄວາມແກ່ງແຍ່ງ ການວິວາທແຫ່ງສົງຄ໌ ຄວາມແຕກແຫ່ງສົງຄ໌ ຄວາມຮ້າວຣານແຫ່ງສົງຄ໌ ການຖືຕ່າງກັນແຫ່ງສົງຄ໌ ການທຳຕ່າງກັນແຫ່ງສົງຄ໌ ໄດ້ມີແລ້ວ ເພາະເຣື່ອງໃດ ພິກຂຸນັ້ນນັ້ນຕ້ອງອາບັຕິແລ້ວ ຖືກຍົກແລ້ວ ເຫັນອາບັຕິແລ້ວ ແລະສົງຄ໌ຮັບເຂົ້າຫມູ່ແລ້ວ ເອົາລະ ພວກເຮົາຈະທຳສັງຄສາມັຄຄີ ເພື່ອຣະງັບເຣື່ອງນັ້ນ ດັ່ງນີ້ ພວກຂ້າພຣະພຸທສເຈົ້າຈະຕ້ອງປຕິບັຕິຢ່າງໃດນໍ ຂ້ານ້ອຍ?

ພຣະພຸທສານຸຍາຕໃຫ້ເຮັດສັງຄສາມັຄຄີ

ພຣະຜູ້ມີພຣະກາຄຮັບສັ່ງວ່າ ດູຣາພິກຂຸທັ້ງຫລາຍ ເພາະພິກຂຸນັ້ນຕ້ອງອາບັຕິແລ້ວຖືກຍົກແລ້ວ ເຫັນອາບັຕິແລ້ວ ແລະສົງຄ໌ເຂົ້າຮັບຫມູ່ແລ້ວ ຖ້າເຊັ່ນນັ້ນ ສົງຄ໌ຈົ່ງທຳສັງຄສາມັຄຄີ ເພື່ອຣະງັບເຣື່ອງນັ້ນ.

ວິທີທຳສັງຄສາມັຄຄີ

ດູຣາພິກຂຸທັ້ງຫລາຍ ກໍແລສັງຄສາມັຄຄີຄວຣທຳຢ່າງນີ້ ຄືພິກຂຸທັ້ງຫລາຍ ທັ້ງທີ່ອາພາສ ທັ້ງທີ່ບໍ່ອາພາສ ຄວຣປະຊຸມພ້ອມກັນທຸກໆ ອົງຄ໌ ອົງຄ໌ໃດຈະໃຫ້ສັນທະບໍ່ໄດ້ ເມື່ອປະຊຸມກັນແລ້ວ ພິກຂຸຜູ້ສລາດ ຜູ້ສາມາຖ ຄວຣປະກາສໃຫ້ສົງຄ໌ຮູ້ ດ້ວຍຍັຕຕິທຸຕິຍກັມມ໌ວາຈາ ວ່າດັ່ງນີ້:-

ກັມມ໌ວາຈາທຳສັງຄສາມັຄຄີ

ທ່ານຂ້ານ້ອຍ ຂໍສົງຄ໌ຈົ່ງຟັງຂ້າພເຈົ້າ ຄວາມບາດຫມາງ ຄວາມຜິດຖຽງ ຄວາມແກ່ງແຍ່ງ ຄວາມວິວາທແຫ່ງສົງຄ໌ ຄວາມແຕກແຫ່ງສົງຄ໌ ຄວາມຮ້າວຣານແຫ່ງສົງຄ໌ ການຖືຕ່າງກັນແຫ່ງສົງຄ໌ ການທຳຕ່າງກັນແຫ່ງສົງຄ໌ ໄດ້ມີແລ້ວເພາະເຣື່ອງໃດ ພິກຂຸນັ້ນນັ້ນຕ້ອງອາບັຕິແລ້ວ ຖືກຍົກແລ້ວ

ເຫັນອາບັຕິແລ້ວ ແລະສົງຄ໌ເອີ້ນເຂົ້າຫມູ່ແລ້ວ ຖ້າຄວາມພ້ອມພຽງຂອງສົງຄ໌ເຖິງທີ່ແລ້ວ ສົງຄ໌ຄວຣທຳສັງຄສາມັຄຄີເພື່ອຣະງັບເຣື່ອງນັ້ນ ນີ້ເປັນຌັຕຕິ

ທ່ານຂ້ານ້ອຍ ຂໍສົງຄ໌ຈົ່ງຟັງຂ້າພເຈົ້າ ຄວາມບາດຫມາງ ຄວາມຜິດຖຽງ ຄວາມແກ່ງແຍ່ງ ຄວາມວິວາທແຫ່ງສົງຄ໌ ຄວາມແຕກແຫ່ງສົງຄ໌ ຄວາມຮ້າວຮານແຫ່ງສົງຄ໌ ກາຣຖືຕ່າງກັນແຫ່ງສົງຄ໌ ກາຣທຳຕ່າງກັນແຫ່ງສົງຄ໌ ໄດ້ມີແລ້ວເພາະເຣື່ອງໃດ ກິກຂຸນັ່ນນັ້ນຕ້ອງອາບັຕິແລ້ວ ຖືກຍົກແລ້ວ ເຫັນອາບັຕິແລ້ວ ແລະສົງຄ໌ເອີ້ນເຂົ້າຫມູ່ແລ້ວ ສົງຄ໌ທຳສັງຄສາມັຄຄີເພື່ອຣະງັບເຣື່ອງນັ້ນ ກາຣທຳສັງຄສາມັຄຄີເພື່ອຣະງັບເຣື່ອງນັ້ນ ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເປັນຜູ້ນິ່ງ ບໍ່ຊອບແກ່ທ່ານຜູ້ໃດ ທ່ານຜູ້ນັ້ນຄວຣເວົ້າ

ສົງຄ໌ທຳສັງຄສາມັຄຄີເພື່ອຣະງັບເຣື່ອງນັ້ນແລ້ວ ຄວາມແຕກແຫ່ງສົງຄ໌ ຖືກກຳຈັດແລ້ວ ຄວາມຮ້າວຮານແຫ່ງສົງຄ໌ຖືກກຳຈັດແລ້ວ ກາຣຖືຕ່າງກັນແຫ່ງສົງຄ໌ຖືກກຳຈັດແລ້ວ ກາຣທຳຕ່າງກັນແຫ່ງສົງຄ໌ ຖືກກຳຈັດແລ້ວ ຊອບແກ່ສົງຄ໌ ເຫຕຸນັ້ນຈຶ່ງນິ່ງ ຂ້າພເຈົ້າທຮົງຄວາມນີ້ ໄວ້ດ້ວຍຢ່າງນີ້.

ສົງຄ໌ຄວຣທຳອຸໂບສົຖ ຄວຣສູຕປາຕິໂມກຂ໌ ໃນຂຓະນັ້ນແທ້.

ສັງຄສາມັຄຄີ ໒ ຢ່າງ

[໔໕໙] ຄັ້ງນັ້ນ ທ່ານພຣະອຸບາລີ ເຂົ້າໄປໃນພຸທສສຳນັກ ເມື່ອແລ້ວຖວາຍບັງຄົມພຣະຜູ້ມີພຣະກາຄ ນັ່ງເຝົ້າຢູ່ ຓ ທີ່ຄວຣສ່ວນຂ້າງນຶ່ງ ແລ້ວໄດ້ຂາບທູລຄຳນີ້ແດ່ພຣະຜູ້ມີພຣະກາຄວ່າ ພຣະພຸທສຂ້ານ້ອຍ ຄວາມບາດຫມາງ ຄວາມຜິດຖຽງ ຄວາມແກ່ງແຍ່ງ ຄວາມວິວາທແຫ່ງສົງຄ໌ ຄວາມແຕກແຫ່ງສົງຄ໌ ຄວາມຮ້າວຮານແຫ່ງສົງຄ໌ ກາຣຖືຕ່າງກັນແຫ່ງສົງຄ໌ ກາຣທຳຕ່າງກັນແຫ່ງສົງຄ໌ ຍ່ອມມີເພາະເຣື່ອງໃດ ສົງຄ໌ຍັງບໍ່ທັນວິນິຈສັຍເຣື່ອງນັ້ນ ຍັງບໍ່ທັນສາວເຂົ້າໄປເຖິງມູລເຫຕຸຈາກມູລເຫຕຸ ແລ້ວທຳສັງຄສາມັຄຄີ ສັງຄສາມັຄຄີນັ້ນ ເປັນທັມມ໌ຫຼືບໍ່ ຂ້ານ້ອຍ?

ພຣະຜູ້ມີພຣະກາຄຕຣັສຕອບວ່າ ອຸບາລີ ຄວາມບາດຫມາງ ຄວາມຜິດຖຽງ ຄວາມແກ່ງແຍ່ງ ຄວາມວິວາທແຫ່ງສົງຄ໌ ຄວາມແຕກແຫ່ງສົງຄ໌ ຄວາມຮ້າວຮານແຫ່ງສົງຄ໌ ກາຣຖືຕ່າງກັນແຫ່ງສົງຄ໌ ກາຣທຳຕ່າງກັນແຫ່ງສົງຄ໌ ຍ່ອມມີເພາະເຣື່ອງໃດ ສົງຄ໌ຍັງບໍ່ທັນວິນິຈສັຍເຣື່ອງນັ້ນ ຍັງບໍ່ທັນສາວເຂົ້າໄປເຖິງມູລເຫຕຸຈາກມູລເຫຕຸ ແລ້ວທຳສັງຄສາມັຄຄີນັ້ນ ບໍ່ເປັນທັມມ໌.

ອຸ. ຂ້ານ້ອຍ ກໍຄວາມບາດຫມາງ ຄວາມຜິດຖຽງ ຄວາມແກ່ງແຍ່ງ ຄວາມວິວາທແຫ່ງສົງຄ໌ ຄວາມແຕກແຫ່ງສົງຄ໌ ຄວາມຮ້າວຮານແຫ່ງສົງຄ໌ ກາຣຖືຕ່າງກັນແຫ່ງສົງຄ໌ ກາຣທຳຕ່າງກັນແຫ່ງສົງຄ໌ ຍ່ອມມີເພາະເຣື່ອງໃດ ສົງຄ໌ວິນິຈສັຍເຣື່ອງນັ້ນສາວເຂົ້າໄປເຖິງມູລເຫຕຸ ຈາກມູລເຫຕຸ ແລ້ວທຳສັງຄສາມັຄຄີ ສັງຄສາມັຄຄີນັ້ນ ເປັນທັມມ໌ຫຼືບໍ່ ຂ້ານ້ອຍ?

ພ. ອຸບາລີ ຄວາມບາດໝາງ ຄວາມຜິດຖຽງ ຄວາມແກ່ງແຍ່ງ ຄວາມວິວາທແຫ່ງສົງຄ໌ ຄວາມແຕກແຫ່ງສົງຄ໌ ຄວາມຮ້າວຮານແຫ່ງສົງຄ໌ ການຖືຕ່າງກັນແຫ່ງສົງຄ໌ ການທຳຕ່າງກັນແຫ່ງສົງຄ໌ ຍ່ອມມີເພາະເຣື່ອງໃດ ສົງຄ໌ວິນິຈສັຍເຣື່ອງນັ້ນ ສາວເຂົ້າໄປເຖິງມູລເຫຕຸ ຈາກມູລເຫຕຸ ແລ້ວທຳສັງຄສາມັຄຄີ ສັງຄສາມັຄຄີນັ້ນເປັນຮັມມ໌.

ອ. ສັງຄສາມັຄຄີມີເທົ່າໃດ ພຣະພຸທຮເຈົ້າ?

ພ. ອຸບາລີ ສັງຄສາມັຄຄີມີ ໒ ຢ່າງ ຄື ສັງຄສາມັຄຄີເສັຽອັຖ ແຕ່ໄດ້ພຍັນຊນະ ໑ ສັງຄສາມັຄຄີໄດ້ທັ້ງອັຖໄດ້ທັ້ງພຍັນຊນະ ໑

໑. ອຸບາລີ ສັງຄສາມັຄຄີເສັຽອັຖ ແຕ່ໄດ້ພຍັນຊນະເປັນແນວໃດລະ?

ຄວາມບາດໝາງ ຄວາມຜິດຖຽງ ຄວາມແກ່ງແຍ່ງ ຄວາມວິວາທແຫ່ງສົງຄ໌ ຄວາມແຕກແຫ່ງສົງຄ໌ ຄວາມຮ້າວຮານແຫ່ງສົງຄ໌ ການຖືຕ່າງກັນແຫ່ງສົງຄ໌ ການທຳຕ່າງກັນແຫ່ງສົງຄ໌ ຍ່ອມມີເພາະເຣື່ອງໃດ ສົງຄ໌ຍັງບໍ່ທັນວິນິຈສັຍເຣື່ອງນັ້ນ ຍັງບໍ່ທັນສາວເຂົ້າໄປເຖິງມູລເຫຕຸຈາກມູລເຫຕຸ ແລ້ວທຳສັງຄສາມັຄຄີ ນີ້ເອີ້ນວ່າສັງຄສາມັຄຄີເສັຽອັຖ ແຕ່ໄດ້ພຍັນຊນະ.

໒. ອຸບາລີ ສັງຄສາມັຄຄີ ໄດ້ທັ້ງອັຖໄດ້ທັ້ງພຍັນຊນະເປັນແນວໃດລະ?

ຄວາມບາດໝາງ ຄວາມຜິດຖຽງ ຄວາມແກ່ງແຍ່ງ ຄວາມວິວາທແຫ່ງສົງຄ໌ ຄວາມແຕກແຫ່ງສົງຄ໌ ຄວາມຮ້າວຮານແຫ່ງສົງຄ໌ ການຖືຕ່າງກັນແຫ່ງສົງຄ໌ ການທຳຕ່າງກັນແຫ່ງສົງຄ໌ ຍ່ອມມີເພາະເຣື່ອງໃດ ສົງຄ໌ວິນິຈສັຍເຣື່ອງນັ້ນ ສາວເຂົ້າໄປເຖິງມູລເຫຕຸ ຈາກມູລເຫຕຸ ແລ້ວທຳສັງຄສາມັຄຄີ ນີ້ເອີ້ນວ່າ ສັງຄສາມັຄຄີທີ່ໄດ້ທັ້ງອັຖ ໄດ້ທັ້ງພຍັນຊນະ ອຸບາລີ ສັງຄສາມັຄຄີ ໒ ຢ່າງນີ້ແລ.

ລຳດັບນັ້ນ ທ່ານພຣະອຸບາລີລຸກຈາກອາສນ໌ ຫົ່ມຜ້າອຸຕຣາສົງຄ໌ພາດບ່າ ນົບໄປທາງພຣະຜູ້ມີພຣະກາຄ ແລ້ວຂາບທູລພຣະຜູ້ມີພຣະກາຄດ້ວຍຄາຖາ ວ່າດັ່ງນີ້:-

ອຸບາລີຄາຖາ

[໔໗໐] ອຸ. ເມື່ອກິຈຂອງສົງຄ໌ ການປຶກສາວິນັຍ ການຕີຄວາມ
ວິນັຍ ແລະການວິນິຈສັຍຄວາມແຫ່ງວິນັຍເກີດຂຶ້ນແລ້ວ ກິກຂຸໃນ
ຮັມມ໌ວິນັຍນີ້ ເປັນຄົນຊນິດໃດ ຈຶ່ງມີອຸປການະຫຼາຍ ເປັນຄົນ
ຊນິດໃດ ຈຶ່ງຄວນຍົກຍ່ອງ ໃນພຣະຮັມມ໌ວິນັຍນີ້

ພ. ເບື້ອງຕົ້ນ ກິກຂຸບໍ່ຖືກຕຳໜິໂດຍສີລ ໝັ່ນກວດກາ
ມາຣຍາທ ແລະສຳຣວມອິນທຣີຍ໌ຮຽບຮ້ອຍ ສັຕຣູຕິຕຽນບໍ່ໄດ້
ໂດຍຮັມມ໌ ເພາະທ່ານບໍ່ມີຄວາມຜິດທີ່ຝ່າຍສັຕຣູຈະຕ້ອງກ່າວເຖິງ

ທ່ານຜູ້ເຊັ່ນນັ້ນ ຕັ້ງຢູ່ໃນສີລວິສຸທຊີ ເປັນຜູ້ແກລ້ວກລ້າ ເວົ້າ
ຈາຈາດຈານ ເຂົ້າທີ່ປະຊຸມບໍ່ສະດຸ້ງ ບໍ່ປະຫມ່າ ກ່າວ
ຖ້ອຍຄຳມີເຫຕຸ ບໍ່ໃຫ້ເສັຽຄວາມ ເຖິງຖືກຖາມປັລຫາໃນທີ່ປະຊຸມ
ກໍເຊັ່ນນັ້ນເຫມືອນກັນ ຍ່ອມບໍ່ນິ່ງອັ້ນ ບໍ່ເກີ້ ທ່ານເປັນຜູ້
ຊ່ຽວຊານ ກ່າວຖ້ອຍຄຳຖືກກາລ ເຫມາະແກ່ການພຍາກຣຕ໌
ຍ່ອມຍັງຫມູ່ວິລຍູຊົນໃຫ້ພໍໃຈ ມີຄວາມເຄາຣົພໃນກິກຂຸທັ້ງຫລາຍ
ທີ່ແກ່ພັຣษາກວ່າ ເປັນຜູ້ແກລ້ວກລ້າໃນອາຈຣິຍວາທຂອງຕົນ
ສາມາຖເພື່ອຈະວິຈາຣຕ໌ ຊຳນານໃນຖ້ອຍຄຳທີ່ຈະຕ້ອງກ່າວ ຈລາດ
ຈັບຂໍ້ພິຣຸธຂອງຝ່າຍສັຕຣູ ເປັນເຫຕຸໃຫ້ຝ່າຍສັຕຣູເຖິງຄວາມຖືກ
ປຼາບ ແລະມຫາຊົນກໍຍິນຍອມ ປະການນຶ່ງ ກິກຂຸນີ້ຍ່ອມບໍ່ລົບລ້າງ
ລັທธิເປັນທີ່ເຊື່ອຖື ຄືອາຈຣິຍວາທຂອງຕົນ ແກ້ປັລຫາໄດ້
ບໍ່ຕິດຂັດ ສາມາຖໃນຫນ້າທີ່ທູຕ ແລະຍອມຮັບທຳກິຈຂອງສົງฆ໌
ເຫມືອນຮັບບິຕฑບາຕຂອງທີ່ເຂົານຳມາບູຊາຈັ່ງຊັ້ນ ຖືກຄຕະກິກຂຸສົ່ງ
ໄປໃຫ້ເຮັດຫນ້າທີ່ເຈຣຈາ ກໍບໍ່ທະນົງຕົວວ່າ ຕົນເຮັດໄດ້ ເພາະ
ການທຳຫນ້າທີ່ເຈຣຈານັ້ນ ກິກຂຸຕ້ອງອາບັຕິເພາະວັຕຖຸມີປະມາຕ
ເທົ່າໃດ ແລະການອອກຈາກອາບັຕິຍ່ອມມີດ້ວຍວິธີໃດ ວິກັງຄ໌
ທັ້ງສອງນັ້ນມາແລ້ວດ້ວຍດີແກ່ກິກຂຸນັ້ນ ກິກຂຸນັ້ນເປັນຜູ້ຈລາດ
ໃນວິธີການອອກຈາກອາບັຕິ ປະການນຶ່ງ ກິກຂຸທຳກັມມ໌ມີກໍ່ຄວາມ
ບາດຫມາງເປັນຕົ້ນເຫລົ່າໃດ ຍ່ອມເຖິງການຂັບອອກ ແລະຖືກຂັບ
ອອກ ດ້ວຍເຣື່ອງເຊັ່ນໃດ ທ່ານຈລາດໃນວິກັງຄ໌ ຍ່ອມເຂົ້າໃຈ
ວິธີການຮັບເຂົ້າຫມູ່ ແມ້ນັ້ນ ທີ່ຄວຣເຮັດແກ່ກິກຂຸຜູ້ປະພຶຕວັຕຣ໌
ນັ້ນແລ້ວແລ້ວ ມີຄວາມເຄາຣົພໃນພຣະຜູ້ຈເຣີລກວ່າ ຄືທີ່ເປັນ
ຜູ້ໃຫຍ່ ປານກາງ ແລະຜູ້ໃຫມ່ ເປັນບັຕฑິຕ ປະພຶຕ
ປະໂຍຊນ໌ແກ່ມຫາຊົນໃນໂລກນີ້ ກິກຂຸຜູ້ເຊັ່ນນັ້ນທັ່ນ ຈຶ່ງຄວຣ
ຍົກຍ່ອງໃນສັມມ໌ວິນັຍນີ້ແລ.

ໂກສັມພິຂັນສກະ ທີ່ ໑໐ ຈົບ.

ຫົວຂໍ້ປະຈຳຂັນສກະ

[໔໒໑] ເຣື່ອງສົມເດັຈພຣະຊິນວຣປະທັບໃນພຣະນຄຣໂກສັມພີ ກິກຂຸວິວາທກັນເພາະບໍ່ເຫັນອາບັຕິ ແລະຍົກກັນເພາະເຫຕຸຫນ້ອຍນຶ່ງ ເຣື່ອງທຣົງແນະນຳໃຫ້ກິກຂຸສແດງອາບັຕິ ເຣື່ອງກິກຂຸຜູ້ສນັບສນຸນຝ່າຍຖືກຍົກທຳອຸໂບສົຖກາຍໃນສີມານັ້ນເອງ ເຣື່ອງບ້ານພາລກໂລຕກາຣກຄາມ ເຣື່ອງສເດັຈພຣະພຸທສດຳເນີນສູ່ປຣາຈີນວັງສທາຍວັນ ເຣື່ອງສເດັຈພຣະພຸທສດຳເນີນສູ່ປ່າປາຣິໄລຍກະ ເຣື່ອງສເດັຈພຣະພຸທສດຳເນີນສູ່ພຣະນຄຣສາວັຕຖີ ເຣື່ອງພຣະສາຣີບຸຕຣ໌ ພຣະມຫາໂມຄຄັລລານະ ພຣະໂກລິຕະ ພຣະມຫາກັສສປະ ພຣະມຫາກັຈຈານະພຣະມຫາໂກຕກິຕະ ພຣະມຫາກັປປິນະ ພຣະມຫາຈຸນທະ ພຣະອນຸຣຸທສະ ພຣະເຣວຕະ ພຣະອຸບາລີ ພຣະອານົນທ໌ ພຣະຣາຫຸລ ພຣະມຫາປຊາບໍດີໂຄຕມີເຖຣີ ອນາຖບິຕທິກຄຫບໍດີ ແລະນາງວິສາຂາມິຄາຣມາຕາ ເຂົ້າເຝົ້າທູລຖາມຂໍ້ປຕິບັຕິ ເຣື່ອງເສນາສນະວ່າງ ເຣື່ອງຈັດເສນາສນະໃຫ້ວ່າງ ເຣື່ອງແບ່ງອາມິສໃຫ້ເທົ່າໆ ກັນ ເຣື່ອງທຳສັງຄສາມັຄຄີກິກຂຸອົງຄ໌ໃດຈະໃຫ້ລັບທະບໍ່ໄດ້ ເຣື່ອງພຣະອຸບາລີເຂົ້າເຝົ້າທູລຖາມສັງຄສາມັຄຄີໃນສາສນາຂອງພຣະຊິນເຈົ້າ ເຣື່ອງບໍ່ຖືກຕຳຫນິໂດຍສີລ.

ມຫາວັຄຄ໌ ກາຄ ໔ ຈົບ.